ຊາດລາວ

ແລະ

ວັດທະນະທັມລາວ

ຮຽບຮຽງໂດຍ ທຸມພັນ ຣັດຕະນະວົງ



ຈັດພິມໂດຍ: ສຳນັກພິມແລະຈຳໜ່າຍປຶ້ມແຫ່ງລັດ ກະຊວງຖະແຫຼງຂ່າວ
ແລະ ວັດທະນະທັມ ແຫ່ງ ສປປ ລາວ

ວຽງຈັນ 2008

ຄຳນຳ

ຂ້າພະເຈົ້າ ໄດ້ໃຊ້ເວລາຍາວນານພໍສົມຄວນໃນເວລາທີ່ ຂ້າພະເຈົ້າ ດຳ ລົງຕຳແໜ່ງເປັນຫົວໜ້າສະຖາບັນຄົ້ນຄ້ວາວັດທະນະທັມ ສັງກັດກະຊວງຖະ ແຫຼງຂ່າວ ແລະ ວັດທະນະທັມ ແລະ ໃນໄລຍະຕົ້ນຂອງຊີວິດເປັ້ຽບຳນານຂອງ ຂ້າພະເຈົ້າ ເພື່ອຄົ້ນຄ້ວາ ແລະ ຂຽນປຶ້ມ "ຊາດລາວ ແລະ ວັດທະນະທັມລາວ" ສະບັບສັ້ງເຂບທີ່ສຸດ ແລະ ເປົ້າບາງທີ່ສຸດເຫຼັ້ມນີ້ອອກມາ ດ້ວຍຈຸດປະສົງໃຫ້ ຊາວອະນຸຊົນຜູ້ໜຸ່ມນ້ອຍລາວບັນດາເຜົ່າທີ່ຍັ້ງຢູ່ໃນໄວຮຽນ ໄດ້ມີເຄື່ອງມືເບື້ອງ ຕົ້ນ ເພື່ອເບິ່ງບັນຫາສັງຄົມລາວຂອງພວກເຮົາ. ແນ່ນອນ ເມື່ອເວົ້າເຖິງຊາດໃດ ຊາດໜຶ່ງນັບທັ້ງຊາດລາວເຮົາແລ້ວ ການທີ່ຈະຄົ້ນຄ້ວາ ແລະ ຂຽນອອກມາໃຫ້ ແນ່ນຢຳ ຄົບຖ້ວນ ແລະ ລະອຽດນັ້ນ ຄົງຈະບໍ່ມີໃຜສາມາດສຳເລັດໄດ້ໃນໄລຍະ ເວລາຊົ່ວໜຶ່ງຊົ່ວຍາມໄດ້ ຫຼື ກະທັ່ງຊົ່ວຊີວິດກໍຍັງບໍ່ເຊື່ອວ່າຈະເຮັດໄດ້ຢ່າງຖ້ວນ ແລະ ສົມບຸນເລີຍ ຍ້ອນເຫດວ່າ ບັນຫາຊາດໜຶ່ງໆ ສັງຄົມໜຶ່ງ ແລະ ວັດທະນະ ທັມໜຶ່ງໆນັ້ນ ເປັນບັນຫາທີ່ລີ້ລັບ ສະຫຼັບສັບຊ້ອນ ສະສົມ ແລະ ພັດທະນາເປັນ "ຈັກກະວານ" ອັນມະຫາສານຢ່າງບໍ່ມີມື້ຢຸດຢັ້ງ ແລະ ສັ້ງສຸດເປັນ. ພວກເຮົາສາມາດຄົ້ນຄວ້າໄດ້ໃນບາງແງ່ມຸມເທົ່ານັ້ນ ແຕ່ຈະບໍ່ໄດ້ທົ່ວເຖິງບັນຫາ ຕ່າງໆຢ່າງມະຫາສານອັນລະອຽດບາດຽວໄດ້ເລີຍ. ດັ່ງນັ້ນ ໜັ້ງສືເຫຼັ້ມນີ້ ຈະມີ ຖານະເປັນພຽງແກ້ວຊ່ອງທີ່ຊ່ອຍໃຫ້ນັກສຶກສາ ນັກຄົ້ນຄ້ວາຜູ້ເຍົາໄວ ມອງເຫັນ ພາບລວມທີ່ບົ່ງບອກເຖິງຄວາມເປັນຊາດຂອງລາວພວກເຮົາບາງຕອນທໍ່ນັ້ນ ສ່ວນອັນລະອຽດນັ້ນ ຄົງຈະບໍ່ມີ້ມຊາວໜຸ່ມເຍົາວະຊົນຜູ້ຈະສືບທອດຂຸດຄົ້ນ ແລະ ແງ່ະໄງ້ອອກມາສືບຕ່ໆໄປຕາມພາຍຫັງ.

ເຖິງແນວນັ້ນກໍ່ຕາມ ໜັ້ງສືເຫຼັ້ມນີ້ຈະບໍ່ສາມາດສຳເລັດໄດ້ຖ້າບໍ່ມີນັກ ປາດຮຸ່ນກ່ອນ ແລະ ຮຸ່ນປັດຈຸບັນທັ້ງພາຍໃນ ແລະ ຕ່າງປະເທດ ຜູ້ທີ່ໄດ້ຄົ້ນຄ້ວາ ສະສົມ ແລະ ໃຫ້ຂໍ້ມູນອັນວິເສດແກ່ຂ້າພະເຈົ້າ ພ້ອມທັ້ງຊຸມນ້ອງນຸ່ງອາວອາຜູ້ ອາສາແບກຫາມທາງດ້ານເຕັກນິກຊ່ອຍຂ້າພະເຈົ້າ. ພິເສດ ຂ້າພະເຈົ້າຂໍນ້ອມ ຫົວສະແດງຄວາມເຄົາລົບ ແລະ ຮູ້ບຸນຄຸນຕໍ່ມືລາງອາຈານມະຫາກຸ ສຸວັນນະເມ

ທີ ຜູ້ທີ່ໄດ້ຝາກມໍລະດົກແຫ່ງຄວາມຮູ້ຂອງປູ່ຍ່າຕາຍາຍລາວ ໃນການຈັດແບ່ງ ປະເພດວັດທະນະທັມແບບລາວເຮົາໄວ້ແກ່ຂ້າພະເຈົ້າ ເຊິ່ງຂ້າພະເຈົ້າເຫັນວ່າ ເປັນສິ່ງຍອດຍິ່ງອີຫຼີ. ຂະນະດຽວກັນນີ້ ຂ້າພະເຈົ້າກໍ່ຂໍສະແດງຄວາມຮູ້ບຸນຄຸນ ນຳທ່ານ ສົມສະຫວາດ ເລັ່ງສະຫວັດ ຜູ້ເຊິ່ງຍາມໃດກໍ່ສະແດງຄວາມເປັນຮ່ວງ ເປັນໃຍນຳການອະນຸລັກ ແລະ ສົ່ງເສີມວັດທະນະທັມລາວບັນດາເຜົ່າ ເພື່ອໃຫ້ ຄົງຢູ່ຄູ່ຊາດລາວເຮົາຕໍ່ໄປ ທີ່ໄດ້ໃຫ້ການອຸ້ມຊູການຈັດພິມໜັງສືເຫຼັ້ມນີ້ ແລະ ໜັງສືເຫຼັ້ມນີ້ເອງ ຄົງຈະບໍ່ສາມາດປາກົດອອກມາສູ່ສາຍຕາຂອງທ່ານໄດ້ເລີຍ ຖ້າຫາກບໍ່ມີການສະໜັບສະໜູນດ້ານທຶນຮອນຈາກບັນດາອົງການ ບໍລິສັດ ຫ້າງ ຮ້ານ ແລະ ສ່ວນລຸດທີ່ບຸກຄົນໃນການພິມມັນອອກມາ.

ແນ່ນອນທີ່ສຸດວ່າ ຄວາມບົກຜ່ອງ ແລະ ຈຸດອ່ອນທ້ຽງປ່ຽງນັ້ນເປັນສິ່ງທີ່ ແນ່ນອນໃນໜັງສືເຫຼັ້ມນີ້ ຊຶ່ງເປັນສິ່ງທີ່ຫຼີກລ້ຽງບໍ່ໄດ້ ຈຶ່ງຂໍໃຫ້ໝູ່ນໆຜູ້ຊົມໃຊ້ອະ ໄທສິກຳໃຫ້ ແລະ ຂໍໃຫ້ເລືອກເອົາແຕ່ສິ່ງທີ່ດີໆ ແລ້ວຊ່ອຍແກ້ຈຸດບົກຜ່ອງນັ້ນໃຫ້ ໃນຂັ້ນຕ່ຳໆໄປດ້ວຍ.

ວຽງຈັນ, ວັນທີ 6 ພຶດສະພາ 2004

ທຸມພັນ ຣັດຕະນະວົງ

ຊາດລາວ ແລະ ວັດທະນະທັມລາວ

ທຸມພັນ ຣັດຕະນະວົງ

ເມືອງລາວ ຂອງພວກເຮົາ ມີທີ່ຕັ້ງບໍ່ຕິດຈອດກັບທະເລ ຄືເປັນປະເທດໃຈກາງຂອງບັນດາປະເທດ ໃນແຫລມອິນໂດຈີນ ແລະ ໃນອາຊີອາຄະເນ. ມີເນື້ອທີ່ໃຫຍ່ກວ່າເນື້ອທີ່ປະເທດສວິສ ປະເທດເບັນຢັ່ມ ແລະປະເທດ ລຸກຊຳບົວ ບວກເຂົ້າກັນ 3 ເທື່ອ ມີເນື້ອທີ່ເປັນພູຜາປ່າດົງ ພູພຽງ ແລະ ທົ່ງພຽງລຽນລາຍກັນ ມີທີ່ຕັ້ງຍາວຢຽດໄປຕາມລຳແມ່ນ້ຳຂອງ ເຊິ່ງເປັນແຫ່ງອຸດົມສົມບູນ ແລະ ຊັບພະຍາກອນທຳມະຊາດອັນອຸດົມ ແລະ ເຊິ່ງປະກອບມີສາຂາແມ່ນ້ຳຫລາຍສາຍ ອັນເປັນບໍ່ເກີດແຫ່ງພະລັງງານ.

ຊາດລາວພວກເຮົາແມ່ນຊາດປະສົມກັນຫລາຍເຜົ່າພັນ ມີຮີດຄອງ ແລະ ຂະນົບວັດທະນະທັມອັນມັ່ງຄັ່ງຫລາກຫລາຍ ມີຖານະຕັ້ງຢູ່ທາງຄົບ ແຫ່ງກະແສວັດທະນະທັມ ກະແສໃຫຍ່ໆຂອງໂລກ. ເປັນຕົ້ນແມ່ນບຈີນ ແລະ ອິນເດັ່ງ ມີພະພຸດທະສາສະໜາ ເປັນສາສະໜາຫລັກຂອງຊາດ.

ໃນຄອບຄົວໃຫຍ່ແຫ່ງຊາດລາວ ບັນດາເຜົ່ານີ້ ທຸກໆ ຄົນມີສິດສະເໝີພາບກັນ ໃນຖານະເປັນພົນລະເມືອງລາວ ບໍ່ມີໃຜມີສິດໃຊ້ຊື່ຢ່າງອື່ນມາຈຳແນກແຍກແຍະ ແລະ ຖືຖືກ ຖືແຄ້ນກັນ ຫລື ເຢາະເຢີ້ຍໝິ່ນປະໝາດເຊິ່ງກັນເລີຍ.

ທຸກໆຄົນພາຍໃນຊາດມີໜ້າທີ່ທະນຸທະໜອມ ເສີມສ້າງຄວາມສາມັກຄີ ຄວາມເປັນປຶກແຜ່ນກັນໃຫ້ແໜ້ນແກ່ນ ໃຫ້ຄວາມຊ່ວຍເຫຼືອເກື້ອກູນແກ່ກັນ ເປັນຕົ້ນເຜົ່າທີ່ມີຄວາມຈະເລີນກ່ອນແລ້ວຕ້ອງໃຫ້ຄວາມຊ່ວຍຊູເອົາເຜົ່າທີ່ດ້ອຍໂອກາດ ແລ້ວພ້ອມພາກັນດຳລົງຢູ່ໃນດິນແດນແຫ່ງສາທາລະນະລັດ ປະຊາທິ

ปะไต ปะชาชินลาว ที่เป็นของพวกเราอันปรบสะเหมือนเถหาหัวใหย่ ที่

แม่นิมโอบอ้อมลังๆ เอาถอบถิ่วใหย่ของชาดเรา ให้ยู่ย่างสุกอุ่มหุ่นเย็น และ สุกกายสบายใจ.

" พวกเราทั้งหมิด เกิดมาจากหมากน้ำเต้าปุ่งหม่อยดังวกัน " ข่อย่า ลืมคำนี้ ของปู่สังกะสา ย่าสังกะสี ปู่เยิ ย่าเยิ และ ปู่เถ้าขุนบูธิมเรา เถิด เซิ่งหมายถวามว่า " พวกเราล้อมแล้อแต่กินนิมเต้าดังวกัน และ พ้อมกันยู่ในอ้อมเอิกของแม่นิมผู้ดังวกัน นั้นถิ่นแต่นดินแม่มาตุพูม เราตอนนี้นั้นเอง.

ພາກ I

ທີ່ຕັ້ງ ແລະ ດິນຟ້າອາກາດ

" ປະເທດຂ້ອຍ
ລວງກວ້າງຍາວ
ນ້ຳຂອງຜ່ານ
ມີຫີນຫາງ
ປະເທດຊາດ
ເຮົາລຸກຫຼາຍ
ຄວນຊູຊ່ອຍ
ໃຫ້ຍືນຍາວ
ຢ່າໃຫ້ຫ້າ

ຊັ້ນຊີ້ເມືອງລາວ
ສຸດຕາເຫຼືອອ່ານ
ໄຫຼຜ່າທາງກາງ
ຖະໜົນສະອາດ
ລາວໃຫຍ່ໄພສານ
ເກີດມາພາຍຊ້ອຍ
ສ້າງບ້ານເມືອງລາວ
ຕໍ່ໄປພາຍໜ້າ
ເຂົ້າແທ້ໝູ່ລາວ"

ອາຈານ ມະຫາສີລາ ວິຣະວົງສ໌ ໃນປຶ້ມແບບຮຽນຊັ້ນ ປ.ປາ

" ຊາດລາວ
ຂຶ້ນຊື່ລືຊາ
ຊາວລາວ
ຮ່ວມສາມັກຄີ

ຕັ້ງແຕ່ເດີມມາ
ຢູ່ໃນອາຊີ
ຜູກພັນໄມຕີ
ຮັກທ່ຳໃຮ່ມກັນ "

ບາງຕອນຂອງບົດເພັ້ງ ທ່ານ ຫມໍທອງດີ
ເຊົ່ງເຄີຍໄດ້ເປັນເພັ້ງຊາດມາຍຸກຫນຶ່ງ.

ດິນແດນລາວ
ງາມວິໄລ
ຊາວລາວເຮົາ
ບ່ໃຫ້ຊາດອື່ນໃດ
ເຖິງຈະຕາຍ

ມີແຜ່ນທີ່ກວ້າງໃຫຍ່
ສຸດແສນອາລາມຕາ
ຕ້ອງປົກປັກຮັກສາ
ມາຢຽບຢ່ຳຊາດຂອງເຮົາ
ເຮົາຕ້ອງຕາຍ ບ່ເສັຍດາຍຊີວິດເຮົາ.

ບາງຕອນຂອງເພັ້ງລາວເດີມ"ດິນແດນລາວ"

1. ທີ່ຕັ້ງ ແລະ ເນື້ອທີ່.

ປະເທດລາວພວກເຮົາ ຕັ້ງຢູ່ອ່າງອັນກວ້າງໃຫຍ່ໄພສານຂອງແມ່ນ້ຳຂອງ ຕອນກາງ ໃນອະນຸທະວີບອາຊີອາຄະເນ ແລະ ເຫຼມອິນໂດຈີນ ລະຫວ່າງເສັ້ນຂະໜານຄຽງຟາກໂລກເໜືອ ແຕ່ 14 ເຖິງ 22°40'

ມີຄວາມຍາວຢຽດຕັ້ງແຕ່ເໜືອຕະຫຼອດໃຕ້ ກວ່າ 1000 ກິໂລແມັດ ມີເນື້ອທີ່ທັ້ງຫມົດ 236,800 ກິໂລແມັດມົນທົນ.

+ ມີປະເທດຕ່າງໆຕິດຈອດ ແລະ ອ້ອມຮອບ 5 ປະເທດດ້ວຍກັນເຊັ່ນ :

- ປະເທດຈີນທາງດ້ານເໜືອ (505 ກລມ)
- ປະເທດຫວຽດນາມ ທາງດ້ານຕາເວັນອອກ (2.069 ກລມ)
- ປະເທດກຳພູຊາ ທາງດ້ານໃຕ້ (435 ກລມ)
- ປະເທດໄທ ທາງດ້ານຕາເວັນຕົກ (1.835 ກລມ)
- ປະເທດພະມ້າ ຫລື ມ່ຽນມ່າ ທາງດ້ານຕາເວັນຕົກສ່ຽງເໜືອ(236ລມ)

ສະຖິຕິແຫ່ງຊາດ 5 / 2000

ໃນຕົ້ນຊຸມປີ 90 ນັກສຳຫຼວດຊາກສັດບູຮານລາວ-ຝຣັ່ງໄດ້ຄົ້ນພົບຮ່ອງຮອຍຂອງຊາກສັດເດີກດຳບັນຢູ່ບໍລິເວນຫຼວງພະບາງ ທີ່ມີອາຍຸລະຫວ່າງ 200 ລ້ານປີ ໄດ້ຄົ້ນພົບແຫຼ່ງຊາກຂອງຝູງກະປອມຫຼວງ (ໄດໂນເສົາ) ຢູ່ເຂດຕົ່ງຫວາຍ ແຂວງສະຫວັນນະເຂດ ເຊິ່ງມີອາຍຸເຖິງ 110 ລ້ານປີ ນອກນັ້ນຍັງໄດ້ຄົ້ນພົບຊາກສັດເດີກດຳບັນປະເພດອື່ນໆດ້ວຍ ເຊັ່ນ: ເຕົ່າ ຫອຍກົ້ ປາ ທີ່ແຂວງຊຽງຂວາງ ແລະ ຕົ້ນໄມ້ຫີນ. ທັ້ງໝົດນີ້ສະແດງໃຫ້ພວກເຮົາເຫັນວ່າ ດິນລາວຂອງພວກເຮົາ ມີອາຍຸເກົ່າແກ່ເຕັມທີ ແລະ ເຊິ່ງຢ່າງໜ້ອຍ ພວກເຮົາກໍສາມາດຢືນຢັນໄດ້ໂລດ ວ່າ ມີອາຍຸ ບໍ່ຕ່ຳກວ່າ 200 ລ້ານປີ ແຕ່ໃນຕົວຈິງແລ້ວກວ່ານ້ຳຈະເປັນນ້ຳ ດິນຈະເປັນດິນ ຕົ້ນໄມ້ຈະເປັນກ້ກ ກໍຮູ້ແລ້ວວ່າມີອາຍຸບໍ່ຕ່ຳກວ່າ 3.000- 6.000 ລ້ານປີ.

ສະໄໝນັ້ນ ໜ້າດິນໃນແຖບປະເທດຂອງພວກເຮົານີ້ຍັງບໍ່ທັນມີຮູບໂສມແບບປັດຈຸບັນນີ້ເທື່ອ ຄືບໍ່ທັນມີພູຜາປ່າດົງ ແລະ ຫ້ວຍນ້ຳລຳເຊ ແບບນີ້ຕະຫຼອດ

ບໍ່ທັນມີສາຍພູຫຼວງ ບໍ່ມີພູພຽງຊຽງຂວາງ ກະທັ່ງບໍ່ມີແມ່ນ້ຳຂອງດັ່ງທີ່ເຮົາເຫັນຢູ່ ໃນປັດຈຸບັນນີ້ເລີຍ.

ສ່ວນໃຫຍ່ດິນດອນຕອນນີ້ ຈະມີເບື່ອມບຶງທະເລສາບ ແລະ ພົ້ນຮາບ ມີ ຕົ້ນໄມ້ປະຫຼາດ ເຊິ່ງບໍ່ແມ່ນແບບດຽວກັນກັບຕົ້ນໄມ້ຂອງຍຸກນີ້ ພ້ອມກັນນັ້ນ ກໍ ຍັງມີຝູງສັດແປກປະຫຼາດຢູ່ເປັນຝູງນ້ອຍໃຫຍ່ ທັ້ງປະເພດກິນຫຍ້າ ກິນພືດ ທັ້ງ ປະເພດກິນຊີ້ນ ແລະ ແມງໄມ້ດ້ວຍ. ສັດຕ່າງໆດັ່ງກ່າວນັ້ນກໍ່ເຊັ່ນກັນ ບໍ່ຄືສັດ ພວກເຮົາດຽວນີ້ ມັນເປັນສັດເລືອຄານສີ່ຕີນ ແລະ ສອງຕີນ ພ້ອມດ້ວຍນົກ ບາງ ປະເພດກໍ່ໂຕໃຫຍ່ ຄ່ຍາວ ມີຄວາມສູງເຖິງ 4 ແມັດ ມີຄວາມຍາວເຖິງ 30 ແມັດ ແລະ ມີນ້ຳໜັກເຖິງ 6 ໂຕນ ສັດປະເພດນັ້ນ ເຊິ່ງພາສາສາກົນເພີ້ນເອີ້ນວ່າ "ດິ ໄນຊໍ ຫລື ໄດໂນເສົາ" ແລະ ເຊິ່ງພາສາລາວຮຽກວ່າກະປອມຫຼວງນັ້ນ ນັກປາດ ໄດ້ສົມມຸຕິຖານໄວ້ວ່າ ພວກມັນເກີດຂຶ້ນມາໃນໂລກພວກເຮົາກ່ອນໜ້ານີ້ ປະມານ 220 ລ້ານປີ ແລະ ໄດ້ສູນພັນ ຫລື ຕາຍໄປຈາກໂລກຂອງພວກເຮົາແລ້ວ ກ່ອນ ໜ້ານີ້ຕັ້ງ 65 ລ້ານປີ ຍ້ອນສາເຫດທີ່ຍັງເປັນປິດສະໜາຢູ່. ກໍ່ດັ່ງນີ້ເອງ ກະດູກ ຂອງກະປອມຫຼວງ ຕະຫຼອດຕົ້ນໄມ້ໃນຍຸກນັ້ນ ຈຶ່ງໄດ້ກາຍເປັນຫີນໄປໝົດ ຈາກ ນ້ຳຫີນບໍ (ຫີນປູນ) ທີ່ຊຶມເຂົ້າເທື່ອລະນ້ອຍໆ ແທນເນື້ອກະດູກທີ່ລະລາຍຕິວໄປ ແລ້ວກໍ່ແຂງຕິວເປັນຫີນ ດັ່ງພວກເຮົາຈະເຫັນໄດ້ ໃນພິພິດທະພັນ ເມືອງສະ ຫວັນນະເຂດ ຫລື ທີ່ບໍ່ຂອງມັນພຸ້ນເລີຍ ຄື: ທີ່ບ້ານຕົ້ງຫວາຍ ເມືອງຊົນບູຣີ ແຂວງ ສະຫວັນນະເຂດນັ້ນເອງ.

ເວລາໜ້າດິນລາວສະໄໝບຸຮານຍັງຮາບພຽງ ແລະ ເປັນເບື່ອມບຶງຢູ່ ນັ້ນ ປະກິດການອັນໜຶ່ງກໍ່ເກີດຂຶ້ນ. ປະກິດການດັ່ງກ່າວນັ້ນ ແມ່ນການແຕກ ແຍກ ແລະ ເຄື່ອນຍ້າຍຂອງດິນດອນ ມາເປັນທະວີບຕ່າງໆ ໃນພິພົບຂອງພວກ ເຮົານັ້ນເອງ ຄືກ່ອນໜ້ານີ້ 180 ລ້ານປີ ຍັງມີເກາະຫຼວງໜ່ວຍໜຶ່ງ ເຊິ່ງແຍກ ອອກຈາກແຜ່ນດິນໃຫຍ່ ທີ່ບໍລິເວນຂົ້ວໂລກໃຕ້ ໄດ້ຄ່ອຍເຄື່ອນຕິວຊ້າໆ ມາທາງ ທິດເໜືອເລື້ອຍໆ ເປັນເວລາຫຼາຍ 10 ລ້ານປີ. ຕໍ່ມາຄືເມື່ອກ່ອນໜ້ານີ້ 40 ລ້ານປີ ມະຫາເກາະດັ່ງກ່າວ ກໍ່ໄດ້ເຄື່ອນມາຕຳເອົາ "ທະວີບຊິມພູ" ໃນພາສາລາວ ເຮັດ ໃຫ້ເກີດມີອານຸທະວີບອິນເດັ່ງປັດຈຸບັນ. ສ່ວນດິນທີ່ແຟດພົ້ນຂຶ້ນເໜືອພົ້ນໂລກ

ເຮົາ ຈາກແຮງດັນກະທົບນັ້ນ ກໍ່ກາຍເປັນພູເຂົາຫິມມະໄລ ແລະ ຕິເບດ ໃນທຸກ ວັນນີ້ ເຊິ່ງເພີ່ນຮຽກວ່າແປໂລກນັ້ນເອງ ເພາະຈອມພູມີຄວາມສູງເຖິງ 8.848 ແມັດ ເໜືອໜ້ານ້ຳທະເລ. ເຫດການດັ່ງກ່າວນັ້ນ ໄດ້ສົ່ງຜົນສະທ້ອນອັນໃຫຍ່ ຫລວງໃຫ້ແກ່ທ້ອງທີ່ ທີ່ເປັນດິນດອນຕ່ອນຫຍ້າຂອງລາວເຮົາປັດຈຸບັນ ຄື: ຄົ້ນ ສະທ້ອນຂອງການປະທະກັນລະຫວ່າງອານຸທະວີບອິນເດັ່ງ ກັບທະວີບອາຊີນັ້ນ ໄດ້ກໍ່ໃຫ້ເກີດສາຍພູຫລວງ ຕະຫລອດພູນ້ອຍໃຫຍ່ຕ່າງໆ ໃນປະເທດລາວເຮົາ ນັ້ນຂຶ້ນມາ ແລະ ກໍ່ດັ່ງນີ້ເອງທີ່ຄວາມປ່ຽນແປງຄັ້ງໃຫຍ່ຈຶ່ງໄດ້ເກີດຂຶ້ນແກ່ໂລກ ແລະ ແກ່ດິນແດນລາວເຮົານຳ.

ມາຮອດຍຸກກ່ອນໜ້ານີ້ ປະມານ 35 ລ້ານປີ ກໍ່ປະກົດເກີດມີຊ້າງ 4 ງາ ອັນແມ່ນບັນພະບຸລຸດາແຫ່ງຊ້າງທັງປວງນັ້ນ ຢູ່ດິນແດນລາວເຮົາດ້ວຍ ເພາະໄດ້ ພົບເຫັນແຂ້ວຂອງມັນແລ້ວ ຢູ່ ແຂວງສະຫວັນນະເຂດເຊັ່ນກັນ ແລະ ປັດຈຸບັນກໍ ມີໄວ້ໃຫ້ເບິ່ງໃຫ້ຊົມ ທີ່ຫໍພິພິດທະພັນ ແຂວງສະຫວັນນະເຂດເຊັ່ນກັນ.

" ບັນພະບຸລຸດາດັ່ງກ່າວນັ້ນ ພາສາກິນເພີ່ນຮຽກວ່າ:"ມັສໂຕດົ" ເຊິ່ງພາ ສາລາວເຮົາ ຮຽກວ່າ" ຊ້າງ 4 ງາ " ຫລື "ບັນພະບຸລຸດາ" ກໍ່ໄດ້.

2. ພູຜາປ່າດົງ ທົ່ງພຽງ ແລະ ນ້ຳ.

ຫາກພວກເຮົາຫຍໍ້ດິນແດນລາວເຮົາ ມາເປັນຮູບຈຳຮອງນ້ອຍໆ ເທິງໜ້າໂຕະໄດ້ ພວກເຮົາກໍຈະເຫັນໄລດວ່າ ມັນມີທັງພູຜາດົງຫລາຍລູກຫຼາຍລັ່ນ ບາງຜ່ອງກໍສູງຊັ້ນລິບລ້ວ ແລະ ບາງຜ່ອງກໍຍາວຢຽດໄປໄກແສນໄກ ມັນຍັງມີພູພຽງຫຼາຍໜ່ວຍຫຼາຍເນີນ ມີແມ່ນ້ຳຫຼາຍສາຍ ແລະ ກໍມີທົ່ງພຽງກວ້າງຂວາງຫຼາຍທົ່ງ.

ເຂດທີ່ມີພູຜາຍາວຢຽດ ມີພູຜາສູງຊັ້ນນັ້ນ ແມ່ນເຂດທິດຕາເວັ້ນອອກ ແລະ ພາກເໜືອຂອງປະເທດເປັນສ່ວນໃຫຍ່ ສ່ວນເຂດທີ່ເປັນພູພຽງສຳຄັນທີ່ສຸດ ກໍແມ່ນພູພຽງຊຽງຂວາງ (ພາກເໜືອ) ພູພຽງນາກາຍ (ພາກກາງ) ແລະ ພູພຽງບໍລະເວນ (ພາກໃຕ້).

ສ່ວນທົ່ງພຽງທີ່ສຳຄັນ ແລະ ທີ່ເປັນອູ່ເຂົ້າອູ່ປາຫຼວງຫຼາຍນັ້ນ ກໍແມ່ນທົ່ງພຽງວຽງຈັນ ຕໍ່ລົງໄປຮອດປາກຊັ່ນ ທົ່ງພຽງພາກກາງ ເປັນຕົ້ນແມ່ນແຂວງສະຫວັນນະເຂດ ທົ່ງພຽງຈຳປາສັກ ເຊິ່ງອອກຊື່ລືຊາດ້ວຍເຂົ້າເຫຼືອນາ ປາເຫຼືອນ້ຳ. ນອກນັ້ນ ກໍຍັງມີທົ່ງເລັກທົ່ງນ້ອຍເຊັ່ນ ທົ່ງເຂດຫຼວງນ້ຳທາ ແລະ ເມືອງສິງເປັນຕົ້ນ ເຊິ່ງທັງໝົດທົ່ງພຽງເຫຼົ່ານັ້ນ ຈະກິນເນື້ອທີ່ຢູ່ປະມານ 1/4 ຂອງເນື້ອທີ່ທັງໝົດຂອງປະເທດ ແລະ ຈະຕັ້ງຢູ່ທາງດ້ານຕາເວັ້ນຕົກຂອງປະເທດ ຄືບໍລິເວນທີ່ຮາບ ແມ່ນ້ຳຂອງເປັນສ່ວນໃຫຍ່.

ດັ່ງນັ້ນ ເມື່ອພວກເຮົາສັງເກດເບິ່ງໜ້າດິນ ຂອງປະເທດພວກເຮົາຄັກໆ ແລ້ວ ພວກເຮົາກໍຈະເຫັນວ່າ ທາງດ້ານຕາເວັ້ນອອກນັ້ນ ຈະເປັນຄັນຄູສູງ ແລ້ວຄ່ອຍເນີນລົງມາທາງເບື້ອງທິດຕາເວັ້ນຕົກ ຈົນກາຍເປັນພູພຽງ ແລ້ວ ຕ່ຳລົງມາເປັນທົ່ງຮາບແຄມຂອງ ແຕ່ເຖິງຈະເປັນທົ່ງຮາບພຽງໃດກໍດີ ກໍຍັງມີຄວາມສູງເໜືອລະດັບນ້ຳທະເລພໍສົມຄວນ ເຊັ່ນ ທົ່ນະຄອນຫຼວງວຽງຈັນ ກໍແຫ່ກໄດ້ກວ່າ 300ມ ເໜືອລະດັບນ້ຳທະເລ.

- ພູສູງໃນລາວ (ໝ່ງແຕ່ໄຕເລກເບ້ືອງຕົ້ນ)

ລ/ດ	ລາຍຊ່ືພູ	ແມ້ດ
1	ພູເບ້ັ (ເຂດພິເສດໄຊສົມບູນ)	2.820 ມ.
2	ພູຊາວ (ຊ່ງຂວາ)	2.690 ມ.
3	ພູສາມສຸມ (ຊ່ງຂວາ)	2.620 ມ.
4	ພູໝ່ງ ວ້ັງວ່ງ (ວ່ງຈັນ)	2.570 ມ.
5	ພູເລ້ັຍ (ຫ້ວພັນ)	2.458 ມ.
6	ພູຫວດ (ຊ່ງຂວາ)	2.452 ມ
7	ພູຊ້ໍ (ໄຊຍະບູລ)	2.330 ມ.
8	ພູສາວັກ (ຄໍາມ່ວນ)	2.286 ມ.
9	ພູ່ງອກໃນ (ອັດຕະປ)	2.259 ມ.
10	ພູລວຍ (ຫລວ່ງພະບ)	2.257 ມ.
11	ພູ່ງອກປານ (ອັດຕະປ)	2.251 ມ.
12	ພູຜາວ ທ່ົ່ງໄຫ (ຊ່ງຂວາ)	2.221 ມ.
13	ພູສ້ັນ (ຊ່ງຂວາ)	2.218 ມ.
14	ພູແສນ (ຊ່ງຂວາ)	2.209 ມ.
15	ພູສາມສາດ (ວ່ງຈ້ັນ)	2.128 ມ.
16	ເຈ້ັ່ງ (ຫລວ່ງນ້ໍ)	2.099 ມ.
17	ພູປ້ັນໃຫ່ (ຊໍ້ເໜ)	2.079 ມ.
18	ພູລາວປ (ໄຊຍະບູລ)	2.079 ມ.
19	ພູຫອມຈ້ັນ (ຊ່ງຂວາ)	2.038 ມ.
20	,ພູເຂ ໍ (ໄຊຍະບູລ)	2.007 ມ.
21	ພູປາຄ້ໍ (ຫລວ່ງພະບ)	1.870 ມ.
22	ພູດອຍຈ (ຜ້ົ່ງສາລ)	1.842 ມ.
23	ພູແລ (ບໍລ ໍ)	1.761 ມ.
24	ພູຊ້ໍ (ວ່ງຈ້ັນ)	1.666 ມ.
25	ພູຈາປູຕ (ຫລວ່ງນ້ໍ)	1.588 ມ.

ຈາກການທີ່ພວກເຮົາມີພູຜາສູງຊັນຫຼາຍລຸກຫຼາຍໜ່ວຍດັ່ງນີ້ເອງ ປະເທດພວກເຮົາຈຶ່ງມີແມ່ນ້ຳລຳເຊສຳຄັນ ອັນເປັນສາຂາຂອງແມ່ນ້ຳຂອງ ຫລືນ້ຳຂອງຂອງພວກເຮົາຫຼາຍສາຍ ເຊິ່ງນັບວ່າເປັນສາຍເລືອດລ່ຳລ້ຽງປະເທດຊາດ ຂອງພວກເຮົາໃຫ້ອຸດົມສົມບູນດ້ວຍຊັບໃນດິນສິນໃນນ້ຳ ແລະ ຄວາມສຸກຊຸ່ມຊື່ນເຢັນຕະຫຼອດການ.

- ແມ່ນ້ຳໃຫຍ່ໃນລາວ.

ລ/ດ	ຊື່ແມ່ນ້ຳ	ສະຖິຕິເດີມ	ສະຖິຕິຂອງກົມສະຖິຕິແຫ່ງຊາດ 5/2000
1	ແມ່ນ້ຳຂອງ (ຕອນຜ່ານລາວ)	1.865 ກລມ	1.898 ກລມ
2	ນ້ຳທາ	215 ກລມ	325 ກລມ
3	ນ້ຳອູ	390 ກລມ	448 ກລມ
4	ນ້ຳເຊືອງ	115 ກລມ	
5	ນ້ຳຄານ	215 ກລມ	90 ກລມ
6	ນ້ຳງື່ມ	350 ກລມ	354 ກລມ
7	ນ້ຳງຶບ		
8	ນ້ຳກະດິງ	265 ກລມ	103 ກລມ
9	ເຊບັ້ງໄຟ	190 ກລມ	239 ກລມ
10	ເຊບັ້ງຫຽງ	305 ກລມ	338 ກລມ
11	ເຊ່ໂດນ	185 ກລມ	192 ກລມ
12	ເຊກອງ	230 ກລມ	320 ກລມ
13	ນ້ຳມ້ຳ(ຜ່ານລາວ-ຫວຽດນາມ)	470 ກລມ	
14	ນ້ຳຊ້ຳ (ລາວ-ຫວຽດນາມ)	260 ຫລມ	

ປ່າໃຫຍ່ໃນເມືອງລາວ

ກ່ອນໜ້ານີ້ປະມານ 50 ປີຄືນຫຼັງ ປະເທດລາວເຮົານັບວ່າເປັນປະເທດໃນລະດັບໜຶ່ງຂອງໂລກທີ່ຂຶ້ນຊື່ວ່າອຸດົມສົມບູນ ດ້ວຍປ່າດົງພົງໄພ ແລະ ສັດສາວາສິ່ງ ຈົນກ່ອນໜ້ານີ້ ປະມານ 4 ສະຕະວັດ ຄຸນພໍ່ມາຣິນີໄດ້ບັນທຶກໄວ້ໃນປຶ້ມຂອງທ່ານວ່າ:

" ... ພູຜາດັ່ງກ່າວ ນອກຈາກຈະເປັນປາການ ອ້ອມຮອບປະເທດນັ້ນ (ລາວ) ຢ່າງພິດສະດານ ທັງເປັນຮົ້ວປ້ອງກັນການຮຸກຮານຂອງຕ່າງຊາດນຳດ້ວຍແລ້ວ ມັນຍັງເຮັດໃຫ້ເກີດດິນດຳນ້ຳຊຸ່ມ ແລະ ຄວາມອຸດົມສົມບູນດ້ວຍໄມ້ນາໆພັນ ສຳລັບຄວາມຕ້ອງການໃຊ້ສອຍ ຢ່າງບໍ່ຈຳເປັນຕ້ອງໄປຂອກເອົາທາງນອກເຂົ້າມາ. ຍິ່ງໄປກ່ວານັ້ນ ໄມ້ດັ່ງກ່າວຍັງຊ່ວຍອຸດໜູນຄວາມຕ້ອງການຂອງປະເທດ ເພື່ອນບ້ານໄດ້ນຳດ້ວຍ ຝູງປ່າດົງພົງໄພທັງຫມົດ ອັນມີໄມ້ລຳດີ້ວລຳສູງ ຍັງເກີດຂຶ້ນຢູ່ຕາມຕີນພູຜາອ້ອມຮອບຣາຊະນາຈັກດັ່ງກ່າວນັ້ນ ອັນປະກອບເປັນຕ້າຍທີ່ໜ້າຊື່ນຊົມ ທີ່ສຸດເທົ່າທີ່ໄດ້ພົບເຫັນມາ ຈົນເຮັດໃຫ້ເກີດຄວາມຮູ້ສຶກນຶກຄຶດເໝືອນດັ່ງວ່າ ຜູ້ຄົນໄດ້ຕັ້ງແກ້ງເອົາມັນມາປູກລຽນລາຍກັນໄວ້ ເພື່ອປະກອບເປັນກຳແພງໜວງ ແລະ ເພື່ອຈະຕ້ານທານກັບກະແສນ້ຳຕົກ (ໄຫຼ) ທີ່ລຸ່ງທັ່ງເທຢ່າງສຸດແສນຈະຮ້າຍຂາດ ".

" ຖິ່ນຖານ ບ້ານເກີດຂອງເຮົາ
ມີແຕ່ພູເຂົາ ເຫຼົ່າຜາປ່າດົງ
ພົ້ງໄພ ອັນໃຫຍ່ ແລະ ກວ້າງ
ເໝືອຍໝີໝູ່ກວາງ ລ່ວງຕາມແຄມເຊ
ເຊົ້າເຢັນ ເຮົາແລເຫັນໄມ້
ໝອກມົວກົ້ວໃບ ແສງໃສສ່ອງມາ
ແຂກເຂົາ ກາເວົ້າຂັນຮ້ອງ
ຟັ່ງສຽງນົກນອງ ໄຕ່ນຕາດຕົ້ນຜາ
ອາບເຫລົ້ນ ເຢັນໃຈຫາຍຮ້ອນ
ຫາຍສະຫວ່າງອຸຫອນ ພັກຜ່ອນກາຍຍາ

ເພັ້ງບຸກໃຈຂອງນ້ຳລ້ານທ່ານໝໍທອງດີ.

ນີ້ແມ່ນບົດເພັ່ງອະນຸສະຕະ "ຖິ່ນຖານບ້ານເກີດ" ແຕ່ງໂດຍ ມໍ້ລາ ດຣ. ທອງດີ ໃນສະໄໝທົດສະວັດທີ່30. ທ່ານໄດ້ວາດພາບທຳມະຊາດເມືອງລາວເຮົາໄວ້ເປັນອານຸສອນ ຕົກທອດມາຮອດເຊັ່ນພວກເຮົາ. ມັນຍັງແມ່ນອຸດົມຄະຕິ ແລະ ຄວາມມຸ່ງຫວັງຂອງທ່ານ ທີ່ຢາກໃຫ້ເມືອງລາວເຮົາຄົງສະພາບແບບນີ້ຝາກໄວ້ກັບພວກເຮົາດ້ວຍ.

ແຕ່ບັດນີ້ສະພາບທຸກຢ່າງໄດ້ມີການປ່ຽນແປງ ປ່າດົງດິບເຮົາຖືກທຳລາຍໄປເກືອບໝົດແລ້ວ ຍັງເຫຼືອແຕ່ພຽງບໍ່ເຖິງ 1 ແສນ ເຮັດຕາທ່ໍນັ້ນ ນອກນັ້ນຍັງມີປະຊາກອນຂອງພວກເຮົາຈຳນວນກວ່າ 3 ແສນຄົນ ຍັງອາໄສການເຮັດໄຮ່ເພື່ອລ້ຽງຊີບຢູ່ ແລະ ໂດຍບໍ່ນັບການເພີ່ມພົນລະເມືອງລາວເຮົາແຕ່ລະປີເຖິງ 1 ແສນ 3 ຫມື່ນຄົນ ເຊິ່ງຈຳນວນໜຶ່ງແນ່ນອນຕ້ອງເພີ່ມເຂົ້າໃນຈຳນວນປະຊາກອນ ທີ່ອາໄສການເຮັດໄຮ່ລ້ຽງຊີບອີກດ້ວຍ.

ສ່ວນປ່າດົງດິບທີ່ຍັງຫຼົງເຫຼືອທີ່ວ່າມານີ້ ຍັງມີໜ້ອຍເຕັມທີ ຢູ່ເຂດແຂວງຜົ້ງສາລີ ທີ່ແມ່ນ້ຳອູຕອນປາຍ ເຊິ່ງບໍ່ຄວນແຕະຕ້ອງມັນອີກ ບໍ່ດັ່ງນັ້ນນ້ຳອູຈະແຫ້ງລົງອີກຫຼາຍເທົ່າ ມັນຍັງມີຢູ່ເຂດທາງທິດຕາເວັນອອກຂອງປະເທດ ຕາມເປັ້ນພູຫຼວງ ຕັ້ງແຕ່ພູພຽງນາກາຍລົງໄປແຂວງຄຳມ່ວນ ເຊກອງ ແລະ ອັດຕະປື ບາງຈຳນວນເທົ່ານັ້ນ ເຊິ່ງກໍ່ຍັງຖືກຂົ່ມຂູ່ວ່າ ຈະຖືກຂຸດຄົ້ນ ແລະ ທຳລາຍຕໍ່ໄປ.

- ແຮ່ທາດສຳຄັນໃນລາວ

ເນື່ອງຈາກວ່າປະເທດຂອງພວກເຮົາ ຕັ້ງຢູ່ບົນດິນແດນ ທີ່ເກົ່າແກ່ຫລາຍຮ້ອຍ ຫລາຍພັນລ້ານປີ ແຖມຍັງມີການປ່ຽນແປງຂອງໜ້າດິນຢ່າງໃຫຍ່ຫຼວງ ດັ່ງນັ້ນຈຶ່ງນັບວ່າ ມີຄວາມອຸດົມສົມບູນດ້ວຍແຮ່ທາດນາໆຊະນິດ.

ຕາມຂໍ້ມູນເບື້ອງຕົ້ນທີ່ໄດ້ຈາກການສຳຫຼວດຂອງກົມທໍລະນີວິທະຍາ ປະເພດແຮ່ທາດທີ່ມີປະລິມານໜ້ອຍຫລາຍຕ່າງກັນນັ້ນ ມີເຖິງ 30 ກວ່າຊະນິດ ແລະ ແຮ່ທາດທີ່ສຳຄັນ ແລະ ປະລິມານຫຼາຍກໍມີ ເຊັ່ນ: ຄຳ ເງິນ ທອງແດງ ເຫຼັກ ກົ່ວ ສັງກະສີ ຖ່ານຫີນ ຟົດສະຟັດ ບ້ຽກາແມດ ອາຍແກັສ ຫີນປຸນ ຫີນແກ້ວ ຫີນກາວ ແກ້ວປະເສີດ ນາດ ເກືອ ແລະ ທາດອື່ນໆອີກຫຼາຍຊະນິດ.

2. ພູມອາກາດ ແລະ ລະດູການ.

ປະເທດຂອງພວກເຮົາ ຕັ້ງຢູ່ໃນພາກພື້ນ ແລະ ເຂດຄ່າຍຂອງບັນດາປະເທດທີ່ມີອາກາດຮ້ອນ ພາຍໃຕ້ອິດທິພົນຂອງລົມມໍລະສຸມສ່ວນຮ້ອນ ອັນສະແດງວ່າ ເປັນປະເທດທີ່ຕ້ອງມີຝົນຕົກຫຼາຍໃນລະດູຮ້ອນ ແລະ ເມື່ອລະດູຮ້ອນມີຝົນຕົກ ເພິ່ນກໍມັກເອີ້ນລະດູຮ້ອນ ກັບລະດູຝົນ ເປັນລະດູດຽວກັນ. ແຕ່ຖ້າເຮົາຈະເວົ້າເຖິງລະດູຮ້ອນ ກໍຕ້ອງເລີ່ມແຕ່ ເດືອນເມສາເປັນຕົ້ນໄປຈົນຮອດລະດູຝົນ ຫລື ຖ້າເຮົາຈະເວົ້າເຖິງລະດູຝົນ ກໍຕ້ອງເລີ່ມແຕ່ເດືອນ ກໍລະກົດເປັນຕົ້ນໄປຈົນເຖິງເດືອນກັນຍາ. ຈາກນັ້ນໄປກໍເລີ່ມມີອາກາດເຢັນ ແລະ ເຂົ້າລະດູໜາວ ຫລື ເພິ່ນມັກຮຽກອີກວ່າລະດູແລ້ງ.

ດັ່ງນັ້ນຖ້າຈະແບ່ງອາກາດໃນເມືອງລາວເຮົາໃຫ້ຈະແຈ້ງ ກໍຈະແບ່ງໄດ້ເປັນ 3 ລະດູການທໍ່ນັ້ນ ຄື:

- ລະດູຮ້ອນແຕ່ເດືອນ 4 ແຮມຄ່ຳໜຶ່ງ ຮອດເດືອນ 8 ເພັ້ງ
- ລະດູຝົນແຕ່ເດືອນ 8 ແຮມຄ່ຳໜຶ່ງ ຮອດເດືອນ 12 ເພັ້ງ
- ລະດູໜາວແຕ່ເດືອນ 12 ແຮມຄ່ຳໜຶ່ງ ຮອດເດືອນ 4 ເພັ້ງ

ຈາກຈຸດພິເສດຂອງທີ່ຕັ້ງ ແລະ ພູມປະເທດຂອງລາວ ພວກເຮົາສາມາດສັງເກດເຫັນໄດ້ວ່າ ອາກາດໃນເມືອງລາວເຮົາມີອັນດີແຕກຕ່າງໝູ່ ປຽບໃສ່ປະເທດອ້ອມແອ້ມເຮົາ.

ຈຸດພິເສດນັ້ນແມ່ນ:

1. ເຮົາມີພູຜາສູງຊັນ ແລະ ພູພຽງສູງທາງດ້ານເໜືອ ທາງດ້ານຕາເວັນອອກຈົນເລີຍລົງໄປຮອດພາກໃຕ້.
2. ເນື້ອທີ່ມີລະດັບຄວາມສູງ ສູງກວ່າເພິ່ນໃນພາກນີ້.

ຈຸດພິເສດ2ຢ່າງນີ້ ເຮັດໃຫ້ອາກາດລາວມີອັນພິເສດຕ່າງປະເທດເພື່ອນບ້ານດັ່ງນີ້:

3. ເມື່ອເຖິງເດືອນກໍລະກົດມາ ລົມມໍລະສຸມສ່ວນຮ້ອນທີ່ພັດມາຈາກມະຫາສະ

ໝຸດອິນເດັ່ງໄດ້ນຳເອົາປະລິມານນ້ຳຝົນມາພ້ອມ ແຕ່ພໍມາກະທົບໃສ່ສາຍພູ ຫຼວງ ແລະ ໜ່ວຍພູອື່ນໆແລ້ວເລີຍເກີດປະຕິກິລິຍາ ພາໃຫ້ນ້ຳຝົນຕົກໜັກ ຄື ແຕ່ລະປີວັດໄດ້ແຕ່ 1.500ມມ ເຖິງ 3.000ມມ ແຕ່ເຖິງຝົນຈະຕົກໜັກກໍຕາມ ການທີ່ຈະມີນ້ຳຖ້ວມຂັງເປັນເວລາດົນນານນັ້ນ ມີໜ້ອຍເທື່ອທີ່ສຸດ ປຽບໃສ່ບາງ ປະເທດເພື່ອນບ້ານ ເພາະດິນເຮົາລຶ່ງລິ່ງນ້ຳຂອງຈຶ່ງລະລາຍນ້ຳສ່ວນໃຫຍ່ໄດ້ໄວ ແຕ່ອັນໜ້າຢ້ານກໍຄືນ້ຳອັນໄຫຼແຮງນັ້ນເອງ.

ພໍລະດູໜາວມາເຖິງ ລົມມໍລະສຸມທາງເໜືອ ເຊິ່ງນຳເອົາຄວາມໜາວ ເຢັນມາ ເມື່ອປະທະກັບສາຍພູຫຼວງ ແລະ ພູຜາທາງພາກເໜືອແລ້ວ ລົມກໍອ່ອນ ລົງ ແລະ ຄວາມໜາວກໍອ່ອນແຮງເຊັ່ນກັນ.

ພໍພາຍຸໄຕ້ຝຸ່ນພັດມາ ແຕ່ອ່າວຫງຄນາມ ຫລື ທະເລຈີນໃຕ້ ເມື່ອຜ່ານ ຫວຽດນາມກະທົບໃສ່ສາຍພູຫຼວງ ສ່ວນໃຫຍ່ກໍຕ້ອງອ່ອນແຮງລົງເຊັ່ນກັນ ອັນເຮັດ ໃຫ້ໄພອັນຕະລາຍຈາກພາຍຸນັ້ນໜ້ອຍກວ່າປະເທດເພື່ອນບ້ານ.

ສະຫຼຸບແລ້ວ ທີ່ປະເທດເຮົາ ອັນຕະລາຍຈາກນ້ຳຖ້ວມ ພາຍຸ ແຫ້ງແລ້ງ ໜາວຈັດ ກະທັ່ງແຜ່ນດິນໄຫວ ແລະ ພູໄຟລະເບີດ ມີຄວາມສ່ຽງໜ້ອຍກວ່າ ແຕ່ ວ່າອາກາດນັ້ນ ກໍມີບ່ອນໜຸດລົ້ນນກັນ ເຊັ່ນ: ທີ່ ຜົ້ງສາລີ ຫຼວງນ້ຳທາ ອຸດົມໄຊ ນາໄກ ຊຳເໜືອ ພູພຽງ ຊຽງຂວາງ ພູພຽງນາກາຍ ຕະຫຼອດ ພູພຽງ ບໍລະເວນ ຈະ ມີຄວາມໜາວກວ່າ ເຂດທົ່ງພຽງວຽງຈັນ ຫລື ແຄມນ້ຳຂອງ ພໍສົມຄວນ. ໃນເຂດ ດັ່ງກ່າວນັ້ນ ກໍລະນີອຸນຫະພູມຈະລົງຮອດລົບກໍມີຫຼາຍ ສ່ວນເຂດທົ່ງພຽງນັ້ນ ຈະ ອົບອຸ່ນ ຫລື ໜາວໜ້ອຍກວ່າ ເຊັ່ນຢູ່ວຽງຈັນ ລະດູໜາວ ຈະລົງຮອດ 10° ແຕ່ ລະດູຮ້ອນສູງສຸດຈະຂຶ້ນເຖິງປະມານ 36°. ສ່ວນພາກອື່ນໆຂອງປະເທດນັ້ນ ກໍ ມີການໜຸດລົ້ນກັນໄປພໍປະມານ ອີງຕາມທີ່ຕັ້ງ ແລະ ລະດັບຄວາມສູງ ຂອງພູມີ ປະເທດ.

ພາກ II

ຜູ້ຄົນພົນລະເມືອງລາວລ້ານຊ້າງ.

" ແດນລາວ
ມີຊື່ລືໄວ້
ຢູ່ເໜືອ
ບໍ່ແມ່ນອື່ນໄກ
ພີ່ນ້ອງ
ຢ່າຕີຢ່າວ່າ
ຄົນໃດ
ຊ່ອຍຊູຜູ້ທຸກ
ເລືອດເນື້ອ
ເຮົາຕ້ອງຮັກກັນ

ຍືດຍາວຄາວໄກ
ລ້ານຊ້າງເດີມມາ
ຫົວ່າຢູ່ໃຕ້
ລ້ວນແຕ່ໄທລາວ
ປົກປ້ອງກັນມາ
ໄທເໜືອໄທໃຕ້
ໄດ້ດີມີສຸກ
ກ້ຽວົນສົນໃຈ
ເຊື້ອແນວແຊວພັນ
ຈົນສິ້ນຊີວາ

ເພັງ ບຸກໃຈຂອງປີ້ລ້ຽງທ່ານ ຫນໍ ທອງດີ.

24 / VII
ห้ามจำหน่าย

ເຊື້ອຊາດລາວ.

ຊາດລາວເຮົາມີຈຳນວນພົນ ທັງໝົດ 5.200.000 ຄົນ (21 ຄົນ/1 ກລມ) ເປັນຊາດທີ່ປະກອບດ້ວຍຫຼາຍເຜົ່າພັນ ດຳລົງຊີວິດຢູ່ຮ່ວມກັນ ສ້າງສາປົກປ້ອງ ປະເທດຊາດຮ່ວມກັນ ໃນດິນດອນແຫ່ງມາຕຸພູມຂອງພວກເຮົາມາໄດ້ນັບພັນໆປີ.

ພວກເຮົາສາມາດຈັດຕະກຸນພາສາຊາດລາວເຮົາໄດ້4ຕະກຸນໃຫຍ່ ເຊັ່ນ:

- ຕະກຸນ ອ້າຍລາວ ລຸ່ງ ຫລື ລາວ-ໄຕ.
- ຕະກຸນ ອາຊີໃຕ້ (ອິດໂຕຣອາຊ໊ອາຕິກ) ຫລື ມອນ-ຂະແມ.
- ຕະກຸນ ມົ້ງ - ຢ້າວ
- ຕະກຸນ ຈີນ - ຕິເບດ

ໃນ 4 ຕະກຸນໃຫຍ່ດັ່ງກ່າວ ພວກເຮົາສາມາດຈັດເປັນກຸ່ມຍ່ອຍ ຫລື ແຊກເຜົ່າ ແລະ ເອກະລັກທ້ອງຖິ່ນໄດ້ຫຼາຍ 10 ເອກ໊ລັກດ້ວຍກັນ.

I. ຕະກຸນຂອມ(ອິສໂຕຣອາຊ໊ອາຕິກ) ເຊິ່ງພວກເຮົາມັກຮຽກວ່າຂອມ ຫຼື ມອນ-ຂະແມ.

1. ສາຂາກຶມອີກ (ຂະມຸອີກ)

1.1. ຈຸ້ມ ກຶມໜຸ (ຂະມຸ)

- ຣອກ
- ຄຣອງ
- ລີ
- ກະຊັກ
- ອຸ
- ຍວນ

- ແຄວນ
- ແມ
- ແຖນ
- ອຶມ
- ເມືລະບຣິ (ມລບຣິ,ມາບຣິ,ຄົນປ່າ)(ຕອງເຫລືອງ -ຊົ່ຫຍ້ຫ້ໍ)

1.2- ຈຸ້ມພ້ອງ.

- ພ້ອງຫາດ (ໄທຫາດ)
- ພ້ອງລານ
- ພ້ອງປຸງ
- ພ້ອງຈະປວງ (ລາວໃຫ່ມ)
- ພ້ອງກນຸ່ງ
- ພ້ອງແຟນ

1.3. ຈຸ້ມຊົ່ງມູນ (ລາວໃຫມ່,ລາວຮຸ່ງໂດຍທ່ານໄກສອນ(ປວກ-ຊົ່ຄ້ຳຫຍ້ຫ້ໍ)

1.4. ຈຸ້ມຖິ່ນ ຫລື ໄປຣ.

- ຖິ່ນມາລ
- ຖິ່ນ ໄປຣ (ລາວໃຫມ່)

2. ສາຂາ ປະລັ່ງອິກ

2.1. ຈຸ້ມ ລະເມດ

2.2. ຈຸ້ມ ບິດ

2.3. ຈຸ້ມ ສາມຕາວ

3. ສາຂາ ຢຣຸອິກ (ບານາອິກ ຕາເວ້ນຕົກ)

3.1. ຈຸ້ມລະເວ້ນ(ຢຸ່ຣຸ)

3.2. ຈຸ້ມ ຍາເຫີນ

3.3. ຈຸ້ມ ໂອຍ

3.4. ຈຸ້ມລະແວ

3.5. ຈຸ້ມ ເຈ່ັ

3.6. ຈຸ້ມ ແຢ

3.7. ຈຸ້ມ ຕລ໋ງ (ຕ ລ໋ງ)

3.8. ຈຸ້ມ ອ ຣ໊ກ (ອ ລ໊ກ,ກ ເສ)

3.9. ຈຸ້ມ ລ ວ໊ິ

3.10.ຈຸ້ມ ຊ ດ໋ງ (ກ ຍ ່ັ)

4. ສ ຂ ວ ດ໊ິກ (ວ ດ-ເ ່ັ ອ)

4.1. ຈຸ້ມ ຕຸ້ມ

4.2. ຈຸ້ມ ງ ່ວ

4.3. ຈຸ້ມ ເ ່ັ ອ

4.4. ຈຸ້ມ ກ ຣ໊ິ (ມ ແ ລ໋ງ,ສ ລ໋ງ,ອ ເ ຣ,ອ ຣ ວ,ອ ແ ຕ)

5. ສ ຂ ບ ຮ ຸ ອ ິ ກ.

5.1. ຈຸ້ມ ມ ກ ອ (ຕ ຣ ຸ ຍ,ຕ ຣ ້ ອ ,ມ ເ ຣ ີ ຍ,ປ ວ ຣ) ໂ ຊ ຍ ແ ມ ່ ນ ຊ ິ ້ ຕ ່ ໍ ຕ ້ ອ ຍ.

5.2. ຈຸ້ມ ກ ຍ ຕ ່ ໆ

5.3. ຈຸ້ມ ຕ ຣ ໊ິ

5.4. ຈຸ້ມ ສ ່ ວ ຍ

6. ສ ຂ າ ກ ຍ ຕ ູ ອ ິ ກ.

6.1.ຈຸ້ມ ຕ ຍ ໂ ອ ຍ (ອ ິ ໆ,ອ ິ ນ)

6.2. ຈຸ້ມ ປ ຍ ໂ ກ (ກ ຍ ໂ ດ,ກ ຍ ໄ ມ)

6.3. ຈຸ້ມ ແ ງ ຍ,ກ ຣ ງ ໆ (ຈ າ ຕ ້ ອ ໆ,ກ ຣ ຶ ມ)

6.4. ຈຸ້ມ ກ ຍ ຕ ູ.

II. ตะกูล จีน-ติเบต.

1. สาขาที่ .

2. สาขา ติเบต-พะม่า.

2.1. จุ่ม อาถา (ก่ำ,ลาวก่ำ)

- ก่ำ ธาลา
- ก่ำ ปูลิ
- ก่ำ จิจ๋ำ
- ก่ำ โอมา
- ก่ำ ลูมา
- ก่ำ โภเฟ
- ก่ำ พูซาๆ
- ก่ำ มูจิ
- ก่ำ ซาบ๋ำ
- ก่ำ มูเติน (เฮิปา-เจิเปัย)
- ก่ำ มูกุ่ย
- จุ่ม พูน้อย (ฮ๊ๅสะลิ)

(จุ่ม ลาวแซง,ลาวไพ่,ลาวปาม,ตี้ๆกู่,ตี้ๆเส้ด)

- จุ่ม มูเซิ หลื ลาฮู (กุ่ย)
- มูเซิแดงๆ(กุ่ย หลื ลาฮู)
- มูเซิดำ (ลาฮูบา)
- มูเซิขาว (ลาฮูเฉะเลย)
- จุ่ม สิลา
- จุ่ม โลโล
- จุ่ม เล่ิ
- จุ่ม ธานิ

III. ตะกุนมิ้ง ย้าอ (ยิอมยุน)

1. สาขา มิ้ง
   - มิ้งขาอ
   - มิ้งลาย(มิ้งขฺยอ)
   - มิ้งดำ
2. สาขา ย้าอ, ยิอ,ยิอมยุน
   2.1. จุ้ม ย้าอ (ย้าอขาอ ย้าอผิมแดง)
   2.2.จุ้ม ลามแตม ฆื ลาอห้อย

IV. ตะกุน อ้ายลาอ ฆื ฆฺยอ ฆื ลาอ-ไต (ไต-กะได)

1. สาขาลาอ.
   - ลาอ
   - พอน
   - กะเลิง
   - ย้
   - ย้อย
   - ไบ้
2. สาขาลื้-ยอน.
   2.1. ลื้ (ลาอน้อย-จิอฆฺยอ)
   2.2. ยอน (ลาอจิก-กะล่อม)
   2.3. ฆฺยอ (ลาอม่วน-ขึน)
   2.4. ไตเมิ (ไตเหมือ)
3. สาขาไต (เมิงลาอ-ผู้ไท)
   3.1. ไตดำ (ลาอขี่ง, ลาอแถง)

3.2. ไตแดงๆ

3.3. ຢ້ຶງ

3.4. ຜູ້ໄທ

3.5. ເມີ້ຍ

3.6. ແຊກ

3.7. ไตขาว (ไตด่อน)

3.8. ແມນ

ເອກະລັກຂອງແຕ່ລະກຸ່ມຊົນ.

1. ຕະກຸນຂອມ ຫລື ມອນຂະແມ.

ກຸ່ມອາຊີໃຕ້ເຊິ່ງປະກອບມີພວກມອນ - ຂະແມ ນຳນັ້ນ ປະກົດວ່າແມ່ນກຸ່ມຊົນປະເພດເກົ່າແກ່ກວ່າເພື່ນ ໃນດິນແດນແຫຼມອິນໂດຈີນ. ເຂົາເຈົ້າຢູ່ກັນຢ່າງກະແຈກກະຈາຍ ເປັນກຸ່ມຍ່ອຍພາຍໃຕ້ຊື່ຮຽກແຕກຕ່າງກັນ ຕາມແຕ່ກົກເຜົ່າເຫຼົ່ານຳໃຜມັນ ມີພາສາປາກເວົ້າ ນອນຢູ່ໃນກຸ່ມພາສາມອນ-ຂະແມ ອັນດຽວກັນ. ເຂົາເຈົ້າໄດ້ປະຮ່ອງຮອຍແຫ່ງ ອະຣິຍະທຳທີນ ແລະ ທອງສຳລິດ ໄວ້ກະແຈກກະຈາຍໄປທົ່ວດິນແດນ ແລະ ແຫຼມອິນໂດຈີນ ຕັ້ງແຕ່ເໜືອຕະຫຼອດໃຕ້ເຊິ່ງໃນນັ້ນອັນທີ່ເດັ່ນແຈ້ງກວ່າຫມູ່ ແມ່ນຫີນຕັ້ງ ແລະ ໄຫຫີນຢູ່ພູພຽງຊຽງຂວາງ ແລະ ແຂວງຫົວພັນ.

ພວກໂອສໂຕຣອາຊີອາຕິກ ກໍ່ບໍ່ຕ່າງຫຍັງກັບ ພວກລາວລຸ່ມ ເຂົາເຈົ້າດຳລົງຊີວິດຕາມແບບປະເພນີດ້ວຍການປູກເຂົ້າ ປູກພືດລົ້ມລຸກ ການລ້ຽງສັດ ແລະ ລ່າເນື້ອ. ເຂົາເຈົ້າຢູ່ເຮືອນຮ້ານ ເຊິ່ງມີໂຄງສ້າງທາງສະຖາປັດຕະຍະກຳ ຄ້າຍຄືກັບພວກລາວລຸ່ມຢູ່ບາງທ້ອງຖິ່ນ ແລະ ແຕກຕ່າງກັນອອກໄປເປັນບາງທ້ອງຖິ່ນ.

- ລັກສະນະພິເສດ ຂອງສາຂາຂະມຸອີກ ແລະ ປະລັ່ງອີກ ກໍ່ມີເຊັ່ນ : ເຂົາເຈົ້າຢູ່ກັນກະແຈກກະຈາຍ ໄປຕາມທ້ອງຖິ່ນຕ່າງໆ ແລະ ປະປົນກັບລາວລຸ່ມພໍສົມຄວນ ທາງຖິ່ນສູງຂອງ 10 ແຂວງ ພາກເໜືອຂອງລາວເຊັ່ນ: ບໍ່ແກ້ວ

ໜວງນ້ຳທາ ອຸດົມໄຊ ຕົ້ງສາລີ ຊຳເໜືອ ຊຽງຂວາງ ໜວງພະບາງ ໄຊຍະບູລີ ວຽງຈັນ ບໍລິຄຳໄຊ ແລະ ກຳແພງນະຄອນວຽງຈັນ. ເຂົາເຈົ້າພາກັນປູກເຂົ້າຕາມໄຮ່ ພ້ອມທັງເປັນນັກລ່າສັດເກ່ງ. ເຄື່ອງນຸ່ງຂອງເຂົາເຈົ້າ ກໍຄ້າຍຄືກັນກັບລາວລຸ່ມ ແລະ ແຕກຕ່າງກັນໄປຕາມແຕ່ລະທ້ອງຖິ່ນດ້ວຍ. ເຄື່ອງເສບຂອງເຂົາເຈົ້າກໍມີ ແຄນ ເປັນພື້ນຖານ ມີປີ່ ຄູ່ຍ ເກີ່ງ ປັ້ງທີ່ງ ແລະ ຄ້ອງບ້ຳ ເຊິ່ງເຂົາເຈົ້າພາກັນ ຫລິ້ນ ໃນປຳບຸນຕ່າງໆສະລັບດ້ວຍສຽງ "ຂັບເຕີ່ມ" ອັນຫນ້າອອນຊອນ.

- ສ່ວນສາຂາທາງພາກໃຕ້ເຊັ່ນ: ບຣູອິກ, ຢຸຣຸອິກ ແລະ ວຽດຕິກ ກໍຢູ່ກັນ ເປັນກຸ່ມນ້ອຍ ພໍໃສພໍມັນ ໃນເຂດທົ່ງພຽງ ແລະ ໂດຍສະເພາະແມ່ນທີ່ພູພຽງ ບໍລິ ເວນ ແລະ ເປັນພູໜວງ ດ້ານຕາເວັນຕົກ. ຜູ້ທີ່ຢູ່ໃນເຂດທົ່ງພຽງນັ້ນ ດຳລົງຊີວິດ ຄ້າຍຄືພວກລາວລຸ່ມ ເຮັດນາ ແລະ ຢູ່ເຮືອນຮ້ານ ຕຳໜຸກ..ສ່ວນຜູ້ທີ່ຢູ່ຖິ່ນສູງ ກໍ ເຮັດໄຮ່ ປູກເຂົ້າ ມີບາງບ່ອນກໍຍັງຮັກສາເຮືອນລອມຂອງເຂົາເຈົ້າໄວ້ຢູ່ ເຊິ່ງ ແມ່ນຮູບແບບ ການດຳ ລົງຊີວິດ ແບບບູຮານທີ່ຍັງຫຼົງເຫຼືອຢູ່. ສະຖາປັດຕະຍະ ກຳ ການສ້າງເຮືອນແປງຊານ ກໍ່ມີຄວາມແຕກຕ່າງກັນໄປ ຕາມແຕ່ລະກຸ່ມຍ່ອຍ ເຊັ່ນ: ບາງກຸ່ມກໍເຮັດເຮືອນແບບ ແປມີນຮູບໄຂ່ ແລະ ມີສິລະປະ ປະດັບປະດາ ພິເສດພໍສົມຄວນ. ເຖິງວ່າເຂົາເຈົ້າຈະດຳລົງຢູ່ໃນກຸ່ມມອນ-ຂະແມ ດຽວກັນກໍ ຕາມ ແຕ່ການທີ່ຈະເຂົ້າໃຈລະຫວ່າງກັນ ທາງດ້ານພາສາປາກເວົ້ານັ້ນ ບໍ່ແມ່ນ ງ່າຍດາຍສະເໝີ. ເຄື່ອງນຸ່ງຂອງຖີ ຂອງເຂົາເຈົ້າມີສີຕັດໜຸ ເຫຼືອງ ແລະ ແດງດຳ. ເມື່ອເວລາມີພິທີກຳ ທຳບຸນມາຮອດ ເຂົາເຈົ້າມັກເຮັດພິທີບວງສວງ ດ້ວຍການ ຂ້າຄວາຍໜາຍໂຕພາບກັນ ພ້ອມທັງຫຼິ້ນເຄື່ອງດົນຕີ ເຊິ່ງກໍມີຄ້ອງຊຸມ ຄ້ອງລາ ແຄນ ລະນາດ ປະຖົມປະຖານຮຽກວ່າ "ຕຸ່ງລຸ່ງ" ແລະ ອີກໜາຍເຄື່ອງດ້ວຍກັນ. ເຫຼົ້າໄຫໃຫຍ່ ແມ່ນເອກະລັກໜຶ່ງ ເຊິ່ງເຂົາເຈົ້າພາກັນດື່ມກິນ ໃນໂອກາດແບບນີ້ ພ້ອມທັງຟ້ອນເປັນວົງແບບມ່ວນຊື່ນ. ສ່ວນໜາຍ ບໍ່ວ່າຜູ້ໃຫຍ່ ເດັກນ້ອຍ ແລະ ແມ່ຍິງເຂົາເຈົ້າພາກັນສູບຢາໜາຍດ້ວຍກອກເດັ່ ກອກກັ່ນຍາວ ແລະ ບູລີ.

ໃນດ້ານຄວາມເຊື່ອຖືນັ້ນ ເຖິງແມ່ນວ່າກຸ່ມມອນຂະແມຈະເປັນຜູ້ນຳເອົາ ພຸດທະສາດສະໜາເຂົ້າມາໃນດິນແດນລາວພວກເຮົາເປັນຜູ້ທຳອິດກໍຈິງ ແຕ່ຈຳ ນວນປະມານກວ່າເຄິ່ງໜຶ່ງຂອງປະຊາກອນກຸ່ມນີ້ ຍັງເຊື່ອຖືຜີຕາມຮີດຄອງເດີມ.

ສ່ວນຜູ້ທີ່ຖືພຸດທະສາສະໜາກໍຍັງຖືຜີປະປົນກັນໄປ ອັນເປັນປະກົດການທົ່ວໄປ ໃນໝູ່ຊາວພຸດລາວ.

ສິ່ງທີ່ພິເສດໃນກຸ່ມ ໂອສໂຕຣອາຊີອາຕິກນັ້ນ ແມ່ນກຸ່ມທີ່ຮຽກວ່າ ເມິລະ ບຣິ ທີ່ນອນຢູ່ໃນ ສາຂາຂະມຸອິກ ແລະ ກຸ່ມ ສະລາງ ຫລື ຮາເຣ້ມ ສາຂາວຽດ ຕິກ. ສອງກຸ່ມນີ້ເປັນກຸ່ມນ້ອຍໆ ດຳລົງຊີວິດ ພວກໜຶ່ງຢູ່ທີ່ແຂວງໄຊຍະບູລີ ໃກ້ໆ ຊາຍແດນ ລາວ-ໄທຍ ແລະ ອີກພວກໜຶ່ງຢູ່ແຂວງຄຳມ່ວນ ຕາມເປັ້ນພູ ຫຸວງມ່ຽງຊາຍແດນ ລາວ-ຫວຽດນາມ. ເຂົາເຈົ້າດຳລົງຊີວິດຢູ່ ສາມມື້ຍ້າຍເຮືອນ ສາມເດືອນຍ້າຍບ້ານ ຢູ່ເນື້ອງນິດ ໄປຕາມປ່າດົງ ເຊິ່ງເຂົາເຈົ້າຫາອາຫານກາມ ກິນໄດ້ຕາມທຳມະຊາດເປັນສ່ວນໃຫຍ່.

2. ກຸ່ມຊົນອ້າຍລາວ (ລຸ່ງ ຫລື ຮຽກວ່າລາວ-ໄຕ).

ກຸ່ມນີ້ ເປັນກຸ່ມຊົນຕະກຸນໃຫຍ່ ເຊິ່ງດຳລົງຊີວິດຢູ່ໃນພາກພື້ນ ອາຊີ ອາຄະເນ ໃນເນື້ອທີ່ກວ້າງຂວາງເຊັ່ນ: ລາວ ໄທ ຈີນ ອິນເດັຍ ພະມ້າ ຫວຽດ ນາມ ກຳພູຊາ ພາຍໃຕ້ຊື່ກຸ່ມ ຫລື ຈຸ້ມຍ່ອຍແຕກຕ່າງກັນໄປຮ່ວມກຸ່ມຊົນ ຫລື ເຜົ່າພັນຕະກຸນອື່ນໆ ເປັນຕົ້ນແມ່ນຕະກຸນຂອມ ຫລື ມອນຂະແມ. ນັບວ່າເປັນ ກຸ່ມຊົນເກົ່າແກ່ຕະກຸນໜຶ່ງທີ່ອາໄສຢູ່ໃນດິນແດນລາວ ແລະ ສຸວັນນະພູມປະ ເທດຮ່ວມກັບກຸ່ມຊົນຕະກຸນຂອມມາໄດ້ບໍ່ຕ່ຳກວ່າ 2.000 ປີ. ເຂົາເຈົ້າຈະພາກັນ ຕັ້ງບ້ານເຮືອນຢູ່ຕາມແຄມແມ່ນ້ຳລຳເຊ ແລະ ເຂດທົ່ງຮາບພຽງເປັນຈຸດໜັກ ເພາະອາໄສການເຮັດນາປູກເຂົ້າ ການເຮັດສວນປູກພືດພັນທັນຢາຫ່ານ ການ ເດີນທາງໄປມາຄ້າຂາຍ ແລະ ການທຳມາຫາກິນຕາມແມ່ນ້ຳລຳຫ້ວຍຕ່າງໆ. ເຮືອນຂອງເຂົາເຈົ້າເປັນເຮືອນຮ້ານ ອັນເປັນວັດທະນະທຳຮ່ວມກັນຂອງພາກພື້ນ ລົ້ມນ້ຳລະສຸມເຂດຮ້ອນທີ່ອາກາດອົບເອົ້າ ຝົນຕົກໜັກ ແລະ ມັກມີນ້ຳຖ້ວມ ນ້ຳ ປ່າໄຫລແຮງ. ແຕ່ຮຸບແບບຂອງສະຖາປັດຕະຍະກັມ ແລະ ການຈັດສັນຕົບແຕ່ງ ຢ້າວເຮືອນນັ້ນເປັນໄປຕາມແຕ່ລະເຂດຮ້ອນ ຫລື ໜາວ ຫລື ຕາມແຕ່ລະຈຸ້ມ ແຕ່ລະກຸ່ມຍ່ອຍ ຕາມຄວາມສະດວກ ແລະ ຄວາມເຊື່ອຂອງໃຜມັນ. ກຸ່ມຊົນນີ້ ເຊິ່ງເດີມດາແຕ່ກ່ອນຖືຮີດຕີພໍ່ ຕີແມ່ ຕີຟ້າ ຕີແຖນ ຕີຜູ້ເປັນເຈົ້າປົກຄອງ ຫລື ຕົ້ນຕະກຸນ ຕໍ່ມາໄດ້ຫັນມານັບຖືພຸດທະສາສະໜາເປັນສ່ວນໃຫຍ່ ພ້ອມກັນນັ້ນ

ກ່ຮັບເອົາ ແລະ ເຊື່ອມວິຖີຊີວິດການທຳມາຫາກິນ ແລະ ສິລະປະວັດທະນະທັມ ເຂົ້າກຸ່ມຊົນພື້ນຖານ ເປັນຕົ້ນແມ່ນກຸ່ມຊົນມອນ-ຂະແມໄດ້ດີ. ນາຄະ ຫລື ເງືອກ ທີ່ກຸ່ມຊົນນີ້ຖືເປັນສັນຍາລັກຂອງຕົ້ນຕະກຸນຂອງຕົນ ສະໄໝອານາຈັກແຖນນັ້ນ ປັດຈຸບັນໄດ້ມີການລະເຫລີງໄປພໍສົມຄວນ ພາຍຫລັງທີ່ພຸດທະວັດທະນະທັມ ແລະ ທັມມະເຂົ້າມາແທນ ຫລື ພາຍຫລັງການລົບລ້າງຄວາມເຊື່ອໃນຜີ ແລະ ຜີ ຕົ້ນຕະກຸນສະໄໝພະເຈົ້າໂພທິສຣາຊເປັນຕົ້ນມາ. ການສົ່ງເສີມ ການເຜີຍແຜ່ ພຸດທະທັມມະ ກໍ່ຄືພຸດທະສາສະໜາໃນລາວນັ້ນ ໄດ້ອຳນວຍໃຫ້ສິລິປະວັດທະ ນະທັມ ວາດດຳລົງຊີວິດທາງດ້ານສະຕິປັນຍາ ພາສາ ສິລະປະກັມ ວັດທະນະ ທັມ ທັມມະຈະຣິຍາ ຄຳສອນ ປັດຊະຍາຊີວິດ ມະນຸດສະທັມ ຮີດຄອງປະເພນີ ບຸນສິນກິນທານ ການຄົບຄ້າສະມາຄົມພາຍໃນຊາດ ແລະ ກັບແຂກຕ່າງດ້າວ ທ້າວຕ່າງແດນມີຄວາມກ້າວໜ້າຂຶ້ນສູ່ລະດັບສູງ. ການຜະຫລິດພາຫະນະເຊັ່ນ: ເຮືອແພນາວາ ລໍ້ກວຽນ ເຄື່ອງໃຊ້ໄມ້ສອຍ ເຄື່ອງນຸ່ງຫົ່ມ ເປັນຕົ້ນແມ່ນການຕ່ຳ ຕ້ຳທໍໄໝໄດ້ມີການຂະຫຍາຍຕົວຢ່າງເປັນເອກະລັກຂອງກຸ່ມຊົນນີ້ຢ່າງໂດດເດັ່ນ.

3. ກຸ່ມຊົນຕະກຸນຈີນ-ຕິເບດ.

ຄວາມຈິງແລ້ວກຸ່ມຊົນທີ່ຮຽກວ່າ ຈີນ-ຕິເບດນັ້ນ ປະກອບດ້ວຍສອງ ຕະ ກຸນເກົ່າແກ່ ແຕກຕ່າງກັນຈະແຈ້ງເຊັ່ນ: ຕະກຸນຕິເບດ-ພະມ້າ ແລະ ຕະກຸນຫານ (ຫ້ໍ). ສອງຕະກຸນນີ້ມີພາສາປາກເວົ້າຮີດຄອງປະເພນີ ແລະ ວັດທະນະທັມ ຕະ ຫລອດຮອດວາດກິນຢູ່ ການດຳລົງຊີວິດແຕກຕ່າງກັນ ແຕ່ກໍ່ໄດ້ຮັບອິດທິພົນເຊິ່ງ ກັນ ແລະ ກັນ ເປັນຕົ້ນແມ່ນວາດດຳລົງຊີວິດ ການທຳມາຫາກິນ ການສ້າງບ້ານແປງ ເຮືອນ.

ຊາວລາວຕະກຸນຕິເບດ-ພະມ້າ ແລະ ຕະກຸນຫານນີ້ ພາກັນອົບພະຍົບ ມາແຕ່ທາງເໜືອ ຍ້ອນສາເຫດນາໆປະການເລີ່ມຕັ້ງແຕ່ກ່ອນໜ້ານີ້ລ້ຳຫວ່າງ 200 ປີ. ເຂົາເຈົ້າຈະເລືອກເອົາຍອດເຂົາໃນຄວາມສູງ1.000 ແມັດ ເໜືອໜ້ານ້ຳ ທະເລຂຶ້ນເມືອເປັນທີ່ຕັ້ງຊຸມຊົນ ແລະ ບ້ານເຮືອນຂອງເຂົາເຈົ້າໂດຍອາໄສ ຄວາມໜາວເປັນອາກາດທີ່ເຂົາເຈົ້າເຄີຍຊົນ ອຳນວຍໃຫ້ເຂົາເຈົ້າດຳລົງຊີວິດຢູ່

ຢ່າງປາສະຈາກໄລຄາພະຍາດເຂດຮ້ອນ ເປັນຕົ້ນແມ່ນໄຂ້ຍຸງ ກໍ່ຄືສາມາດອາໄສຄວາມອຸດົມສົມບູນຈາກທຳມະຊາດເພື່ອການດຳລົງຊີວິດ ແລະ ເພາະປູກພືດພັນທັນຍາຫານເຂດໜາວໄດ້ດີ. ອີກປະການໜຶ່ງ ເຂດທຸລະກັນດານນັ້ນມີຄວາມງຽບສະຫງົບໃນການດຳລົງຊີວິດ ໂດຍປາສະຈາກການລົບກວນຫລວງຫລາຍຈາກພາຍນອກ.

ການຕັ້ງບ້ານເຮືອນ:

ຊາວຕິເບດ-ພະມ້າ ແລະ ຊາວຫານ (ຫໍ້) ໂດຍພື້ນຖານແລ້ວເຂົາເຈົ້າຈະຕັ້ງເຮືອນຊູດິນ ໂດຍເອົາດິນໜຽວມາເຮັດເປັນຝາເຮືອນ. ເຮືອນຂອງເຂົາເຈົ້ານັ້ນຈັດເປັນລະບົບຫ້ອງຕາມປະເພນີເດີມເຊັ່ນ ຈະມີຫ້ອງຕົ້ນຕະກຸນ ຫ້ອງແຂກ ຂອງຄອບຄົວ ຫ້ອງຄົວ ແລະ ອື່ນໆ ເຊິ່ງແຕກຕ່າງກັນກັບເຜົ່າພູນ້ອຍເຊິ່ງນອນຢູ່ໃນຕະກຸນດຽວກັນ. ເຜົ່າພູນ້ອຍມີເຊື້ອສາຍດຽວກັນກັບກຸ່ມຊົນທີ່ມີຊື່ວ່າ ບີຊູ ໃນປະເທດໃກ້ຄຽງນັ້ນ ຢູ່ເຮືອນຮ້ານ ຖືສາສະໜາພຸດທິນນະຍານ ມີວັດວາອາຮາມ ມີການຂັບລຳທຳເພັງເໝືອນໆກັນກັບກຸ່ມຊົນ ລາວ-ໄຕ ຕ່າງແຕ່ພາສາປາກເວົ້າບໍ່ຄືກັນທໍ່ນັ້ນ.

ຍົກເວັ້ນແຕ່ເຜົ່າພູນ້ອຍ ທີ່ສະຫລອງປີໃໝ່ຕາມກຸດສົງການເໝືອນຊາວພຸດທົ່ວໄປ ກຸ່ມຊົນຕິເບດ-ພະມ້າ ແລະ ຫານຈະສະຫລອງປີໃໝ່ຮຽກວ່າບຸນກິນຈຽງເໝືອນກັນກັບຫລາຍໆເຜົ່າ ແລະ ກຸ່ມຊົນລາວທີ່ບໍ່ຖືພຸດທະສາສະໜາ. ປັດຈຸບັນເນື່ອງຈາກວ່າມີຄວາມຈຳເປັນທີ່ຈະຕ້ອງປົກປັກຮັກສາປ່າໄມ້ ຫ້ວຍໜ້ຳລຳຫານອັນເປັນຊັບພະຍາກອນພື້ນຖານ ຂອງການດຳລົງຊີວິດ ຂອງຊາດຕະຫຼອດເນື່ອງຈາກການບຸກແຫ້ງຂອງທີ່ທຳມາຫາກິນ ແລະ ການຈຳກັດການປູກຝິ່ນ ຊາວ ຕິເບດ-ພະມ້າ ຈຶ່ງຍົກຍ້າຍຖິ່ນຖານລົງມາດຳລົງຊີວິດປົກກະຕິຢູ່ຖິ່ນຮາບພຽງ ອັນເຮັດໃຫ້ວິຖີຊີວິດຂອງເຂົາເຈົ້າປ່ຽນແປງໄປຕາມຄວາມຈຳເປັນຂອງການລະເທສະ ເປັນຕົ້ນຈຳນວນພວກຢູ່ທີ່ໆພຽງພາກັນຕັ້ງຢູ່ເຮືອນຮ້ານ ເຮັດນາ ປູກພືດພັນຄົງທີ່ ເຮັດການຄ້າຂາຍອຳນວຍໃຫ້ຊີວິດຄວາມເປັນຢູ່ດີຂຶ້ນ ຜິດແປກຈາກຊີວິດເກົ່າເດີມທີ່ທຸກຢ່າງຈະດຳເນີນໄປຕາມວິຖີຊີວິດ ຮີດຄອງປະເພນີ

ແລະ ການນຸ່ງຖືດັ້ງເດີມ. ອີກຈຳພວກທີ່ຍັງດຳລົງຊີວິດຢູ່ພູດອຍແບບດັ້ງເດີມນັ້ນ ສ່ວນຫຼາຍຍັງມີຊີວິດຄວາມເປັນຢູ່ຫຍຸ້ງຍາກຂາດແຄນຢູ່. ກຸ່ມຊົນນີ້ມີປະເພນີ ການຫຍິບແສ່ວ ຕ່ຳທໍ ສາມາດກຸ້ມຕົນເອງດ້ານເຄື່ອງນຸ່ງຫົ່ມ.

4. ກຸ່ມຊົນຕະກຸນມົ້ງ-ຢ້າວ (ຢ້ອມຽນ)

ຊາວຕະກຸນມົ້ງ-ຢ້າວເປັນກຸ່ມຊົນຕະກຸນເກົ່າແກ່ອົບພະຍົບມາແຕ່ພາກໃຕ້ຂອງຈີນ ແລະພາກເໜືອຫວຽດນາມ ເລີ່ມແຕ່ລະຫວ່າງ 200 ປີ ເປັນຕົ້ນມາ. ເປັນກຸ່ມຊົນທີ່ມີຄວາມໃກ້ຊິດກັບຄົນຕະກຸນລຽວ ຫລື ລາວໃນທ້ອງຖິ່ນດຽວກັນພໍສົມຄວນ. ຄວາມຈິງແລ້ວຕະກຸນມົ້ງ-ຢ້າວເປັນສອງສາຂາກຸ່ມຊົນໃກ້ຄຽງກັນໃນ ສະໄໝເດີກໍ່ຕ້ນ ແຕ່ມີວັດທະນາການໄປພໍໃສພໍມັນແຕກຕ່າງກັນພໍສົມຄວນ. ເຂົາເຈົ້າສ້າງບ້ານເຮືອນຊຸດິນຄ້າຍໆກັນ ເຊິ່ງແຕ່ກ່ອນຊາວມົ້ງຢູ່ເຮືອນຮ້ານແບບ ລາວ-ໄຕ ແຕ່ດ້ວຍເຫດຜົນທາງປະຫວັດຕິສາດຫລາຍປະການ ເຊິ່ງໄດ້ບັງຄັບ ໃຫ້ຊາວມົ້ງຫັນມາຮັບເອົາຮູບແບບເຮືອນຊຸດິນມາເປັນເອກະລັກຂອງຕົນ. ນອກ ນັ້ນກໍ່ຍັງມີອິດທິພົນຂອງວາດກຳປູ່ຂອງຊາວຫານທີ່ແພ່ເຂົ້າກອມວິຖີຊີວິດວັດ ທະນະທັມຂອງຊາວມົ້ງ-ຢ້າວ ສືບຕໍ່ຈົນມາເຖິງປັດຈຸບັນ.

ຊາວຢ້າວ ຫລື ຢ້ອມຽນນັ້ນ ໄດ້ຮັບເອົາວັດທະນະທັມອັກສອນຊຽນຂອງ ຫານມາໃຊ້ແຕ່ດົນນານ ແຕ່ມົ້ງ ແລະ ຢ້າວ ທັ້ງສອງກໍ່ຖືຮີດຊຶ່ງຊ່າວຕົ້ນຕະກຸນ ຂອງຕົນເອງຢ່າງເຄັ່ງຄັດ. ເຂົາເຈົ້າຈະກິນຈຽງໃນເວລາຂຶ້ນປີໃໝ່ເໝືອນດັ່ງຊາວ ຫານ.

ໃນດ້ານສິລະປະການຕົບແຕ່ງ ຮ້ອງລຳທຳເພງນັ້ນ ຊາວມົ້ງຈະມີຄວາມ ໂດດເດ່ນພໍສົມຄວນ ແຕ່ທັ້ງສອງກໍ່ເປັນຜູ້ຫວງແຫນສິລະປະວັດທະນະທັມແລະ ຮີດຄອງປະເພນີຂອງຕົນໄວ້ໝຽວແໜ້ນ.

ກຸ່ມຊົນມົ້ງ-ຢ້າວກໍ່ເຊັ່ນດຽວກັນກັບກຸ່ມຊົນຈີນ-ຕິເບດ ຕາມປົກກະຕິ ແລ້ວເຂົາເຈົ້າຈະເລືອກຢູ່ຖິ່ນສູງກາຍລະດັບນ້ຳທະເລກວ່າ 1.000 ແມັດ ເພື່ອ ຫຼີກຈາກພະຍາດເມືອງຮ້ອນ ເພື່ອມີຄວາມສະຫງົບ ແລະ ໜາວເຢັນຍັນອຳນວຍ ໃຫ້ທຳການເພາະປູກພືດພັນຕາມໄຮ່ສວນຂອງເຂົາເຈົ້າເປັນຕົ້ນແມ່ນຝິ່ນ ແລະ

ການລ້ຽງສັດ.

ຊາວມົ້ງ ແລະ ຢ້າວນັບວ່າເປັນນັກປູກຝັ່ງ ລ້ຽງສັດເກ່ງ ແລະ ດຸໝັ່ນເປັນ ເລີດ. ດ້ານການຜະຫລິດເຄື່ອງມືນັ້ນ ຊາວມົ້ງຈະເກ່ງໄປໃນການຜະຫລິດປືນລ່າ ເນື້ອ ເຄື່ອງມືການກະເສດ ການຖັກແສ່ວ. ປັດຈຸບັນເນື່ອງຈາກປ່າໄມ້ໃນຖິ່ນສູງ ສາບສູນເປັນສ່ວນໃຫຍ່ ແຖມຍັງມີການຈຳກັດການເຮັດໄຮ່ ແລະ ປູກຝິ່ນ ຊາວ ມົ້ງ-ຢ້າວກໍ່ຄືຊາວລາວເຂດພູດອຍກຸ່ມອື່ນໆໄດ້ປະລະການປູກຝິ່ນ ແລ້ວຄ່ອຍ ພາກັນອົບພະຍົບຍ້າຍຖິ່ນຖານມາຕັ້ງຫລັກປັກແຫລ່ງຢູ່ເຂດທົ່ງພຽງເພື່ອຈັບອາ ຊີບຄົງທີ່ຖາວອນ.

2. ການປົກຄອງ.

1. ລະບົບການປົກຄອງ.

ປະເທດລາວ ຫລື ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອັນ ມີນະຄອນຫລວງວຽງຈັນເປັນເມືອງເອກ ຫລື ນະຄອນຫລວງນັ້ນ ຕາມສິຖິຕິ ແຫ່ງຊາດປີ 1993 ແບ່ງອອກເປັນ 17 ແຂວງ 1 ເຂດພິເສດ ປະກອບດ້ວຍ 129 ຫົວເມືອງ 11.925 ບ້ານ 685.230 ຄອບຄົວ ແລະ ມີປະຊາກອນຢູ່ປະມານ 4.232.000 ຄົນ.

ສະຖິຕິ 1993

ລ/ດ	ແຂວງ-ກຳແພງ-ເຂດ	ເມືອງ	ບ້ານ	ຄອບຄົວ
	ົ້ງໝົດປະເທດ	129	11.935	4.600.000
01	ກຳແພງນະຄອນວຽງຈັນ	8	478	81.643
02	ແຂວງຜົ້ງສາລີ	7	670	25.589
03	ແຂວງຫົວງນ້ຳທາ	5	523	18.786
04	ແຂວງອຸດົມໄຊ	7	810	29.405

05	ແຂວງບໍ່ແກ້ວ	5	403	15.94
06	ແຂວງຫຼວງພະບາງ	11	1.242	55.342
07	ແຂວງຫົວພັນ	6	894	31.987
08	ແຂວງໄຊຍະບຸລີ	5	370	33.612
09	ແຂວງຊຽງຂວາງ	8	533	28.027
10	ແຂວງວຽງຈັນ	9	611	46.609
11	ແຂວງບໍລິຄຳໄຊ	6	551	26.300
12	ແຂວງຄຳມ່ວນ	8	884	45.188
13	ແຂວງສະຫວັນນະເຂດ	13	1.614	96.570
14	ແຂວງສາລະວັນ	8	723	38.993
15	ແຂວງ ເຊກອງ	4	340	8.936
16	ແຂວງ ຈຳປາສັກ	10	873	76.667
17	ແຂວງອັດຕະປື	5	174	14.216
18	ເຂດພິເສດ ໄຊສົມບູນ	4	237	11.418

ສະຖິຕິ 1999

ລ/ດ	ແຂວງ	ເນື້ອທີ່ ກມ²	ພົນ ລະເມືອງ (ພັນຄົນ)	ຍິງ (ພັນຄົນ)	ຊາຍ (ພັນຄົນ)	ຄວາມ ໜາແໜ້ນ (ຄ/ກມ²)
1	ກ/ພວຽງຈັນ	3.920	583	291	292	149
2	ຜົ້ງສາລີ	16.270	170	86	84	10
3	ຫຼວງນ້ຳທາ	9.352	128	65	62	14
4	ອຸດົມໄຊ	15.370	234	118	116	15
5	ບໍ່ແກ້ວ	6.196	126	64	63	20
6	ຫຼວງພະບາງ	16.875	406	205	201	24
7	ຫົວພັນ	16.500	272	137	135	17
8	ໄຊຍະບຸລີ	16.389	225	162	162	20
9	ຊຽງຂວາງ	15.880	223	112	111	14
10	ວຽງຈັນ	15.927	319	158	161	20

11	ບໍລິຄຳໄຊ	14.863	182	91	91	12
12	ຄຳມ່ວນ	16.315	303	156	147	19
13	ສະຫວັນນະເຂດ	21.774	748	381	366	34
14	ສາລະວັນ	10.691	285	147	138	27
15	ເຊກອງ	7.665	71	36	35	9
16	ຈຳປາສັກ	15.415	558	286	272	36
17	ອັດຕະປື	10.320	97	50	47	9
18	ຂພສ.ໄຊສົມບູນ	7.105	60	30	30	8
	ທົ່ວປະເທດ	236.800	5.091	2.575	2.516	21

- **ສະຖິຕິຈາກສູນສະຖະຕິແຫ່ງຊາດ 5 / 2000 ຄາດຄະເນພົນລະເມືອງ ສະເລ່ຍກາງປີ ແບ່ງຕາມແຂວງໃນປີ1976-2000**

ຫົວໜ່ວຍ: ພັນຄົນ

ລ/ດ	ຊື່ແຂວງ	ເນື້ອທີ່	ປີ						
		ກລມ²	1976	1980	1985	1990	1995	1999	2000
	ທົ່ວປະເທດ	236.800	2.886	3.199	3.618	4.140	4.605	5.091	5.218
1	ກພ ວຽງຈັນ	3.920			381	464	532	583	598
2	ຜົ້ງສາລີ	16.270	99	110	124	141	153	170	174
3	ຫຼວງນ້ຳທາ	9.325	122	136	98	119	115	128	131
4	ອຸດົມໄຊ	15.370	151	167	189	283	211	234	240
5	ບໍ່ແກ້ວ	6.196			56	64	115	126	130
6	ຫຼວງພະບາງ	16.8755	238	264	298	337	367	406	416
7	ຫົວພັນ	16.500	169	187	212	220	247	272	279
8	ໄຊຍະບູລີ	16.389	180	200	226	185	293	325	333
9	ຊຽງຂວາງ	15.880	130	144	163	181	201	223	229
10	ວຽງຈັນ	15.927	517	537	267	305	287	319	327
11	ບໍລິຄຳໄຊ	14.863			123	143	165	182	187
12	ຄຳມ່ວນ	16.315	270	299	215	245	275	303	311

13	ສະຫວັນ ນະເຂດ	21.774	438	485	549	639	675	748	766
14	ສາລະວັນ	10.691	192	212	189	225	258	285	292
15	ເຊກອງ	7.665			51	57	64	71	73
16	ຈຳປາສັກ	15.415	324	360	407	453	503	558	572
17	ອັດຕະປື	10.320	56	62	70	79	88	97	100
18	ເຂດພິເສດ ໄຊສົມບຸນ						54	60	62

♣ <u>ໝາຍເຫດ:</u>

ການເຕີບໂຕຂອງພົນລະເມືອງ,ຄິດໄລ່ຕາມການສຳຫລວດພົນລະເມືອງ ປີ 1995. ແຫລ່ງຂໍ້ມູນ: ສູນສະຖິຕິແຫ່ງຊາດ

2.2. ວ່າດ້ວຍລະບອບການປົກຄອງ

ປະເທດສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນປະເທດປົກຄອງດ້ວຍລະບອບປະຊາທິປະໄຕ ປະຊາຊົນ ຄື: ມີພັກປະຊາຊົນປະຕິວັດ ລາວ ເປັນຜູ້ນຳພາ ມີລັດຖະບານເປັນຜູ້ປົກຄອງ ມີສະພາແຫ່ງຊາດ ເປັນອົງ ການນິຕິບັນຍັດ ມີລະບົບຕຸລາການ ເປັນຜູ້ຮັກສາກົດໝາຍ ແລະ ຄວາມຍຸຕິທຳ. ພວກເຮົາສາມາດເຂົ້າໃຈລະບອບປະຊາທິປະໄຕ ປະຊາຊົນລາວ ໄດ້ດ້ວຍຕຳ ລາແບບງ່າຍໆວ່າ: ພັກນຳພາ ລັດຄຸ້ມຄອງ ປະຊາຊົນເປັນເຈົ້າ.

ໃນຂັ້ນທ້ອງຖິ່ນນັ້ນ ປະເທດລາວມີຄະນະພັກແຂວງ ເປັນຜູ້ດູແລ ການ ປະຕິບັດຖືກຕ້ອງຕາມແນວທາງປະຊາທິປະໄຕປະຊາຊົນຂອງພັກ ມີອຳນາດ ການປົກຄອງຂັ້ນແຂວງເປັນຜູ້ບໍລິຫານ. ໃນລະດັບຕ່ຳລົງມາເຊັ່ນຂັ້ນເມືອງ ແລະ ຂັ້ນບ້ານ ກໍມີລະບົບຂັ້ນຕ່ຳຫລຸດລົງມາແບບດຽວກັນນັ້ນ ປົກຄອງ. ຕາມປົກກະຕິ ແລ້ວຜູ້ເປັນເຈົ້າແຂວງສ່ວນຫລາຍຈະເປັນກຳມະການສູນກາງພັກນຳດ້ວຍ.

ພັກປະຊາຊົນປະຕິວັດລາວ ວາງຈຸດໝາຍປາຍທາງກ້າວຂຶ້ນສູ່ລະບົບ ສັງຄົມນິຍົມ ອັນເປັນສັງຄົມທີ່ມີຄວາມແຈ່ມໃສ ແລະ ເປັນທຳທີ່ສຸດ ໂດຍຜ່ານ

ລະບອບປະຊາທິປະໄຕປະຊາຊົນ.

ປັດຈຸບັນ ພັກປະຊາຊົນປະຕິວັດລາວ ວາງແນວທາງພັດທະນາ ເສດຖະກິດການຕະຫລາດ ຢ່າງກວ້າງຂວາງ ແລະ ເຂົ້າເປັນສະມາຊິກຂອງກຸ່ມອາຊຽນ ເຂົ້າຮ່ວມນຳ ເຂດການຄ້າເສລີຂອງອັຟຕາ (AFTA) ເປັນກ້າວໆຈົນຈະຕ້ອງ ເຖິງຂັ້ນສົມບູນໃນທີ່ສຸດ.

ໃນດ້ານການຕ່າງປະເທດນັ້ນ ພັກໄດ້ວາງນະໂຍບາຍສາມັກຄີພິເສດ ກັບປະເທດຫວຽດນາມ ສາມັກຄີຢ່າງແໜ້ນແກ່ນ ກັບບັນດາປະເທດສັງຄົມນິຍົມອື່ນໆ. ພ້ອມກັນນັ້ນ ກໍ່ປະຕິບັດນະໂຍບາຍ ສັນຕິພາບ ເອກະລາດ ການພົວພັນມິດຕະພາບ ແລະ ການຮ່ວມມືກັບທຸກໆ ປະເທດໃນໂລກ ເປັນຕົ້ນແມ່ນ ບັນດາປະເທດ ເພື່ອນບ້ານໃກ້ຄຽງ ແລະ ບັນດາປະເທດໃນສະມາຄົມອາຊຽນ ບົນພື້ນຖານ ແຫ່ງຄວາມສະເໝີພາບ ຕ່າງຝ່າຍຕ່າງມີຜົນ. ພັກປະຊາທິປະໄຕ ປະຊາຊົນລາວຍາມໃດກໍ່ຍຶດໝັ້ນໃນ 5 ຫຼັກການ ປັນຈະສີລາຢ່າງບໍ່ມີການປ່ຽນແປງ.

ໃນດ້ານວັດທະນະທຳນັ້ນ ພັກປະຊາຊົນປະຕິວັດລາວ ວາງແນວທາງ ປົກປັກຮັກສາມູນເຊື້ອອັນດີງາມຂອງວັດທະນະທຳລາວ ບັນດາເຜົ່າ ກໍ່ສ້າງວັດ ທະນະທຳທີ່ມີລັກສະນະຊາດ ມີເນື້ອໃນປອດໃສຂາວສະອາດ ສົ່ງເສີມສິ່ງທີ່ດີ ຈຳກັດສິ່ງທີ່ຫຍໍ້ທໍ້ ພ້ອມກັນນັ້ນກໍ່ຮັບເອົາສິ່ງທີ່ຍອດຍິ່ງຂອງໂລກມາເສີມສ້າງ ວັດທະນະທຳຂອງຊາດໃຫ້ອຸດົມຮັ່ງມີຂຶ້ນ.

ພາກທີ່ III

ຄວາມເປັນມາໂດຍຫຍໍ້ຂອງຊາດລາວ.

1. ຍຸກເດີກດຳບັນ:

ດິນດອນຕອນນີ້ທີ່ເປັນປະເທດລາວເຮົາໃນປັດຈຸບັນ ກໍຄືທ່ວພາກພື້ນ ແຫຼມອິນໂດຈີນ ໄດ້ປາກົດມີມະນຸດ ອັນເປັນບັນພະຊົນຂອງເຜົ່າຕ່າງໆ ພວກເຮົາດຳລົງຕັ້ງຫຼັກປັກຖານຢູ່ແລ້ວ ຕັ້ງແຕ່ຍຸກເດີກດຳບັນ. ຫລັກຖານທີ່ໄດ້ຈາກການຄົ້ນພົບຮ່ອງຮອຍມະນຸດບູຮານທີ່ລາວ ທີ່ມີອາຍຸປະມານ 200.000-100.000 ປີ ໂດຍນັກຄົ້ນຄ້ວາຝຣັ່ງໃນຊຸມປີ 1930 ແລະ ການສັ່ງຫາຄົ້ນພົບຊາກມະນຸດໂອໂມເຍເຣັກຕັສ (500.000 ປີ) ທີ່ຊ່ຽງຮາຍ ໂດຍນັກຄົ້ນຄ້ວາໄທ ໃນທ້າຍປີ 2001 ນີ້ ເປັນສິ່ງຢືນຢັນໃນເລື່ອງນີ້. ບັນພຣະຊົນຂອງພວກເຮົານັ້ນ ໄດ້ໃຊ້ຫີນເປັນເຄື່ອງມືໃນການຫຳມາຫາກິນ ໂດຍອາໄສຢູ່ຕາມຖ້ຳຕາມຮູເປັນບ່ອນຢູ່ບ່ອນນອນ. ອາຫານທີ່ເຂົາເຈົ້ານຳມາລ້ຽງຊີບເວລານັ້ນແມ່ນໝາກຜຸກລູກໄມ້ ຍອດໄມ້ ເປືອກໄມ້ ຫົວມັນ ນາງຕໍ່ ນ້ຳເຜິ້ງ ແມງໄມ້ ສັດປີກ ແລະ ສັດນ້ຳຕ່າງໆ ທີ່ເຂົາເຈົ້າສາມາດຫາໄດ້ຕາມປ່າເຂົາລຳເນົາໄພ ຫ້ວຍຮ່ອງຄອງບຶງ ໂດຍປາສະຈາກການປູກຝັງລ້ຽງສັດ ເໝືອນດັ່ງທຸກວັນນີ້.

ເຂົາເຈົ້າເອົາການລາ ເປືອກໄມ້ ແລະ ໜັງສັດມານຸ່ງຫຸ້ມຕາງເສື້ອຜ້າ ອາພອນ ການນຳເອົາເປືອກໄມ້ເປັນຕົ້ນແມ່ນ ເປືອກໜ້ອງມານຸ່ງ ຕາງເສື້ອຜ້ານັ້ນ ພວກເຮົາຈະເຫັນຮ່ອງຮອຍ ທີ່ຕົກທອດມາເຖິງຍຸກພວກເຮົາ ນຳພວກຕອງເຫຼືອງແຂວງຄຳມ່ວນ (ມີແບບຢ່າງຢູ່ຫໍວ່າງສະແດງ ເມືອງຫຼັກຊາວ ຂອງບໍລິສັດພັດທະນາເຂດພູດອຍ).

ພາສາທີ່ເຂົາເຈົ້າໃຊ້ ເພື່ອຊີ້ສານກັນເວລານັ້ນເປັນພາສາທຳມະຊາດ ຄື ມີຈຳນວນຄວາມເວົ້າໜ້ອຍ ແລະ ຈຳກັດສະເພາະອັນທີ່ຈຳເປັນໃນຊີວິດປະຈຳວັນຂອງເຂົາເຈົ້າທ່ໍນັ້ນ ເຊິ່ງປັດຈຸບັນ ພວກເຮົາຍັງບ່ທັນສາມາດຮູ້ໄດ້ວ່າ ມັນຫຼົງ

ເຫຼືອຕົກທອດມາຮອດຍຸກພວກເຮົາເທົ່າໃດຄຳ.

ມາເຖິງຍຸກກ່ອນໜ້ານີ້ ລະຫວ່າງ 5.000 ຫາ 2.000 ປີ ບັນພະຊົນພວກເຮົາ ໄດ້ມີການພັດທະນາຕົນເອງໃຫ້ເປັນສັງຄົມຊຸມຊົນ ຕັ້ງຕຸບ ຕັ້ງເຕົາ ເປັນບ້ານ ເປັນເມືອງ ຕະຫຼອດມີການສະຖາປະນາ ເຂດແຄ້ວນ ອານາຈັກນ້ອຍໃຫຍ່ ຂອງຕົນເອງ ແລ້ວແຕ່ການລະໂອກາດ ມີຫົວໜ້າກົກເຫຼົ່າ ເຈົ້າ ຫຼືກະສັດປົກຄອງ ແລ້ວແຕ່ກໍລະນີໄປ. ນັບວ່າເປັນສັງຄົມກະເສດຕະກຳປະຖົມປະຖານ ຄືມີການປູກຝັ່ງລ້ຽງສັດ ບວກກັບການຫາປາລ່າເນື້ອ ແລະ ຜະລິດຕະຜົນຈາກປ່າຕາມທຳມະຊາດເປັນສ່ວນສຳຄັນ ສັງຄົມໃນຍຸກນີ້ນັບວ່າເປັນສັງຄົມທີ່ປົກຄອງດ້ວຍອາດຍາສິດຜູກຂາດ ແລະ ຊົ້ຂາດສະຕາຊີວິດຂອງໄພ່ຟ້າຂ້າແຜ່ນດິນຜູ້ຢູ່ພາຍໃຕ້ອຳນາດຂອງຜູ້ເປັນຫົວໜ້າ ຫຼື ເປັນເຈົ້າປົກຄອງ.

ເນື່ອງຈາກສັງຄົມໃນຍຸກນີ້ ແມ່ນສັງຄົມທີ່ໃຊ້ອຳນາດຜູກຂາດ ທັ້ງແມ່ນສັງຄົມຜູ້ທີ່ມີອຳນາດຕ້ອງປົກຄອງຮັກສາອຳນາດ ແລະ ຍາດແຍ່ງອຳນາດຈາກເຂດແຄ້ວນອື່ນໆ ດັ່ງນັ້ນ ຈຶ່ງເປັນສັງຄົມທີ່ຂະຫຍາຍຕົວຂຶ້ນໄວວາກ່ວາແຕ່ກ່ອນ ໂດຍສະເພາະຈາກການຄົ້ນພົບ ແລະ ໃຊ້ອຸປະກອນ ເຄື່ອງໄມ້ເຄື່ອງມືທີ່ເຮັດດ້ວຍທອງ ແລະ ເຫຼັກເປັນຕົ້ນ. ເຄື່ອງມືຜະລິດດ້ວຍໂລຫະຮຸ່ນທຳອິດ ກໍເຫັນຈະໄດ້ແກ່ທອງຂວານຟ້າ ເຊິ່ງປະຊາຊົນຊາວບ້ານເຊື່ອວ່າ ແມ່ນພະຍາຟ້າຜ່າລົງມາແຕ່ຟ້າ ເພື່ອມາຜ່າຜູ້ຄົນ ຫຼືສິ່ງໃດສິ່ງໜຶ່ງທີ່ເຮັດຂວາງ. ເມື່ອຜ່າແລ້ວຂວານເລີຍລ່ອນ ປະໄວ້ບ່ອນທີ່ມີຟ້າຜ່າຫັ້ນ ແຕ່ຄວາມຈິງແລ້ວ ແມ່ນຂວານທອງຂອງປູ່ຍ່າຕາທວດເຮົາທີ່ເທ່ຶງຊະຊາຍ ຝັ່ງຢູ່ຕາມດິນມາໄດ້ຫຼາຍພັນປີແລ້ວ ແລະ ເມື່ອໃດມີຟ້າຄະນອງ ທອງຂວານຟ້າກໍດຶງດູດເອົາກະແສໄຟຟ້າແຮງສູງຕາມອາກາດກາຍເປັນຟ້າຜ່ານະແທ່ງນັ້ນ. ນອກຈາກຂວານທອງແລ້ວກໍຍັງມີເຄື່ອງເອ້ຊະນິດເປັນປອກແຂນ ປອກຂາ ໝາກຕຸ້ມ ໝາກປັດ ແລະເຄື່ອງອາວຸດຂຸດແສງນຳດ້ວຍ.

ຜູ້ຄົນອັນເປັນໄພ່ຟ້າຂ້າແຜ່ນດິນຂອງອານາຈັກບູຮານນັ້ນ ຈະນັບຖືຜູ້ເປັນຫົວໜ້າຂອງຕົນເປັນເຈົ້າແຫ່ງຊີວິດຂອງທຸກໆຄົນ ເຂົາເຈົ້າຈະຮຽກວ່າເຈົ້າຟ້າ ຂຸນເຈືອງ ຫຼື ແຖນຫຼວງ. ດັ່ງນີ້ເອງ ເມື່ອເຈົ້າຟ້າ ຂຸນເຈືອງ ຫຼື ແຖນຫຼວງຂອງ

ພວກເຂົາເຈົ້າ ຈຸຕິໄປແລ້ວ ເຂົາເຈົ້າຈະຮຽກວ່າຜີຟ້າ ຫຼື ຜີແຖນ ແລ້ວກໍ່ຍັງພ້ອມກັນເຄົາລົບຂາບໄຫວ້ຮັກສາເປັນບັນພະຊົນຂອງຕົນ ຈົນສືບຕໍ່ກັນມາຮອດຍຸກປັດຈຸບັນ. ເຂົາເຈົ້າຈະປະດິດພິທີກຳຕ່າງໆ ແລະລະບຽບການຕ່າງໆ ມາປົກຄອງກັນ ແລະ ປົກຄອງບ້ານເມືອງ ສິ່ງເສີມໃຫ້ມີການປະດິດຄິດແຕ່ງ ທາງດ້ານຫັດຖະກຳ ຜະລິດຕະພັນ ທາງດ້ານສິລະປະ ການຕົບແຕ່ງ ເອ້ຢ້ອງ ແລະ ນຸ່ງຖື ສິ່ງເສີມການຮ້ອງລຳທຳເພັງ ການດົດສີຕີເປົ່າຕະຫຼອດການເຝິກແອບເລົ່າຮຽນວິຊາຕ່າງໆ ຕາມທີ່ສັງຄົມຕ້ອງການເວລານັ້ນ. ສິ່ງສຳຄັນໃນສັງຄົມຍຸກນີ້ ແມ່ນມີການເລີ່ມໃຊ້ພາສາທີ່ມີການຂະຫຍາຍຕົວໃນລະດັບອັນແນ່ນອນໃດໜຶ່ງ.

2. ບັນດາອານາຈັກບູຮານເກົ່າແກ່ເທົ່າທີ່ເອກະສານຂອງຈີນໄດ້ບັນທຶກເອົາໄວ້ ແລະ ເທົ່າທີ່ພວກເຮົາມີຄວາມຮອບຮູ້ໃນປັດຈຸບັນ.

ອານາຈັກບູຮານທີ່ປະກົດມີຢູ່ໃນຂົງເຂດສຸວັນນະພູມກໍ່ມີເຊັ່ນ:

- ກ່ອນໜ້ານີ້ 3.000 ກ່ວາປີ ປະກົດມີອານາຈັກ ເຢ້ຊາງ ຢູ່ທີ່ສຸວັນນະພູມປະເທດ (ແຫຼມອິນໂດຈີນ) ພາກໃຕ້ຂອງຈີນ ເຊິ່ງແນ່ນອນ ມີສ່ວນກວມເຂດແດນທີ່ເປັນດິນລາວເຮົາປະຈຸບັນດ້ວຍ.

ມາເຖິງຍຸກຕົ້ນຂອງຄິດຕະການ ອານາຈັກເຢ້ຊາງຍັງປະກົດອອກຢູ່ໃນຕຳນານຈີນຢູ່ ອັນສະແດງວ່າອາຍຸການຄົງຕົວຂອງອານາຈັກ ນານເຖິງ 1.000 ກ່ວາປີ ເອກສານເກົ່າຂອງຈີນຍັງໃຫ້ຄຳສັນນິຖານໄວ້ວ່າ ຊາວເຢ້ຊາງນັ້ນ ໜ້າຈະແມ່ນຄົນລາວ ສ່ວນບາງເອກະສານກໍ່ບອກວ່າແມ່ນຄົນຂອມ.

- ໃນຍຸກດຽວກັນນີ້ກໍ່ປະກົດວ່າມີຊື່ຂອງອານາຈັກແກວຈີ ທີ່ດິນແດນພາກເໜືອຫວຽດນາມປັດຈຸບັນ ເຊິ່ງກໍ່ແມ່ນພວກໄປເຢ ໃນນັ້ນມີຊົນຊາດຕະກຸນລາວເຮົານຳ ເປັນຜູ້ສະຖາປະນາ.

- ແລະ ກ່ອນໜ້ານີ້ ລະຫວ່າງ 2.000 ປີ ຄລສ ໄຫມ 3 ອານາຈັກຂອງຈີນ ອານາຈັກແຖມ ກໍ່ປາກົດຕົວຂຶ້ນທີ່ເຂດກຸນໝິງ ອັນກວມເອົາດິນແດນອັນກວ້າງ

ຂວາງ ເຊິ່ງສັນນິຖານວ່າ ກວມເຖິງດິນລາວທາງຕອນເໜືອ.

ໃນໜັງສືພູມີສາດ ບູຮານຂອງຈີນ ທີ່ຂຽນຂຶ້ນສະໄໝອານາຈັກແຖນ ໂດຍສຸຍສູ ມີຂໍ້ຄວາມບັນທຶກໄວ້ວ່າ:

" ຜ່ານ 20 ຫ້ວເມືອງທາງໃຕ້ຂອງເຂດນານຊານ (ສາຍພູທາງໃຕ້) ພວກຄົນລາວເຫົ່າຕ່າງໆ ພາກັນຜະລິດຄ້ອງບ້າງ. ເມື່ອຄ້ອງໜ່ວຍໃດສ້າງຂຶ້ນມາໄດ້ ແລ້ວ ພວກເຂົາກໍ່ເອົາໄປແຂວນໄວ້ເດີ່ນບ້ານຂອງພວກເຂົາ ແລ້ວກໍ່ອານຍາດຕິ ພີ່ນ້ອງໝູ່ຄູ່ເພື່ອນຝູງ ມາຄົບງັນກິນດື່ມສະໜຸກສະໜານກັນ. ຜູ້ຄົນພາກັນມາຢ່າງໜາແໜ້ນ ສ່ວນຜູ້ທີ່ຮັ່ງມີແດ່ ກໍ່ເອົາໄມ້ປີ່ນເກົ້າເຮັດດ້ວຍຄຳ ຫຼື ເງິນ ເຫຼັ້ມໃຫຍ່ ມາເຄາະມາຕີ. ໄມ້ປີ່ນເກົ້າດັ່ງກ່າວນັ້ນ ເຮັດຂຶ້ນມາສຳລັບພິທີກຳອັນນີ້ເທົ່ານັ້ນ ແລະ ເມື່ອຫມົດພິທີແລ້ວ ແຂກກໍ່ເອົາມອບໃຫ້ຜູ້ທີ່ເປັນເຈົ້າຂ່ອງຄ້ອງບ້າງໄວ້ເປັນທີ່ລະລຶກ...ກ່ອນຈະອອກທັບຈັບເສິກ ຜູ້ເປັນຫ້ວໜ້າຂອງພວກເຂົາ ຈະລະດົມພົນດ້ວຍການລັ່ນຄ້ອງບ້າງ ດັ່ງສະໜັ່ນຫວັ່ນໄຫວ. ຕໍ່ໜ້າຂອງຜູ້ເປັນນາຍຂອງພວກເຂົາ ເຊິ່ງມີຊື່ຮຽກວ່າ " ຕູລາວ " (1) ພວກນັກຮົບຈະປະຕິບຍານສາບານຕົວ ວ່າຈະຕ້ອງຜາບແພ້ຂ້າເສິກສັດຕູໃຫ້ໄດ້"

- ໃນລະຫວ່າງກ່ອນ ແລະ ຕົ້ນຄິດຕະການ ອານາຈັກອ້າຍລາວໄດ້ປະກົດຂຶ້ນທາງພາກຕາເວັນຕົກຂອງແຂວງຍຸນນານ ແລະ ດິນແດນຕອນຕາເວັນອອກສ່ຽງເໜືອ ຂອງປະເທດພະມ້າ ອັນມີສູນກາງຕັ້ງຢູ່ຢ່າງຊາງ. ອານາຈັກດັ່ງກ່າວກວມເອົາເຂດແຄ້ວນອັນກວ້າງຂວາງພໍສົມຄວນ ອັນນັບວ່າເປັນອານາຈັກທຳອິດທີ່ອອກຊື່ "ລາວ" ຕາມຊື່ຂອງເຜົ່າພັນຂອງຕົນ ເຊິ່ງກໍ່ເອົາມາຈາກຊື່ຂອງຜູ້ເປັນເຈົ້າປົກຄອງຂອງພວກເຂົານັ້ນເອງ ອານາຈັກດັ່ງກ່າວ ມີອາຍຸເຖິງ ຄ.ສ. ສະຕະວັດທີ່ VI ຄືເວລາເລີ້ມສະຖາປະນາອານາຈັກນ່ານເຈົ້າ.

ໃນໄລຍະກ່ອນ ຫາຕົ້ນຄິດຕະການນີ້ເອງ ຫລາຍອານາຈັກນ້ອຍໃຫຍ່ ກໍ່ໄດ້ກຳເນີດເກີດຂຶ້ນທີ່ສຸວັນນະພູມປະເທດ ແລະ ໃນເຂດພາກໃຕ້ຂອງຈີນ.

- ອານາຈັກ ຟູໜານ ກຳເນີດເກີດຂຶ້ນ ໃນ ຄ.ສ. ສະຕະວັດທີ່ I ເຖິງທີ່ VII. ອັນມີສູນກາງໃນດິນແດນກຳພູຊາດງ່ອນີ້.

- ອານາຈັກທະວາຣະວະດີ ອັນເປັນອານາຈັກນອນກໍ່ມີຢູ່ເຂດປາກແມ່ນ້ຳ

ເຈົ້າພະຍາປະເທດໄທ.

- ອານາຈັກຈຳປາກ໋ກຳເນີດຂຶ້ນໃນ ຄ.ສ. ສະຕະວັດທີ II ຈົນເຖິງສະຕະວັດທີ XIV ຈຶ່ງຫຼົ້ມຈົມ. ອານາຈັກດັ່ງກ່າວຕັ້ງຢູ່ພາກກາງຂອງຫວຽດນາມປັດຈຸບັນ.

- ໃນດິນແດນທີ່ເປັນດິນແດນລ້ານຊ້າງໃນຂັ້ນຕໍ່ມາ ກໍມີອານາຈັກ "ເວີນຕາ໋ນ" (ວຽງຈັນ?) ຫຼືເຈິນລາ (ຈັນທຣາ?) ເຊິ່ງກວມເອົາຮອດເຂດຊາຍຝອງກຳແພງນະຄອນວຽງຈັນ ລົງໄປຈົນຈຳທະເລ. ອານາຈັກດັ່ງກ່າວສະຖາປະນາຂຶ້ນແຕ່ ຄ.ສ. ສະຕະວັດທີ VI ຈົນມາຮອດສະຕະວັດທີ IX.

- ສະນະນັ້ນ ຢູ່ທາງເຂດພູພຽງຊຽງຂວາງ ກໍ່ເກີດມີອານາຈັກນ້ອຍໆ ອານາຈັກໜຶ່ງຮຽກວ່າຖາງໝິງ ຫຼື ຕ່າວມິງ. (ໃນພາສາຈີນ).

- ຢູ່ເຂດພາກກາງແລະພາກເໜືອຂອງດິນແດນທີ່ເປັນປະເທດໄທຍດຽວນີ້ ກໍ່ປະກົດມີອານາຈັກມອນ ທະວິພຸນໄຊ (ລຳພູນ) ຄ.ສ.ສະຕະວັດ V-XIII.

- ໃນ ຄ.ສ. ສະຕະວັດທີ V ຣາຊະນະຄອນສຸວັນນະໂຄມຄຳກໍ່ກຳເນີດຂຶ້ນຢູ່ເມືອງຕົ້ນເຜິ້ງ ແຂວງບໍ່ແກ້ວປັດຈຸບັນ ເຊິ່ງຕໍ່ມາໄດ້ກາຍມາເປັນນະຄອນຊຽງລາວ ຫຼື ຫິຣັນຍະນະຄອນ ຫຼື ຊຽງແສນ ຕໍ່ມາໄດ້ເປັນສູນກາງຂອງອານາຈັກອັນໄພສານ ຂອງພວກລາວຈົກ ໂດຍແມ່ນຂຸນເຈືອງເປັນກະສັດ. ອານາຈັກຂຸນເຈືອງຈົບລົງຈາກການພິສິດຂອງຣາຊະວົງຂຸນບູລົມ ໃນປະມານສະຕະວັດທີ XII (?).

ຕາມຂໍ້ມູນທີ່ໜ້າເຊື່ອໄດ້ໃຫ້ຮູ້ວ່າ ເລີ່ມແຕ່ສະຕະວັດທີ V ເປັນຕົ້ນມາ ອານາຈັກໜວງພະບາງກໍ່ເກີດມີມາແລ້ວ ພາຍໃຕ້ຊື່ວ່າເມືອງຊວາ ຫຼືຊຽງດົງຊຽງທອງ.

- ເລີ່ມແຕ່ສະຕະວັດທີ VI-XIII ອານາຈັກມ່ານເຈົ້າ ກໍ່ກຳເນີດເກີດຂຶ້ນແທນອານາຈັກແຖນ ແລະ ອານາຈັກອ້າຍລາວທີ່ແຂວງຢຸນນານຂອງຈີນ ປັດຈຸບັນ ເຊິ່ງຕາມຄວາມເຫັນຂອງນັກປາດຫຼາຍທ່ານວ່າ ແມ່ນພວກອ້າຍລາວກັບພວກຣາຍີ ຫຼື ພວກຕະກຸນຕິເບດ ຮ່ວມກັນສະຖາປານາຂຶ້ນ.

ອານາຈັກບູຮານ

ອານາຈັກ	ສະຖານທີ	ເຜົ່າຊົນ	ຍຸກ
ເຢ້ຊາງ (ແຍ້ຊາງ)	ພາກໃຕ້ຈີນ-ສຸວັນນະພູມ ກອມລາວປະຈຸບັນ (?)	ເຢ (ແຍ້) ພວກຮ້ອຍເຜົ່າພັນໃນນັ້ນມີລາວ.	ລະຫວ່າງ 1.100ປີ ກ່ອນ ຄ.ສ.
ແກວຈີ (ເຢັ້ນານ)	ດິນແດນພາກເໜືອຫວຽດນາມ.	ເຢ ໃນຈຳນວນນີ້ມີພວກລາວ (ໄຕ-ໄທ) ຫລື ລຽວ	--"--
ແຖນ	ກຸນໝິງ (ຢຸນນານ)	ລາວ+ໄໜ່ອີ້ (ລຽວ)	ລະຫວ່າງ300-200 ປີ ກ່ອນ ຄ.ສ.
ອ້າຍລາວ	ຢ້ຳຊາງ (ຢຸນນານດ້ານຕາເວັນຕົກ)	ລາວ+ໄໜ່ອີ້ (ລຽວ)	100ກ່ອນຄ.ສ. 500 ຫັ້ງ ຄ.ສ.
ຟູໜານ	ດິນຂະເໝນ ປັດຈຸບັນເປັນສູນກາງ	ຂອມບູຮານ	100-600ປີຫັ້ງ ຄ.ສ.
ຈຳປາ	ພາກກາງຫວຽດນາມ	ຈາມ	200ປີຫັ້ງຄ.ສ. ເຖິງ ຄ.ສ. XIV
ຖາງໝິງ (ຕ່າວໝິງ)	ຊຽງຂວາງປັດຈຸບັນ	ອາຊີໃຕ້+ລາວ	ກ່ອນແລະຕົ້ນຄິດຕະກາມ
ເວີນຕ້ານ(ວຽງຈັນ) ຫຼືຈັນທຣາ	ແຕ່ວຽງຈັນລົງໄປໃຕ້ເຖິງທະເລ	ລາວ-ອາຊີໃຕ້ (ຂອມ)	ສະຕະວັດVI ຫັ້ງ ຄ.ສ.
ທະວາຣະວະດີ	ດິນແດນພາກກາງຂອງໄທປັດຈຸບັນ	ມອນ	ຕົ້ນຄິດຕະກາມ

3. ຮ່ອງຮອຍແຫ່ງຄວາມສິວິໄລຂອງອານາຈັກບູຮານ

- ເມືອງຮ້າງສຸວັນນະໂຄມຄຳ ເຊິ່ງມີຊື່ຕ່າງໆ ຕໍ່ມາຄື: ເມືອງເງິນຍາງ, ເມືອງຊຽງລາວ, ເມືອງຊຽງແສນ (ເກົ່າ)ປັດຈຸບັນເປັນເມືອງຕົ້ນເຜົ້ງແຂວງບໍ່ແກ້ວ ສ້າງຂຶ້ນປະມານສະຕະວັດທີ V ຂອງຄິດຕະກາມ.

- ທີ່ແຂວງຫຼວງພະບາງກໍ່ມີ: ຊຽງເຫັກ-ຫາດຫ່ຽນ ເຂດບ້ານຊົມບ້ານນາ ຜາໄລເຂດນ້ຳອູ ບ້ານເລີມໃນເຂດນ້ຳງາ.

- ທີ່ຊຽງຂວາງ: ບໍລິເວນບ້ານບານ ເມືອງຄຳ ແລະ ໄຫຫີນໃນເຂດທົ່ງໄຫ

ຫີນ.

- ທີ່ແຂວງຊຳເໜືອ: ສະຖານທີ່ຫີນຕັ້ງເມືອງເປີນ.

- ທີ່ແຂວງຄຳມ່ວນກໍ່ມີ: ເຂດເມືອງມະຫາໄຊ ບ້ານນ້ຳໂດນກວນຜາວັ້ງ ບ້ານດ້ຽ ບ້ານສະຫງອມ.

- ແຂວງວຽງຈັນກໍ່ມີ: ເມືອງຮ້ຽງຊາຍຟອງ ວຽງຄຳທີ່ທຸລະຄົມ.

- ແຂວງສະຫວັນນະເຂດກໍ່ມີ: ທາດອີຮັ້ງ ເຂດຊົນບູລີ ເຮືອນຫີນ ທີ່ເມືອງສອງຄອນ.

- ແຂວງຈຳປາສັກກໍ່ມີ: ວັດພູຈຳປາສັກ.

- ທີ່ແຂວງ ສາລະວັນ ແລະ ອັດຕະປືກໍ່ມີ: ເສົາຫີນ ເຮືອນຫີນ ແລະ ໄລງສິບບູຮານ. ນອກຈາກຮ່ອງຮອຍທີ່ມີຢູ່ໃນເຂດແດນລາວເຮົາປັດຈຸບັນນີ້ ແລ້ວ ຍັງມີ:

- ບູຮານສະຖານບ້ານຈຽງ (ຊຽງ) ທີ່ແຂວງອຸດອນ ປະເທດໄທຍ ເຊິ່ງມີ ຮ່ອງຮອຍເປັນເຄື່ອງປັ້ນດິນເຜົາ ໝໍ້ ເຄື່ອງເອ້ ແລະ ເສດ ເສື້ອຜ້າອາພອນ ເຊິ່ງ ຄາດກັນວ່າມີອາຍຸ ປະມານ 5.000 ປີ.

- ບູຮານສະຖານ ຊີໄຈ້ຊານ ຮ່ອງຮອຍແຫ່ງວັດທະນະທຳໜອງແສ ຫຼື ອານາຈັກແຖນ ຂອງພວກອ້າຍລາວ ທີ່ແຄມໜອງແສນ້ອຍ ຫຼື ໜອງຖຸ່ມຈ໊ ດ້ານຕາເວັນຕົກຂອງນະຄອນກຸນໝິງ ແຂວງ ຢຸນນານ ປະເທດ ສ.ປ. ຈີນ.

4. ທີ່ມາຂອງຄຳວ່າລາວ.

ກ່ອນໜ້ານີ້ປະມານ 2.300 ປີ ຄົນລາວ ຫຼື ທີ່ເອີ້ນວ່າ ໄທ ຫຼື ໄຕ ກຸ່ມ ຕ່າງໆຖືກຮຽກວ່າ ພວກເຢ (ພວກແຍ ໃນພາສາລາວເດີມ) ເຊິ່ງນອນຢູ່ໃນຈຳ ພວກ " ເຢີ້ຮ້ອຍເຜົ່າພັນ " (ໄປ່ເຢ -Pai yué) ໂດຍພວກຫານ ຫຼື ພວກຈີນ.
ໜັງສື "ໄຫວຫ້ານ" (ຕ໋ານ ນ່ານມ່ານ ສີ່ມ່ານອີ) ເຫຼັ້ມ 86 ຂອງຈີນ ໄດ້ບັນທຶກຂໍ້ ຄວາມໄວ້ວ່າ:
" ອັນວ່າຄົນອ້າຍລາວນັ້ນ ຊ່າລືວ່າ ແຕ່ກ່ອນຍັງມີຍິງຄົນໜຶ່ງຊື່ວ່າ ຊ່າອີ້ (2) ອາ ໄສຢູ່ພູລາວຊານ (3) ຫຼື ພູອ້າຍລາວ ມີອາຊີບຫາປາ ມື້ໜຶ່ງໄປຫາປາມີທ່ອນໄມ້

ມາຊຸນໃສ່ແລ້ວກໍ່ເລີຍຖືພາ. 10 ເດືອນຕໍ່ມາໄດ້ເກີດລູກຊາຍ 10 ຄົນ ທ່ອນໄມ້ທີ່ໄຫຼມາຊຸນນັ້ນຈົມລົງແລ້ວກາຍເປັນ ໄຕນາກ ຟູຂຶ້ນມາເທິງໜ້ານ້ຳ ແລ້ວເວົ້ານຳນາງຊາອີ້ວ່າ:

ເຈົ້າເກີດລູກໃຫ້ຂ້ອຍແລ້ວ ດຽວນີ້ເຂົາຢູ່ໃສ ? ລູກຊາຍ 9 ຄົນ ເຫັນນາກກໍ່ເລີຍຢ້ານ ແລ້ວພາກັນຕົ້ນແຕກໜີໄປ ສ່ວນລູກຊາຍຫຼ້າໜີໄປບໍ່ທັນ ນາກຈົ່ງຂຶ້ນມາແລບລົ້ນເລັ່ງ ເອົານັ່ງໃສ່ຫຼັງແລ້ວເລີຍໃຫ້ຊື່ລູກຊາຍນັ້ນວ່າ ທ້າວເກົ້າຫຼົ່ງ (ລາວເຮົາວ່າ ທ້າວກາຫຼົ່ງ). ບາງຄົນແປເກົ້າຫຼົ່ງວ່າ ນາກເກົ້າຕົວ. ຕໍ່ມາເມື່ອລູກຊາຍທັ່ງໝົດໃຫຍ່ຂຶ້ນມາ ພວກອ້າຍທັ່ງຫຼາຍກໍໄດ້ຍົກໃຫ້ນ້ອງຊາຍຫຼ້າເປັນເຈົ້າ ຍ້ອນວ່າລາວເຄີຍຖືກພໍ່ທີ່ເປັນນາກນັ້ນເລັ່ງ. ອີກຕໍ່ມາມີຜົວເມັ່ງຄູ່ໜຶ່ງ ອາໄສຢູ່ຕີນພູລາວຊານກໍ່ເກີດລູກສາວ 10 ຄົນ ໃຫຍ່ຂຶ້ນມາແລ້ວ ພວກພີ່ນ້ອງ ເກົ້າຫຼົ່ງ 10 ຄົນ ກໍ່ເລີຍມາເອົາໄປເປັນເມັ່ງ ສົບເຊື້ອ ສົບພັນກັນຕໍ່ໆໄປ. ຄົນຕະກຸນນີ້ ລ້ວນແຕ່ໄດ້ສັກເມິກໃສ່ຄິ້ງເປັນຕົວນາກ ນຸ່ງເສື້ອມີຫາງ. ຫຼັງຈາກເກົ້າຫຼົ່ງ(ກາຫຼົ່ງ) ຕາຍແລ້ວ ກໍ່ສົບທອດກັນມາ ແລ້ວ ແຕ່ງກັນໄປສະເຫວີຍລາຊ ຢູ່ຕາມຫົວເມືອງຕ່າງໆ ແຕ່ຍ້ອນວ່າມີພູຜາປ່າດົງ ແມ່ນ້ຳລຳເຊປິດກັ້ນ ຄົນພາຍນອກກໍ່ບໍ່ມີໃຜເຄີຍມາ ຈົ່ງບໍ່ມີການພົວພັນກັບປະເທດຈີນ." ຕາມຄຳອະທິບາຍທີ່ໄດ້ຈາກ ພົງ ສາວະດານອ້າຍລາວເວົ້າໄວ້ວ່າ " ເກົ້າຫຼົ່ງໄດ້ສົບທອດກັນມາເປັນຫຼາຍເຊັ່ນຄົນ, ຊົ່ນາມອານາຈັກນັ້ນ ບໍ່ໄດ້ໝາຍໄວ້ຢ່າງແນ່ນອນ. ເວົ້າສຳລັບຜູ້ຊື່ວ່າ: ຈົ່ງກ່າວ ນັ້ນ ກໍ່ຍັງພໍມີເລື່ອງບັນທຶກໄວ້. ຫຼັງຈາກ ຈົ່ງກ່າວ ຕາຍແລ້ວ ລູກຊາຍຊື່ວ່າ: ຊຶ ກໍ່ຂຶ້ນສະເຫວີຍລາດແທນ ເມື່ອເພິ່ນຕາຍແລ້ວ ລູກຊາຍຊື່ ອ້າຍລາວ ກໍ່ມາແທນ ອ້າຍລາວຕາຍແລ້ວ ລູກຊາຍ ຊັ່ງໄອວ ມາແທນ ຊັ່ງໄອວ ຕາຍແລ້ວ ລູກຊາຍ ລີວເຊີນ ມາແທນ ລີວເຊີນ ຕາຍແລ້ວ ລູກຊາຍຊື່ ລີວມາວ ມາແທນ ລີວມາວ ຕາຍແລ້ວ ລູກຊາຍຊື່ ລີ້ ມາແທນ (4).

ລາຊະການຢົງພິນ ປີທີ່ 12 (ກົງກັບ ຄ.ສ. 69) ພຣະເຈົ້າແຜ່ນດິນອ້າຍລາວ ຊື່ ລີວມາວ ໄດ້ແຕ່ງພະລາຊະໂອລົດ ນຳໄພ່ພົນ ແລະ ບໍລິວານ ໃນນັ້ນມີພະຍາເຈົ້າເມືອງ 77 ຄົນ ພ້ອມທັງ 51.890 ຄອບຄົວ ແລະ ລີພົນ 553711 ຄົນ ມາສະຫວາມີພັກ. ຈາກພາກຕາເວັນຕົກສ່ຽງໃຕ້ ໄປຮອດນະຄອນຫຼວງລ່ຽງ ມີ

ໄລຍະທາງ 7.000 ລີ້ ພຣະເຈົ້າແຜ່ນດິນຊ່ຶງໄດ້ແບ່ງດິນໃຫ້ຂຶ້ນກັບອ້າຍລາວ ແລະ ປ້ຳນ 2 ເມືອງ ຕັດເອົາພາກຕາເວັນຕົກຂອງແຄ້ວນອີໄຈວ 6 ເມືອງເປັນ ດ່ານໜ້າ ແລະ ເອົາເຂົ້າຮ່ວມກັນເປັນແຄ້ວນຢ່ຽງຊາງ. ຄົນອ້າຍລາວບ່ອງໜູ ບ່ອງ ດ້ງ ຫົວໜ້າຂອງເຂົາເອີ້ນຕົວເອງວ່າ "ພຣະເຈົ້າແຜ່ນດິນ" ຫູຢ່ອນລົງກາຍບ່າ 3 ຊຸ້ນ (ມາດຕາວັດຂອງຈີນ 3 ຊຸ້ນ ເທົ່າກັບ 3 ເຊັ່ນເຄິ່ງ (ຊາວນາຫູຢ່ອນລົງໜຽງ ບ່າ ດິນປູກຝ້ຽເຫມາະສົມກັບການປູກພືດພັນທັນຍາຫານ ແລະ ປູກມອນ ລ້ຽງ ມ້ອນ ເຂົາເຈົ້າຮູ້ຈັກ ຍ້ອມແຜ່ນແພ ແລະ ຫຍິບແສ່ວ ຖັກພົມ ຕ່ຳແຜ່ນ ຕ່ຳຜ້າ ຝ້າຍປ່ານ ຕ່ຳຜ້າປ່ານປໍສາທີ່ມີປັກກວ້າງ 5 ເຊ໋ (ມາດຕະວັດແທກຄວາມຍາວ ຂອງຈີນ 1 ເຊ໋ ເທົ່າກັບ 33 ເຊັ່ນຕີແມັດ) ເປັນຜ້າຂາວທີ່ສະອາດ ນຳມາປົກຄົນ ຕາຍກ່ອນ ແລ້ວຈຶ່ງນຳມາຕັດເປັນເຄື່ອງນຸ່ງ."

ເປັນທີ່ປະຈັກແລ້ວວ່າ "ລາວ" ນັ້ນເປັນຊາດທີ່ເກົ່າແກ່ ແລະ ມີຈຶ່ງທາງ ປະຫວັດສາດ. "ລາວ" ບໍ່ສະເພາະແຕ່ເປັນຊື່ຂອງຊາດພັນ ແລະ ຊື່ທ້ອງຖິ່ນດິນ ແດນຂອງປະເທດທ່ໍນັ້ນ ແຕ່ຍັງເປັນຊື່ຂອງເຊ໋ືອກະສັດຜູ້ປົກຄອງສືບຕ່ໍກັນມາ ຫຼາຍຍຸກຫຼາຍສະໄຫມ ແລະ ຫຼາຍພວກເຊັ່ນ:

- ອ້າຍລາວ
- ຕູລາວ
- ລູລາວ
- ຫມູ່ລາວ
- ເຄົ້ລາວ

ຕະຫຼອດຈີນມາຮອດຕະກຸນລາວຈົກ ລາວຈັກກະລາດ ລາວເກົ້າກ້ຽວ ທີ່ ນະຄອນຊ້ຽງລາວ ຫ໋ື ຊ້ຽງແສນ ຊ້ຽງຮາຍ ພາກເໜ໋ືອຂອງລ້ານຊ້ຳງ ແລະ ລ້ານນາ.

ຄຳວ່າ "ລາວ" ໄດ້ຮັບການອອກສ້ຽງຜ້ຽນໄປຕາມແຕ່ລະຍຸກ ແຕ່ລະ ທ້ອງຖິ່ນ ເຊັ່ນ: ຈະອອກສ້ຽງເປັນ: ລາວ ແລວ ລິວ ລ້ຽວ ລົ້ ລົ້. ພວກ້ຽວ ຫ໋ື ພວກ ຊານໃນປະເທດພະມ້ຳ ຍັງຖ໋ືກຮຽກອອກສ້ຽງເປັນ "ລາວມ້ຽນ" ຊາວລົ້ 12 ພັນ ນາ ຖ໋ືກຮຽກອອກສ້ຽງກ່ອນໜ້ານັ້ນ ເປັນ "ຈ໋ວລ້ຽວ" (ລາວນ້ອຍ) ຊາວຈ້ວງກ່ໍຖ໋ືກ

ຮຽກອອກເປັນ "ລຽວ" ຊາວລາວລ້ານຊ້າງ ຖືກຮຽກອອກສຽງເປັນ "ອ່າຍລ່າວ ອ່າຍແລ່ວ ອ້າຍລົ້ວ" ໂດຍຊາວຫວຽດນາມ ແລະ ຂະເໝນ ສະໄໝກ່ອນໜ້ານີ້ 40-50 ປີ. ຊາວໄຕ-ທ້າຍ ທີ່ພາກເໜືອຫວຽດນາມ ຮຽກຕົນເອງອອກສຽງເປັນ "ເມີ້ງລາວ" ໂດຍຊາດຈີນບູຮານກ່ອນສະຕະວັດທີV. ຊາວໄຖທີ່ຫວຽດນາມ ອອກມາຈາກຊື່ "ຖູ່ລາວ" ເຊິ່ງກໍ່ຍັງຊື່ນີ້ນຳກຸ່ມຊົນ " ຖູລາວ " ທີ່ປະເທດຈີນ.

5. ທີ່ມາຂອງຄຳວ່າໄທ ຫຼື ໄຕ.

ຈຶ່ງສັງເກດງ່າຍໆວ່າ ໂດຍທົ່ວໄປແລ້ວ ຊົນຊາດຕະກຸນອ້າຍລາວ ຈະໃຊ້ ຄຳວ່າ "ໄທ" ຫຼື "ໄຕ" ມາແທນຄຳວ່າ "ຄົນ" ເຊັ່ນ:

- ຄົນລາວ ເປັນ ໄທລາວ
- ຄົນບ້ານນອກ ເປັນ ໄທບ້ານນອກ
- ຄົນບ້ານໃຕ້,ຄົນບ້ານເໜືອ ເປັນ ໄທບ້ານໃຕ້-ໄທບ້ານເໜືອ.
- ຄົນໃຕ້ ຄົນເໜືອ ເປັນ ໄທໃຕ້ ໄທເໜືອ
- ຄົນວຽງ-ຄົນເມືອງ ເປັນ ໄທວຽງ-ໄທເມືອງ
- ຄົນອື່ນ ຄົນໄກ ເປັນ ໄທອື່ນ ໄທໄກ
- ຄົນເຈັກ-ຄົນແຂກ ເປັນ ໄທເຈັກ ໄທແຂກ
- ຄົນຕ່າງດ້າວ ທ້າວຕ່າງແດນ ເປັນ ໄທຕ່າງດ້າວ ທ້າວຕ່າງແດນ ແລະອື່ນໆ.

ເຫດທີ່ໃຊ້ຄຳ "ໄທ" ຫຼື "ໄຕ" ມາແທນຄຳວ່າ "ຄົນ" ກໍ່ເພາະວ່າຄຳວ່າ "ໄທ" ຫຼື "ໄຕ" ນັ້ນ ມີຄວາມໝາຍດຽວກັບຄຳວ່າ "ຄົນ" ນັ້ນເອງ ແຕ່ທາງດ້ານພາສາສາດນັ້ນ ຄຳວ່າ "ໄທ" ຫຼື "ໄຕ" ມີຄວາມໝາຍທາງມາລະຍາດ ແລະ ຄວາມໃຫ້ກຽດສູງກ່ວາທ່ໍນັ້ນ ເຊັ່ນ: ເພິ່ນຈະບ່ໃຊ້ຄຳວ່າ "ໄທຂີ້ລັກ-ໄທຊົ່ວ-ໄທບ້າ" ແຕ່ເພິ່ນໃຊ້" ຄົນຂີ້ລັກ-ຄົນຊົ່ວ-ຄົນບ້າ" ອັນສະແດງໃຫ້ເຫັນຈະແຈ້ງວ່າ "ຄົນ" ນັ້ນ ແມ່ນຄຳສາມັນທຳນະດາ ແລະ ໃຊ້ໃນຄວາມໝາຍທຳນະດາ ບ່ແມ່ນສັບວັດທະນະທັມ ຫຼື ໃຫ້ກຽດເລີຍ.

ຄຳວ່າ "ໄທ" ຫຼື "ໄຕ" ນັ້ນ ເດີມບ່ແມ່ນຊື່ເຜົ່າພັນ ຫຼື ຊາດພັນແຕ່ແມ່ນ

ສັບມາຈາກສັບຈີນ( ) ຮຽກວ່າ "ໄຕ" ຫຼື "ຕ້າ" ແປວ່າ ໃຫຍ່ ຫຼື ຍິ່ງໃຫຍ່ ພາສາສຫວຽດນາມ ຮຽກວ່າ "ດາຍ". ແຮກເລີ່ມພວກເຮົາໃຊ້ຄຳນີ້ ເປັນນາມຍົດຂອງເຈົ້າຊີວິດ ເຊັ່ນ ສະໄໝອານາຈັກນ່ານເຈົ້າກໍມີຊື່ດັ່ງນີ້:

- ໄຕ ຫຼື ເຊິ່ງຕໍ່ມາເປັນ ຕ້າຫຼີ (ເມືອງຕ້າຫຼີ)
- ໄຕ ມົ້ງ
- ໄຕ ຈ້ຽງຫໍ-ໄທ້ຍິນໜີ້ງ ແລະ ອື່ນໆ

ສະໄໝຂຸນບູລົມ ເພີ່ນໃຊ້ຄຳວ່າ "ໄທ" ຫຼືໄຕ ເປັນຊັ້ນຄົນຊັ້ນສອງຫລຸດລົງ ມາຈາກເຈົ້າຊີວິດ ເຊັ່ນ:

ຊັ້ນ 1 -ຂມ
ຊັ້ນ 2 - ໄທ
ຊັ້ນ 3 -ໄພ່
ຊັ້ນ 4 -ຂ້າ
(4 ຊັ້ນຄົນ)

ຫຼັງຈາກນັ້ນມາ ຄຳວ່າ "ໄທ" ຫຼື "ໄຕ" ໄດ້ນຳໃຊ້ເຂົ້າເປັນສາມັນຍະນາມ ແປວ່າ "ຄົນ" ແຕ່ມີຄວາມໝາຍໃນທາງກຽດ ແລະ ມີມາລະຍາດສູງກ່ວາຄຳວ່າ "ຄົນ"

- ພາຍຫຼັງຊາວຕາເວັນຕົກ ເຂົ້າມາໃນສຸວັນນະພູມ ປະເທດ ປະມານ ສະຕະວັດທີ 14 ຂອງຄິດຕະການ ຄຳວ່າ "ໄທ" ຫຼື "ໄຕ" ຈຶ່ງຖືກແປຄວາມໝາຍ ແລະ ໃຊ້ໄປໃນທາງທີ່ຜິດຈົນກາຍມາເປັນ ຊື່ຊາດພັນ "ໄທ" ຫຼື "ໄຕ"

ມາເຖິງປີ 1939 ຈອມພົນ ປ. ພິບຸນສົງຄຣາມ ຂອງໄທຍ ໄດ້ສະຖາປະນາຊາດ "ໄທຍ" ຂຶ້ນໂດຍປ່ຽນຊື່ປະເທດສະຫຍາມມາເປັນ "ປະເທດໄທຍ"

ປັດຈຸບັນໃນວັນນະຄະດີເກົ່າແກ່ ຂອງລາວຍັງມີຄຳ "ໄທ" ຫຼື "ໄທ້" ໃນ ຄວາມໝາຍເກົ່າໆເດີມໆ ເຊັ່ນວ່າ:

- ພະບາດໄທ້
- ພະແກ່ນໄທ້

- ไทท้าว ดั่งนั้นเป็นต้น.

ຄຳຈຳພວກນີ້ ມີຄວາມໝາຍດັ້ງເດີມຄື ແມ່ນວຸດທິນາມຂອງກະສັດແປ ວ່າ "ພະຣາຊາຜູ້ຍິ່ງໃຫຍ່ ນັ້ນເອງ. ມັນຍັງມີສັບເຊັ່ນ:

- ไทหาม = ทะหาม
- ไทดาบ = ทะหามดาบ (มือดาบ)
- ไทเรือ = สิพาย-คนเรือ
- ไทหน้า = ทะหามกองหน้า
- ไทหลัง = ทะหามกองหลัง
- ไทม่าๆ = ผู้เฝ้าและกำกับม่าๆเวลาออกป่า ล่าเนื้อดั่งนี้เป็นต้น.

6. ຂຸນເຈ້ືອງວິຣະກະສັດລາວ ສະໄໝກ່ອນລ້ານຊ້າງ.

ພວກເຮົາຮູ້ແລ້ວວ່າບັນຫາປะຫວັດສາດນັ້ນ ສะເພาะลาวเฮົาแล้ว ยังแม่นบันหาที่ยังขาดความละอ่วดอยู่หลายปะการ ความรู้ในด้านนี้ ส่วนใหย่ยังแม่นความรู้ลวมๆ และ กะแจกกะจายเป็นส่วนใหย่ เฮ็ๆ พวกเฮົาจะต้องได้สืบต่ดำเนินการค้นคว้าต่ไป.

ตามตำนานหลายสะบับของขาวลาวเดิม ทางพากเหนือ เช่น ตำนานโยนิก และ วันมะกำแอ้มปะหวัดสาด เล็ดท้าวซุ่ง ท้าวเจ็ด ของเมืองพวงพะบาง ได้บอกให้พวกเฮົาพ่รู้ได้ดั่งนี้:

ในต้นคิดตะสักกะหลาด มิธาขะวิงลาวตะกุนหนึ่งเกิดขึ้น เฮ็ๆเอ้า ชื่ "ลาว" นำหน้า ซงกว่า "ลาวจิก" ตะกุนธาขะวิงลาวตะกุนนี้ ครองโย นิกนะคอน ครองนะคอนเงินยาง หรื ขวงลาว หรื นะคอนขวงแสน (อะดิด แม่นนะคอนสุวันนะโคมคำ) เฮ็ๆมิสูนกางตั้งยู่เมืองต้นเผิ้ แขวงบ่แก้ว ปัดจุบัน สืบปต่กันมา 39 อิง (บางเอกะสานว่า 24 อิง) จินเถิงรัดขะกาน ของ "ลาวติก" คืออิงสุดท้ายของธาขะวิงชื่ "ลาว." ต่จากตะกุน "ลาว"

ຈ໋ໆແມ່ນຕະກຸນ "ຂຸນ" ເຊັ່ນ: ພະໄອຣິດ ຜູ້ສືບຣາຊະສົມບັດ ຈາກລາວຈີກຜູ້ເປັນ ພະບິດານັ້ນ ຊື່ ຂຸນເທິງ(ທ້າຍສະຕະວັດ ຄ.ສ.11) ຂຸນເທິງມີຣາຊະໄອລິດສືບຣາຊະ ສົມບັດ ຊື່ ຂຸນເງິນ ຂຸນເງິນມີຣາຊະໄອຣິດ ສືບຣາຊະສົມບັດ ຊື່ ຂຸນເຈືອໆ

ຂຸນເຈືອໆ.

ຂຸນເຈືອໆແມ່ນຣາຊະທາຍາດຂອງເຊື້ອຕະກຸນຣາຊະວົງໜຶ່ງຂອງລາວ ເດີມ ຮູ້ກວ່າ ຣາຊະວົງລາວຈີກ ອັນມີສູນກາງຕັ້ງຢູ່ນະຄອນຊຽງລາວ ຫຼື ເງິນ ຍາງ ຫຼື ໄຍນິກນະຄອນ ເຊິ່ງຕໍ່ມາກາຍມາເປັນນະຄອນຊຽງແສນ (ເກົ່າ) ອັນມີ ຣາຊະສຳນັກຕັ້ງຢູ່ເຂດເມືອງຕົ້ນເຜີ້ງ ແຂວງບໍ່ແກ້ວ ປັດຈຸບັນນັ້ນເອງ ນະຄອນ ດັ່ງກ່າວອັນມີປະຊາກອນຕັ້ງຢູ່ສອງຝາກຝັ່ງແມ່ນ້ຳຂອງນັ້ນ ກຳເນີດມາຈາກ ເມືອງສຸວັນນະໂຄມຄຳຮ້າງຂອງຂອມບູຮານ. ຕໍ່ມາພວກມາຄະ(ລາວ) ໄດ້ມາ ສະຖາປານາມາເປັນນະຄອນຊຽງລາວ ຫຼື ທີຮັບຍະນະຄອນເງິນຍາງ ຂຶ້ນໃນປະ ມານຄິດຕະສະຕະວັດທີ່ VIII-XII(?).

ເມື່ອມາເຖິງຮັດຊະການຂອງຂຸນເຈືອໆ ອັນເປັນບຸດຂອງຂຸນຈອມທຳ ເຊິ່ງແມ່ນເຊື້ອຕະກຸນຂອງລາວຈີກ ໃນກາງສະຕະວັດທີ່ XII ພຣະອົງໄດ້ເປັນຜູ້ ທຳອິດ ທີ່ພະຍາຍາມເຕົ້າໂຮມປະເທດຊາດທາງພາກເໜືອເຂົ້າເປັນອັນໜຶ່ງອັນ ດຽວກັນ ແລະ ເຕົ້າໂຮມເຜົ່າຕ່າງໆ ໃຫ້ສາມັກຄີເປັນກຳລັງສ້າງລວມມະຫາສານ ສາມາດພິຊິດ ຫຼວງພະບາງ ຊຽງຂວາງ ດິນແດນ 12 ພັນນາ ແລະ 12 ເຈົ້າໄຕ ເຂົ້າເປັນຈັກກະພົບລາວອັນດຽວກັນທາງພາກເໜືອ ພຣະອົງເປັນ ໜຶ່ງໃນວີຣະ ກະສັດລາວຮຸ່ນທຳອິດທີ່ໄດ້ສ້າງມະຫາສາມະຄີພາຍໃນຊາດ ທີ່ມີຫຼາກຫຼາຍເຜົ່າ ຊົນ ກ່ອນສະໄໝລ້ານຊ້າງ. ຈັກກະພົບຂອງຂຸນເຈືອໆນັ້ນ ມີອາຍຸຢູ່ບໍ່ໄດ້ດົນ ແລະ ໄດ້ລົ້ມລະລາຍພາຍໃນ 15 ປີ ເມື່ອຂຸນເຈືອໆສິ້ນພະຊົນ.

ຂຸນລໍ

ເມື່ອຍົ່ຄຳຫາວບຸດຊາຍຂອງຂຸນເຈ໊ອງ ສົ້ນພະຊົນແລ້ວ ບຸດຊາຍຊົ່ ຂຸນ ຊວາກ໋ົ້ນຄອງຣາຊະສົມບັດ ເມື່ອຂຸນຊວາສົ້ນພ໋ະຊົນແລ້ວ ບຸດຊາຍຊົ່ ຂຸນຍົ່ບາ ກ໋ົ້ນຄອງຣາຊະສົມບັດແທນ ເມື່ອຂຸນຍົ່ບາສົ້ນ໋ພະຊົນແລ້ວ ຂຸນວິຣິຍະ ກ໋ົ້ນ ຄອງຣາຊະສົມບັດແທນ ເມື່ອຂຸນວິຣິຍະສົ້ນພະຊົນໄປແລ້ວ ຂຸນກັນຣາງຜູ້ເປັນ ບຸດກ໋ົ້ນສະເຫວີຍຣລາຊແທນ.

ຂຸນກັນຣາງນັບເປັນອົ່ງສຸດທ້າຍຂອງຣາຊະວົ່ງ ຂຸນເຈ໊ອງ ຫຼື ເຊ໊ືອວົ່ງຕະ ກຸນຂອງລາວຈົ່ກ ເມ໊ືອງຊ໋ຽງແສນ ຊ໋ຽງລາວທ໋ີ່ຄອງອານາຈັກ ຫ໋ວ໋ງພະບາ໋ງ.

ຕ໋ານຂຸນບູລົມໄດ້ກ່າວໄວ້ວ່າ ຂຸນລໍ ແມ່ນໜຶ່ງໃນຈ໋ານວນຣາຊະໂອຣົດ7 ຊາຍ ຂອ໋ງຂຸນບູລົມ ທ໋ີ່ສົ່ງມາກິນເມ໊ືອງຕ່າ໋ງ໋ ໃນອານາເຂດສຸວັນນະພູມປະ ເທດ. ຂຸນລໍຖ໋ືກ່ສົ່ງມາກິນເມ໊ືອງຫລວ໋ງພະບາ໋ງແທນຂຸນຣາ໋ງ. ຂຸນບູລົມ ເປັນເຊ໊ືອ ວົ່ງຕະກຸນຂອ໋ງແຖນ໋ຫ໋ວ໋ງ ແຫ່ງ໋ອານາຈັກແຖນ ຫຼື ອານາຈັກໜອ໋ງແສ. ນັກປະ ຫວັດສາດບາ໋ງ໋ທ່ານສັນນິຖານວ່າ ຂຸນບູລົມແມ່ນ໋ຜູ້ດ໋ຽວກັນກັບ ພິໂລໂກ໋ະ ໃນ ຄ໋ິດຕະສະຕະວັດທ໋ີ່ VII (?) ແຕ່ມ໋ີພ໋ິລຸດ໋ຫ໋ານຢ່າ໋ງ໋ທ໋ີ່ສະແດ໋ງວ່າຂຸນບູລົມທ໋ີ່ຈາກ ອານາຈັກໜອ໋ງແສ ຫຼື ນ່ານເ໋ຈ້ົ ມາສ໋ ້ າ໋ງເມ໊ືອ໋ງແຖ໋ງ ທ໋ີ່ທ໋ີ່ງ໋ນາ໋ນ້ອ໋ຍອ໋ຍ໋ໜູ (ດ໋ຽ ບ໋ຽນ໋ຟູ) ນັ້ນ ອາ໋ດຈ໋ະຢູ່ໃນ໋ຍຸກ໋ຫ໋ັງ ເ໋ພ໋ະມ໋ີເ໋ຫ໋ດ໋ຜ໋ົນ໋ຢູ່ວ່າ:

- ຍຸກທ໋ີ່ໃ໋ຊ້ຄ໋ຳວ່າ "ຂຸນ" ເປັນຊ໋ື່ກ໋ະສັດນັ້ນ ມ໋ີມ໋ານ໋ແ໋ຕ່ຕ໋ົ້ນ ຄ໋ິດຕະສະຕະວັດ ທ໋ີ່ XII ທ໋ີ່ນ໋ັ້ນ.

- ເ໋ຫ໋ດ໋ຜ໋ົນທ໋ີ່ຂຸນບູລົມຈ໋າ໋ກເມ໊ືອ໋ງແຖ໋ນ (ໜອ໋ງແສ) ມ໋ານ໋ສ ້ າ໋ງເມ໊ືອ໋ງແຖ໋ງ (ແຖ໋ນ) ໃ໋ຫ໋ມ່ນ໋ັ້ນ ອ໋ານ໋ຈ໋ະແ໋ມ່ນ໋ໃ໋ນ໋ຖ໋ານ໋ະ໋ທ໋ີ່ເມ໊ືອ໋ງ໋ໜອ໋ງແສ໋ຫ໋ຼ ້ ມ໋ຈ໋ົມ ຄ໋ືໃ໋ນ໋ສ໋ະ໋ໄ໋ໝ ກ໋ອ໋ງ໋ທ໋ັບ໋ມ໋ົ໋ງ໋ໄ໋ກ໋ນ໋ມ໋ານ໋ເ໋ຖ໋ົ໋ງ໋ອ໋ານ໋ານ໋ຈ໋ັກ໋ໜ໋ອ໋ງ໋ແສ ຫຼື ນ໋ານ໋ເ໋ຈ້ົ (ຄ໋ິດ໋ຕ໋ະ໋ສ໋ະ໋ຕ໋ະ໋ວ໋ັດ໋ທ໋ີ່ XIII).

- ຖ໋ ້ າ໋ຂຸ໋ນ໋ລ໋ໍ ເ໋ປ໋ັ ້ ນ໋ບຸ໋ ດ໋ ຂ ອ ງ ຂ ຸ ນ ບ ູ ລ ົ ມ ແ ລ ະ ຂ ຸ ນ ລ ໍ ໄ ດ ້ ຍ ົ ກ ທ ັ ບ ມ າ ຕ ິ ຂ ຸ ນ ກ ັ ນ ຣ າ ໆ ເ ມ ື ອ ງ ຫ ວ ງ ພ ະ ບ າ ໆ ເ ຊ ິ ່ ງ ເ ປ ັ ນ ເ ຫ ຼ ັ ນ ຫ ້ ອ ນ ຂ ອ ງ ຂ ຸ ນ ເ ຈ ື ອ ງ (ຄ ິ ດ ຕ ະ ສ ະ ຕ ະ ວ ັ ດ ທ ີ ່ XII) ກ ໍ ່ ຍ ັ ງ ສ ະ ແ ດ ງ ວ ່ າ ຂ ຸ ນ ບ ູ ລ ົ ມ ມ ີ ຊ ີ ວ ິ ດ ຢ ູ ່ ໃ ນ ທ ້ າ ຍ ສ ະ ຕ ະ ວ ັ ດ ທ ີ ່ XII ຫ າ ຕ ົ ້ ນ ສ ະ ຕ ະ ວ ັ ດ ທ ີ ່ XIII.

ຂຸນລໍໄດ້ຍົກລີພົນມາຕາມສາຍນ້ຳອູ ແລະ ມາຕົກອ່ຽທັບຂອງຂຸນກັນ ຮາງທີ່ປາກນ້ຳອູ. ກອ່ຽທັບຂອງຂຸນກັນຮາງສູ້ບໍ່ໄຫວ ຈຶ່ງໄດ້ຍ້າຍທັບຂຶ້ນເມືອຕັ້ງ ຫັກຢູ່ເຂດເໜືອຄືທົ່ວງພູຄາ ແຂວງຫຼວງນ້ຳທາ ປັດຈຸບັນ. ເມື່ອຂຸນລໍຊະນະ ຂຸນ ກັນຮາງແລ້ວພວກອ້າຍລາວຜູ້ມາຈາກເມືອງແຖງ ສາຂາຕາເວັນອອກ ແລະ ອ້າຍລາວເດີມທີ່ເມືອງຫຼວງພະບາງ ອັນມີເຊື້ອສາຍມາຈາກສາຂາອ້າຍລາວ ທາງຊຽງລາວ ຊຽງຮຸ່ງ ສາຂາຕາເວັນຕົກກໍ່ສວຍໂອກາດຖືຂຸນລໍ ເຊິ່ງເປັນຜູ້ແພ້ ສົງຄາມເປັນຕົ້ນຣາຊະວົງຂອງຕົນ ໂດຍປະຕິເສດຕະກຸນຂຸນເຈືອງຜູ້ປະລາໄຊ. ສ່ວນບັນດາເຜົ່າອື່ນຍັງສືບຕໍ່ຈົງຮັກພັກດີຕໍ່ເຊື້ອຣາຊະວົງຂຸນເຈືອງ ແລະ ຍັງສືບ ຕໍ່ຖື ຕະກຸນຂອງຂຸນເຈືອງ ເປັນບັນພຣະບູລຸດຂອງຕົນ ເຊິ່ງຄວາມຈິງແລ້ວ ທັ້ງ ຂຸນເຈືອງທີ່ມາຈາກຕະກຸນລາວຈົກ ແລະ ຂຸນລໍເຊິ່ງມາຈາກ ຂຸນບູລົມ ທັ້ງສອງ ຕະກຸນອ້າຍລາວນີ້ ກໍ່ມາຈາກຕະກຸນແຖນຫຼວງ ຟ້າຄັ່ນ ທີ່ອານາຈັກໜອງແສ ຫຼື ອານາຈັກອ້າຍລາວເຊັ່ນກັນ ຕ່າງແຕ່ສາຂາກັນທໍ່ນັ້ນ ຄື ສາຂາລາວຈົກ ແມ່ນ ລ່ອງຕາມລ້ອງແມ່ນ້ຳຂອງ ສ່ວນສາຂາຂອງຂຸນບູລົມ ແມ່ນລ່ອງຕາມແມ່ນ້ຳດຳ ນ້ຳແດງ ແລ້ວມາພົບກັນຢູ່ຫຼວງພະບາງ ຍາດຊີງອຳນາດກັນເອງ.

ເມື່ອຂຸນລໍຊະນະສົງຄາມແລ້ວ ຄວາມແຕກແຍກກັນກໍ່ເກີດມີລະຫວ່າງ ສອງຝ່າຍ ຄື ຜູ້ທີ່ຍັງຖືຕະກຸນ ຂຸນເຈືອງ ຜູ້ເສັ່ງໄຊ ແລະ ຜູ້ທີ່ໄປນຳຂຸນລໍຜູ້ແພ້. ຄວາມແບ່ງວັນນະກັນໃນສັງຄົມກໍ່ເກີດມີຂຶ້ນ ຜູ້ເປັນເຈົ້າ ຫຼື ເປັນນາຍໝູ່ ຖືກຮຽກ ວ່າ "ຂຸນ" ຄືຊັ້ນເຈົ້າຊີວິດ ຫລຸດລົງມາກໍ່ເປັນຊັ້ນ "ໄທ ຫຼື ໄຕ" (ຜູ້ໃຫຍ່-ເຈົ້ານາຍ). ຂຸນ ແລະ ໄທນີ້ຖືວ່າເປັນຊົນຊັ້ນຂອງຜູ້ປົກຄອງ ສ່ວນຜູ້ທີ່ເສັ່ງໄຊ ຄືຜູ້ທີ່ ເປັນກຳລັງໃຫ້ແກ່ຂຸນກັນຮາງນັ້ນ ຖືກຮຽກວ່າເປັນໄພ່ ແລະ ຂ້າ (ຄືຊົນຊັ້ນທີ່ຖືກ ປົກຄອງ ຜູ້ຮັບໃຊ້ຣາຊະສຳນັກ ແລະ ແຜ່ນດິນ).

ດັ່ງນັ້ນ ໜ້າວຽກອັນໜັກໜ່ວງທີ່ຂຸນລໍຈະຕ້ອງດຳເນີນນັ້ນ ແມ່ນສ້າງ ຄວາມປອງດອງກັນພາຍໃນຊາດ ເປັນຕົ້ນແມ່ນລະຫວ່າງເຜົ່າລາວ ພວກທີ່ໄປ ນຳຂຸນລໍ ແລະ ທັນມາຖືວົງຕະກຸນຂອງຂຸນບູລົມເປັນພໍ່ບັນພະຊົນຂອງຕົນ ກັບ ເຜົ່າລາວ ຝ່າຍເໜືອ ແລະ ເຜົ່າຕະກຸນມອນ-ຂະແມ ທີ່ຈົ່ງຮັກພັກດີກັບວົງຕະກຸນ ຂອງຂຸນເຈືອງ ຫຼື ລາວຈົກ.

7. ອານາຈັກເວີນຕານ.

ຄຳວ່າເວີນຕານນັ້ນ ແມ່ນສຳນຽງຈີນ ເຊິ່ງມີໝາຍໄວ້ຕັ້ງແຕ່ກາງຄິດຕະສະຕະວັດທີ VI (ປີ 550) ແລະ ແມ່ນຊື່ດຽວກັນກັບເຈີນລາ ເຊິ່ງເຊື່ອກັນວ່າແມ່ນວຽງຈັນນີ້ເອງ ເຈີນລານັ້ນ ຄົງຈະແມ່ນຄຳຜັນສຽງຂອງຈີນ ມາຈາກ "ຈັນທຣາ" ເຊິ່ງກໍ່ກົງກັນກັບຄຳວ່າ " ວຽງ+ຈັນທຣາ" ນັ້ນເອງ. ມາຮອດຄິດຕະສະຕະວັດທີ VII ອານາຈັກເວີນຕານ ຫຼື ອານາຈັກເຈີນລານັ້ນ ເຊິ່ງຕັ້ງຢູ່ເຂດພາກກາງຂອງລາວ ຕັ້ງແຕ່ແຂວງວຽງຈັນລົງໄປ ໂດຍກວມເອົາຝັ່ງຂວາ ພູພຽງ ໂຄລາດນຳນັ້ນ ໄດ້ຮ່ວມຕົວກັບອານາຈັກ ເຊດຖະບຸຣີ ເຈົ້າເຊດຖະວໍຣະມັນ ໃນຄິດຕະສະຕະວັດທີ VI ເຊັ່ນກັນ ອັນມີສູນກາງຕັ້ງຢູ່ວັດພູຈຳປາສັກນີ້ເອງ.

ອານາຈັກເຈີນລາ ຫຼື ເວີນຕານໄດ້ຕົກຢູ່ພາຍໃຕ້ການປົກຄອງຂອງອານາຈັກກຳພູຊາເດຊາ ໃນຄິດຕະສະຕະວັດທີ X ແລະໃນຄິດສະຕະວັດທີ XI ເຈົ້າໄຊຍະວໍລະມັນ ອົງທີ VI ກໍ່ໄດ້ສ້າງໂຮງໝໍຂຶ້ນທີ່ເມືອງຊາຍຟອງ (ກຳແພງນະຄອນວຽງຈັນ).

ພາກທີ່ IV

ການກຳເນີດ ແລະ ຂະຫຍາຍຕົວຂອງປະເທດລ້ານຊ້າງ.

1. ພຣະເຈົ້າຟ້າງຸ່ມແຫ່ງຫົ້າທໍລະນີ ເປັນຜູ້ເຕົ້າໂຮມແຜ່ນດິນລາວ ສະຖາປະນາປະເທດລ້ານຊ້າງ ແລະ ປະເດີມພຸດທະວັດທະນະທັມ ອັນຮຸ່ງເຮືອງໃນລາວ (ຄ.ສ.1353-1393). ຕຳນານເມືອງຫວ່ງພະບາງ ບອກໃຫ້ຮູ້ວ່າ ພາຍຫັງທີ່ຂຸນລໍ ໄດ້ມາປົກຄອງເມືອງຊ່ຽງທອງ ຫຼື ເມືອງຊວາ ຫຼື ຫຼວງພະບາງທຸກວັນນີ້ ແລ້ວ ມີກະສັດທີ່ໃສ່ນາມະກະສັດ "ຂຸນ" 15 ອົງ ແລະ "ທ້າວ" 6 ອົງ ຈຶ່ງຮອດ ພຣະຍາ ສຸວັນນະຄຳຜົງ ຜູ້ເປັນພໍ່ເຖົ້າຂອງທ້າວຟ້າງຸ່ມ.

ບິດາຂອງທ້າວຟ້າງຸ່ມຊື່ວ່າ ຂຸນຜີຟ້າ ຜູ້ເຊິ່ງຖືກເນລະເທດໄປທີ່ອິນຖະປັດນະຄອນ (ຂະເໝນ) ຍ້ອນປະພຶດຜິດຮີດຫຳນອງ ຄອງຫຳພະຣາຊະວົງຫຼວງ. ທ້າວຟ້າງຸ່ມຜູ້ເປັນບຸດຊາຍ ທີ່ຍັງນ້ອຍຢູ່ນັ້ນ ກໍ່ໄດ້ຕິດຕາມພໍ່ໄປ ພຣະອົງໄດ້ຮັບການລ້ຽງດູ ແລະ ສຶກສອນວິຊາອາຄົມໃຫ້ເປັນຢ່າງດີໂດຍນັກປາດປະຈຳຣາຊະສຳນັກພຣະມະຫາປາສາມັນເຈົ້າ.

ເມື່ອເຖິງອາຍຸ 16 ປີແລ້ວ ພຣະເຈົ້າອິນທະປັດນະຄອນ ເລີຍມອບພຣະທິດາຊື່ ນາງແກ້ວລອດຟ້າໃຫ້ເປັນພຣະມະເຫສີແດ່ພຣະອົງ.

ການແຂ່ງຕົວຂຶ້ນ ຕະຫຼອດການແຜ່ຂະຫຍາຍອິດທິລົດຂອງອະຍຸທະຍາ ຕໍ່ອານາເຂດປະເທດຂະເໝນເຮັດໃຫ້ພຣະເຈົ້າອິນຖະປັດນະຄອນ ຝ່າກຄວາມຫວັ່ງໄວ້ນຳບຸດເຂີຍຂອງຕົນໃນການທີ່ຈະ ຂະຫຍັງ ຝ່າຍກຸງສີອະຍຸດທະຍາ ຈາກທາງດ້ານລາວ ຄື ທາງດ້ານຕາເວັນອອກສ່ຽງເໜືອນັ້ນເອງ. ພຣະອົງໄດ້ປະກອບກຳລັງທະຫານໃຫ້ເຈົ້າງຸ່ມ 10.000 ຄົນ ເພື່ອເລີ່ມບັ້ນພິສິດຫົວເມືອງນ້ອຍໃຫຍ່ຂອງພໍ່ໃຫ້ມາຢູ່ໃນອຳນາດແຫ່ງຕົນ ອັນເປັນການເປີດບັ້ນເຕົ້າໂຮມຄວາມເປັນເອກະພາບ ແລະ ການໂຮມສູນຂອງຊາດລາວ ໃນດິນແດນລ້ານຊ້າງຄັ້ງຍິ່ງໃຫຍ່ແຫ່ງປະຫວັດສາດຂອງຊາດລາວ. ພຣະອົງໄດ້ຍົກກອງທັບຂຶ້ນມາພິຊິດດິນເມືອງຈຳ

ປາສັກ ແລ້ວຂຶ້ນໄປທາງຄຳມ່ວນ ພິຊິດດິນເມືອງພວນ ຫົວພັນ (ທ້າ 5 ທ້າ 6 ແລະ 12 ເຈົ້າໄຕ) ຂຶ້ນພິຊິດ 12 ພັນນາ ແລ້ວລ່ອງລົງມາສູ່ນະຄອນຊຽງຫອງ ຄື ຫຼວງພະບາງປັດຈຸບັນ. ພຣະອົງໄດ້ຍື່ນຄຳຂາດໃຫ້ພໍ່ເຖົ້າຍອມຈຳນົນ ແລະ ມອບເມືອງໃຫ້ພຣະອົງ ແຕ່ພໍ່ເຖົ້າບໍ່ຍອມ ເຈົ້າຟ້າງຸ່ມຈຶ່ງນຳກອງທະຫານເຂົ້າຕີ ແລະ ຊະນະກອງທັບຂອງພໍ່ເຖົ້າທີ່ປາກບິ່ງ ນ້ຳຄານ. ສ່ວນພໍ່ເຖົ້ານັ້ນເມື່ອບໍ່ຊະ ນະຫຼານ ກໍປົງພຣະຊົນຕົນເອງ ແລ້ວເຈົ້າຟ້າງຸ່ມກໍປະກາດເປັນກະສັດປົກຄອງ ຫຼວງພະບາງແຕ່ບັດນັ້ນມາ.

ຈາກນັ້ນອີກບໍ່ພໍ່ທໍ່ໃດ ພຣະເຈົ້າຟ້າງຸ່ມກໍຍົກກອງທັບຂຶ້ນເມືອພິຊິດ ຊຽງ ແສນ ລ້ານນາ ແລ້ວກັບລົງມາຕີເມືອງໄຕ່ໜາມ (ວຽງຈັນ). ພຣະອົງໄດ້ໃຊ້ຍຸດ ທະວິທີຍິງລູກປືນເຮັດດ້ວຍຄຳ ແລະ ເງິນ ເຂົ້າໃສ່ກຳແພງກຳໄຕ່ ທີ່ອ້ອມຮອບ ເມືອງໄຕ່ໜາມທີ່ໜາຕຶບ ເພື່ອໃຫ້ຊາວເມືອງມາທຳລາຍກຳໄຕ່ນັ້ນເອງ ແລ້ວກອງ ທັບເຈົ້າຟ້າງຸ່ມກໍເຂົ້າຢຶດເມືອງໄດ້ສະບາຍ. ເລີ່ມແຕ່ນັ້ນມາ ເມືອງໄຕ່ໜາມ ຈຶ່ງ ຖືກປ່ຽນຊື່ ມາເປັນ ເມືອງວຽງຄຳ ໂດຍພຣະອົງເອງ.

ເມື່ອພຣະອົງໄດ້ພິຊິດຫົວເມືອງລາວນ້ອຍໃຫຍ່ ບິນດິນແດນລາວອັນໄພ ສານ ແລະ ເຕົ້າໂຮມເອົາຫົວເມືອງຕ່າງໆເຫຼົ່ານັ້ນ ຢູ່ພາຍໃຕ້ອຳນາດການປົກ ຄອງຂອງພຣະອົງແລ້ວ ຈາກນັ້ນມາພຣະອົງກໍ່ຈຶ່ງໄດ້ທຳການເຈລະຈາກັບອານາ ຈັກຂອມ ເພື່ອປັກປັນເຂດແດນ ແລະ ສ້າງຄວາມເປັນພີ່ເປັນນ້ອງກັນລະ ຫວ່າງສອງຊາດ. ການແຊ່ງຫົວຂອງອະຍຸດທະຍາ ເບື້ອງຕາເວັນຕົກ ໄດ້ບັງຄັບ ໃຫ້ພຣະເຈົ້າຟ້າງຸ່ມນຳລີພົນ ລົງໄປທາງຮ້ອຍເອັດ ມຸ້ງໜ້າໄປຍັງກຸງສີອະຍຸດທະ ຍາ ແຕ່ກະສັດອະຍຸດທະຍາຂໍຄວາມດິ້ນຳກະສັດລາວ ເພາະຕ່າງກໍ່ມາຈາກເຊື້ອ ຊຸນບູລິມນຳກັນທັ້ງນັ້ນ ໂດຍໄດ້ໃຫ້ການຮັບຮອງເຂດແດນລ້ານຊ້າງ ຕັ້ງແຕ່ດົງ ພະຍາໄຟ ເປັນຕົ້ນມາ.

ພຣະເຈົ້າຟ້າງຸ່ມໄດ້ນຳເອົາຮູບແບບການຈັດຕັ້ງລະບົບລະບອບການປົກ ຄອງຂອງພຣະຣາຊະວົງຕາມແບບຂະເໝນ ບິນດິນແດນລ້ານຊ້າງອັນໄພສານຄື ທາງເໜືອກວມເອົາ 12 ພັນນາລົງໄປຮອດປາກເຊກອງທາງດ້ານຕາເວັນອອກ ແຕ່ໄມ້ລົ້ມແບ່ງ ຫຼື ສັນປັນນ້ຳ ສາຍພູໜວງຈົນຮອດດົງພະຍາໄຟ ທາງທິດຕາ

ເວັນຕິກ. ພຣະອົງຍັງໄດ້ເອົາອາຈານເກົ່າຂອງພຣະອົງຄື ພຣະມະຫາປາສະມັນ ເຈົ້າພ້ອມດ້ວຍພຣະເຖຣະ 5 ອົງ ແລະ ພຣະພິຊຸ 4 ອົງມາແຕ່ຂະເໝນ ພ້ອມ ດ້ວຍໜັງສືກຳພີຂອງພຸດທະສາສະໜາຫິນຍານແລະອົງພຣະບາງມານຳດ້ວຍ. ນອກນັ້ນ ພຣະອົງຍັງໄດ້ນຳເອົາອາຈານນາຍຊ່າງທາງດ້ານສິລະປະ ວັນນະຄະ ດີ ຊ່າງຄວັດຊ່າງປັ້ນ ຊ່າງຫລໍ່ຈຳນວນສຳຄັນມາທີ່ໜອງພະບາງ ອັນເປັນການ ເລີ່ມຍຸກແຫ່ງການພັດທະນາທາງວັດທະນະທຳລ້ານຊ້າງທີ່ຮຸ່ງເຮືອງຕະຫຼອດມາ.

ໃນການອະພິເສກພຣະອົງເປັນພຣະເຈົ້າຟ້າງຸ່ມແຫ່ງຫລ້າທໍລະນີ ແຫ່ງ ຣາຊະອານາຈັກລ້ານຊ້າງ ແລະ ໃນການສະຫຼອງໄຊຍາພິເສກຄັ້ງປະຫວັດສາດ ພາຍຫຼັງທີ່ໄດ້ສຳເລັດການເຕົ້າໂຮມປະເທດຊາດແລ້ວ ພຣະເຈົ້າຟ້າງຸ່ມໄດ້ຊົງຖະ ແຫຼງພຣະດຳລັດ ຕໍ່ມວນປະຊາຣາຊະຂອງພຣະອົງ ເຊິ່ງມາຈາກແມ່ນ້ຳທຸກສາຍ ເຂດແຄວັນທຸກແຫ່ງ ແລ້ວເຕົ້າໂຮມກັນຢູ່ສະໜາມຫລວງ ຕໍ່ໜ້າວັດປ່າສັກນະຄອນ ວຽງຄຳ(ວຽງຈັນ) ວ່າ:

" ພວກເຈົ້າກູທຸກຄົນ ຈົ່ງເປັນຫູບ້ານ ຕາເມືອງປົກປັກຮັກສາ ຄວາມຍຸດ ຕິທັມໃຫ້ມີຢູ່ຄູ່ປະເທດລ້ານຊ້າງຂອງພວກເຮົາ ບໍ່ໃຫ້ມີຜູ້ຮ້າຍອ້າຍຂະໂມຍ ແລະ ພວກທໍລະຍົດຕໍ່ແຜ່ນດິນເລີຍ"

" ພວກເຈົ້າກູຈົ່ງເປັນຫູບ້ານຕາເມືອງດູແລ ເພື່ອໃຫ້ຜູ້ເປັນນາຍປະພຶດ ອັນດີອັນຊອບຕໍ່ໄພ່ຟ້າຂ້າແຜ່ນດິນ ບໍ່ຂ້າບໍ່ຕີເຂົາ ແລະ ອະໂທສັກັມໃຫ້ເຂົາ "

" ຖ້າວ່າຜູ້ເປັນນາຍຜູ້ໃດ ຫຼື ລູກຫລານຂອງຜູ້ເປັນນາຍຜູ້ໃດປະພຶດສິ່ງບໍ່ ຊອບມາພາຄວນ ແລະ ປັບໃໝໃສ່ໂທດໄພ່ຟ້າຂ້າແຜ່ນດິນ ຢ່າງບໍ່ຊອບມາພາ ຄວນແລ້ວ ນາຍຜູ້ນັ້ນຕ້ອງຖືກໄຕ່ສວນວ່າຄວາມ ແລະ ພິຈາລະນາໂທດຕາມ ສະຖານຄວາມຜິດໜັກເບົາຈາກໄອຍະການຜູ້ອື່ນ ເຮັດແນວນີ້ກໍເພື່ອຫຼີກເວັ້ນ ຄວາມອະຍຸດຕິທຳ "

." ຜູ້ທີ່ກະທຳຄວາມຜິດ ຈະຕ້ອງໄດ້ຮັບໂທດໜັກເບົາຕາມສະຖານ ຄວາມຜິດ ແລະຕ້ອງຖືກປ່ອຍໂຕໃຫ້ເປັນອິດສະຫຼະຕາມກຳນົດໝາຍຂອງສານ ເຮັດແນວນີ້ກໍເພື່ອອຳນວຍໃຫ້ພວກເຂົາສາມາດກັບໄປຫາຄອບຄົວຂອງພວກເຂົາ ແລ້ວທຳມາຫາກິນຢ່າງເປັນປົກກະຕິ "

"ພາຍໃນປະເທດຊາດຂອງພວກເຮົານັ້ນ ມີຜູ້ທີ່ຮັ່ງ ແລະ ກໍມີຜູ້ທຸກຢູ່ ຮ່ວມກັນໄປເປັນທຳມະດາ ພວກເຮົາຕ້ອງຍອມຮັບຄວາມຈິງອັນນີ້ ທັ້ງນີ້ກໍເພື່ອຫຼີກ ເວັ້ນທຸກຄວາມພິນາດທັ້ງປວງທີ່ຈະເກີດຕາມມາ"

" ຖ້າວ່າພວກສັດຕູທີ່ຢູ່ນອກເຂດນ້ຳແດນດິນຂອງພວກເຮົາ ກຽມການ ອັນຊົ່ວຮ້າຍຕໍ່ປະເທດຊາດພວກເຮົາ ຫາກຜູ້ໃດຮູ້ຂ່າວນີ້ແລ້ວ ຕ້ອງຮີບແຈ້ງການ ໂລດ ຢ່າໄດ້ຮັກສາສິ່ງທີ່ຮ້າຍແຮງນັ້ນໄວ້ໃນຫົວໃຈເລີຍ "

" ໃນ 12 ເດືອນຂອງແຕ່ລະຂວບປີໃດ ຈົ່ງສົ່ງລາຍງານກ່ຽວກັບສະພາບ ການຂອງແຂວງຂອງພວກເຈົ້າໃຫ້ເຮົາພຣະອົງຊາບ ແລະ ຂວບ 3 ປີໃດ ພວກ ເຈົ້າຈົ່ງສົ່ງບັນນາການເມືອຖວາຍ ເມືອງຊຽງດົງ ຊຽງທອງດ້ວຍ "

ການສະຫລອງໄຊຍາພິເສກນັ້ນ ໄດ້ດຳເນີນໄປ ເຈັດວັນ ເຈັດຄືນ. ເພີ່ນ ໄດ້ຂ້າຊ້າງ 10 ໂຕ ງົວ 1.000 ໂຕ ຄວາຍ 2.000 ໂຕ ເຊິ່ງນັບວ່າເປັນການສະ ຫລອງໄຊທີ່ໃຫຍ່ກວ່າເພື່ນໃນປະຫວັດສາດຂອງໂລກ.

ພຣະເຈົ້າຟ້າງຸ່ມຄອງຣາຊະສົມບັດມາໄດ້ 40 ປີ ທີ່ເມືອງຊຽງດົງ ຊຽງ ທອງ. ພາຍຫຼັງພຣະມະເຫສີຂອງພຣະອົງໄດ້ສິ້ນພຣະຊົນໄປແລ້ວ ພຣະອົງເລີຍ ເກີດຄວາມບໍ່ທຸ່ນທ່ຽງໃນສະຕິ ກາຍເປັນຄົນໂຫດຮ້າຍຕໍ່ເສນາອຳມາດ ແລະ ໄພ່ ຟ້າຂ້າແຜ່ນດິນຂອງພຣະອົງ. ພຣະອົງຖືກເນລະເທດໄປຢູ່ເມືອງນ່ານ (ປັດຈຸບັນ ເປັນຂອງປະເທດໄທຍ) ແລະ ໄດ້ສິ້ນພຣະຊົນນະທີ່ນັ້ນໃນ 5 ປີ ຕໍ່ມາຄືໃນປີ 1398 ດ້ວຍພຣະຊົນອາຍຸໄດ້ 78 ພັນສາ. ພຣະຣາຊະອະທິຂອງພຣະອົງນັ້ນ ພຣະຍາສາມແສນໄທ ບຸດຊາຍຂອງພຣະອົງ ໄດ້ນຳເອົາມາໄວ້ວັດ ແລະ ທາດກູ່ ວ່າວ ໃກ້ກັບນາຫຼວງ ທິດຕາເວັນອອກຂອງນະຄອນຫລວງພະບາງ ພາຍຫລັງທີ່ ພຣະອົງໄດ້ຄອງຣາຊະສົມບັດຈາກພຣະບິດາຂອງພຣະອົງແລ້ວ.

2. ການຂະຫຍາຍຕົວຂອງປະເທດລ້ານຊ້າງ.

ເມື່ອພຣະຍາເຈົ້າຟ້າງຸ່ມ ສິ້ນພຣະຊົນໄປແລ້ວ ທ້າວອຸ່ນເຮືອນ ຜູ້ເປັນຣາຊະໂອຣົດກໍ່ຂຶ້ນຄອງຣາຊະສົມບັດແທນພໍ່. ດ້ວຍພະລະກຳລັງອັນເຂັ້ມແຂງໃນ ຄ.ສ.1373-1416 ພາຍຫລັງຊະນະສົງຄາມຕ້ານກັບກອງທັບຂອງພວກມ່ານທີ່ຕີ ມາທາງດ້ານຕາເວັນຕົກສຽງເໜືອຂອງລ້ານຊ້າງແລ້ວ.

ພຣະອົງໄດ້ຈັດແຈງລະບຽບການປົກຄອງບ້ານເມືອງ ໂດຍຈັດແບ່ງວັນ ນະຈະແຈ້ງໃນສັງຄົມລາວ ເຊັ່ນ:

- ຊັ້ນຂຸນ (ທ້າວ-ພະຍາ)= ກະສັດ-ເຈົ້າຊີວິດ.
- ຊັ້ນໄທ = ຂ້າຣາຊການ ໄທກ້າ-ໄທທານ-ຕຳຫລວດ.
- ຊັ້ນໄພ່ = ສາມັນຊົນ-ພໍ່ຄ້າ ຊາວຂາຍ-ຊາວໄຮ່ ຊາວນາ.
- ຊັ້ນຂ້າ = ຜູ້ຮັບໃຊ້ແຜ່ນດິນ ແລະ ພະຣາຊະວັງ ກໍ່ຄືເຈົ້ານຸນມຸນນາຍ.

ການຈັດແຈງລະບຽບການປົກຄອງບ້ານເມືອງ ແລະ ການຈັດແບ່ງຊັ້ນ ຄົນໃນສັງຄົມຈະແຈ້ງນັ້ນ ຖືເປັນການສຳຫຼວດສະຖິຕິ ພົນລະເມືອງຄັ້ງຍິ່ງໃຫຍ່ ຄັ້ງທຳອິດໂດຍໄດ້ຈຳນວນ ຜູ້ທີ່ຢູ່ໃນຊັ້ນໄທຄືຂ້າຣາຊະການ ທະຫານ ຕຳຫຼວດ 300.000 ຄົນ ແລະ ຢູ່ໃນຊັ້ນໄພ່ ແລະ ຂ້າ 400.000 ຄົນ. ເຫດການນີ້ໄດ້ເຮັດໃຫ້ ພຣະອົງໄດ້ຮັບການຂະໜານນາມມະກຸດໃຫ້ເປັນ "ພຣະຍາສາມແສນໄທ" ຫຼັງ ຈາກນັ້ນແລ້ວ ພຣະອົງໄດ້ສະເດັດໄປອັງເຊີນ ເອົາພຣະບໍຣົມມະອັດຖິຂອງພຣະ ບິດາມາສະຖິດໄວ້ກູ່ວ່າເມືອງຫຼວງພະບາງ ຮຽກວ່າວັດຫາດກູ່ວ່າວ. ຄວາມເຂັ້ມ ແຂງຂອງປະເທດລ້ານຊ້າງເວລານັ້ນ ໄດ້ຮັບການຍອມຮັບ ຈາກເຈົ້າຈັກກະພັດ ຈີນສະໄໝນັ້ນ.

ພຣະເຈົ້າສາມແສນໄທ ໄດ້ສືບຕໍ່ພາລະກັມຂອງຜູ້ເປັນບິດາໃນການບຳ ເພນພຸດທະສາສະໜາໃຫ້ກວ້າງຂວາງ ໂດຍໄດ້ສະຖາປະນາວັດວາອາຮາມ ຂຶ້ນ ຫລາຍແຫ່ງ ຂະຫຍາຍການບວດຮຽນ ຂຽນອ່ານ ການແປ ແລະ ການປະດິດ ແຕ່ງຕົນງານດ້ານສິລະປະກັມ ແລະ ວັນນະກັມ ອັນຍອດຍິ່ງອອກມາເປັນຫລັກ ແລະ ກິດການປະພຶດຂອງຊາວນິກອນລ້ານຊ້າງ ຈົນມີຄວາມຢູ່ເຢັນເປັນສຸກ ຕະ

ໝອດ 40ປີ ແຫ່ງຣັດຊະການຂອງພຣະອົງ. ພຣະອົງໄດ້ສິ້ນພຣະຊົນໄປໃນປີ ຄ.ສ. 1416 ດ້ວຍພຣະຊົນອາຍຸໄດ້ 60 ພັນສາ. ໂດຍໄດ້ຖ່າຍທອດມໍລະດົກອັນ ລ້ຳເລີດຂອງພຣະອົງໄວ້ກັບບຸດຊາຍຂອງພຣະອົງຊື່ ທ້າວ ລ້ານຄຳແດງ ນັ້ນຄື: ປະເທດລ້ານຊ້າງທີ່ມີຄວາມເຂັ້ມແຂງ ແລະ ເປັນທີ່ເກງຂາມແກ່ປະເທດໃກ້ຄຽງ. ພາຍຫຼັງທີ່ພຣະເຈົ້າສາມແສນໄທ ສະຫວັນນະຄົດແລ້ວ ທ້າວລ້ານຄຳແດງ (ຄ.ສ.1416-1428) ກໍ່ຂຶ້ນສະເຫວີຍຣາຊະສົມບັດແທນພຣະບິດາ ເຊິ່ງປົກຄອງ ປະເທດລ້ານຊ້າງມາໄດ້ 12 ປີ ພຣະອົງໄດ້ສືບຕໍ່ພາລະກຳຂອງຜູ້ເປັນບິດາໃນ ການສ້າງສາ ບ້ານເມືອງໃຫ້ມີຄວາມຢູ່ເຢັນເປັນສຸກ.

ໃນຣັດຊະການຂອງພຣະອົງນັ້ນ ມີເຫດການທີ່ບໍ່ດີ ແລະ ອັບອາຍເກີດ ຂຶ້ນແກ່ປະເທດລ້ານຊ້າງຄືໄດ້ເກີດມີຄວາມທໍລະຍົດຂອງແມ່ທັບນາຍກອງທີ່ນຳ ກອງທະຫານສາມໝື່ນຄົນໄປຊ່ອຍພຣະເຈົ້າກຸງຫວຽດນາມຕີຕ້ານກອງທັບຂອງ ຂ້າເສິກ ຕາມຄວາມຂໍຮ້ອງຄວາມຊ່ອຍເຫຼືອຂອງພຣະເຈົ້າກຸງຫວຽດນາມ ອັນ ເຮັດໃຫ້ພຣະເຈົ້າກຸງຫວຽດນາມຂຸ່ນໝອງພຣະໄທ ແລະ ເຮັດໃຫ້ສາຍສຳພັນມິດ ຕະພາບລະຫວ່າງລາວ ແລະ ຫວຽດນາມ ເຊິ່ງແມ່ນພຣະເຈົ້າຟ້າງຸ່ມ ແລະ ພຣະ ເຈົ້າກຸງຫວຽດນາມ ໄດ້ສະຖາປະນາຮ່ວມກັນເວລານານນັ້ນ ຊຸດໂຊມ ຈົນເປັນ ສາຍໃຍສ້າງຄວາມບໍ່ເຂົ້າອົກເຂົ້າໃຈກັນໄປ ເຖິງການຜິດຂ້ອງຕ້ອງຖຽງ ແລະ ລົບເລອກັນບັ້ນໜຶ່ງ ລະຫວ່າງ 2 ຊາດ ມິດສະໜິດກັນໃນຣາຊະການຕໍ່ມາ.

ຈາກນັ້ນມາ ອະນາຖະກັນອັນເສົ້າໝອງອີກບັ້ນໜຶ່ງກໍ່ເກີດຂຶ້ນແກ່ລ້ານ ຊ້າງອີກ ຄືເມື່ອນາງແກ້ວພິມພາ ຂຶ້ນຄອງຣາຊະສົມບັດ (ກະສັດຍິງອົງໜຶ່ງອົງ ດຽວທີ່ຄອງຣາຊະສົມບັດໃນປະຫວັດສາດລ້ານຊ້າງ) ນາງໄດ້ກໍ່ເຫດການອັນ ເປື້ອນເລືອດຂຶ້ນຫຼາຍຄັ້ງຫຼາຍຫົນຕິດຕໍ່ກັນ ຄືການຂ້າຕີສ້ຽງຫານໝູ່. ໃນທີ່ສຸດ ນາງ ແກ້ວພິມພາກໍຖືກລົງໂທດດ້ວຍການທໍລະມານ ແລະ ສ້ຽງຫານຢູ່ທີ່ກ້ອງຜາ ດຽວ ຫີວນຸ່ນ (ບ້ານນຸ່ນ) ດ້ວຍປະຕິບັດການ "ຫີວໝຸນຫີນ ຕີນຈຸ່ມນ້ຳ " (ຫີວ ໝຸນຫີນ ຕີນເລື່ອຍນ້ຳລະ) ເມື່ອອາຍຸໄດ້ 90 ພັນສາ (ຄ.ສ.1438).

ພໍເຖິງສະໄໝພຣະເຈົ້າໄຊຈັກກະພັດເຊິ່ງໃຫ້ຊື່ວ່າ "ເຈົ້າຈັກກະພັດແຜ່ນ ແຜ້ວ" (ຄ.ສ1438-1479) ປະເທດລ້ານຊ້າງໄດ້ປະສົບກັບຄວາມຫາຍຍະນະຫຼາຍ

ຄ້ຳຫຼາຍຫົນ ຄວາມບໍ່ສະຫງົບຂອງປະເທດລ້ານຊ້າງເປັນເວລາ 10 ປີ ແລະ ຈາກຄວາມຂຸ່ນໝອງທີ່ມີມາຕໍ່ກັນລະຫວ່າງສອງປະເທດພີ່ນ້ອງ ລາວ-ຫວຽດ ນາມ ສະໄໝຣາຊະການຂອງທ້າວ ລ້ານຄຳແດງ ອັນເປັນເຫດໃຫ້ມີການຜິດ ຂ້ອງຕ້ອງຖຽງ ແລະ ຮົບເລວກັນ ເຊິ່ງໃນທີ່ສຸດກໍພາໃຫ້ປະສົບຄວາມເສຍຫາຍ ທັງສອງຝ່າຍ. ນອກນັ້ນຍັງພົບຄວາມຫຍຸ້ງຍາກຈາກການທ້ຽງຈັນກຸ່ມການຮັດ ຖະປະຫານນຳດ້ວຍ.

ບ້ານເມືອງເວລານັ້ນ ຕົກຢູ່ໃນສະພາບຫຍຸ້ງຍາກ ບ້ານແຕກແຊກຂາດ ເສດຖະກິດ ແລະ ວັດທະນະທຳຊຸດໂຊມໜັກໜ່ວງພໍປະມານ. ພຣະເຈົ້າໄຊຈັກ ກະພັດແຜ່ນຜ້ຽວສິ້ນພຣະຊົນໄປທີ່ຊຽງຄານ ຂະນະທີ່ອົບພະຍົບລີ້ໄພ ເມື່ອພຣະ ຊົນໄດ້ 64 ພັນສາ. ທ້າວ ແທ່ນຄຳ ຜູ້ເປັນບຸດໄດ້ສ້າງວັດ ແລະ ທາດບັນຈຸອັດຖິ ຂອງພະບິດາໄວ້ທີ່ວັດສິບຊຽງຄານແລ້ວໃຫ້ຊື່ເມືອງນັ້ນວ່າ " ເມືອງຊະນະຄານ "

ທ້າວ ແທ່ນຄຳ ຂຶ້ນສະເຫວີຍຣາຊສົມບັດ ໃນພະຣາຊນາມວ່າ: ພຣະເຈົ້າສຸວັນນະບັນລັງ (ຄ.ສ 1479 -1486) ພຣະອົງໄດ້ຈັດແຈງບ້ານເມືອງທີ່ ຊຸດໂຊມເສຍຫາຍ ຟື້ນຟູທາງດ້ານເສດຖະກິດ ແລະ ປ່ຽນແປງຊີວິດຄວາມເປັນຢູ່ ຂອງປະຊາຣາຊະດອນ ໃຫ້ເຂົ້າສູ່ສະພາບປົກກະຕິ. ຣາຊການຂອງພຣະອົງນັ້ນ ຢູ່ຮອດ 7 ປີ ກໍສະຫວັນນະຄົດ ໂດຍມອບພຣະຣາຊະບັນລັງໃຫ້ແກ່ພຣະເຈົ້າຫຼ້າ ນ້ຳແສນໄທ. ພຣະອົງໄດ້ສືບຕໍ່ປ່ຽນແປງ ແລະ ບຳລຸງຮັກສາປະເທດລ້ານຊ້າງຕໍ່ ຈາກຜູ້ພໍ່. ໃນຣາຊການຂອງພຣະອົງນັ້ນ ພຣະອົງໄດ້ຜູກສຳພັນທະໄມຕີກັບກຸງສີ ອະຍຸດທະຍາ ພ້ອມກັນນັ້ນກໍໄດ້ນຳເອົາພຣະບາງຈາກນະຄອນວຽງຄຳ(ວຽງຈັນ) ມາສະຖິດໄວ້ວັດມະໂນລົມ ໜອງພະບາງ ເຊິ່ງແມ່ນພະອົງເປັນຜູ້ສ້າງເອງ.

ພຣະອົງສະຫວັນນະຄົດ ໃນປີ ຄ.ສ. 1496 ເມື່ອ ອາຍຸໄດ້ 33 ພັນສາ.

3. ยุคความรุ่งเรืองขั้นสูงสุดของประเทดล้านช้าง(ค.ส. 1501-1711)

ในสะตะวัดที่XV มีพระเจ้าแผ่นดินขึ้นถองธาดุสิมบัดที่ประเทดล้านช้าง14 พระองค์ด้วยกัน นับว่าเป็นสะตะวัดแห่งการวางพื้นถาน วัดทะนะทำ สังคิม และ การเมืองให้แก่ความจะเลินรุ่งเรืองของประเทดล้านช้างในสะตะวัดต่อๆ.

สะตะวัดที่ XVI นั้นปะกิดว่า เล่มต้นด้วยพะลังวังชาใหม่ในการพัดทะนาสังๆสาประเทดล้านช้าง ให้พุ่งขึ้นสู่ยอดสูงแห่งความรุ่งเรืองสิวิไลเป็นไลยะเวลาสองสะตะวัด ก่อนจะเถิงกาลิยุก อันหมายเถิงความพินาดในอาละต่อๆมา ของอาจักล้านช้างที่เคียงใหย่มาก่อน.

3.1. พระเจ้าวิซุนละราชาทิปัต (วิซุนละราช) เป็นไอริดอิงที่ 8 คืออิงหล้าสุดของพระเจ้าไชจักกะพัดแผ่นแผ่ว ขึ้นถองราชสิมบัดในปี ค.ส.1501. พระอิงเป็นกะสัดอิงหนึ่งที่มีความปิชาสามาด ปิกถองประเทดล้านช้าง และ ไพ่ฟ้าข้าแผ่นดินของพระอิงให้มีความยู่เย็นเป็นสุก มีความจะเลินรุ่งเรือง พระอิงเป็นผู้สิ่งเสิม ให้มีการสร้างสาวัดวาอารามขึ้นหลายแห่ง สิ่งเสิมให้ราชะดอมของพระอิง ตั้งยู่ในสิม กินในหัม ปุ้มลุมกินกวงกัน.

3.2. พิเสดแม่น พระอิงได้พาปะชาธาช สร้างวัดวิซุนละราช สัทธาธาม เชื่งมีความปานิดพิดชะดามด้วยสีไม้ลายมี ช่างสิละปะ บ่มีสิ่งปวบปาม แล้วได้อังเชิ้นพะบางขึ้นสะถิดไว้ในวิหาร จากนั้นกะได้สร้างหาดพากโม อันรวงแบบของหาดสันจิของอินเดียสำลับบันจุอัดถิของพระพุดทะเจ้าไว้ที่วัดวิซุนนั้นด้วย พระอิงเป็นผู้ทำอิดที่รับรู้วิละกัมขุนเจื้อง เชื่งแม่นหนึ่งในบันพระชินชาดลาวบันดาเผ่า ผู้บุกเบิกมะหาสามักคี ละหว่างเผ่าพายในชาด ด้วยการให้มีการปะพันวันวันมะกำมะหาภาบ ทำอรุ่ง ทำอเจื้องขึ้น. พระอิงเป็นอิงมะหากะสัดที่มองเห้น

ຄວາມອຸດົມຮັ່ງມີ ດ້ວຍສະຕິປັນຍາຂອງວັນນະກຳໃຫຍ່ໆຕ່າງໆລະດັບໂລກ ຈຶ່ງ ໄດ້ມີການສົ່ງເສີມໃຫ້ມີການປະພັນເລື່ອງນາງຕັນໄຕ ອັນຮຽນແບບມາ ຈາກມະ ຫາວັນນະກຳ "ພັນ ແລະ ໜຶ່ງຄືນ" ຂອງອິນເດັ່ງ ແລະ ຜົນງານວັນນະກຳໃຫຍ່ ອື່ນໆດ້ວຍ. ພຣະເຈົ້າວິຊຸນລະຣາຊ ມີຣາຊະບຸດຊາຍອົງໜຶ່ງຮ່ວມກັບພຣະອັກ ຄະມະເທສີ ອັນເປັນຣາຊະທິດາຂອງເຈົ້າແຫ່ງນະຄອນຊຽງໃໝ່ ເຊິ່ງແມ່ນ "ພຣະເຈົ້າໄພທິສາຣາຊາທິບໍດີ" ຜູ້ເປັນນຸງກຸດສືບຣາຊະສົມບັດ ຖັດຈາກພະອົງ ເອງ ພຣະອົງໄດ້ສະຫວັນນະຄົດໄປເມື່ອພະຊົນອາຍຸໄດ້ 53 ພັນສາ ແລະໄດ້ ຄອງຣາຊະສົມບັດເປັນເວລາ 19 ປີ.

3.3. ຣັດຊການຂອງພຣະເຈົ້າໄພທິສາຣາຊ (ຄ.ສ 1520 -1547). ພຣະ ເຈົ້າໄພສາທິຣາຊ ເກີດປີ 1506 ເປັນໂອຣົສຂອງພຣະເຈົ້າ ວິຊຸນລະຣາຊ ກັບຣາ ຊະທິດາຂອງພຣະເຈົ້ານະຄອນຊຽງໃໝ່ ຜູ້ເປັນອັກຄະມະເທສີຂອງພຣະອົງ. ນັບວ່າເປັນພຣະມະຫາກະສັດຜູ້ປີຊາສາມາດອົງໜຶ່ງຂອງປະເທດລ້ານຊ້າງ ຜູ້ ເຊິ່ງນຳມາ ເຊິ່ງຄວາມປ່ຽນແປງຄັ້ງປະຫວັດສາດ ດ້ານສະຖາບັນຄວາມເຊື່ອ ແລະ ການພັດທະນາສັງຄົມໃຫ້ສີວິໄລ ແລະ ຈະເລີນຍິ່ງໆຂຶ້ນ. ໂດຍທີ່ມອງເຫັນ ວ່າສັງຄົມລາວໃນເວລານັ້ນຈົມຢູ່ໃນຄວາມມືດມົນ ແລະ ເມົາມົວນຳຄວາມເຊື່ອ ຖືງມງວາຍເກີນເຫດ ອັນພາໃຫ້ທ່ວງດຶງຄວາມຈະເລີນກ້າວໜ້າ ແລະ ຄວາມສີວິ ໄລຂອງສັງຄົມຢ່າງໜັກໜ່ວງ ພ້ອມກັນນັ້ນພຣະອົງກໍມອງເຫັນວ່າ ພຸດທະປັດ ຊະຍາ ແລະ ພຸດທະຄຳສອນນັ້ນເປັນສິ່ງຍອດຍິ່ງເຮັດໃຫ້ຄົນມີຄວາມສະຫງົບ ທາງຈິດໃຈ ຢູ່ໃນສິນທຳໃນທຳ ມີຄວາມເອື້ອເຟື້ອເຜື່ອແຜ່ທ່ຽງທຳ ແລະ ສຸດຈະ ຫຼິດຕໍ່ກັນລະຫວ່າງມວນຊົນພາຍໃນຊາດ ດັ່ງນັ້ນ ພຣະອົງຈຶ່ງປົງພຣະໄທຕັດສັ່ງ ໃຫ້ທຳລາຍມ້າງ ຫໍຜີບ້ານຜີເມືອງ ຫໍເຈົ້າໜວງ ຫໍຜີເສື້ອ ແລະ ໂສ້ງເມືອງທັ່ງປວງ ລົບລ້າງການຊົ່ງເຈົ້າເຂົ້າຜີທຸກຮູບແບບ ແລ້ວທັນມາສ້າງສາວັດວາອາຮາມແທນ ທີ່. ເມື່ອສ້າງວັດຂຶ້ນທີ່ຫໍຜີຕ່າງໆເຫຼົ່ານັ້ນແລ້ວ ພຣະອົງກໍປະທານນາມໃຫ້ເປັນ ວັດ

"ສຸວັນນະເທວະໂລກ" ພຣະອົງໄດ້ນຳເອົາກຳພີຊາດົກ ທີ່ຂຽນເປັນພາສາທັມປັດ ຈຸບັນ ແລະ ພຣະແຊກຄຳມາຈາກນະຄອນຊຽງໃຫມ່ ອັນເປັນເມືອງພຣະມາດາ

ຂອງພຣະອົງສົ່ງເສີມໃຫ້ມີການບວດຮຽນ ຂຽນອ່ານ ສ້າງສາວັດວາອາຮາມຂຶ້ນ ຢ່າງກວ້າງຂວາງໃນທົ່ວປະເທດ ເຮັດໃຫ້ປວງຊົນລາວບໍ່ວ່າເໜືອ ແລະ ໃຕ້ມີ ຄວາມເປັນເອກະພາບກັນໃນສະຖາບັນຄວາມເຊື່ອ ແລະ ປະເທດລ້ານຊ້າງມີ ຄວາມຢູ່ເປັນສຸກພາຍໃຕ້ຮົ່ມໂພທິສົມພານຂອງພຣະອົງ.

ພຣະອົງໄດ້ເປັນຜູ້ຟື້ນຟູ ແລະ ສົ່ງເສີມສຳພັນທະໄມຕີ ອັນດີຢ່ຽມກັບປະ ເທດຫວຽດນາມ ໂດຍທີ່ໄດ້ໃຫ້ການຊ່ອຍເຫຼືອແກ່ພຣະເຈົ້າງວຽນກ໋ຳ ກຸງຫວຽດ ນາມ ທີ່ມາເພິ່ງປາລະມີນຳລ້ານຊ້າງໃນເວລາອັນຄັບຂັນ.

ພຣະອົງຍັງໄດ້ໃຫ້ການຊ່ອຍເຫຼືອແກ່ພຣະເຈົ້າເອກະຣາຊາແຫ່ງກຸງສີອາ ຍຸດທະຍາ ທີ່ມາຂໍເພິ່ງປາລະມີໃນເວລາທີ່ກຸງສີອາຍຸດທະຍາຕົກຢູ່ໃນສະພາບ ຄັບຂັນ ອັນເປັນເຫດໃຫ້ຝ່າຍມ່ານທີ່ເປັນປໍລະປັກກັບພຣະອົງຍົກທັບເຂົ້າມາປະ ເທດລ້ານຊ້າງຈົນເຖິງເມືອງວຽງຄຸກ ແຕ່ຖືກກອງທັບລ້ານຊ້າງຕີໃຫ້ແຕກຖອຍໄປ.

ພຣະອົງເປັນຜູ້ທຳອິດ ທີ່ໄດ້ມາສ້າງພຣະຣາຊະວັງໄວ້ ທີ່ເມືອງວຽງຄຳ ເປັນແຫ່ງທີ່ສອງທັດຈາກ ຫຼວງພະບາງ ເພາະເຫັນວ່ານະຄອນວຽງຄຳຢູ່ຫ່າງ ຈາກການຮົ່ມຮູ່ຮຸກຮານຈາກກອງທັບມ່ານ ແລ້ວຈຶ່ງໄດ້ຂະໜານນາມໃຫມ່ ໃຫ້ ເມືອງວຽງຄຳເປັນເມືອງວຽງຈັນວຽງຄຳ ອັນນັບວ່າແມ່ນພຣະເຈົ້າໂພທິສາຣາຊ ເອງໄດ້ເປັນຜູ້ປະເດີມຊົງຕັ້ງຊື່ "ວຽງຈັນ" ໃຫ້ແກ່ນະຄອນວຽງຄຳ ຫລື ໄຜ່ໜາມ ຫຼື ເວີນຕານໃນອະດີດ. ມາເຖິງ ຄ.ສ.1546 ເມື່ອນະຄອນຊຽງໃໝ່ ຂາດຜູ້ຄອງ ຣາຊະສົມບັດ ແລະ ດ້ວຍຄວາມທູນຂໍຈາກເສນາອາມ໋າດ ແລະ ໄພ່ຟ້າຂ້າແຜ່ນ ດິນຂອງລ້ານນາ ພຣະເຈົ້າໂພທິສາຣາຊ ຈຶ່ງໄດ້ຕົກລົງສົ່ງພຣະເຈົ້າໄຊຍະເຊດ ຖາທິລາຊ ຜູ້ເປັນບຸດຊາຍ ພ້ອມດ້ວຍພວກສະໜົມກົມມະວ້ຳ ແລະ ລິພົນຂຶ້ນໄປ ຄອງນະຄອນຊຽງໃຫມ່ໃນປີ ຄ.ສ. 1546.

ປະເທດລ້ານຊ້າງສະໄໝພຣະເຈົ້າໂພທິສາຣາຊ ນັ້ນມີອານາເຂດກວ້າງ ຂວາງຈະແຈ້ງກວ່າເກົ່າ ພ້ອມທັງມີຄວາມສະຫງົບສຸກ ແລະ ຄວາມຮຸ່ງເຮືອງຂຶ້ນ ຢ່າງບໍ່ຢຸດຢັ້ງ. ພຣະອົງໄດ້ສິ້ນພຣະຊົນໄປໃນ ຄ.ສ. 1548 ໃນຄະນະທີ່ໄປຄ້ອງ ຊ້າງຖືກຊ້າງຂອງພຣະອົງລົ້ມທັບ. ພຣະອົງມີພະຊົນອາຍຸໄດ້ 46 ພັນສາ ແລະ ໄດ້ຄອງຣາຊະສົມບັດເປັນເວລາ 26 ປີ.

3.4. ຣັດຊຍການຂອ ພຣຍເຈົ້າໄຊຍເຊດຖາທິຣາຊບໍຣິມຈັກກຍພັດ ພູມິນນຣິນທາທິຣາຊ(ຄ.ສ. 1550-1572).

ພຣຍເຈົ້າໄຊຍເສດຖາທິຣາຊ ເປັນພຣຍມຍຫາກຍສັດຂອງລ້ານຊ້າງທີ່ ມີຄວາມລືຊາປາກົດເດັ່ນແຈ້ງໃນໜ້າປຍຫວັດສາດລາວອີງໜຶ່ງ ໃນຖານຍທີ່ເປັນ ຜູ້ມີຄວາມປີຊາສາມາດບໍລິຫານນ ຳພາໄພ່ຟ້າຣາຊຍດອນ ແລຍ ປຍເທດຊາດ ເຂົ້າສູ່ຍຸກແຫ່ງຄວາມຈຍເລີນຮຸ່ງເຮືອງ ມີຄວາມສຸກຮຸ່ມກຸ່ມເຢັນ ມີຄວາມໝັ້ນ ຄົງ ມີຄວາມເຂັ້ມແຂງດ້ວຍພຍລັງອ ຳນາດ ແລຍ ສຍຕິປັນຍາອັນແຫຼມຄົມ.

ພາຍຫຼັງທີ່ພຣຍບິດາ ຜູ້ປົກຄອງລ້ານຊ້າງສິ້ນພຍຊົນໄປແລ້ວ ປຍເທດ ລ້ານຊ້າງຖືກຕັດແບ່ງອອກເປັນສອງຕອນ ໂດຍສອງພີ່ນ້ອງພຣຍຍຸພຣາຊຂອງ ພຣຍເຈົ້າໄຊຍເຊດຖາທິຣາຊ. ເມື່ອຫຼົງເຫັນໄພທີ່ຈຍເກີດຕາມມາຈາກພຶດຕິກ ຳ ດັ່ງກ່າວຕໍ່ບ້ານເມືອງ ເສນາອ ຳມາດຈຶ່ງໄດ້ຮີບຂຶ້ນເມືອທູນພຣຍເຈົ້າໄຊຍເຊດ ຖາທິຣາຊ ທີ່ຄອງເມືອງລ້ານນາໃຫ້ກັບມາທີ່ປຍເທດລ້ານຊ້າງ ເປັນການດ່ວນ ເພື່ອຄອງຣາຊຍບັນລັງ. ຄ.ສ.1556 ເມື່ອຮູ້ຂ່າວວ່າພຣຍເມກຸຕິຍຶດອ ຳນາດໃນ ເມືອງຊຽງໃຫມ່ ແລຍ ໄປຂຶ້ນກັບຫົງສາວຍດີ (ພຍມ້າ) ພຣຍອົງຈຶ່ງໂກດແຄ້ນ ແລຍ ຈຶ່ງໄດ້ຍົກກອງທັບຂຶ້ນເມືອທ້າວຊຽງແສນ ຕີທັບພຣຍເມກຸຕິແຕກທີ່ຫ້າດ ສ້ອຍແລ້ວມຸ່ງໜ້າເຂົ້າຊຽງໃຫມ່ ແຕ່ທັບບຸເຮັ້ງນອງ ແຫ່ງຫົງສາວຍດີເຫັນໄດ້ໂອ ກາດກ ຳເຂົ້າມາຍຶດເມືອງຊຽງໃຫມ່ໄວ້ກ່ອນແລ້ວ. ເພື່ອຈຍຮັກສາ ປຍເທດລ້ານ ຊ້າງທີ່ນັບມື້ນັບຈຍເລີນ ແລຍ ເຂັ້ມແຂງຂຶ້ນໄວໃຫ້ໄດ້ນັ້ນ ພຣຍອົງຈຶ່ງມີຄວາມ ລຍມັດລຍວັງບ່ຍອມຈຍປຍທຍກັບພຍມ້າທີ່ມີ ກ ຳລັງເໜືອກວ່າ ແລຍ ຢູ່ໃນທ່າໄດ້ ປຽບກວ່າ.

ຄ.ສ. 1563 ເມື່ອພຣຍອົງເຫັນວ່ານຍຄອນຫຼວງພຍບາງມີສຍຖານທີ່ຕັ້ງບໍ່ ຄ່ອຍຈຍປອດໄພໃນຖານຍຣາຊຍທານີ ເພາຍຢູ່ໃກ້ຊິດກັບອານາຈັກຫົງສາວຍດີ ບຸເລັ້ງນອງ ທີ່ມີຄວາມເຂັ້ມແຂງດ້ານ ກ ຳລັງທຍທານ ບ່ໜ ຳຍັງມີຄວາມໄຝ່ຝັນ ຂຍຫຍາຍອານາເຂດອິດທິພົນຕໍ່ລ້ານຊ້າງຢູ່ບໍ່ເຊົ່າ ອີກປຍການໜຶ່ງນຍຄອນຫຼວງ ພຍບາງນັ້ນ ຍັງເປັນສຍຖານທີ່ບໍ່ຄ່ອຍຈຍເໝາຍສົມໃນຍຸດທຍສາດການຮີບ ແລຍ ການປ້ອງກັນທີ່ດີ ດັ່ງນັ້ນ ພຣຍອົງຈຶ່ງຕົກລົງປົ່ງພຣຍໄທ ຍ້າຍຣາຊຍທານີ

ຈາກຫຼວງພະບາງມາຕັ້ງຖາວອນຢູ່ວຽງຈັນ ວຽງຄຳ. ທີ່ນະຄອນຫຼວງພະບາງນັ້ນ ພຣະອົງໄດ້ຊົງສ້າງວັດຊຽງທອງ ແລະ ວັດມະຫາທາດ (ວັດທາດ) ໄວ້ເປັນສັກສີ ແກ່ປະຊາຣາຊະດອນ.

ເມື່ອພຣະອົງໄດ້ຊົງມາປະທັບທີ່ນະຄອນວຽງຈັນ (ຈັນທະບູຣີສັສະຕະ ນາຄະນະຫຸດລ້ານຊ້າງຮີ່ມຂາວ) ແລ້ວພຣະອົງ ກໍໄດ້ນຳພາໄພ່ຟ້າປະຊາຣາຊ ຂອງພະອົງທຳການສ້າງບ້ານແປງເມືອງ ສ້າງນະຄອນຫຼວງວຽງຈັນໃຫ້ເປັນສູນ ກາງການເມືອງ ເສດຖະກິດ ແລະ ວັດທະນະທຳສັງຄົມໃຫ້ເຂັ້ມແຂງ ແລະ ຈະ ເລີນຮຸ່ງເຮືອງ.

ພຣະອົງໄດ້ຊົງສ້າງພະທາດຫຼວງ ສ້າງພຣະຣາຊະວັງອັນສວຍສົດງົດ ງາມ ສ້າງກຳແພງປ້ອງກັນອ້ອມຮອບເມືອງວຽງຈັນສາມຊັ້ນດ້ວຍກັນ ເປັນຕົ້ນ ແມ່ນກຳແພງຊັ້ນໃນ ເຊິ່ງພວກເຮົາພໍສາມາດເຫັນຮ່ອງຮອຍໄວ້ເປັນຂວັນຕາ ຂວັນໃຈ ຊາວບ້ານຊາວເມືອງ ແລະ ຊາວຕ່າງປະເທດໄດ້ທີ່ຄຸວຽງວຽງຈັນນັ້ນເອງ.

ພຣະອົງຍັງໄດ້ຊົງສ້າງວັດພຣະແກ້ວ ວັດຫາຍໂສກ ວັດອົງຕື້ ແລະ ວັດ ຕ່າງໆອີກຫລາຍວັດ ບໍ່ວ່າຢູ່ໃນຝັ່ງຊ້າຍກໍຄືຝັ່ງຂວາຂອງແມ່ນ້ຳຂອງ. ຕາມການ ບັນທຶກຂອງນັກເດີນທາງຄົນເຍລະມັນຊື່ກ້ຽງຟຣີ (Kant free) ທີ່ໄດ້ມາພົບເຫັນ ເວລານັ້ນ ນະຄອນວຽງຈັນມີວັດຢູ່ດ້ວຍກັນເຖິງ 122 ວັດ.

ນອກນັ້ນນພຣະອົງຍັງໄດ້ຊົງຫລໍ່ພຣະພຸດທະຮູບສຳຄັນຫລາຍອົງ ເຊັ່ນ: ພຣະອົງຕື້ ພຣະເສີມ (ປັດຈຸບັນຢູ່ວັດປະທຸມວນາຣາມບາງກອກ) ພຣະໃສ (ຢູ່ ວັດໂພໄຊເມືອງໜອງຄາຍ) ພຣະສຸກ (ຖືກຈີນນ້ຳຢູ່ທ່າເວີນສຸກ ເວລາໄທເອົາ ຂ້າມຂອງໄປ ເພື່ອຈະເອົາໄປໄວ້ບາງກອກ ສະໄໝທີ່ພວກເຂົາມາຮຸກຮານ ແລະ ເຜົ່າເມືອງວຽງຈັນ).

ນະຄອນວຽງຈັນສະໄໝນັ້ນ ໄດ້ກາຍເປັນສູນກາງການສຶກສາແຫ່ງໜຶ່ງທີ່ ດີເດັ່ນ ໃນຍ່ານສຸວັນນະພຸມປະເທດ (ແຫຼມອິນໂດຈີນ) ໂດຍປະກອບດ້ວຍ 9 ຍອດທັມ(ວິຊາ) ເຊິ່ງບັນດາປະເທດໃກ້ຄຽງເຊັ່ນກຸງສີອະຍຸທະຍາ ແລະ ຂະເໝນ ກໍໄດ້ສົ່ງສິດຂອງຕົນມາສຶກສາເລົ່າຮຽນ.ໃນຣັດຊະການຂອງພຣະອົງ ພຣະອົງ ໄດ້ສ້າງສຳພັນທະໄມຕີກັບປະເທດເພື່ອນບ້ານເປັນຢ່າງດີ ເປັນຕົ້ນແມ່ນກັບ

ພຣະເຈົ້າກຸງຫວຽດນາມ ພຣະເຈົ້າກຸງສີອຍຸທຍຍາ. ພຣະອົງມີພຣະຣາຊທິດາ ຂອງພຣະເຈົ້າແຫ່ງນະຄອນຊຸງໃໝ່ ເປັນອັກຄະມະເທສີ ມີພຣະຣາຊທິດານະ ຄອນເຂມຣາຊ (ຊຸງຕຸງ) ນະຄອນຊຸງຮຸ່ງ ເມືອງຊິງ ແລະ ຫົວເມືອງທາງໃຕ້ ເປັນເທວີ. ສ່ວນພຣະເຈົ້າກຸງສີອຍຸທຍຍາກໍ່ໄດ້ສິ່ງຣາຊທິດາມາຖວາຍແຕ່ ຖືກກອງທັບບຸເຣັງນອງ (ຫົງສາວະດີ) ມາດັກລັກເອົາໄປ. ໃນເວລາທີ່ກຸງສີອຍຸ ທຍຍາຖືກແຕກແຍກກັນ ແລະ ຖືກພຣະເຈົ້າຫົງສາວະດີບຸງດຢຶດນັ້ນ ພຣະເຈົ້າ ໄຊຍະເສດຖາທິຣາຊ ໄດ້ຍົກກອງທັບໄປຊ່ວຍພຣະເຈົ້າກຸງສີອຍຸທຍຍາຕີເມືອງ ພິດສະນຸໂລກ ເພື່ອຂັບໄລ່ກອງທັບພະມ້າທີ່ມາຢຶດຄອງເມືອງນັ້ນ. ແຕ່ເມື່ອກອງ ທັບເຮືອຂອງກຸງສີອຍຸທຍຍາຖືກຕີຍ່ອຍຍັບ ແລະ ໄດ້ຖອຍທັບກັບຄືນ ພຣະ ເຈົ້າໄຊເສດຖາທິຣາຊ ກໍ່ຈຳເປັນຕ້ອງໄດ້ຖອຍທັບກັບຄືນມາກຸງລ້ານຊ້າງ.

ເວລານັ້ນທີ່ຫົວເມືອງຕ່າງໆທາງພາກເໜືອ ເຊັ່ນ: ຊຸງໃໝ່ ຊຸງແສນ ລຳປາງ ຊຸງຣາຍ ພາກັນແຂງເມືອງ ບໍ່ຍອມຂຶ້ນກັບຫົງສາວະດີ ພຣະເຈົ້າບຸເຣັງ ນອງຈຶ່ງໄດ້ຍົກກອງທັບໄປປາບ. ຄະນະນັ້ນ ເສນາບໍດີນະຄອນຊຸງໃໝ່ສອງອົງ ໄດ້ເອົາຕົວເລັດລອດໜີມາເພິ່ງປະເທດລ້ານຊ້າງ ອັນເປັນເງື່ອນໄຂໃຫ້ກອງທັບ ພຣະເຈົ້າບຸເຣັງນອງແຫ່ງຫົງສາວະດີ ຍົກກອງທັບເຂົ້າມາຕີນະຄອນວຽງຈັນຄັ້ງ ທຳອິດ ໃນປີ ຄ.ສ.1565. ເພື່ອຈະທຳລາຍກອງບຸເຣັງນອງ ພຣະເຈົ້າໄຊເສດຖາ ທິຣາຊ ຈຶ່ງໄດ້ອົບພະຍົບປະຊາຣາຊະດອນອອກຈາກເມືອງແລ້ວດຳເນີນສົງ ຄາມກອງຫລອນ ບັ່ນທ່ອນກຳລັງສັດຕູດ້ວຍທຸກຮູບການ ອັນເຮັດໃຫ້ກຳລັງສັດຕູ ເສັງຫາຍຍ່ອຍຍັບ ຈົນໃນທີ່ສຸດຈຶ່ງໄດ້ຖອຍທັບກັບຄືນ.

ໃນປີ ຄ.ສ.1571 ເມື່ອເຫັນວ່າເຂດບໍ່ຄຳທີ່ອັດຕະປື ເຊກອງ ອັນເປັນ ແໜງທີ່ມາຂອງລາຍຮັບ ທີ່ສຳຄັນຂອງຊາດ ເຊິ່ງປະສົບກັບຄວາມບໍ່ສະຫງົບ ແລະ ຄວາມບໍ່ເປັນລະບຽບຮຽບຮ້ອຍ ພຣະອົງຈຶ່ງໄດ້ນຳກຳລັງໄປຈັດແຈງດ້ວຍ ພຣະອົງເອງ. ພຣະອົງໄດ້ຫາຍສາບສູນໄປຢ່າງບໍ່ມີຮ່ອງຮອຍໃນ ຄ.ສ. 1572 ຍ້ອນຖືກເລ່ກິນ ພຣະຍາເມືອງນະຄອນຜູ້ກະບົດ ທີ່ຍົວະໃຫ້ພຣະອົງໄປຖືກແຮ້ວ ໂດຍຫາວ່າເມືອງອົງການເປັນຂະບົດ ຕ້ອງໄປປາບຂະນະທີ່ພຣະອົງມີພຣະຊົນ ອາຍຸໄດ້ 38 ພັນສາ ແລະ ຄອງຣາຊະສົມບັດ ອານາຈັກລ້ານຊ້າງໄດ້ 23 ພັນສາ.

ຊາວເມືອງວຽງຈັນໄດ້ພາກັນສ້າງອານຸສາວະລີ ທອງສຳລິດເປັນທີ່ສັກ ກາລະໄວ້ໃຫ້ພະອົງທີ່ໜ້າພະທາດຫຼວງວຽງຈັນ ໃນປີ ຄ.ສ.1962.

3.5. ຣັດຊະການພຣະເຈົ້າສຸຣິຍະວົງສາ (ຄ.ສ.1637-1694)

ເມື່ອພຣະເຈົ້າໄຊຍະເສດຖາທິຣາຊສະເດັດສະຫວັນນະຄົດແລ້ວ ປະ ເທດລ້ານຊ້າງກໍ່ຕົກເຂົ້າໃນສະພາວະປັ່ນປ່ວນຫວຸ້ນວາຍ ຖືກແບ່ງແຍກແຕກສາ ມັກຄີ ຍ້ອນການຍາດແຍ່ງອຳນາດ ແລະ ບັນລັງກັນລະຫວ່າງວົງກະສັດ ເມື່ອ ພຣະເຈົ້າກຸງຫົງສາວະດີ ໄດ້ຊາບຂ່າວວ່າ ພຣະເຈົ້າໄຊຍະເສດຖາທິຣາຊ ສະ ຫວັນນະຄົດແລ້ວ ແຖມປະເທດລ້ານຊ້າງພວມຕົກຢູ່ໃນສະພາບແຕກສາມັກຄີ ເປັນເປົ້າລ່ອຍ ກໍ່ເຫັນເປັນໂອກາດອຳນວຍທີ່ຫາຍາກ ຈຶ່ງໄດ້ນຳລິພົນເຂົ້າມາ ໂຈມຕີປະເທດລ້ານຊ້າງອີກເປັນຄັ້ງທີ່ 3. ກອງທັບວຽງຈັນສູ້ກອງທັບຫົງສາວະດີ ບໍ່ແພ້ ຈຶ່ງຍອມໃຫ້ກອງທັບ ມ່ານ ຫົງສາວະດີເຂົ້າຢຶດເມືອງ ແລ້ວຈັບເອົາເຈົ້າໜໍ່ ແກ້ວຣາຊະໂອຣົດຂອງພຣະເຈົ້າໄຊເສດຖາທິຣາຊໄປຫົງສາວະດີ. ປະເທດລ້ານ ຊ້າງໄດ້ຕົກຢູ່ໃນພາວະຄັບຂັນ ທັງຕົກເປັນເມືອງຂ່ອຍໃຫ້ແກ່ຫົງສາວະດີ ແຖມ ຍັງມີການຜິດຂ້ອງຕ້ອງຖຽງຍາດແຍ່ງຣາຊະສົມບັດກັນ. ຈົນມາເຖິງຣາຊະການ ຂອງພຣະເຈົ້າສຸຣິຍະວົງສາ ປະເທດລ້ານຊ້າງຈຶ່ງຄ່ອຍກັບເຂົ້າສູ່ສະພາບປົກກະ ຕິ ແລະ ຈະເລີນຄືນໄດ້.

ພຣະເຈົ້າສຸຣິຍະວົງສາມີຊື່ເດີມວ່າ ເຈົ້າສຸຣິຍະຣາຊະກຸມມານ ປະສູດ ເມື່ອປີ ຄ.ສ.1629 ເປັນຣາຊະໂອຣົດຂອງພຣະເຈົ້າທ່ອນຄຳ.. ພຣະອົງຂຶ້ນສະ ເຫວີຍຣາຊ ເມື່ອອາຍຸໄດ້ 25 ພັນສາ ດ້ວຍພະນາມເຕັມວ່າ "ພຣະເຈົ້າສຸຣິຍະວົງ ສາ ທັມມິກະ ບໍພິຕ ສົມເດັດພຣະເຈົ້າລ້ານຊ້າງຮົ່ມຂາວ"

ເມື່ອພຣະອົງຂຶ້ນຄອງຣາຊະສົມບັດແລ້ວ ພຣະອົງກໍ່ໄດ້ຈັດແຈງບ້ານ ເມືອງໃຫ້ເປັນລະບຽບຮຽບຮ້ອຍ ເຮັດໃຫ້ປວງປະຊາຣາຊະດອນມີຄວາມຢູ່ເຢັນ ເປັນສຸກ ແລະ ປະເທດຊາດມີຄວາມເຂັ້ມແຂງເປັນເວລາຍືນນານເຖິງ 58 ປີ ໂດຍປາສະຈາກເຫດຮ້າຍໃດໆໃນຫົວເມືອງ. ໂດຍສືບຕໍ່ພາລະກັມຂອງພຣະ ເຈົ້າໄຊຍະເສດຖາທິຣາຊ ພຣະອົງໄດ້ມອງເຫັນຄວາມສຳຄັນຍິ່ງໃນດ້ານການ ເມືອງທີ່ມີຄວາມສະຫງົບ ໂດຍໄດ້ຜູກສຳພັນທະໄມຕີກັບປະເທດໃກ້ຄຽງເປັນ

ຕົ້ນແມ່ນທ່ວງດນາມ. ພຣະອົງມີພຣະມະເຫສີເປັນຣາຊະທິດາຂອງພຣະເຈົ້າກຸງ ທ່ວງດນາມ ແລະ ໄດ້ຮ່ວມກັບພຣະເຈົ້າທ່ວງດນາມ ພ້ອມກັນປົກປັນເຂດແດນ ລະຫວ່າງກັນ ໃຫ້ເປັນທີ່ຈະແຈ້ງໂດຍຮັບປະກັນຄວາມເປັນພີ່ນ້ອງ ແລະ ຄວາມສາມັກຄີອັນຍາວນານລະຫວ່າງກັນ. ໃນດ້ານເສດຖະກິດນັ້ນ ພຣະອົງຊົງ ເຫັນຄວາມສຳຄັນຂອງແຫລ່ງລາຍຮັບ ຈຶ່ງໃຫ້ຄວາມເອົາໃຈໃສ່ແກ່ການຂຸດຄົ້ນບໍ່ ຄຳທີ່ເຂດແຂວງເຊກອງ-ອັດຕະປື ພິເສດແມ່ນເຫັນຄວາມສຳຄັນທາງດ້ານການ ຄ້າຜ່ານແດນ ເຮັດໃຫ້ລ້ານຊ້າງເປັນທາງຜ່ານເພື່ອການຄ້າຂາຍລະຫວ່າງປະ ເທດໃນແຫຼມສຸວັນນະພູມປະເທດ. ສຳລັບສິນຄ້າຫັ ກຈາກຣາຊະນາຈັກເປັນຕົ້ນ ແມ່ນຄຳ ຍານ ໄມ້ ສັດລ້ຽງ ແຜ່ນແພ ນ້ຳເຜິ້ງ ນໍແຮດ ແລະ ເຄື່ອງປ່າຂອງດົງທຸກ ຢ່າງ ແມ່ນຣາຊະສຳນັກເປັນຜູ້ກວດຂັນຄຸ້ມຄອງຢ່າງເຂັ້ມງວດ.

ພຣະອົງໄດ້ທອງເຫັນວ່າ ການຄ້າຂາຍກັບຕ່າງປະເທດ ໂດຍຜ່ານປະ ເທດໄທຍນັ້ນ ເຮັດໃຫ້ລາວເສັ ງປຽບເກີນຄວນ ຈຶ່ງໄດ້ສົ່ງຣາຊະທູດໄປນະຄອນ ບາຕາເວັ ງ (ຢາກັກຕາ) ອານານິຄົມປະເທດໂຮນລັ ງ (ອິນໂດເນເຊັ ງປັດຈຸບັນ) ເພື່ອເຊີນທູດເສດຖະກິດການຄ້າໂຮນລັ ງມາຢາມລາວ ແລະ ເພື່ອຜູກສຳພັນ ທາງດ້ານການຄ້າລະຫວ່າງກັນ ອັນເປັນຄວາມພະຍາຍາມຂອງພຣະອົງທີ່ຈະຄ້າ ຂາຍໂດຍກົງກັບປະເທດຕາເວັນຕົກເປັນຄັ ງທຳອິດ ຜູ້ວ່າການອານານິຄົມໂຮນ ລັ ງໄດ້ສົ່ງພານິດຊະທູດ ທ່ານ ວັນວຸດສະຕີຟ ພ້ອມດ້ວຍຄະນະມາເຝົ້າພຣະເຈົ້າ ສຸລິຍະວົ ງສາ ໃນປີ ຄ.ສ.1641 ແຕ່ເປັນໜ້າເສັ ງດາຍວິຈາລະນະຍານອັນແຫຼມ ຄົມຂອງພຣະອົງນັ້ນ ບໍ່ໄດ້ປະສົບຄວາມສຳເລັດໄດ້ເນື່ອງຈາກເຫດຜົນຄວາມ ປ່ຽນແປງຂອງສະພາບການໃນຍ່ານອາຊີອາຄະເນ ແລະ ຄວາມຍຸ້ງຍາກຂອງທີ່ ຕັ ງພູມີສາດ ຂອງປະເທດລາວເປັນຕົ້ນແມ່ນການຄົມມະນາຄົມທາງເຮືອໃນລຳ ແມ່ນ້ຳຂອງ. ໃນຣັດຊະການຂອງພະອົງນັ້ນ ເມືອງວ ງຄຸກ ແລະ ເມືອງນະຄອນ ພະນົມ ເປັນທ່າເຮືອທັ ງເປັນສູນກາງພານິຊະນະຄອນທີ່ພໍ່ຄ້າຈາກທຸກແຫ່ ງມາ ທຳການຄ້າຂາຍກັນ.

ໃນດ້ານວັດທະນະທຳ ແລະ ສັ ງຄົມນັ້ນ ພຣະອົງໄດ້ເປັນຜູ້ສົ່ ງເສີມ ແລະ ທ່ວງແຫນ ສະຖາບັນພຸດທະສາສະໜາ ພຸດທະວັດທະນະທັ ມ ສືບຕໍ່ຈາກພຣະ

ເຈົ້າໄຊເສດຖາ ທິຣາຊ. ພຣະອົງມອງເຫັນວ່າ ພຸດທະປັດຊະຍາ ຕະຫຼອດສິນທຳ ຄຳສອນຂອງພຣະພຸດທະອົງນັ້ນ ເປັນສິ່ງຍອດຍິ່ງ ແລະ ວິເສດ ເພື່ອບຳລຸງສ້າງ ສັງຄົມໃຫ້ມີຄວາມປອດໃສຂາວສະອາດ ມີຄວາມສະຫງົບ ແລະ ມີຄວາມເປັນ ເປີກແຜ່ນອັນໜຶ່ງອັນດຽວກັນຂອງປະເທດຊາດ. ພຣະອົງຫຼົງເຫັນວ່າ ເມື່ອໄພ່ຟ້າ ຣາຊະດອນມີຈິດໃຈບໍລິສຸດພຸດຜ່ອງ ຮູ້ຊົ່ວ ຮູ້ດີ ຮູ້ຕ່ຳ ຮູ້ສູງ ເອື້ອອາລີຕໍ່ກັນ ອະໄທສິກຳແກ່ກັນ ປາສະຈາກກິເລດຕັນຫາ ຄວາມໂລບໂມໂສຫາ ແລະ ອາບາຍ ຍະມຸກ ທັ້ງປວງແລ້ວ ຄວາມສະຫງົບ ແລະ ຄວາມສຸກຂະສຳລານກໍ່ເກີດມີແກ່ ປວງຊົນ ແລະ ປະເທດຊາດທັ້ງປວງດ້ວຍ.

ໃນຣັດຊະການຂອງພຣະອົງໄດ້ມີຄະນະຄຸນພໍ່ ມາເຜີຍແຜ່ສາສະໜາ ກຣິສຕ ຄະນະໜຶ່ງເຊິ່ງນຳໂດຍ ຄຸນພໍ່ເລຣິອາ ໄດ້ມາຕັ້ງຫລັກຢູ່ນະຄອນວຽງຈັນ ເພື່ອຈະສ້າງຮາກປັກຖານຂອງກຣິສຕະຈັກຂຶ້ນທີ່ລາວ ແຕ່ຍ້ອນຮາກຖານອັນ ແໜ້ນໜາຂອງພຣະພຸດທະສາສະໜາທີ່ຢັ່ງເລິກ ແລະ ກວ້າງຂວາງໃນສັດທາ ແລະ ຈິດໃຈຂອງປວງຊົນລາວ ບັນດາເຜົ່າ ດັ່ງນັ້ນ ສາສະໜາດັ່ງກ່າວ ຈຶ່ງບໍ່ສາ ມາດສ້າງຖານທີ່ໝັ້ນໄດ້ໃນລາວເລີຍ ເຊິ່ງກໍ່ນັບວ່າເປັນວິຈາຣະນະຍານອັນລ້ຳ ເລີດ ແລະ ສະຕິຊາດອັນຖ່ອງແທ້ຂອງພຣະອົງ ແລະ ປະຊາຣາຊະດອນລາວເວ ລານັ້ນແທ້.

ພຣະເຈົ້າສຸຣິຍະວົງສາໄດ້ສະຫວັນນະຄົດ ໃນປີ ຄ.ສ.1711 ໂຮມພຣະ ຊົນອາຍຸໄດ້ 83 ພັນສາ ແລະ ຄອງຣາຊະສົມບັດ 58 ພັນສາ ໃນຂະນະທີ່ເຕັກໂນ ໂລຊີ ທັນສະໄໝ ແລະ ວິຊາຄວາມຮູ້ທາງດ້ານວິທະຍາສາດສະໄໝໃໝ່ລ້ຳໄຫລ ມາຈາກປະເທດຕາເວັນຕົກ ໂດຍພວກນັກລ່າອານານິຄົມຕາເວັນຕົກ ແລະ ໃນ ຂະນະທີ່ບັນດາປະເທດຣິມທະເລ ເປັນຕົ້ນແມ່ນປະເທດໄທ ອັນເປັນທາງຜ່ານ ອອກສູ່ທະເລທາງຝັ່ງຂອງລາວໄດ້ປຽບທຸກດ້ານ ເປັນຕົ້ນແມ່ນທາງດ້ານເສດ ຖະກິດ ເນື່ອງຈາກການຄ້າຂາຍທີ່ຂະຫຍາຍຕົວກັບຕາເວັນຕົກ. ປະເທດລາວຜູ້ ບໍ່ມີທາງອອກສູ່ທະເລ ຈຶ່ງຕົກຢູ່ໃນຖານະທີ່ເສັຽປຽບເຊິ່ງໃນທີ່ສຸດ ກໍ່ທລ້າ ແລະ ດ້ອຍໝູ່ທຸກດ້ານ ອັນນັບວ່າເປັນການເລີ່ມຍຸກແຫ່ງການລົ້ງດ້ອຍ ຫລື ຍຸກແຫ່ງ ການສິ້ນສຸດຄວາມຮຸ່ງເຮືອງຂອງປະເທດລ້ານຊ້າງຮິ່ມຂາວທີ່ຂຶ້ນຊື່ລືຊາ. ພ້ອມ

ກັນນັ້ນກໍເປັນການເລີ່ມຍຸກແຫ່ງຄວາມແຂງແຮງຂອງບັນດາປະເທດເພື່ອນບ້ານ
ແຄມທະເລດ້ວຍ.

ພາກ V

ຄວາມຫຼົ້ມຈົມຂອງອານາຈັກລ້ານຊ້າງ (ສະຕະວັດXVIII - XIX)

ພຣະເຈົ້າສຸຣິຍະວົງສານັ້ນມີຣາຊະບຸດອົງໜຶ່ງກັບເອກອັກຄະມະເຫສີ ຂອງພຣະອົງ ແຕ່ຣາຊະບຸດນັ້ນໄດ້ມີການປະພຶດບໍ່ສົມມາພາຄວນຜິດຣາຊະປະເພນີ ຈຶ່ງໄດ້ຮັບໂທດປະຫານເຊິ່ງເປັນອັນວ່າ ພາຍຫຼັງທີ່ພຣະອົງສະຫວັນນະຄົດ ແລ້ວ ຈະຫາຜູ້ສືບບໍ່ແທນແນວກໍ່ບໍ່ມີ.

ເຈົ້າຈັນທະລາຜູ້ເປັນບຸດເຂີຍຂອງພຣະອົງໄດ້ແຍ່ງເອົາຣາຊະສົມບັດມາ ຄອງ ເຮັດໃຫ້ເຈົ້າກິ່ງກິດສະຣາຊ ແລະ ເຈົ້າອິນທະໂສມ ບຸດຊາຍນ້ອງສອງພຣະ ອົງທີ່ເກີດກັບພຣະມະເຫສີເມືອງແສນຫວີນັ້ນບໍ່ພໍໃຈ ຈຶ່ງໄດ້ເອົາຕົວໜີໄປຢູ່ ນະ ຄອນຫຼວງພະບາງ.

ຄະນະນັ້ນພຣະເຈົ້າໄຊອົງເວ້ (ພຣະເຈົ້າອົງຫຼໍ່ ຫຼື ພຣະເຈົ້າໄຊເຊດຖາທິ ຣາຊທີ່ II) ຜູ້ເຊິ່ງເປັນຫຼານຂອງພຣະເຈົ້າສຸຣິຍະວົງສາທີ່ໄດ້ໄປອາໄສຢູ່ນຳພຣະ ເຈົ້ານະຄອນເວັປະເທດອານາມ (ຫວຽດນາມ) ຜູ້ເປັນພັນທະມິດຂອງຕົນ ເມື່ອຮູ້ ຂ່າວວ່າ ເຈົ້ານັນທະຣາຊໄດ້ຍຶດອຳນາດທີ່ນະຄອນວຽງຈັນ ຈຶ່ງໄດ້ຂໍກອງທັບ ຈາກພຣະເຈົ້ານະຄອນເວ້ ມຸ່ງໜ້າມາທາງເມືອງພວນ ແລ້ວລໍຖ້າໂອກາດຈະເຂົ້າ ຕີວຽງຈັນ ແຕ່ເຈົ້ານັນທະຣາຊເສນາ ຜູ້ຄອງເມືອງລະຄອນ (ນະຄອນພະນົມ) ໄດ້ບຸກເຂົ້າຢຶດວຽງຈັນກ່ອນ. ເຈົ້າຈັນທະລາເລີຍອັດຕະຄາຕໂຕເອງສົ້ນພຣະຊົນ ໄປ.

ໂດຍສວຍເອົາໂອກາດທີ່ນະຄອນວຽງຈັນພວມຫວຸ້ນວາຍນັ້ນ ພະເຈົ້າ ໄຊອົງເວ້ ກໍ່ນຳທັບເຂົ້າຢຶດວຽງຈັນ ແລ້ວອະພິເສກພຣະອົງເປັນກະສັດ. ຫຼັງຈາກ ນັ້ນມາພຣະອົງກໍ່ໄດ້ສົ່ງກອງທັບຂຶ້ນໄປປາບຫຼວງພະບາງ ເຈົ້າກິ່ງກິດສະຣາຊ ແລະ ອິນທະໂສມ ຈຶ່ງຕ້ອງໄດ້ພາກັນໂຕນໜີໄປຢູ່ນະຄອນຊຽງຮຸ່ງ ແລ້ວກໍ່ນຳ ເອົາກອງທັບເມືອງຊຽງຮຸ່ງ ເກົ້າພັນຄົນກັບຄືນມາຕີຫຼວງພະບາງ. ທ້າວນອງ ແມ່ ທັບຝ່າຍວຽງຈັນສູ້ບໍ່ໄຫວ ຈຶ່ງໂຕນກັບຄືນມາວຽງຈັນ ພ້ອມທັງນຳເອົາພະບາງ ມາພ້ອມ ປີ ຄ.ສ.1707 ກິ່ງກິດສະຣາຊໄດ້ປະກາດຕົນເປັນກະສັດແຫ່ງອານາ

ຈັກລ້ານຊ້າງຮີ່ມຂາວຫຼວງພະບາງ ອັນເຮັດໃຫ້ອານາຈັກລ້ານຊ້າງຖືກແບ່ງອອກ ເປັນສອງອານາຈັກນ້ອຍ ຄື: ອານາຈັກລ້ານຊ້າງຮີ່ມຂາວ ຫຼວງພະບາງ ກຳນົດ ເອົາປາກນ້ຳມີ ຕໍ່ພົ້ມແດນເມືອງວຽງຈັນຂຶ້ນເມືອ ສ່ວນທາງເບື້ອງນ້ຳຂອງດ້ານ ຕາເວັນຕົກນັ້ນເອົາ ແຕ່ປາກນ້ຳເທືອງຕໍ່ຂຶ້ນໄປເຖິງຜາໄດ ແລະ ສິບສອງພັນນາ, ຝ່າຍຊ້າຍນັ້ນ (ສາກົນວ່າຝ່າຍຂວາ) ພູມແດນຕໍ່ກຸງສີອະຍຸທະຍາກຳນົດເອົາຈຸ້ມ ດູ່ 3 ຕົ້ນ ອົ້ນສາມຂວຍຂຶ້ນໄປ ສ່ວນຝ່າຍຂວາ (ສາກົນວ່າຝ່າຍຊ້າຍ) ພູມແດນຕໍ່ ດິນພຣະເຈົ້າຫວຽດນາມ ກຳນົດເອົາຕົ້ນໝາກສ້ານສາມງ່າ ນ້ຳມ້າສາມຄອນ ເມືອງຫົວພັນທັງ 5 ທັງ 6 ແລະ 12 ເຈົ້າໄທເປັນອານາເຂດ.

ອານາຈັກລ້ານຊ້າງຮີ່ມຂາວວຽງຈັນ ເບື້ອງນ້ຳຂອງຝ່າຍກ້ຳຕາເວັນຕົກ ເອົາປາກນ້ຳເມືອງຊຽງຄານ ກ້ຳນ້ຳຂອງດ້ານຕາເວັນອອກກຳນົດເອົານ້ຳເທືອງ ເມືອງຊຽງຄານ ດ້ານໃຕ້ເອົາແກ້ງລີ່ຜີ ດ້ານຊ້າຍຕໍ່ດິນໄທທີ່ດົງພະຍາໄຟ ເມືອງ ໂຄຣາຊ ຫຼື ນະຄອນຣາຊະສີມາ ຝ່າຍຂວາຕໍ່ແດນຫວຽດນາມ ທີ່ເມືອງຕະໂປນ ຫຼື ເຊໂປນ ເປັນອານາເຂດ.

- ຕໍ່ມາໃນ ຄ.ສ. 1713 ເຈົ້າສ້ອຍສິສະໝຸດກໍ່ໄດ້ປະກາດຕົນເປັນກະສັດ ແຫ່ງອານາຈັກລ້ານຊ້າງຮີ່ມຂາວຈຳປາສັກ ເປັນອັນວ່າປະເທດລ້ານຊ້າງ ຜູ້ມີອາ ນາເຂດອັນກວ້າງຂວາງມີຄວາມຮຸ່ງເຮືອງສີວິໄລ ທັງມີພະລັງອຳນາດອັນເກັ່ງກ້າ ເປັນທີ່ເກງຂາມ ແລະ ເຄົາລົບແກ່ປະເທດເພື່ອນບ້ານນັ້ນ ໄດ້ຖືກແຕກແຍກກັນ ເປັນກົກເຫົ່າ ຫຼື ອານາເຂດນ້ອຍໆ ປ່ລະປັກກັນ ຜິດຂ້ອງຕ້ອງຖຽງ ແລະ ຂ້າຟັນ ຕັ່ນແທງກັນເອງ ຈົນໃນທີ່ສຸດກໍ່ຕ້ອງ ໄດ້ຕົກເປັນເມືອງຂ່ອຍໃຫ້ແກ່ປະເທດໃກ້ ຄຽງ ເຊັ່ນ ສະຫຍາມເປັນຕົ້ນ ທີ່ມີກຳລັງເໜືອກ່ວາ ເຊິ່ງນັບວ່າເປັນບົດຮຽນທີ່ ເຈັບແສບທີ່ສຸດໃນປະຫວັດສາດແຫ່ງຄວາມເປັນຊາດຂອງລາວ. ຍິ່ງໄປກ່ວານັ້ນ ມັນຍັງເປັນສັນຍານໄພບອກເຕືອນອີກວ່າ ຍຸກແຫ່ງຄວາມພິນາດ ຫຼົ້ມຈົມຂອງ ປະເທດລ້ານຊ້າງນັ້ນ ໄດ້ມາຮອດມາເຖິງຢ່າງບໍ່ມີທາງຫຼີກລ່ຽງໄດ້ດ້ວຍ.

1. ພຣະເຈົ້າສີຣິບຸນຍະສານພະຍາຍາມຟື້ນຟູສຳພັນທະໄມຕີກັບກຸງສີອະຍຸທະຍາເພື່ອກອບກູ້ເອົາບ້ານເມືອງອອກຈາກຄວາມອັດຕະຄັດ ຂັດສົນ ຄ.ສ.1774.

ການຍາດແຍ່ງອຳນາດກັນ ຄວາມຜິດຂ້ອງຕ້ອງຖຽງກັນ ແລະ ການຂ້າຟັນຫັ່ນແຫງກັນເອງລະຫວ່າງຄົນລາວດ້ວຍກັນນັ້ນ ພາໃຫ້ປະເທດຊາດຫຼົ້ມຈົມ ແລະ ພົນລະເມືອງລົ້ມຕາຍ ອຳນວຍໂອກາດອັນຫາຍາກໃຫ້ແກ່ປະເທດຄູ່ປໍລະປັກ ຕະຫລອດຮອດປະເທດຜູ້ທີ່ເຄີຍເປັນມິດກັນມາກ່ອນ ທຳການປາບປາມ ແລະ ກືນກິນໂດຍງ່າຍ.

ການຮຸກຮານປາບປາມຢ່າງຫາລຸນທີ່ສຸດ ຈາກສະຫຍາມຄັ້ງຕິດຄັ້ງຕໍ່ກັນ ຕໍ່ປະເທດລ້ານຊ້າງທີ່ແຕກແຍກກັນນັ້ນ ກໍ່ເປັນເຫດການທີ່ປະຈັກ ແລະແນ່ນອນຢ່າງບໍ່ມີຫາງຫລີກໄດ້.

ປະເທດລ້ານຊ້າງວຽງຈັນຂອງເຈົ້າສີຣິບຸນຍະສານ (ເຈົ້າອິ່ງບຸນ ຫລື ສົມເດັດພຣະມະຫາບຸນໄຊຍະເສດຖາທິຣາຊ ທ້າຍ ຄ.ສ. XVIII) ພວມຕົກຢູ່ໃນສະພາບອັດຕະຄັດ ຂັດສົນ ຖືກໜີບດ້ວຍສອງອຳນາດໃຫຍ່ທີ່ເຂັ້ມແຂງກ່ວາເຊັ່ນ ດ້ານໜຶ່ງແມ່ນສະຫຍາມ ແລະ ອີກດ້ານໜຶ່ງແມ່ນພະມ້າ. ດັ່ງນັ້ນ ພຣະອິ່ງຈຶ່ງຫັນມາປັບປຸງສຳພັນທະໄມຕີອັນດີທີ່ເຄີຍມີມາແຕ່ດັ້ງເດີມ ລະຫວ່າງກຸງສີສະຕະນາຄະນະຫຸດ ແລະ ກຸງສີອະຍຸທະຍາ. ເພື່ອເປັນນິມິດໝາຍໃຫ້ແກ່ຄວາມສຳພັນອັນດີດັ່ງກ່າວ ແລະ ການຮ່ວມໄມ້ຮ່ວມມືກັນປົກປ້ອງບ້ານເມືອງ ຝ່າຍເຈົ້າສີຣິບຸນຍະສານໄດ້ຕົກລົງອຸດໜູນ ກຸງທິນບຸຣີ ໃນເວລາຄັບຂັນ ດ້ວຍເຂົ້າ 500 ກອງ ພ້ອມກັນນັ້ນ ກໍ່ຂໍໃຫ້ກຸງທິນບຸຣີ ສົ່ງປືນເພີ້ງ ມາໃຫ້ນະຄອນສີສະຕະນາຄະນະຫຸດ 2 ພັນກະບອກ ເພື່ອເອົາໄປປ້ອງກັນເມືອງ. ແຕ່ພຣະເຈົ້າກຸງສີອະຍຸທະຍາ ກໍບີບໃຫ້ຝ່າຍລາວວຽງຈັນ ເປັນມ້າເສິກຮົບກັນກັບພະມ້າຫລາຍກວ່າ ອັນເຮັດໃຫ້ຝ່າຍວຽງຈັນບໍ່ສາມາດຍິນຍອມປົດບາດນີ້ໄດ້ ດັ່ງຂໍ້ຄວາມໃນສານຈາກພຣະເຈົ້າກຸງສີອະຍຸທະຍາເຊິ່ງມີຂໍ້ຄວາມວ່າ "ຖ້າເຈົ້ານະຄອນສີສັຕນາຄນະຫຸຕ ແລະ ເຈົ້າເສນາ ພິຫາມາຕ ພິໂຣດກຸງອ້ວຍ ຮ່ວມທຸກສຸກຕໍ່ໄປ ຂະເມນ

ເຊັ່ນຂ້າ ພະມ້າ ຈະໄດ້ຣິພິລ ຜູ້ສັນທັດ ປືນຄາບສິລາ 4 ພັນ 5 ພັນຂຶ້ນໄປຝຶກປືນ ຊາວກຸງສີສັຕນາຄທຸຕ ປ້ອງກັນພຣະນະຄອນ "

" ຂໍ້ບັງຄັບ" ຂອງຝ່າຍເຈົ້າກຸງສີອະຍຸທະຍາ ບໍ່ສາມາດຈະເຮັດໃຫ້ຝ່າຍ ກຸງສີສັຕນາຄນະທຸຕ ຕອບສະໜອງໄດ້ ອັນໄດ້ສ້າງເງື່ອນໄຂ ຂໍ້ອ້າງສຳຄັນໃຫ້ ແກ່ການເປີດບັ້ນຮຸກຮານ ແລະ ປຸ້ນສະດົມໂດຍກອງທັບສະຫຍາມ.

2. ເສິກສະຫຍາມຮຸກຮານລາວຄັ້ງທຳອິດ (ຄ.ສ.1777).

ໂດຍສວຍເອົາໂອກາດ ທີ່ພະເຈົ້າ ສິຣິບຸນຍະສານ ແຫ່ງອານາຈັກລາວ ວຽງຈັນ ຍົກທັບໄປຊ່ວຍແກ້ໄຂຄວາມຜິດຂ້ອງຕ້ອງຖຽງກັນຂອງຂຸນນາງ ເມືອງ ນະຄອນຈຳປາສັກ ພຣະເຈົ້າກຸງທົນບຸຣີເຫັນໄດ້ໂອກາດ ກໍ່ຍົກທັບຫລວງເຄື່ອນ ເຂົ້າມາຕີນະຄອນວຽງຈັນ ໂດຍເຂົ້າມາເປັນສອງທາງສົມທົບກັນ. ທາງໜຶ່ງມາ ທາງປະເທດຂະເໝນ ຂຶ້ນມາຕາມລຳແມ່ນ້ຳຂອງ ແລະ ອີກທາງໜຶ່ງມາທາງ ໂຄ ຣາຊ-ຊຸບິນ ແລ້ວສົມທົບກັນປາບຫົວເມືອງນ້ອຍໃຫຍ່ຕ່າງໆ ຕາມລຳນ້ຳຂອງ ມຸ່ງໜ້າຂຶ້ນມາສູ່ວຽງຈັນ.

ບັ້ນລົບສຳຄັນຂອງພວກເຂົາເວລານັ້ນ ແມ່ນຕີບຽດຢຶດ ເມືອງນະຄອນ ພະນົມແລະເມືອງໜອງຄາຍໄວ້ກ່ອນ. ຝ່າຍວຽງຈັນໄດ້ອອກຕໍ່ສູ້ຢ່າງພິລະອາດ ຫານ ແລະ ດຸເດືອດ ເຮັດໃຫ້ທະຫານຂ້າເສິກລົ້ມຕາຍເປັນອັນມາກ ແຕ່ຍ້ອນ ເຫັ້ກໜາຍກວ່າຖ່ານກອງທັບລາວຈຳເປັນຈຶ່ງໄດ້ຖອຍໄປຢູ່ຫົວເມືອງຕ່າງໆ.

ພາຍຫຼັງໄດ້ເມືອງໜອງຄາຍແລ້ວ ພຣະຍາສຸຣະສີ ແມ່ທັບໃຫຍ່ຂອງໄທຍ ກໍ່ໄດ້ດຳເນີນບັ້ນປາບປາມຂອງພວກເຂົາຕໍ່ຫົວເມືອງເລັກນ້ອຍຕ່າງໆເຊັ່ນ ເມືອງ ພະໂຄ ເມືອງວຽງຄຸກ ແລະ ເມືອງພານພ້າວ.

ພວກເຂົາໄດ້ໃຊ້ຍຸດທະການອັນປ່າເຖື່ອນ ເຊັ່ນ ໄດ້ຕັດຫົວຊາວເມືອງ ໜອງຄາຍໃສ່ເຮືອໜາຍເຫັ້ມ ແລ້ວບັງຄັບໃຫ້ແມ່ຍິງລາວ ພາຍຂຶ້ນເມືອຈ່າວຂາຍ ຢູ່ຕໍ່ໜ້າເມືອງພານພ້າວ ເພື່ອນາບຄູ່ຈິດໃຈແມ່ທັບນາຍກອງລາວຝ່າຍວຽງຈັນ.

ຫຼັງຈາກປາບຫົວເມືອງຕ່າງໆ ທາງຝັ່ງຂວາຂອງແມ່ນ້ຳຂອງໄດ້ແລ້ວ

ພວກເຂົາກໍ່ໄດ້ຍົກທັບເຂົ້າມາຕີນະຄອນວຽງຈັນ. ຝ່າຍພະເຈົ້າກຸງສີ ສະຕະນາ ຄະນະຫຸດ ໄດ້ອອກສູ່ຮົບປ້ອງກັນຕົວເມືອງໄວ້ຢ່າງໜຽວແໜ້ນ ໂດຍໃຫ້ເຈົ້ານັນ ທະເສັນ ແລະ ເຈົ້າຣາຊະບຸດນຳທັບຂ້າຝ່ັນສັດຕູຕາຍຈຳນວນຫຼວງຫຼາຍ.
ການຮົບໄດ້ກິນເວລາເຖິງ 4 ເດືອນ ກອງທັບວຽງຈັນຜູ້ມີກຳລັງໜ້ອຍກ່ວາ ຈຶ່ງບໍ່ ສາມາດປົກປ້ອງຕົວເມືອງໄວ້ໄດ້. ພຣະເຈົ້າກຸງສີ ສະຕະນະຄະນະຫຸດ ລ້ານ ຊ້າງວຽງຈັນຈຶ່ງໄດ້ ພາເອົາເຈົ້າອິນ ເຈົ້າພົມ ເຈົ້າຣາຊະບຸດ ແລະ ຂ້າຫຼວງຄົນສຳ ຄັນລົງເຮືອໄປຕັ້ງຖານທີ່ໝັ້ນ ຢູ່ເຂດເມືອງຄຳເກີດ ແລະ ໄດ້ສົ່ງຣາຊະທູດລາວ ໄປຕິດຕໍ່ຂໍຄວາມຊ່ວຍເຫຼືອຈາກພຣະເຈົ້າກຸງຫວຽດນາມ. ສ່ວນເຈົ້າອຸປຣາຊ ເຈົ້ານັນທະເສນ ພ້ອມດ້ວຍວົງສານຸວົງ ແລະ ແມ່ທັບນາຍກອງທັບເຫຼືອນັ້ນ ຍັງ ທຳການຕໍ່ສູ້ຢ່າງພິລະອາດຫານ ຕໍ່ໄປຈົນເລືອດຢາດສຸດທ້າຍ. ເມື່ອກອງທັບສະ ຫຍາມ ສາມາດບຸກເຂົ້າວຽງຈັນໄດ້ແລ້ວ ພວກເຂົາກໍ່ໄດ້ຈັບ ແລະ ກວາດຕ້ອນ ເອົາເຈົ້າອຸປະຣາຊ ເຈົ້ານັນທະເສນ ຣາຊະວົງສານຸວົງ ທ້າວຂຸນມຸນນາຍຂຸນນາງ ຜູ້ໃຫຍ່ ນັກປາດອາຈານ ຊ່າງສິນ ຄຳພີດີກາ ແລະ ສະໜົມກົມມະວົງທັງໝົດ ກັບທັງຊັບສົມບັດ ອັນມະຫາສານ ສາຕາອາວຸດ ປືນໃຫຍ່ນ້ອຍ ພຣະແກ້ວມໍລະ ກົດ ພຣະບາງ ແລະ ພຣະພຸດທະຮູບສັກສິດອົງອື່ນໆຫຼາຍໆອົງລົງໄປຕົ້ນສະ ຫຍາມ.

ໃນປີ ຄ.ສ.1789 ພວກເຂົາຍັງໄດ້ບັງຄັບເກນເອົາຄົນລາວ 10.000 ກ່ວາ ຄົນລົງໄປຂຸດຄອງ "ແສນແສບ" ທີ່ບາງກອກດ້ວຍ. ນະຄອນວຽງຈັນເວລານັ້ນຈຶ່ງ ໝົດສິ້ນກຳລັງວັງຊາ ຕົກຢູ່ພາຍໃຕ້ການຍຶດຄອງຂອງສະຫຍາມ.

3. ເຈົ້າອະນຸວົງ ຫຼື ເຈົ້າອະນຸຣຸດທະຣາຊະບົ້ນຄອງຣາຊ (ຄ.ສ. 1803-1828).

ເຈົ້າອະນຸວົງ ຫຼື ເຈົ້າໄຊຍະເຊດຖາທິຣາຊທີ່ III ເປັນຣາຊະບຸດອົງທີ່ 3 ຂອງພະເຈົ້າ ສິຣິບຸນຍະສານ. ພາຍຫຼັງທີ່ກອງທັບສະຫຍາມ ມາຮຸກຮານລ້ານ

ຊ້າງວຽງຈັນແລ້ວ ທ່ວປະເທດລາວໄດ້ຕົກເປັນຣາຊະອານາເຂດເມືອງຂຶ້ນສະ ຫຍາມ. ພຣະອົງເອງກໍ່ຄືເຈົ້ານັນທະເສັນ ແລະ ເຈົ້າອິນທະວົງຜູ້ເປັນພີ່ທັ້ງສອງ ໄດ້ຖືກພວກສະຫຍາມຈັບກວາດເອົາໄປ ເພື່ອເປັນຕົວປະກັນທາງດ້ານການ ເມືອງ ບັງຄັບໃຫ້ພະເຈົ້າກຸງວຽງຈັນ ອ່ອນຍອມ ແລະ ຈຳນົນ ຢູ່ພາຍໃຕ້ການປົກ ຄອງຂອງສະຫຍາມ. ພຣະອົງທັ້ງສາມໄດ້ຮັບການສັ່ງສອນ ອົບຮົມບົ່ມເພາະ ສັ່ນດານໃຫ້ມີຄວາມນິຍົມສະຫຍາມ ແລະ ຍອມມອບກາຍຖວາຍຕົວເພື່ອຮັບ ໃຊ້ຣາຊະສຳນັກສະຫຍາມ ດ້ວຍຄວາມຈົງຮັກພັກດີ. ດັ່ງນັ້ນພາຍຫັງມາ ຈຶ່ງໄດ້ ຖືກແຕ່ງຕັ້ງໃຫ້ກັບຄືນມາປົກຄອງວຽງຈັນສືບຕ່ໆກັນມາ ຫັງການສິ້ນພຣະຊົນ ຂອງພຣະເຈົ້າ ສິຣິບຸນຍະສານຜູ້ເປັນບິດາ.

ໃນຣັຊການຂອງພຣະອົງນັ້ນ ກໍ່ຄືໃນຣັຊການຂອງພຣະເຈົ້າອິນທະວົງ ຂະນະທີ່ພຣະເຈົ້າ ອະນຸວົງ ຍັງຊົງເປັນອຸປະຣາຊນັ້ນ ພຣະອົງໄດ້ຖືກພວກສະ ຫຍາມໃຊ້ໃຫ້ເປັນມ້າເສິກຮົບກັບພະມ້າ ນອກນັ້ນຍັງຖືກໃຊ້ໃຫ້ປາບການລຸກຮື້ ຂຶ້ນຂອງຣາຊະອານາເຂດໃຫຍ່ນ້ອຍຕ່າງໆຂອງລາວເອງ ຕ້ານກັບສະຫຍາມ ເຊັ່ນ ຊຽງແສນ ຈຳປາສັກ ເມືອງແຖງ ເປັນຕົ້ນ.

ເຫດການຕ່າງໆທັງໝົດນັ້ນ ໄດ້ບົ່ມເພາະຄວາມຂົມຂື່ນ ຄວາມເຈັບຊ້ຳ ໃຫ້ແກ່ພຣະເຈົ້າອະນຸວົງ ກໍ່ໃຫ້ເກີດມຳໃຈຮັກຊາດເຫລືອທີ່ສຸດ.

ໃນຄວາມພະຍາຍາມສ້າງຄວາມເປັນເປີກແຜ່ນຂອງແຜ່ນດິນລ້ານຊ້າງ ເພື່ອກອບກູ້ເອົາຖານະ ແລະ ເອກະຣາຊຄືນມານັ້ນ ພຣະອົງໄດ້ສຳເລັດການ ເຮັດໃຫ້ຝ່າຍສະຫຍາມ ຍອມຮັບແຕ່ງຕັ້ງໃຫ້ເຈົ້າຊຽດໄວ້ງຣາຊະບຸດຂອງພຣະອົງ ໄປປົກຄອງຣາຊະອານາເຂດຈຳປາສັກ ພາຍຫັງທີ່ໄດ້ປາບການລຸກຮື້ຂຶ້ນຕ້ານ ການປົກຄອງຂອງໄທຍ ຢູ່ຣາຊະອານາເຂຕນັ້ນຂອງເຈົ້າຈຳປາສັກສຳເລັດ ອັນ ນັບວ່າເປັນການປາບຄົນໂຕເອງ ແລະ ກໍ່ແມ່ນຄວາມເສັ່ງສະຫລະອັນໃຫຍ່ຫລວງ ເພື່ອສ້າງຄວາມເປັນເປີກແຜ່ນ ລະຫວ່າງວຽງຈັນ ແລະ ຈຳປາສັກດ້ວຍ.

ພຣະອົງໄດ້ສ້າງພຣະຣາຊະວັງຂຶ້ນໃໝ່ທີ່ນະຄອນຫລວງວຽງຈັນ ສ້າງສະ ພານຂ້າມແມ່ນ້ຳຂອງທີ່ບ້ານສີຊຽງໃໝ່ ບູລະນະວັດທາດພະນົມ ສ້າງວັດສີບຸນ ເຮືອງທີ່ເມືອງໜອງຄາຍ ແລະ ສ້າງວັດພຣະແກ້ວຂຶ້ນທີ່ນະຄອນຫລວງວຽງຈັນ

ທັ້ງໆທີ່ພຣະແກ້ວມໍລະກົດຖືກພວກສະຫຍາມຢຶດໄວ້ທີ່ສະຫຍາມ ທັ້ງຫມົດນີ້ ແມ່ນຄວາມພະຍາຍາມຟື້ນຟູຖານະ ແລະ ຄວາມສຳນຶກຂອງຄວາມເປັນລາວ ປັບປຸງ ແລະ ຟື້ນຟູຄວາມເປັນເອກະພາບ ແລະ ຄວາມເປັນເປີກແຜ່ນຂອງຊາດ ຕະຫຼອດຈົນບໍ່ມເພາະ ແລະ ສ້າງສະຕິຄວາມຮັກເຊື້ອແພ່ງຊາດຂອງຊາດລາວ ໃຫ້ກັບຄືນມາ.

ພຣະອົງຍັງເກັ່ງກ່ອມໃຫ້ກະສັດຣາຊະອານາເຂດຫຼວງພະບາງຫັນມາຮ່ວມ ມືກັນ ເພື່ອສ້າງຄວາມເປັນເປີກແຜ່ນເຜົ່ງປ່ຽງດຽວກັນຄືນ ໂດຍຈະຍອມສະຫລະ ຣາຊະບັນລັງໃຫ້ກະສັດຫຼວງພະບາງປົກຄອງ ເມື່ອໃດຫາກພາລະກິດການໂຮມ ປະເທດຊາດສຳເລັດ ແຕ່ຝ່າຍເຈົ້າຫຼວງພະບາງ ເຊິ່ງເກີດມີຄວາມລະແວງຝ່າຍ ວຽງຈັນ ພາຍຫຼັງທີ່ສະຫຍາມໄດ້ໃຊ້ເຈົ້ານັນທະເສນ ຍົກກອງທັບເມືອປາບປາມ ຂະບວນແຂງເມືອງຕ່ໍໄທຍ ທີ່ເຈົ້າຫຼວງພະບາງ ແລະ ເຈົ້າຊຽງຮຸ່ງຮ່ວມກັນກ່ໍຂຶ້ນ ໃນປີ ຄ.ສ.1792 ຈຶ່ງບ່ໍປ່ຽງຈິດປ່ຽງໃຈໃຫ້ຄວາມຮ່ວມມື.

ນ້ຳໃຈຮັກຊາດຂອງເຈົ້າອະນຸວົງນັ້ນ ຂຶ້ນສູ່ລະດັບສູງ ເມື່ອເຫັນທາງຝ່າຍ ສະຫຍາມປະຕິບັດກົນອຸບາຍກືນກິນລາວໃຫ້ເປັນແຜ່ນດິນສະຫຍາມຢ່າງສິ້ນເຊີງ ໂດຍພະຍາຍາມກຳຈັດຄຳວ່າຊາດລາວອອກໄປຈາກຄວາມເປັນຊາດ ແລະ ຄວາມ ເປັນເອກະຣາຊຕະຫຼອດການ. ໃນກົນອຸບາຍຂອງພວກເຂົາເວລານັ້ນ ນອກຈາກຈະ ຢຽບຢ່ຳຄຳວ່າ "ລາວ" ໃຫ້ເປັນຄຳທີ່ຕ່ຳຕ້ອຍນ້ອຍໜ້າ ເປັນຊື່ຂອງຄົນໂງ່ງ່າວຫ້າ ຫ້ັງ ພວກຂ້ຶຂ້າສາລະພັດທຸກແລ້ວ ພວກເຂົາຍັງປະຕິບັດການສັກເລກ ບ້ງຄັບໃຫ້ ຄົນລາວກາຍເປັນຄົນໄທຍ ໂດຍເຊື້ອຊາດ ແລະ ກຽດສັກສີ. ໃນຊຸມປີ 1830-1840 ມີພົນລະເມືອງລາວຖືກກວາດໄປຢູ່ດິນສະຫຍາມ ແລະ ຢູ່ໃນດິນລາວ ສ່ວນທີ່ສະຫຍາມຢຶດຄອງເຖິງ 1.000.000 ຄົນ ຂະນະນັ້ນ ມີຄົນໄທຍສະຫຍາມ 1.900.000 ຄົນ ມີຄົນມອນ ແລະ ລະວ້ າ 50.000 ຄົນ.

ສະເພາະຢູ່ບາງກອກກ່ໍມີຄົນລາວ 25.000 ຄົນ ຄົນຈີນ 200.000 ຄົນ ຄົນໄທຍສະຫຍາມ 120.000 ຄົນ ມອນ 15.000 ຄົນ ມາເລ 15.000 ຄົນ ຫວຽດ ນາມ 12.000 ຄົນ ຂະເໝນ 10.000 ຄົນ ພະມ້ າ 4.000 ຄົນ ຄົນສັນຊາດອ່ືນໆ 3.000 ຄົນ.

4. ພຣະເຈົ້າອະນຸວົງ ຕັດສິນໃຈກອບກູ້ອິດສະຫລະພາບຂອງຊາດລາວ ແລະ ການສິ້ນສຸດຣາຊະອານາຈັກລ້ານຊ້າງ (ຄ.ສ.1826-1828).

4.1. ການດຳເນີນກິນອຸບາຍກືນກິນຊາດ , ກືນກິນແຜ່ນດິນລາວ. ໂດຍເຈົ້າກຸງທິນບູຣີນັ້ນ ແລະ ການຢຽບຢ່ຳທຸບຕີ ທໍລະມານ ຄົນລາວທີ່ຖືກນຳເອົາໄປເປັນທາສ ທີ່ສະຫຍາມນັ້ນ, ໄດ້ສ້າງຄວາມຄຽດແຄ້ນແໜ້ນໃຈເຫລືອທີ່ສຸດ ແກ່ຊາວລາວໃນສະໄໝນັ້ນ ແລະ ກໍ່ເປັນເຫດຜົນອັນຕົ້ນຕໍທີ່ເຈົ້າອະນຸໄດ້ຕັດສິນໃຈນຳກອງທັບໄປກອບກູ້ ແລະ ຟື້ນຟູເຂດນ້ຳແດນດິນຂອງລາວພ້ອມທັງຊ່ອຍຊູເອົາຄອບຄົວທີ່ຖືກກວາດຕ້ອນໄປນັ້ນ, ໃຫ້ກັບຄືນສູ່ຖິ່ນຖານບ້ານເກີດຂອງໃຜມັນ.

ພຣະເຈົ້າອະນຸວົງໄດ້ຫລ່ຽງເຫັນວ່າມັນເຖິງເວລາທີ່ຈະຕ້ອງຕັດສິນໃຈອັນເດັດດ່ຽວໃນໂອກາດນີ້. ເພາະຖ້າປະໄປເທ່ຽງ ເລ່ກິນການກືນກິນຊາດ, ກືນກິນແຜ່ນດິນລາວທາງຝັ່ງຂວາ ດ້ວຍການສັກເລກຂອງ ພວກສະຫຍາມນັ້ນ ຍິ່ງຈະດຳເນີນ ໜັກໜ້າຂຶ້ນໄປ ແລະ ຄວາມທຸກທໍລະມານຂອງປະຊາຊົນລາວ ຍິ່ງຈະຮ້າຍແຮງເປັນທະວີຄູນ. ອີກປະການໜຶ່ງ ພຣະອົງຍັ່ງຊິ່ງເຫັນວ່າ ອັງກິດພວມຈະດຳເນີນສົງຄາມຮຸກຮານລ້ຳຂຶ້ນມາຈາກທາງພາກໃຕ້ ຈົນຮອດບາງກອກ ອັນຈະເຮັດໃຫ້ກອງທັບສະຫຍາມ ປະສົບກັບຄວາມລຳບາກ. ຈົນບໍ່ອາດຈະມີກຳລັງມາເຮັດສົງຄາມປາບທາງເບື້ອງລາວໄດ້, ເຊິ່ງນັບວ່າເປັນໂອກາດທີ່ຫາຍາກ ແລະ ເໝາະສົມທີ່ສຸດທີ່ຈະຟື້ນຟູເອກະຣາຊ ຢັ່ງຢືນເຂດແດນດິນຂອງຜືນແຜ່ນດິນອັນຄົບຖ້ວນລາວ. ແກ້ໄຂການກັບຄືນບ້ານເກີດເມືອງນອນເດີມໃຫ້ແກ່ຄົນລາວທີ່ຖືກກວາດຕ້ອນໃຫ້ອົບພະຍົບໄປເປັນຂ້ອຍຂ້າມ້າຕ່າງໃຫ້ແກ່ສະຫຍາມຕະຫຼອດ ຟື້ນຟູສິດອັນຊອບທຳຂອງລາວ. ໃນເອກະຣາຊຂອງຕົນທີ່ສະຫຍາມປຸ້ນຢຶດເອົາໄປ. ໂດຍທີ່ບໍ່ມີຈຸດປະສົງຢາກຈະລຸກລ້ຳເຂົ້າດິນສະຫຍາມ ຫຼື ປະທະດ້ວຍສົງຄາມກັບກອງທັບສະຫຍາມແຕ່ປະການໃດເລີຍ. ເພາະກໍ່ຮູ້ຢູ່ແລ້ວວ່າການທີ່ຈະເອົາຊະນະກອງທັບທີ່ແຂງແກ່ນຂອງສະຫຍາມ. ເຊິ່ງເຂັ້ມແຂງທາງດ້ານຈຳນວນ

ພິນ ເຂັ້ມແຂງທາງດ້ານສາຕາອາວຸດທີ່ທັນສະໄໝ ແລະ ເຂັ້ມແຂງທາງດ້ານຍຸດທະການ ແຖມຍັງມີການຊ່ອຍໜູນຈາກຕາເວັນຕົກຢູ່ໃນເວລານີ້ນັ້ນເປັນເລື່ອງທີ່ບໍ່ສາມາດເປັນໄປໄດ້.

ມາໃນປີ ຄ.ສ. 1826 ພຣະອົງໄດ້ສົ່ງພະຣາຊະສານເຖິງພຣະເຈົ້າເມືອງຫວງພະບາງໃຫ້ຮ່ວມໃຈ ຮ່ວມກຳລັງກັນກອບກູ້ອິດສະຫລະພາບໂດຍໃຫ້ສັດຈະໄວ້ວ່າ ຖ້າກູ້ອິດສະຫຼະພາບອອກຈາກເງື້ອມມືສະຫຍາມໄດ້ເມື່ອໃດແລ້ວ ຈະຂໍຖວາຍພະຣາຊະບັນລັງໃຫ້ເຈົ້າຫວງພະບາງປົກຄອງ ສ່ວນພຣະອົງເອງຈະຂໍອອກບວດເປັນສັມມະນະເພດ. ຄະນະດຽວກັນນັ້ນພຣະອົງຍັງໄດ້ຂໍໃຫ້ເຈົ້າເມືອງພວນຊຽງຂວາງສົ່ງກອງທະຫານມາຊ່ອຍປ້ອງກັນເມືອງວຽງຈັນທີ່ເປັນແນວຫລັງ ແຕ່ທ້າວສອງກໍ່ບໍ່ໄດ້ໃຫ້ຄວາມຮ່ວມມືເລີຍ.

ນອກນັ້ນພຣະອົງຍັງໄດ້ຂົນຂວາຍຫົວເມືອງຕ່າງໆທາງຝັ່ງຂວາ ແລະ ພູພຽງໂຄຣາຊ ໃຫ້ຮ່ວມແຮງຮ່ວມໃຈກັນກູ້ເອກະລາດໃນບັ້ນນີ້ ເຊັ່ນ: ເມືອງກາລະສິນທ໌ ເມືອງຮ້ອຍເອັດ ເມືອງສຸວັນນະພູມ ເມືອງຊົນນະບົດ ເມືອງຂອນແກ່ນ ເມືອງເຂມະຣາຊ ເມືອງສີສະເກດ ເມືອງເດດອຸດົມ ເມືອງຍະໂສທອນ. ເມື່ອເວລາມາເຖິງແລ້ວພະອົງກໍ່ຕັດສັ່ງໃຫ້ມະຫາອຸປະຣາຊຕິສສະ ບັນຊາທັບໜຶ່ງ ໄປທາງຮ້ອຍເອັດ ໄປສູ່ນະຄອນຣາຊະສີມາ ໃຫ້ເຈົ້າໄຢ ເຈົ້ານະຄອນຈຳປາສັກ ຜູ້ເປັນຣາຊະບຸດພຣະອົງ ນຳທັບໄປສາຍອຸບົນ-ຂອນແກ່ນ ແລະ ໃຫ້ເຈົ້າຣາຊະວົງ ບັນຊາອີກທັບໜຶ່ງລົງທາງຮິ່ມສັກ ແລະ ສຣະບຸຣີ ເພື່ອຮັບເອົາຄອບຄົວຄົນລາວທີ່ຖືກກວາດຕ້ອນໄປ ແລ້ວມາຕັ້ງທັບຢູ່ຮິ່ມສັກ.

4.2. ການກຽມປ້ອງກັນດິນແດນຂອງປະເທດຊາດ ຕ້ານການຮຸກລ້ຳຂອງສະຫຍາມ.

ເມື່ອການຄາດກະວ່າ ອ້ງກິດຈະມາຕີບຽດຢຶດບາງກອກ ບໍ່ເປັນຄວາມຈິງໄດ້ແລ້ວ ທາງດຽວທີ່ຈະເຮັດໄດ້ ກໍ່ຄືຈັດວາງແນວປ້ອງກັນເຂດນ້ຳແດນດິນຕ້ານການຮຸກລ້ຳຂອງກອງທັບຫວງສະຫຍາມ. ໃນການນີ້ ພຣະອົງເຫັນວ່າເມືອງໂຄຣາຊ ນັ້ນ ບໍ່ສາມາດຈະສ້າງໃຫ້ເປັນແນວປ້ອງກັນໄດ້ຢ່າງມີປະສິດທິພາບ ຈຶ່ງ

ໄດ້ປາງພຣະໄທດັ່ງນີ້:

ໃຫ້ມ້າງກຳແພງເມືອງໂຄຣາຊອອກສອງດ້ານ ເພື່ອບ່ໃຫ້ເປັນບ່ອນກັ້ງບັງສຳລັບກອງທະຫານສັດຕູ ເມື່ອເກີດການສູ້ຮົບກັນຂຶ້ນ ແລ້ວປະໃຫ້ທະຫານກອງໜຶ່ງເຝົ້າສະບຽງນະທີ່ນັ້ນ.

ຍ້າຍທະຫານຫຼວງຈາກເມືອງໂຄຣາຊມາໜອງບົວລຳພູ ໃຫ້ພຣະຍານໍຣິນຄຸ້ມຄອງທະຫານ 3.000 ຄົນ ປະຈຳຄ້າຍນະທີ່ນັ້ນ ໃຫ້ພຣະຍາສຸໂພ ແລະ ພຣະຍາຊານິນ ບັນຊາທະຫານ ຕັ້ງໝັ້ນຢູ່ຮ່ອມພູເຂົ້າສານ ບ່ອນທາງແຍກໄປສູ່ນະຄອນຫຼວງວຽງຈັນ ສ່ວນພະອົງໄດ້ຕັ້ງປ້ອມບັນຊາການຢູ່ຈອມພູເຂົ້າສານ ໃຫ້ພະຍາຊຽງສາຄຸມແມ່ທັບ 5.000 ຄົນ ໄປຕັ້ງໝັ້ນຢູ່ບ້ານສະໜົມ. ໃຫ້ພຣະຍາກອງຄຳຄຸມທັບ 4.000 ຄົນ ໄປຕັ້ງຄ້າຍສູ້ຮົບຢູ່ຂ່ອງງິວແຕກ. ໃຫ້ເຈົ້າອຸປະຣາຊຍົກກອງທັບຈາກເມືອງຍະໄສທອນ ມາຕັ້ງຢູ່ຕົ້ນທາງເມືອງສຸວັນນພູມ. ໃຫ້ພຣະຍາສຸຂະຄຸມທັບຊ້າງ ແລະ ຄວາຍງິວ ຕ່າງລຳລຽງສຳພາລະ ສະບຽງ ແລະ ລູກປືນໃຫ້ທຸກໆທັບ... ສ່ວນເຈົ້າຣາຊະວົງນັ້ນ ໃຫ້ຕັ້ງໝັ້ນຢູ່ເມືອງຮົ່ມສັກ. ເມື່ອທຸກຢ່າງຮຽບຮ້ອຍແລ້ວ ພຣະອົງຈຶ່ງໄດ້ສັ່ງໃຫ້ຈັດທັບ 4.000 ຄົນ ໄປຮັບເອົາທັບສຸດທ້າຍທີ່ຍັງເຫຼືອໄວ້ທີ່ໂຄຣາຊ ມາຕັ້ງໝັ້ນຢູ່ບ້ານທົ່ງລຳພີ້ໃກ້ໆ ກັບໜອງບົວລຳພູ ລວມທະຫານໄດ້ 10.000 ກ່ວາຄົນ.

4.3. ການກຽມການຮຸກລົບຂອງຝ່າຍສະຫຍາມ.

ພໍຮູ້ຂ່າວວ່າກອງທັບຝ່າຍວຽງຈັນໄດ້ມາອົບພະຍົບເອົາຊາວລາວ ທີ່ຖືກກວາດຕ້ອນມານັ້ນ ຄືນບ້ານເກີດເມືອງນອນຂອງເຂົາ ພ້ອມທັ້ງຕັ້ງໝັ້ນແຂງຕົວປ້ອງກັນເອົາເຂດນ້ຳແດນດິນຂອງຕົນເອງໄວ້ ໂດຍບ່ຂຶ້ນກັບສະຫຍາມ ເຊິ່ງຄ້ອມພໍປະຈົບຈວບກັບສະພາວະທີ່ປະເທດສະຫຍາມ ບ່ໄດ້ຖືກອັ້ງກິດ ໂຈມຕີ ດັ່ງທີ່ເປັນຂ່າວນັ້ນ ເຈົ້າກຸງສະຫຍາມໄດ້ຈັດເກັບເກນເອົາທະຫານຈາກຫົວເມືອງທາງຝ່າຍໃຕ້ ແລະ ຝ່າຍເໜືອປະກອບເປັນກອງທັບມະຫຶມາ. ນອກນັ້ນຍັງມີກອງພິເສດຂອງມອນ ແລະ ສະເລັຍພະມ້າ ເຂົ້າຮ່ວມຮົບນຳ. ມີຊ່ຽວຊານການທະຫານ ແລະ ກອງພິເສດ ຍຸຮົບເຂົ້າຊ່ວຍວາງຍຸດທະສາດ ແລະ ເຂົ້າຮ່ວມຍຸດ

ທະການຮົບໂດຍກົງດ້ວຍ.

ພວກເຂົາໄດ້ຈັດວາງແນວການປ້ອງການເມືອງໜອງໄວ້ຫຼາຍໆຈຸດດ້ວຍກັນ ແລະ ໃຫ້ທະຫານຝ່າຍໃຕ້ 10.000 ຄົນເຂົ້າປ້ອງກັນເມືອງບາງກອກ.

ໃຫ້ພຣະຍາໄພຟູທອນ ຄຸມທັບ 56.000 ຄົນ ເປັນທັບລຳລຽງ ແລະ ກອງໜູນ. ໃຫ້ພຣະຍາກົມຣາຊະວ້ຽງບໍ່ວອນ ເປັນແມ່ທັບຄຸມທັບໃຫຍ່ ທີ່ໜຶ່ງ 10.000 ຄົນເຂົ້າຕີວຽງຈັນ ໂດຍຈະສົມທົບກັບທັບໃຫຍ່ທີ່ສອງ ເຊິ່ງມີຈຳນວນພົນ 10.000 ຄົນ ບັນຊາໂດຍ ພຣະຍາສຸພາວະດີ ທີ່ມຸ່ງໜ້າໄປທາງຕາເວັນອອກ ເພື່ອເຂົ້າຕີຢຶດເມືອງຈຳປາສັກໃຫ້ໄດ້ກ່ອນແລ້ວຈຶ່ງຂຶ້ນເໜືອຕາມແມ່ນ້ຳຂອງ ເພື່ອຈະໄປຈອບກັນກັບທັບຂອງພະຍາບໍ່ອນໃນບັ້ນຮົບບຸງຢຶດນະຄອນວຽງຈັນ.

4.4. ວິລະກັມໃນຍຸດທະການ ປ້ອງກັນຕົນຂອງຝ່າຍລາວ ແລະ ພຶດທິກັມຮຸກຮານ ອັນປ່າເຖື່ອນຂອງສະຫຍາມ.

ເມື່ອສັງເກດເບິ່ງການຊັ້ງຊາກຳລັງກັນແລ້ວ ພວກເຮົາຈະເຫັນວ່າ ທາງຝ່າຍລາວ ເສັຍປຽບໝົດທຸກດ້ານ ເຊັ່ນ:

- ປະເທດຊາດຖືກແຕກແຍກບໍ່ເອກະພາບກັນ ແຖມທາງຫົວເມືອງຝ່າຍເໜືອ ຍັງພະຍາຍາມໃຫ້ຄວາມຮ່ວມມືແກ່ຝ່າຍສັດຕູກໍ່ມີເພື່ອປາບພວກດຽວກັນ ອັນເຮັດໃຫ້ກຳລັງອ່ອນນ້ອຍຢູ່ແລ້ວ ຍິ່ງອ່ອນແອລົງ.

- ເນື່ອງຈາກວ່າຕົກເປັນເມືອງຂ່ອຍໃຫ້ແກ່ສະຫຍາມ ຈຶ່ງບໍ່ສາມາດຕັ້ງຕິວໄດ້ ແລະ ຕັ້ງຕິວພໍເພື່ອປັບປຸງ ແລະ ສ້າງກຳລັງໃຫ້ແຂງແກ່ນ.

- ກຳລັງຕົວຈິງໜ້ອຍກ່ວາ ຝ່າຍສະຫຍາມຕັ້ງຫຼາຍເທົ່າ ແຖມຍັງປະກອບອາວຸດບໍ່ພຽງພໍ ແລະ ບໍ່ທັນສະໄໝຫລຸດຝ່າຍສະຫຍາມຕັ້ງຫຼາຍເທົ່າ.

- ການເຝິກແອບຍຸດທະການ ໃນການຮົບໃນໝູ່ທະຫ້າທະຫານບໍ່ພຽງພໍ. ສິ່ງທີ່ໜ້າສັນລະເສີນເທີດທູນນັ້ນ ແມ່ນນາມະຈິດເດັດດ່ຽວມຳໃນຮັກຊາດແພ່ງເຊື້ອ ແລະ ເສັຍສະຫຼະ ຢ່າງສູງສົ່ງຂອງກະສັດລາວ ຂອງທະຫ້າທະຫານ ແລະ ປວງຊົນລາວຢ່າງບໍ່ຍອມຈຳນົນຈົນເລືອດຢອດສຸດທ້າຍ.

ເມື່ອຕົກຢູ່ໃນທ່າດ້ອຍກ່ວາສັດຕູ ຫຼາຍເທົ່າທາງດ້ານກຳລັງດັ່ງກ່າວນັ້ນ

ແລ້ວ ທາງຝ່າຍລາວກໍ່ບໍ່ສາມາດຈະມີຄວາມຮອບຄອບໃນການວາງຍຸດທະສາດ ປ້ອງກັນທີ່ໄດ້ຕົນໄດ້ ເຊັ່ນຕາມທຳມະຊາດແລ້ວ ການວາງແນວປ້ອງກັນຕ້ອງໄປ ຄຽງຄູ່ກັບການວາງຍຸດທະການບຸກຕີ ທຳລາຍ ແລະ ບັ້ນທ່ອນກຳລັງດິບຂອງສັດ ຕູ ທຳລາຍແນວຫຼັງ ແລະ ຄ້ຽງແສງຂອງສັດຕູ ຫຼືວາງຍຸດທະການຮົບແບບສົງຄາມ ປະຊາຊົນຕີສັດຕູ ດັ່ງນີ້ເປັນຕົ້ນ. ການຂາດຄວາມຮອບຄອບດັ່ງກ່າວນັ້ນເອງ ຜາ ໃຫ້ຝ່າຍລາວຄຶດຫາແຕ່ການປ້ອງກັນ ເພື່ອຮັບມືກັບການບຸກຕີຂອງຂ້າເສິກທໍ່ນັ້ນ ໂດຍປະໄອກາດໃຫ້ສັດຕູສາມາດດຳເນີນການເຄື່ອນໄຫວທ້ຽງທາດ່າແຕ່ງ ສ້າງ ກຳລັງໄດ້ຕາມໃຈໃນເນື້ອທີ່ແນວຫຼັງອັນກວ້າງຂວາງຂອງພວກເຂົາ. ຍິ່ງໄປກ່ວາ ນັ້ນຍັງປະໃຫ້ພວກເຂົາສາມາດດຳເນີນສົງຄາມກອງຫຼອນປິດລັບຫຼອນຕີ ແລະ ບັ້ນທ່ອນກຳລັງຂອງຝ່າຍລາວເຮົາໄດ້ນຳດ້ວຍ.

ການທີ່ຕິກຢູ່ທ່າຮັບ ແລະ ຕັ້ງທ່າຮັບແຕ່ຢ່າງດຽວນີ້ເອງເປັນຄວາມຜິດພາດ ອັນໃຫຍ່ຫຼວງໃນຍຸດທະສາດການທະຫານ ເປັນສາເຫດອັນຕົ້ນຕໍຂອງຄວາມເສຍ ໄຊໃຫ້ແກ່ສັດຕູໃນວິຣະກັມກູ້ຊາດຂອງພຣະເຈົ້າອະນຸວົງ.

ແມ່ທັບໃຫຍ່ທີ່ສອງຂອງໄທຍ ເຊິ່ງບັນຊາໂດຍ ພຣະຍາສຸພາວະດີ ໄດ້ ເດີນທັບມຸ່ງໜ້າມາທາງເມືອງ ໄຊຍະພູມ ແລະ ຖືກຕີຕ້ານດ້ວຍກອງທັບຂອງ ເຈົ້າໄຖງຢູ່ທີ່ພີມາຍ. ເມື່ອສູ້ທັບພຣະຍາສຸພາວະດີບໍ່ໄດ້ ຍ້ອນກຳລັງນ້ອຍ ຈຶ່ງ ຖອຍທັບມາຕັ້ງຢູ່ເມືອງອຸບົນ ຂະນະທັບພຣະຍາສຸພາວະດີ ໄດ້ຂຶ້ນມາທາງຂອນ ແກ່ນ. ເຈົ້າອຸປະຣາຊທີ່ຕັ້ງຮັບຢູ່ເມືອງຍະໂສທອນ ຮູ້ວ່າແມ່ທັບຂອງ ພຣະຍາສຸ ພາວະດີມີກຳລັງເໜືອກ່ວາຫຼາຍເທົ່າ ຈຶ່ງຍົກຍ້າຍກຳລັງຫຼວງໄປຕັ້ງທັບຢູ່ທີ່ໜອງ ຫານ ປະໄວ້ແຕ່ກຳລັງປ້ອງກັນຕົວເມືອງທໍ່ນັ້ນ. ພຣະຍາສຸພາວະດີໄດ້ຍົກທັບ ເຂົ້າຕີເມືອງຍະໂສທອນເປັນເວລາສອງມື້ກໍ່ເອົາໄຕເມືອງໄດ້ ແລ້ວກໍ່ຈັບເອົາ ຄອບຄົວຍາດຕິພີ່ນ້ອງຂອງເຈົ້າເມືອງຍະໂສທອນ ຕະຫຼອດປະຊາຊົນສາມັນຜູ້ ຮັກຊາດ 160 ຄົນ ມັດກອງກັນ ເອົາເຟືອງຖົມປົກ ແລ້ວເອົາໄຟຈູດທັ້ງເປັນ.

ຝ່າຍທັບໄທຍທີ່ໜຶ່ງຂອງພຣະຍາບໍ່ອນ ເຊິ່ງໄດ້ມາຕັ້ງໝັ້ນຢູ່ເມືອງໂຄ ຣາຊ ກໍ່ໄດ້ຍົກທັບເຊິ່ງມີຈຳນວນພົນເຖິງ ໝື່ນຄົນ ໃນນັ້ນມີກອງທະຫານພິເສດ ພວກມອນ ກອງທະຫານສະເລີຍພະມ້າ ກອງພິເສດຂອງຕ່າງຊາດປະກອບອາ

ฉุดทันสมไหม เข้าตีค่ายพมยามมธิน เซึ่งมีทมหามอยู่ 3.000 คิน ที่หมอๆ บิอลำพู ในเดือม 6 ปี ค.ส.1827. ทับลาวได้ทำการต้ามหามจินสุด ถวามสามาด จินได้ข้าแม่ทับนายกองชั้นผู้ใหย่ของไทยตายหายคิน เช่น: พรมยากฎ หวางพักดินุรัก หวางพิพิดสิมบัด หวางลาพิทัก สมเฒ่า ปาบอ้างอม สมเฒ่าธาฉมเทอม สมเฒ่ามมลาจอมสำรม เป้นต้น. ส่วมพิน ทมหามนั้น ถึกทับลาวถับสูมมากมาย แต่ก่เนื่องจากเหักเหือถ่าม ฝ่าย ทมหามลาวจึ่งหมิดกำลัง ทั่งหมิดลูกปืน ในที่สุด พายหลังที่สู้รบต้ามหาม มาได้ 3 มื้ 3 คืน ทับไทยจึ่งยึดค้ายได้ แลม จับพรมยามมธินได้. พวก ข้าเสิกไทยจำให้พรมยามมธินยอมน้อมเข้าข้างฝ่ายเขา แล้วพวกเขา จมไว้ชีวิด แต่พรมยามมธินก็ตอบไปว่า: "ได้ว่าชายชาดทมหามเลือด นักสู้แล้ว เมื่อเสียไช กำมีแต่ตายห่นั้น" พรมยามมธิน ยอมตายดีกว่า หมอบหัวยอมเป้นข้อยข้ามาใช้ให้แก่สัดตู อันนับว่าเป้นแบบย่างแห่งวี รมกัมอันล้ำเลิดของบันพมชินลาวพรมอิงหนึ่ง. เมื่อบ่สามาดน้อมน้าว ให้ พรมยา มมธิน อ่อมยอมได้แล้ว พรมยาบ่วอม กำไสช้างเข้าแหงใจ ขาดตายย่างเลือดนักรบวิลมชินลาว. ชาวลาวบ่เคียลืมเลือมวิรมกัม ของพรมยา มมธิน พรมอิงนี้จักเหื่อเลีย. ที่เมืองรึ่มสัก 3 ทับของไทยที่ มีจำนวมพิน 10.000 คิน ก่ได้เข้าตีกองทับเจ้าธาชมวิง. เจ้าธาชมวิงได้ ทำการต่สู้ย่างอาดหาม แต่เมื่อเห็นว่ากำลังของฝ่ายไทยเหือก่วา จึ่ง ได้ถอยทับมาตั้งพั้นอยู่ช่องพูเข้าสามโดยสิมหิบกับทับหวอง. เจ้าเมือง รึ่มสัก พ้อมด้วยไพ่พินได้ออกตามสมเด้ดมาร่วมกันในการต่สู้ตาวนี้ ด้วย.

ส่วมพรมยาบ่วอม เมื่อตีค้ายที่หมองบิอลำพูแตกแล้ว ก่ยึกลิพิน เป้น 5 ทับ เข้ามากุมตีทับลาวที่ที่วางสิ้มปล่อย. ทางฝ่ายทับลาวบันชา โดย พรมยาชุยวา แลม เจ้าบ่คำ ที่ค้ายสิ้มปล่อย ได้มมจายกำลังออก เป้น 5 ทับเพื่อออกตีกองทับไทยโดย ให้พรมยากองแก้ว แลม พรมยา กองคำ คุมทมหามคินลม 4.000 ออกตีค้ายไทย ให้พรมยาแสมหาม

ແລະ ພຣະຍານ່ານມືເຫຼັກ ຄຸມທະຫານຄົນລະ 4.000 ໄປພິກຊຸ່ມສະກັດເສັ້ນ ທາງ ໃຫ້ພຣະຍາເສືອຫານ ຄຸມ 2.000 ຄົນ ໄປພິກໜອງນ້ຳທຸກໜອງ ໃຫ້ທ້າວ ມະຫາວິງກັບ ທ້າວພິມພັກ ຄຸມພົນ 1.000 ຄົນ ໄປລ່າວຕົ້ນໄມ້ການທາງ ພ້ອມ ທັ້ງເບື່ອຫ້ວຍໜອງຄອງບຶງ ແລະ ຂົນສາກສັດຕາຍຖິ້ມໃສ່ໜອງນ້ຳ ໃຫ້ພຣະຍາ ໄຊສົງຄາມກັບພຣະຍາເພັດສຸວັນ ແລະ ທ້າວຫີມຄຸມພົນ 2.000 ຄົນ ຮັກສາຄ້າຍ ທີ່ງສົ້ມປ່ອຍ.

ການສູ້ຮົບກັນດຳເນີນໄປຢ່າງດຸເດືອດ ແຕ່ທາງຝ່າຍລາວກໍ່ບໍ່ສາມາດ ເຂົ້າຕີຄ້າຍກອງທັບໄທຍໃຫ້ແຕກໄດ້ ຍ້ອນການລະດົມຍິງປືນນ້ອຍໃຫຍ່ຈາກ ຝ່າຍໄທຍ ເຊິ່ງມີກຳລັງໄຟເໜືອກ່ວາຝ່າຍລາວ ສ່ວນຝ່າຍລາວນັ້ນ ອາວຸດ ແລະ ລູກປືນບໍ່ພຽງພໍຈຶ່ງໄດ້ແຕ່ລ້ອມຄ້າຍໄວ້.

ເມື່ອທັບໃຫຍ່ຂອງໄທຮູ້ຂ່າວວ່າ ທັບໜ້າຂອງເຂົາຖືກປິດລ້ອມເກືອບຈະ ແຕກແລ້ວ ພວກເຂົາກໍ່ໄດ້ສົ່ງກອງໜູນມາຊ່ວຍ ແຕ່ກໍ່ຖືກຕີແຕກຍັບເຍີນ ຈາກ ທັບດັກຊຸ່ມສະກັດທາງຂອງຝ່າຍລາວ.

ຍຸດທະການທີ່ງສົ້ມປ່ອຍຂອງຝ່າຍລາວ ນັບວ່າເປັນຍຸດທະການທີ່ດີເດັ່ນ ບັ້ນໜຶ່ງ ແຕ່ກໍ່ໜ້າເສັຍດາຍທີ່ເມື່ອຂ້ງສັດຕູໄວ້ໃນຂ້ອງແລ້ວ ພັດບໍ່ມີອາວຸດພໍທີ່ ຈະສັ່ງຫານມັນໄດ້ ອັນເປັນສິ່ງທຳມະດາທີ່ສຸດໃນການຮົບ ຫາກວ່າເຖິງທີ່ສຸດ ແລ້ວ ລິດເດັດຂອງກຳລັງໄຟ ຫຼືກຳລັງອາວຸດເປັນສິ່ງຂີ້ຂາດ.

ຈາກຈຸດບົກຜ່ອງຂອງຝ່າຍລາວທີ່ກ່າວມານັ້ນ ຈຶ່ງໄດ້ເອົາກຳລັງຮັກສາ ຄ້າຍແນວຫັ້ງມາຊ່ວຍ 1.000 ຄົນ ເຊິ່ງຍັງເຫຼືອໄວ້ແຕ່ 1.000 ຄົນທ່ໍນັ້ນ ການກະ ທຳດັ່ງກ່າວ ກໍ່ບໍ່ພົ້ນສາຍຕາຂອງສອດແນມຂອງຝ່າຍໄທຍໄດ້ເລີຍ. ເມື່ອຮູ້ວ່າ ກຳລັງຮັກສາແນວຫັ້ງ ເຊິ່ງໝາຍເຖິງຄັງສາງອາວຸດ ສະບຽງອາຫານ ພາຫະນະ ຂົນສົ່ງລຳລຽງຂອງຝ່າຍລາວ ມີທະຫານຢູ່ຮັກສາພຽງ 1.000 ຄົນ ທັບໄທຍກໍ່ສັ່ງ ກຳລັງເຂົ້າປິດລັບໝອນຕີ ໂດຍເຜົ່າຄ້າຍຝ່າຍລາວຍັບເຍີນ ສ້າງຄວາມໂອລະ ຫິນຫວຸ້ນວາຍໃຫ້ແກ່ກອງທັບລາວ ເຮັດໃຫ້ແປັນເສິກທີ່ໄດ້ຈັດວາງໄວ້ຖືກແຕກ ມ້ຽງຢ່ຽງບໍ່ເປັນລະບຽບ ໃນທ່ີສຸດທັບໄທຍກ່ໍຄຸມແປັນຮຸກໂຈມຕີຝ່າຍລາວ ທ່ີ ພວມໂອນລະອິນຢູ່ນັ້ນ ເສັຍຫາຍຍັບເຍີນ.

ການເສັຍໄຊທີ່ທ່ຽສົ້ມປ່ອຍນັ້ນ ນັບເປັນສັນຍານເດັດຂາດຂອງການເສັຍໄຊທາງຝ່າຍລາວ ເພາະສຳພາລະ ແລະ ອຸປະກອນການເສິກເກືອບທັ້ງໝົດຖືກທຳລາຍ ແລະ ຍຶດໄປເຊັ່ນ: ຝ່າຍໄທຍໄດ້ຊ້າງພາຍ 49 ໂຕ ຊ້າງພັ້ງ 41 ໂຕ ຊ້າງບ່າວຊ້າງນາງອີກ 174 ໂຕ ມ້າ 346 ງົວ 600 ໂຕ ພ້ອມດ້ວຍອາວຸດຍຸດແສງ ແລະ ສະບຽງອາຫານທັ້ງໝົດ.

ທະຫານລາວຖືກດັບສູນຫວ່ງຫາຍ ເຊິ່ງບໍ່ນັບຂວັນ ແລະ ກຳລັ່ງໃຈທີ່ອ່ອນເພັ້ຽເປັ້ຽລ່ອຍຂອງຜູ້ທີ່ຍັ້ງເຫຼືອຊີວິດ.

ມັນຍັ້ງສະແດງໃຫ້ເຫັນວ່າ ຝ່າຍໄທຍນັ້ນ ກຳໄດ້ກົດເກນ ແລະ ປະຕິບັດກົນລະຍຸດທາງທະຫານແບບສະໄໝໃໝ່ໄດ້ດີກ່ວາຝ່າຍລາວດ້ວຍ.

ເມື່ອພຣະເຈົ້າອານຸວົງ ຊົງຮູ້ຂ່າວວ່າ ຄ້າຍໜອງບົວລຳພູ ແລະ ຄ້າຍທ່ຽສົ້ມປ່ອຍ ຖືກຝ່າຍໄທຍຕີແຕກແລ້ວ ຈຶ່ງຈັດກຽມເອົາລີພົນຈຳນວນໜຶ່ງກັບຄືນມານະຄອນວຽງຈັນ ເພື່ອຈັດກຽມການປ້ອງກັນຕົວເມືອງ. ພ້ອມກັນນັ້ນ ພຣະອົງກໍ່ໄດ້ມອບໝາຍໜ້າທີ່ໃຫ້ພະຍາສຸໂພ ກັບພຣະຍາສານິນ ນຳທັບສືບຕໍ່ຕິກອງທັບໃຫຍ່ສະຫຍາມ. ທ້ງສອງພຣະອົງໄດ້ຮຽກເອົາທັບພຣະຍາຊຽງສາ ມາຈາກບ້ານສະໜົມ ເອົາທັບພຣະຍາກອງ ແລະ ພຣະຍາຄຳມາຈາກຊ່ອງຖ່ວແຕກ ເອົາທັບເພັ້ຽສຸຣິນ ແລະ ຜູ້ອື່ນໆມາປິດລ້ອມກອງທັບສະຫຍາມ 7 ມື້ 7 ຄືນ ຈົນສະບຽງອາຫານຂອງພວກເຂົາບົກແຫ້ງ ເຊິ່ງກຳໝາຍເຖິງເວລາທີ່ກອງທັບລາວຈະຊະນະມາເຖິງ. ແຕ່ແລ້ວກອງໜູນປະກອບອາວຸດທີ່ເໜືອກ່ວາຂອງພວກເຂົາ ກໍໄດ້ມາຊ່ອຍຊູເອົາສະຖານະການ ຈາກນັ້ນທັບໃຫຍ່ພະຍາບໍ່ອນ ກໍເຂົ້າຕີຄ້າຍທັບລາວທີ່ພູເຂົ້າສານ ທາງຝ່າຍທັບລາວ ເຫັນວ່າທັບສະຫຍາມມີຄວາມເໜືອກ່ວາທຸກດ້ານຈຶ່ງຕົກລົງດຳເນີນສົງຄາມປ້ອງກັນຄ້າຍ ແລະ ສົງຄາມກອງໜອນ ເພື່ອແກ່ເວລາຈົນໃຫ້ສະບຽງກອງທັບໄທຍບົກແຫ້ງ ແລ້ວຈຶ່ງຈະບຸກທຳລາຍກຳລັ່ງດຶບຂອງພວກເຂົາ.

ແຕ່ທາງຝ່າຍໄທຍກໍຮູ້ເມື່ອໃນເລື່ອງນີ້ ດັ່ງນັ້ນພວກເຂົາຈຶ່ງໄດ້ຕົກລົງເປັນເຈົ້າການ ເປີດສະໜາມບຸກຝ່າຍລາວກ່ອນທຸກດ້ານ ແລະ ທຸກຄ້າຍ. ໃນທີ່ສຸດທາງຝ່າຍລາວທີ່ດ້ອຍອາວຸດ ແລະ ຈຳນວນພົນກ່ວາກໍຈຳຕ້ອງຖືກພວກເຂົາ

ທັບມ້າງໄດ້. ໃນສົງຄາມຄັ້ນນີ້ຝ່າຍລາວເສັຍອາວຸດຍຸດໂທປະກອນ ສະບຽງອາ ຫານທັງໝົດ ເສັງຊ້າງ 267 ໂຕ ມ້າ 548 ໂຕ ຄວາຍ 1.400 ໂຕ.

4.5. ນະຄອນວຽງຈັນ ຖືກເຜົາຜານ.

ນະຄອນວຽງຈັນ ຖືກເຜົາຜານເປັນເຖົ່າຖ່ານ ປະຊາຣາຊະດອນຖືກເຂັ່ນ ຂ້າກວາດຕ້ອນ ແລະ ຂັບສົມບັດຖືກຣິບຮື້ ປຸ້ນສະດົມ ເລືອດຂອງຊາດທັ່ງໄຫຼໄປ ພ້ອມກັບການຫຼົ້ມຈົມຂອງຊາດ ແລະ ວິລະກັມທີ່ບໍ່ຮູ້ຄວາມຈຳນົນຂອງວິຣະບຸຣຸດ ແລະ ວິຣະສັດຕີຂອງລາວລ້ານຊ້າງ (1827-1829) ເມື່ອຮູ້ຂ່າວວ່າກອງທັບລາວ ບໍ່ສາມາດດັບມອດກອງທັບໄທຍໄດ້ສຳເລັດ ທັງຍັງບໍ່ສາມາດສະກັດກັ້ນການຮຸກ ຄືບໜ້າຂອງພວກເຂົາມາສູ່ນະຄອນຫຼວງຂອງປະເທດຊາດໄດ້ ພຣະເຈົ້າອະນຸ ຈຶ່ງເຫັນຈຳເປັນຕ້ອງອົບພະຍົບ ເຊົ້ອພຣະຣາຊະວົງ ເສນາອາມາດ ແມ່ທັບ ນາຍກອງ ແລະ ກຳລັງພົນໄປທາງເມືອງມະຫາໄຊກອງແກ້ວ. ພຣະອົງໄດ້ເລືອກ ເອົາເຂດມະຫາໄຊກອງແກ້ວ ນ້ຳນ້ອຍ-ນາຍົມ ຄຳເກີດ-ຄຳມ່ວນ ເປັນຖານທີ່ ໝັ້ນແນວຫັງເພື່ອຕ້ານທານກັບການຮຸກຮານຂອງໄທຍ ແລະ ສ້າງສົມກຳລັງ ເພື່ອຈະຕ່າວໂຈມຕີ ຂັບໄລ່ສັດຕູໃຫ້ອອກຈາກດິນລາວ. ເຂດດັ່ງກ່າວນີ້ ເປັນ ເຂດທຸລະກັນດານ ມີພູຜາຫີນ ມີຫຼືບມີກວນເໝາະແກ່ການຫຼົບຫຼີກ ແລະ ຕ່າວ ໂຈມຕີສັດຕູໄດ້ທຸກເມື່ອ. ມັນຍັງເປັນເຂດທີ່ອຸດົມສົມບູນດ້ວຍສະບຽງອາຫານ ນາໆຊະນິດ ສາມາດລ້ຽງກອງທັບຫຼວງໄດ້ຢ່າງບໍ່ຕ້ອງເປັນຫ່ວງເປັນໃຍ. ເຂດດັ່ງ ກ່າວນັ້ນ ນອກຈາກຈະເປັນແນວຫັງທີ່ຮັບປະກັນແລ້ວ ມັນຍັງແມ່ນເຂດປະຕູ ດ່ານຂອງປະເທດອອກໄປສູ່ນະຄອນພູຊຸນ (ນະຄອນເວ້) ຂອງຫວຽດນາມ ຜູ້ເຊິ່ງຖືວ່າເປັນພັນທະມິດຂອງລາວ-ພ້ອມກັນນັ້ນ ມັນຍັງຕັ້ງຢູ່ຕໍ່ໜ້າເມືອງລະ ຄອນ (ນະຄອນພະນົມ) ອັນເປັນເມືອງໃຫຍ່ທີ່ສຳຄັນຂອງລາວ ແລະ ທີ່ຕັ້ງຢູ່ ກາງເສັ້ນທາງຍຸດທະສາດສຳຄັນທີ່ໜຶ່ງ ຈາກຫວຽດນາມ ຜ່ານລາວ (ເມືອງລະ ຄອນ) ເນ່ງຊຶ່ຢຽດຈຳນາງກອກດ້ວຍ.

ພາຍຫຼັງທີ່ພຣະເຈົ້າອະນຸໄດ້ນຳໄພ່ພົນຈັດແຈ່ງແປງຖານທີ່ໝັ້ນຕະຫຼອດ ຈົນສ້າງແນວປ້ອງກັນໄວ້ດີແລ້ວ ພຣະອົງຈຶ່ງໄດ້ເດີນທາງໄປເຈຣະຈາຂໍຄວາມ

ຊ່ອຍເຫຼືອຈາກພຣະເຈົ້າອານາມ ເມືອງພູຊຸນ (ເມືອງເວ) ເພື່ອກອບກູ້ເອກະຣາຊ ລາວຄືນ. ສ່ວນພຣະເຈົ້າເມືອງພູຊຸນ ເມື່ອເຫັນວ່າສະຖານະການຄັບຂັນ ແລະ ຝ່າຍລາວ ໄດ້ເສັຍກຳລັງໄປເກືອບໝົດ ການທີ່ຈະຊະນະກອງທັບສະຫຍາມໃນ ຍາມນີ້ ເປັນເລື່ອງທີ່ເປັນໄປໄດ້ຍາກ ດັ່ງນັ້ນຈຶ່ງໄດ້ເນັ້ນໜັກໃສ່ການເຈຣະຈາ ທາງດ້ານທູດ ເພື່ອໃຫ້ເຈົ້າອະນຸວົງໄດ້ກັບຄືນມາເປັນກະສັດລາວວຽງຈັນອີກຕໍ່ ໄປ ດ້ວຍວິທີເກ້ຍກ່ອມໃຫ້ພຣະເຈົ້າອະນຸຂ່ອນຍອມຕໍ່ຝ່າຍສະຫຍາມ. ຝ່າຍ ເຈົ້າອານາມ ໄດ້ສົ່ງທູດເຈຣະຈາພ້ອມກັບທະຫານ 80 ຄົນ ເດີນທາງມາພ້ອມ ກັບພຣະເຈົ້າອະນຸວົງທີ່ມີກອງທະຫານອົງຄະຮັກສາພຳ 2.600 ຄົນ ເພື່ອເຈຣະ ຈາກັບຝ່າຍໄທຍ ແຕ່ພໍເດີນທາງມາຮອດທີ່ໝັ້ນຂອງລາວແລ້ວ ພຣະເຈົ້າອະນຸ ວົງເລີຍໄດ້ຮັບຂ່າວວ່າ ນະຄອນວຽງຈັນຖືກປຸ້ນສະດົມ ປະຊາຣາຊຖືກກວາດ ຕ້ອນເອົາໄປບາງກອກຢ່າງສຸດແສນສາມານ ນອກນັ້ນພຣະອົງຍັງໄດ້ຮູ້ອີກວ່າ ຝ່າຍສະຫຍາມໄດ້ມອບໝາຍໜ້າທີ່ໃຫ້ພະຍາສຸພາວະດີ ຈັດຕັ້ງທັບຕິດຕາມ ນຳທຳລາຍກຳລັງຝ່າຍລາວຢູ່ທຸກບ່ອນ ແລະ ນຳຈັບຕົວພຣະອົງເອງພ້ອມດ້ວຍ ວົງສານຸວົງ ແລະ ຊຸນນາງແມ່ທັບນາຍກອງທັ້ງນວນດ້ວຍ. ອີກປະການໜຶ່ງ ພຣະອົງຍັງມອງເຫັນວ່າເຖິງແມ່ນວ່າພຣະເຈົ້າອານາມ ບໍ່ສາມາດຈະປະກອບ ກອງທັບມາຊ່ອຍພຣະອົງໄດ້ກໍຕາມ ການທີ່ຣາຊະທູດອານາມ ເຂົ້າມາຊ່ອຍສ້າງ ຄວາມຜ່ອນຄາຍນັ້ນ ເປັນເລື່ອງທີ່ດີ ເພາະອຳນວຍໂອກາດໃຫ້ແຜ້ວທາງໃຫ້ ພຣະອົງກັບຄືນມາວຽງຈັນໄດ້ ສ່ວນການທີ່ຈະຂ່ຍອມຈຳນົນຕໍ່ຝ່າຍໄທຍນັ້ນ ມັນ ເປັນເລື່ອງທີ່ບໍ່ສາມາດເປັນໄປໄດ້ ແລະ ຂະນະທີ່ພຣະອົງເດີນທາງມາເຖິງວຽງ ຈັນນັ້ນ ກອງທັບພຣະຍາ ສຸພາວະດີ ກໍໄດ້ຮີບເດີນທາງມາຈາກໜອງບົວລຳພູ ແລະ ມາຕັ້ງໝັ້ນຢູ່ເມືອງພານພ້າວກ່ອນແລ້ວ ດັ່ງນັ້ນ ທາງດຽວທີ່ຕ້ອງຕັດສິນໃຈ ປະຕິບັດຄືຍົກກຳລັງເຂົ້າປິດລ້ອມ ແລະ ຕີທະຫານໄທຍທີ່ຕັ້ງປະຈຳຢູ່ເມືອງວຽງ ຈັນ.

ໃນບັ້ນຕ່າວໂຈມຕີກອງທະຫານໄທຍທີ່ນະຄອນວຽງຈັນ ທັບຂອງພຣະ ເຈົ້າອະນຸວົງ ພາຍໃຕ້ການບັນຊາຂອງ ເຈົ້າຣາຊະວົງ ໃນເດືອນ 8 ປີ 1827 ນັ້ນ ທະຫານລາວໄດ້ດັບສູນສັດຕູໄປ 600 ຄົນ, ສ້ຽທານພຣະຍາພິໄຊສົງຄາມ ພຣະ

ยาทุละยะธาดุ ແລະ ຫງວງສຸເລນທຣະຊີວິດ ແມ່ທັບນາຍກອງຂອງຝ່າຍໄທຍ ສ່ວນພຣະຍາສຸພາວະດີ ທີ່ຕັ້ງໝັ້ນຢູ່ເມືອງພານຜ້າວ ຮູ້ວ່າກອງທະຫານໄທຍຮັກສາເມືອງວຽງຈັນຖືກລັບສູນກໍ່ຮີບເອົາຕົວປົບໜີອອກຈາກທີ່ໝັ້ນເມືອງພານພ້າວ.

ປັ້ນລົບລ້າງແຄ້ນຂອງເຈົ້າຣາຊະວົງທີ່ທີ່ງບົກທວານ.

ເມື່ອພຣະເຈົ້າອະນຸວົງ ໄດ້ກັບມາຄອງນະຄອນວຽງຈັນແລ້ວ ພຣະອົງໄດ້ຮີບເລັ່ງຝຶ້ນຟູ ແລະ ປັບປຸງກອງທັບຄືນເພື່ອຈະຂັບໄລ່ສັດຕູໃຫ້ອອກຈາກດິນລາວ. ພຣະອົງໄດ້ແຕ່ງໃຫ້ພຣະຍາລົ ຂຶ້ນເມືອນຳເອົາທັບເມືອງ 12 ພັນນາ ແລະ ໄດ້ແຕ່ງຣາຊະທູດລາວໄປຂໍກອງທັບພຣະເຈົ້າເມືອງອັງວະ (ເມືອງມ່ານ-ພະມ້າ) ມາຊ່ວຍແຕ່ກໍປະກົດວ່ານຳທັບມາບໍ່ທັນ.

ເມື່ອປັບປຸງກອງທັບຢ່າງເຮັ່ງຮີບແລ້ວ ພຣະອົງກໍໄດ້ວາງທິດບຸກພວກສະຫຍາມອອກຈາກດິນລາວເປັນ 3 ທິດ.

- ໃຫ້ເຈົ້າສຸດທິສານຄຸມທະຫານ 4.000 ຄົນ ໄປຕີທັບໄທຍຂອງພຣະວິຊິດສົງຄາມຢູ່ເມືອງນະຄອນພະນົມ ແລ້ວໃຫ້ຍົກໄປຕີທັບພວກເຂົ້າຢູ່ໂຄຣາຊ ຈາກນັ້ນໃຫ້ຕັ້ງໝັ້ນຢູ່ເມືອງດັ່ງກ່າວ.

- ໃຫ້ເຈົ້າຣາຊະວົງ ຄຸມທັບໃຫຍ່ 6.000 ຄົນ ນຳໄປຕີທັບຂອງພຣະຍາສຸພາວະດີ ແລ້ວໃຫ້ຕັ້ງໝັ້ນກັບທີ່ເພື່ອຕ້ານກັບກອງໝູນຂອງໄທຍທີ່ຈະມາຈາກກະບິນບຸຣີ.

- ໃຫ້ເຈົ້າໜໍ່ຄຳ ຄຸມກອງທັບ 3.000 ຄົນໄປຂັບໄລ່ທັບສະຫຍາມອອກຈາກເມືອງຫຼົ່ມ ເມືອງເລີຍ ເມືອງເພັດຊະບຸນ ແລະ ເມືອງໄຊບາດານ ແລ້ວໃຫ້ຕັ້ງໝັ້ນຮັກສາດ່ານຢູ່ທັ້ນ.

ສ່ວນພຣະເຈົ້າອະນຸ ຢູ່ນະຄອນຫຼວງແນວຫັ້ງສ້າງກຳລັງປ້ອງກັນໂຕເມືອງ ປັບປຸງປ້ອມຮີບ ປ່ອແປງກຳແພງເມືອງ ສ້າງສົມສະບຽງ ອາວຸດ ເພື່ອລຳລຽງແນວໜ້າ.

ຝ່າຍກອງທັບລາວ ພາຍຫັ້ງທີ່ເດີນທັບຕີກອງທະຫານຂອງສະຫຍາມແຕກຜ່າຍຈາກປ້ອມໝັ້ນຂອງເຂົ້າຢູ່ຕາມແຄມຝັ່ງຂວາ ແລະ ນະຄອນພະນົມ

ແລ້ວ ກໍເດີນທັບມຸ້ງໜ້າໂຈມຕີຂັບໄລ່ຂ້າເສິກໃຫ້ຖອຍອອກໄປ.

ກອງທັບເຈົ້າຣາຊະວົງ ເມື່ອເດີນໜ້າໄປຮອດທີ່ງບົກຫວານແລ້ວ ກໍບັນຊາໃຫ້ຈັດແຈງຕັ້ງຄ້າຍສູ້ຮົບ 3 ຄ້າຍດ້ວຍກັນ ເພາະຮູ້ວ່າພຣະຍາສຸພາວະດີໄດ້ຕັ້ງທັບກຽມປ້ອງກັນຕີວຢູ່ໜາແໜ້ນທີ່ສຸດ ທີ່ເມືອງສຸວັນນະພູມ. ຫຼັງຈາກນັ້ນກໍໄດ້ແຕ່ງໃຫ້ແມ່ທັບນາຍກອງອອກຂົນຂວາຍ ປຸກລະດົມ ປະຊາຣາສະດອນຈັດກັນເປັນກອງທັບໃຫຍ່ສົມທົບກັນທີ່ເມືອງສີສະເກດ ແລະ ເມືອງເດດອຸດົມ ອັນມີຈຳນວນພົນເຖິງ 10.000 ຄົນ ເພື່ອຂັບໄລ່ສັດຕູອອກຈາກປະເທດຊາດຕໍ່ໄປ. ເມື່ອຂ່າວວ່າກອງທັບລາວໄດ້ຈັດວາງກຳລັງ ແລະ ຕັ້ງໝັ້ນສູ້ຮົບຢູ່ທີ່ງບັກຫວານແລ້ວ ພຣະຍາສຸພາວະດີ ກໍໄດ້ຈັດວາງແຜນຍຸດທະການຮົບຂອງເຂົາຢ່າງແນບນຽນ ໂດຍໄດ້ນຳເອົາກອງທັບໃຫຍ່ຂອງພວກເຂົາໄປຕັ້ງປ້ອມທີ່ໝັ້ນ 7 ປ້ອມສະກັດໄວ້ເປັນວົງລວງສ້ອນ ໃຊ້ກຳລັງປືນໄຟ ແລະ ກອງທັບມ້າເປັນກອງປະຈັນບານ ແລ້ວກໍໃຊ້ກົນສົ່ງທະຫານ 500 ຄົນໄປຕີຍຸແຍ່ທະຫານລາວ. ຝ່າຍທະຫານລາວເມື່ອເຫັນກອງທະຫານໄທມາໂຈມຕີ ກໍຈັດກຳລັງອອກຮົບໂດຍຂ້າຟັນພວກເຂົາ ແລ້ວພວກເຂົາກໍຖອຍເຂົ້າໄປວົງສ້ອນ ເຊິ່ງກອງທັບລາວກໍໄລ່ຕາມຂ້າຟັນພວກເຂົາເຂົ້າໄປ.

ພໍຖືກຕີ ແລະ ຮູ້ເມື່ອວ່າຫຼົ່ງກົນຂອງສັດຕູແລ້ວ ເຈົ້າຣາຊະວົງກໍຕັດສິນໃຈ ບັນຊາທະຫານຕີຝ່າວົງລ້ອມອອກມາ ຄະນະນັ້ນພຣະອົງແນມເຫັນພຣະຍາສຸພາວະດີແມ່ທັບໄທຂີ່ມ້າບັນຊາທະຫານດ້ວຍຕົນເອງ ພຣະອົງຈຶ່ງຮີບຫອບມ້າເບັດໄປໃສ່ ເພື່ອຈະເອົາຊີວິດລ້ຳໆແຄ້ນໃຫ້ໄດ້. ພໍພຣະຍາສຸພາວະດີ ນາບເຫັນເຈົ້າຣາຊະວົງຫອບມ້າມາໃສ່ ກໍເລີຍຮີບຫັນມ້າກັບ ແຕ່ກໍໜີບໍ່ທັນ ເຈົ້າຣາຊະວົງພຸ່ງຫອກແທງສຽບທ້ອງພຣະຍາສຸພາວະດີຕົກຈາກຫຼັງມ້າ ເຈົ້າຣາຊະວົງຖອດດາບອອກວ່າຈະຊ້ຳໃຫ້ຕາຍກັບບ່ອນ ກໍພໍດີຫຼວງພິພິດ ນ້ອງຊາຍພຣະຍາສຸພາວະດີ ຖອດດາບວ່າຈະຟັນເຈົ້າຣາຊະວົງ ແຕ່ເຈົ້າຣາຊະວົງເຫັນທັນ ຈຶ່ງວາກໄປຟັນຫຼວງພິພິດກ່ອນ ຫຼວງພິພິດຖືກຟັນຂາດທ່ອງໃຈຂາດບາດດຽວ ແຕ່ກ່ຽວວາກກັບໄປຈະຟັນພຣະຍາສຸພາວະດີ ທະຫານວົງຄະຣັກຂອງມັນເລີຍຍິງສຸມໃສ່ເຈົ້າຣາຊະວົງ ຖືກສັນຫຼັງ ແລະ ກະໄພກ ເຮັດໃຫ້ລົ້ມລົງທັນທີ. ເມື່ອປະສົບເຫດການ

ເຊັ່ນນັ້ນ ທະຫານລາວຈຶ່ງຮີບຫາມເອົາເຈົ້າຣາຊະວົງຕີ່ວ່າວົງລ້ອມຂອງໄທຍ ອອກມາໄດ້.

ມັນເປັນທຳມະດາວ່າ ເມື່ອເຈົ້າຣາຊະວົງຜູ້ເປັນຈອມທັບໃຫຍ່ຖືກບາດເຈັບໜັກແລ້ວ ທັບລາວກໍເສັ່ງຫຼັກອັນໝັ້ນຄົງ ແລະ ກໍເປັນໂອກາດອຳນວຍໃຫ້ກອງທັບຂອງພຣະຍາສຸພາວະດີ ທີ່ຟື້ນຕົວຈາກບາດແຜຂອງຕົນແດ່ແລ້ວເປີດບັ້ນບຸກຕະເຫຼີດທຳລາຍຖ່ານທີ່ໝັ້ນຂອງກອງທັບລາວ. ເມື່ອຕ້ານທານກັບກອງທັບຂອງພະຍາສຸພາວະດີ ບໍ່ໄດ້ ກອງທັບລາວຈຶ່ງຖອຍທັບມາວຽງຈັນ. ພາຍຫຼັງທີ່ພຣະເຈົ້າອະນຸວົງຊາບເລື່ອງລາວກ່ຽວກັບການສຸດວິໄສ ຂອງກອງທັບລາວທີ່ຈະເອົາຊະນະກັບກອງທັບໄທຍທີ່ມີຈຳນວນຫລາຍ ມີທ່ຽງອາວຸດທີ່ທັນສະໄໝ ແລະ ເໜືອກວ່າຫລາຍເທົ່າ ພະອົງຈຶ່ງຊົງເຫັນວ່າ ຈະຕ້ານທານກອງທັບໄທຍບໍ່ໄດ້ ຈຶ່ງຕົກລົງອົບພະຍົບຈາກວຽງຈັນ ເພື່ອຈະເດີນທ່ຽງໄປຂໍຄວາມຊ່ວຍເຫຼືອຈາກຈີນ.

ເດືອນ 12 ປີ 1828 ເມື່ອກອງທັບພຣະຍາສຸພາວະດີ ໄດ້ມາເຖິງນະຄອນວຽງຈັນແລ້ວ ພວກເຂົາກໍໄດ້ສັ່ງການໃຫ້ເອົາໄຟເຜົາເມືອງໃຫ້ຍັງແຕ່ເທົ່າຖ່ານ ມ້າງກຳແພງເມືອງ ຕັດຕົ້ນໄມ້ກິນໝາກ ເຜົາວັດວາອາຮາມກວາດຕ້ອນເອົາປະຊາຊົນໃຫ້ອົບພະຍົບໄປເປັນຂ້າທາດ ແລະ ຮີບຮີ້ປຸ້ນສະດົມເອົາຊັບສົມບັດ ແລະ ສິ່ງຂອງທີ່ມີຄ່າທັ້ງໝົດ ຕາມເປົ້າປະສົງອັນປ່າເຖື່ອນທີ່ສຸດຂອງພວກເຂົາ ຄື: "ບໍ່ໃຫ້ວຽງຈັນຟື້ນຕົວກັບກາຍມາເປັນຕົວນະຄອນໄດ້ອີກເລີຍ". ພວກເຂົາໄດ້ກວາດຕ້ອນເອົາປະຊາຊົນຊາວນະຄອນວຽງຈັນ 100.000 ຄົນ ທຳລາຍເຄຫາສະຖານ ແລະເຮືອນຊານ 6.000 ຫຼັງ ເຈາະບີ ແລະ ທຳລາຍທາດຕະຫຼອດວັດວາອາຮາມທັ້ງໝົດ ຮີບຮີ້ເອົາຊັບສົມບັດຂອງມີ່ຄ່າ ຮີບເອົາພຣະບາງ ແລະ ພຣະແກ້ວມໍລະດົກ ພຣະສຸກ ພຣະເສີມ ພຣະໃສ ພຣະແຊກຄຳ ພຣະແກ່ນຈັນ ພຣະສິງນ໌ ພຣະເງິນຫລໍ່ ພຣະເງິນບຸ ພຣະເຈົ້າສິນສົ້ງນ ພຣະນາກສະຫວາດ ພຣະນາກປົກວິລາ... ໄປບາງກອກຈົນກັ່ງ.

ພາຍລຸນມາ ກອງທັບສະຫຍາມກໍສາມາດຕາມເຄິດຂະບວນອົບພະຍົບຂອງເຈົ້າອະນຸວົງ ພ້ອມດ້ວຍຣາຊະວົງ ແລະ ເສນາອາມາດທັ້ງໝົດທີ່ກຳລັງເດີນທ່ຽງໄປສູ່ປະເທດຈີນໄດ້.

ໃນຈຳນວນດັ່ງກ່າວນັ້ນ ນອກຈາກພຣະເຈົ້າອະນຸວົງ ແລ້ວກໍມີພຣະຊາຍາທິກຄົນ ເຊັ່ນ: ເຈົ້ານາງຄຳປ້ອງ ເຈົ້ານາງທອງດີ ເຈົ້ານາງຄຳໃສ ເຈົ້ານາງບຸດສະບາ ເຈົ້ານາງຄຳເກີດ ເຈົ້ານາງບຸບຜາ.

- ມີຣາຊະບຸດຕາ ບຸດຕີ ສາມອົງ ຄື: ເຈົ້າຍິງຄຳແພງ ເຈົ້າຍິງໜູ ເຈົ້າຊາຍໜູແດງ.

- ຫລານໜຶ່ງອົງ ຄື: ທ້າວຄຳຜາ

- ນອກນັ້ນຍັງຈັບໄດ້ຂະບວນອົບພະຍົບທັງໝົດ ຈຳນວນ 43 ຄົນ.

ພວກສະຫຍາມໄດ້ໃສ່ຊີກໃສ່ຄາພຣະອົງ ແລະ ຄົນທັງໝົດ ແລ້ວກໍນຳເອົາໄປລົງບາງກອກ. ເມື່ອເຖິງບາງກອກແລ້ວ ເຂົາກໍເອົາກົງເຫຼັກໃຫຍ່ໃສ່ພຣະເຈົ້າອະນຸວົງ ແລະ ກົງເຫຼັກນ້ອຍ 13 ກົງ ໃສ່ຣາຊະທາຍາດຂອງພຣະອົງ ຕັ້ງໄວ້ລຽນກັນຢູ່ສະໜາມໄຊ ໃນນັ້ນມີສັນຍາລັກຂອງເຄື່ອງທໍລະມານທຸກປະການ ເຊັ່ນ: ຄີມ ສາກສຳລັບຕຳ ເບັດສຳລັບເກາະແຂວນ ໝໍ້ຂ້າງສຳລັບຕົ້ມ ຂວານສຳລັບພ່າເອິກ ເລື່ອຍສຳລັບຕັດແຂນຂາ ແໜມສຳລັບສຽບທ້ຽງເປັນ ນ້ຳມັນສຳລັບລວກແລ້ວເອົາໄຟເຜົາ... ຕະໜອດອຸປະກອນປະຫຼາດອື່ນໆ ຕັ້ງລຽນລາຍເພື່ອທໍລະມານປະສາດ.

ທຸກເຊົ້າຂອງມື້ໃໝ່ມາ ພວກເຂົາກໍເອົາພຣະອົງພ້ອມດ້ວຍພຣະຊາຍາ ບຸດຕີ ບຸດຕາທັງ 7 ແລະ ຫຼານທັງ 5 ແລະ ພຣະມະເທສີ ເຈົ້າຄຳປ່ອງ ອອກມາໃຫ້ນວນຊົນປະຈານ. ໃຫ້ພຣະມະເທສີຖືວິກາບໝາກ ວີໃຫ້ເຈົ້າອະນຸວົງຢູ່ໃນກົງຮ້ຽງ ໃຫ້ມະເທສີທັງຫຼາຍນຸ່ງເຄື່ອງແດງຖືກະເບື້ອງໃສ່ເຂົ້າປາອາຫານລ້ຽງກັນຢູ່ໃນທີ່ປະຈານ ໃຫ້ນວນຊົນລຸລ້ຽງກັນມາປ້ອຍດ່າຖິ້ມນ້ຳລາຍຄາຍຂີ້ມູກ ແລະ ສາບແຊ່ງແຕ່ເຊົ້າຈົນຄ່ຳ. ເຮັດແນວນີ້ໄດ້ 7-8 ມື້ ພຣະເຈົ້າອະນຸກໍຮາກເປັນເລືອດເອົາແຕກຈຸຕິຕາຍໄປ ປະໄວ້ແຕ່ຄວາມແຄ້ນທີ່ບໍ່ມີວັນຫາຍ ແລະ ແບບຢ່າງແຫ່ງເລືອດນັກຮົບວິຣະຊົນກູ້ອິດສະຫຼະພາບຂອງລາວຜູ້ລ້ຳເລີດໃນປະຫວັດສາດແຫ່ງຊາດລາວ.

5. ປະຕິທິນຂອງເຫດການສຳຄັນໃນປະຫວັດສາດ ພາຍຫຼັງສົງຄາມກູ້ຊາດຂອງ ພຣະເຈົ້າອະນຸວົງ.

1870. ເຈົ້າຄຸນຄຳ ຂຶ້ນຄອງຣາຊທີ່ຫຼວງພະບາງ.

1872. ເສິກຫໍ້ມາຮຸກຮານຊຽງຂວາງ ເຂົ້າຍຶດວຽງຈັນ ແລະ ທຳລາຍຫາດຫຼວງ.

1883- 1885. ສະຫຍາມສົ່ງທະຫານຮຸກຮານອານາຈັກຫຼວງພະບາງ.

10-2-1887. ໂອກຸສະເຕ ປາວີ ອຸບປະຫຼຸດຂອງຝຣັ່ງໄດ້ມາເຖິງຫຼວງພະບາງ.

5-1887. ເສິກຫໍ້ແດວອັນຕຣີເຂົ້າມາຢຶດ ແລະ ປຸ້ນສະດົມຫຼວງພະບາງ. ເຈົ້າຊີວິດອຸ່ນຄຳໄດ້ເອົາຕົວໜີຈາກຫຼວງພະບາງໄປຢູ່ເມືອງປາກລາຍ.

1888 . ເຈົ້າຊີວິດອຸ່ນຄຳ ມອບຣາຊະສົມບັດ ອານາຈັກຫຼວງພະບາງໃຫ້ແກ່ພຣະເຈົ້າສັກກະລິນເນື່ອງຈາກອາຍຸສັ້ງຂານເຖົ້າແກ່.

5-1893. ຝຣັ່ງສົ່ງກຳລັງທະຫານມາຢຶດຝັ່ງຊ້າຍຂອງແມ່ນ້ຳຂອງ.

3-10-1893. ສົນທິສັນຍາຝຣັ່ງ - ສະຫຍາມຮັບຮອງເອົາການແບ່ງປັນເມືອງລາວ ລະຫວ່າງຝຣັ່ງ ແລະ ສະຫຍາມ ຄື: ຝຣັ່ງຢຶດເອົາຝັ່ງຊ້າຍຂອງແມ່ນ້ຳຂອງ ຂອງດິນລາວ ແລະ ສະຫຍາມ ຢຶດເອົາຝັ່ງຂວາຂອງແມ່ນ້ຳຂອງ ຂອງດິນລາວ.

5-6-1894. ທ່ານປາວີຖືກແຕ່ງຕັ້ງໃຫ້ເປັນຂ້າຫຼວງໃຫຍ່ຂອງປະເທດຝຣັ່ງ ປະຈຳລາວ ແລະ ຕັ້ງຢູ່ນະຄອນຫຼວງພະບາງ.

15-1-1896. ສັນຍາຝຣັ່ງ-ອັງກິດ ປັກປັນເຂດແດນລະຫວ່າງລາວ ແລະ ພະມ້າ.

1903. ເຈົ້າມະຫາຊີວິດສັກກະຣິນ ເຖິງແກ່ອະສັນຍະກຳ ແລະ ເຈົ້າສີສະຫວ່າງວົງ ຂຶ້ນຄອງຣາຊະສົມບັດແທນ.

23-3-1907. ສົນທິສັນຍາຝຣັ່ງ - ສະຫຍາມ ວ່າດ້ວຍການແບ່ງປັນ ແລະ ຢຶດຄອງດິນແດນລາວລະຫວ່າງກັນ ຄື: ຝຣັ່ງຄອບຄອງພາກຕາເວັນອອກ ສ່ວນສະຫຍາມຄອບຄອງພາກຕາເວັນຕົກໄປເຖິງດົງພະຍາໄພຈົນຮອດສູ່ມື້ນີ້.

3-1945. ກອງທະຫານຂອງຍີ່ປຸ່ນເຂົ້າມາລາວ.

23-8-1945. ການລຸກຮືຂຶ້ນຂອງປະຊາຊົນລາວເພື່ອຢຶດອຳນາດທີ່ນະຄອນວຽງຈັນ.

12-10-1945. ປະຊາຊົນລາວປະກາດເອກະລາດ ແລະ ສ້າງຕັ້ງຣັດຖະບານ

ຊ່ວຄາວໃນດິນແດນທີ່ຝຣັ່ງຢຶດຄອງ.

21-3-1946. ບັ້ນຮົບທ່າແຂກ ຕ້ານພວກລ່າເມືອງຂຶ້ນຝຣັ່ງ ເຊິ່ງນຳພາໂດຍສະເດັດເຈົ້າສຸພານຸວົງ ພວກທະຫານຝຣັ່ງໄດ້ຂ້າປະຊາຊົນລາວຕາຍໄປເຖິງ 2.000 ກ່ວາຄົນ.

24-4-1946. ພວກລ່າເມືອງຂຶ້ນກັບຄືນມາຢຶດນະຄອນວຽງຈັນ-ບັນດາສະມາຊິກຣັດຖະບານຊົ່ວຄາວອົບພະຍົບໄປໄທຍ.

27-8-1946. ຕົກລົງຂໍ້ໄກ່ເກັ່ງຊົ່ວຄາວ ຮັບຮູ້ຄວາມເປັນເອກະພາບຊາດລາວໃນດິນແດນທີ່ຕົກເປັນເມືອງຂຶ້ນຂອງຝຣັ່ງ.

12-1946. ພວກໄທຍຄືນດິນແດນ 2 ແຂວງທີ່ພວກເຂົາຢຶດໄປຈາກຝຣັ່ງ ສະໄໝສົງຄາມຍີ່ປຸ່ນຄືນໃຫ້ຝຣັ່ງ.

11-5-1947.ປະກາດໃຊ້ຣັດຖະທຳມະນູນແຫ່ງຣາຊະອານາຈັກ ສະບັບທຳອິດ.

19-7-1949. ສັນຍາລາວ-ຝຣັ່ງ ວ່າດ້ວຍການມອບເອກະຣາຊໃຫ້ລາວ(ໃນເຄືອຈັກກະພົບຝຣັ່ງ)

20-1-1949. ສ້າງຕັ້ງກອງທັບລາວອິດສະຫລະ (ເປັນກອງທັບປະຊາຊົນລາວປັດຈຸບັນ).

13-8-1950. ສ້າງຕັ້ງແນວລາວອິດສະຫລະ.

28-11-1951. ປະເທດລາວເຂົ້າເປັນສະມາຊິກຂອງສະຫະພາບ ໄທລະຄົມມະນາຄົມສາກົນ.

13-5-1952. ປະເທດລາວ ເຂົ້າເປັນສະມາຊິກອົງການໄປສະນີໂລກ.

13-4-1953. ບັ້ນຮົບໃຫຍ່ຂັບໄລ່ກອງທະຫານຂອງຝຣັ່ງທີ່ຢຶດຄອງພາກເໜືອຂອງລາວ.

24-12-1953. ບັ້ນຮົບໃຫຍ່ຂັບໄລ່ກອງທະຫານຂອງຝຣັ່ງທີ່ຢຶດຄອງພາກໃຕ້ຂອງລາວ.

20-7-1954. ເຊັນສັນຍາເຊີແນວ ກ່ຽວກັບການຢຸດຕິການຢຶດຄອງຂອງພວກລ່າເມືອງຂຶ້ນຝຣັ່ງໃນ 3 ປະເທດອິນດູຈີນ.

22-3-1955. ຈັນສ້າງຕັ້ງພັກປະຊາຊົນ ປະຕິວັດລາວ (ແຕ່ກ່ອນພັກປະຊາຊົນລາວ).

14-12-1955. ປະເທດລາວເຂົ້າເປັນສະມາຊິກຖາວອນຂອງອົງການສະຫະ

ປະຊາຊາດ.

6-1-1956. ປ່ຽນຊື່ຈາກແນວລາວອິດສະຫລະມາເປັນແນວລາວຮັກຊາດ.

28-5-1956. ຖະແຫຼງການຂອງສະເດັດເຈົ້າສຸພານຸວົງໃນນາມກຳລັງປະຕິວັດ ວ່າດ້ວຍແນວທາງສັນຕິພາບ ແລະ ເປັນກາງຂອງລາວ.

2-11-1957. ວັນສ້າງຕັ້ງຣັດຖະບານປະສົມແຫ່ງຊາດ ສະໄໝໂຮມລາວເທື່ອທຳອິດ.

18-5-1959. ກອງພັນທີ່ສອງຂອງຝ່າຍປະເທດລາວຜ່າວົງລ້ອມຂອງສັດຕູອອກ ສູ່ເຂດທີ່ໝັ້ນ.

28-7-1959. ຈັກກະພັດອາເມຣິກາ ແລະ ລູກມືຈັບກຸ່ມສະເດັດເຈົ້າສຸພານຸວົງ ແລະ ບັນດາຜູ້ນຳແນວລາວຮັກຊາດເຂົ້າຄຸກໄພນເຄັ່ງທີ່ວຽງຈັນ.

24-5-1960. ສະເດັດເຈົ້າສຸພານຸວົງພ້ອມດ້ວຍຄະນະ 16 ທ່ານໂຕນໜີອອກ ຈາກຄຸກໄພນເຄັ່ງກັບເມື່ອເຂດທີ່ໝັ້ນຂອງການປະຕິວັດ.

9-8-1960. ກອງພັນທະຫານຣາບອາກາດທີ່ສອງຂອງຣາຊະອານາຈັກ ເຮັດຣັດ ຖະປະຫານທີ່ນະຄອນວຽງຈັນ.

29-10-1960. ກຳລັງປະກອບອາວຸດປະເທດລາວ ປົດປ່ອຍແຂວງຫົວພັນ.

13-12-1960. ອາເມຣິກາ-ພຸມມີໜ່ສະຫວັນ ສົມທົບກັບພວກປະຕິການໄທຍ ພວກປະຕິການໄຊ່ງ່ອນ ບຸກຕີຢຸດເອົານະຄອນຫຼວງວຽງຈັນ.

14-12-1960. ພຣະອາຈານບົວຄຳ ພ້ອມດ້ວຍພະສົງຫຼາຍຮ້ອຍອົງຈາກນ່ະ ຄອນຫຼວງວຽງຈັນໄປຮ່ວມປະຕິວັດ.

1-1-1961. ກອງກຳລັງປະກອບອາວຸດແນວລາວຮັກຊາດ ປົດປ່ອຍທົ່ງໄຫຫີນ.

1-5-1962. ກອງກຳລັງປະກອບອາວຸດແນວລາວຮັກຊາດ ປົດປ່ອຍແຂວງຫຼວງ ນ້ຳທາ.

7-6-1962. ເຈຣະຈາຈັດຕັ້ງຣັດຖະບານ 3 ຝ່າຍ ທີ່ທົ່ງໄຫຫີນ.

24-6-1962. ປະກາດຢຸດຍິງທົ່ວປະເທດ.

23-7-1962. ເຊັນສັນຍາເຊີແນວລະຫວ່າງ 14 ປະເທດ ຢຸດຕິການຄອບຄອງ ລາວຂອງຈັກກະພັດອາເມຣິກາ.

1-4-1963. ທ່ານກຶນີມ ພົນເສນາຣັດຖະມົນຕີ ການຕ່າງປະເທດຂອງຣັດຖະ

ບາມປະສົມຖືກຄາຕະກຳ.

17-5-1964. ອາເມຣິກາເລີ່ມໃຊ້ກຳລັງທາງອາກາດຍິງທຳລາຍເຂດປົດປ່ອຍ.

28-8-1969. ອາເມຣິກາ ແລະ ລຸກມືອາງປາວ ແລະ ຝ່າຍຂວາສົມທົບກັບພວກ ປະຕິກາມໄທຍເປີດບັ້ນຣົບກູ້ກຸງດບຸງດຢຶດເຂດປົດປ່ອຍທົ່ງໄຫຫີນ.

21-2-1973. ເຊັນອະນຸສັນຍາຟື້ນຟູສັນຕິພາບ ແລະ ຄວາມປອງດອງຊາດຄັ້ງທີ 3 ທີ່ ວຽງຈັນ.

5-4-1974. ສ້າງຕັ້ງຣັດຖະບາມປະສົມແຫ່ງຊາດສອງຝ່າຍເທື່ອທີ 3.

2-12-1975. ສ້າງຕັ້ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

✧ <u>ຫມາຍເຫດ:</u>

1. ຕູລາວ: ແມ່ນຜູ້ເປັນຫົວໜ້າເຜົ່າອ້າຍລາວ, ສັບນີ້ຜັ່ງມາເປັນໂຖທີ່ ທວງດນາມ ແລະ ຈີນຕອນໃຕ້ ເຂົາເຈົ້າຍັງຖືກຮຽກໃນຊື່ລວມວ່າ "ຈວງ" ດ້ວຍ.

2. ຊາອີ: ຢູ່ໃນພົງສາວະດານຈີນຮຽກວ່າ "ຊາຫູ" ບາງນັກປາດຈີນ ສະ ໄໝປັດຈຸບັນ ອະທິບາຍວ່າ ອາຊີ.ຫຼື ຊາຫູນັ້ນ ໝາຍເຖິງໝາກ໊ເຕົ້າປຸ່ງ ແຫ່ງ ກຳເນີດຂອງມະນຸດ.

3. ພູລາວຊານ ປັດຈຸບັນຮຽກວ່າ ພູອ້າຍລາວ ຢູ່ໃກ້ກັບເມືອງປ່າວສານ ແຂວງຢຸນນານຂອງຈີນ.

4. ພົງສາວະດານ ອ້າຍລາວຂຽນຂຶ້ນສະໄໝຫານຕາເວັນອອກ ກົງກັນ ກັບປີ ຄ.ສ.75. ຊົນຊາດອ້າຍລາວນັ້ນ ແມ່ນສິ່ງທີ່ມີຈິງທາງປະຫວັດສາດ ສ່ວນ ນິທານເລື່ອງທ້າວກາຫຼົງ ທີ່ເປັນລູກນາກ ຫຼື ລູກເງືອກນັ້ນ ແມ່ນສະຖາບັນຄວາມ ເຊື່ອທີ່ຊົນຊາດອ້າຍລາວສ້າງຂຶ້ນມາ ໃຫ້ເປັນເທບພະເຈົ້າ ຫຼື ເປັນບັນພະຊົນ ຂອງຊົນຊາດອ້າຍລາວນັ້ນເອງ. ເມື່ອເວົ້າວ່າທ້າວກາຫຼົງ ເປັນລູກເງືອກ ທີ່ໜອງ ແສ ກໍ່ສະແດງວ່າຄົນລາວເຊື່ອວ່າມີເຊື້ອຕະກຸນຈາກເງືອກ ອັນມີຖິ່ນກຳເນີດຢູ່ ເຂດໜອງແສນັ້ນເອງ ຄວາມເຊື່ອນີ້ສືບທອດມາຮອດສະໄໝລ້ານຊ້າງ ເຊິ່ງຄົນ ລາວເອົາເງືອກ (ນາກ) ເປັນສັນຍາລັກຂອງຊາດ

ພາກ VI
ວັດທະນະທັມ

ຄຳວ່າ ວັດທະນະທັມນັ້ນ ຂ່າງມີເນື້ອຫາສາລະກວ້າງຂວາງ ອຸດົມຮັ່ງມີ ເລິກເຊິ່ງ ແລະ ສະຫຼັບສັບຊ້ອນອີ່ຫຼີ ຈົນຕ່າງຜູ້ຕ່າງຄົນ ແລະ ຕ່າງຊາດຕ່າງພາສາກໍ ເຂົ້າໃຈ ແລະ ແປກັນໄປຄົນລະແງ່ລະມຸມ.

ສະເພາະຄົນລາວພວກເຮົາແລ້ວ ໃນຄວາມເປັນຈິງ ເຖິງວ່າຈະມີມູນ ເຊື້ອທາງວັດທະນະທັມ ອຸດົມຮັ່ງມີ ຢ່າງເປັນເອກະລັກຂອງຕົນເອງມາຕັ້ງແຕ່ບັນ ພະການປານໃດກໍຕາມ ແຕ່ຄວາມເຂົ້າໃຈໃນຄວາມໝາຍຂອງຄຳວ່າ"ວັດທະ ນະທັມນັ້ນ" ສ່ວນຫຼາຍຍັງຢູ່ໃນຂັ້ນຜິວເຜີນ ຫຼື ບາງຈຳນວນກໍບໍ່ເຂົ້າໃຈເລີຍຊ້ຳ. ການທີ່ເປັນເຊັ່ນນີ້ ກໍເນື່ອງຈາກວ່າ ຄຳວ່າ ວັດທະນະທັມນັ້ນ ສັ່ງຫາກໍເຂົ້າມາມີ ບົດບາດເດັ່ນ ໃນພາສາລາວບໍ່ດົນພໍເທົ່າໃດ ຄືໃນຊຸມປີ 1920 ຫາ 1930 ອັນ ເປັນໄລຍະຕົ້ນຂອງການຟື້ນຟູວັດທະນະທັມລາວ ຫຼັງຈາກການທຳລາຍຢ່ອຍ ຍັບ ຂອງພວກຮຸກຮານຕ່າງດ້າວມາເກືອບ 100 ປີ. ຕັ້ງແຕ່ນັ້ນມາຄຳວ່າ ວັດທະ ນະທັມ ຄ່ອຍໆເລີ່ມມີບົດບາດໃນວົງການແຄບໆ ຂອງປັນຍາຊົນເທົ່ານັ້ນ ສ່ວນ ນອນຊົນໂດຍທົ່ວໄປຍັງເຂົ້າໃຈວັດທະນະທັມລາວພາຍໃຕ້ຊື່ຂອງຂະແໜງຍ່ອຍ ຕ່າງໆຫຼາຍໆຊື່ ເຊັ່ນ : ຮີດຄອງ ປະເພນີ ຄວາມເຊື່ອຖື ສາສະໜາ ສິລະປະ ລວດລາຍ ວັນນະຄະດີ ການຂັບລຳ ການຟ້ອນ ເສບນ້ອຍນະໂທລີ ການເຮັດຢູ່ ກະທຳກິນ ການພົວພັນໄປມາຄ້າຂາຍ ການນຸ່ງຖື ການສ້າງບ້ານແປງເມືອງ ນາ ລະຍາດ ຄວາມສີວິໄລ ແລະ ອື່ນໆ....

ປັດຈຸບັນເຖິງວ່າ ສັບຄຳເວົ້າດັ່ງກ່າວຈະເປັນທີ່ແຜ່ຫຼາຍ ແລະ ເປັນທີ່ໃຊ້ ກັນຢ່າງກວ້າງຂວາງກໍດີ ແຕ່ການທີ່ຈະເຂົ້າໃຈຄວາມໝາຍ ຕະຫຼອດທາດແທ້ ພາລະບົດບາດ ແລະ ຄວາມສຳຄັນຂອງວຽກງານວັດທະນະທັມນັ້ນ ຍັງບໍ່ທັນ ເລິກເຊິ່ງເຖິງຖອງແທ້ເທື່ອ ດັ່ງທີ່ເວົ້າມາແລ້ວເບື້ອງຕົ້ນ. ມັນສະແດງອອກໃຫ້

ເຫັນໃນການເຄື່ອນໄຫວ ແລະ ຜົນໄດ້ຮັບໜ້ອຍຫຼາຍປານໃດທາງດ້ານການປະຕິບັດແນວທາງນະໂຍບາຍ ການປົກປັກຮັກສາ ແລະ ສົ່ງເສີມມໍລະດົກທາງວັດທະນະທັມຂອງຊາດ ແລະ ການພັດທະນາແບບແຜນການດຳລົງຊີວິດ ແບບໃໝ່ທີ່ສີວິໄລໃນໝູ່ປະຊາຊົນໂດຍທົ່ວໄປເປັນຕົ້ນແມ່ນບ່ອນທ່າງໄກສອກຫຼີກ ທີ່ຍັງພົບຄວາມຍຸ້ງຍາກ ແລະ ຫຼ້າຫຼັງ ຕະຫຼອດມາຕະການອັນສັກສິດ ເພື່ອຕ້ານການຮຸກຮານ ຫຼື ການແຜ່ຂະຫຍາຍຮູບແບບການດຳລົງຊີວິດທີ່ຊະຊາຍ ເປື້ອເປິ ແລະ ເຊື່ອມຊາມ ຂອງສັງຄົມບໍລິໂພກນິຍົມແບບຕາເວັນຕົກ ເຊິ່ງກຳລັງແຜ່ລະບາດ ຢ່າງຮ້າຍແຮງໃນສັງຄົມລາວ ເປັນຕົ້ນແມ່ນໃນໝູ່ຊາວໜຸ່ມຍິງສາວ.

I. ວັດທະນະທັມນັ້ນແມ່ນຫຍັງ ?

1. ທີ່ມາຂອງຄຳວ່າວັດທະນະທັມ:

ຄຳວ່າວັດທະນະທັມນັ້ນ ມາຈາກຄຳສົມທົບລະຫວ່າງ "ວັດທະນະ" ແລະ ຄຳ "ທັມມະ" (ວັດທະນະ + ທັມມະ=ວັດທະນະທັມ) ວັດທະນະ ແລະ ທັມມະ ລ້ວນແລ້ວແຕ່ແມ່ນຄຳມາຈາກພາສາບາລີ ເຊິ່ງມີຄວາມໝາຍເຊັ່ນ :

- ວັດທະນະ ແປວ່າ ຄວາມຈະເລີນ ຄວາມງອກງາມ ຄວາມຮຸ່ງເຮືອງ.
- ທັມມະ ແມ່ນຄວາມດີ ຄວາມຊອບ ຄວາມຖືກຕ້ອງ ຄວາມບໍລິສຸດ ຄວາມຈິງ ຄວາມຍືນຍົງ.

ດັ່ງນັ້ນ,ຄຳວ່າວັດທະນະທັມຈຶ່ງມີຄວາມໝາຍທາງກົງວ່າ:ຄວາມດີ ຄວາມຈະເລີນ ຄວາມງອກງາມ ທີ່ຍືນຍົງ.

ຊາວລາວ ແລະ ຊາວໄທຍ໌ ໄດ້ໃຊ້ຄວາມນີ້ ອັນມາຈາກເຄົ້າດຽວກັນ ເພື່ອທຽບຄຽງກັບຄຳວ່າ *"Cultura"* ໃນພາສາລາຕິນນັ້ນເອງ. ທ່ານ ວາດິມ ເມ ຊູແຢັບ *(Vadim Méjouiev)* ນັກປັດຊະຍາສະໄໝໂຊວຽດ ເຈົ້າຂອງປຶ້ມວັດທະນະທັມ ແລະ ປະຫວັດສາດ (1980) ໄດ້ອະທິບາຍໄວ້ໃນປຶ້ມຂອງທ່ານວ່າ :

"ຕາມຄຳເຫັນຂອງທ່ານ *I. Niederman* ນັກພາສາສາດເຍລະມັນແລ້ວ ຄຳວ່າ *"Culture"* ນັ້ນສ້ຳຫາກໍເກີດຂຶ້ນໃນຖານະທີ່ເປັນເອກະສັພທານຸກົມໃນ

ສະຕະວັດທີ XVIII ນີ້ເອງ". ກ່ອນໜ້ານີ້ ຄຳວ່າ ວັດທະນະທັມ ພຽງແຕ່ເປັນຄຳ ສັບໃຊ້ໄວ້ປະສົມກັບຄຳອື່ນເຊັ່ນ : *"Cultura Juris"* (ການອາງກິດການປະພຶດ) *"Cultura Scientae"* (ການຮັບເອົາຄວາມຮູ້ ແລະບິດຮຽນ) *"Cultura Littérarum"* (ການປັບປຸງອັກສະຣະວິທີ) *"Cultura Lingae"*(ການປັບປຸງພາ ສາ) ແລະ ອື່ນໆ..."

ແຕ່ທ່ານ ເມຊູແຢບ ກໍໄດ້ຍົກເອົາຂໍ້ຂຽນຂອງທ່ານ ຣ. ບູຄານົບ *(R. Bouganov)* ໃນປຶ້ມຜົນງານຂອງທ່ານ "ປະຫວັດຄວາມເປັນມາຂອງຄຳ ໃນ ປະຫວັດສາດສັງຄົມ" (ມົສກູ1971)ວ່າ : ໃນກຸ່ມຊັບປະເພດນີ້ ຄຳວ່າ "Cultura" ໄດ້ສະແດງລັກສະນະເອກະສັພຂອງມັນອອກມາໃຫ້ເຫັນເປັນຄັ້ງທຳອິດ ເຖິງວ່າ ມັນຈະອາໄສສັພອື່ນ ເພື່ອປະກອບເປັນຮູບການ ແລະ ຄວາມໝາຍຂອງມັນກໍ ຕາມ". ທ່ານ ມເຊຼແຢບ ໃຫ້ທັດສະນະວ່າ :

"ນັກພາສາສາດສ່ວນໜາຍບໍ່ໄດ້ຕັ້ງຂໍ້ສົງໄສເລີຍ ໃນອັນທີ່ຄຳວ່າ *"ວັດທະນະທັມ ຫຼື Culture"* ນັ້ນມາຈາກພາສາລາຕິນ ໃນຖານະທີ່ເປັນວະລີສັພ *'Colere Cultura"* (ການປຸກຝັ່ງ ການບົວລະບັດ ການປະຄັບປະຄອງ) ເຊິ່ງໃນເບື້ອງຕົ້ນ ໝາຍເຖິງ "ການປຸກຝັ່ງໃນດິນ" ເຊັ່ນ ປຶ້ມຫົວໜຶ່ງອົດກ່ຽວກັບການກະເສດ ເປັນ ພາສາລາຕິນບູຮານ *(Caton d'Ancien)* ໄດ້ໃສ່ຫົວເລື່ອງໄວ້ວ່າ : *De Agri Cultura.* ແຕ່ຢ່າງຄູ່ກັນນັ້ນ ເພິ່ນກໍໄດ້ພົບຮ່ອງຮອຍໃນສານຕ່າງໆຂອງທ່ານ *Cicéron (Marcus Tullius Cicéro 106-4 ກ່ອນ ຄ.ສ)* ໃນສຳນວນເຊັ່ນ : *Cultura animi autem philosophia est*

(ອັນວ່າ ການປຸກຝັ່ງສະຕິປັນຍານັ້ນແມ່ນປັດຊະຍາ). ນັກປັດຊະຍາ ແລະ ນັກ ປາຖະກາຖາບູຮານຂອງນະຄອນໂຣມ ທ່ານນີ້ໄດ້ແປຄວາມວ່າ : ອັນສຳປະຊັນ ຍະ ແລະ ສະຕິປັນຍານັ້ນຈຳຕ້ອງເພາະປຸກເຊັ່ນກັນ ເໝືອນດັ່ງຊາວນາປຸກ ພືດນັ້ນເອງ. ທ່ານ ເມຊູແຢບ ຍັງໄດ້ບັນລະຍາຍໄວ້ວ່າ: ສຳປະຊັນຍະ ແລະ ສະ ຕິປັນຍານັ້ນ ຄວນຕ້ອງໄດ້ປຸກເໝືອນຊາວນາປຸກພືດໃສ່ດິນເຊັ່ນກັນ. "ການ ເພາະປຸກສຳປະຊັນຍະ" ການພັດທະນາວາດແວວແຫ່ງສະຕິປັນຍາ ພຶດຕິກຳ ຈາກນັ້ນສະໝອງ ແມ່ນອັນນີ້ເອງທີ່ບົ່ງບອກເຖິງປະຕິພານຂອງຄົນທີ່ມີອິດສະ ຫຼະທີ່ແທ້ຈິງ ກົງກັນຂ້າມກັບພວກຂ້າທາດ ແລະ ພວກທີ່ຢູ່ໃນຖານະຕ່ຳ ເຊິ່ງອາ

ໄສແຕ່ການເຮັດວຽກດ້ວຍກຳລັງກາຍ "ເຮັດວຽກຂຸດດິນຟັນໄມ້ແຕ່ຢ່າງດຽວ ເປັນການປະຖ້ຽຊີບ". (ເມຊູແຢບ. ຫນ້າ 26).

ດັ່ງນີ້ເອງທີ່ຄຳວ່າ "ວັດທະນະທັມ" ຈຶ່ງມີຄວາມໝາຍໃນເບື້ອງຕົ້ນແຕກຕ່າງກັນໄປ ແລະ ຜູ້ຄົນກໍໃຊ້ຄຳວ່າ "ວັດທະນະທັມ" ໃນຄວາມໝາຍຕ່າງໆ ແຕກຕ່າງກັນ ເຊິ່ງກໍລ້ວນແລ້ວແຕ່ ຖືກຕ້ອງທັ້ງນັ້ນ ໂດຍສະເພາະແມ່ນໃຊ້ໃນຄວາມໝາຍເຖິງ "ການສຶກສາ ການເຝິກຝົນເລົ່າຮຽນ" ເປັນຕົ້ນ. ເມື່ອຄຳ ຄຳນີ້ ເລີ່ມໄດ້ຮັບການໃຊ້ແຜ່ຫຼາຍໃນສາກົນລະໂລກ ໃນຄວາມໝາຍອັນກວ້າງຂວາງ ໂດຍກວມເອົາທັງໝົດຂະແໜງມະນຸດວິທະຍາ ແລະ ເມື່ອມັນມີລັກສະນະສາກົນຂຶ້ນມາແລ້ວ ທຸກຊາດທຸກພາສາ ນັບທັງລາວພວກເຮົາກໍຕ້ອງມີຄຳສັພ ທຽບຄຽງໃນພາສາຂອງຕົນເອງ ເພື່ອໃຫ້ໄດ້ຄວາມໝາຍດຽວກັນ ເຊິ່ງພວກເຮົາກໍເອົາຄຳວ່າ "ວັດທະນະທັມ" ນີ້ມາທຽບຄຽງຄຳວ່າ "Cultura" ຫຼື "Culture" ແລ້ວກໍມີຄວາມໝາຍອັນດຽວກັນບໍ່ຜິດ.

2. ຄວາມໝາຍຂອງຄຳວ່າ "ວັດທະນະທັມ".

ທ່ານອາຈານ ດວນວັ່ນຈຸກ (Doan Van Chuc) ຂອງວຽດນາມໄດ້ໃຫ້ການຕີລາຄາໄວ້ວ່າ ສຳຫຼັບການຕີຄວາມໝາຍຂອງວັດທະນະທັມແລ້ວ ມີຈຳນວນນິຍາມເກືອບ 300 ນິຍາມ ດ້ວຍກັນ (Doan Van Chuc - ຫນ້າ 41).

ພວກເຮົາມາທຳຄວາມຮູ້ຈັກກັບນິຍາມຕ່າງໆ ບາງນິຍາມສຳຄັນດັ່ງນີ້ :

- Pluri-Dictionnaire Larousse, 1975 ໄດ້ໃຫ້ຄຳນິຍາມໄວ້ວ່າ:

1 . "ວັດທະນະທັມນັ້ນ ແມ່ນການເພີ່ມພູນຄຸນສ້າງສະຕິປັນຍາ ມັນສະໝອງ ແລະ ແມ່ນສະພາວະທີ່ສະໝອງໄດ້ຮັບເອົາຄວາມນັ່ງຄັ່ງ ຈາກຄັງຄວາມຮູ້ນາງສາຣະ ແລະ ກວ້າງຂວາງນັ້ນເອງ".

2 . ວັດທະນະທັມນັ້ນ ແມ່ນທັງໝົດຜະຫຼິດຕະພັນອັນນະຄະດີ ສິລະປະ ແລະ ສະຕິປັນຍາຂອງວິງສາຄະນາຍາດມະນຸດກຸ່ມໜຶ່ງໆ".

- Pelit Larousse illustré 1985 ໃຫ້ທັດສະນະວ່າ :

"ວັດທະນະທັມ ແມ່ນທັງໝົດໂຄງປະກອບຂອງສັງຄົມ, ສາສະໜາ

ແລະ ອື່ນໆ... ແລະ ແມ່ນທັງໝົດການສະແດງອອກດ້ານຫົວຄຶດສະຕິປັນຍາ ສິລະ ປະກຳ ແລະ ອື່ນໆ ເຊິ່ງບົ່ງບອກເຖິງສັງຄົມໜຶ່ງໆ".

- ພິດຈະນານຸກຣົມນັກຮຽນ ສະບັບສົມບູຮນ໌ ຂອງ ຜສ. ວິຊຽນ ເກສປ ຣະທຸມ. ສຳນັກພິມ ພັດທະນາສຶກສາ, ກຣຸງເທພ ເວົ້າວ່າ :

"ວັດທະນະທັມ ແມ່ນສິ່ງທີ່ທຳໃຫ້ຈະເຣີນງອກງາມແກ່ໝູ່ຄະນະ".

- ວັດຈະນານຸກົມພາສາລາວ ໂດຍ ດຣ. ທອງຄຳ ອ່ອນມະນີສອນ 1992 ໃຫ້ທັດສະນະວ່າ : "ວັດທະນະທັມ ແມ່ນສິ່ງທີ່ເຮັດໃຫ້ເກີດ ຄວາມຈະເຣີນງອກ ງາມແກ່ໝູ່ຄະນະ ແກ່ສ່ວນລວມ ແກ່ປະເທດຊາດ".

- ວັດຈະນານຸກົມ *Larousse* (ສະບັບບູຮານ) ເວົ້າວ່າ : "ວັດທະນະທັມ ແມ່ນສິລະປະ, ວິທະຍາສາດ ແລະ ການສະຫຼຶດຈາກມັນສະໝອງຂອງຄົນ ເຊິ່ງ ຮຽກວ່າ ວັດທະນະທັມດ້ານສຸພະອັກສອນ".

ການສຶກສາເລົ່າຮຽນຮຽກວ່າ ວັດທະນະທັມດ້ານມັນສະໝອງສະຕິປັນຍາ. ອະຣິຍະທັມ ກໍ່ແມ່ນວັດທະນະທັມເຊັ່ນໂຕຢ່າງ:ວັດທະນະທັມເກັກ-ລາຕິນ.

- ວັດຈະນານຸກົມ *Larousse. Dictionnaire Français 1995. Les Editions Françaises INC* ເວົ້າວ່າ : "ວັດທະນະທັມ ແມ່ນທັງໝົດຄວາມຮູ້ທີ່ ໄດ້ຮັບ, ແມ່ນອະຣິຍະທັມ".

- ສາຣານຸກົມ *Grand Dictionnaire Encyclopédique Larousse* ປີ 1985 ເວົ້າໄວ້ວ່າ : ວັດທະນະທັມ ແມ່ນ :

1. "ການເພີ່ມພູນຄຸນສ້າງຫົວສະໝອງດ້ວຍການເຝິກຝົນທີ່ຫຼອມທາງ ດ້ານສະຕິປັນຍາ".

2. "ທັງໝົດຄວາມຮູ້ທີ່ປະກອບເຂົ້າໃນສະໝອງຂອງຄົນ ເຮັດໃຫ້ເກີດ ຄວາມປານິດໃນຣິສ ແລະ ສະໝອງຕ່ຳນິ ເຊິ່ງເພີ່ນຮຽກວ່າ : ມີວັດທະນະທັມ ດີ ແລະ ແໜ້ນໜາ".

3. "ຄວາມຮູ້ໃນຂະແໜງວິຊາສະເພາະໜຶ່ງໆ ແຕ່ກໍ່ກວ້າງຂວາງພໍ ເຊັ່ນ ໂຕຢ່າງທີ່ວ່າ : ຜູ້ນັ້ນມີວັດທະນະທັມ ການຢ່າກວ້າງຂວາງ".

4. "ທັງໝົດປາກົດການທາງວັດຖຸ ແລະ ອຸດົມການທີ່ບົ່ງບອກເຖິງກຸ່ມ

ເຜົ່າຊົນໜຶ່ງໆ ຫຼື ຊາດໜຶ່ງໆ ຫຼື ອາຣິຍະທັມໜຶ່ງໆ ເຊິ່ງແຕກຕ່າງກັບກຸ່ມເຜົ່າຊົນ ຫຼື ຊາດອື່ນໆ ເຊັ່ນໄຕຢ່າງ : ວັດທະນະທັມຕາເວັນຕົກເປັນຕົ້ນ".

5. ໃນກຸ່ມສັງຄົມໜຶ່ງໆ ມັນແມ່ນທັງໝົດເຄື່ອງບົ່ງບອກເຖິງອາດກິນຢູ່ ຂອງຜູ້ໃດຜູ້ໜຶ່ງເຊັ່ນ : (ພາສາປາກເວົ້າ ທ່າທີ ກິຣິຍາ ເຄື່ອງນຸ່ງຂອງຖື ແລະ ອື່ນໆ...) ທີ່ເຮັດໃຫ້ຄົນຜູ້ນັ້ນ ແຕກຕ່າງກັບຜູ້ອື່ນ ເຊິ່ງສັງກັດຊັ້ນຄົນຕ່າງກັນ ເຊັ່ນ ໄຕຢ່າງ : ວັດທະນະທັມຊົນຊັ້ນຂຸນນາງ ຫຼື ວັດທະນະທັມຊົນຊັ້ນກັມມະກອນ ເປັນຕົ້ນ.

- ສາຣານຸກົມ ສະບັບຣາຊບັນດິຕຍ໌ ສະຖານ (ໄທຍ໌) ສັພທ໌ ສັງຄົມວິທ ຍາໃຫ້ທັດສະນະໄວ້ວ່າ

"ວັດທະນະທັມ ເປັນຊື່ຣວມສຳຫຼັບແບບຢ່າງຂອງພຶດຕິກັມ ທັ້ງຫຼາຍທີ່ ໄດ້ມາທາງສັງຄົມ ແລະ ທີ່ຖ່າຍທອດກັນໄປທາງສັງຄົມ ໂດຍອາໄສຍ໌ ສັນຍະ ລັກສນ໌. ວັດທະນະທັມ ຈຶ່ງເປັນຊື່ ສຳຫຼັບ ສັມຣຶທທິຜົນທີ່ເດັ່ນຊັດທັງໝົດຂອງ ກຸ່ມມະນຸດ ຮວມສິ່ງທັ້ງຫຼາຍເທົ່ານີ້ ເຊັ່ນ : ພາສາ ການເຮັດເຄື່ອງມື ອຸດສາຫະ ກັມ ສິລະປະ ວິທະຍາສາດ ກົດໝາຍ ການປົກຄອງ ສິລທັມ ແລະ ສາສະໜາ ກັບຮວມເຖິງອຸປະກອນທີ່ເປັນວັດຖຸ ຫຼື ສິ່ງທີ່ປະດິດ ເຊິ່ງສະແດງຮູບແບບແຫ່ງ ສັມຣຶທທິຜົນ ທາງວັດທະນະທັມ ແລະ ທຳໃຫ້ລັກສະນະ ວັດທະນະທັມ ທາງປັນ ຍາສາມາດນຳຜົນເປັນປະໂຫຍດໃຊ້ສອຍໄດ້ ເຊັ່ນ : ອາຄານ ເຄື່ອງມື ເຄື່ອງຈັກ ກົນ ເຄື່ອງມືສື່ສານ ສິລະປະທາງວັດຖຸ ແລະ ອື່ນໆ".

- ພິດຈະນານຸກົມ *Dictionnaire Latin – Français.* ປີ 1928 ເວົ້າວ່າ :

" ວັດທະນະທັມ ແມ່ນການປູກຝັງຈິດວິນຍານ ແລະ ມັນສະໝອງ (ສະ ຕິປັນຍາ)".

- ທິດສະດີ *Marx-Engels* ໃຫ້ຄຳນິຍາມວັດທະນະທັມແບບສັງລວມ ໆ ໄວ້ວ່າ : "ວັດທະນະທັມ ແມ່ນທັມມະຊາດທີ່ສອງຂອງສັງຄົມ"

(ບົດອົບຮົມ 29. ຊຸດທີ 6 - ວຽງຈັນ 1986 : ວັດທະນະທັມສັງຄົມ).

- ພິດຈະນານຸກົມ ປັດຊະຍາ ພິມຈາກສຳນັກພິມໂປຣແກຣັສ ໃຫ້ທັດສະ ນະດັ່ງນີ້ :

"ວັດທະນະທັມ ແມ່ນທັງໝົດມູນຄ່າ" ດ້ານວັດຖຸ ແລະ ສະຕິປັນຍາ ເຊິ່ງປະດິດຄິດສ້າງຂຶ້ນມາ ໂດຍມວນມະນຸດໃນຂະບວນວິວັດແຫ່ງພຶດຕິກັມ ໃນຍຸກສັງຄົມ - ປະຫວັດສາດ ແລະ ເຊິ່ງຢັ້ງຢືນເຖິງລະດັບການຂະຫຍາຍຕົວທາງປະຫວັດຕິສາດຂອງສັງຄົມມະນຸດ.ໃນຄວາມໝາຍແຄບນັ້ນ ວັດທະນະທັມກວມເອົາແຕ່ສອງຂົງເຂດຄື :

1. ວັດທະນະທັມ ທາງວັດຖຸ ເຊັ່ນ : ເຕັກນິກ ລະດັບການຜະຫຼິດ ແລະ ສົມບັດທາງວັດຖຸ.

2. ວັດທະນະທັມທາງສະຕິປັນຍາ(ຈິດໃຈ) ເຊັ່ນ : ວິທະຍາສາດ ສິລະປະກັມ ວັນນະຄະດີ ປັດຊະຍາ ທັມມະຈະຣິຍາ ສາທາລະນະສຶກສາ ແລະ ອື່ນໆ...

ວັດທະນະທັມນັ້ນ ແມ່ນປາກົດການທາງປະຫວັດຕິສາດ ເຊິ່ງມີວິວັດທະນາການຕິດຕໍ່ກັນມາ ຕາມການສັບປ່ຽນໂຄງປະກອບສ້າງທາງສັງຄົມ".

- ທ່ານ *A.M. M'bow* ອະດີດຜູ້ອຳນວຍການໃຫຍ່ ອົງການອຸຍເນັດສະໂກ ໃຫ້ທັດສະນະໄວ້ວ່າ : "ວັດທະນະທັມນັ້ນປາກົດອອກມາ ໃນຖານະເປັນຜູ້ສັ່ງລວມສິ່ງທີ່ສັງຄົມໜຶ່ງໆໄດ້ປະດິດສ້າງຂຶ້ນມາຕາມການເວລາ ທັ້ງຍັງເປັນປັດໃຈຫົວກົນພື້ນຖານໃຫ້ແກ່ສິ່ງທີ່ສັງຄົມນັ້ນໆກໍ່ສ້າງສືບຕໍ່ໄປ ແລະ ເຊິ່ງມັນກຳລັງຫໍ່ຫຸ້ມ ຄວາມຮູ້ສຶກ ແລະ ຄວາມຄິດຝັນຮ່ວມກັນຂອງສະມາຊິກຂອງສັງຄົມ" *(Mexico 26 ກໍລະກົດ 1982).*

- ອົງການອຸຍເນັສໂກໄດ້ໃຫ້ນິຍາມ ແລະ ສະຫຼຸບຫຍໍ້ໆໄວ້ດັ່ງນີ້ :

1. "ວັດທະນະທັມນັ້ນ ແມ່ນທັງໝົດຈຸດທີ່ພົ້ນເດັ່ນດ້ານເອກະລັກ ດ້ານຫົວສະໝອງ ແລະ ວັດຖຸ ກໍຄືດ້ານສະຕິປັນຍາ ແລະ ຈິດໃຈ ທີ່ບົ່ງບອກເຖິງສັງຄົມໜຶ່ງໆ ຫຼື ກຸ່ມສັງຄົມໜຶ່ງໆ. ມັນຍັງກວມເອົາຂົງເຂດສິລະປະ ແລະ ສຸພະອັກສອນ ຂະນົບຊີວິດ ສິດທິຂັ້ນພື້ນຖານໃນການຄົງຕົວຂອງມະນຸດ ລະບົບມູນຄ່າ ຮີດຄອງປະເພນີ ແລະ ຄວາມເຊື່ອຖືທັ້ງປວງ"

(Culture Plus (UNESCO) No 12-13,1994- Culture et Developpement).

2. "ວັດທະນະທັມ ແມ່ນການເພີ່ມພູນຄຸນສ້າງຫົວຄິດ ມັນສະໝອງ

ແລະ ແມ່ນສະພາວະທີ່ມັນສະໝອງອຸດົມດ້ວຍຄວາມຮູ້ນາໆສາຮະຢ່າງກວ້າງຂວາງ. ມັນຍັງແມ່ນການປະດິດຄິດສ້າງທາງດ້ານວັນນະຄະດີ ສິລະປະກັມ ສະຕິປັນຍາ ຂອງວິງສາຄາມະຍາດມະນຸດກຸ່ມໜຶ່ງໆ".

3. "ວັດທະນະທັມນັ້ນ ທີ່ແທ້ແມ່ນຄຳດຽວກັນກັບຊີວິດ"

(UNESCO : La Culture et l'Avenir, 1985).

ບາງນິຍາມໃນຈຳນວນຫຼາຍຮ້ອຍບົດ ທີ່ໄດ້ຍົກອອກມາຂ້າງເທິງນັ້ນ ສະແດງໃຫ້ເຫັນວ່າ ຄວາມສຳນຶກໃນຄຳວ່າ ວັດທະນະທັມນັ້ນ ກວ້າງຂວາງທີ່ສຸດ ແລະ ຍັງອຸດົມດ້ວຍຄວາມໝາຍຫຼາຍທີ່ສຸດ ຈົນກະທັ່ງມີບາງນັກປາຊະໄດ້ໃຫ້ທັດສະນະວ່າ : "ວັດທະນະທັມນັ້ນ ແມ່ນນັບແຕ່ການລ້າງໜ້າຈົນເຖິງການຂຶ້ນຈັກກະວານ". ທັ້ງນີ້ກໍເພາະວ່າ ວັດທະນະທັມນັ້ນ ກວມເອົາທຸກຂົງເຂດຊີວິດຂອງມະນຸດ ແລະ ສັງຄົມນັ້ນເອງ. ດັ່ງນັ້ນ ທຸກໆທັດສະນະ ແລະ ທຸກໆນິຍາມທີ່ບັນດານັກປາຊະພະຍາຍາມໃຫ້ໄວ້ນັ້ນ ລ້ວນແຕ່ຖືກຕ້ອງທັ້ງນັ້ນ ພຽງແຕ່ບາງຄົນຕ່າງກໍເຫັນໄປຄົນລະແງ່ລະມຸມທໍ່ນັ້ນ. ພວກເຮົາອາດສາມາດສັງລວມເອົາທັດສະນະ ແລະ ນິຍາມເຫຼົ່ານີ້ເຂົ້າໃຫ້ຢູ່ໃນຂອບວິງອັນດຽວກັນໄດ້ດັ່ງນີ້ :

"ວັດທະນະທັມນັ້ນ ແມ່ນສິ່ງທີ່ມະນຸດໄດ້ປະດິດສ້າງຂຶ້ນມາ ໃນຂະບວນວິວັດທາງປະຫວັດສາດຂອງຕົນ ແລະ ຍັງຈະປະດິດສ້າງຕໍ່ໄປດ້ວຍພະລັງກາຍ ພະລັງສະຕິປັນຍາ ມັນສະໝອງ ແລະ ສະຕິອາລົມ ເພື່ອສ້າງສັນ ແລະ ພັດທະນາ ມະນຸດສະພາບຂອງຕົນເອງ ກໍຄືຂອງສັງຄົມໃຫ້ຈະເລີນ ກ້າວໜ້າ ແລະ ງອກງາມຂຶ້ນໄປເລື້ອຍໆ".

3. ການກຳເນີດວັດທະນະທັມ.

ວັດທະນະທັມນັ້ນ ກຳເນີດເກີດຂຶ້ນ ແລະຂະຫຍາຍຕົວ ເລີ່ມດ້ວຍການອອກແຮງງານ ດ້ວຍກຳລັງກາຍຂອງທະນີຄົນ " ທະນີຄົນທີ່ວ່າມານີ້ ໃຊ້ແຮງງານຂອງຕົນເກັບໝາກດູກລູກໄມ້ ຫາເຜືອກມັນ ແມງໄມ້ ຕະຫຼອດສັດນ້ຳສັດບົກຂະໜາດນ້ອຍມາເປັນອາຫານ. ແຮງງານຄື ພຶດຕິກັມທີ່ທະນີຄົນໃຊ້ ກະທົບໃສ່ວັດຖຸນັ້ນເອງ ທີ່ໄດ້ກໍ່ໃຫ້ເກີດຜົນສະທ້ອນ ຢ້ອນກັບມາໃສ່ອອກປອງ (ສະໝອງ)

ເຮັດໃຫ້ຂະຫຍາຍຕົວ ເກີດມີຄວາມສະຫຼາດຂຶ້ນ ພ້ອມໆກັບສາມາດຈິດກ່າຍ ຖ່າຍທອດເປັນ ບົດຮຽນປະດິດສ້າງ ເຄື່ອງມື ແລະ ປັບປຸງເຄື່ອງມືໃຫ້ດີກວ່າເກົ່າ ເພື່ອນຳໄປໃຊ້ກະທົບໃສ່ເປົ້າໝາຍ ເກີດມີປະສິດທິຜົນກວ່າເກົ່າ. ເຄື່ອງມືທຳອິດ ແລະ ຫົວຄິດປະດິດສ້າງທຳອິດ ທີ່ໄດ້ຮັບຈາກການກະທົບຂອງແຮງງານ ໃສ່ເປົ້າໝາຍທາງວັດຖຸນັ້ນເອງ ແມ່ນການເລີ່ມຕົ້ນຂອງການກຳເນີດ ວັດທະນະທັມທັ້ງ ຍັງແມ່ນການເລີ່ມຕົ້ນການປ່ຽນແປງ ຈາກລີງສະພາບມາເປັນມະນຸດສະພາບ ຂັ້ນຕົ້ນ ຂອງທະນີຄົນດ້ວຍ[III]. ພວກເຮົາສາມາດໃຫ້ຂໍ້ສະຫຼຸບໄດ້ວ່າ :

"ແຮງງານເປັນຜູ້ສ້າງໃຫ້ເກີດມີ ມະນຸດ ແລະ ວັດທະນະທັມ".

ການອອກແຮງງານຂອງມະນຸດບຸບພະການ ແລະ ການກະທົບ ຂອງ ສະໝອງໄດ້ກາຍເປັນວັດທະຈັກຢ່າງບໍ່ມີມື້ສັ້ງສຸດ ແລະ ວັດທະຈັກນັ້ນເອງ ແມ່ນຂະບວນວິວັດແຫ່ງການປະດິດຄິດສ້າງພາທະນະເຄື່ອງມື ແລະ ສະພາບ ແວດລ້ອມຂອງຕົນເອງໃຫ້ດີຂຶ້ນເລື້ອຍໆ.

ຂະບວນວິວັດອັນນີ້ ຮຽກວ່າ ຂະບວນວິວັດແຫ່ງການປະດິດສ້າງ ແລະ ຂະຫຍາຍວັດທະນະທັມ ທັງແມ່ນຂະບວນວິວັດແຫ່ງການພັດທະນາມະນຸດ ໃຫ້ ມີມະນຸດສະພາບຂຶ້ນໄປເລື້ອຍເຊິ່ງເພີ່ນຮຽກວ່າປະຫວັດສາດຂອງມະນຸດຊາດ. ຄົນເຮົາສ້າງວັດທະນະທັມແລະປະວັດສາດຂອງຕົນເອງຕະຫຼອດມາ ແລະ ຕະຫຼອດໄປ.

---

[2]. ທະນີຄົນຝ່າຍໃຕ້ - Austrolopitheques ພົບ 1924 ທີ່ອາຟຣິກາໃຕ້ ອາຍຸປະມານ 5 ລ້ານປີ

[3].- ມະນຸດທະນີ - Pithecanthrope ພົບທີ່ເກາະຢາວາ 1891

- ມະນຸດບຸບພະການ - Zinjanthrope ພົບທີ່ປະເທດຈີນ ປີ 1959 ມີອາຍຸລະຫວ່າງ 1.900 .000 - 1.600.000 ປີ

- ມະນຸດເນອ້ງແດນຕານ Neanderthal - ພົບທີ່ອາຟຣິກາໃຕ້ 1868

- ມະນຸດໂກຣ - ມາຍ໋ Cro-Magnon ພົບທີ່ ຝຣັ່ງ ປີ 1868

- ມະນຸດສະປາຍ - (Spy) ພົບທີ່ Numur 1887 (Plu – Dict Larousse P. 675)

ໜັງສືຜົນງານ ມາກ-ອັງແກນ (Marx - Engels) ວ່າດ້ວຍ "ການຄົ້ນຄວ້າປັດຊະຍາ" (ໜ້າ 48) ຂຽນໄວ້ວ່າ: " ຄົນເຮົາເປັນຜູ້ສ້າງປະຫວັດສາດຂອງຕົນເອງ"[IV] ເມື່ອເນັ້ນເຖິງຄວາມແຕກຕ່າງກັນລະຫວ່າງ ປະຫວັດສາດ ທັມມະຊາດ ແລະ ປະຫວັດສາດຂອງມະນຸດນັ້ນ ທ່ານ ອັງແກນໄດ້ຂຽນໄວ້ໃນໜັງສື: " ສັດຈະວິພາກແຫ່ງທັມມະຊາດ" ວ່າ: " ສັດທັ້ງຫຼາຍກໍມີປະຫວັດສາດຂອງເຂົາເອງ ນັ້ນຄື ປະຫວັດສາດແຫ່ງການສືບເຊື້ອພັນ ຂອງຜູ້ເປັນລູກຫຼານຂອງພວກເຂົາ ແລະ ວິວັດທະນາການຂອງພວກເຂົາ ຈົນເທົ້າເຖິງປັດຈຸບັນ. ແຕ່ວ່າ ປະຫວັດສາດຂອງເຂົານັ້ນ ເຂົາບໍ່ເປັນຜູ້ສ້າງເອງ".[V] ຄວາມແຕກຕ່າງລະຫວ່າງ ມະນຸດກັບສັດນັ້ນ ແມ່ນມະນຸດເປັນຜູ້ສ້າງປະຫວັດສາດຂອງຕົນເອງ ແຕ່ພ້ອມກັນນັ້ນມັນກໍແມ່ນຕົນຫຼໍ່ຫຼອມຈາກປະຫວັດສາດ *(Méjouiev-90).*

ຈາກກະບວນວິວັດທີ່ມະນຸດບຸບພະການໃຊ້ແຮງງານໃສ່ເປົ້າໝາຍວັດຖຸ ແລະ ພັດທະນາຕົນເອງ ກວ່າຈະມາເຖິງມະນຸດສະພາບທີ່ສົມບູນ ຫຼື ມະນຸດສະພາບປັດຈຸບັນ *(Homo-Sapiens)* ກໍນັບວ່າກິນເວລາເນີ່ນນານ.

"ມະນຸດເຮົາສ້າງວັດທະນະທັມ ຂະນະດຽວກັນນັ້ນ ວັດທະນະທັມກັບມາສ້າງໃຫ້ມະນຸດເຮົາ ໃຫ້ສະຫຼາດຂຶ້ນເລື້ອຍໆ".

ຈາກສະພາບທີ່ມະນຸດເຮົາອາໄສ ການຜະຫຼິດເຄື່ອງມືປະຖົມປະຖານ

"ສະພາບເງື່ອນໄຂເປັນຜູ້ສ້າງຄົນ ກໍຄືຄົນສ້າງສະພາບເງື່ອນໄຂນັ້ນເອງ"[VI]. ເພື່ອລ່າສັດ ຫາປາຫາກິນຕາມທັມມະຊາດ ພວກເຂົາກໍຄ່ອຍໆກ້າວເຂົ້າສູ່ການປູກຝັງ ລ້ຽງສັດ ການດຳລົງຢູ່ ເປັນກຸ່ມເປັນພວກ ເປັນກົກເລົ່າ ປະດິດພາສາປາກເວົ້າເພື່ອເປັນພາຫະນະສື່ສານໃນກຸ່ມຊົນຂອງພວກເຂົາດ້ວຍ.

---

4. – K.Marx. F. Engels ການຄົ້ນຄວ້າປັດສະຍາ ໜ້າ 48

5. - Engels : ສັດຈະວິພາກທັມມະຊາດ. ປາຣີ 1968, ໜ້າ 42

6. K. Marx, F. Engels : ອຸດົມການເຍຊະມັນ ໜ້າ 70

ການທີ່ພວກເຂົາເລີ່ມດຳລົງຢູ່ນຳກັນເປັນສັງຄົມ, ການທີ່ພວກເຂົາເລີ່ມມີການເຄື່ອນໄຫວ ໃນວົງສັງຄົມການທີ່ພວກເຂົາໃຊ້ພາສາປາກເວົ້າ ກໍຄືການຄົ້ນພົບໄຟ ແລະ ຕໍ່ມາແມ່ນການຄົ້ນພົບໂລຫະນັ້ນ ເຮັດໃຫ້ແຕ່ລະບັ້ນຂອງຍຸກກ້າວໜ້າໄປໄວ ແລະ ເຮັດໃຫ້ຈັງຫວະຄວາມຈະເລີນກ້າວທະວີຄູນ ໃນໄລຍະເວລານັບມື້ນັບສັ້ນຊັກໃຊ້.

4. ປະເພດຂອງວັດທະນະທຳ.

ເນື່ອງຈາກວ່າ ວັດທະນະທຳນັ້ນ ຄອບຄອມຂົງເຂດອັນກວ້າງຂວາງ ປະກອບມີຫຼາຍພາກ ຫຼາຍວິຊາ ດັ່ງນັ້ນ ການຈັດແບ່ງປະເພດວັດທະນະທຳ ຈຶ່ງພົບວ່າມີຫຼາຍຮູບຫຼາຍແບບ ເປັນຂົງເຂດເປັນໝວດ ເປັນກຸ່ມເປັນຂະແໜງ ເປັນປະເພດ ແລະ ເປັນຊິ້ນຍ່ອຍຕາມທາດແທ້ ເນື້ອຫາສາລະ ແລະ ຂະແໜງວິຊາ ຫຼື ຄວາມຕ້ອງການຂອງຜູ້ຈັດ. ດັ່ງນັ້ນ ພວກເຮົາຈຶ່ງພົບເຫັນສະເໜີວ່າ ມີຊິ້ຍ່ອຍ ຫຼື ຊິ້ນໃນຂົງເຂດວັດທະນະທຳເຊັ່ນໃຕຢ່າງ :

- ວັດທະນະທຳ ປະເພນີ ວັດທະນະທຳພື້ນບ້ານ ວັດທະນະທຳເຂົ້າ ວັດທະນະທຳນາ ວັດທະນະທຳໜອງ ວັດທະນະທຳນ້ອຍ ວັດທະນະທຳການຸ່ງຖື ວັດທະນະທຳພຸດ ວັດທະນະທຳທາງ ວັດຖຸ ວັດທະນະທຳທາງຈິດໃຈ ວັດທະນະທຳຍູລົບ ວັດທະນະທຳຕາເວັນອອກ ແລະ ອື່ນໆ ດັ່ງນີ້ເປັນຕົ້ນ.

ໃນດ້ານທິດສະດີເປັນຕົ້ນ ແມ່ນທິດສະດີຂອງສັງຄົມນິຍົມ ແລະ ໃນຄວາມ ໝາຍແຄບແລ້ວ ເພິ່ນຈັດວັດທະນະທຳເປັນສອງຂົງເຂດດ້ວຍກັນເຊັ່ນ : ວັດທະນະທຳທາງວັດຖຸ ແລະ ວັດທະນະທຳສະຕິປັນຍາ ຫຼື ຈິດໃຈ.

ກ. ວັດທະນະທຳທາງວັດຖຸນັ້ນປະກອບມີເຊັ່ນ :

- ເຕັກນິກ.
- ລະດັບການຜະຫຼິດ.
- ສົມບັດທາງວັດຖຸ.

ຂ. ວັດທະນະທຳທາງສະຕິປັນຍາ ຫຼື ຈິດໃຈນັ້ນປະກອບມີເຊັ່ນ :

- ວິທະຍາສາດ.
- ສິລະປະ.

- ວັນນະຄະດີ.
- ປັດຊະຍາ.
- ທັມມະຈະຣິຍາ.
- ສາທາລະນະສຶກສາ.
- ແລະ ອື່ນໆ...

ການຕັ້ງຊື່ຂົງເຂດວັດທະນະທັມທາງສະຕິປັນຍານັ້ນ ກໍຍັງມີຄວາມບໍ່ທັນເປັນເອກະພາບກັນ. ບາງບ່ອນ ເຊັ່ນ ອົງການອຸຍເນັດສະໂກ ກໍຕັ້ງຊື່ໃຫ້ວ່າ : ວັດທະນະທັມນິວັດຖຸ (ບໍ່ເປັນວັດຖຸ) ຫຼື ວັດທະນະທັມທີ່ບໍ່ເປັນຕົວຕົນ. ສະເພາະໃນລາວພວກເຮົາ ແຕ່ກ່ອນເພິ່ນມັກໃຊ້ຊື່ໃຫ້ສອງຂົງເຂດວັດທະນະທັມນີ້ວ່າ : ວັດທະນະທັມຮູບປະທັມ - ວັດທະນະທັມນາມະທັມ. ໃນສະໄໝຕໍ່ສູ້ກູ້ຊາດຈົນເຖິງປັດຈຸບັນ ອົງການທິດສະດີລາວຕັ້ງຊື່ໃສ່ຊື່ວ່າ : ວັດທະນະທັມທາງວັດຖຸ ແລະ ວັດທະນະທັມທາງຈິດໃຈ ຫຼື ວັດທະນະທັມດ້ານແນວຄຶດ.

ເວົ້າສະເພາະການຈັດວັດທະນະທັມອອກເປັນຂົງເຂດແຕກຕ່າງກັນນັ້ນ ຮູບແບບອັນແຜ່ຫຼາຍທີ່ສຸດສຳລັບລາວເຮົາ ແມ່ນຈັດເປັນ 4 ຂົງເຂດເຊັ່ນ :

ກ. ສະຫະວັດທະນະທັມ = ວັດທະນະທັມ ໃນການດຳລົງຊີວິດຮ່ວມພວກກັນ.

ຂ. ປັນຍາວັດທະນະທັມ = ການສຶກສາຫາຄວາມຮູ້ ວິທະຍາສາດ ວິທະຍາການ ວິຈິດຕະກັມ ວັນນະຄະດີ.

ຄ. ສະຕິວັດທະນະທັມ = ຮີດຄອງປະເພນີ ສິນທັມຄຳສອນ ແລະ ຄະຕິທັມ.

ງ. ມະໂຫລະສົບວັດທະນະທັມ = ການຄົບງັນ-ຮ້ອງຟ້ອນ ເສບນ້ອຍມະໂຫລີ-ການສະແດງດົນຕີ, ແປ້ນຫຼິ້ນພື້ນບ້ານ, ການປະລອງສີມື, ກິລາພື້ນບ້ານ.

(ຈະມີລາຍລະອຽດໃນພາກວັດທະນະທັມລາວ).

5. ບົດບາດຂອງວັດທະນະທັມ.

ເມື່ອພວກເຮົາເຫັນວ່າ ຄົນເປັນຜູ້ສ້າງວັດທະນະທັມ ດ້ວຍການໃຊ້ແຮງ

ງານທັງກາຍ ແລະ ມັນສະໜອງຂອງຕົນ ໃນຂະກັບວັດທະນະທັມ ກັບມາພັດ ທະນາຄົນໃຫ້ກ້າວໜ້າສະໜາດຫັກແໜມ ຂຶ້ນເລື້ອຍໆ ແລະ ຜະຫຼຶດວັດຖຸສິ່ງຂອງ ນັບມື້ນັບທັນສະໄໝຂຶ້ນຢ່າງບໍ່ຢຸດຢັ້ງນີ້ເອງ ພວກເຮົາຈຶ່ງສາມາດເຈົ້າໃຈຫາດແທ ຂອງມັນແບບງ່າຍໆໄດ້ວ່າ :

"ວັດທະນະທັມນັ້ນ ກວມທຸກຂົງເຂດຊີວິດຂອງຄົນຂອງສັງຄົມ ແລະ ຂອງທົ່ວພິພົບ".

"ວັດທະນະທັມນັ້ນ ແມ່ນຕົວປ່ຽນສະພາບ ຫຼື ພັດທະນາສະພາບຂອງ ຄົນ ແລະ ສະພາບແວດລ້ອມຂອງຄົນໃຫ້ກ້າວໜ້າ ມີຄວາມເປັນມະນຸດສະພາບ ສູງຂຶ້ນເລື້ອຍໆ".

"ວັດທະນະທັມນັ້ນ ແມ່ນເຈົ້າຕົວດັດສ້າງໂລກ ກໍຄືສັງຄົມມະນຸດໃຫ້ຈະ ເລີນ ດ້ວຍສະຕິປັນຍາ ດ້ວຍສະຕິຊຳປະຊັນຍະ ແລະ ມະນຸດສະທັມ ແລະ ດ້ວຍສະພາບແວດລ້ອມຮອບຕົວ ທີ່ອຳນວຍຄວາມສະດວກສະບາຍ ອຸດົມສົມ ບູນ ດ້ວຍຊັບພະຍາກອນ ທີ່ຈຳເປັນ ແລະ ສົມດຸນສຳລັບຄວາມຢູ່ດີມີສຸກຂອງຊີ ວິດຄົນ".

ວັດທະນະທັມ ດັດສ້າງໂລກ ຫຼືສັງຄົມນັ້ນ ໃນຕົວຈິງແລ້ວ ແມ່ນດັດສ້າງ ແບບວິທີການຜະຫຼຶດ ຫຼື ຮູບຖານການຜະຫຼຶດນັ້ນເອງ ອັນປະກອບດ້ວຍການພົວ ພັນການຜະຫຼຶດ ແລະ ກຳລັງການຜະຫຼຶດ.

5.1. ວັດທະນະທັມດັດສ້າງກຳລັງການຜະຫຼຶດ.

ກຳລັງການຜະຫຼຶດອັນປະກອບດ້ວຍຄົນທີ່ ເປັນປັດໃຈພື້ນຖານ ອຸປະ ກອນ ຫຼືເຄື່ອງມືການຜະຫຼຶດແລະເປົ້າໝາຍການຜະຫຼຶດ ເຊິ່ງທັງໝົດລ້ວນແລ້ວ ແຕ່ເປັນປັດໃຈສຳຄັນທີ່ຂາດບໍ່ໄດ້ນັ້ນ ໄດ້ຮັບການດັດສ້າງພັດທະນາ ເປັນເນື້ອງ ນິດຕະຫລອດມາ ຈາກມໍລະດົກອັນລ້ຳຄ່າທາງວັດທະນະທັນ ແລະ ການອອກ ແຮງງານຂອງຄົນ. ມໍລະດົກວັດທະນະທັມທີ່ພັດທະນາກຳລັງການຜິດກໍມີ ໂຕ ຢ່າງຈະແຈ້ງຄື :

- ຄົນອັນເປັນ ປັດໃຈຕົ້ນຕໍຂອງກຳລັງການຜະຫຼຶດໄດ້ຮັບການພັດທະນາ ໃຫ້ມີຄຸນນະພາບ ແລະ ຜະຫຼຶດສຳແຮງງານດ້ວຍ ການສຶກສາທາງທິດສະດີວິຊາ

ການ ວິທະຍາສາດ ເຕັກໂນໂລຍີ ການປະຕິບັດການຄົ້ນຄວ້າ ການຫຸ້ມຫໍ່ດ້ວຍ ການອັບຣົມບົ່ມເພາະ ການຍຶດຖືປະຕິບັດຮີດຄອງປະເພນີ ຄວາມເຊື່ອ ແລະ ການອອກແຮງງານ ການສົ່ງເສີມ ສິລະປະ ວັນນະຄະດີ ການພັກຜ່ອນ ມ່ວນຊື່ນ ລື່ນເລີງ ດັ່ງນີ້ເປັນຕົ້ນ.

- ອຸປະກອນ ຫຼື ເຄື່ອງມືການຜະຫຼິດນັບມື້ນັບໄດ້ຮັບການປັບປຸງໃຫ້ມີປະສິດທິພາບ ປະສິດທິຜົນຂຶ້ນເລື້ອຍໆ ໂດຍຄົນທີ່ໄດ້ຮັບການພັດທະນາທາງດ້ານ ຮ່າງກາຍ ແລະ ສະຕິປັນຍາສູງ ມີລະດັບວິທະຍາສາດ ວິທະຍາການສູງ.

- ເປົ້າໝາຍການຜະຫຼິດ ເຊິ່ງປະກອບດ້ວຍດິນດອນຕ່ອນຫຽ້ ຊັບໃນ ດິນສິນໃນນ້ຳ ຕະຫຼອດ ບັນຍາກາດສະພາບແວດລ້ອມຕ່າງໆ ໄດ້ຮັບການຂຸດ ຄົ້ນຈັດສັນປັບປຸງໃຫ້ອຸດົມສົມບູນ ມີປະສິດທິພາບດີຂຶ້ນ ແລະ ນຳປະໂຫຍດ ມາໃຫ້ຫຼາຍຂຶ້ນ ກໍຍ້ອນຄົນມີຄຸນນະພາບ ຫຼື ທີ່ໄດ້ຮັບການພັດທະນາບວກກັບ ເຄື່ອງມືທີ່ມີປະສິດທິພາບ ໃຊ້ເຕັກໂນໂລຍີສູງ.

5.2. ວັດທະນະທຳດັດສ້າງການພົວພັນການຜະຫຼິດ.

ພວກເຮົາຮູ້ແລ້ວວ່າໃນການພົວພັນການຜະຫຼິດນັ້ນ ປະກອບດ້ວຍປັດ ໄຈສຳຄັນເຊັ່ນ ລະບອບກຳມະສິດໃນພາຫະນະແລະອຸປະກອນການຜະຫຼິດ ແລະ ການແຈກຢາຍຊົມໃຊ້ຜົນຜະຫຼິດ.

ໃນທຸກໆລະບອບສັງຄົມທີ່ຜ່ານມາ ເລີ່ມຕັ້ງແຕ່ສັງຄົມຂ້າທາດມາເຖິງ ປັດຈຸບັນ ທຸກໆຂໍ້ຂັດແຍ່ງ ແລະ ຄວາມບໍ່ເປັນທຳທັ້ງຫຼາຍໃນສັງຄົມນັ້ນ ລ້ວນ ແລ້ວແຕ່ເກີດຈາກລະບອບກຳມະສິດ ແລະ ການແຈກຢາຍຊົມໃຊ້. ສັງຄົມຈະ ເປັນທັມຫຼືບໍ່ ຈະມີຄວາມສະເໝີພາບຫຼືບໍ່ ມັນນອນຢູ່ໃນລະບອບກຳມະສິດ ແລະ ລະບອບແຈກຢາຍຊົມໃຊ້ວ່າ ເປັນທັມ ຫຼື ສະເໝີພາບ ແລະ ສົມເຫດສົມ ຜົນຫຼືບໍ່. ປັດຊະຍາ ທິດສະດີ ການເມືອງ ນິຕິສາດ ການສຶກສາ ສິລະປະກຳ ວັນ ນະກັມ ຮີດຄອງປະເພນີ ຄວາມເຊື່ອຖື ກະທັ່ງສາດສະໜາ... ໄດ້ຄ່ອຍໆຈຳກັດ ຫຼື ລົບລ້າງສິ່ງທີ່ຫຼົ້ໄປເທື່ອລະເລັກເທື່ອລະນ້ອຍ ແລ້ວດັດສ້າງ ແລະ ພັດທະ ນາມັນ ນຳເອົາສິ່ງທີ່ຍອດຍິ່ງເຂົ້າມາແທນທີ່ ເຮັດໃຫ້ອັນເກົ່າທີ່ຫຼ້າຫຼັງ ງົມງວາຍ ເອົາລັດເອົາປຽບ ບໍ່ເປັນທັມຄ່ອຍໆໝົດໄປ ເຮັດໃຫ້ອັນດີກວ່າເກົ່າປຽບໃສ່ອັນ

ກ່ອນ ທີ່ຫ້າຫັງ ເຂົ້າມາແທນທີ່ ດ່ັງນີ້ຕະຫຼອດໄປ.

6. ວັດທະນະທັມມີລັກສະນະຊົນຊັ້ນ.

ມະນຸດພວກເຮົາ ເມື່ອພົ້ນຈາກສັງຄົມໃນລະບອບສະຫະຊີບປະຖິ້ມປູ ຮານແລ້ວ ກໍຕົກຢູ່ໃນສັງຄົມທີ່ມີຊົນຊັ້ນຕິດຕໍ່ນໍ່ເນື່ອງກັນມາ. ວັດທະນະທັມ ອັນ ມີພາລະບົດບາດດັດສ້າງໂລກ ດັດສ້າງສັງຄົມ ກໍຖືກໃຊ້ເປັນເຄ່ື່ອງມືຂອງຊົນຊັ້ນ ປົກຄອງ ຫຼື ຊົນຊັ້ນຊຸດຮີດ ແລະ ຊົນຊັ້ນທີ່ຖືກປົກຄອງ ຫຼື ຊົນຊັ້ນທີ່ຖືກຊຸດຮີດ. ພວກເຮົາສາມາດເຫັນໄດ້ວ່າ : "ໃນສັງຄົມທີ່ມີຊົນຊັ້ນນັ້ນ ວັດທະນະທັມກໍມີຊົນ ຊັ້ນດ້ວຍ". ໝາຍຄວາມວ່າມັນໄດ້ເກີດມີສອງຮູບແບບຂອງວັດທະນະທັມເຊ່ັ່ນ : ວັດທະນະທັມທີ່ຮັບໃຊ້ຜົນປະໂຫຍດຂອງຊົນຊັ້ນປົກຄອງ ຊົນຊັ້ນກົດຂ່ີຊຸດຮີດ ເຊ່ິງຢູ່ໃນຝ່າຍອະທັມ ແລະ ວັດທະນະທັມທີ່ຮັບໃຊ້ຜົນປະໂຫຍດຂອງຜູ້ຖືກປົກ ຄອງ ຖືກຊຸດຮີດ ເຊ່ິງຢູ່ໃນຝ່າຍເປັນທັມ. ສອງຮູບແບບວັດທະນະທັມນ້ີ ຂັດແຍ່ງ ເປັນປໍລະປັກກັນ ແລະ ຕໍ່ສູ້ປັກປ່ໍາກັນຕະຫຼອດມາ ມັນເປັນການຕໍ່ສູ້ລະຫວ່າງ ຊົນຊັ້ນທີ່ເປັນປໍລະປັກກັນ ລະຫວ່າງຊົນຊັ້ນທີ່ຖືກກົດຂ່ີຊຸດຮີດກັບຊົນຊັ້ນທີ່ກົດຂ່ີ ຊຸດຮີດ ລະຫວ່າງຝ່າຍເປັນທັມທີ່ຖືກກົດໜ່ວງ ແລະ ຝ່າຍບໍ່ເປັນທັມ ເຊ່ິງເອົາ ປຽບເອົາລັດ ກົດຂ່ີຊຸດຮີດ ແລະ ກົດໜ່ວງມະນຸດສະທັມ ແລະ ຄວາມຈະເລີນ ຂອງສັງຄົມ.

ໃນປະຫວັດສາດແຫ່ງການຕໍ່ສູ້ເອົາເປັນເອົາຕາຍລະຫວ່າງຊົນຊັ້ນ ແລະ ຊາດທີ່ຖືກກົດຂ່ີຊຸດຮີດ ເອົາລັດເອົາປຽບ ຕ້ານກັບຊົນຊັ້ນ ແລະ ຊາດທີ່ກົດຂ່ີຊຸດ ຮີດ ເອົາລັດເອົາປຽບ ໃນສັງຄົມມະນຸດສະ ໂລກນັ້ນ ສັງຄົມມະນຸດ ໄດ້ປະສົບ ກັບຄວາມຫາຍະນະ ແລະ ຄວາມເສ່ັງສະຫຼະຈົນບໍ່ສາມາດຄະນານັບໄດ້ ຈົນມີ ຂະບວນການ ທ້ັງຂະບວນການ ຕະຫຼອດຈົນຊາດທ້ັງຊາດກໍຖືກລ້ົ້ງຜານດັບ ມອດໄປ ແຕ່ຂະບວນການຕໍ່ສູ້ໃໝ່ກໍເກີດຂ້ຶ້ນຂະຫຍາຍຕົວໄປ ເປັນປັດໃຈສ່ໍາຄັນ ຊຸກດັນ ໃຫ້ມີຄວາມກ້າວໜ້າທາງດ້ານວິທະຍາສາດ ວິທະຍາການ ແລະ ວັດທະ ນະທັມດ້ານອ່ືນໆ ກໍຄືເຮັດໃຫ້ສັງຄົມມະນຸດຊາດກ້າວເດ່ີນໜ້າຕ່ໍໆໄປ.

ໃນສອງຂ້ົງເຂດວັດທະນະທັມ ເຊ່ັ່ນ ວັດທະນະທັມທາງວັດຖຸ ແລະ ວັດ

ທະນະທັນທາງຈິດໃຈ ຫຼື ສະຕິປັນຍານັ້ນ ວັດທະນະທັນທາງວັດຖຸເຊັ່ນ ອຸປະ ກອນເຕັກນິກ ຜົນງານການຄົ້ນພົບທາງວິທະຍາສາດ ແລະ ເຕັກໂນໂລຢີ ວັດຖຸ ອຸປະກອນເຄື່ອງໃຊ້... ຕ່າງໆເຫຼົ່ານີ້ ນັບໄດ້ວ່າບໍ່ມີສັກສະນະທາງຊົນຊັ້ນ ແຕ່ມັນ ເປັນພຽງເຄື່ອງມືຮັບໃຊ້ຊົນຊັ້ນທໍ່ນັ້ນ ໂຕຢ່າງ : ເຄທະສະຖານ ຄາດໄຖ ລິດລາ ພາຫະນະ ວິທະຍຸ ໂທລະພາບ ໂມງ ປາກກາ ... ແລະ ອື່ນໆດັ່ງນີ້ເປັນຕົ້ນ.

ກົງກັນຂ້າມກັບວັດທະນະທັນທາງຈິດໃຈ ເຊັ່ນ : ສິລະປະ-ວັນນະຄະດີ ຮີດຄອງປະເພນີ ຄວາມເຊື່ອສິນທັນຄຳສອນ ການສຶກສາ...ອື່ນໆດັ່ງນີ້ເປັນຕົ້ນ ນັບວ່າມີລັກສະນະຊົນຊັ້ນ ໂຕຢ່າງ :

- ດ້ານສິລະປະ ກໍມີທາງດ້ານວິຈິດຕະກຳ ປະຕິມາກຳ ຮູບແຕ້ມຈິດຕະ ກຳ. ມັນຍັງມີສິລະປະເວທີເຊັ່ນ : ເພັງຮ້ອງ ດົນຕີ ລະຄອນ ແລະ ຮູບການສະ ແດງອື່ນໆ ເຊິ່ງລ້ວນແຕ່ສະແດງອອກເຊິ່ງເນື້ອໃນ ແລະ ຈິດໃຈຂອງຊົນຊັ້ນຢ່າງ ຫຼີກລ້ຽງບໍ່ໄດ້.

- ໃນດ້ານວັນນະຄະດີ ກໍມີວັນນະກຳການເມືອງ ທິດສະດີ ກົດໝາຍ ປະ ຫວັດສາດ ການ ກອນກະວີ ນະວະນິຍາຍ ນິທານຊວນຫົວ... ອື່ນໆ ກໍລ້ວນແລ້ວແຕ່ສະແດງອອກເຊິ່ງຈິດໃຈເຂົ້າຂ້າງຊົນຊັ້ນຝ່າຍໃດຝ່າຍໜຶ່ງ.

ສິລະປະ ແລະ ວັນນະກຳຂອງຊົນຊັ້ນທີ່ຖືກກົດຂີ່ ຊົນຊັ້ນທີ່ສະແຫວງຫາ ຄວາມກ້າວໜ້າ ຈະມີລັກສະນະຕໍ່ສູ້ເພື່ອປົດປ່ອຍຕົນເອງ ອອກຈາກການເປັນທາດ ເປັນຂ້ອຍຂ້າມ້າຕ່າງ ແລະ ການກົດຂີ່ຊຸດຮີດຂອງຊົນຊັ້ນຜູ້ກົດຂີ່ ຕໍ່ສູ້ເພື່ອປົກ ປ້ອງສິດຜົນປະໂຫຍດຂອງຊົນຊັ້ນຊາວຜູ້ອອກແຮງງານ ຕໍ່ ສູ້ເພື່ອຄວາມເປັນ ທັນໃນສັງຄົມ ເພື່ອສັນຕິພາບ ມິດຕະພາບ ພະລາດອນພາບ ແລະ ຄວາມກ້າວ ໜ້າຂອງມວນມະນຸດ. ກົງກັນຂ້າມກັບສິລະປະ ວັນນະກຳ ຂອງຊົນຊັ້ນທີ່ກົດຂີ່ ຈະເສີມສ້າງຄວາມເບື່ອເມົາ ງົມງວາຍຫຼອກລວງ ທັບຖົມໃສ່ຮ້າຍຊົນຊັ້ນກົງກັນ ຂ້າມ ພິກປົ້ນຄວາມຈິງ ແລະ ຊວນເຊື່ອໄປໃນທາງທີ່ບໍ່ຖືກຕ້ອງ. ພ້ອມໆກັນນັ້ນ ມັນກໍອວດຄວາມດີ ຄວາມເດັ່ນຂອງຊົນຊັ້ນຂອງເຂົາ ເພື່ອຫຼອກລວງປະຊາ ຊົນຜູ້ອອກແຮງງານໃຫ້ຫຼົງໃຫຼຮັບໃຊ້ພວກເຂົາ.

7. ວັດທະນະທັມແມ່ນວັດຖຸທີ່ຄົງຢູ່ພາຍໃຕ້ກົດເກນຂະຫຍາຍຢ່າງບໍ່ຢຸດຢັ້ງ.

ເປັນອັນຈະແຈ້ງວ່າມະນຸດພວກເຮົາ ອາໄສສະພາບແວດລ້ອມທັມມະຊາດ ແລະ ສະພາບແວດລ້ອມວັດທະນະທັມ ເປັນທັມມະຊາດທີ່ສອງທີ່ປະດິດຂຶ້ນດ້ວຍແຮງງານມະນຸດເອງ ເພື່ອດຳລົງຊີວິດຢູ່ ແລະ ຂະຫຍາຍຕົວ. ໂດຍທັມມະຊາດແລ້ວ ເມື່ອມະນຸດມີການຂະຫຍາຍຕົວດ້ວຍຈຳນວນປະຊາກອນ ທັມມະຊາດທີ່ຫນຶ່ງ ມັກຈະບີກແຫ້ງສະເໝີ ດັ່ງນັ້ນ ຈຶ່ງຈຳເປັນພັດທະນາທັມມະຊາດ ທີ່ສອງເຂົ້າມາແທນ ເພື່ອຄວາມຢູ່ລອດ ແລະ ການຂະຫຍາຍຕົວຂອງຕົນເອງຕໍ່ໄປ. ຫາກວັດທະນະທັມ ຫຼື ທັມມະຊາດທີ່ສອງບໍ່ຂະຫຍາຍຕົວ ທັມມະຊາດທີ່ຫນຶ່ງ ທີ່ເຫຼືອຢູ່ກໍບໍ່ສາມາດຮັບພາລະລ້ຽງດູ ຈຳນວນປະຊາກອນໄດ້ ແລະ ໃນທີ່ສຸດກໍບີກແຫ້ງເປົ່າແປນ ເຊິ່ງກໍໝາຍເຖິງເວລາອະວະສານຂອງສັງຄົມມະນຸດເຊັ່ນກັນ. ນີ້ເອງ ທີ່ເປັນກົດເກນພື້ນຖານທີ່ຈຳເປັນແຫ່ງການຂະຫຍາຍຕົວ ຂອງວັດທະນະທັມ. ການຂະຫຍາຍຕົວຂອງວັດທະນະທັມໃນທີ່ສຸດແລ້ວ ກໍເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການດ້ານປັດໄຈທີ່ຈຳເປັນ ເພື່ອການດຳລົງຊີວິດ ແລະ ການຂະຫຍາຍຕົວຂອງສັງຄົມມະນຸດນັ້ນເອງ. ຫາກວັດທະນະທັມ ກໍຄືວັດຖຸໜຶ່ງໆບໍ່ຂະຫຍາຍຕົວແລ້ວ ຕາມທິດສະດີກ່າວໄວ້ວ່າ ວັດຖຸນັ້ນໆຕ້ອງອະວະສານດ້ວຍຕົວຂອງມັນເອງ.

ອີກປະການໜຶ່ງ ໃນຂະນະທີ່ໂຄງລ່າງຂອງສັງຄົມ ຫຼື ກຳລັງການຜະຫຼິດຕ້ອງການຂະຫຍາຍຕົວ ແລະ ກຳລັງຂະຫຍາຍຕົວກ້າວໄປໜ້າ ວັດທະນະທັມເຊິ່ງເປັນພາກສ່ວນໂຄງບົນຂອງສັງຄົມ ຫຼື ການພົວພັນການຜະຫຼິດນັ້ນ ຕ້ອງຂະຫຍາຍຕົວສອດຄ່ອງໄປນຳດ້ວຍ ເຊິ່ງຖ້າຫາກບໍ່ສອດຄ່ອງ ຫຼື ບໍ່ຂະຫຍາຍຕົວແລ້ວໂຄງບົນທີ່ຫ້າສະໄໝນັ້ນຈະສະລາຍຕົວຢ່າງແນ່ນອນ ເຊິ່ງເພີ່ນຮຽກວ່າກຳລັງການ ຜະຫຼິດມ້າງການພົວພັນການຜະຫຼິດ ຫຼື ຈະເວົ້າວ່າ ໂຄງລ່າງມ້າງໂຄງບົນທີ່ບໍ່ສອດຄ່ອງກໍວ່າໄດ້.

ໃນສະພາວະທີ່ສັງຄົມໜຶ່ງໆ ມີຈຳນວນປະຊາກອນບໍ່ຫຼາຍ ແຕ່ຊຸ້ພັດມີ

ສະພາບສິ່ງແວດລ້ອມ ແລະ ຊັບພະຍາກອນທັມມະຊາດອຸດົມສົມບູນນັ້ນ ວັດທະນະທັມ ຈະຂະຫຍາຍຕົວໄປຕາມກົດເກນປົກກະຕິ ສະໝ່ຳສະເໝີ. ກົງກັນຂ້າມ ຫາກສັງຄົມໜຶ່ງໆມີປະຊາກອນໜາຍ ແຕ່ພ້ອມກັນນັ້ນພັດມີຊັບພະຍາກອນບົກແຫ້ງ ຫຼື ຈຳກັດ ວັດທະນະທັມໃນສັງຄົມນັ້ນໆ ມັກຈະຂະຫຍາຍຕົວແຮງ ບໍ່ວ່າ ວັດທະນະທັມ ໃນສ່ວນທີ່ເປັນວັດຖຸກໍຄືສ່ວນທີ່ເປັນຈິດໃຈ ເພື່ອຈະສ້າງສິ່ງແວດລ້ອມທາງຊັບພະຍາກອນໃໝ່ໆເຂົ້າມາແທນທີ່ ຫຼື ໃຫ້ພຽງພໍກັບຄວາມ ຕ້ອງການຂອງການດຳລົງຊີວິດ ແລະ ຄວາມສະດວກສະບາຍຂອງຄົນໃນສັງຄົມນັ້ນເອງ.

ແຕ່ລະຫວ່າງວັດທະນະທັມທາງວັດຖຸ ແລະ ວັດທະນະທັມທາງຈິດໃຈ ນັ້ນ ເຖິງແມ່ນວ່າ ສອງພາກສ່ວນນີ້ມີຄວາມສະໜິດຕິດພັນກັນ ເກື້ອກູນ ແລະ ເພື່ອແພ່ກັນຢ່າງປາສະຈາກກັນບໍ່ໄດ້ ເໝືອນດັ່ງຜິວກັບເນື້ອໃນຄອບຄົວດຽວກັນ ກໍຕາມ ຄວາມແຕກຕ່າງກັນໃນການລະເທສະ ແລະ ຈັງຫວະຄວາມຕ້ອງການໃນ ການຂະຫຍາຍຕົວ ກໍປາກົດສະແດງອອກດັ່ງນີ້ :

- ເວລາໃດສັງຄົມໜຶ່ງໆຕົກຢູ່ໃນສະພາວະທາຍແບບ ຂາດແຄນ ຫຼື ທຸກຍາກ ຄວາມຕ້ອງການ ຫຼື ຄວາມຈຳເປັນໃນການພັດທະນາ ຈະໜັກໄປໃນທາງວັດທະນະທັມທີ່ເປັນວັດຖຸ ເພື່ອຄວາມຢູ່ລອດຂອງສັງຄົມເປັນທີ່ໜຶ່ງ.
- ແຕ່ເວລາໃດ ເມື່ອສັງຄົມຫາກມີຢູ່ມີກິນພຽງພໍ ຊີວິດຄວາມເປັນຢູ່ດີຂຶ້ນແລ້ວ ເວລານັ້ນ ຄວາມຕ້ອງການທາງດ້ານວັດທະນະທັມທາງຈິດໃຈກໍເພີ່ມຂຶ້ນຫຼາຍເທົ່າ

ປາກົດການແບບທັມມະຊາດອັນນີ້ ສາມາດເຂົ້າໃຈໄດ້ດ້ວຍຂໍ້ສົມທຽບແບບງ່າຍ ດາຍດັ່ງນີ້ :

"ຄົນເຮົາຕ້ອງການບໍລິໂພກອາຫານວັນລະ 3 ຄາບທ່ໍນັ້ນ ແລະ ບໍລິໂພກ ອາຫານເຍື່ອງຕ່າງໆ ຜັດປ່ຽນກັນວຽນໄປວຽນມາບໍ່ເກີນ 50 ຊະນິດຕະຫຼອດຊົ່ວ ອາຍຸຄົນ. ຂະນະດຽວກັນນັ້ນ ຄົນເຮົາມັກຟັງເພງ ຫຼື ຮັບລຳ ມື້ໜຶ່ງໆນັບຄັ້ງບໍ່ໄດ້ ບໍ່ຈຳກັດຈຳນວນ ບໍ່ຈຳກັດແບບ. ແຕ່ລະໄວ ແຕ່ລະການລະເທສະ ແຕ່ລະສະພາ ວະສະຕິອາລົມ ກໍມັກບໍ່ຄືກັນ ແລະ ຈຳນວນບໍ່ສ້ຽງສຸດ. ດັ່ງນັ້ນ ຖ້າຈະຄຶດໄລ່ ຄວາມຕ້ອງການຂອງຕ່າງໄວ ຕ່າງສະພາວະອາລົມ ຕ່າງການລະເທສະ ແລະ

ຄວາມບໍ່ມີຂອບເຂດຈຳກັດອອກ ເປັນຈຳນວນ ແລະ ປະເພດ ອາຫານຈິດໃຈປະ ເພດນີ້ນັ້ນແລ້ວ ກໍນັບວ່າ ເປັນຈຳນວນບໍ່ອາດຈະຄະນານັບໃຫ້ຖ້ວນໄດ້".

ຈາກຂໍ້ພິສູດແບບງ່າຍໆນີ້ ມັນຕັ້ງບັນຫາໃຫ້ພວກເຮົາຮູ້ວ່າ ເມື່ອສັງຄົມ ກ້າວຂຶ້ນສູ່ຂັ້ນຕອນອັນແນ່ນອນແຫ່ງການຂະຫຍາຍຕົວແລ້ວ ວັດທະນະທັມ ບໍ່ ພຽງແຕ່ຕ້ອງຂະຫຍາຍຕົວແບບຕາມເປັນຕາມໄປທໍ່ນັ້ນ ແຕ່ຕ້ອງຕອບສະໜອງ ກັບຄວາມຕ້ອງການອັນມະຫາສານ ຂອງການບໍລິໂພກຂອງສັງຄົມໃຫ້ໄດ້ນຳ ດ້ວຍ.

ບັນຫາກໍຍັງຕາມມາອີກວ່າ ເມື່ອວັດທະນະທັມບໍ່ສາມາດສະໜອງ ຄວາມຕ້ອງການຂອງສັງຄົມໄດ້ແລ້ວ ສັງຄົມກໍຈະຂາດອາຫານວັດທະນະທັມ ຫຼື ອາຫານທີ່ມີຫາດວັດທະນະທັມມາບໍລິໂພກ ແລະ ເມື່ອເຖິງເວລານັ້ນແລ້ວ ສັງ ຄົມກໍຈະບໍລິໂພກ "ອາຫານວັດທະນະທັມ" ທີ່ບໍ່ມີວັດທະນະທັມ ຫຼືບໍ່ມີຄຸນ ຫາດວັດທະນະທັມເລີຍ. ແລະ ເຖິງເວລານັ້ນແລ້ວ "ອາຫານວັດທະນະທັມ" ທີ່ບໍ່ ມີວັດທະນະທັມ ຫຼື ທີ່ເບື່ອເມົາໃຫ້ເຊື່ອມເສັ່ງນັ້ນ ກໍຈະຖືກປ້ອນ ເພື່ອການບໍລິ ໂພກແກ່ສັງຄົມທີ່ກຳລັງ "ຫິວ" ໂດຍສັງຄົມພາຍນອກ ຫຼື ສັງຄົມອື່ນ.

ສະຫລຸບຄວາມແລ້ວ ການຂະຫຍາຍຕົວທາງວັດທະນະທັມຂອງສັງຄົມ ໜຶ່ງໆ ຫຼື ຂອງຊາດໜຶ່ງໆ ດ້ວຍເອກະລັກຂອງຕົນເອງນັ້ນ ບໍ່ພຽງແຕ່ເປັນກົດເກນ ພາວະວິໄສທໍ່ນັ້ນ ແຕ່ຍັງແມ່ນຄວາມຈຳເປັນທີ່ເປັນຕາຍຂອງສັງຄົມນັ້ນໆອີກ ດ້ວຍ.

ພາກ VII

ວັດທະນະທັມລາວ

ຊາດລາວເປັນຊາດທີ່ເກົ່າແກ່ຊາດໜຶ່ງ ປະກອບດ້ວຍຫຼາຍເຜົ່າພັນ ເຊິ່ງ ດຳລົງຢູ່ໃນດິນແດນທີ່ເປັນແຫຼ່ງອະຣິຍະທັມໃຫຍ່ແຫຼ່ງໜຶ່ງຂອງໂລກ ນັ້ນຄືອ່າງ ແມ່ນ້ຳຂອງ ທັ້ງເປັນທາງຄົບທີ່ສຳຄັນຂອງກະແສວັດທະນະທັມ ລະຫວ່າງພາກ ຕາເວັນອອກ ແລະ ພາກຕາເວັນຕົກ ເປັນຕົ້ນແມ່ນ ບູຮະພາທະວີບ (ອາຊີບູຮະ ພາ) ແລະ ຊົມພູທະວີບ (ອາຊີໃຕ້ ຫຼື ອິນເດັ່ງ) ຊາດລາວມີພື້ນຖານວັດທະນະ ທັມອັນເກົ່າແກ່ເປັນຂອງຕົນເອງ ໂດຍສືບທອດມາຕັ້ງແຕ່ສະໄໝອາມາຈັກ ໜອງແສ ອາມ່າຈັກອ້າຍລາວ ອາມາຈັກກແຖມ ຈົນມາເຖິງອາມາຈັກລ້ານຊ້າງ ໄລຍະຫັ້ງ. ວັດທະນະທັມພື້ນຖານ ເຊິ່ງສະແດງຄອອກໃນພາສາປາກເວົ້າ ອາດ ຢູ່ກິນ ການຄົບຄ້າສະມາຄົມ ອາດຄຶດອ່ານ ຂະນົບປະເພນີ ສິລະປະຕົບແຕ່ງ ນຸ່ງ ຖື ແລະ ຮ້ອງລຳທຳເພັ້ງ... ຕ່າງໆເຫຼົ່ານັ້ນ ໄດ້ຮັບຄວາມເພີ່ມເຕີມເສີມຕໍ່ ຈາກ ມໍຣະດົກວັດທະນະທັມຂອງເຜົ່າຕ່າງໆທີ່ດຳລົງຢູ່ຮ່ວມກັນ ພາຍໃນຊາດສະໄໝ ລ້ານຊ້າງ ແລະ ຈາກການແລກປ່ຽນ ແລະ ຮັບເອົາວັດທະນະທັມຂອງບັນດາ ເພື່ອນບ້ານໃຫ້ຄ່ຽງເຊິ່ງກັນ ແລະ ກັນ. ກະແສວັດທະນະທັມຂອງໂລກ ທີ່ມີບົດ ບາດສຳຄັນຕໍ່ການພັດທະນາວັດທະນະທັມລາວ ໃນໄລຍະປະຫວັດສາດນີ້ ກໍໄດ້ ແກ່ພຸດທະວັດທະນະທັມທີ່ມາຈາກອິນເດັ່ງ. ພຸດທະວັດທະນະທັມນີ້ເອງ ທີ່ນຳ ເອົາຄວາມປ່ຽນແປງວັດທະນະທັມວິຖີດັ້ງເດີມຂອງລາວ ໃຫ້ກາຍມາເປັນວັດທະ ນະທັມສະໄໝໃໝ່ຂອງລາວປັດຈຸບັນ. ກະແສສຸດທ້າຍຂອງວັດທະນະທັມທີ່ເຮັດ ໃຫ້ສັງຄົມລາວຍັບເຂົ້າໄປສູ່ລັກສະນະສາກົນເລື້ອຍໆນັ້ນແມ່ນກະແສວັດທະນະ ທັມຂອງສາກົນ ເຊິ່ງທັ້ງໝົດນີ້ເປັນປັດໄຈຊ່ອຍສ້າງເຄາະວັດທະນະທັມລາວໃຫ້ຢູ່ ໃນສະພາບທຸກມື້ນີ້ ຫຼື ໃຫ້ຢູ່ໃນເອກະລັກສະເພາະຂອງລາວດັ່ງທຸກມື້ນີ້.

ເອກະລັກສະເພາະຂອງພື້ນຖານວັດທະນະທັມລາວ

1/. ດ້ານການດຳລົງຊີວິດ:

ຊາວລາວຢູ່ຮ່ວມກັນເປັນສັງຄົມຮ່ວມພວກຮ່ວມກຸ່ມ ເປັນບ້ານເປັນເມືອງ ຢູ່ເຮືອນຮ້ານເປັນສ່ວນໃຫຍ່ ອາໄສການລ້ຽງສັດປູກຝັງ ເປັນຕົ້ນແມ່ນການປູກເຂົ້າໃນໄຮ່ນາເປັນພື້ນຖານ ການລ້ຽງຊີບ ແລະ ອາໄສແມ່ນຖ້ຳເປັນຈຸດໜັກ ໃນການຕິດຕໍ່ໄປມາຫາສູ່ກັນ.

2/. ດ້ານປັດຊະຍາຊີວິດ:

ຊາວລາວເອົາພຸດທະປັດຊະຍາ ຫຼື ຫຼັກທັມມະມາເປັນພື້ນຖານດ້ານແນວຄຶດ ແລະ ຄອງປະພຶດຄືການດັບກິເລດ ຄວາມອະໂທສຶກຳ ຄວາມເມດຕາກະຣຸນາ ການກະທຳຄວາມດີ ໄດ້ດີ ກະທຳຄວາມຊື່ວໄດ້ຊື່ວ ແລະ ອື່ນໆ ຈົ່ງພາໄປເຖິງສະພາບ ທີ່ຄົນລາວການເປັນຄົນສັນຕິ ມັກສະຫງົບ ບໍ່ທະເຍີທະຍານ ມັກພະລາດອນພາບສູ້ແຂກຄົນ ມີເມດຕາຈິດ ແລະ ຄວາມຮັກແພງກັນສູງ.

3/. ດ້ານຮີດຄອງ:

ຊາວລາວປະຕິບັດຮີດ 12 ຄອງ 14 ແລະ ຮີດຕ່າງໆໃນການພົວພັນກັນໃນສັງຄົມ.

4/. ສີສັນວັດທະນະທັມ-ສັງຄົມ:

ສັງຄົມລາວແມ່ນສັງຄົມນາໆເຜົ່າ ຈົ່ງມີຫຼາກຫຼາຍດ້ານສີສັນວັດທະນະທັມ.

5/. ການຕົບແຕ່ງ ນຸ່ງຖື:

ຊາວລາວນັບວ່າເປັນນັກວິຈິດຕະກຳການນຸ່ງຖື ເຊິ່ງໃຊ້ລວດລາຍທາງສິລະປະ ຄວາມລະອຽດອ່ອນສູງ ມາເປັນຄ່ານິຍົມເປັນຕົ້ນໃນເພດຍິງ.

6/. ດ້ານການບໍລິໂພກ:

ຊາວລາວເອົາເຂົ້າໜຽວ ແລະ ປາເປັນພື້ນຖານອາຫານປະຈຳວັນ ລາບ ແກງ ແຈ່ວ ແລະ ປາແດກ ຜັກ ແລະ ໝາກໄມ້ ນັບວ່າເປັນປະເພດອາຫານປະຈຳວັນທີ່ນິຍົມກັນປົກກະຕິ ສ່ວນອາຫານປະເພດໄຂມັນນັ້ນ ຊາວລາວນິຍົມໜ້ອຍ.

ໃນການສະເໜີວັດທະນະທັມລາວນີ້ ຂ້າພະເຈົ້າໄດ້ໃຊ້ວິທີການຈັດແບ່ງ ວັດທະນະທັມຕາມແບບບູຮານຂອງລາວ ເຊິ່ງເຫັນວ່າເປັນແບບທີ່ພໍໃຊ້ໄດ້ ແລະ ຄວນຮັກສາໄວ້ ຍິ່ງໄປກວ່ານັ້ນ ຍັງເຫັນວ່າມັນຊ່ວຍເຮັດໃຫ້ການຈັດ ວັດທະນະ ທັມທັງສອງປະເພດເຊັ່ນ ວັດຖຸ ແລະ ຈິດໃຈນັ້ນ ຈະແຈ້ງລະອຽດ ແລະ ງ່າຍຂຶ້ນ ຕື່ມດ້ວຍ.

ຊາວລາວບູຮານຈັດວັດທະນະທັມ ເປັນ 4 ປະເພດດັ່ງນີ້:

1/. ສະຫະວັດທະນະທັມ ຄືວັດທະນະທັມແຫ່ງການດຳລົງຊີວິດຮ່ວມ ພວກກັນຂອງຊາວລາວ ເຊັ່ນ: ການຕັ້ງຖິ່ນຖານບ້ານເມືອງ ເຮືອນຊານ ສະຖານທີ່ ສະຖານທີ່ສັກສາລະ ການເພີ່ມພູນຜະຫຼິດຜົນ ການປະດິດພາຫະນະ ອຸປະກອນ ການທຳມາຫາກິນ ອາຫານ ແລະ ການນຸ່ງຖື ເອັຍອ.

2/. ສະຕິວັດທະນະທັມ ຄືການຖື ແລະ ປະຕິບັດ ຮີດຄອງປະເພນີ ການພັດທະນາທາງດ້ານຈິດໃຈ ເຊັ່ນ ຮີດ 12 ຄອງ 14 ຮີດຍີ ຄອງຈຸງ ມາລະຍາດ ຄຸນສົມບັດ ຄຸນນະທັມ ແລະ ຄວາມປອດໃສສະອາດ ທາງກາຍວາຈາ ແລະ ໃຈ.

3/. ປັນຍາວັດທະນະທັມ ເຊັ່ນ ພຸມປັນຍາຄວາມຮູ້ດ້ານຕ່າງໆ ເຊັ່ນ: ວິທະຍາສາດເຕັກນິກ ພາສາສາດ ສິລະປະວັນນະຄະດີ ຕະຫຼອດທັມມະ ແລະ ພຸດທະປັດຊະຍາດ້ວຍ.

4/. ມະໂຫຣະສົບວັດທະນະທັມ ຄືການຄົບຫັນ ການດົດສີຕີເປົ່າ ຮ້ອງ ຟ້ອນ ລະຫຼິ້ນ ສະຫຼອງບຸນສົນກິນທານຕ່າງໆ.

1. ສະຫະວັດທະນະທັມ ຫຼື ວັດທະນະທັມ ແຫ່ງການດຳລົງຊີວິດ ຮ່ວມພວກຂອງຊາວລາວ

ໂດຍອີງຕາມເນື້ອທີ່ພູມມີປະເທດຂອງພວກເຮົາ ເຊິ່ງປະກອບດ້ວຍທົ່ງ ພຽງ ແລະ ເຂດພູເຂົາລຳເນົາເປັນສ່ວນໃຫຍ່ ຊາວລາວມັກຈະອາໄສທັ້ງສອງສະ ພາບເນື້ອທີ່ ເພື່ອຕັ້ງບ້ານຕັ້ງເຮືອນ ດຳລົງຊີວິດ ແລະ ພັດທະນາສັງຄົມ-ວັດທະ ນະທັມຂອງຕົນເອງ. ໃນເຂດທົ່ງພຽງນັ້ນຈະມີຈຳນວນປະຊາກອນໜາແໜ້ນ ກວ່າເຂດພູດອຍ ເພາະມີຄວາມສະດວກສະບາຍກວ່າໃນການເຮັດຢູ່ທຳກິນ. ແຕ່ຈະແມ່ນໃນເຂດທົ່ງພຽງກໍດີ ຫຼື ໃນເຂດພູດອຍກໍດີ ເຂົາເຈົ້າມັກຈະເລືອກເອົາ ແຄມນ້ຳແມ່ທີ່ມີທົ່ງກວ້ຳງບ່ອນເຮັດນາທຳການຜະຫຼິດເຂົ້າປາທັນຍາຫານ ເປັນ ທີ່ຕັ້ງສູນກາງເຊັ່ນ ໂຕເມືອງໃຫຍ່ນ້ອຍຕ່າງໆ ຂອງເຂົາເຈົ້າ ໃນເຂດພູພຽງກໍເຊັ່ນ ດຽວກັນ ເຖິງວ່າບາງບ່ອນຈະບໍ່ມີນ້ຳແມ່ໃຫຍ່ກໍຕາມ ເຂົາເຈົ້າກໍອາໄສຢູ່ຕາມ ລ້ອງນ້ຳເປັນບ່ອນຕັ້ງບ້ານເຮືອນ ເພື່ອທຳມາຫາກິນ. ນອກຈາກທົ່ງພຽງ ແລະ ລ້ອງນ້ຳແລ້ວຈຳນວນເຜົ່າໜ້ອຍຄົນ ຫຼາຍເຜົ່າ ກໍເລືອກເອົາເຂດພູສູງບ່ອນມີອາ ກາດສົດຊື່ນ ແລະ ໜາວເຢັນເປັນບ່ອນດຳລົງຊີວິດສືບຕໍ່ມາ ໂດຍອາໄສການຜະ ຫຼິດ ແລະ ທຳມະຊາດເປັນຈຸດໜັກ ໂດຍທົ່ວໄປແລ້ວສັງຄົມລາວເຖິງວ່າຈະໄດ້ ຮັບການພັດທະນາ ຢູ່ບາງບ່ອນໃນເຂດທົ່ງພຽງ ແລະ ໃນຕົວເມືອງໃຫຍ່ແດ່ກໍ ຕາມ ແຕ່ກໍຍັງສາມາດຈັດໄດ້ວ່າ ແມ່ນສັງຄົມທີ່ອາໄສການຜະຫຼິດເຄິ່ງທຳມະ ຊາດກະແຈກກະຈາຍການຜະຫຼິດ ເພື່ອກຸ້ມຕົນເອງພາຍໃນຄອບຄົວເປັນຈຸດ ໜັກ. ນອກນັ້ນຫຼາຍບ່ອນຍັງແມ່ນການຜະຫຼິດໂດຍອາໄສທຳມະຊາດເກືອບ ຮ້ອຍສ່ວນຮ້ອຍ. ຄວາມແຕກຕ່າງກັນດ້ານຊີວິດຄວາມເປັນຢູ່ລະຫວ່າງໂຕເມືອງ ແລະ ຊົນນະບົດໂດຍທົ່ວໄປແລ້ວໂຕນກັນຫຼາຍ ແລະ ຄວາມແຕກຕ່າງກັນລະ ຫວ່າງຊົນນະບົດເຂດທົ່ງພຽງໃກ້ໂຕເມືອງໃຫຍ່ກັບຊົນນະບົດຫ່າງໄກ ກໍມີຄວາມ ໂຕນກັນເຊັ່ນກັນ. ລະບົບການຜະຫຼິດ ແລະ ການດຳລົງຊີບ ຕະຫຼອດການຄົບ ຄ້າສະມາຄົມ ແລະ ການເດີນທາງດ້ວຍຍວດຍານພາຫະນະມີຄວາມໂຕນກັນ

ລະຫວ່າງເຂດທົ່ງພຽງໂຕເມືອງໃຫຍ່ ທີ່ສະດວກສະບາຍກັບຊົນນະບົດທີ່ຫ່າງໄກ ເຊິ່ງຍັງມີຄວາມລຳບາກ ແລະ ທຸກຈົນຢູ່.

ໄປພ້ອມໆກັບຄວາມປ່ຽນແປງໄປສູ່ຄວາມທັນສະໄໝໃນເຂດໂຕເມືອງ ນັ້ນ ອິດທິພົນຂອງວາດດຳລົງຊີວິດແບບຫຍໍ້ທໍ້ເຊື່ອມຊາມ ກໍຄ່ອຍໆລາມເຂົ້າມາ ແລະ ແຜ່ຂະຫຍາຍກວ້າງອອກໃນເຂດໂຕເມືອງ ພ້ອມໆກັບສິ່ງຫຍໍ້ທໍ້ດ້ານອື່ນໆ ຕາມມາດ້ວຍ ເຊິ່ງກົງກັນຂ້າມກັບເຂດຊົນນະບົດທີ່ຖືກແຕະຕ້ອງໜ້ອຍກວ່າ ການຮັກສາປະເພນີ ແລະ ຮູບແບບດັ້ງເດີມທາງດ້ານສິລະປະ ວັດທະນະທັມນັ້ນ ກໍຍັງພໍມີຢູ່.

ເນື້ອແທ້ທາງວັດທະນະທັມ ການດຳລົງຊີວິດຂອງຊາວລາວຕາມແບບ ປະເພນີນັ້ນ ບໍ່ແຕກຕ່າງຫຍັງຫຼາຍກັບຊາດອື່ນໆໃນອາຊີອາຄະເນທາງດ້ານພື້ນ ຖານອັນລວມ ແຕ່ຈະແຕກຕ່າງກັນທາງດ້ານອັນສະເພາະ ຄືເປັນສັງຄົມທີ່ຢູ່ກັນ ເປັນແບບຊຸມຊົນ ມີຄວາມເປັນກຸ່ມກ້ອນ ຊ່ອຍເຫຼືອເກື້ອກູນກັນເປັນຂະນົບທຳ ນຽມມາຢູ່ເຮືອນຮ້ານເປັນຄອບຄົວພໍ່ແມ່ລູກເຕົ້າ ເຊິ່ງມີພໍ່ເປັນຫົວໜ້າຄອບຄົວ ແລະ ມີແມ່ເປັນແມ່ເຮືອນ. ເອົາການຜະຫຼິດເຂົ້າເປັນທັນຍະພືດຫຼັກ ແລະ ເອົາ ພືດພັນຊະນິດອື່ນເຊັ່ນ ເຜືອກມັນ ຜັກຊະນິດຕ່າງໆເປັນຂອງເສີມ ເອົາປາເປັນ ອາຫານຫຼັກປະຈຳວັນ ແລະ ເອົາຊີ້ນໄຂ່ຕ່າງໆທີ່ໄດ້ມາຈາກສັດລ້ຽງ ແລະ ສັດ ປ່າເປັນອາຫານພື້ນຖານທີ່ສຳຄັນ.

ການຜະຫຼິດພັດສະດຸເຄື່ອງໃຊ້ໄມ້ສອຍ ເຄື່ອງນຸ່ງຂອງຖື ເຄື່ອງເອ້ຂອງ ຍ້ອງ ຕະຫຼອດເກືອອັນເປັນຂອງບໍລິໂພກທີ່ຈຳເປັນ ເຄື່ອງຢູ່ຂອງກິນຊະນິດ ຕ່າງໆ ຕະຫຼອດເຫຼົ້າຢາປາແປ້ງ ແລະ ຢຸກຢາພື້ນເມືອງປົວພະຍາດກໍນັບວ່າເປັນ ປະເພນີທາງວັດທະນະທັມອັນດີງາມ ເຊິ່ງບາງຢ່າງກໍມີຊື່ສຽງລະດັບສາກົນ ເຊັ່ນ ຜ້າມີ ຜ້າໄໝເປັນຕົ້ນ.

ການຄ້າຂາຍ ການເດີນທາງໄປມາຫາສູ່ ເພື່ອແລກປ່ຽນຜະຫຼິດຕະພັນ ກັນລະຫວ່າງທ້ອງຖິ່ນ ແລະ ລະຫວ່າງປະເທດຕໍ່ປະເທດ ນັ້ນກໍແມ່ນປະເພນີ ຢ່າງໜຶ່ງຂອງການດຳລົງຊີວິດຂອງຊາວລາວໂດຍທົ່ວໄປເຊັ່ນກັນ.

1/. ການສ້າງຕັ້ງຊຸມຊົນ ຫຼື ຕົວເມືອງຂອງຊາວລາວ.

ການສ້າງຕັ້ງນິຄົມ ຊຸມຊົນ ຫຼື ຕົວເມືອງນັ້ນ ຊາວລາວມັກຈະເບິ່ງເງື່ອນໄຂໃຫຍ່ດ້ວຍກັນ 4 ປະການ:

- ພູມມີປະເທດເໝາະແກ່ຍຸດທະສາດການປ້ອງກັນການຮຸກຮານຈາກສັດຕູພາຍນອກ ຄືຈະຕ້ອງໃຫ້ມີທີ່ສຳລັບຈັດວາງກຳລັງປ້ອງກັນ ຫຼື ຕ່າວໂຈມຕີ ເວລາສັດຕູມາຕີ ມີແຫ່ງອົບພະຍົບຜູ້ຄົນເມື່ອຖືກຮຸກຮານ ຫຼື ປະສົບເຫດຮ້າຍ ມີແຫ່ງຜະຫຼົດທັນຍະທານ ມີຊັບພະຍາກອນທຳມະຊາດອຸດົມສົມບູນຖ້າເປັນນະຄອນຫຼວງກໍຕ້ອງໃຫ້ຕັ້ງຢູ່ໃຈກາງຂອງປະເທດພໍສົມຄວນ.

- ມີຈຸດສູມຂອງເສັ້ນທາງຄົມມະນາຄົມ ທາງນ້ຳ ຫຼື ທາງບົກເຊັ່ນບ່ອນທີ່ເສັ້ນທາງຍຸດທະສາດມາພົບກັນ ຫຼື ແມ່ນ້ຳຄົບກັນເປັນປາກນ້ຳ. ມີຊູ່ເຂົ້າຊູ່ປາຄື ຕ້ອງມີທັນຍະທານເຊັ່ນ ທົ່ງນາກວ້າງຂວາງຫ້ວຍນ້ຳເບື່ອມບຶງ ພູຜາປ່າດົງທີ່ເປັນບໍ່ເກີດຂອງສັດນ້ຳ ແລະ ສັດບົກ ເປັນບ່ອນທຳມາຫາກິນລ້ຽງຊີບເພີ້ມພູນຜະຫຼົດຜົນ ແລະ ລ້ຽງສັດໄດ້.

- ມີມຸງຄຸນຄືເປັນສະຖານທີ່ຕັ້ງສັກສິດໃຫ້ໂຊກລາບ ໃຫ້ຄວາມຢູ່ດີກິນດີແກ່ປະຊາຮາຊະດອນ ເຊິ່ງຕາມປົກກະຕິແລ້ວມີການພົວພັນເຖິງຄວາມເຊື່ອທາງເຈົ້າອາຮັກຟ້າແຖນຜູ້ເປັນບັນພຣະຊົນ ເທວະບຸດ ເທວະດາໃນທາງສາສະໜາ ແລະ ການສ່ຽງທວາຍທາງໂຫຣາສາດ.

ໂຕຢ່າງການຕັ້ງເມືອງຫຼວງພະບາງ ແລະ ວຽງຈັນ ຕຳນານການສ້າງເມືອງຫຼງພະບາງ ໄດ້ກ່າວໄວ້ວ່າ ມີພຣະລືສີສອງອ້າຍໄປຊອກບ່ອນຈະຕັ້ງເມືອງຈຶ່ງໄປເຫັນສະຖານທີ່ແຫ່ງໜຶ່ງຕັ້ງຢູ່ລະຫວ່າງແມ່ນນ້ຳຂອງ ແລະ ແມ່ນ້ຳຄານມາຈອດກັນ ມີທີ່ຮາບພຽງກວ້າງຂວາງ ມີພູໜ່ວຍໜຶ່ງຕັ້ງຢູ່ດ້ານທິດຕາເວັນອອກ ຮຽກວ່າພູຊວງ (ພູຟ້າ) ມີໄມ້ທອງໃຫຍ່ຕົ້ນໜຶ່ງໃຫ້ຮົ່ມເຢັນດີ ມີດອກແດງເຮືອງເຮືອ ມີພູຫຼວງ (ພູສີ) ຕັ້ງຢູ່ທາງກາງເປັນຫຼັກເມືອງປຽບສະເໝືອນຫຼັກຫີນສີລາດວງອາດທີ່ພຣະອິນປະທານໃຫ້ຢູ່ທາງທິດດ້ານໃຕ້ມີນ້ຳດົງ. ເມື່ອພຣະລືສີສອງອ້າຍຕັດເຫັນວ່າສະຖານທີ່ແຫ່ງນີ້ເປັນມຸງຄຸນອັນມີພຽບພ້ອມທຸກຢ່າງ ຈຶ່ງຕົກລົງສ້າງສະຖານທີ່ແຫ່ງນີ້ໃຫ້ເປັນເມືອງໂດຍເອົານ້ຳດົງ ແລະ ໄມ້ທອງເປັນນິມິດໝາຍ ຈຶ່ງໄດ້ຊື່ເມືອງວ່າເມືອງຊຽງດົງຊຽງທອງ. ໂຕຢ່າງດັ່ງກ່າວນັ້ນສະແດງໃຫ້

ເຫັນຈະແຈ້ງວ່າທີ່ຕັ້ງເມືອງດັ່ງກ່າວມີພຽບພ້ອມປັດໃຈນາດຖານທຸກປະການຄື:

- ມີພູໃຫຍ່ເປັນຜາບັງປຽບສະເໝືອນບ່ອນເອື່ອຍຂອງຕົວເມືອງ.
- ມີທີ່ງນາກວ້າງຂວາງເປັນແຫ່ງຫັນຍາທານ.
- ມີແມ່ນ້ຳຄົບກັນຄື ແມ່ນ້ຳຂອງ ແລະ ແມ່ນ້ຳຄານ ອັນເປັນສະເໝືອນທາງຄົບດ້ານຄົມນະນາຄົມ ແລະ ເປັນກຳແພງວຽນອ້ອມຮອບຕົວເມືອງ 3ດ້ານ.
- ເປັນສະຖານທີ່ສັກສິດມີມຸງຄຸນ ເພາະແມ່ນພຣະລືສີ ເປັນຜູ້ນິມິດໝາຍໃຫ້ ແລະ ມີພູສີເປັນມິ່ງຂວັນເມືອງ.

ນະຄອນວຽງຈັນ:

ການຕັ້ງນະຄອນວຽງຈັນນັ້ນ ເພິ່ນກໍໄດ້ມີສົມມຸດຕິຖານມີພຣະອໍຣະຫັນສອງອົງມາຈາກອິນເດັ່ງມາເປັນຜູ້ແຮກທີ່ຕັ້ງຂອງເມືອງເຊັ່ນກັນ ແລະ ຕັ້ງຢູ່ສະຖານທີ່ທາງຍຸດທະສາດດັ່ງນີ້:

- ທາງດ້ານເໜືອ ແລະ ດ້ານຕາເວັນອອກມີສາຍພູເຂົາຄວາຍຍາວຢຽດເປັນຜາບັງຄືເປັນບ່ອນເອື່ອຍຂອງເມືອງ (ສະໄໝກ່ອນຕັ້ງຢູ່ໃຈກາງຂອງປະເທດ).
- ມີທົ່ງຮາບອັນກວ້າງຂວາງເໝາະແກ່ການຜະຫຼິດທັນຍາຫານ ແລະ ການຄົມມະນາຄົມທາງບົກ.
- ມີແມ່ນ້ຳໃຫຍ່ສອງສາຍອ້ອມສອງຝາກຂ້າງຄືນ້ຳຂອງ ແລະ ນ້ຳງຶ່ມ ຢູ່ໄລຍະໃກ້ກັນທີ່ສຸດຄື ປະມານ 20 ກັກ ອັນນັບວ່າເປັນບ່ອນ ຮ່ອມກວ່າໝູ່.
- ມີທີ່ຕັ້ງເປັນຮູບກົ່ງໄຕ້ງຕາມນ້ຳຂອງເໝືອນດວງຈັນຂຶ້ນ 8 ຄ່ຳ (ບາງຜ່ອງກໍວ່າມີຕ້າຍໄມ້ຈັນ) ອັນຖືວ່າເປັນມຸງຄຸນ.

ເປັນອັນວ່າທີ່ຕັ້ງທັງສອງໂຕນະຄອນນີ້ຄົບມາດຖານຕາມແບບຄວາມນິຍົມຂອງຄົນລາວ ນັບວ່າເປັນທີ່ຕັ້ງໃນຝັນທີ່ຫາໄດ້ຍາກກໍວ່າໄດ້. ພວກເຮົາຈະເຫັນທີ່ຕັ້ງຂອງຕົວເມືອງແບບດຽວກັນນີ້ ທີ່ແຫ່ງອື່ນໆໃນກຸ່ມຊົນລາວ-ໄຕດ້ວຍກັນເຊັ່ນເມືອງແຖງໃນ ສ.ສ ວຽດນາມ ຊຽງຮຸ່ງ ໃນ ສ.ປ.ຈີນ ຫຼື ຊຽງຕຸງທີ່ ສ.ສ. ພະມ້າດ້ວຍ.

ບຸຮານເພີ່ນມັກຈະນິມິດໝາຍເອົາ ພຣະຍານາຄ (ເງືອກ) ມາເປັນເຈົ້າ ອາຣັກ ເພາະຄົນລາວຖືຕົນເປັນລູກນາຄ ເຊັ່ນຢູ່ຫຼວງພະບາງກໍເຊື່ອກັນວ່າແມ່ນ ນາຄເປັນຜູ້ປົກຄອງເມືອງທຳອິດ ກ່ອນຈະຮອດຣາຊວົງລ້ານ (ຍັກ) ຄື ມີນາຄ 15 ຕະກຸນເປັນຜູ້ປົກປ້ອງບ້ານເມືອງ. ສ່ວນຢູ່ເມືອງວຽງຈັນກໍຈະມີພຣະຍານາຄ ຢູ່ເມືອງບາດານ ແລະ ປາກງຶ່ມ ມີສົມມຸດຕິຖານຮຸນາຄຢູ່ວັດນາຄປັດຈຸບັນ.

ຈາກນັ້ນເພີ່ນກໍບວງສວງຫຼັກເມືອງເປັນໃຈເມືອງ (ບ້ານຫຼັກຄຳທີ່ຫຼວງພະ ບາງ ແລະ ວັດສີເມືອງທີ່ວຽງຈັນ) ເຊິ່ງເປັນແຫ່ງສັກສິດ ມີການວາງໃບສີມາຢູ່ 4 ແຈເມືອງ ອັນໝາຍເຖິງໂລກະບານທັງ 4 ຜູ້ປົກຄອງບ້ານເມືອງ. ພຣະຣາຊວັງ ນັ້ນ ຕາມປົກກະຕິເພີ່ນຈະສ້າງຂຶ້ນຢູ່ໃຈກາງເມືອງມີກຳແພງອ້ອມຮອບ ແລະ ມີຮ່ອງນ້ຳເລິກອ້ອມນອກກຳແພງເປັນການປ້ອງກັນການຮຸກຮານຈາກາຍນອກ ມີນອນຊົນຕັ້ງບ້ານເຮືອນຢູ່ອ້ອມຮອບພຣະຣາຊວັງ ແລະ ກໍມີກຳແພງອ້ອມ ຮອບຊັ້ນນອກອີກຊັ້ນໜຶ່ງ.

ວັດອັນເປັນສະຖາບັນພຸດທະສາສະໜາ ແລະ ວັດທະນະທັມນັ້ນຈະມີຢູ່ ໃນພຣະຣາຊວັງ ແລະ ທົ່ວໆໄປຕາມຕົວເມືອງ ເຊິ່ງສະໄໝເກົ່າທີ່ວຽງຈັນ ແລະ ຫຼວງພະບາງ ແຕ່ລະເມືອງຈະມີຈຳນວນເຖິງຮ້ອຍວັດ ຫຼື ກວ່ານັ້ນ.

2. ບ້ານຂອງຊາວລາວ:

ຄືດັ່ງໄດ້ເວົ້າມາແລ້ວ ຊາວລາວມັກຈະເລືອກເອົາບ່ອນທີ່ຕັ້ງບ້ານຊ່ອງຢູ່ ຕາມທີ່ໆພຽງ ແລະ ແຄມແມ່ນ້ຳບ່ອນທີ່ມີທີ່ຮາບບວມ ເປັນຕົ້ນແມ່ນບ່ອນທີ່ມີແມ່ ນ້ຳມາຕິດຈອດກັນສອງສາຍອັນອຳນວຍປັດໄຈຄວາມສະດວກສະບາຍໃນການ ທຳມາຫາກິນລ້ຽງຊີບ ແລະ ການຕິດຕໍ່ພົວພັນຄ້າຂາຍ ແລະການໄປມາຫາສູ່ ກັນ. ນອກນັ້ນສິ່ງສຳຄັນອີກອັນໜຶ່ງກໍແມ່ນບ່ອນທີ່ມີປ່າໃຫຍ່ ມີຕົ້ນໄມ້ດີກໜາ ເພື່ອຈະມີໄມ້ປຸກຢ້າວແປງເຮືອນ ແລະ ການສ້າງສາ.

ບ້ານຂອງຊາວລາວນັ້ນມັກຈະມີຢູ່ໃນລ້ອງນ້ຳເຂດທີ່ໆພຽງຫຼາຍ ແລະ ໜາແໜ້ນກວ່າ ສ່ວນເຂດທີ່ສູງນັ້ນຈະມີຫ່າງເຊິ່ງບາງຄັ້ງຕ້ອງໃຊ້ເວລາເດີນທາງ ຕົ້ນໄປເປັນມື້ໆຈະເຖິງກັນກໍມີ. ຈຳນວນຄົວເຮືອນໃນບ້ານເຂດທີ່ໆພຽງ ກັບ

ບ້ານໃນເຂດພູດອຍກໍຜິດໄຕນກັນ ໃນເຂດທົ່ງພຽງນັ້ນຄົວເຮືອນຈະໜາແໜ້ນ ກວ່າ ເຊິ່ງສະເຫຼ່ຍແລ້ວຈະມີແຕ່ 50 ຄົວເຮືອນຂຶ້ນໄປເຖິງ 200. ສ່ວນໃນເຂດພູ ດອຍນັ້ນສະເຫຼ່ຍແລ້ວກໍມີແຕ່ 10 ເຖິງ 50 ຄົວເຮືອນທໍ່ນັ້ນ.

ການເລືອກທີ່ຕັ້ງບ້ານນັ້ນ ນອກຈາກຈະເບິ່ງທາງດ້ານຄວາມສະດວກສະ ບາຍໃນການເຮັດຢູ່ກະທຳກິນແລ້ວ ເພິ່ນຍັງເບິ່ງທາງດ້ານໂຫລາສາດ ເຊັ່ນ ຈະ ຕ້ອງເບິ່ງທິດເບິ່ງທາງທີ່ເໝາະສົມ ແລະ ເປັນມຸງຄຸນມີການສ່ຽງທວາຍເພື່ອເບິ່ງ ດວງຊະຕາຂອງບ້ານ ມີການຈັດພິທີສູດໄຊຍະມຸງຄຸນແຮກບ້ານ. ການຈັດແຈງ ສັ່ງທີ່ຕັ້ງຂອງບ້ານນັ້ນ ຕາມແບບປະເພນີແລ້ວກໍມີດັ່ງນີ້:

ກ. ທີ່ຕັ້ງຂອງວັດຈະຕ້ອງຢູ່ຫົວບ້ານ ຄືຢູ່ຟາກເບື້ອງຫົວນ້ຳ ຫຼື ຖ້າບໍ່ຢູ່ ແຄມແມ່ນ້ຳ ເພິ່ນກໍມັກສ້າງວັດໄວ້ບ່ອນເປັນໂພນສູງກວ່າບ້ານເຮືອນປະຊາຊົນ ທຳນະດາ ຫຼື ທີ່ເພິ່ນຮຽກວ່າ ຫົວບ້ານ (ທາງເໜືອ ຫຼື ທາງຕາເວັນອອກ).

ຂ. ບ້ານເຮືອນຂອງປະຊາຊົນຈະຢູ່ຟາກເບື້ອງທາງນ້ຳລິ່ງມາ ຫຼື ບ່ອນ ຮາບຕ່ຳປຽບໃສ່ວັດ. ຕາມປົກກະຕິຈະຢູ່ທາງດ້ານໃຕ້ ແລະ ດ້ານຕາເວັນຕົກສະ ເໝີ.

ຄ. ປ່າແຫ່ວ ຈະຕັ້ງຢູ່ດິ່ງຟາກທາງບ້ານໄປໄກພໍປະມານ.

ງ. ດິ່ງຫໍຜີປູ່ຕາ ເຈົ້າອາຮັກຜູ້ປົກປັກຮັກສາບ້ານ ຈະຕ້ອງຢູ່ດິ່ງຫ່າງຈາກ ບ້ານໄປ ແລະ ມັກຈະຢູ່ຟາກກົງກັນຂ້າມກັບວັດສະເໝີ.

ທີ່ຕັ້ງຂອງວັດນັ້ນ ເພິ່ນຈະຮຽກວ່າຫົວບ້ານ ຈາກວັດຈະມີສາຍທາງໜວງ ຜ່າກາງບ້ານຈົນໄປຮອດທາງບ້ານ. ນອກນັ້ນກໍຈະມີສາຍທາງຜ່າບ້ານໜາຍສາຍ ມີທາງລິ່ງສູ່ທ່ານ້ຳສຳລັບວັດ ແລະ ທາງລິ່ງສູ່ທ່ານ້ຳສຳລັບຊາວບ້ານ. ທ່ານ້ຳນັ້ນ ຈະເປັນທັ້ງທ່າເຮືອສຳລັບເຂົ້າອອກຂອງຜູ້ຄົນ ແລະ ສິນຄ້າພ້ອມກັນນັ້ນກໍຈະມີ ໂສກອ່າວສຳລັບໄວ້ຈອດເຮືອ ຫຼື ມຸ້ງນເຮືອ ເຊິ່ງຕາມປົກກະຕິຢູ່ໃຕ້ທ່ານ້ຳລິ່ງໄປ ຈັກໜ່ອຍ.

ຈາກບ້ານໜຶ່ງໆ ກໍຈະມີເສັ້ນທາງເດີນ (ທາງກວຽນ ທາງມ້າ ທາງຄົນ) ອອກໄປສູ່ສາລະທິດເປັນເສັ້ນທາງໄປໄຮ່ໄປສວນ ໄປບ້ານ ໃກ້ຄຽງ ແລະ ໄປທຳ ມາຫາກິນໃນຊີວິດປະຈຳວັນ.

ໃນດ້ານການປົກຄອງນັ້ນ ຕາມປະເພນີເກົ່າເດີມທີ່ເຄີຍມີມາ ບ້ານໜຶ່ງໆ ຈະມີພໍ່ບ້ານຮຽກວ່າກວານບ້ານກໍໄດ້ ເປັນຜູ້ເບິ່ງແຍງທາງລັດຖະການ ມີກວານຈ້ຳ ເປັນຜູ້ນຳພາປະຊາຊົນປະຕິບັດຮີດບ້ານຄອງເມືອງຕໍ່ເຈົ້າອາຮັກທັງຫຼາຍ ເພື່ອ ໃຫ້ບ້ານເມືອງມີຄວາມຢູ່ເຢັນເປັນສຸກ ຫາຍເຄາະເຂັ້ນ ແລະ ເຫດຮ້າຍ ມີກວານ ວັດ ເປັນຜູ້ນຳພາປະຊາຊົນປະຕິບັດພິທີກຳທາງສາສະໜາ ມີນັກປາດ ແລະ ໝໍ ພອນ ຜູ້ສ້າງຂວັນທາງຈິດໃຈ ມີໝໍຢາ ເພື່ອດູແລສຸຂະພາບ ແລະ ມີໝໍຜີ ເພື່ອ ປາບ ແລະ ຂັບໄລ່ຜີຂ້ຶ້ຮ້າຍຈັ່ງໄສ.

ສ່ວນຊາວບ້ານນັ້ນ ກໍຈະຢູ່ເປັນກຸ່ມກ້ອນກັນພາຍໃນບ້ານ ເຊິ່ງຕ່າງກໍຈະ ມີຢ້ຳວເຮືອນ ມີລະບົບຄວາມສະດວກສະບາຍທຸກຢ່າງຂອງຕົນເອງ. ສິ່ງສຳຄັນ ຂອງຄົນພາຍໃນບ້ານ ກໍຈະແມ່ນຄວາມເປັນປຶ້ມລຸ່ມສາມັກຄີຮັກແພງກັນ ແລະ ຄວາມຊື່ສັດສຸດຈະໜຶດໃຈຕໍ່ກັນ ມີສິນທັມປະຈຳໃຈ ໂດຍປາສະຈາກຄວາມໂລບ ໂມໂສຫາ ແລະ ເອົາປຽບເອົາລັດກັນ.

3. ເຮືອນຂອງຊາວລາວ:

ເຮືອນຂອງຊາວລາວສາມາດແບ່ງອອກເປັນສອງປະເພດດ້ວຍກັນຄື: ເຮືອນຮ້ານ ແລະ ເຮືອນຊູດິນ. ພວກທີ່ຢູ່ເຮືອນຮ້ານນັ້ນ ແມ່ນພວກລາວລຸ່ມ ແລະ ພວກອາຊີໃຕ້ ຫຼື ມອນຂະແມ. ສ່ວນພວກທີ່ຢູ່ເຮືອນຊູດິນນັ້ນກໍແມ່ນ ພວກ ມົ້ງ ຢ້ຳວ ແລະ ພວກຈີນ-ຕິເບດ ເຊິ່ງພາກັນຢູ່ຖິ່ນສູງເຂດພູດອຍທີ່ມີອາກາດ ໜາວເຢັນໃນຍາມລະດູໜາວ.

ສະເພາະແຕ່ເຮືອນຮ້ານນັ້ນ ກໍມີຫຼາຍໆແບບຫຼາຍຮູບຊົງດ້ວຍກັນ ອີງ ຕາມແຕ່ລະເຜົ່າຍ່ອຍ ແລະ ລັກສະນະທ້ອງຖິ່ນ ເຊິ່ງມີຄວາມແຕກຕ່າງກັນໄປ ດ້ານສິລະປະການຕົບແຕ່ງຈັດວາງ ແລະ ວາດຊົງ ແຕ່ສ່ວນໃຫຍ່ດ້ານໂຄງສ້າງ ທາງສະຖາປັດຕະຍະກຳແລ້ວ ກໍຄ້າຍຄືກັນທັງນັ້ນ.

ພວກເຮົາສາມາດຈັດວັດທະນະທັມເຮືອນຮ້ານນີ້ ຢູ່ໃນກຸ່ມຊົນ ຊົນຊາດ ຕ່າງໆຫຼາຍຊົນຊາດດ້ວຍກັນ ໂດຍກວມເອົາຊົງເຂດອັນໄພສານຄືທາງດ້ານ ເໜືອນັ້ນ ຕັ້ງແຕ່ພາກໃຕ້ຂອງ ຂອງປະເທດຈີນລົງໄປທາງໃຕ້ຮອດໝູ່ເກາະ

ຕ່າງໆ ຂອງຊາວມາໄລໄຍໂປລີເນຊຽນ ແລະ ຕັ້ງແຕ່ເຂດຕາເວັນອອກສຸດຂອງ ປະເທດວຽດນາມ ໄປທາງທິດຕາເວັນຕົກຮອດ ເຂດອັດສຳຂອງປະເທດອິນເດັ່ງ ອັນນັບວ່າເປັນວັດທະນະທັນເຮືອນຮ້ານ ທີ່ເປັນເອກະລັກລວມຂອງບັນດາປະ ເທດນີລົມມໍລະສຸມເຂດຮ້ອນ ແລະ ຊຸ່ມຈົ້ນພັດຜ່ານອາຊີອາຄະເນ.

ເຮືອນຮ້ານຂອງລາວນັ້ນ ຕາມແບບປະເພນີໂດຍທົ່ວໄປແລ້ວ ກໍຈະສ້າງ ດ້ວຍໄມ້ ຫຼື ປະທາຍ ແລະ ຮູບຊົງຕ່າງກັນຕາມຍຸກຕາມສະໄໝ ແລະ ຕາມຖາ ນະຂອງຜູ້ເປັນເຈົ້າຂອງ.

- ຄົນຊົນນະບົດທີ່ມີຖານະຍາກຈົນ ກໍຈະສ້າງດ້ວຍພັດສະດຸດັ່ງນີ້: ເສົາ ໄມ້ແກ່ນທຳມະດາ ມີ 2 ຫາ 3 ຫ້ອງ ປູຟາກ ແອ້ມດ້ວຍແຕະໄມ້ໄຜ່ ມຸງຫຍ້າ.

- ຄົນຊົນນະບົດທີ່ມີຖານະດີ ກໍຈະສ້າງດ້ວຍເສົາໄມ້ແກ່ນ ມີຂະໜາດ ໃຫຍ່ ມີ 4 ຫາ 7 ຫ້ອງນອນດ້ວຍກັນ ຂາງໄມ້ໜຽມ ປູແປ້ນ ແອ້ມແປ້ນ ມຸງຝ້າ (ຟາກໄມ້ໄຜ່) ຫຼື ແປ້ນ.

- ຄົນຊົນຊັ້ນຊຸນນາງຮັ່ງມີ ມີຍົດຖາບັນດາສັກໃນຍຸກຝຮັ່ງມາປົກຄອງ ກໍ ຈະມີເຮືອນຮ້ານຄູ່ (ສອງແປຕິດກັນ) ເສົາໄມ້ແກ່ນ ຫຼື ເສົາກ່ຳ ຂາງໄມ້ໜຽມ ປູ ແປ້ນ ແອ້ມປະທາຍປູນ ມຸງດິນຂໍ.

ຕາມຮີດຄອງສະໄໝເກົ່ານັ້ນ ເພິ່ນຈະຕັ້ງເສົາເຮືອນໃສ່ແຫ່ງໃດແຫ່ງໜຶ່ງ ເຊິ່ງນອກຈາກການຫາບ່ອນທີ່ເໝາະສົມແລ້ວ ເພິ່ນມັກຈະມີການສ່ຽງທາຍ ຕາມແບບຄວາມເຊື່ອໄປກ່ອນ ການສ່ຽງທາຍກໍມີ ເຊັ່ນ:

- ສ່ຽງຄວາມຝັນເຊັ່ນວ່າ ໝໍຫີນ ໝໍຮຸຮາ (ຜູ້ປະຕິບັດດ້ານໄສຍະສາດ) ຈະຈັດພິທີກຳຂຶ້ນແລ້ວກໍຈະປາຖະໜາໃຫ້ລາງດີ ຫຼື ລາງຮ້າຍມາເຂົ້າຄວາມຝັນ ຂອງໂຕເອງ ເພື່ອຈະຕັດວ່າ ຄວນຈະຕັ້ງບ້ານຕັ້ງເຮືອນໃສ່ບ່ອນທີ່ເລືອກໄດ້ຫຼືບໍ່ ?

- ສ່ຽງໄຂ່ໄກ່ ຄືໝໍຜີ ຕ້ອງເສກຄາຖາໃສ່ໄຂ່ແລ້ວໂຍນໄຂ່ໄກ່ນັ້ນກິ້ງໄປ ຕາມໜ້າດິນ ຖ້າໄຂ່ນັ້ນແຕກກໍສະແດງວ່າຕັ້ງບ້ານຕັ້ງເຮືອນໄດ້ ແຕ່ຖ້າໄຂ່ບໍ່ ແຕກກໍຈະບໍ່ຕັ້ງບ້ານໃສ່ບ່ອນທີ່ກະໄວ້ຫັ້ນເລີຍ ເຊິ່ງເພິ່ນຖືວ່າເປັນສະຖານທີ່ເຮັດ ຂວງຈະບໍ່ມີມຸງຄຸນແກ່ຊາວບ້ານ ແລະ ຄອບຄົວເລີຍ.

- ນອກຈາກການສ່ຽງທາຍແລ້ວ ກໍມີການນຳໃຊ້ໝໍຫີນໝໍດູມາໄລ່ທາງ

ໄຫລາສາດ ເລືອກມື້ເລືອກຍາມທີ່ເປັນມຸງຄຸນ ເຊິ່ງສ່ວນຫຼາຍນັ້ນທາງລາວຖືເອົາວັນອັງຄານເປັນມື້ທີ່ດີກວ່າໝູ່ໃນອາທິດໜຶ່ງໆ. ນອກນັ້ນແຕ່ລະມື້ຍັງມີຍາມທີ່ດີເພື່ອແຮກເລີ່ມລົງມືກໍ່ສ້າງ.

ຕາມປົກກະຕິແລ້ວ ເຮືອນລາວຕັ້ງຢູ່ບົນເນື້ອທີ່ກວ້າງຂວາງ ປະກອບດ້ວຍຫລາຍພາກສ່ວນດ້ວຍກັນເຊັ່ນ: ມີເປີງຢູ່ທາງດ້ານໜ້າສຳລັບໄວ້ຮັບແຂກຄົນ ມີຫ້ອງສຳລັບຜູ້ເຖົ້າ ແລະ ທີ່ງບູຊາ ມີຫ້ອງນອນຫລາຍຫ້ອງສຳລັບສະມາຊິກຄອບຄົວ ມີຫ້ອງກອຍສຳລັບໄວ້ເຄື່ອງນຸ່ງຂອງຖື ປຸ່ມ ແລະ ຫີບ ມີຊານສຳລັບໄວ້ນ້ຳລ້າງຊ່ວຍ ມີເຊັຍສຳລັບນັ່ງຫລິ້ນ ຫລືເຮັດວຽກເຂັ້ນຝ້າຍ ມີເຮືອນຄົວຕ່າງຫາກສຳລັບໄວ້ຄົວກິນ ໄວ້ແຫ ນອງ ເຄື່ອງຂອງສຳລັບແຕ່ງກິນ. ຢູ່ກ້ອງຕະລ່ຽງຈະມີກີ້ຂອງແມ່ຍິງສຳລັບໄວ້ຕຳໝາກ ມີຫ້ອງໄວ້ໝໍ້ນຶ່ງ ໄຫປາແດກ ຫໍ່ເກືອ ອື່ອ ແລະ ຫລາເຂັ້ນຝ້າຍ ຄາດໄຖ ແລະ ພັດສະດຸອື່ນໆ ຢູ່ກ້ອງເຮືອນຄົວຈະມີລີກໄກ່ ແລະ ສາງໄວ້ຟືນດັ່ງ ຢູ່ຕໍ່ໜ້າເຮືອນຈະມີເດີ່ນບ້ານ ອ້ອມຮອບດ້ວຍຕົ້ນໄມ້ກິນໝາກ ຫລື ດອກໄມ້ ມີສວນຄົວຢູ່ຫລັງບ້ານ ມີເລົ້າເຂົ້າຄົກນອງ ແລະ ມີຕົ້ນໝາກ (ໝາກຄັ່ງວ) ເຄືອພູ. ຖ້າເປັນເຮືອນຢູ່ເຂດທົ່ງພຽງກໍຈະມັກມີຄອກງົວ ຫລື ຄວາຍ. ສ່ວນເຮືອນຕາມບ້ານລ້ອງນ້ຳ ເຊິ່ງເປັນເຂດພູດອຍຈະມີສະຖານທີ່ປຸກລ້ຽງໜ້ອຍ ເພິ່ນມັກຈະເອົາຄອກຄວາຍ ຄອກມ້າ ແລະ ຄອກໝູໄວ້ແຄມບ້ານ. ແຕ່ສິ່ງສຳຄັນແມ່ນແທບທຸກເຮືອນຈະຕ້ອງມີເຮືອຢູ່ທ່ານ້ຳ ເພື່ອການຫາມາຫາກິນ ແລະ ການເດີນທາງ.

ການຍົກເສົາເຮືອນຂອງຊາວລາວນັ້ນ ກໍມີກຳນົດວິທີ ແລະ ພິທີກຳຫຼາຍຢ່າງ ເຊິ່ງນອກຈາກການຂອກບ່ອນປຸກເຮືອນໃຫ້ຖືກບ່ອນທີ່ຖືວ່າດີມີໄຊແລ້ວ ເພິ່ນຍັງຈະບໍ່ປຸກກອມເອົາຕໍ່ໄມ້ໃຫຍ່ ບໍ່ປຸກເຮືອນໃສ່ບ່ອນຂຸມຝັງສົບ ບໍ່ປຸກເຮືອນກອມຈຸມປອກດັ່ງນີ້ເປັນຕົ້ນ. ການເອົາທິດຂອງເຮືອນກໍສຳຄັນເຊັ່ນກັນ ຄື ເພິ່ນຈະບໍ່ປຸກເຮືອນຂວາງຕາເວັນຈັກເທື່ອເພາະຖືວ່າບໍ່ດີ.

ການເລືອກໄມ້ປຸກເຮືອນກໍເຊັ່ນກັນ ເຊັ່ນເພິ່ນຈະບໍ່ເອົາໄມ້ປາຍກຸດມາເຮັດເຮືອນ ເພາະຖືວ່າເຄັດຂວາ ການແທກຄວາມຍາວຂອງເສົາເຮືອນກໍຈະແທກໃຫ້ໄດ້ຕາມຕຳລາແບບປະເພນີ ຄືເພິ່ນຈະໄສກ່ອນ(ແທກໃຫ້ຕົກບ່ອນດີ).

ໃນຈຳນວນເສົາທີ່ເພີ່ນເອົາມານັ້ນ ຈະມີເສົາໜຶ່ງຮຽກວ່າເສົາຂວັນຂອງເຮືອນ ເສົາຕົ້ງກ່າວນັ້ນຈະຕັ້ງຢູ່ທາງຫົວນອນຂອງຜູ້ເປັນຫົວໜ້າຄອບຄົວສະເໝີ. ເສົານັ້ນເວລາຕັ້ງຂຶ້ນ ເພີ່ນຈະຕ້ອງເອົາຍອດໃບສີເຂັ່ນ ຍອດສະຄຳ (ຄຳຂຶ້ນ) ຍອດຄູນ (ຄູນຂຶ້ນ) ຍອດຍໍ (ຍໍຂຶ້ນ) ຍອດຊິນຊຸ່ນ (ສິດຊຸ່ນ) ມີໄຊມາມັດໃສ່ເປັນ ສັນຍາລັກແຫ່ງໂຊກໄຊ.

ເວລາປຸກເຮືອນນັ້ນ ເພີ່ນຈະບໍ່ໃຊ້ກຳມະກອນແບບສະໄໝໃໝ່ເລີຍ (ເວັ້ນເສັຍແຕ່ເວລາຫ້ຽງໄມ້ເຮືອນ) ເພີ່ນໃຊ້ການຫາກັນ ແລະ ວານຊາວບ້ານມາຊ່ອຍ. ເຈົ້າຂອງບ້ານຈະຕ້ອງຫາເຂົ້າປາອາຫານເຊັ່ນ ໝູງເຂົ້າ ຕົ້ມເຫຼົ້າ ຂ້າ ຄວາຍ ຫຼື ງົວເປັນອາຫານການກິນສຳລັບຊາວບ້ານທີ່ມາຊ່ອຍ. ເມື່ອປຸກເຮືອນ ຂຶ້ນສຳເລັດໂດຍພື້ນຖານແລ້ວ ເພີ່ນຈະນິມົນພະມາສູດໃຫ້ເປັນສີຣິມຸງຄຸນ ພ້ອມ ທັ້ງສັນຈັ່ງທັນ ຫຼື ສັນເພນ. ພ້ອມກັນນັ້ນກໍສູ່ຂວັນເຮືອນພ້ອມ ທັ້ງເຈົ້າຂອງຜູ້ຢູ່ໃຫ້ ຫາຍເຄາະຫາຍນາມ ເພີກສິ່ງບໍ່ດີອອກຈາກເຮືອນຊານ ນຳເອົາໂຊກໄຊຄວາມຢູ່ ດີມີສຸກ ແລະ ຄວາມສົມບູນມາໃຫ້ຄອບຄົວ.

4. ວັດຂອງຊາວລາວ.

ວັດຂອງຊາວລາວນັ້ນຈະຕັ້ງຢູ່ທີ່ຮາບສູງ ກວ້າງຂວາງພໍປະມານ ອີງ ຕາມຂະນາດຂອງບ້ານ ແລະ ຄວາມສຳຄັນຂອງວັດເອງ. ບໍລິເວນຂອງວັດນັ້ນ ໂດຍມາກຈະອ້ອມດ້ວຍກຳແພງຫຼືຕ້າຍເປັນຮູບສີ່ຫຼ່ຽມຍາວຫຼືມົນທົນ. ໃນວັດນັ້ນ ຈະມີສິມ ມີຫໍແຈກ ມີກຸຕິ ສຳຫຼັບເປັນທີ່ອາໄສຂອງເຈົ້າຫົວ ນອກນັ້ນກໍຈະຕ້ອງມີ ຕົ້ນໂພໄຊ (ໂພທິ) ມີຫາດ ມີຫໍກອງ ແລະ ມີຫໍສົງ. ບາງວັດກໍຕ້ອງມີຜາມເຮືອ ຊ່ວງ ແລະ ມີກອງຄູ່ກອງຂັ້ນ ສຳຫຼັບງານສະຫຼອງບຸນຂອງນວນຊິນ.

ສິມ: ເປັນວິຫານສຳຫຼັບບັນຈຸແຖ່ນພຣະພຸດທະຮູບ ແລະ ສິ່ງສັກສິດທັ້ງ ປວງ ເປັນບ່ອນສັກກະລະ ບ່ອນສູດມົນ ພາວັນນາ ແລະ ເທດສະໜາເອົາສິນ ເອົາພອນເມື່ອມີບຸນສິນ ກິນທານ. ສິມນີ້ຈະກໍ່ດ້ວຍດິນຈີ່ ມຸງດິນຂໍ ມີແຖ່ນເປັນ ແອວຂັ້ນ ແລະ ມີຮູບຊົງງົດງາມ ປະດັບດ້ວຍຮູບຄວັດ ຮູບຕິດ ເໝືອນວິມານຜາ ສາດ ເທິງແປສິມຈະຕ້ອງມີໄງ່ ແລະ ມີຊໍ່ຟ້າ ປະດັບຢູ່ເຄິ່ງກາງແປ. ຢູ່ 4 ແຈສິມ

ສາດ ເທິງແປສິມຈະຕ້ອງມີໄງ່ ແລະ ມີຊໍ່ຟ້າ ປະດັບຢູ່ເຄິ່ງກາງແປ. ຢູ່ 4 ແຈສິມ ເພິ່ນ ຈະຝັງໃບເສມາທີ່ມີຂໍ້ຄວາມປັນໂຕທັມຂຽນໄວ້ ພ້ອມກັນນັ້ນກໍຈະມີສີລາ ລຶກຂອງສິມ ສ່ວນຂັ້ນໄດຂຶ້ນສິມນັ້ນຈະຕ້ອງເປັນຮູບນາກສະເໝີ. ພາຍໃນ ສິມນອກຈາກຈະມີແຖ່ນພຣະແລ້ວ ຈະມີຕູ້ຄຳພີ ມີຮາວລະຄ້ຳ ແລະ ຄ້ອງສຳຫຼັບ ພິທີທາງສາສະໜາ ມີຮາວທຽນສຳຫຼັບໄວ້ນິບໄຫວ້ບູຊາ. ຕາມຝາຈະມີຮູບແຕ້ມ ພື້ນແຜ່ນແລະນິທານຕ່າງໆ ເຊິ່ງມາຈາກຊາດົກ ແລະ ເລື້ອງລາວກ່ຽວກັບພຣະ ພຸດທະເຈົ້າ ເປັນຕົ້ນແມ່ນພຣະເຈົ້າສິບຊາດ ພຣະເຫວດສັນຕະລະ.

ຫໍແຈກ: ແມ່ນຜາມຫຼີສາລາໃຫຍ່ກວ້າງຂວາງດີ ປຸກຢູ່ບ່ອນສະຖານ ທີ່ກວ້າງຂວາງໃກ້ທາງເຂົ້າວັດສຳຫຼັບໃຫ້ປະຊາຊົນມາເຮັດບຸນແຈກທານຟັງເທດ ຟັງທັມ ພ້ອມໃນຫໍແຈກກໍມີຫ້ຳມາດມີຮູບພາບກ່ຽວກັບຊີວິດຂອງພຣະພຸດທະເຈົ້າ ຕິດໄວ້ ນອກນັ້ນກໍຈະປະດັບດ້ວຍທຸງຕ່າງໆທາງສະສາໜາດ້ວຍ.

ກຸຕິ: ແມ່ນຫໍພັກຂອງພຣະສົງ ເຊິ່ງກໍປຸກເປັນແບບເຮືອນ ແຕ່ປະດັບ ດ້ວຍລວດລາຍສິລະປະ ປະຈຳວັດເຊັ່ນ: ມຸງດິນຂໍ່ກໍ່ພື້ນ ແລະ ມີຂັ້ນໄດເປັນຮູບ ນາກດັ່ງນີ້ເປັນຕົ້ນ.

ວັດນັ້ນກໍມີຫຼາຍປະເພດດ້ວຍກັນ ແລະ ກໍມີຄວາມແຕກຕ່າງກັນດ້ານ ລາຍລະອຽດເຊັ່ນ: ວັດຂອງບ້ານໃນຊົນນະບົດ ກໍແຕກຕ່າງກັບວັດໃນໂຕເມືອງ ບາງດ້ານເຊັ່ນ ບາງວັດໃນໂຕເມືອງວຽງຈັນ ກໍຈະມີເຕົາຫຼໍ່ເພື່ອພິທີກຳ ຊາປະນະ ກິດສົບ ວັດເຂດເໜືອກໍມີເອກະລັກບາງຢ່າງແຕກຕ່າງໄປຈາກວັດເຂດໃຕ້ເລັກ ນ້ອຍ ເຊິ່ງເລື້ອງນີ້ເປັນຫ້ຳມະດາ.

ພາລະບົດບາດຂອງວັດໃນບ້ານໜຶ່ງໆ ນັ້ນມີຫຼາກຫຼາຍເຊັ່ນນອກຈາກ ຈະເປັນບ່ອນ ບຳເພນກຸສົນ ແລະ ທີ່ເພິ່ງພາທາງໃຈແລ້ວ ຍັງມີພາລະບົດບາດ ສຳຄັນແກ່ສັງຄົມ ດັ່ງນີ້:

- ເປັນບ່ອນສຶກສາເລົ່າຮຽນຄວາມຮູ້ຝ່າຍທັມມະ ຮຽນສາຕະສົນອາຄົມ ວິຊາຕ່າງໆ ແລະ ຮຽນໜັງສື ເຊິ່ງບາງແຫ່ງກໍເປັນໂຮງຮຽນ.
- ເປັນບ່ອນສ້າງຜົນງານທາງດ້ານ ວັນນະກັມ ແລະ ສິລະປະກັມຂອງ ບັນດານັກປາດອາຈານ.

ສິນກິນທານ.

- ເປັນບ່ອນພັກເຊົາຂອງແຂກຄົນ ຜູ້ເດີນທາງໄປມາ.

- ເປັນທີ່ເພິ່ງຂອງລູກກຳພ້າກຳພອຍ ຂາດທີ່ເພິ່ງພາອາໄສເພື່ອຮ່ຳຮຽນ.

- ເປັນບ່ອນຊຸມນຸມເປີກສາຫາລືວຽກບ້ານ ແລະ ການເມືອງທຸກປະເພດ.

- ເປັນບ່ອນພົບປະຄົບຫັນແລະຊອກຄູ່ຮັກຄູ່ຄອງລະຫວ່າງບ່າວສາວເວລາມີບຸນສິນກິນທານ.

- ເປັນບ່ອນຕີກອງປ່າວເຕືອນເວລາ ທີ່ເສິກເສືອເໜືອໃຕ້ ຫຼືໂຈນມາມເຂົ້າມາປຸ້ນບ້ານຮາວີເມືອງ ຫຼື ມີເຫດຮ້າຍໄພທຳມະຊາດຕ່າງໆເກີດຂຶ້ນ ຕະຫຼອດລະດົມພົນ ເພື່ອກິດຈະການອັນໃດອັນໜຶ່ງ.

- ເປັນບ່ອນປິ່ນປົວຄົນເຈັບ ຄົນປ່ວຍດ້ວຍຢາພື້ນເມືອງ.

- ເປັນບ່ອນປົກປັກຮັກສາ ແລະ ສົ່ງເສີມຮີດຄອງປະເພນີຂອງບ້ານເມືອງເປັນຕົ້ນແມ່ນ ພິທີບຸນຕ່າງໆໃນ 12 ເດືອນ.

- ເປັນບ່ອນຮັກສາບູລະນະວັດຖຸ ແລະ ກຳພີ ດີກາປຽບສະເໝືອນຫໍພິພິດທະພັນ ແລະ ຫໍສະມຸດ.

ສະຫຼຸບແລ້ວວັດແມ່ນສູນວັດທະນະທັມທີ່ຄົບຖ້ວນທີ່ສຸດຂອງບ້ານໃນຊົນນະບົດ ເປັນຕົ້ນແມ່ນຊົນນະບົດທີ່ໃກ້ໄຕເມືອງ.

5. ການດຳລົງຊີວິດຕາມແບບປະເພນີໃນຄອບຄົວ.

ຄອບຄົວແມ່ນຫົວໜ່ວຍຕ່ຳສຸດຂອງສັງຄົມລາວ. ຄອບຄົວໜຶ່ງປົກກະຕິຈະຕ້ອງປະກອບດ້ວຍຜົວເມັຍ ພໍ່ປູ່ ແມ່ຍ່າ ຫຼື ພໍ່ເຖົ້າ ແລະ ລູກແຕ່ 1 ຫາ 10 ຄົນ ແລ້ວແຕ່ຈະມີ ບາງຄອບຄົວກໍມີໜ້ອຍ ເປັນຕົ້ນແມ່ນຄອບຄົວໃນເມືອງ ແລະ ເຂດທີ່ງພຽງ ແລະ ບາງຄອບຄົວກໍມີພໍ່ເຖົ້າແມ່ເຖົ້າ ຫຼືປູ່ຍ່າຕາຍາຍຢູ່ນຳ. ພາຍໃນຄອບຄົວ ຜົວຈະຕ້ອງເປັນພໍ່ເຮືອນ ເມັຍເປັນແມ່ເຮືອນ.

ພາລະບົດບາດຂອງແຕ່ລະປະເພດສະມາສິກໃນຄອບຄົວກໍມີເຊັ່ນ:

- ພໍ່ປູ່ ແມ່ຍ່າ ຫຼື ພໍ່ເຖົ້າ ແມ່ເຖົ້າ ຈະມີຖານະ ເປັນຜູ້ທີ່ເຄົາລົບຢຳເກງ ຂອງຄອບຄົວ ເປັນຜູ້ເບິ່ງຢ້າວເບິ່ງເຮືອນ ເບິ່ງແຍງຫຼານນ້ອຍ ເປັນຜູ້ຄອຍຖ່າຍ ທອດຄວາມຮູ້ ແລະ ຄອງປະພຶດໃຫ້ລູກ ແລະ ຫຼານຕະຫຼອດເລົ່ານິທານສັ່ງສອນ ລູກຫຼານ. ນອກນັ້ນຍັງເປັນຜູ້ອະວຸໂສໃນພິທີກຳຕ່າງໆຂອງຄອບຄົວ ແລະ ຂອງ ບ້ານດ້ວຍ.

- ພີ່ວ: ໃນຖານະພໍ່ເຮືອນຈະເປັນຫົວສະໝອງ ແລະ ພະລັງແຮງ ເພື່ອ ຄິດຄົ້ນຫາແຜນການ ແລະ ວິທີການພ້ອມທັງເປັນໄມ້ເບື້ອໄມ້ແຮງ ເພື່ອແບກ ຫາບພາລະວຽກໜັກເບົາທີ່ສຳຄັນພາຍໃນເຮືອນ ເຊັ່ນວຽກໄຮ່ການນາ ວຽກປຸກ ຢ້າວແປງເຮືອນ ວຽກຊອກມາຫາກິນ ຕະຫຼອດວຽກຄ້າຂາຍຫາງໄກ.

- ເມັ່ງ: ໃນຖານະແມ່ເຮືອນຈະເປັນຄູ່ຊີວິດທັງເປັນທີ່ເປີກສາຕະຫຼອດຜູ້ ໃຫ້ກຳລັງໃຈເໝືອນແມ່ ຫຼື ນ້ອງຂອງພີ່ວ. ເມັ່ງຈະຕ້ອງຮັບພາລະເບິ່ງແຍງສັ່ງ ສອນລູກເຕົ້າ ເບິ່ງອາຫານການກິນ ເຄື່ອງນຸ່ງຂອງຖື ຄວາມສະອາດໃນເຮືອນ ຕັກນ້ຳຕຳເຂົ້າ ແລະ ເຮັດໜູກ ທຳໄໝຮັກສາຊັບສິນໃນເຮືອນ.

- ລູກ: ຈະເປັນຜູ້ຊ່ອຍພໍ່ແມ່ໃນໜ້າວຽກຂອງຕົນ ອີງຕາມໄວອາຍຸ ແລະ ເພດ. ແຕ່ສິ່ງສຳຄັນມີໜ້າທີ່ບວດຮຽນຂຽນອ່ານເພື່ອກໍ່ເນື້ອສ້າງຕົວ.

ຊີວິດປົກກະຕິຂອງຄອບຄົວຊາວຊົນນະບົດໃນມື້ໜຶ່ງ.

ໃນຊົນນະບົດນັ້ນ ຄອບຄົວຂອງຊາວຊົນນະບົດຈະຮັກສາວິຖີຊີວິດອັນເກົ່າເດີມຕາມແບບປະເພນີຂອງເຂົາເຈົ້າໄວ້ໄດ້ດີກວ່າ ເຖິງວ່າປັດຈຸບັນການປ່ຽນແປງຈະເລີ່ມມີຂຶ້ນຢູ່ທົ່ວທຸກບ່ອນແລ້ວກໍຕາມ.

- ຍາມເຊົ້າສຽວ (5.00ມ) ໃນລະດູເຮັດນາ: ໃນຍາມນີ້ຜູ້ເປັນພໍ່ເຮືອນແລະແມ່ເຮືອນຕະຫຼອດລູກຜູ້ໃຫຍ່ແລ້ວ ຈະລຸກຈາກທີ່ນອນປະຕິບັດໜ້າວຽກພໍໃຜພໍມັນ ຕາມການແບ່ງປັນງານໂດຍທຳມະຊາດເຊັ່ນ: ພໍ່ເຮືອນຈະຕ້ອງຈັບແຫລ່ງເຮືອໄປຢາມມອງ ຢາມຕ້ອນ ຢາມສ້ອນ ໄຊ ຫຼື ເບັດທີ່ແຂວນ ຫຼື ປັກໄວ້. ຜູ້ຢູ່ບ້ານໃຄກໍຈະອອກໄປຢາມກະທີບກະຕ່ຳ ຫຼື ຫ້ຽງແຮ້ວ ຜິກຍິງສັດປ່າ... ຕາມຄຳຂວັນທີ່ວ່າໆໄວ້ສຳລັບຜູ້ຊາຍທີ່ດີວ່າ "ຕື່ນແຕ່ເຊົ້າໄດ້ເກົ້າຫ້ຽງຢາມ"

ແມ່ເຮືອນຈະຕ້ອງລຸກຂຶ້ນມາໜຶ່ງເຊົ້າພາລູກຍິງຊາຍຕຳເຊົ້າ ຕັກນ້ຳຄົວກິນສຳລັບອາຫານເຊົ້າ ເກືອໝູ ເກືອໄກ່ ແຕ່ງຈ່ຳຫັນໄປວັດ.

ຜູ້ເຖົ້າຢູ່ບ້ານມີໜ້າທີ່ໄປໃສ່ບາດຢາດນ້ຳ ແລ້ວກໍພາກັນມາກິນເຊົ້າເຊົ້າພ້ອມພ້ຽງກັນທຸກຄົນ. ຈາກນັ້ນມາ ຜູ້ເປັນພໍ່ແມ່ກໍຈະໄປເຮັດວຽກໄຮ່ການນາໝົດມື້ ຜູ້ເປັນລູກຈະໄປໂຮງຮຽນ ສ່ວນພໍ່ເຖົ້າແມ່ເຖົ້າຈະຢູ່ເຮືອນ ຈັກຕອກ ເບິ່ງບ້ານ ຫຼື ຖ້າມີໝາມນ້ອຍກໍຈະເບິ່ງໝາມນ້ອຍ.

ຕອນທ່ຽງພໍ່ແມ່ກິນເຂົ້າຢູ່ນາ ຫຼື ຢູ່ໄຮ່ ສ່ວນພໍ່ເຖົ້າແມ່ເຖົ້າ ແລະ ໝາມກິນເຂົ້າຢູ່ເຮືອນ.

ຕອນແລງມາປະມານ 17.00 ມ ຫຼື 18.00 ມ ພໍ່ແມ່ຈະກັບມາແຕ່ນາພ້ອມດ້ວຍຄາດໄຖ ແລະ ຄວາຍ. ຜູ້ເປັນພໍ່ພ້ອມດ້ວຍລູກຊາຍ ຈະພາກັນໄປໃສ່ເບັດ ຫຼື ມອງຕໍ່.

ຜູ້ເປັນເມັ່ງ ແລະ ລູກຍິງຈະແຕ່ງກິນ ເກືອໄກ່ໝູ ຕັກນ້ຳ ອາບນ້ຳ ແລ້ວ ຫຼັງຈາກນັ້ນ ທຸກຄົນຈະມາກິນເຂົ້າແລງຮ່ວມກັນ.

ຕອນຄ່ຳມາ ຜົວອາດຈະໄປປະຊຸມບ້ານ ຫຼື ພັກຜ່ອນຢູ່ເຮືອນ ສ່ວນເມັ່ງ

ຈະເຂັ້ນຝ້າຍ ພໍ່ເຖົ້າຈະອ່ານໜັງສື ຫຼື ເລົ່ານິທານ ສ່ວນເດັກນ້ອຍໄວຮຽນກໍຈະຮຽນໜັງສື.

ຖ້າເຮືອນໃດມີລູກສາວ ອາດຈະຢູ່ຂ່ວງເຂັ້ນຝ້າຍຮອດເດິກກໍໄດ້. ບາງຄັ້ງຄາວກໍຈະໄດ້ຍິນສຽງຂຸ່ຍແຄນດັງແວວມາຄ່ອຍໆ ຈາກອ້າຍບ່າວທີ່ໄປທ່ຽວຂ່ວງລົມສາວ. ຖ້າເຮືອນໃດຢູ່ໃກ້ວັດກໍມັກຈະໄດ້ຍິນສຽງລະຄັ້ງ ສຽງສູດມົນ ແລະ ສຽງຈີ່ມໜັງສືຂອງຈ້ອນ້ອຍ.

ແລ້ວບ້ານກໍຈະສະຫງັດ ໃນເວລາປະມານ 20-21 ເວັ້ນເສັ້ງແຕ່ສຽງໝາເຫົ່າ ໄກ່ຂັນຫຼື ສຽງແຄນ ຍາມເດິກຂອງບ່າວ ທີ່ກັບຈາກຂ່ວງຂອງຜູ້ສາວ ແລະ ສຽງກອງເດິກຂອງວັດໃນມື້ວັນສິນ.

ຖ້າວິດລະດູນາປີແລ້ວ ຊີວິດຂອງຊາວບ້ານກໍຈະປ່ຽນແປງໄປຕາມປະເພນີ ທີ່ເຄີຍປະຕິບັດສືບຕໍ່ກັນມາຕັ້ງແຕ່ປູ່ຍ່າຕາຍາຍ ເຊັ່ນ: ເຂົ້າເຈົ້າໃຊ້ເວລາຫວ່າງເຮັດຮົ້ວໄຮ່ ນາສວນ ຊອກອາຫານກຽມຄາດໄຖ ໄພທຍ້າແປງເຮືອນຢູ່ ກຽມເຂົ້າລະດູຝົນ ຫຼື ລະດູການຜະຫຼິດໃໝ່ ຜູ້ເປັນຊ່າງໄມ້ຊ່າງມືກໍຈະສານກະຕ່າກະບຸງ ຫ້ຽງເຄື່ອງເຮືອນ ຖາກງ້ອນໄຖ ແລະ ຄາດ ຕ່ຳສົ້ນທໍ່ໄໝ ຕີມີດ ພ້າ ສຽມຂວານ ຜະຫຼິດເຄື່ອງມືຕ່າງໆຕະຫຼອດ ເດີ່ນຫ້ຽງໄປແລກປ່ຽນການຄ້າຂາຍ.

ການເຮັດບຸນທັມທານ ເຂົ້າວັດຟັງທັມ ແລະ ການແຕ່ງດອງ ກໍມັກເກີດຂຶ້ນໃນລະດູນີ້ເຊັ່ນກັນ (ເບິ່ງພາກປະເພນີ).

6. ການຜະຫຼິດເຂົ້າ.

ຊາວລາວກໍຄືຊາດຕ່າງໆ ໃນອາຊີອາຄເນ ຖືເອົາການຜະຫຼິດເຂົ້າເປັນພື້ນຖານ ແລະ ເອົາເຂົ້າເປັນອາຫານຫຼັກໃນການບໍລິໂພກ ນັບວ່າເປັນເອກະລັກວັດທະນະທັມລວມ ຂອງຄົນໃນຍ່ານນີ້. ເຂົ້າທີ່ຊາວລາວນິຍົມກັນນັ້ນ ກໍເປັນປະເພດເຂົ້າໜຽວເປັນສ່ວນໃຫຍ່ ນອກຈາກການຜະຫຼິດເຂົ້າແລ້ວຊາວລາວຍັ້ງຜະຫຼິດສາລີເຜືອກມັນ ແລະ ຜັກປະເພດຕ່າງໆ ເຊິ່ງເຂົາເຈົ້າປູກຕາມໄຮ່ຕາມສວນ ຫຼື ຫາມາຈາກປ່າທີ່ມີຢູ່ຢ່າງອຸດົມ.

ຂະບວນວິວັດຂອງການຜະຫຼິດເຂົ້ານັ້ນ ສະເພາະລາວເຮົາແລ້ວກໍຈະມີ

ຂັ້ນຕອນຄວາມເຊື່ອ ຫຼື ຈິດໃຈໄປນຳພ້ອມ.

ມີນິທານເລົ່າສືບກັນມາວ່າ ແຕ່ກີ້ແຕ່ກ່ອນ ເຂົ້ານັ້ນເມັດໃຫຍ່ທ່ຳໝາກຝັກຄຳ ຫຼື ໝາກອຶ ອັນແມ່ນເຈົ້າແມ່ໂພສົບເປັນຜູ້ບັນດານໃຫ້ ແລະ ເຮັດໃຫ້ທຸກຄົນໃນໂລກເຮົາມີບ່ເຂົ້າກິນໂດຍບ່ໄດ້ອຸທອນຮ້ອນໃຈຫຍັງໃຜຢາກໄດ້ຢາກິນທ່ໃດກໍກິນໄດ້. ແຕ່ເມື່ອໆຈາກ ມະນຸດເຮົາເກີດມີຄວາມໂລບມາກໂລພາ ບ່ບໍລິສຸດສັດຊື່ ໂລບເອົາຂອງທຶບນີ້ໄປ ເຂົ້າເມັດໃຫຍ່ຈຶ່ງແຕກກະຈາຍກາຍເປັນເຂົ້າເມັດນ້ອຍ ແລະ ຫາຍໄປຈາກບ່ຂອງມັນເລີຍ ເປັນການລົງໂທດຄວາມຂີ້ໂທດສ່ຳນານຂອງຄົນ.

ຕັ້ງແຕ່ນັ້ນມາ ຄົນເຮົາຈຶ່ງຈຳເປັນໄດ້ອອກເຫື່ອແຮງ ກາກກ່ຳດຳໝອງ ເພື່ອປູກເຂົ້ານາລ້ຽງຊີບຂອງຕົນເອງ. ແຕ່ເຖິງຈະຜະຫຼົດເຂົ້ານາລ້ຽງຊີບຂອງຕົນດ້ວຍຕົນເອງກໍຕາມ ແຕ່ມະນຸດເຮົາຍັງສະແດງຄວາມຮູ້ບຸນຄຸນຕໍ່ພະເຈົ້າແຫ່ງເຂົ້າ ຄືແມ່ໂພສົບນັ້ນເອງ ແລະ ກໍຖືເຂົ້າກິນເໝືອນພະເຈົ້າຜູ້ໃຫ້ກຳເນີດ ແລະ ລ້ຽງຊີວິດ.

ເຂົ້າທີ່ຊາວລາວນິຍົມກັນບໍລິໂພກນັ້ນ ເຊິ່ງກໍມີກັນຢູ່ຫຼາຍພັນຫຼາຍຊະນິດເມັດໃຫຍ່ ເມັດນ້ອຍ ມີທັງຊະນິດຫອມ ແລະ ຊະນິດທ່ຳມະດາ ນອກນັ້ນຍັງມີປະເພດເຂົ້າກ່ຳເມັດດ່ຳຮຽກວ່າເຂົ້າກ່ຳ ແລະ ເຂົ້າແຜ່ເມັດແດງເຂັ້ມນ່ຳດ້ວຍ.

ກ່ອນຈະປູກເຂົ້າລົງໄຮ່ ຫຼື ລົງນາ ເພິ່ນກໍມັກເຮັດພິທີບູຊາຂວັນຕາແຮກ. ຂວັນຕາແຮກ ຫຼື ຜີຕາແຮກນັ້ນ ແມ່ນສະຖານທີ່ນ້ອຍໆທີ່ເພິ່ນເລືອກໄວ້ເປັນບ່ອນເຮັດບ່ອນຢ່ຳ ເປັນສະຖານທີ່ເຈົ້າອາຮັກ ແລະ ຂວັນເຂົ້າ ຜູ້ປົກປ້ອງໄຮ່ນາຈາກໄພພິບັດຕ່າງໆເພື່ອໃຫ້ໄດ້ເຂົ້າມາກຫຼາຍ. ສະຖານທີ່ດັ່ງກ່າວນັ້ນເພິ່ນຈະມີຫຼັກຕາແໜວສະແດງເຖິງສະຖານທີ່ຫວ່ງຫ້າມ. ເພິ່ນຈະເຮັດຕູບກະແຕະນ້ອຍໆເປັນບ່ອນສະຖິດຂອງຂວັນເຂົ້າ ຫຼື ຜີຕາແຮກກໍ່ວ່າໄດ້ ເພື່ອເອົາເຂົ້າບູຊາ. ເວລາເຮັດພິທີບູຊາຜີຕາແຮກນັ້ນ ເພິ່ນກໍມັກຂ້າໄກ່ ມີແອບເຂົ້າ ເຫຼົ້າກ້ອງ ດອກໄມ້ທຸບທຽນບູຊາ ແລ້ວກໍປູກເຂົ້າໃສ່ຮຽກວ່າຂວັນເຂົ້າ ແລະ ເມື່ອເກັບກ່ຽວແລ້ວກໍເອົາຝອມເຂົ້ານັ້ນ ໄປໄວ້ເລົ້າເຂົ້າເປັນຂວັນເຂົ້າຕະຫຼອດປີ.

ເມື່ອເຮັດພິທີບູຊາຂວັນຕາແຮກແລ້ວ ເພິ່ນຈຶ່ງເລີ່ມປັກດ່ຳ ຫຼື ປູກເຂົ້າທົ່ວໄປ.

ເມື່ອເຂົ້າສຸກເຫຼືອງກ່ຽວຕາກ ແລະ ກອງຮຽບຮ້ອຍແລ້ວ ກ່ອນຈະຕີເຂົ້າ ແລະ ຂົນເຂົ້າຂຶ້ນເລົ້າເພິ່ນຈະເຮັດພິທີທຳບຸນນິມິນພຣະມາສູດ ພ້ອມທັ້ງເຮັດພາ ແຈກພາທານ ອັນມີຄວາມໝາຍວ່າໃຫ້ມີໂຊກລາບ ທາຍໂພຍທາຍໄພເຮັດນາ ໄດ້ເຂົ້າຫຼາຍຝົນຟ້າອຳນວຍ.

ຕາມຄວາມເຊື່ອສະໄໝເກົ່າແລ້ວ ເພິ່ນຈະເຮັດຂອງທານໄປວັດ 9 ເທື່ອ ດ້ວຍກັນໃນຂະບວນການເຮັດນາ ຫຼື ເຮັດໄຮ່ປີໜຶ່ງໆເຊັ່ນ:

- ເວລາຫວ່ານກ້າ.
- ເວລາເຂົ້າພໍເປັນນົມ.
- ເວລາເຂົ້າເປັນເຂົ້າເໝົ້າ.
- ເວລາເປັນເຂົ້າຮາງ.
- ເວລາໃກ້ຈະລົງມືກ່ຽວ.
- ເວລາກອງເຂົ້າ.
- ເວລາຕີເຂົ້າ.
- ເວລາຄຸນເຂົ້າໃສ່ລານ.
- ເວລາຂົນເຂົ້າຂຶ້ນເລົ້າ.

ການເຮັດຂອງທານນັ້ນ ຂຶ້ນກັບຖານະຄອບຄົວ ຖ້າຄອບຄົວໃຫຍ່ມີແຕ່ກໍ ຈະເຮັດພາເຂົ້າຖວາຍວັດ ຫຼື ນິມິນພຣະມາສູດແລ້ວຄົບວັນບາງຄັ້ງຄາວ. ສ່ວນ ຄອບຄົວທີ່ທຸກຈົນກໍມີເຂົ້າຖວາຍຈັ່ງຫັນກໍແລ້ວກັນ ເປັນການສ້າງກຳລັງໃຈ ແລະ ຄວາມຫວັງໃຫ້ແກ່ຜູ້ຜະຫຼຶດ ຕະຫຼອດຄວາມສຸກທາງຈິດໃຈດ້ວຍ.

7. ການຜະຫຼຶດທັດຖະກຳ.

ປະເທດລາວຕັ້ງແຕ່ສະໄໝໃດໆມ.ายັງຕົກຢູ່ໃນບັນດາປະເທດຜູ້ຜະຫຼຶດ ນ້ອຍ ກຸ້ມຕົນເອງ ໂດຍອາໄສທຳມະຊາດເປັນຈຸກໜັກ. ດັ່ງນັ້ນ ຮູບແບບການ ຜະຫຼຶດທັ້ງໝົດແມ່ນທັດຖະກຳ ແຕ່ບໍ່ແມ່ນອຸດສາຫະກຳ.

ເວົ້າໂດຍທົ່ວໄປແລ້ວເກືອບທຸກໆບ້ານ ທຸກໆຄອບຄົວຈະມີການຜະຫຼຶດ ເຄື່ອງທັດຖະກຳເຊັ່ນ ເຄື່ອງນຸ່ງຂອງຖີ ເຄື່ອງໄມ້ເຄື່ອງມື ເພື່ອໃຊ້ສອຍໃນບ້ານ

ໃນເຮືອນ ແລະ ທີ່ຂາຍອອກເພື່ອແລກປ່ຽນເອົາຜະຫຼິດຕະພັນອື່ນໆ ສິ່ງທີ່ຄອບຄົວໜຶ່ງໆຜະຫຼິດເອົາເອງກໍມີເຊັ່ນ: ເຮັດເຄື່ອງນຸ່ງຂອງຖື ສານແຫສານມອງເຮັດເຄື່ອງໄມ້ເຄື່ອງມືເພື່ອການປູກຝັງໃນໄຮ່ນາ ແລະ ການໃຊ້ສອຍໃນບ້ານເຮືອນ. ການຜະຫຼິດປະເພດນີ້ນັບວ່າ ແຜ່ຂະຫຍາຍຫຼາຍຖືເປັນກິດຈະວັດປະຈຳວັນຂອງຄອບຄົວໃຜມັນ.

ນອກຈາກນີ້ແລ້ວ ມັນຍັງມີການຜະຫຼິດທີ່ຮຽກຮ້ອງຫາສີມື ແລະ ຄວາມຊຳນານພໍປະມານເຊັ່ນ: ການຜະຫຼິດເຄື່ອງມືເຮັດດ້ວຍໂລຫະ ເຊັ່ນ ການຕີເຫຼັກເຮັດມີດ ພ້າ ສຽມ ຂວານ ຈົກ ຊວ້ານ ແວກ ຫຼ້ຽໝາກສີບໄຖ ຕະຫຼອດຮອດຫອກດາບງ້າວ ແລະ ນາດປືນ ເຊິ່ງເປັນອາວຸດຊຸດແສງ ການຈັກສານກະບຸງກະຕ່າ ກະລາ ສາດ ການເຮັດລໍ້ເຮັດກຽ່ນ ຕໍ່ເຮືອ ຕໍ່ແພ ເຮັດຄາດໄຖ ການປັ້ນໜໍ້ຫຼໍ່ໄຫ... ເຫຼົ່ານີ້ກໍມີຢູ່ກະແຈກກະຈາຍໄປຕາມບາງບ້ານ ແລະ ບາງຄອບຄົວທໍ່ນັ້ນ ການຫຼໍ່ບໍ່ແມ່ນໝົດທຸກບ້ານ ຫຼື ທຸກຄອບຄົວຈະເຮັດໄດ້.

ນອກຈາກການຜະຫຼິດທີ່ມີລັກສະນະທົ່ວໄປຂອງສັງຄົມນີ້ແລ້ວ ມັນຍັງມີປະເພດການຜະຫຼິດແບບເປັນເອກະລັກສະເພາະ ອັນເນື່ອງມາຈາກທ່າແຮງທາງດ້ານທຳມະຊາດ ແລະ ຄວາມສາມາດຂອງຄົນໃນທ້ອງຖິ່ນນັ້ນໆເຊັ່ນ:

- ຊຽງຂວາງອັນມີຊື່ສຽງດ້ວຍບໍ່ເຫຼັກ ກໍກາຍເປັນແຫຼ່ງຜະຫຼິດເຫຼັກ ຜະຫຼິດເຄື່ອງມື ທຸກປະເພດຕະຫຼອດອາວຸດຊຸດແສງ ແລະ ປືນຜາ ໜ້າກະບອກ ສຳຫຼັບທົ່ວປະເທດ.

- ເຊກອງ ອັດຕະປື ອັນແມ່ນແຫຼ່ງບໍ່ຄຳກໍກາຍເປັນແຫຼ່ງຜະຫຼິດຄຳ ໃຫ້ລາຊະສຳນັກ ແລະ ເພື່ອຂາຍອອກສູ່ ພາຍໃນ ແລະ ຕ່າງປະເທດ.

- ວຽງຈັນ ຫຼວງນ້ຳທາ ຕົ້ງສາລີ ອຸບົນ (ສະໄໝລ້ານຊ້າງ) ທີ່ມີບໍ່ເກືອຊະນິດດີກໍ່ກາຍເປັນແຫຼ່ງຜະຫຼິດເກືອ ເພື່ອລ້ຽງທົ່ວປະເທດ.

- ໄຊຍະບຸລີ ເປັນແຫຼ່ງທີ່ມີໄມ້ສັກຫຼາຍກໍ່ກາຍເປັນບ່ອນລ້ຽງຊ້າງຊຸດຄົ້ນໄມ້ເດັ່ນກວ່າເພື່ນ.

- ຫຼວງພະບາງ ອຸດົມໄຊ ຊຳເໜືອ ຊຽງຂວາງ ສະຫວັນນະເຂດ ຈຳປາສັກ ວຽງຈັນ ເປັນບ່ອນຜະຫຼິດໄໝ ແລະ ຝ້າຍ ພ້ອມນັ້ນກໍຜະຫຼິດຜ້າແພຊະນິດ

ສວຍງາມຈຳໜ່າຍທົ່ວປະເທດ ແລະ ຂາຍອອກສູ່ນອກປະເທດດ້ວຍ.

- ວຽງຈັນອັນເປັນນະຄອນຫຼວງ ເປັນສູນກາງຂອງປະເທດມີການພົວພັນການຄ້າຂາຍກັບປະເທດເພື່ອນບ້ານ ເປັນຕົ້ນແມ່ນໄທຍ໌ ວຽດນາມ ແລະ ຂະເໝນ ກໍມີແຫ່ງຕໍ່ເຮືອຜະຫຼິດກວຽນເພື່ອຂົນສົ່ງເຄື່ອງຂອງ.

- ສະເພາະນະຄອນຫຼວງພະບາງນັ້ນ ມີເອກະລັກຫຼາຍຢ່າງເຊັ່ນ ຈະມີປະເພນີການຈັດບ້ານ ຫຼື ຄຸ້ມຕ່າງໆເປັນຫົວໜ່ວຍຜະຫຼິດໃຫ່ຍເຊັ່ນ: ບ້ານຊ່າງໄຫ ບ້ານເຕົາໄຫ (ບ້ານຈ່ານ) ບ້ານຊ່າງເຫັກ (ຊຽງເຫັກ) ບ້ານຊ່າງຄ້ອງ ບ້ານຊ່າງຫວີ ບ້ານຕີໝໍ້ (ພັນຫຼວງ) ບ້ານຕຳຜ້າທໍໄໝ (ບ້ານຜານິມ) ບ້ານຊ່າງເງິນຊ່າງຄຳ (ບ້ານວັດທາດ) ແລະ ອື່ນໆ...

- ບໍ່ແກ້ວເຊິ່ງມີບໍ່ແຮ່ແກ້ວປະເສີດ ເປັນຕົ້ນແມ່ນແກ້ວທຳນິນນັ້ນ ກໍເປັນແຫ່ງຂຸດຄົ້ນແກ້ວ ເພື່ອນຳຂາຍທັງພາຍໃນ ແລະ ຕ່າງປະເທດ.

8. ເຄື່ອງລ່າເນື້ອ ແລະ ຫາປາ.

ການທີ່ປະເທດລາວມີປ່າເຂົາໜາຕຶບມີຫ້ວຍໜ້ອງຄອງນຳຫຼາກຫຼາຍ ເຊິ່ງອຸດົມສົມບູນໄປດ້ວຍເຄື່ອງປ່າຂອງດົງສັດສາວາສິ່ງນາໆພັນ ຕະຫຼອດປູປານານ້ຳບໍ່ມີເຫືອດແຫ້ງເປັນນັ້ນ ຊາວລາວເຜົ່າຕ່າງໆກໍເອົາການລ່າເນື້ອ ແລະ ການຫາປາເປັນວິຖີຊີວິດລ້ຽງຊີບສ່ວນສຳຄັນ ຄຽງຄູ່ກັນກັບການເພີ່ມພູນທາງດ້ານກະສິກຳ ລ້ຽງສັດ ການຜະຫຼິດດ້ານຫັດຖະກຳ ແລະ ການຄ້າຂາຍ. ບົດບາດຂອງການລ່າເນື້ອຫາປານັ້ນ ປັດຈຸບັນໄດ້ຄ່ອຍໆຫຼຸດລົງໄປເລື້ອຍໆ ເນື່ອງຈາກການບຸກແຫ້ງຂອງຊັບພະຍາກອນປ່າໄມ້ ແລະ ນ້ຳ ເຊິ່ງນັບມື້ນັບຮ້າຍແຮງ.

1. ອຸປະກອນການລ່າເນື້ອຂອງລາວກໍມີເຊັ່ນ:

1.1: ປະເພດການໃຊ້ຍິງ ແລະ ພຸ່ງ.-

ປືນເພິ້ງ ປືນພະລາ ໜ້າໄມ້ ກົ່ງກອນ ທະນູ ພຸ ຫຼາວ ຫອກ... ອາວຸດປະເພດນີ້ເຂົາເຈົ້າຈະໃຊ້ໃນກໍລະນີຕ່າງໆ ດັ່ງນີ້:

- ການໄຮ່ເນື້ອ: ຜູ້ຖືປືນ ຖືຫອກຈະຕ້ອງໄດ້ຜົກຢູ່ຕາມສາຍທາງ ຫລື ຮ່ອມຫ້ວຍບ່ອນທີ່ສັດຈະໄປ ຄົນຈຸໜຶ່ງໃຊ້ໝາໄລ່ສັດໃຫ້ເຂົ້າໄປຫາບ່ອນ ຫລື

ຈຸດທີ່ຜູ້ຈະຍິງດັກຢູ່.

- ກ້ານ: ເຂົາເຈົ້າໃຊ້ໂຄມໄຟໄປກ້ານຍິງສັດເວລາກາງຄືນ.

- ຜົກຊຸ່ມ: ເຂົາເຈົ້າຈະແປງຊຸ່ມໄວ້ບ່ອນທີ່ສັດລົງກິນເວລາເຖິງຍາມ ແລະ ເວລາຫິວ.

- ລະເນື້ອ (ຊອກເນື້ອ) : ເຂົາເຈົ້າຈະເອົາອຸປະກອນທີ່ໃຊ້ຍິງ ຫລື ສັກ ແທງເຂົ້າປ່າຕາມສັດ ແລະ ຈອບສັດ.

1.2. ອຸປະກອນຫ້ຳງດັກ:

- ໜ່ຳງ ຫ່າວ ຂວາກ ໜູມ ກະຕ່ຳ ກະດິດ ກັບ ຫຼັ້ງ ກະບອກ ແຮ້ວ (ຕ່ຳງໆ) ບ້ວງ ກະຢອດ ກະທ້ຳ ຄົ້ນ ຕັ້ງບານ ຕັ້ງຕິດ ຂະນັບ...ອຸປະກອນຈຳ ນວນນີ້ ແຕ່ລະຢ່ຳງມີຫລາຍແບບ ຫລາຍປະເພດແຕກຕ່ຳງກັນ ມີວິທີໃຊ້ ແລະ ຄຸນສົມບັດແຕກຕ່ຳງກັນ ເຊິ່ງບໍ່ສາມາດເວົ້າລະອຽດນະທີ່ນີ້ໄດ້. ແຕ່ກໍລ້ວນແລ້ວ ແມ່ນອຸປະກອນຈັບສັດມີຕີນ ສັດເລືອຄານ ສັດປີກ ໄດ້ຕາມແຕ່ລະກໍລະນີຕ່ຳງ ກັນ. ບ່ຳງຜ່ອງກໍຈັບເປັນ ບ່ຳງຜ່ອງກໍຖືກສຽບ ບ່ຳງຜ່ອງຖືກທັບໜີບ ບ່ຳງຜ່ອງຖືກ ເຊືອກຮັດຕີນ ບ່ຳງຜ່ອງຖືກຮັດຄໍ ບ່ຳງຜ່ອງຕິດຕ່ຳ ດັ່ງນີ້ເປັນຕົ້ນ.

1.3. ປະເພດສັດປ່າທີ່ເຂົາເຈົ້າລ່າມ່ຳເປັນອາຫານກໍມີເຊັ່ນ: ເມັຍກະທ່ຳ ກວ່ຳງ ຟານ ໝູປ່ຳ ໄອ່ງ ມ້ຳ ເຍືອງ ໄກ້ ລິ່ງ ເຫງັນ ເໝັ້ນ ແລນ ລິ່ນ ເຮ້ຍ ກະ ຮອກ ກະແຕ ຈ້ອນ ກະເລັນ ໜູພຸກ ແລະ ອື່ນໆ ສ່ວນປະເພດຊ້ຳງນັ້ນ ເພິ່ນມັກ ລ່າມ່ຳເປັນສັດໃຊ້ສອຍ. ເພິ່ນຍ້ຳງລ່າແຮດ ແລະ ສູ ເພື່ອເອົານໍ້ທີ່ມີລາຄາແພ່ງ ແລະ ເລືອດ ກະທ່ຳງເນື້ອໜ້ຳງມ່ຳໄວ້ເຮັດຢ່ຳ.

1.4.ນອກຈ່ຳກສັດຍ່ຳງ ແລະ ຕ່ຳມນີ້ແລ້ວຍ້ຳງມີສັດປີກປະເພດຕ່ຳງໆ ເຊັ່ນ: ນົກຂວ່ຳ ໄກ່ປ່ຳ ນົກກອ່ຳງກອດ ນົກກົກ ນົກແກ່ຳ ນົກວັກ ນົກຍ່ຳງ ນົກ ເປັດຄ່ຳ ນົກເຕັນ ນົກເຂົ່ຳ ນົກໝູມ ແລະ ນົກນ້ອຍໃຫຍ່ປະເພດເພດຕ່ຳງໆ ຫລ່ຳຍຮ້ອຍຊະນິດ.

2. ອຸປະກອນປະເພດຈັບສັດນ້ຳ.

ອຸປະກອນຈັບສັດນ້ຳກໍມີທ້ຳງສອ່ຳງປະເພດດ້ວຍດ້ວຍກັນເຊັ່ນ ປະເພດ ທີ່ຄົນໄປຫ່ຳຈັບກັບທີ່ ແລະ ປະເພດທີ່ຫ້ຳງໄວ້ແລ້ວໄປຢ່ຳມເອົ່ຳ.

2.1. ປະເພດທີ່ຄົນຫາຈັບກັບທີ່ກໍມີເຊັ່ນ: ແຫ ຈີບ ມອງ ກວາດ ຫວີງ ຫວາງ ສ້ອນ ເຊິງ ກະດຸ້ງ ຫລື ຈຳ ຊຸ່ມ ແຖວກວາດ ເບັດ ແຫລມ ໜ້າ ປັ່ນ ດັ່ງນີ້ເປັນຕົ້ນ.

2.2. ປະເພດກາງດັກໄວ້ແລ້ວໄປຢາມ.

ໂຕ່ງ ນາມ ມອງ ຈັ່ນ ໄຊ ລີ ຕ້ອນ ຄ້າງ ສ້ອນ ຈີບ ເບັດ... ດັ່ງນີ້ເປັນຕົ້ນ.ແຕ່ລະຢ່າງຍັງມີປະເພດອັນລະອຽດເປັນແຕ່ລະຊະນິດແຕກຕ່າງກັນ ແລະ ໃຊ້ໃນໂອກາດ ຫຼື ກາລະເທສະແຕກຕ່າງກັນຂອງການເຄື່ອນໄຫວຂອງສັດ.

2.3. ປະເພດປາທີ່ມີຢູ່ໃນລາວ ແລະ ທີ່ນິຍົມກັນແພ່ຫຼາຍກໍມີບາງປະເພດເຊັ່ນ: ປາບຶກ ປາເລີມ ປາວ່າ ປາແກງ ປາຫ່ຽນ ປາເໝັ້ນ ປາປາກ ປານິນ ປາໄນ ປານາງ ປາຂົບ ປາຄ້າວ ປາປີ້ງ ປາຢາງ ປາຝາ ປາຫຼາດ ອ່ຽນ ປາຄົ່ງ ປາມ້ອມ ປາຈາດ ປາກ້ວນ ປາເຄິ່ງ ປາແຂ້ ປາດຸກ ປາຄໍ່ ແລະ ປະເພດອື່ນໆຫຼາຍໆຊະນິດ.

ນອກຈາກນີ້ແລ້ວ ຍັງມີປະເພດກຸ້ງ ຫອຍ ປູ ຂຽດ ກົບ ຕະຫຼອດແມງໄມ້ ດ້ວງ ນາງຕໍ່ ເຜິ້ງແລະ ອື່ນໆ.

9. ການແຕ່ງອາຫານ.

ມີສຸພາສິດຂອງລາວບົດໜຶ່ງເວົ້າວ່າ: "ໃນນ້ຳມີປາ ໃນນາມີເຂົ້າ" ເພື່ອໝາຍເຖິງຄວາມອຸດົມສົມບູນຂອງທ້ອງຖິ່ນໜຶ່ງໆ ຫຼື ຂອງປະເທດລາວໂດຍສະເພາະ. ສະແດງວ່າ "ເຂົ້າກັບປາ" ເປັນອາຫານພື້ນຖານປະຈຳມື້ປະຈຳວັນຂອງຊາວລາວ. ມັນຍັງສະແດງໃຫ້ເຫັນອີກວ່າ ປານັ້ນ ມີຫຼາຍ ແລະ ຫາງ່າຍ ເພື່ອສາມາດເປັນອາຫານກັບທຸກຄາບເຂົ້າໄດ້ ແຕ່ຊີ້ນນັ້ນເປັນສິ່ງທີ່ຫາບໍ່ໄດ້ງ່າຍເໝືອນປາ ແລະ ກໍບໍ່ສາມາດເປັນອາຫານກັບທຸກໆຄາບເຂົ້າຂອງຄົນລາວໄດ້. ດັ່ງນັ້ນ ເວົ້າທົ່ວໄປແລ້ວ ຊາວລາວກິນເຂົ້າກັບປາຫຼາຍກວ່າກິນເຂົ້າກັບຊີ້ນ ແຕ່ກໍບໍ່ໝາຍຄວາມວ່າຄົນລາວບໍ່ມັກກິນຊີ້ນເລີຍ.

ມີຊີ້ນ 10 ປະເພດທີ່ຊາວພຸດລາວລະເວັ້ນ ເຊັ່ນ: ຊີ້ນຄົນ ຊີ້ນຊ້າງ ຊີ້ນໝາ ຊີ້ນລີງ ຊີ້ນເສືອ ຊີ້ນໆ ຊີ້ນແຂ້ ຊີ້ນແມວ ຊີ້ນແຮ້ງ ຊີ້ນກາ ແຕ່ກໍຍັງມີປາບາງປະເພດທີ່ເພດຍິງປະຕິເສດ ເຊັ່ນ: ອ່ຽນ ປາຫຼາດ ເຕົ່າ ເປັນຕົ້ນ.

ພວກເຮົາສາມາດຈັດອາຫານລາວອອກເປັນໝວດຕ່າງໆດັ່ງນີ້:

- ໝວດ ລາບ-ກ້ອຍ-ສ້າ
- ໝວດ ຕົ້ມ-ແກງ
- ໝວດ ຂໍ້ອ-ຈີ້ນ
- ໝວດ ຊຸບ-ຢຳ
- ໝວດ ປີ້ງ-ຈີ່
- ໝວດ ດອງ-ໝັກ-ອົ່ວ
- ໝວດ ເຂົ້າປຸ້ນ-ເຂົ້າຊອຍ
- ໝວດ ປົ່ນ-ແຈ່ວ
- ໝວດ ໝົກ-ມອກ
- ໝວດ ຂອງຫວານ
- ໝວດ ເຄື່ອງດື່ມ

9.1. ໝວດລາບ-ກ້ອຍ.

ລາບ ກ້ອຍນັ້ນ ນັບວ່າເປັນອາຫານຊັ້ນເອກຂອງລາວ ມີຢູ່ໝວດຍ່ອຍ ຕ່າງໆຫຼາຍໝວດດ້ວຍກັນດັ່ງນີ້:

- ລາບ: ມີລາບຫຼາຍຊະນິດເຊັ່ນ ລາບແຫ້ວ ລາບຊິດ ລາບເລືອດ ລາບ ເສືອ...ລາບແຫ້ວ ແລະ ລາບຊິດນັ້ນ ເພີ່ນເຮັດໄດ້ທັ້ງສຸກ ແລະ ດິບແລ້ວແຕ່ ຄວາມຕ້ອງການ ສ່ວນລາບເລືອດນັ້ນ ເຄື່ອງປະກອບຈະສຸກແຕ່ເລືອດດິບ. ລາບ ເສືອນັ້ນ ເປັນລາບດິບລ້ວນຈະສຸກກໍແມ່ນສ່ວນປະກອບບາງຢ່າງ.

ວິທີປຸງແຕ່ງນັ້ນສິ່ງສຳຄັນແມ່ນຊີ້ນ ຫຼື ປາຝັກໃຫ້ແຫຼກໆ ມີນ້ຳປຸ້ງ ມີ ຫອມ ໝາກເຜັດ ແລະ ເຂົ້າຂໍ້ວເປັນສ່ວນປະກອບ. ເນື້ອທີ່ເພີ່ນນິຍົມເຮັດລາບ ສ່ວນຫຼາຍແມ່ນສັດປ່າ ເຊັ່ນ: ກວາງ ຟານ ໄກ້ ນົກຂາ ໄກ່ປ່າ ນົກຕໍ່ ຮອກ ເປັດ ນ້ຳ... ສັດບ້ານກໍມີເຊັ່ນ: ຄວາຍ ງົວ ແບ້ ເປັດ ໄກ່... ສ່ວນສັດນ້ຳກໍມີ: ປາແກ ປາວ່າ ປາເອີນ ປາສຫຼ້ວ ປາຂົບ ປາຄ້າວ ປາແຂ້ ປາເຄິ ປາມ້ອນ ປາຄິ ປາຂົມ

(ປາສູດ)...

-ສ້ຳ: ສ້ຳນັ້ນຈະແຕກຕ່ຳງຈຳກກ້ອຍຈັກໜ່ອຍດ້ຳນກຳນເລືອກຊິ້ນ ແລະ ສ່ວນປະກອບ.ແຕ່ທັ້ງສ້ຳ ແລະ ກ້ອຍຈະຕ້ອງມີອັນເປັນພື້ນຖຳນນັ້ນຄື ໝຳກ ນຳວ ຫຼື ນ້ຳສົ້ມ ແລະ ເຄື່ອງຫອມ.

ສ່ວນຊິ້ນສ້ຳລັບເຮັດສ້ຳນັ້ນ ແຕກຕ່ຳງໄປຈຳກປະເພດເຮັດລຳບຈັກໜ່ອຍເຊັ່ນ: ເພິ່ນນິຍົມຊິ້ນໝູ ແລະ ປ້ຳປະເພດທີ່ເອ້ຳເຮັດລຳບທີ່ເວ້ຳມຳ. ແຕ່ປ້ຳທີ່ຖືວ່ຳນິຍົມພິເສດສ້ຳລັບສ້ຳນັ້ນ ແມ່ນປ້ຳກ້ອນ ປ້ຳກ້ອນ ປ້ຳຫ່ຽນ... ສ້ຳລັບສ້ຳນີ້ ອັນທີ່ແຕກຕ່ຳງຈຳກລຳບ ແລະ ກ້ອຍແດ່ກໍແມ່ນກຳນໃຊ້ຫີວຊີ້ງໃຄ ຫຼຳຍກວ່ຳເພິ່ນ ສ່ວນລຳບນັ້ນ ບໍ່ໄດ້ໃຊ້ຫີວຊີ້ງໃຄເລີຍ.

ນອກຈຳກສ້ຳປະເພດທ້ຳມະດ້ຳແລ້ວຍັງມີສ້ຳໂຕນ ເຊິ່ງເພິ່ນຈະໃຊ້ປ້ຳ ດິບຊະນິດດີຊອຍເປັນຕ່ອນແລ້ວກໍປຸງໃສ່ໝຳກນ້ຳວຜັກຫອມພ້ອມດ້ວຍນ້ຳ ເຄື່ອງປຸງແຕ່ງເປັນອ້ຳຫຳນເລີຍ.

ນອກນັ້ນຍັງມີສ້ຳເຕັ້ນ ຄືເພິ່ນຈະໃຊ້ປ້ຳນ້ອຍທີ່ລ້ຽງໄວ້ເປັນພິເສດ ແລ້ວ ເອ້ຳເວລ້ຳຍັງເປັນໆ ມ້ຳປຸງເປັນອ້ຳຫຳນ (ສ້ຳລັບຜູ້ເຖົ້ຳຜູ້ແກ່ຄໍແຂງ).

- ກ້ອຍ: ຈະປຸງແບບສ້ຳແຕ່ບໍ່ຄ່ອຍເລືອກຊິ້ນ ເລືອກປ້ຳເໝືອນສ້ຳເລີຍ. ນອກຈຳກກ້ອຍທ້ຳມະດ້ຳແລ້ວ ຍັງມີກ້ອຍຈຸ່ມ ເຊິ່ງເພິ່ນຈະໃຊ້ປ້ຳສຸກມ້ຳພັນໃສ່ ໃບຜັກຫຸ້ມດ້ວຍເຄື່ອງປະກອບ ແລ້ວຈຸ່ມຖ້ຳຈຸ່ມທີ່ປຸງໄວ້ແລ້ວນັ້ນ ເຊິ່ງຄ້ຳຍໆກັບ ພັນເຂ້ຳປຸ້ນ.

- ແສ້ມ: ເປັນອ້ຳຫຳນທີ່ໃຊ້ຊິ້ນ ແລະ ນ້ຳມັນໝູມ້ຳຝັກແຫ້ງກຂ້ວໃຫ້ສຸກ ແລ້ວປຸງເຂ້ຳກັບເຄື່ອງ
ປຸງທີ່ໄດ້ກຽມໄວ້ ເປັນອ້ຳຫຳນສຸກ ແລະ ມີນ້ຳມັນປົນ.

9.2. ໝວດຕົ້ມ-ແກງ.

ມີປະເພດແກງ ຫຸ ຕົ້ມ ຫລຳຍປະເພດດ້ວຍກັນເຊັ່ນ: ແກງຮ້ອມ ແກງ ສົ້ມ ແກງຊ້ວ້ຳ ແກງຂົມ ແກງອ່ອມ ແກງຜັກ ແກງໜໍ່ ແກງເຫັດ ແຕ່ລະປະເພດ ແກງກໍມີແບບຍ່ອຍ ຫລື ສ້ຳຂ້ຳໜ້ຳໃສໜ້ຳມັນເຊັ່ນ: ແກງສົ້ມປ້ຳ ແລະ ແກງສົ້ມຊິ້ນ ແກງໜໍ່ໄມ້ ດັ່ງນີ້ເປັນຕົ້ນ.

ນອກຈາກນັ້ນຍັງມີຕົ້ມຍຳ ເຊິ່ງເປັນແກງປະເພດໜຶ່ງຂອງຫລວງພະບາງ ໂດຍສະເພາະຕົ້ມຍຳນັ້ນ ເພິ່ນຈະເອົາປາຄໍ່ດິບມາຝານຕົ້ມໃສ່ນ້ຳຫ້ຳມະດາ ແລ້ວປົງໄວ້ໃຫ້ເຢັນ ແລ້ວຈຶ່ງເອົາຄົ້ງໃຄມາຂອຍພ້ອມຜັກທຽມ ຫອມບົ່ວ ພິກນ້ອຍ ແລະ ເຜັດດິບ. ແລ້ວຈຶ່ງເອົາລົ່ງຄົ່ນ ພ້ອມດ້ວຍນ້ຳໝາກນາວ ແລະ ນ້ຳປາ ເກືອ ດັ່ງນີ້ເປັນຕົ້ນ. ຈຸດພິເສດຂອງແກງ ຫລື ຕົ້ມນັ້ນ ຈະມີນ້ຳຫລາຍບໍ່ເຜັດ ບໍ່ເຄັ້ມຫລາຍ ແລະ ໃຊ້ບ່ວງຊົດກິນ.

- ເອາະ: ເອາະນີ້ຕ່າງກັບແກງຢູ່ບ່ອນວ່າ ຈະມີເນື້ອເປັນພື້ນຖານ ມີເຄື່ອງປຸງເຊັ່ນ: ໝາກເຜັດຫອມນາງໆຂະນິດ ໝາກເຂືອ ຫລື ໜໍ່ໄມ້ສົ້ມ ແລະ ເຄື່ອງປຸງນາງໆຂະນິດ. ຈຸດພິເສດແມ່ນນ້ຳໜ້ອຍ ລົດຊາດເຂັ້ມ ເຜັດເຄັ້ມພໍດີ.

ຕົ້ມແຈ່ວ: ເພິ່ນມັກເຮັດຕົ້ມແຈ່ວປາ ຫລື ກົບທີ່ປົ້ງແລ້ວ ມີໝາກເຂືອຈີ້ໝາກເຜັດຈີ້ຜັກທຽມຜັກບົ່ວຈີ້ປະກອບວິທີປຸງແຕ່ງບໍ່ຕ່າງຫຍັງກັບເອາະ ແຕ່ລົດຊາດຈະໜັກໆກວ່າຄືວ່າ ເຄັ້ມ ເຜັດ ແລະ ນ້ຳໜ້ອຍກວ່າ.

9.3. ຂໍ້ວ-ຈົ່ນ.

ຂໍ້ວ ຈົ່ນ ຫອດເປັນອາຫານປະເພດທີ່ໃຊ້ນ້ຳມັນເປັນພື້ນຖານນັ້ນ ກໍມີຫລາຍແບບຫລາຍສີສັນ
ເຊັ່ນກັນ ເຊິ່ງສ່ວນໃຫຍ່ບໍ່ມີຄວາມແຕກຕ່າງກັບຂໍ້ວ ຈົ່ນ ແລະ ຫອດແບບຈົ່ນແບບວຽດນາມ ຫລື ໄທຍ໌ເລີຍ. ແຕ່ອັນພິເສດຂອງຂໍ້ວພື້ນເມືອງແທ້ໆຈະຕ້ອງມີໝາກເຜັດແຫ້ງ ແຊ່ນ້ຳ ເອົາແກ່ນອອກ ແລ້ວເອົາມາຕຳໃສ່ນ້ຳ ເພື່ອໃຫ້ໄດ້ສີເຂັ້ມໜ້າແຊບ. ສ່ວນຈົ່ນ ແລະ ຫອດ ນອກຈາກຈົ່ນ ແລະ ຫອດຊິ້ນປາ ຫລື ສັດປະເພດອື່ນແລ້ວ ເພິ່ນຍັງຫອດໝາກເຂືອ ຫອດຍອດຜັກ ດອກໄມ້ ໄຄແຜ່ນ ເຄື່ອງແຫ້ງ ເພື່ອເປັນຂອງແອ້ມອາຫານຫລັກຕ່າງໆນຳດ້ວຍ. ຂໍ້ວ ຈົ່ນ ແລະ ຫອດ ຂະຫຽາຍຕົວໜ້ອຍຢູ່ຕາມຊົນນະບົດທີ່ຫ່າງໄກ ແຕ່ມີການຂະຫຽາຍຕົວກວ້າງຂວາງຢູ່ຕົວເມືອງໂດຍສະເພາະແມ່ນຮ້ານອາຫານ.

9.4-ຊຸບ-ຍຳ:

ຊຸບກັບຍຳນັ້ນ ແມ່ນສອງປະເພດອາຫານທີ່ໃກ້ຄຽງກັນພໍສົມຄວນ ເຊິ່ງບາງບ່ອນບາງທ້ອງຖິ່ນນັ້ນ ໃຊ້ຊື່ປະປົນກັນ ແຕ່ຄວາມຈິງແລ້ວມັນກໍມີຈຸດພິເສດ

ຂອງໃຜມັນຈະແຈ້ງ.

ຊຸບນັ້ນໂດຍທົ່ວໄປແລ້ວ ເພິ່ນໃຊ້ກັບຜັກ ຄືເອົາຜັກປະເພດຕ່າງໆມາ ໜັ້ງໃຫ້ສຸກແລ້ວປຸງນ້ຳຊຸບປະສົມ ແລ້ວແຕ່ຄວາມຕ້ອງການ ແຕ່ອັນຂາດທີ່ບໍ່ໄດ້ ສຳລັບເອກະລັກສະເພາະຂອງມັນນັ້ນແມ່ນໝາກງາ ຫຼື ໝາກຖົ່ວດິນທີ່ຕ້ອງມີ ປະກອບນຳດ້ວຍ. ເອກະລັກທີ່ຈຳເປັນອັນໜຶ່ງແມ່ນຫອມປ້ອມ ແລະ ຫອມໜຸ່ມ ເຜົ່າ ເພື່ອຕຳປົນໃສ່ນຳ ເພື່ອໃຫ້ໄດ້ລົດຊາດຫອມ.

ສ່ວນຍຳນັ້ນມີສອງປະເພດດ້ວຍກັນເຊັ່ນ ຍຳປະເພດຜັກບາງຊະນິດ ແລະ ຍຳປະເພດຊີ້ນ ປາ ແລະ ສັດນ້ຳປະເພດອື່ນໆ.

ຍຳປະເພດຜັກນັ້ນ ເພິ່ນມັກໃຊ້ໝາກປົດບ ໝາກຖົ່ວດິບ ຫຼື ໝາກເຂືອ ດິບມາຊອຍໃຫ້ລະອຽດ ແລ້ວປຸງເຄື່ອງປຸງທີ່ເຂົ້າກັບມັນ. ອັນທີ່ພິເສດທີ່ຂາດບໍ່ ໄດ້ສຳລັບຍຳນີ້ ຕ້ອງມີຂີ້ມໃສ່.

ປະເພດຍຳຊີ້ນ ຍຳປາ ຍຳກຸ້ງ ຫຼື ປູນັ້ນ ເພິ່ນມັກເອົາຊີ້ນມາຕົ້ມ ຫຼືປີ້ງໃຫ້ ສຸກແລ້ວກໍເອົາມາຊອຍໃຫ້ແລບ ເອົາເຄື່ອງປຸງໃສ່ຕາມລົດນິຍົມຂອງໃຜມັນ.

ເພິ່ນຍັງເຮັດຕົ້ມຍຳເຊິ່ງກໍແມ່ນຍຳທີ່ມີເຄື່ອງປຸງແບບດຽວກັນ ຕ່າງມີນ້ຳ ໜາຍຈັກໜ່ອຍ ຈະແມ່ນຍຳປະເພດໃດກໍຕາມ ໝາກນາວ ຫຼື ນ້ຳສົ້ມນັ້ນເປັນສິ່ງ ທີ່ຂາດບໍ່ໄດ້.

9.5. ໝວດປີ້ງ-ຈີ່:

ປີ້ງ-ຈີ່ ເປັນປະເພດອາຫານທີ່ໃຊ້ຄວາມຮ້ອນຂາງ ຫຼື ແຜດເຜົ່າໃຫ້ເນື້ອ ປາ ສັດປະເພດຕ່າງໆ ແລະ ບາງຊະນິດຜັກໃຫ້ສຸກ ຫຼື ຈືນໃຫ້ແໜ້ນກໍໄດ້. ມີຢູ່ດ້ວຍກັນໜາຍໝວດຍ່ອຍເຊັ່ນ:

- ປີ້ງ: ປີ້ງແມ່ນຊະນິດເອົາເນື້ອ ໄກ່ ນົກ ຫຼື ປາມາແພ່ ເອົາເກືອທາ ຫຼື ບໍ່ ທາ ແລ້ວເອົາຫີບຄົບຂາງໃສ່ຖ່ານໄຟແດງ. ເພິ່ນປີ້ງໄດ້ທັ້ງເຂົ້າສາລີ ເຊິ່ງເພິ່ນ ຮຽກວ່າຈີ່ ແລະ ຍັງປີ້ງໄດ້ປະເພດຜັກບາງຊະນິດເຊັ່ນ ຜັກກ້ານຈອງ ແລະ ເຫັດ ການປຸງປີ້ງນັ້ນແລ້ວແຕ່ຄວາມມັກ ຫຼື ສິລະປະການແຕ່ງ ບາງຄ່ອງກໍປີ້ງເພື່ອກິນ ກັບເຂົ້າໄດ້ເລີຍ ແຕ່ບາງຄ່ອງປີ້ງຈຳແຈ່ວກໍໄດ້ໂດຍບໍ່ໃສ່ເກືອແຕ່ຫົວທີ.

- ປີ້ງເອີບ: ແມ່ນປີ້ງປາທີ່ແຜ່ແລ້ວເອົາເຄື່ອງຫອມ ຫຼື ເຄື່ອງປຸງຕ່າງໆຍັດໃສ່

ແລ້ວທິບປາໃສ່ຫີບປີ້ງ.

- ປີ້ງຊ້ຳລາ: ຄືປີ້ງຊິ້ນໃຫ້ໄດ້ລະດັບສຸກດິບ.

- ປີ້ງຊິ້ນນ້ຳຕົກ: ຄືປີ້ງພໍນ້ຳຍ້ອຍອອກມາແລ້ວກໍພໍ.

- ປີ້ງເສືອຮ້ອງໄຫ້: ແມ່ນປີ້ງຊິ້ນບ່ອນທີ່ແຊບທີ່ສຸດໃນສັດ.

- ປີ້ງຂະໜາບ: ຄືປີ້ງປາ ຫຼື ກົບ ຂຽດກໍໄດ້ ຝັກເປັນຕ່ອນນ້ອຍພໍດີ ແລ້ວຕຳຫອມເຂົ້າເບືອ ພ້ອມດ້ວຍເຄື່ອງປຸງຄົນໃສ່ກັນແລ້ວຫໍ່ຕອງໃສ່ໄມ້ຫີບປີ້ງ.

- ປີ້ງອໍ່: ຄືເອົາຊິ້ນມາອໍ່ ຫຼື ເຮັດໄສ້ອໍ່ ຫຼື ໝ້ຳ ແລ້ວມາປີ້ງ.

-ເຜົາ: ຕາມປົກກະຕິ ເພິ່ນມັກເອົາກາບກ້ວຍ ຫຼື ດິນດາກແຄມຫ້ວຍມາ ໂອບໃສ່ປາຄໍ ປາໄດ ຫຼື ປາຫຍັງກໍໄດ້ ແລ້ວເຜົາໃສ່ກອງໄຟໃຫ້ສຸກແລ້ວກິນກັບນ້ຳແຈ່ວ.

- ເຜົາງົວ ເປັນຕົ້ນແມ່ນງົວນ້ອຍ: ຄືເອົາງົວເຜົາໃສ່ກອງໄຟໃຫຍ່ໆຈົນໃຫ້ຂີ້ນ ແລະ ໜັງໄໝ້ ແລ້ວຊຸດອອກໃຫ້ຂາວ ບ່ອນທີ່ສຸກ ຫຼື ສຸກດິບນັ້ນ ເປັນທີ່ນິຍົມກັນຂອງນັກສ້າຊຸມທັ້ງຫຼາຍ ໂດຍສະເພາະໃນງານພິທີປະໝຸ່ຄູ່ ຫຼື ກິນເຂົ້າປ່າ.

- ເຜົາ ຈີ່ ແລະ ໝົກເຖົ່າປະເພດພືດ: ບາງພືດບາງຊະນິດໝາກໄມ້ກໍ ເຜົາຈີ່ ຫຼື ໝົກເຖົ່າເດືອດໄດ້ ເຊັ່ນ ເຜົາໜໍ່ໄມ້ໃຫ້ສຸກເພື່ອກັບອາຫານປະເພດອື່ນ ເຜົາໝາກພ້າວເພື່ອໃຫ້ມີລົດຊາດດີຂຶ້ນ ດັ່ງນີ້ເປັນຕົ້ນ ເຜົາໝາກເຂືອໃສ່ລາບ ຕາມແບບຫວງພະບາງດັ່ງນີ້ເປັນຕົ້ນ.

ຈີ່ໝາກເຜັດ ຜັກທຽມ ຜັກບົ່ວ ເພື່ອເຮັດແຈ່ວປະເພດຕ່າງໆໝົກເຖົ່າເດືອດ ໝົກໝາກເຂືອເພື່ອປຸງອາຫານປະເພດຕົ້ມແຈ່ວ ປົ່ນ ຫຼື ແຈ່ວໝາກເຂືອ...

9.6. ດອງ-ໝັກ-ອໍ່ວ:

ອາຫານປະເພດດອງ-ໝັກ-ອໍ່ວຂອງຊາວລາວນັ້ນ ສ່ວນໃຫຍ່ແລ້ວກໍບໍ່ຄ່ອຍແຕກຕ່າງກັບຂອງຊາດຕ່າງໆໃນອາຊີອາຄະເນດ້ວຍກັນທໍ່ໃດ ຕ່າງແຕ່ບາງເຕັກນິກອັນລະອຽດຂອງການປຸງ ແລະ ຊື່ສຽງຕາມພາສາໃຕມັນທໍ່ນັ້ນ.

- ຜັກ: ຜັກດອງ ຜັກສົ້ມ ນ້ຳຜັກ.

- ໜໍ່: ໜໍ່ແຊ່ ໜໍ່ສົ້ມ ໜໍ່ໄຊ່ ໜໍ່ຄອນ ໜໍ່ແຫ້ງ ໜໍ່ເຕັ້ມ ນ້ຳໜໍ່.

- ໝາກໄມ້: ໝາກເຂືອ ໝາກແຕງ ໝາກສົ້ມມໍ ໝາກຕ້ອງ ໝາກຂາມ

ປ້ອມ ໝາກ ເຜັດ ໝາກຂາມ ດອງ...

- ເນື້ອ: ປາແດກ ປາຈາວ ປາຮ້າ ປາແຫ້ງ ປາເອືອບ ປາເຄັມ ປາສົ້ມ ນ້ຳປາ ປາກະເຕົາ...

+ ຊີ້ນແຫ້ງ ຊີ້ນໆ່ຕ໋ ຊີ້ນເອືອບ ຊີ້ນດອດ ຊີ້ນສະຫວັນ ໄສ້ອົ່ວ ໄສ້ກອກ ໝ້ຳ ຊີ້ນເຄັມ.

+ ຖົ່ວດອງ (ຖົ່ວເນົ່ຳ) ນ້ຳຖົ່ວ ຖົ່ວແຜ່ນ...

9.7. ເຂົ້ຳປຸ້ນ ແລະ ເຂົ້ຳຊອຍ:

ເຂົ້ຳປຸ້ນ ແລະ ເຂົ້ຳຊອຍນັ້ນ ແຕ່ລະຢ່ຳງມີສອງຄວຳມໝຳຍເຊັ່ນ: ຄວຳມໝຳຍເດົ້ຳ ແລະ ຄວຳມໝຳຍແຜ່ງ. ຄວຳມໝຳຍເດົ້ຳນັ້ນ ແມ່ນເຂົ້ຳທີ່ເພີ່ນເອົ້ຳມຳເຮັດໃຫ້ເປັນເສັ້ນກົມ ແລະ ຫຸ່ງມ ດ້ວຍກຳນະວິທີສະເພຳະຂອງໃຜມັນ. ເຂົ້ຳປຸ້ນ ແລະ ເຂົ້ຳຊອຍຍັ່ງໝຳຍເຖິ່ງອຳຫຳນທີ່ປຸ່ງແຕ່ງໂດຍໃຊ້ເຂົ້ຳປຸ້ນ ຫຼື ເຂົ້ຳຊອຍເປັນຫຼັກ.

ມີເຂົ້ຳປຸ້ນ (ອຳຫຳນ) ຢູ່ຫຼຳຍປະເພດດ້ວຍກັນ ເຊິ່ງແຕ່ລະປະເພດນັ້ນ ມີວິທີປຸ່ງແຕ່ງ ແລະ ລົດຊຳດແຕກຕ່ຳງກັນເຊັ່ນ: ເຂົ້ຳປຸ້ນນ້ຳພິກ ເຂົ້ຳປຸ້ນນ້ຳປຳ ເຂົ້ຳປຸ້ນນ້ຳແຈ່ວ ເຂົ້ຳປຸ້ນນ້ຳແຫ້ງ ພັນເຂົ້ຳປຸ້ນ ສ້ຳເຂົ້ຳປຸ້ນ ຂ້ໍວເຂົ້ຳປຸ້ນ ແລະ ປັດຈຸບັນຍັ່ງມີຕຳສົ້ມເຂົ້ຳປຸ້ນນ້ຳດ້ວຍ.

- ເຂົ້ຳຊອຍນັ້ນ ກໍແມ່ນຮູບແບບອຳຫຳນທີ່ແຜ່ຫຼຳຍເປັນຕົ້ນແມ່ນທຳງພຳກເໜືອຂອງລຳວ ເປັນຮູບແບບເຂົ້ຳ "ຝັ້ນ" ຂອງຈີນ ຫຼື "ເຝີ" ວຽດນຳມ ຕ່ຳງແຕ່ຮູບແບບກຳນປຸ່ງສະເພຳະຂອງໃຜຂອງມັນທ່ໍນັ້ນ ສ່ວນເຂົ້ຳຊອຍຢູ່ພຳກສ່ວນໃຫຍ່ຂອງປະເທດນັ້ນ ມັນໄດ້ວິວັດນຳເປັນແບບ "ກ໋ວຍຕຽວ" ຂອງຈີນ ຫຼື ແບບ "ເຝີ" (ຝັ້ນ) ຂອງວຽດນຳມ ກະທັ່ງໄດ້ຢືມຊື່ຂອງຈີນ ແລະ ວຽດນຳມນຳມຳໃຊ້ແທນ. ແຕ່ "ກ໋ວຍຕຽວ" ຫຼື "ເຝີ" ຂອງລຳວກໍມີວິວັດທະນຳກຳນໄປໄກພໍສົມຄວນຈີນ ມີເອກະລັກ ແລະ ຄວຳມແຊບຊ້ອຍສະເພຳະຂອງລຳວ ແລະ ກໍຕ່ຳງຈຳກຂອງຈີນ ແລະ ຂອງວຽດນຳມໄປດ້ວຍ.

9.8. ປິ່ນ ແລະ ແຈ່ວ:

- ປິ່ນ: ແມ່ນອຳຫຳນປະເພດໜຶ່ງທີ່ມີຮູບແບບກຳນປຸ່ງແຕ່ງຫຼຳຍແບບ

ແລະ ຫາຍຊະນິດດ້ວຍກັນ ແຕ່ຈະແມ່ນຊະນິດໃຊ້ຊິ້ນ ຫຼື ປາ ຫຼື ກົບຕະຫຼອດ ແມງໄມ້ບາງຢ່າງກໍເຊັ່ນກັນ ຈະຕ້ອງຟັກ ຫຼື ປັ່ນໃຫ້ນຸ່ນດີ ຕົ້ມໃຫ້ສຸກ ແລ້ວຈະຕ້ອງປະກອບດ້ວຍໝາກເຂືອ ໝາກເຜັດໝົກ ຫຼື ຕົ້ມໃຫ້ສຸກປັ່ນເຂົ້າກັນກັບເນື້ອ ໂດຍທີ່ໃສ່ນ້ຳໜ້ອຍມີຜັກຫອມຕ່າງໆ ແລະ ປາແດກ ນ້ຳປາເປັນສ່ວນປະສົມ. ບໍລິວານຂອງປັ່ນກໍມີຜັກລວກ ຜັກດິບ...ປະກອບ. ປັ່ນຂອງຊາວພູວຽພະບາງຈະບໍ່ມີນ້ຳ ແຕ່ເອົາຊວາດນ້ຳມັນແທນ...

9.9. ໝົກ-ມອກ-ຂະນາບ-ອົບ.

- ໝົກ-ມອກ ແລະ ຂະນາບ ເປັນອາຫານປະເພດເອົາຊິ້ນ ປາ ປູ ກຸ້ງ ຕະຫຼອດປາແດກ ປາຈາວ ຫຼື ເຫັດຕ່າງໆ ແລະ ໄຄຫີນ ມາປຸງໃສ່ເຄື່ອງຫອມ ເຄື່ອງເທດ (ປາແດກ) ນ້ຳປາ ແລ້ວໃສ່ຕອງໝົກຂີ້ເຖົ່າເດືອດ ຫຼື ໜຶ້ງ ຫຼື ປີ້ງຂ້າງໄຟໃຫ້ສຸກດີແລ້ວເອົາມາແຕ່ງໃສ່ພາເຂົ້າ ມີເຄື່ອງບໍລິວານເຊັ່ນປະເພດຜັກໜຶ້ງເຂືອທອດກັບ. ຕາມປົກກະຕິເມື່ອມີໝົກ ມອກ ຫຼື ຂະນາບແລ້ວ ຈະຕ້ອງ ມີແກ່ງໄປພ້ອມ ແລະ ກິນກັບເຂົ້າໜຽວ.

ໝົກ-ມອກ ແລະ ຂະນາບນັ້ນ ມີຈຸດພິເສດແຕ່ລະຢ່າງແຕກຕ່າງກັນ ເຊັ່ນ: ໝົກນັ້ນ ຈະຫໍ່ໃຫຍ່ກວ່າ ມີລົດຊາດເຂັ້ມກວ່າ ແລະ ສ່ວນຫຼາຍມັກຈະເອົາ ບົ່ມໄວ້ໃນຂີ້ເຖົ່າເດືອດ ຫຼື ໃສ່ຫວດໜຶ້ງ. ສ່ວນມອກນັ້ນ ຈະເປັນຫໍ່ນ້ອຍ ປຸງໃຫ້ມີລົດຊາດອ່ອນໆ ແລະ ຈະຕ້ອງໜຶ້ງຢ່າງດຽວ. ຂະນາບນັ້ນ ຈະປຸງໃຫ້ມີລົດຊາດເຂັ້ມໆ ເອົາຕອງຫໍ່ແໜບໆແລ້ວເອົາໄມ້ຫີບປີ້ງຂ້າງໄຟ ແລະ ແຫ້ນດີ່ຈຶ່ງຈະແຊບຫອມ.

- ອົບນັ້ນເພີ່ນກໍຈະເອົາຊິ້ນ ຫຼື ປາມາປຸງເຄື່ອງເທດ ເຄື່ອງຫອມ ປຸງລົດຊາດ ແລ້ວກໍໃສ່ໝໍ້ອົບດ້ວຍໄຟອ່ອນໆ ເພື່ອໃຫ້ຄ່ອຍໆສຸກ ແລະ ເປື່ອຍດີ ອົບຈະບໍ່ໄດ້ໃສ່ຕອງຫໍ່ເໝືອນດັ່ງໝົກ ມອກ ແລະ ຂະນາບ.

- ພິເສດຍັງມີປະເພດທີ່ເອີ້ນວ່າໝົກເຜືອກ ໝົກມັນ ແຕ່ປະເພດນີ້ບໍ່ເປັນອາຫານໃສ່ພາເລີຍ ພຽງແຕ່ເປັນອາຫານເສີມ ຫຼື ອາຫານຫວ້າງ ເຊັ່ນ ຈະເອົາຫົວເຜືອກ ຫຼື ຫົວມັນມາໝົກ ຫຼື ບົ່ມໃສ່ຂີ້ເຖົ່າເດືອດຈົນໃຫ້ສຸກແລ້ວກໍເອົາມາກິນ.

9.10. ໝວດໝັກດອງ-ຂອງແຫ້ງ:

ເມື່ອເວົ້າເຖິງປະເພດເຄື່ອງໝັກ ເຄື່ອງດອງຂອງແຫ້ງແລ້ວ ນັບວ່າເປັນ ອາຫານປະເພດທີ່ວໄປຂອງນາໆຊາດໃນທີ່ວໂລກ ໂດຍສະເພາະແມ່ນຊາດ ຕ່າງໆໃນອາຊີ ສຳລັບຊາວລາວທີ່ປະກອບດ້ວຍເຜົ່າພັນຕະກຸນຕ່າງໆນັ້ນ ອາ ຫານປະເພດນີ້ຍິ່ງມີຄວາມອຸດົມຮັ່ງມີເປັນພິເສດ.

- ປະເພດໝັກດອງ ເພື່ອເສີມການປຸງອາຫານໃຫ້ມີລົດຊາດແຊບນ້ວ ຂຶ້ນກໍມີເຊັ່ນ: ປາແດກ ປາຈາວ ນ້ຳປູ ນ້ຳປາ ນ້ຳຖົ່ວ ນ້ຳຜັກ ນ້ຳໜໍ່ ນ້ຳສົ້ມ.

- ປະເພດດອງ ເພື່ອເປັນອາຫານເສີມກໍມີເຊັ່ນ: ເຄັ່ມປາ (ປາດອງ) ແຕງດອງ ເຂືອດອງ ຜັກດອງ ໜໍ່ດອງ ຖົ່ວດອງ (ຖົ່ວເນົ່າ) ໝາກໄມ້ຕ່າງໆດອງ ຜັກສົ້ມ ໜໍ່ສົ້ມ...

- ປະເພດໝັກເປັນອາຫານກໍມີເຊັ່ນ: ສົ້ມຊີ້ນ ສົ້ມປາ ສົ້ມໄຂ່ປາ ຜັກສົ້ມ (ສົ້ມຜັກ) ໄສ້ອົ່ວ ໄສ້ກອກ ໝ້ຳ...

- ປະເພດຕົ້ງວກໍ່ມີເຊັ່ນ: ໝັ້ງ ຄ້ຳໝາກ (ຄ້ຳໝາກຕົ້ງວຖົ່ມ ແຕ່ໝັ້ງ ນັ້ນ ຕົ້ງວກິນໄດ້).

- ປະເພດແຫ້ງກໍມີເຊັ່ນ: ປາຮ້ຳ ປາກະເຕົ້າ ປາແຫ້ງ ປາເຄັ່ມ ຊີ້ນແຫ້ງ ຊີ້ນນາງ໋ ໝູແຕ່ວ ໜັ້ງຢ້ຳ ໜັ້ງພອງ ຊີ້ນສະຫວັນ ຊີ້ນຝອຍ ຊີ້ນຫຼອດ (ຊີ້ນດອດ)...

9.11. ຂອງຫວານ:

ຂອງຫວານຂອງຊາວລາວ ນອກຈາກຈະມີປະເພດໝາກໄມ້ສຸກຊະນິດ ຕ່າງໆແລ້ວກໍຍັງມີປະເພດທີ່ພວກເຮົາສາມາດຈັດໃຫ້ຢູ່ໃນສາມໝວດດ້ວຍກັນ ເຊັ່ນ: ໝວດເຂົ້າໜົມ ໝວດເຄື່ອງກວນ ແລະ ໝວດນ້ຳຫວານ.

- ໝວດເຂົ້າໜົມກໍມີເຊັ່ນ: ເຂົ້າໜົມໄຂ່ ເຂົ້າໜົມແໜບ ເຂົ້າໜົມອົ່ວໃຈ ເຂົ້າໜົມຄົກ ເຂົ້າໜົມຊັ້ນ ເຂົ້າໜົມ ເຂົ້າປາດ ເຂົ້າແຈລະແມ ເຂົ້າຂຽບ ເຂົ້າ ໂຄບ ເຂົ້າຂີ້ໝູ ເຂົ້າໜົມຕັ້ງເມ ເຂົ້າແດກງາ ກ້ວຍຊຽງໃໝ່ ແລະ ເຂົ້າໜົມອີກ ຫຼາຍປະເພດ ມ່ວງແຜ່ນ ນ້ຳອ້ອຍກະທິ... ແລະ ອື່ນໆ.

- ໝວດກວນກໍມີເຊັ່ນ: ຂາມກວນ (ຂາມເປ້ຍ) ມ່ວງກວນ ນັດກວນ...

- ໝວດນ້ຳຫວານກໍມີເຊັ່ນ: ລອຍໝາກແຕງ ລອຍໝາກຕາວ ລອຍ

ໝາກອີ່ຕູ່ ເຂົ້າລອດຊ່ອງໝໍ້ນ້ອຍ ເຊື່ອມກ້ວຍ ເຊື່ອມບວບ ແລະ ອື່ນໆຫຼາຍໆ ຊະນິດ.

ຈຸດພິເສດຂອງຫວານຂອງລາວເຮົານັ້ນ ນອກຈາກຈະມີນ້ຳອ້ອຍ ນ້ຳຕານປະກອບແລ້ວຈະຕ້ອງມີໝາກພ້າວປະກອບຈຶ່ງຈະຖືວ່າສົມບູນແບບໄດ້.

ໃນສັງຄົມສະໄໝໃໝ່ຂອງລາວກໍມີອິດທິພົນຂອງປະເພດເຄື່ອງຫວານສາກົນເຂົ້າມາແຜ່ຫຼາຍ ເຊິ່ງກໍໄດ້ຮັບຄວາມນິຍົມໃນທ່ວສັງຄົມ.

9.12. ໝວດເຄື່ອງດື່ມ.

ເຫຼົ້າຊະນິດຕ່າງໆເຊັ່ນ: ເຫຼົ້າສາວ ເຫຼົ້າສະໄຫ ເຫຼົ້າສະລ້ອນ ເຫຼົ້າໄຫ ເຫຼົ້າໝາກໄມ້ ນ້ຳໝາກໄມ້ ນ້ຳຕົ້ມ ນ້ຳຕົ້ມໝັ້ງ (ຊາ) ນ້ຳອ້ອຍ ນ້ຳຕານ ນ້ຳຕາວ.

10. ການນຸ່ງຫົ່ມ:

ການເຮັດຫູກ ທໍໄໝນັ້ນນັບວ່າເປັນປະເພນີປະຈຳຊາດທ່ີໂດດເດ່ັນຂອງປວງຊົນຊາວລາວແຕ່ເໜືອຕະຫຼອດໃຕ້. ຕາມປະເພນີທ່ີເຄ່ີຍມີມາ ທຸກໆຫ້ັງຄາເຮ່ືອນຊາວຊົນນະບົດ ເປັນຕົ້ນແມ່ນປະຊາຊົນລາວລຸ່ມ ຈະຕ້ອງມີກ່ີມີຫ້ັງສຳລັບໃຫ້ເພດຍິງເຮັດຫູກທໍໄໝ. ແມ່ຍິງລາວທຸກຄົນຕ້ອງເຮັດຫູກທໍໄໝເປັນ ພ້ອມທ້ັງມີສິລະປະ ການປະດິດສ້າງໃນການເກັບປັກ ຖ້ກແສ່ວ ເປັນເອກະລັກສະເພາະຕົນ ຈ່ຶງຈະຖືວ່າເປັນແມ່ຍິງທ່ີພ້ຽບພ້ອມດ້ວຍມາດຖານ ຄຸນສົມບັດຄ່ິບຖ້ວນຂອງຜູ້ຍິງທ່ີດ່ີ.

ໃນ 4 ກຸ່ມຊົນໃຫຍ່ຂອງລາວເຮົານັ້ນ ແຕ່ລະກຸ່ມຈະມີຈຸດພິເສດການນຸ່ງ·ຖ່ີທ່ີໂດດເດ່ັນຕ່າງກັນອັນເປັນເອກະລັກປະຈຳເຜ່ົາ ແລະ ກຸ່ມຍ່ອຍຂອງເຜ່ົາ. ໃນດ້ານໂຄງສ້າງ ຫ້ຼ ຮູບແບບລວມນັ້ນ ບາງກຸ່ມຊົນຈະມີອັນຄ້າຍກັນ ແຕ່ກ່ໍບ່ໍແມ່ນແບບດຽວກັນອ້ອຍຕ້ອຍເຊັ່ນວ່າ ກຸ່ມຊົນຈີນ-ຕິເບດບາງຈຳພວກ ແລະ ກຸ່ມມ້ົງ-ຢ້ົາວມັກຈະໃຊ້ສ່ີດຳເປັນພ້ືນຖານ ແມ່ຍິງຈະນຸ່ງໂສ້ງ ເວ້ັນເສ້ັຽແຕ່ແຊກມ້ົງລາຍສ່ວນຫຼາຍຈະໃຊ້ຜ້ົາຄຸມຫ້ົວ ແລະ ຈະໃຊ້ເຄ່ືອງປະດັບເປັນເງ່ິນ ຫ້ຼ ເປັນໂລຫະສ່ີຂ່າວເຫ້ືອມ.

ສ່ວນຕະກຸນລາວ-ໄຕ ແລະ ບາງກຸ່ມຍ່ອຍຂອງພວກອາຊ່ີໃຕ້ (ມອນ ຂະ

ແມ) ນັ້ນ ມີອັນຄ້າຍກັນດ້ານຮູບຊົງເຊັ່ນ ຜູ້ຊາຍນຸ່ງໂສ້ງ ແລະ ແມ່ຍິງນຸ່ງສິ້ນດັ່ງນີ້ ເປັນຕົ້ນ ຄວາມແຕກຕ່າງກັນນັ້ນຢູ່ທີ່ການພັດທະນາ ແລະ ການຂະຫຍາຍຮູບແບບກວ້າງຂວາງອອກໄປຢ່າງເນື່ອງນິດໃນກຸ່ມຊົນລາວ-ໄຕ ຫຼື ລາວລຸ່ມນັ້ນເອງ. ດັ່ງນັ້ນ ຈຶ່ງມີຄວາມຜິດໂຕນກັນດ້ານຮູບແບບ ດ້ານສີສັນ ແລະ ດ້ານລວດລາຍດອກດວງ ເຊິ່ງບໍ່ມີຄວາມສັ່ງສຸດເປັນໃນກຸ່ມຊົນລາວ-ໄຕ. ສ່ວນກຸ່ມຊົນອາຊີໃຕ້ ຫຼື ຮຽກກັນວ່າ ມອນ-ຂະແມ ບາງກຸ່ມ ເປັນຕົ້ນແມ່ນທາງພາກໃຕ້ຂອງປະເທດນັ້ນ ຈະມີເອກະລັກດ້ານເນື້ອຂອງແພທີ່ໜາຫຍາບ ແລະ ການປະດັບສີເຊັ່ນ ຈະນິຍົມສີແດງຄ້ຳ ສີເຫຼືອງ ແລະ ດຳເປັນຈຸດໜັກ. ຍາມບຸນສົນກິນທານ ຜູ້ຍິງຈະປະດັບດ້ວຍໝາກຕຸ້ມ ໝາກປົດ ສ່ວນຜູ້ຊາຍຈະນຸ່ງກະຕ່ຽວຫ້ອຍຫົ່ງ ເຊິ່ງຖືວ່າເປັນຄວາມສະຫງ່າງາມຂອງເພດຊາຍ.

10.1. ເຄື່ອງຍົດສຳລັບພິທີກຳດັ້ງເດີມ.

- ຜູ້ຊາຍນັບຕັ້ງແຕ່ຊັ້ນຂຸນນາງລົງມາຈົນເຖິງຜູ້ອະວຸໂສຂອງທ້ອງຖິ່ນ ແລະ ບ້ານ ຈະຕັດຜົມເປີດໃສ່ເສື້ອໃຫຍ່ຄໍປົດສີຂາວ ອາດຈະມີໜຽນປະດັບ ນຸ່ງຜ້າຫາງໃສ່ເກີບດຳ ຖົງຕີນຍາວສີຂາວ.

- ແມ່ຍິງຈະຕ້ອງເກົ້າຜົມປະດັບສ້ອຍຄຳໃສ່ຕ້າງຫູ ສາຍຄໍ ທາເຂົ້າໝົ້ນ ນຸ່ງເສື້ອປ້າຍປັກບ່ຽງຜ້າ ນຸ່ງສິ້ນປັກ ຫຼື ສິ້ນມີໃສ່ສາຍແອວຄຳ ຫຼື ເງິນ ໃສ່ປອກແຂນ ປອກຂາ ແຫວນມື ຕ້າງ ແລະ ເກີບແກ້ວສຳລັບຂຸນນາງຜູ້ສູງສັກ.

10.2. ເຄື່ອງຍົດຫາງລັດຖະການແບບສາກົນ.

ສຳລັບຜູ້ຊາຍຊັ້ນນເຈົ້ານາຍຜູ້ໃຫຍ່ ຈະມີສອງແບບດ້ວຍກັນສຳລັບຜູ້ຊາຍ ສ່ວນສຳລັບຜູ້ຍິງນັ້ນ ຍັງຄົງນຸ່ງຕາມແບບປະເພນີເພາະມັນສົມບູນແບບ ແລະ ງົດງາມແລ້ວແຕ່ກໍມີຫຼາຍຮູບການ ແຕ່ງຫຼາກຫຼາຍ ແລ້ວແຕ່ຄວາມມັກຄວາມຕ້ອງການ.

- ຜູ້ຊາຍຈະໃສ່ສຳລັບຊຸດສີຂາວປະດັບຍົດ ເກີບດຳ ຫຼື ໃສ່ເຄື່ອງສຳລັບສາກົນທຳມະດາ (ສຳລັບແມ່ນເຄື່ອງຊຸດ).

- ແມ່ຍິງຈະໃສ່ເສື້ອປ້າຍຄໍປັກແຂນຍາວບ່ຽງຜ້າ ຫຼື ເສື້ອສະງ່ຽບເຜີຍບ່າເບື້ອງໜຶ່ງ ແລ້ວບ່ຽງຜ້າ ຫຼື ເສື້ອແຂນສັ້ນທຳມະດາ ບ່ຽງຜ້າ ປະດັບສ້ອຍ ປອກ

ແຂນ ແຫວນມື ແລະ ຕ່າງ ນຸ່ງສິ້ນນີ ຫຼື ສິ້ນໄໝທີ່ມີລວດລາຍຕ່າງໆຫຼາກຫຼາຍ ແລະ ໃສ່ເກີບທົ້ນຳສະໄໝ.

10.3. ເຄື່ອງແຕ່ງກາຍປະຈຳວັນແບບບູຮານ.

ສະໄໝບູຮານລາວນັ້ນ ຕາມບ້ານຕາມເມືອງໃນມື້ວັນປົກກະຕິຊາວເມືອງຈະນຸ່ງຖືດັ່ງນີ້:

- ຜູ້ຊາຍ ຈະນຸ່ງເສື້ອແຂນຍາວຄໍມົນ ຫຼື ຄໍກວ້າງສີຂາວ ຫຼື ດຳນ້ຳຫ້ອມນ້ຳຄາມ ຫຼື ສີຕ່າງໆແລ້ວແຕ່ໃຈມັກ. ບາງຄັ້ງກໍບໍ່ມັກນຸ່ງເສື້ອເລີຍ ເປັນຕົ້ນໃນເວລາຮ້ອນເອົ້າຢູ່ກັບບ້ານກັບເຮືອນ. ເຂົາເຈົ້າຈະນຸ່ງສ້ຳຂາຍາວ ນຸ່ງຜ້າສະໄຫງ ຫຼື ຜ້າຫາງຊ້ອນກາງເກງຂາສັ້ນ ໃສ່ເກີບໄມ້ ເກີບໜັງສັດ ຫຼື ບໍ່ໃສ່ເກີບ. ສຳລັບເຄື່ອງອອກແຮງງານ ເຂົາເຈົ້າຈະນຸ່ງໂສ້ງເສື້ອຂາຍາວ ແຂນຍາວ ຍ້ອມນ້ຳນິນ ຫຼື ນ້ຳຄາມຖືກຸບ ມີຜ້າຂຳມ້າ (ແພອີ່ໂປ້) ມັດແອວ ຫຼື ພັນຫົວ.

- ແມ່ຍິງຈະເກົ້າຜົມນຸ່ງເສື້ອແຂນສັ້ນ ຫຼື ຍາວສີຕ່າງໆ ແລະ ສິ້ນມີຫົວມີຕີນ ແລະ ປະດັບລວດລາຍເປັນຫ້ຳມະດຳ. ສະໄໝເກົ່ານັ້ນ ຊາວບ້ານຫ້ຳມະດຳບໍ່ມັກໃສ່ເກີບ ສ່ວນເຄື່ອງອອກແຮງງານນັ້ນກໍມີເສື້ອຍ້ອມນິນ ນຸ່ງສິ້ນເກົ່າຖືກຸບ ຫຼື ຜ້າພັນຫົວ.

10.4. ສະເພາະພຣະສົງໃນວັດ.

ສະເພາະພຣະສົງໃນວັດນັ້ນ ຈະຕ້ອງແຖຫົວແຖຄິ້ວ ຄຸມຜ້າເຫຼືອງ ເຊິ່ງປະກອບດ້ວຍຜ້າຄຸມ ຜ້າສະງ່ຽບ ຜ້າສະບົ່ງ ຖົງພາຍ ແລະ ບາດ ສ່ວນຈີວນ້ອຍຈະຕ້ອງຄຸມຜ້າເບົາບາງກວ່າຜູ້ເປັນພຣະ.

ນອກຈາກສົງແລ້ວ ຍັງມີຕາຜ້າຂາວ ແລະ ແມ່ຂາວ ເຊິ່ງເປັນຄົນດາຍເມືອຈຳສິນເຂົ້າວັດ. ຈຳພວກນີ້ຈະນຸ່ງຜ້າເສື້ອສີຂາວ ແລະ ບໍ່ຈຳເປັນຕ້ອງແຖຫົວ.

III. ສະຕິວັດທະນະທັມ

ສະຕິວັດທະນະທັມ ແມ່ນຮູບການທາງສະຕິສັງຄົມ ເຊິ່ງສະທ້ອນອອກ ມາໃນການປະຕິບັດ ແລະ ການສືບທອດຄວາມເຊື່ອ ຮີດຄອງປະເພນີ ກົດບັນ ຍັດ ແລະ ສາສະໜາ. ມັນມີບົດບາດຫຼໍ່ຫຼອມຄົນໃຫ້ມີຄຸນນະສົມບັດສຳລັບສັງ ຄົມໜຶ່ງໆ ມີຮູບແບບແຫ່ງການດຳລົງຊີວິດ ແລະ ການປະພຶດທີ່ປອດໄສສະອາດ ໃນສັງຄົມນັ້ນໆ. ສະເພາະຮູບແບບສະຕິວັດທະນະທັມຂອງສັງຄົມລາວນັ້ນກໍມີຢູ່ ນາໆປະການດັ່ງນີ້:

1. ຄວາມເຊື່ອ

ຊາວລາວມີຫຼາຍຄວາມເຊື່ອຖືດ້ວຍກັນເຊັ່ນ: ເຊື່ອຖືສັນຍະລັກ ເຊື່ອຖືຜີ ສາງນາງໄມ້ ເຊື່ອຖືລາງສັງຫອນ ເຊື່ອຖືລຶກເກນ ເຊື່ອຖືສາສະໜາ (ເປັນຕົ້ນ ແມ່ນພຸດ) ເຊື່ອຖືປາກົດການທາງທຳມະຊາດ (ຫຼັກເກນທາງວິທະຍາສາດ) ດັ່ງນີ້ ເປັນຕົ້ນ.

1.1. ຄວາມເຊື່ອໃນສັນຍະລັກ.

ສັນຍະລັກ ແມ່ນສິ່ງທີ່ມະນຸດປະດິດຂຶ້ນມາເອງ ເພື່ອເປັນຕົວແທນໃຫ້ ສິ່ງໃດສິ່ງໜຶ່ງ. ກຸ່ມຊົນໜຶ່ງໆ ຫຼື ຊາດໜຶ່ງປະດິດສັນຍະລັກໜຶ່ງ ຫຼື ຫຼາຍອັນເປັນ ຕົວແທນໃຫ້ແກ່ກຸ່ມຊົນ ຫຼື ຊາດຂອງຕົນ ເຊັ່ນຊາດລາວ ກໍຖືວ່າ ນາຄ ຫຼື ເງືອກ ເປັນສັນຍະລັກໃຫ້ແກ່ຊາດຕົນ. ຊ້າງເປັນສັນຍະລັກໃຫ້ແກ່ປະເທດຕົນ ໝາກນໍ້ ເຕົ້າປຸ່ງເປັນສັນຍະລັກແຫ່ງມາຕຸພູມຮ່ວມກັນຂອງທຸກເຜົ່າລາວ ດອກຈຳປາ ເປັນສັນຍະລັກໃຫ້ແກ່ດອກໄມ້ປະຈຳຊາດຂອງຕົນ ພຣະພຸດທະຮູບເປັນສັນຍະ ລັກໃຫ້ແກ່ອົງພຣະສັມມາສັມພຸດທະເຈົ້າ ຫຼື ທັມມະຂອງພຣະພຸດທະເຈົ້າໃນ ລາວທີ່ຊາວລາວໃຫ້ສັກກາລະຮູບ ພະຈັນສີຊາວ ແມ່ນສັນຍະລັກຂອງນໍ້າໃຈ ຊາວສະອາດຂອງຊາວລາວ ແລະຄວາມ ອື່ນໆດັ່ງນີ້ເປັນຕົ້ນ. ສັນຍະລັກຕ່າງໆ

ເຫົ່ານີ້ບາງຄັ້ງກໍຖືກໃຊ້ໃຫ້ເປັນຊື່ຂອງຊາດໃດຊາດໜຶ່ງກໍມີເຊັ່ນກັນ. ມີນິທານເລື່ອງ ໜຶ່ງທີ່ກ່າວໄວ້ວ່າ:

"ແຕ່ສະໄໝເດີກດຳບັນພຸ້ນ ຍັງມີຜົວເມັຍຄູ່ໜຶ່ງດຳລົງຊີວິດຢູ່ແຄມໜອງ ແສ (ໜອງກະແສແສນຍ່ານ). ມື້ໜຶ່ງຜົວເປັນຜົວອອກເຮືອນໄປຫາປາໃນໜອງ ຖືກກະແສລົມແຮງພັດເຮືອຫຼົ້ມຕາຍ. ຕໍ່ມາຫຼາຍຟ້າມາປີ ຜູ້ເປັນເມັຍໄປສ້ອນທີ່ ແຄມໜອງ ເລີຍມີຂອນໆໜຶ່ງເວີນມາຊຸນເອົານາງ. ນາງລຸກພ່າຍ ແຕ່ບໍ່ພໍບຶດ ຂອນກໍມາຊຸນເອົາອີກ. ຈາກນັ້ນມາ ຍິງໝ້າຍຜູ້ນັ້ນເລີຍມີລູກ 9 ຊາຍ (ບາງເອ ກະສານວ່າ 10 ຊາຍ) ໃນວັນໜຶ່ງແມ່ພາລູກໄປອາບນ້ຳໃນໜອງເງືອກເລີຍຍໍ່ຄໍ ຂຶ້ນໜ້ານ້ຳ ແລ້ວຖາມວ່າລູກຂ້ອຍເດ ? ບັນດາລູກຜູ້ເປັນພີ່ເຫັນເງືອກພາກັນ ຢ້ານແລ່ນໜີ ຍັງເຫຼືອແຕ່ຜູ້ນ້ອງຫ້າທີ່ບໍ່ຢ້ານ ເງືອກ (ນາຄ) ຈຶ່ງເອົາມາຂີ່ຫຼັງ ແລ້ວກໍເລັຍໄປມາທົ່ວຄົງ. ຈາກນັ້ນມາ ທ້າວນ້ອຍກໍມີລິດເດດ ເຊິ່ງໃຫ້ຊື່ວ່າ "ນາ ຄນ້ອຍ" ຫຼື "ຈົ້ວລົ່ງ" ໃນພາສາຈີນ ວັນຕໍ່ມາໄດ້ກາຍມາເປັນສັນຍາລັກແຫ່ງຕົ້ນ ຕະກຸນ ຫຼື ບັນພະຊົນຂອງຊາດລາວ. "ດັ່ງນີ້ເອງທີ່ຊົນຊາດ" ອ້າຍລາວ"ຫຼື ທີ່ເອີ້ນ ວ່າ "ຊົນຊາດຕະກຸນລາວ-ໄຕ"ຈຶ່ງຖືນາຄ ຫຼື ເງືອກເປັນສັນຍະລັກແຫ່ງຕົ້ນຕະ ກຸນ ຫຼື ບັນພຣະຊົນຂອງຕົນ.

ການຖືສັນຍະລັກໃດໜຶ່ງແຫ່ງຕົ້ນຕະກຸນ ຫຼື ຊາດນັ້ນ ມີປະໂຫຍດທາງ ດ້ານການເມືອງ ແລະ ອຸດົມການແນໃສ່ ສ້າງຄວາມເປັນເອກະພາບ ຄວາມເປັນ ຄອບຄົວດຽວກັນຂອງກຸ່ມຊົນພາຍໃນຊາດ.

1.2. ຄວາມເຊື່ອໃນຜີຕົ້ນຕະກຸນ ແລະ ຜີສາງນາງໄມ້ ເຈົ້າອາຮັກຫຼັກເມືອງ

ຄວາມເຊື່ອໃນຜີຕົ້ນຕະກຸນ ແລະ ຜີສາງນາງໄມ້ ເຈົ້າອາຮັກຫຼັກເມືອງ ນັ້ນ ເປັນຄວາມເຊື່ອຖືມາແຕ່ສະໄໝເດີກດຳບັນ ກ່ອນທີ່ຈະເຊື່ອຖືສາສະໜາ ໃດໆໃນໝູ່ຊົນຊາວລາວ. ມີຫຼາຍປະເພດຜີຢູ່ດ້ວຍກັນທີ່ຊາວລາວເຊື່ອເຊັ່ນ:

- ຜີໄທ້ຜີແຖນ ຜີຫໍ ຜີເຮືອນ ເຈົ້າອາຮັກຫຼັກເມືອງ.

ຄຳວ່າ "ໄທ້" ນັ້ນແມ່ນຄຳສັບຮ່ວມກັນຂອງກຸ່ມຊົນ ລາວ ຈີນ ວຽດນາມ ເກົາຫຼີ ຍີ່ປຸ່ນ ມີຮາກສັບອັນດຽວກັນຄື ( ) ເຊິ່ງແປວ່າໃຫຍ່ ຫຼື ຜູ້ຍິ່ງໃຫຍ່

ອັນໄດ້ກາຍມາເປັນນາມຍົດຂອງກະສັດ ແລະ ຊຸມນາງສະໄໝໜຶ່ງ ເປັນຕົ້ນ ແມ່ນສະໄໝອານາຈັກນ່ານເຈົ້າ (ຄ.ສ VI - XII) ແລະ ກະສັດໃນຕົນງານ ນະ ວະນິຍາຍຂອງລ້ານຊ້າງ.

ຄຳວ່າ "ແຖນ" ນັ້ນ ມາຈາກນາມຍົດຂອງກະສັດຂອງອານາຈັກແຖນຊື່ ວ່າ "ແຖນຫຼວງ" "ແຖນຟ້າຄົ່ນ" ... ດັ່ງນີ້ເປັນຕົ້ນ. ຄຳວ່າ "ແຖນ" ນັ້ນແປວ່າຟ້າ ແລະ ອານາຈັກແຖນນັ້ນ ແປວ່າອານາຈັກຟ້າ ເຊິ່ງຕັ້ງຢູ່ພາກໃຕ້ຂອງຈີນ ມີສຸນ ກາງຢູ່ໜອງແສ (ຖຽນຈີ) ຫຼື ໜອງກະແສແສນຍ່ານ ໃນພາສາລາວ. ຄຳວ່າແຖນ ນີ້ ບາງຄັ້ງກໍໃຊ້ຄຳວ່າ ຟ້າແທນເຊັ່ນ ເຈົ້າຟ້າອັນໝາຍເຖິງເຈົ້າຊີວິດເຊັ່ນກັນ.

ຄຳວ່າ "ຜີໄທ" "ຜີແຖນ" ຫຼື "ຜີຟ້າ"ນັ້ນ ໝາຍເຖິງອົງກະສັດ "ໄທ" ຫຼື "ແຖນ" ຫຼື "ເຈົ້າຟ້າ" ທີ່ຕາຍໄປແລ້ວ.

ແຕ່ກີ້ແຕ່ກ່ອນຊາວລາວໃຫ້ຄວາມເຄົາລົບບູຊາແກ່ກະສັດ ຫຼື ເຈົ້າຊີວິດ ຜູ້ຈຸຕິຕາຍໄປແລ້ວເໝືອນກັບພຣະຜູ້ເປັນເຈົ້າ ດັ່ງນັ້ນ ແຕ່ລະຂວບປີ ເລີ່ມແຕ່ ເດືອນຈຽງຮອດເດືອນສາມ ຈຶ່ງໄດ້ຈັດພິທີກຳເຄົາຣົບນົບໄຫວ້ລ້ຽງດູຜີໄທ ຜີແຖນ ຖືເປັນຮີດປະຕິບັດມາບໍ່ຂາດ ເພື່ອໃຫ້ປົກປັກຮັກສາບ້ານເມືອງກຸ້ມກອມໄພ່ຟ້າ ລາຊະດອນໃຫ້ຢູ່ດີມີສຸກ.

ຄຳວ່າ "ຫໍ" ນັ້ນ ແມ່ນຄຳດຽວກັບວ່າ "ເຫາະ" ໃນພາສາຈີນ ແລະ ຍຸດ ນາມແປວ່າ "ໂຄຕິວົງ" ຫຼື "ເຊື້ອຕະກຸນ" ຫຼືເວົ້າໃນພາສາຫຳມະດາກໍແມ່ນ "ສາຍ ຈຸ້ມເຈື້ອ" ຫຼື "ເຊື້ອສາຍລາຍລ່ອງ" ແຕ່ສະເພາະລາວພວກເຮົາແລ້ວ ເພີ່ນໄດ້ນຳ ຄຳວ່າ "ຫໍ" ນີ້ມາໃຊ້ເຂົ້າໃນຄຳໝາຍກວ້າງ ເຊັ່ນສາມາດໝາຍເຖິງ "ຜີຫໍ" "ເຮືອນຫໍ" "ດົງຫໍ" "ຫໍເທວະດາ" "ຫໍເຈົ້າອາຮັກຕ່າງໆ. ດັ່ງນັ້ນ ຄວາມໝາຍຂອງ ມັນແທນທີ່ຈະຈຳກັດໃນຂອບເຂດ "ເຊື້ອສາຍລາຍລ່ອງ" ຫຼື "ໂຄຕິວົງ" ຊຶ່ງເລີຍ ຜ່ຽນກວ້າງອອກໄປເຖິງ ເຈົ້າອາຮັກຫຼັກເມືອງເຖິງເທພຣະເຈົ້າ ຜູ້ປົກປັກຮັກສາ ເຂດນ້ຳແດນດິນ ປົກປັກຮັກສາພູມລຳເນົາ ປ່າດົງພົງໄພ ຫ້ວຍຮ່ອງຄອງບຶງ ແລະ ອື່ນໆນຳດ້ວຍ.

ສະໄໝກ່ອນໆທຸກໆຂວບປີໃດ ເພີ່ນຈະຈັດພິທີບວງສວງ ຫຼື ທີ່ເອີ້ນວ່າ "ລ້ຽງຜີຫໍ" ຫຼື "ຫໍປູ່ຕາ" ຂຶ້ນເພື່ອຂໍໃຫ້ຜີຊ່ວຍຄຸ້ມຄອງ ປົກປັກຮັກສາບ້ານເມືອງ

ໃຫ້ຢູ່ເຢັນເປັນສຸກ ໃຫ້ໄດ້ຮັບຜົນດີໃນການຜະຫຼິດ ທຳນາ ຄ້າຂາຍ ພ້ອມທັ້ງໃຫ້ ຫາຍໂພຍຫາຍໄພ ຫາຍພະຍາດອຸບາຕ ເຄາະເຂັນ ເສິກເສືອເໜືອໃຕ້ ແລະ ອິນ ຕາຍຕ່າງໆດ້ວຍ.

ສະເພາະໃນເຮືອນນັ້ນ ຊາວລາວມັກຈະມີຫ້ອງໜຶ່ງທີ່ຮຽກວ່າ "ໜ້າ ຫ່ອງ" ເຊິ່ງບ່ອນນັ້ນ ເພິ່ນມັກຈະຈັດທີ່ງຮຽກວ່າ "ທີ່ງຜີນ້ອນ" ຫຼື "ທີ່ງຜີເຮືອນ" ຄື ເປັນບ່ອນສັກກາລະ.

ນອກຈາກນັ້ນ ຊາວລາວຍັງຖື "ຜີຕົ້ນໄມ້ໃຫຍ່" "ຜີວັງນ້ຳ" "ຜີຕາດແກ້ງ" "ຜີພູຜາ" "ຜີດົງດອນ" "ຜີໜອງບຶງ" ອື່ນໆອີກຫຼາຍໆຜີ.

ການຖືຜີຫໍ ຜີເຮືອນ ຜີເທວະດາ ຜີເຈົ້າອາຮັກຫຼັກເມືອງ ຜີຫ້ວຍນ້ຳວັງປ່າ ແລະ ພູຜາປ່າດົງນັ້ນນອກຈາກຈະເປັນການສ້າງຈິດສຳນຶກ ແລະ ສະຕິໃນ ຄວາມເປັນກຸ່ມກ້ອນທາງດ້ານຈິດໃຈແລ້ວຍັງມີຜົນຕໍ່ການອະນຸຮັກ ປົກປັກຮັກ ສາເຂດນ້ຳແດນດິນ ຫ້ວຍຮ່ອງຄອງບຶງ ຕົ້ນໄມ້ປ່າດົງພົງໄພ ສ້າງໃຫ້ຄົນມີຄວາມ ຢ້ານກົວ ຈິ່ງຈຸມ ແລະ ເຄົາຣົບຢຳເກງບໍ່ໃຫ້ໄປດູລ່າຜ່າເພັຍ ແລະ ທຳລາຍແຫຼ່ງ ທີ່ຫວງຫ້ານ ແລະ ສັກສິດ ອັນນັບວ່າເປັນປະໂຍດທາງໜຶ່ງໃນການອະນຸຮັກສາ ຊັບພະຍາກອນ ແລະ ສະພາບແວດລ້ອມໄວ້.

ມາເຖິງສະໄໝພຣະເຈົ້າໄຟທີຊະຣາຊຄົດຕະສະຕະວັດ (ຄ.ສ) ທີ່ XVI ພຣະອົງເຫັນຄວາມເຊື່ອເລື່ອງຜີໄທ ຜີແຖນ ຜີຫໍ ຜີເຮືອນ ແລະ ຜີຕ່າງໆເຫຼົ່ານັ້ນ ສ້າງຄວາມງົມງວາຍ ແລະ ຄວາມມືດມົນອິນທະການ ໜັກໜ່ວງມາໃຫ້ແກ່ປະ ຊາຊົນພົນລະເມືອງລາວ ພຣະອົງຈຶ່ງໄດ້ນຳພາໄພ່ຟ້າຂ້າແຜ່ນດິນ ດຳເນີນ ການ ປະຕິຮູບຄວາມເຊື່ອຖື ໂດຍທຳລາຍຫໍຜີຕ່າງໆຖິ້ມ ແລ້ວສ້າງວັດພຸດທະສາສະ ໜາ ເອົາທັມມະເຂົ້າຈິດໃຈຂອງມວນຊົນແທນ ເຮັດໃຫ້ລັກສະນະປະຈຳ ຊາດຂອງພຸດທະສາສະໜາໜັກແໜ້ນ ແລະ ກວ້າງຂວາງກວ່າແຕ່ກ່ອນຢ່າງເຖິງ ຖອງຕັ້ງແຕ່ນັ້ນມາ.

ມາເຖິງປັດຈຸບັນຄວາມເຊື່ອຖືຂອງຊາວລາວ ຍັງປະປົນກັນຢູ່ລະຫວ່າງຜີ ພາມ ແລະ ພຸດ ຢ່າງບໍ່ເຫືອດຫ່າຍສັ້ງໄດ້ ເປັນຕົ້ນແມ່ນໃນບັນດາຊົນເຜົ່າເຂດ ຫ່າງໄກສອກຫຼີກ.

1.3. ຄວາມເຊື່ອຖືເຫດລາງ.

ຊາວລາວໂດຍທົ່ວໄປພາກັນຖືເຫດລາງຕ່າງໆຫຼາຍຢ່າງເຂົາເຈົ້າເຊື່ອວ່າ ຊີວິດຮ້າຍ ຫຼື ດີໂຊກລາບ ແລະ ເຄາະກຳຂອງຄົນເຮົາພົວພັນກັບພະລັງເລິກລັບ ຂອງທຳມະຊາດ ເຊັ່ນວ່າ ສິ່ງທີ່ຈະຕ້ອງເກີດຂຶ້ນ ແລະ ເກີດມາຕໍ່ຕົນເອງ ຕໍ່ຄອບ ຄົວ ຫຼື ຕໍ່ບຸກຄົນໃດໜຶ່ງ ກໍຄືຕໍ່ປະເທດຊາດບ້ານເມືອງນັ້ນ ຈະຕ້ອງຮູ້ຈັກກ່ອນ ລ່ວງໜ້າຈາກເຫດລາງຕ່າງໆ. ອັນວ່າເຫດລາງ ແລະ ລາງສັງຫອນກໍມີເຊັ່ນ: ຄວາມຝັນ ຄວາມອຶດອັດໃນຕົນຕົວ ຈິດໃຈບໍ່ປົກກະຕິ ສັດປ່າ ເຊັ່ນ ກວາງ ຟານ ໄກ່ປ່າເຂົ້າບ້ານ ຟານ ແລະ ງູ ແລນ ແລະ ເລືອຜ່ານໜ້າເວລາເດີນທາງ ໄກ່ປ່າ ນົກ ບາງປະເພດບິນຜ່ານໜ້າເວລາເດີນທາງ ນົກແຊວຮ້ອງວົນວຽນນຳພວກເຮົາ ເວລາເດີນທາງ ບ່າງເຂົ້າບ້ານຮ້ອງເວລາກາງຄືນ ແລະ ອື່ນໆຫຼາຍຢ່າງ.

<u>ຕົວຢ່າງ</u>:

- ຖ້າຝັນວ່າຕາຍກໍຖືວ່າດີ.
- ຖ້າຝັນວ່າເຫັນຊີ້ນເຫັນເລືອດຖືວ່າບໍ່ດີ.
- ຖ້າຟານແລ່ນກາຍໜ້າເວລາເດີນທາງກໍຖືວ່າເປັນລາງບໍ່ດີ.
- ຖ້າງູລອຍຜ່ານໜ້າເຊື່ອວ່າຈະມີໂຊກ. ດັ່ງນີ້ເປັນຕົ້ນ.

ເຫດລາງ ແລະ ລາງສັງຫອນນັ້ນ ແມ່ນປະກົດການທຳມະຊາດຢ່າງໜຶ່ງ ທີ່ມີສ່ວນງົມງວາຍມີສ່ວນບັງເອີນ ແລະ ມີສ່ວນມີຈິງຢູ່ປະປົນກັນບໍ່ໜ້ອຍເລີຍ. ງົມງວາຍກໍເພາະວ່າ ປະກົດການທຳມະຊາດຕ່າງໆບໍ່ແມ່ນຈະພົວພັນເຖິງໂຊກ ຊະຕາ ແລະ ຊີວິດຂອງຄົນໄດ້ໝົດທຸກອັນ. ຖ້າຄົນເຮົາເຊື່ອຢ່າງບໍ່ມີເຫດຜົນພຽງ ພໍ ກໍກາຍເປັນງົມງວາຍເປົ່າດາຍລ້າ ເວັ້ນເສັຍແຕ່ຄວາມບັງເອີນຈະມາປະຈົບ ປະຈອບກັບຊະຕາຊີວິດການເປັນກໍລະນີໜ້ອຍໜັກໜ້ອຍໜາ ແລະ ຫາຍາກ ເຕັມທີ. ຄວາມມີຈິງບາງກໍລະນີນັ້ນກໍເພາະວ່າມັນພົວພັນເຖິງ ກົດເກນຂອງຈັກ ກະວານກົດເກນທຳມະຊາດທີ່ພົວພັນເຖິງຊີວິດພວກເຮົາໂດຍກົງ ເຊັ່ນໂຕຢ່າງ: -ນົກບາງຊະນິດເມື່ອພົບສັດຮ້າຍສິ່ງໃດສິ່ງໜຶ່ງ ທີ່ເປັນອັນຕະລາຍຕໍ່ຕົວມັນເອງ ມັນກໍຈະກັ່ງວ໋ຽນວ໋ຽນຢູ່ອ້ອມແອ້ມ ສັດຮ້າຍຕົວນັ້ນ ເມື່ອມີຜູ້ຄົນເດີນທາງມາສາຍ ນັ້ນ ມັນກໍຈະເຕືອນໃຫ້ຮູ້ເຖິງອັນຕະລາຍທີ່ລໍຖ້າຢູ່ຂ້າງໜ້າ ຕາມສັນຊາດຍານ

ຂອງພວກມັນເອງ.

ດ້ງນັ້ນ ນອກຈາກນັ້ນຫາຄວາມເຊື່ອແບບງົມງວາຍແລ້ວ ເຫດລາງ ແລະ ລາງສັງຫອນຍັງເປັນສິ່ງທີ່ເຕືອນໃຫ້ມີຄວາມລະມັດລະວັງ ໃນການດຳລົງຊີວິດ ການເຄື່ອນໄຫວພົວພັນໃນສັງຄົມ ແມ່ນແຕ່ຈິດສັງຫອນ ຫຼື ຄວາມຝັນຮ້າຍ ຕ່າງໆ... ເຖິງຈະມີຈິງ ຫຼື ບ່ຈິງກໍຕາມ ກໍມີປະໂຍດໃນການເຕືອນໃຈເຕືອນສະຕິ ຂອງຄົນເຮົາໃຫ້ມີຄວາມລະມັດລະວັງ ທຸ່ນທ່ຽງ ແລະ ອົດທົນໃນການປະພຶດ ແລະ ເຄື່ອນໄຫວເຊັ່ນກັນ.

- ຄວາມເຊື່ອຖືລຶກເກນຕາມກົດໄສຍະສາດ.

ຊາວລາວຍັງມີຄວາມເຊື່ອຖືເລື່ອງດູມໍ ສ່ຽງທວາຍ ດູລຶກ ດູຕຳນິ ເຊື່ອຖືລຶກເກນ ຕຳລາໄສຍະສາດ ເຫຼົ່ານີ້ ມີສ່ວນສ້າງຄວາມງົມງວາຍປົນຢູ່ຫຼາຍ. ຫາກຝູງຄົນເຊື່ອໜັກເຂົ້າກໍຈະເກີດຄວາມເສັຍຫາຍຫຼາຍປະການເຊັ່ນ: ຖືກໝໍ້ທີ່ ບ່ໃສສະອາດຫຼອກລວງຊຸດຮີດໜຶ່ງ ເສັຍກຳລັງໃຈໝົດຫວັງໃນຊີວິດໜຶ່ງ ກາຍ ເປັນຄົນຂາດສະມັດຖະພາບ ບ່ເຮັດບ່ສ້າງຫຍັງຈົນກາຍເປັນໄພສັງຄົມກໍ່ອາດ ເປັນໄດ້.

ແຕ່ຫາກວ່າ ການດູລຶກເກນທີ່ໝໍປະຕິບັດຖືກຕ້ອງຕາມວິຊາ ເຄ່ັງໃນຕຳ ລາອາດສາມາດເຂົ້າເຖິງຄວາມຈິງທີ່ເລິກລັບບາງຢ່າງໃນກົດເກນທຳມະຊາດໄດ້ ມັນກໍກາຍເປັນສິ່ງຕ້ັງໜ້າໃຫ້ກຳລັງໃຈໃຫ້ຄວາມຫວັງ ເຕືອນສະຕິໃນຄວາມປະ ພຶດ ເຊ່ິງທ້ັງໝົດນ້ີລ້ວນແລ້ວແຕ່ອຳນວຍໃຫ້ ຊີວິດຈິດໃຈຂອງຄົນສົມບູນແບບ ຂ້ຶນເຮ້ັມແຂງສາມາດເອົາຊະນະອຸປະສັກຕ່າງໆໄດ້(ເພາະຄົນແມ່ນຜະຫຼິດຕະ ພັນຂອງທຳມະຊາດ ຖືກຄອບງຳດ້ວຍກົດເກນ ແລະ ສາຍແນບຈາກຈັກກະ ວານ).

1.4. ຄວາມເຊື່ອຖືປາກົດການທຳມະຊາດ.

ປາກົດການທາງທຳມະຊາດນ້ັນ ມັກຈະເກີດຂ້ຶນໂດຍການສ້ງເຄາະທາງ ເຄມີ ຫຼື ການເຄ່ືອນຕ້ງດ້ານຟີຊິກສາດ ໂດຍທຳມະຊາດຂອງໂລກ ແລະ ຈັກກະ ວານ. ດ້ງນ້ັນ ຈ່ຶງສາມາດເ້ວ້ົາໄດ້ວ່າມັນເປັນສ່ວນໜ່ຶງຂອງວິທະຍາສາດ. ຄວາມ ຮອບຮູ້ກົດເກນ ຄວາມປ່ຽນແປງຕະຫຼອດການພົວພັນກັນໃນຄວາມເຄ່ືອນຕ້ງ

ຂອງສິ່ງວັດຖຸຕ່າງໆໄດ້ ກໍຊ່ຳກັບວ່າຮູ້ກົດເກນທາງວິທະຍາສາດສ່ວນໜຶ່ງ ເຊິ່ງ ເພີ່ນຮຽກວ່າ "ພູມປັນຍາ" ປາກົດການທຳມະຊາດມັກຈະບອກໃຫ້ພວກເຮົາຮູ້ ລ່ວງໜ້າເຖິງອາມາຄົດທີ່ຈະມາເຖິງເຊັ່ນ ໂຕຢ່າງ: ລາຍຂອງລູກແລນເກີດໃໝ່ກໍ ຈະບອກເຖິງດິນຟ້າອາກາດວ່າຈະແລ້ງ ຫຼື ຝົນໃນປີຈະມາເຖິງ ຄວາມມາກດົກ ຂອງໝາກເດື່ອປ່ອງກໍບອກເຖິງປະລິມານນ້ຳຝົນທີ່ຈະມີໃນປີຈະມາເຖິງ ພວກ ມົດພາກັນເຂົ້າຫາທີ່ຊຸ້ນບ່ອນຮິ່ມ ກໍບອກໃຫ້ຮູ້ວ່າຝົນກຳລັງຈະຕົກ ກໍເຊັ່ນດຽວ ກັບແມງກະພຸນໃນທະເລລົ່ງເຂົ້າມາແຄມຝັ່ງໃນບັນດາປະເທດທີ່ມີທະເລກໍບອກ ໃຫ້ຮູ້ວ່າ ພະຍຸຮ້າຍກຳລັງຈະມາເຖິງ... ດັ່ງນັ້ນເປັນຕົ້ນ.

ຄວາມເຊື່ອຖືແບບນີ້ບໍ່ແມ່ນງົມງວາຍ ກົງກັນຂ້າມມັນນຳຜົນດີມີປະ ໂຫຍດມາໃຫ້ການດຳລົງຊີວິດຂອງຄົນເຮົາ.

1.5. ຄວາມເຊື່ອໃນພຸດທະສາສະໜາ (ເບິ່ງໃນພາກປັນຍາວັດທະນະທັມ).

1.6. ຄວາມເຊື່ອໃນໄຫລາສາດ.

ຄົນລາວເຮົາເຊື່ອວ່າ ຮ່າງກາຍຕະຫຼອດແນວຄຶດຈິດໃຈຂອງມະນຸດເຮົາ ມີການຕິດພັນຢ່າງສະໜິດແໜ້ນກັບການເຄື່ອນໄຫວ ຂອງຈັກກະວານກໍຄືຂອງ ດາວພະເຄາະຕ່າງໆ ໃນຫ້ອງຈັກກະວານ ເນື່ອງຈາກມະນຸດປະກອບເປັນສິ່ງວັດ ຖຸໜຶ່ງໆທີ່ຫຸ້ມຫໍ່ມ ແລະ ປັ້ນແຕ່ງຂຶ້ນມາໂດຍທັມມະຊາດກໍຄືຈັກກະວານນັ້ນເອງ. ດັ່ງນັ້ນ ເຮົາເຈົ້າຈຶ່ງເຊື່ອວ່າການເຄື່ອນໄຫວຂອງດາວພະເຄາະຕ່າງໆກໍດີຕາມຕຳ ລາໄຫຣາສາດບູຮານຈຶ່ງມີຜົນສະທ້ອນຕໍ່ອາມາຄົດຂອງມະນຸດ ຂອງທຳມະຊາດ ແລະ ຂອງໂລກດ້ວຍ.

ຣີດ ແລະ ຄອງ.

ຊາວລາວບັນດາເຜົ່າມີຣີດ ແລະ ຄອງຕ່າງໆຫຼວງໜາຍແລ້ວແຕ່ລະເຜົ່າ ແລະ ແຕ່ລະທ້ອງຖິ່ນ. ສະເພາະຣີດ ແລະ ຄອງທີ່ເປັນອັນທົ່ວໄປໃນສັງຄົມລາວ ສ່ວນໃຫຍ່ ກໍແມ່ນຣີດ 12 ແລະ ຄອງຕ່າງໆເຊິ່ງນອກຈາກຄອງ 14 ຂອງພະຣາ ຊະວັງທີ່ຕ້ອງປະພຶດຕົນ ຫຼື ປະຕິບັດຕົນຕໍ່ໄພ່ຟ້າຂ້າແຜ່ນດິນແລ້ວກໍ່ຍັງມີຄອງ 14 ຂອງມວນຊົນ ແລະ ກໍມີຄອງຕ່າງໆເຊັ່ນ ຄອງບ້ານ ຄອງເມືອງ ຄອງພຣະ

ຄອງເຈົ້າ ຄອງເຖົ້າ ຄອງຊຸນ ຄອງຢ້າວຄອງເຮືອນ ຄອງພໍ່ຄອງແມ່ ຄອງຜົວຄອງເມັຍ ຄອງບ່າວຄອງສາວ ຄອງໃພ້ຄອງເຂີຍ ຄອງລຸງຄອງຕາ ຄອງລູກຄອງຫຼານ ແລະ ອື່ນໆຫຼາຍຢ່າງ ເຊິ່ງທັງໝົດນັ້ນແມ່ນປະກອບເປັນປັດໃຈແຫ່ງສະຕິສັງຄົມ ເປັນຈິດຕະສາດສັງຄົມ ແລະ ຄຸນສົມບັດສັງຄົມຊາວລາວ.

ຄຳວ່າ "ຮີດ" ມາຈາກຄຳບາລີ "ຈາຣິຕຕະ" ແປວ່າທຳນຽມ ປະເພນີ ແບບແຜນ ກິດປະພຶດປະຕິບັດອັນຈົບງາມ ເຊິ່ງຈະຕ້ອງກວມເອົາທັງໝົດຮີດ ແລະ ຄອງນຳດ້ວຍ ຄຳວ່າ 12 ໝາຍເຖິງໃນ 12 ເດືອນໃນປີໜຶ່ງນັ້ນເອງ.

- ເດືອນອ້າຍ ຫຼື ເດືອນຈຽງ (ເດືອນ ທັນວາສາກົນ).

ເດີມດາແຕ່ເກົ່າກ່ອນ ຄືກ່ອນໜ້ານີ້ປະມານ 500 ປີ ຊາວລາວສະຫຼອງປີໃໝ່ກັນໃນເດືອນອ້າຍ ຫຼື ເດືອນຈຽງ (ເດືອນ 1) ຂອງທຸກໆປີ ເຊິ່ງຈະບໍ່ຕ່າງຫຍັງກັບຫຼາຍຊາດຫຼາຍພາສາໃນອາຊີອາຄະເນ ເປັນຕົ້ນແມ່ນຄົນຕະກຸນດຽວກັນກັບລາວ ເຊັ່ນ ພວກໄຕ ພວກນຸ່ງ ຫຼືພວກຈວງເປັນຕົ້ນ. ພໍຕົກມາຮອດຣາຊການພຣະເຈົ້າໂພທິຊະຣາຊ (ຕົ້ນສະຕະວັດ XVI) ພຣະອົງໄດ້ປະຕິຮູບການນັບຖືຮີດ ຜີ ຄອງສາງຕ່າງໆ ແລ້ວນຳເອົາປະເພນີຂອງພຸດທະສາສະໜາມາໃຫ້ປະຊາຣາຊະດອນເຄົາຣົບ ແລະ ປະຕິບັດແທນທີ່. ດັ່ງນັ້ນ ເລີ່ມຕັ້ງແຕ່ນັ້ນມາ ບຸນຂຶ້ນປີໃໝ່ຂອງລາວຈຶ່ງຍ້າຍມາໃສ່ເດືອນ 5 (ເດືອນເມສາ ສາກົນ) ຄືເອົາບຸນກຸດສິງການເປັນບຸນປີໃໝ່ປະຈຳຊາດ ອັນໝາຍເຖິງການອະວະສານຂອງບຸນກິນຈຽງຂອງລາວຕັ້ງແຕ່ນັ້ນມາ ຍົກເວັ້ນແຕ່ບາງເຜົ່າທີ່ນັ້ນ. ແຕ່ເຖິງວ່າສັດທາຂອງຄົນລາວສ່ວນໃຫຍ່ທີ່ມີຕໍ່ພະພຸດທະສາສະໜານັ້ນ ນັບມື້ນັບກວ້າງຂວາງກໍຕາມ ແຕ່ການຖືຜີຟ້າຜີແຖນ (ຜີບັນພະຊົນ) ແລະ ການຖືພາມກໍຍັງຄົງມີປະປົນກັບພຣະພຸດທະສາສະໜາຢູ່ຕະຫຼອດມາໃນບາງສ່ວນ.

ເດືອນອ້າຍ ສຳລັບປະເພນີທີ່ຖືປະຕິບັດມາໃນເດືອນອ້າຍ ໃນຮີດຂອງຊາວພຸດລາວ ກໍແມ່ນ "ບຸນເຂົ້າກັບ" ເຊິ່ງເປັນບຸນທີ່ພຣະສົງຈະຕ້ອງຖືກຈຳກັດບໍລິເວນຢູ່ວັດ ເພື່ອບຳເພນກຸສົນພາວັນນາ ເຊິ່ງຄ້າຍໆກັນກັບການດຳເນີນຊີວິດການເມືອງ ເພື່ອສຳຫຼວດກວດກາຕົນເອງທີ່ໄດ້ອາບັດມາ ໝາຍຄວາມວ່າໄດ້ກະທຳທີ່ຜິດພາດມາ. ການເຂົ້າກຳແມ່ນການລ້າງບາບ ຫຼືລ້າງໂທດຂອງພຣະສົງນັ້ນ

ເອງ.

- ເດືອນຍີ່ (ມ້ຽກອນ).

ກ່ອນຣາຊການພຣະໄພທິຊະຣາຊ ອັນເປັນເວລາທີ່ການຖືຜີບໍ່ໄດ້ຖືກ ລົບລ້ຽງໄປເທື່ອນັ້ນ ເມື່ອເຖິງເດືອນຍີ່ມາ ຊາວລາວຈະທຳບຸນຄາລະວະຜີໄທ້ ຜີ ແຖນ ເພື່ອໃຫ້ມາປົກປັກຮັກສາບ້ານເມືອງ ແລະ ບ່າວໄພ່ຣາຊະດອນ. ມາເຖິງ ປັດຈຸບັນ ບຸນໄຫວ້ຜີໄທ້ ຜີແຖນ ໄດ້ກາຍເປັນພິທີແຫ່ຜີໄຂນໃນໂອກາດບຸນວັດ ໃດໜຶ່ງເຊັ່ນບຸນເຂົ້າຈີ່ເປັນຕົ້ນ ດັ່ງຈະມີຢູ່ເມືອງໄຊຍະບຸລີ ແລະ ເຊິ່ງຜີໄຂນນັ້ນ ຈະອອກມາສະເໜີໄຕໃຫ້ຄົນແຫ່ໃນຮູບທີ່ເປັນໜ້າຢ້ານກົວສຳລັບເດັກນ້ອຍ. ໃນຂະບວນແຫ່ຜີໄຂນ ຫຼື ຜີຟ້າຜີແຖນນີ້ ກໍຈະມີຈ້ຳລອງຊ້ຳໆ ຫຼື ມ້ຳ ມີເສນາອຳ ມາດ ແລ ມີເຄື່ອງຢູ່ຂອງກິນພຽບພ້ອມທຸກປະການ.

ບຸນຄູນລານ ຫຼື ບຸນກອງເຂົ້ຳ ນັບວ່າຍັງເປັນປະເພນີທີ່ຖືປະຕິບັດກັນມາ ຈົນເທົ້າທຸກວັນ ມັນແມ່ນບຸນຂອງຊາວນາ ກ່ອນຈະເອົາເຂົ້ຳຂຶ້ນເລົ້ຳ ກໍນິມົນ ພຣະມາສູດມຸງຄຸນ ເພື່ອຂໍພອນໄຊໃຫ້ເຂົ້ຳນ້ຳອຸດົມສົມບູນທຸກໆປີ.

- ເດືອນສາມ (ເດືອນກຸມພ່ຳ).

ເດືອນ 3 ເຊິ່ງກົງກັບເດືອນກຸມພາຂອງສາກົນ ເມື່ອຮອດມື້ເພັ້ງມ່ຳ ເພິ່ນ ກໍຈັດບຸນເຂົ້ຳຈີ່ (ບຸນມ່ຳຄະບູຊາ) ຫຼື ຮຽກວ່າບຸນເດືອນ 3 ກໍໄດ້. ບຸນນີ້ເພິ່ນຈັດຢູ່ ເດີ່ນວັດ ຄືເອົ້ຳໄມ້ເຂົ້ຳຈີ່ (ໄມ້ສະເພາະໃດໜຶ່ງເປັນຕົ້ນແມ່ນໄມ້ຄັບ) ມາດັ້ງໄຟ ໃຫ້ເປັນຖ່ານດີແລ້ວປະຊາຊົນຊາວບ້ານ ເອົ້ຳເຂົ້ຳໜຽວມ່ຳເຮັດເຂົ້ຳຈີ່ຫຼ່ຳກ່ຳຫຼ່ຳຍ ຊະນິດ ຫຼ່ຳຍລິດຊ່ຳດ ເພື່ອຕັກບ່ຳດບູຊ່ຳພຣະພຸດທະເຈົ້ຳ. ບຸນນີ້ມີມູນເຫດມ່ຳ ຈ່ຳກຄ່ຳພີທັມມະ ບົດໜຶ່ງກ່ຳວ່ຳ ມີສ່ຳວໃຊ້ຂອງເສດຖີຜູ້ໜຶ່ງ ຍ້ອນຄວ່ຳມທຸກ ຈົນ ແຕ່ມີສັດທ່ຳນ້ຳພຣະພຸດທະອົງ ຈຶ່ງໄດ້ເອົ້ຳແປ້ງເຂົ້ຳເຮັດເຂົ້ຳຈີ່ໄປໃສ່ບ່ຳດ ພຣະພຸດທະເຈົ້ຳກໍສັນເຂົ້ຳຈີ່ ເຫັນວ່ຳມີຄວ່ຳມແຊບຊ້ອຍ ແລ້ວສ່ຳວໃຊ້ກໍໄດ້ພະ ອະນິສົງສ່ອນບຸນ.

- ເດືອນ 4 (ເດືອນມີນ່ຳ).

ບຸນພຣະເທວດ ຫຼື ບຸນມະຫ່ຳຊ່ຳດ ນັບວ່ຳເປັນບຸນໃຫຍ່ປະຈ່ຳຊ່ຳດທ່ຳ ພຣະພຸດທະສ່ຳສະໜ່ຳບຸນໜຶ່ງໃນລ່ຳວ ເພື່ອອຸທິດໃຫ້ແກ່ຊ່ຳດສຸດທ້ຳຍຂອງ

ພຣະພຸດທະເຈົ້າ. ໃນບຸນນີ້ຊາວບ້ານຊາວເມືອງຈະພາກັນກິນທານຂະໜາດໃຫຍ່ຮ່ວມກັນ ແລະ ຟັງທັມມະເທດສະໜາ ຄືຄຳສອນຂອງພຣະພຸດທະເຈົ້າ ເປັນຕົ້ນແມ່ນນິທານພຣະເຫວດສັນດອນ.

- ເດືອນ 5 (ເດືອນເມສາ).

ບຸນຂຶ້ນປີໃໝ່ລາວນັບວ່າເປັນບຸນປະຈຳຊາດບຸນໜຶ່ງ ພາຫຼັງທີ່ໄດ້ລະເວັ້ນການຖືປີໃໝ່ຕາມຮີດເກົ່າຄອງເດີມ ຄືສະຫຼອງປີໃໝ່ກັນໃນເດືອນໜຶ່ງ ຫຼື ເດືອນອ້າຍ ຫຼື ເດືອນຈຽງ ເຊິ່ງເພີ່ນຮຽກວ່າ ບຸນກິນຈຽງແລ້ວ ຊາວລາວເຮົາເລີຍໄດ້ເອົາກຸດສົງການມາເປັນບຸນປີໃໝ່ປະຈຳຊາດຂອງຕົນ ຕັ້ງແຕ່ສະຕະວັດທີ່ XVI ເປັນຕົ້ນມາ.

- ເດືອນ 5 (ເດືອນເມສາ) ບຸນຂຶ້ນປີໃໝ່:

ຈຸດພິເສດຂອງປະຕິທິນລາວແມ່ນການໃຊ້ສອງລະບົບປະຕິທິນຄື: ຈັນທະຣະຄະຕິ ແລະ ສຸຣິຍະຄະຕິ ສອງລະບົບນີ້ມີວັນຂຶ້ນປີໃໝ່ຕ່າງກັນຄື: ຈັນທະຣະຄະຕິນັ້ນວັນຂຶ້ນປີໃໝ່ຢູ່ເດືອນຈຽງ (ເດືອນທັນວາ) ດັ່ງທີ່ໄດ້ກ່າວມາແລ້ວຂ້າງຕົ້ນ ສ່ວນສຸຣິຍະຄະຕິນັ້ນ ວັນຂຶ້ນປີໃໝ່ແມ່ນຢູ່ເດືອນ 5 (ເດືອນເມສາ) ໃນວັນຂຶ້ນປີໃໝ່ສອງລະບົບນີ້ ພາຍຫຼັງທີ່ເມືອງລາວປະລະຮີດຖືຜີ ແລ້ວມາຍຶດຖືທາງພຸດທະປະເພນີແລ້ວ ກໍເອົາບຸນກຸດສົງການໃນເດືອນ 5 ເປັນບຸນຂຶ້ນປີໃໝ່ຂອງຕົນ.

ບຸນປີໃໝ່ລາວທີ່ຫຼວງພະບາງນັ້ນ ແຕ່ກ່ອນສະຫຼອງກັນເປັນເວລາຫຼາຍວັນ ແຕ່ປັດຈຸບັນຈະກິນເວລາ3-4 ວັນ ແລ້ວແຕ່ການຄຶດໄລ່ປະຕິທິນໂຫລາສາດເຊັ່ນ:

(1)- ມື້ສັງຂານລ່ວງ ເຊິ່ງກົງກັບວັນທີ 13 ເມສາ ເປັນມື້ແຫ່ງການທຳຄວາມສະອາດເນື້ອກາຍ ມື້ແຫ່ງການສະສາງລ້າງຂ່ວຍຄວາມເຮີ້ຮ້າຍທຸກປະການອອກຈາກກາຍ ແລະ ໃຈຂອງຄົນ. ເປັນມື້ທີ່ເຈົ້າອາຮັກຫຼັກເມືອງຂຶ້ນລາຍງານແກ່ຈັດຕຸໂລກະບານທັງ 4 (ພຣະເຈົ້າປົກປ້ອງໂລກທັງ 4).

- ຕື່ນແຕ່ເຊົ້າຕູ່ ຜູ້ຄົນຈະໄປຕັກຕະຫຼາດນັດ ແລະ ເລາະຕະຫຼາດນັດເພື່ອຊື້ໄຕເພິ່ງ (12 ລາສີ) ຊື້ສັດຍັງເປັນເພື່ອໂຜດ ຖືວ່າກະທຳຄວາມດີ ເພື່ອຫາຍບາບກຳໃຫ້ມີອາຍຸຍືນນານ.

- ຕອນບ່າຍເອົາພຣະພຸດທະຮູບລົງຫໍສົງເພື່ອຈະສົງ.

- ฝ่ายຊາວບ้ານຊາວເມືອງຈະລ້ຽງດອນຊາຍເພື່ອຕີບພຣະຊາຍ ເພື່ອເປັນສັນຍະລັກອຸທິດໃຫ້ແກ່ພຸດທະທັມມະ 84.000 ຂັນ ແລະ ພູເຂົາສຸເມຣຸ ພ້ອມດ້ວຍບໍລິວານ ອັນເປັນສັນຍະລັກແຫ່ງຍອດຈັກກະວານ ຫຼື ສວງສະຫວັນ.

(2) - ມື້ເນົາ (ມື້ລະຫວ່າງປີເກົ່າ ແລະ ປີໃໝ່ ເຊິ່ງອາດຈະມີມື້ດຽວ ຫຼື ສອງມື້ແລ້ວແຕ່ການຄິດໄລ່ປະຕິທິນໂຫລາສາດລາວ) ເຊິ່ງກົງກັນກັບວັນທີ 14 ຫຼື ບາງປີກໍ 15 ເມສານໍ.

- ຈັດຂະບວນແຫ່ວໍ (ພຣະສິງ) ປູ່ເຍີ່ຍ່າເຍີ (ສັນຍະລັກຂອງບັນພະຊົນ) ນາງສັງຂານ (ນາງຟ້າແຫ່ງປີ) ໄປສົງນ້ຳພຣະທີ່ວັດຊຽງທອງ-ມີການຟ້ອນປູ່ເຍີ ຍ່າເຍີນະທີ່ນັ້ນ.

(3) - ມື້ສັງຂານຂຶ້ນຄືມື້ຂຶ້ນປີໃໝ່ ເຊິ່ງກົງກັບວັນທີ 15 ຫຼື ບາງປີກໍວັນທີ 16 ແລ້ວແຕ່ປະຕິທິນໂຫລາສາດ.

- ແຫ່ພຣະສິງ ປູ່ເຍີ່ຍ່າເຍີ ນາງສັງຂານລ່ອງໄປສົງນ້ຳວັດຫາດ.

- ສູດລິດນ້ຳ ບາສີສູ່ຂວັນຄອບຄົວ ແລະ ຍາດຕິພີ່ນ້ອງໃນຄອບຄົວ ຕະ ຫຼອດສຳນັກງານອົງການຕ່າງໆ ຜູ້ເປັນໃຫ້ເຊີຍ ບ່າວສາວ ລູກເຕົ້າ ພາກັນໄປສົມ ບັດສົມມາພໍ່ແມ່ ເພື່ອຂໍໂທດຂໍໂພຍທີ່ໄດ້ລ່ວງເກີນ ຫຼື ປະພຶດແນວບໍ່ຊອບ ພ້ອມ ກັນນັ້ນກໍຂໍພອນໄຊນຳເພີ່ນ.

- ຕອນຄ່ຳວັນຂຶ້ນປີໃໝ່ (ແຕ່ເກົ່າ) ຈະມີການຟ້ອນພຣະລັກພຣະລາມ (ຣາມາຢານາ) ຢູ່ຕໍ່ໜ້າພະຣາຊະວັງ.

(4) - ມື້ຕໍ່ມາໄປນຳນ້ຳ (ສົງພະ) ສັງຄະໂລກ.

(5) - ອີກມື້ຕໍ່ມານຳນ້ຳ (ສົງພຣະ) ຖ້ຳຕ່ຳ.

(6) - ມື້ຕໍ່ມາຂະບວນແຫ່ພຣະບາງລ້ຽງສົງທີ່ວັດໃໝ່.

- ເດືອນ 6 (ເດືອນພຶດສະພາ):

ເດືອນ 6 ມີບຸນຢູ່ສອງປາງເຊັ່ນ: ບຸນວິສາຂະບູຊາ ແລະ ບຸນບັ້ງໄຟ.

- ບຸນວິສາຂະບູຊານັ້ນແມ່ນບຸນທີ່ຈັດຂຶ້ນໃນເດືອນ 6 ເພັ້ງ ເຊິ່ງເປັນມື້ປະ ສູດ ເປັນວັນຕັດສະຮູ້ ແລະ ວັນປະຣິນິພານຂອງພຣະພຸດທະເຈົ້າ ເປັນບຸນທາງ ພຸດທະສາສະໜາຂອງພຸດທະນິກອນ ເພື່ອລະນຶກຫາຄຸນຂອງພຣະສັມມາສັມ

ພຸດທະເຈົ້າ. ໃນບຸນດັ່ງກ່າວຊາວບ້ານຊາວເມືອງຈະພາກັນຟັງທັມມະເທດສະ ໜາຕະຫຼອດຄືນຈົນຮຸ່ງເຊົ້າກໍຫາພາແຈກຈັ່ງຫັນເຄນພຣະສົງສຳມະໜນສັນ ກໍເປັນ ອັນໝົດພິທີ.

- ບຸນບັ້ງໄຟ ຫຼື ບຸນເດືອນ 6 ນັບວ່າເປັນບຸນເກົ່າແກ່ຂອງປະຊາຊົນລາວ ບຸນໜຶ່ງທີ່ນິຍົມກັນປະຕິບັດມາ ມີຄວາມໝາຍວ່າ ຈຸດບັ້ງໄຟເພື່ອບູຊາພຣະຍາ ແຖນ ເຈົ້າອາຮັກຫຼັກເມືອງຂໍນ້ຳຟ້ານ້ຳຝົນໃຫ້ອຸດົມສົມບູນ ຕົກຖືກຕ້ອງຕາມລະ ດູການ ເພື່ອການເພາະປູກນັ້ນເອງ. ມີບັ້ງໄຟຫຼາຍຊະນິດດ້ວຍກັນ ເຊັ່ນ: ບັ້ງໄຟ ໝື່ນ ບັ້ງໄຟແສນ ບັ້ງໄຟມ້າ ບັ້ງໄຟຈີນາຍ ບັ້ງໄຟຕະໄລ ພຸດອກໄຟ (ບັ້ງໄຟ ດອກ). ບຸນເດືອນ 6 ຫຼື ບຸນບັ້ງໄຟຈະສະຫຼອງກັນໃນເດືອນຂຶ້ນ ຫຼື ເດືອນດັບກໍ ໄດ້. ເປັນບຸນມະຫາຊົນສຳຄັນລະດັບຊາດບັ້ນໜຶ່ງ ເຊິ່ງໃນບຸນດັ່ງກ່າວນອກຈາກ ຈະມີການແຂ່ງຂັນບັ້ງໄຟກັນແລ້ວຍັງມີການເຊີ້ງ ການເສັ່ງກອງ ເສັ່ງລວດລາຍ ໝັດໄມຍ ມີການຫຼິ້ນຕະຫຼົກແບບຜິດປົກກະຕິຫຼາຍຢ່າງອັນມີຄວາມໝາຍວ່າ ຕ້ອງເຮັດໃຫ້ຂີ້ນຫູຂີ້ນຕາພະຍາແຖນ ຫຼື ເຮັດໃຫ້ຂອງທັມມະຊາດເພື່ອຈະໄດ້ນ້ຳ ຟ້ານ້ຳຝົນລົງມາ.

- ເດືອນ 7 (ເດືອນມິຖຸນາ):

ບຸນລ້ຽງຜີບ້ານ ຫຼື ບຸນຊຳລະ ເປັນບຸນລ້ຽງຜີບ້ານຜີເມືອງ ເພື່ອໃຫ້ຄຸ້ມ ຄອງບ້ານເມືອງ ແລະ ຕ້ານທານກັບພວກຜີສາດຮ້າຍຕ່າງໆ ທີ່ຈະມາກໍຄວາມ ເຈັບໄຂ້ໄດ້ປ່ວຍ ຫຼື ນຳຄວາມຈິບຫາຍວາຍວອດມາສູ່ຊາວບ້ານຊາວເມືອງ ຕາມຄວາມເຊື່ອທີ່ມີມາດັ້ງເດີມຈາກອິນເດັຍ.

ໄອກາດດັ່ງກ່າວ ເພິ່ນຍັງຈັດການຊຳລະທຳຄວາມສະອາດເນື້ອກາຍ ຢ້າວເຮືອນ ແລະ ບ້ານຊ່ອງ ເພື່ອໃຫ້ປາສະຈາກໂລກໄພໄຂ້ເຈັບດ້ວຍ ອັນນັບວ່າ ເປັນບຸນອານາໄມ ຫຼື ທຳຄວາມສະອາດກໍວ່າໄດ້.

- ເດືອນ 8 (ເດືອນກໍລະກົດ):

ບຸນເຂົ້າພັນສາ ຫຼື ຈຳພັນສາ (ວັນສຸປະວາສະ) ເປັນພິທີກັມຂອງນັກ ບວດ ແລະ ຊາວພຸດທັ້ງຫຼາຍຄື ທຸກໆປີເມື່ອເຖິງແຮມຄ່ຳໜຶ່ງເດືອນ 8 ມາແລ້ວ ບັນດາພຣະພິກຂຸສົງ ຈະພາກັນຢູ່ກັບວັດໂດຍບໍ່ອອກໄປບ້ານອື່ນເມືອງໄກທາງ

ໃດເລີຍ ທັ້ງນີ້ກໍຍ້ອນວ່າເປັນໜ້າຝົນ ນ້ຳຂຶ້ນ ນ້ຳນອງ ແຖມຍັງແມ່ນລະດູວຽກໄຮ່ ການນາ ເຊິ່ງນັບວ່າເປັນລະດູທີ່ລ້ຳບາກທີ່ສຸດຂອງປີ ຈຶ່ງພາກັນຈຳສິນພາວັນນາ ບຳເບນກຸສົນຢູ່ວັດໃຜວັດມັນ ອີກປະການໜຶ່ງຍັງແມ່ນໂອກາດທີ່ພຣະສົງອົງຄະເຈົ້າຈະສົມມາຄາລະວະ ພຣະສົງຊັ້ນອະວຸໂສໃນສິ່ງທີ່ໄດ້ກະທຳຜິດພາດຕ່າງໆ ຕະຫຼອດປີຜ່ານມາ ທັ້ງຍັງເປັນໂອກາດທີ່ພຣະສົງສຳຫຼວດຕົນເອງຕະຫຼອດປີທີ່ຜ່ານມາ.

ສຳລັບພຸດທະສານິກກະຊົນແລ້ວ ໂອກາດຈຳພັນສານັ້ນ ຍັງເປັນການລະໂອກາດວິດການທ່ອງທ່ຽວໄປມາຄ້າຂາຍ ວິດການຂ້າສັດຕັດຊີວິດ ວິດການກິນເຫຼົ້າ ແລະ ການກະທຳໃດໆທີ່ເປັນການຂັດຕໍ່ທັມມະເປັນເວລາ 3 ເດືອນ. ເຂົ້າເຈົ້າຈະພາກັນເຮັດກອງບຸນກອງທານ ຟັງເທດຟັງທັມ ສະຫວິບສະຕິອາລິມ ເພື່ອມຸ່ງໝັ້ນໃນຄວາມປອດໃສທາງຈິດໃຈ ນັບວ່າເປັນປະເພນີທີ່ເປັນປະໂຫຍດທີ່ສຸດອັນໜຶ່ງ ແຕ່ມາຮອດປັດຈຸບັນຮີດຄອງອັນດີງາມແບບເດີມໆນັ້ນ ກໍລົດນ້ອຍຖອຍລົງ ເນື່ອງຈາກວິຖີຊີວິດມີການປ່ຽນແປງໄປ.

ການຈຳພັນສາຈະກິນເວລາ 3 ເດືອນ ຄືເຖິງແຮມຄ່ຳໜຶ່ງຂອງເດືອນ 11.

- ເດືອນ 9 (ເດືອນສິງຫາ):

ບຸນເຂົ້າປະດັບດິນ: ຕາມຄວາມເຊື່ອຂອງຊາວພຸດລາວແລ້ວ ມະນຸດທີ່ຕາຍໄປແລ້ວ ຜູ້ປະພຶດດີກໍໄດ້ເກີດຊາດໃໝ່ ແຕ່ຜູ້ທີ່ມີກຳ ຫຼື ປະພຶດໃນທາງບໍ່ຊອບ ວິນຍານຈະເປັນເຜດເລາະຄ່ຳໄປຕາມສິງສານ ບໍ່ສາມາດໄດ້ໄປເກີດໝ່ຳເພີ່ນໄດ້ ແລະ ກໍບໍ່ສາມາດໄດ້ຮັບຂອງທານໃດໆຈາກໃຜເລີຍ. ດັ່ງນັ້ນ, ເພີ່ນຈຶ່ງຈັດບຸນເຂົ້າປະດັບດິນ ກິນທານໄປຫາຍາດຕິພີ່ນ້ອງຂອງຕົນເອງ ທີ່ລ່ວງລັບໄປ ແລະ ຜູ້ທີ່ເປັນເຜດບໍ່ມີທີ່ເພິ່ງພາອາໄສ.

ການທານເຂົ້າປະດັບດິນນັ້ນ ຄືທຸກຄົນຈະຫໍ່ເຂົ້າປັ້ນຈຸເຂົ້າໜົມ ຂອງຄາວ ແລະ ທຸກໆສິ່ງທີ່ຢາກທານແລ້ວໄປຫໍ່ບຸນຕັກບາດ ຢາດນ້ຳໄປຫາຜູ້ຕາຍ ສ່ວນອີກສ່ວນໜຶ່ງກໍທານອຸທິດໄປຫາຜູ້ເປັນເຜດໄຮ້ຊາດໄຮ້ທີ່ເພິ່ງ ຄືເອົາຂອງທານໄປຢາຍປະດັບຕາມດິນ ຫຼື ຕາມຕົ້ນໄມ້ຮິ້ວຮາວຕ່າງໆ.

- ເດືອນ 10 (ເດືອນ ກັນຍາ):

ບຸນເຂົ້າສະຫຼາກ ນັ້ນເພີ່ນເຮັດກວຍເຂົ້າໃສ່ຂອງຫານແລ້ວໄປຫານໃຫ້ຍາດພີ່ນ້ອງຜູ້ຕາຍໄປ. ຕາມປະເພນີປະຕິບັດມາຜູ້ລ່ວງລັບໄປຜູ້ໜຶ່ງຕ້ອງໄດ້ຮັບກວຍເຂົ້າຂອງຫານກວຍໜຶ່ງ ພ້ອມທັ້ງມີສະຫຼາກບອກຊື່ຜູ້ທີ່ຫານໄປຫານຳນັ້ນດ້ວຍ. ການຈັດບຸນເຂົ້າສະຫຼາກໃນເດືອນ 10 ກໍເພາະວ່າ ເປັນໂອກາດເຂົ້າມາງ່ອນ ເອົາມາປຸງແຕ່ງເຮັດເຂົ້າໜົມມີຄວາມແຊບຊ້ອຍດີ ຈຶ່ງຢາກຫານໃຫ້ຍາດພີ່ນ້ອງຜູ້ລ່ວງລັບໄດ້ກິນນຳ.

- ເດືອນ 11 (ເດືອນຕຸລາ):

ບຸນອອກພັນສາ : ຄຳວ່າ "ອອກພັນສາ" ແປວ່າອອກຈາກຂອບເຂດຈຳກັດ ຫຼື ປົດປ່ອຍອອກຈາກການກັກບໍລິເວນ ພາຍຫຼັງທີ່ພາກັນກັກຕົວຢູ່ມາໄດ້ເປັນໄລຍະ 3 ເດືອນ ດ້ວຍລະບຽບປະຕິບັດທັມມະຢ່າງເຄັ່ງຄັດ. ໂອກາດນີ້ບັນດາພະສົງຈະປະຕິບັດການ "ປະວາຣະນາ" ເຊິ່ງກັນ ແລະ ກັນ ໝາຍຄວາມວ່າ ເປີດໂອກາດໃຫ້ມີການຕຳນິ ຕັກເຕືອນ ແລະ ຮັບເອົາຄວາມຈິງໃຈເຊິ່ງກັນ ແລະ ກັນ.

ສະເພາະສາສະນິກະຊົນແລ້ວ ໃນວັນນັ້ນກໍມີການທຳບຸນຕັກບາດຟັງເທດສະໜາ ປັບປຸງ ແລະ ສະມາທິຈິດໃຈຕົນເອງໃຫ້ປອດໂປ່ງ ປອດໃສ ຂາວສະອາດ ລະເວັ້ນອະບາຍຍະມຸກທັງປວງ.

ຕອນກາງຄືນມາຈະມີການໄຕ້ທຽນບູຊາພະຣັດຕະນະໄຕ (ແກ້ວ 3 ປະການ) ມີການໄຫຼເຮືອໄຟບູຊາພະພຸດທະເຈົ້າ ບູຊາພະຍານາຄ ອັນເປັນເຈົ້າແຫ່ງຄຸງຄາທັງຫຼາຍທີ່ເຮັດໃຫ້ຟ້າຝົນລົມດີ ລ່ຳລ້ຽງໄຮ່ນ່າຕາກ້າ ໄດ້ເຂົ້າປາທັນຍາຫານອຸດົມສົມບູນ.

ບຸນຊ່ວງເຮືອ ຫຼື ບຸນເດືອນ 11: ນັບເປັນບຸນປະເພນີນວນຊົນທີ່ຍິ່ງໃຫຍ່ລະດັບຊາດປາງໜຶ່ງຂອງລາວ ຄືເມື່ອບຸນອອກພັນສາຈົບສິ້ນລົງແລ້ວ ກໍຕໍ່ໃສ່ບຸນປະເພນີນວນຊົນຮຽກວ່າ ບຸນຊ່ວງເຮືອ. ບຸນນີ້ຈັດຂຶ້ນທຸກປີເຊັ່ນກັນ ໂດຍມີຄວາມເຊື່ອເຖິງການບູຊາພຣະຍານາຄ ແລະ ນ້ຳເຊັ່ນກັນ ເມື່ອຮອດມື້ຮອດຍາມມາແລ້ວ ບ້ານທີ່ຢູ່ແຄມແມ່ນ້ຳໃຫຍ່ຈະຕ້ອງກຽມເນື້ອກຽມຕົວເພື່ອມາແຂ່ງຄວາມພິດສະດານຕະການຕາຂອງເຮືອຊ່ວງ ຄວາມມີພະລະກຳລັງ ແລະ ຄວາມເກ່ງ

ທາງດ້ານສິພາຍກັນ ເປັນງານບຸນທີ່ມີຄວາມມ່ວນຊື່ນທີ່ສຸດປາງໜຶ່ງຂອງລາວ. ທີ່ມາຂອງບຸນນີ້ ກໍເພື່ອເປັນສັນຍະລັກໃຫ້ແກ່ນາຄຫຼົ້ນນ້ຳ ເຮັດໃຫ້ຟ້າຝົນຕົກມາ ເຮັດໃຫ້ເຂົ້າໄຮ່ ເຂົ້ານາອຸດົມສົມບູນ ເປັນການສະແດງຄວາມຮູ້ບຸນຄຸນຕໍ່ ນາຄ ຜູ້ເປັນທ້າວສັນຍະລັກແຫ່ງບັນພະຊົນຄົນລາວ ທີ່ຍາມໃດກໍຊ່ອຍຊູຄົນລາວໃຫ້ປະ ສົບຄວາມສຳເລັດຜາບແພ້ມານຮ້າຍຕ່າງໆຕະຫຼອດມາ.

- ເດືອນ 12 (ເດືອນພະຈິກ) ບຸນທາດຫຼວງ : ນັບວ່າເປັນບຸນສາສະໜາ ແລະ ປະເພນີ ທີ່ຍິ່ງໃຫຍ່ປະຈຳຊາດປາງໜຶ່ງຂອງລາວ ເຊິ່ງຈັດຂຶ້ນເລີ່ມແຕ່ອອກ ໃໝ່ຈົນຮອດມື້ເພັ້ງຂອງເດືອນ 12 ທຸກໆປີທີ່ນະຄອນຫຼວງວຽງຈັນ ບ່ອນທີ່ມີພຣະ ທາດຫຼວງເປັນຈຸດໃຈກາງຂອງປະເທດ. ທີ່ມາຂອງບຸນນີ້ແມ່ນບຸນບູຊາພະອັດທິ ຂອງພຣະພຸດທະເຈົ້າເຊິ່ງບັນຈຸໄວ້ໃນພຣະທາດຫຼວງນັ້ນເອງ. ພຣະທາດຫຼວງ ນັ້ນມີຕຳນານເລົ່າໄວ້ວ່າ ແມ່ນໜຶ່ງໃນຈຳນວນທາດ 84.000 ລູກທີ່ພຣະເຈົ້າອະ ໂສກະຣາຊ ໄດ້ມີພຣະຣາຊະອາດຍາໃຫ້ສ້າງຂຶ້ນ ເພື່ອບັນຈຸອັດຖິ ຂອງພຣະພຸດ ທະເຈົ້າ ຄືໃຫ້ຄົບຕາມຄຳສອນຂອງພຣະພຸດທະເຈົ້າ 84.000ບົດ(84.000ຂັນທ໌). ຕາມປົກກະຕິແລ້ວ ໃນນະມັດຊະການພຣະທາດຫຼວງນີ້ ຈະມີຕົວແທນຂອງ ພຣະສົງທີ່ມາຈາກທຸກສາລະທິດທັງພາຍໃນ ແລະ ຕ່າງປະເທດ ມີມວນຊົນລ້ຽງ ມາຈາກທົ່ວສາຣະທິດເພື່ອຮ່ວມບຸນ. ຕາມທຳນຽມແລ້ວ ໄອກາດດັ່ງກ່າວນີ້ ເພິ່ນ ຈະໄດ້ຈັດກັນແຫ່ຜາສາດເຕົ້ງ ລ້ຽງຕະຫຼາດນັດ ມີການຈັດກິດຈະກຳທາງວັດທະ ນະທັນຫຼາກຫຼາຍ ຕະຫຼອດການກິລາປະເພນີ ແລະ ອື່ນໆຫຼາຍໆຢ່າງ. ມັນເປັນ ໄອກາດທີ່ຜູ້ຄົນທຸກໆພາກຂອງປະເທດ ແລະ ໄທຕ່າງດ້າວທ້າວຕ່າງແດນມາ ພົບປະມ່ວນຊື່ນລື່ນເລີ່ງນຳກັນ ຕະຫຼອດມາແຂ່ງຂັນຄວາມດີ ຄວາມເດັ່ນ ສີໄມ້ ລາຍມື ແລະ ຜົນງານລະຫວ່າງກັນ ແລະ ກັນໃນນະຄອນຫຼວງຂອງປະເທດ.

ຮີດ 12 ນັ້ນ ນັບວ່າເປັນຮີດໃຫຍ່ຂອງທ່ອສ້າງຄົມ ແຕ່ກໍຍັງມີຮີດປີກຍ່ອຍ ຂອງທ້ອງຖິ່ນຂອງເຜົ່າຕ່າງໆຢ່າງຫຼວງຫຼາຍ ແລະ ນັບບໍ່ຖ້ວນ. ນອກຈາກຮີດ ແລ້ວ ສັງຄົມລາວຍັງມີຄອງຕ່າງໆ ເຊັ່ນ :

- ຄອງຣາຊະສຳນັກ.
- ຄອງວັດ ຄອງສົງ.

- ຄອງບ້ານ ຄອງເມືອງ.
- ຄອງຢ້າວ ຄອງເຮືອນ.
- ຄອງເຖົ້າ ຄອງຊຸນ.
- ຄອງພໍ່ ຄອງແມ່.
- ຄອງຜົວ ຄອງເມັ່ງ.

ຄອງລູກ ຄອງຫຼານ.

- ຄອງໃພ້ ຄອງເຂີຍ.

ແລະ ອື່ນໆ.....

ມີໜັງສືວັນນະກຳຫຼາຍເຫຼັ້ມເຊັ່ນ: ໜັງສືສະເພາະ "ຮີດ 12 ຄອງ 14" ລຸງສອນຫຼານ "ອິນທິຍານສອນລູກ" ປູ່ສອນຫຼານ "ຫຼານສອນປູ່ " ຕິຍິງ " ຕິຊາຍ " ພຸດທະທຳນາຍ " ແລະ ມະຫານິທານ "ຊາມິກ" ຕະຫຼອດຮອດ "ຄຳປິດສະໜາ " ຄຳສອນ " ສຸພາສິດ " ກາບກອນຂັບລຳ ອ່ານໜັງສື " ແລະ ອື່ນໆ... ຫຼາຍໆ ເລື່ອງດ້ວຍກັນທີ່ເວົ້າເຖິງຄອງ ແລະ ສັ່ງສອນຄົນໃຫ້ຮູ້ ແລະ ປະຕິບັດຄອງ ແລະ ຮີດ.

ຕົວຢ່າງ ລະຫວ່າງບິດາ ແລະ ລູກ ເພິ່ນກໍ່ມີຄອງທີ່ຕ້ອງປະພຶດດັ່ງນີ້:

- ລູກຕໍ່ບິດາມາດາ.

1. ລູກຕ້ອງມີຄວາມກະຕັນຍູ ຕະກະເວທີຕໍ່ພະບິດາມາດາ (ຄຸນພໍ່ທໍ່ພູ ເຂົາກ້າ ຄຸນແມ່ທໍ່ຟ້າກັບແຜ່ນດິນ).

2. ລູກຕ້ອງຟັງຄຳສັ່ງສອນຂອງພໍ່ແມ່ (ລູກບໍ່ຟັງຄວາມພໍ່ຄວາມແມ່ຜີແກ່ເຂົ້າໝໍ້ນະຮົກ)

3. ລູກຕ້ອງຊ່ອຍພໍ່ຊ່ອຍແມ່ໃນການເຮັດຢູ່ກະທຳກິນ.

4. ລູກຕ້ອງລ້ຽງດູ ແລະ ເບິ່ງແຍງບິດາມາດາຍາມເຖົ້າແກ່ຊະລາ.

(ໄປຢຽບໜ້າ ມາຢຽບຫຼັງ)

(ຕົ້ນແຕ່ເຊົ້າ ໃຫ້ໄດ້ເກົ້າຂອງຢາມ)

5. ລູກຕ້ອງສືບມູນມັ້ງ ແລະ ສືບຕັດບິດາມາດາ ຕະຫຼອດສືບທອດ

ຄວາມດີງາມ ແລະ ຊື່ສຽງຕະກຸນພໍ່ແມ່ເມື່ອເພີ່ນໝົດບຸນ (ໝາກໄມ້ບໍ່ຫ່ອນຫຼົ່ນໄກກົກ).

- ບິດາມາດາຕໍ່ລູກ : ບິດາມາດາຖືລູກດັ່ງນີ້:

  - ລູກຫົວແກ້ວ ຫົວແຫວນ
  - ລູກຄືເລືອດ ໝາກຫົວອົກ
  - ຮັກລູກ ເໝືອນແກ້ວຕາ
  - ລູກແມ່ນຄວາມສຸກ ແລະ ຄວາມຫວັງຜູ້ສືບທອດຕະກຸນ. ດັ່ງນັ້ນ ບິດາມາດາຜູ້ໃຫ້

ກຳເນີດແກ່ລູກຈຶ່ງຕ້ອງ :

- ໃຫ້ຄວາມຮັກ ແລະ ຄວາມຖະໜອມລູກ
- ບົວລະບັດ ແລະ ລ້ຽງລູກຢ່າງດີ
  (ອີ່ພໍ່ປ້ອນຊົ້ນ ອີ່ແມ່ປ້ອນປາ)
- ໃຫ້ການສຶກສາ-ສັ່ງສອນ ແລະ ສ້າງເງື່ອນໄຂໃຫ້ລູກໄດ້ຮ່ຳຮຽນ.
- ຫາເຂົ້າຂອງເງິນຄຳໄວ້ເປັນມໍລະດົກໃຫ້ລູກ
- ຫາຄູ່ຄອງທີ່ດີໃຫ້ລູກ
- ປະມູນມັ່ງໄວ້ໃຫ້ລູກເມື່ອຈຸຕິການມາເຖິງ.

ບາງຕົວຢ່າງ ໃນໜັງສື "ອິນທີຍານສອນລູກ" ມີດັ່ງນີ້ :

"ຄັນວ່າພໍ່ຫາກມໍລະນາແລ້ວ ເສັຍຊີວັງມັດຈຸລາດ ໄປນັ້ນ
ສິແກ່ນແກ້ວ ໃຫ້ເອົາແຂ້ວຂອດແຫວນພໍ່ເນີ
ອັນວ່າຄຳປາກພໍ່ແມ່ນີ້ ໜັກເກິ່ງທໍລະນີ
ໃຜຜູ້ຢ່າແຢ່ງນິບ ຫາກຈິເຮືອງເມືອໜ້າ
ອັນໜຶ່ງ ພໍ່ຫາກຈຸຕິແລ້ວ ມໍລະນາລິດຊົ່ວ ໄປນັ້ນ
ຄຸນພໍ່ລ້ຽງແຕ່ນ້ອຍ ໃຫ້ຍ່ຶ້ນໃສ່ຫົວ
ຟັ່ງເຢີ ສິມສະອາດເນື້ອ ນັ້ນທະນາດທິຕາ ພໍ່ເຮີຍ
ເຈົ້າຢ່າມີໃຈຂີ້ມ ເຝື່ອນຮຶ້ນສະເໜີ້ງວນ

ใจให้ใสสะเໝີนก๋
ให้เจ้าถืดถี่ถ้วน
บัดนี้ พ่จักบอกให้รู้
แม่นจิทำดอๆคิน
.....
ຊาดที่เป้นยิๆนี้
ไก่มันซ่างฝักซ่างป้อๆ
ทำคุนให้
แพๆเธ่ย
แม่นจะมีชีกสัๆอ
.....
ซื่อ่า เป้นคินให้
มันหากมังนไซ่ไว้
บ่กอ่าลก๋ที่แม้ๆ
ຊาดที่เป้นแมอยิๆ

ถุๆถาสะหมุดใหย่
ดีแล้วจิ๊ๆถ่อยจา
ยามเมื่อตาเห้น นี้เมิ
ย่ามีใจสั้น
.....
ทำบุมบามไก่
ปอๆล้ๆให้ใหย่สูๆ
ย่าเสัยใจไว้ดอมเพื่อน

ถะหมอมไว้ก่จิ๊ๆดิ พ่แล้อ
.....
ทำบุมบามเต่า
ดีแล้วจิ๊ๆถ่อยหนิ
ในแห่งถอามถึด พ่แล้อ
ก่ย่าอาๆหลาฝ่าย"

บาๆติอย่างใน "ถุๆสอนหลาน" :

"ถันเจ้าหากมิเฮ็บแล้อ
ไหมบ่มิร้อยกั้น
ถันชิท่ถืนต๋า
เฮิานั้น เป้นผู้เยาะย่อๆแต้ม
หลานย่าได้โอดอ้าๆ
เฮิาชื่อ่า แมอปุนนา
ทำตินให้
พอกซ่างเฮิาหากะมะดุดกั๋ๆ
อ่าหุอหางม๋

ให้ถามไหมดูก่อน
สินได้ก่บ่ๆาม"
ให้หาคู่ผู้เพิ่นซ่างๆ
แปงให้ก่จิ๊ๆาม
ทะทำลิ่นถูสอน
ปากเป้นสะหาอก้า
ถึกูนเธือซ่อๆ
แปงแล้วก่จิ๊ๆาม
ปะสิๆเธือลาใหย่

ຄັນຊິເຂົ້າປ່າກ້ວາງ ໃຫ້ຫາເທົ້າຊ່ອຍຕີນ ແທ້ເນີ
ຄຳນີ້ດາສອນໃຫ້ ຫລານເຫັນຈຳຈີ່
ຄັນຫາກກິນເຂົ້າແຄັນ ໃຫ້ຫານ້ຳລອງລິ້ງ
ຄັນຊິຟັນຂວານໃຫ້ ຖາມຫີນເສັຍກ່ອນ
ຄັນວ່າຫີນບໍ່ພ້ອມ ແປງໄດ້ກໍ່ບໍ່ງາມ
ຄັນຊິທຳນາໃຫ້ ຖາມຄວາຍເສັຍກ່ອນ
ຄັນວ່າຄວາຍບໍ່ພ້ອມ ຢ່າດຶງເຂົ້າໃສ່ນາ
ຄັນວ່າເຈົ້າມີໄໝແລ້ວ ຢ່າລືມຄຸນມ້ອນຄ່ວາງຫານເຮັຍ
ມ້ອນຫາກແປງເສັ້ນຍຸ້ງ ຍອງໃຫ້ກໍ່ຈົ່ງມີ
ຊາດທີ່ສາຂາໄມ້ ໃຫ້ຖາມດູເທົ້ງາກ່ອນ
ຄັນວ່າຮາກບໍ່ພ້ອມ ລຳນັ້ນບໍ່ທ່ອນມີ

....

ເປັນຂຸນໃຫ້ ມີເສ (ເສນາ) ບ້ງບ່ງ
ສິ່ງແນວໃຫ້ແຕ່ງຕັ້ງ ບ້ງໄວ້ກໍ່ຈົ່ງດີ
ຢ້ານແຕ່ເສັຍກິ່ງກ້ານ ໃບລິ່ນຈຳກິກ
ເຮືອບໍ່ມີພາຍນຳ ສ່ອນຊິເສັຍກ່ຽງແກ້ງ
ຄູບໍ່ມີສອນໄວ້ ທຳນອງບໍ່ມີວ່າດ
ຈ່າບໍ່ມີວ່າດເວົ້ຳ ເສັຍຫລ້ຽຫລ່ຽມຂຸນ
ເປັນຂຸນໄດ້ ຫລາຍເມັຍຢ່າເປີບ ໃຈທ້ອນ
ລ່ຽງເທື່ອໄດ້ ເມັຍນັ້ນຄອນບໂຈນ
ມີຜົວໃຫ້ ມີເມັຍເປັນຄູ່
ຢ່າໄດ້ປະໄປຮ້ຳງ ຊ່ວວ້ານເພິ່ນຊິຕຽນ"

ສຳລັບຄອງ 14 ບູຮານຂອງຄາລະວະວ່າດ ຫຼື ສາຊຸມນິກະຊົນຫຳນະດ່ຳ ເພິ່ນກໍ່ໄດ້ບັນຍັດໄວ້ດັ່ງນີ້:

1. ເມື່ອເຂົ້າໄຮ່ເຂົ້ານ່ຳສຸກແກ່ແລ້ວ ຈະເອົ່ານ່ຳກິນຕ້ອງເອົ່ານ້ຳໃຫ້ຫານໃຫ້

ຜູ້ມີສິນກິນກ່ອນ.

2. ບໍ່ໂລບຕາດ່ຽງ ຕາຊິງ ຢ່າປອມເງິນຮາງ ຢ່າໃຊ້ວາຈາຫຍາບຊ້າຕໍ່ກັນ.

3. ພ້ອມກັນເຮັດຕ້າຍກຳແພງວັດ ແລະ ບ້ານເຮືອນຂອງຕົນ. ສ້າງຫໍບູ ຊາເຈົ້າອາຮັກໄວ້ 4 ແຈບ້ານ ແລະ ເຮືອນ.

4. ກ່ອນຈະຂຶ້ນເຮືອນໃຫ້ລ້າງຕີນ.

5. ເມື່ອເຖິງວັນສິນ 7-8-14-15 ຄ່ຳໃຫ້ສົມມາກ້ອນເສົ້າ ຄີໄຟ ແມ່ຂັ້ນໄດ ປະ ຕູ ທີ່ຕົນໄດ້ອາໄສ.

6. ເມື່ອຈະເຂົ້ານອນ ໃຫ້ເອົານ້ຳລ້າງຕີນຜົວກ່ອນ.

7. ເມື່ອເຖິງວັນສິນ ໃຫ້ເອົາດອກໄມ້ທູບທຽນສົມມາຜົວ ພໍ່ແມ່ເຖົ້າ ແກ່ ລຸງຕາຂອງຕົນ

ເຖິງວັນອຸໂປສົດພຣະສັງຄະເຈົ້າ ໃຫ້ແຕ່ງຂັນດອກໄມ້ທູບທຽນໄປເຄນ ສັງຄະເຈົ້າ.

8. ເຖິງວັນສິນດັບສິນເພັ້ງ ໃຫ້ນິມົນພຣະສັງຄະເຈົ້າມາສູດມຸງຄຸນເຮືອນ ແລ້ວ ເຮັດບຸນຕັກບາດ.

9. ເວລາຕັກບາດ ຢ່າໃຫ້ພຣະພິຊຸຄອຍຖ້າ ເວລາໃສ່ບາດ ຢ່າໃຫ້ຊູນ ບາດ ຫຼື ຊູນພຣະພິຊຸສາມະເນນ ບໍ່ໃຫ້ຖືເກີບ ຫຼື ກັ້ງຮົ່ມ ບໍ່ໃຫ້ເອົາຜ້າປົກຫົວ ບໍ່ ໃຫ້ອຸ້ມຫຼານ ບໍ່ຖືເຄື່ອງສັດຕາອາວຸດ ແລະ ຕ້ອງໃສ່ເສື້ອ.

10. ເມື່ອພຣະພິຊຸປະວິວາສກັມຊຳລະເນື້ອກາຍໃຫ້ມີຂັນດອກໄມ້ທູບ ທຽນ ແລະ ເຄື່ອງອັດ ຖະໄປຖວາຍເພິ່ນ.

11. ເມື່ອພຣະພິຊຸກາຍມາຕ້ອງນັ່ງລົງ ຍໍມືກ່ອນແລ້ວຈຶ່ງຄ່ອຍຈາລະຈາ.

12. ບໍ່ຢຽບເງົາພຣະພິຊຸສົງຜູ້ມີສິນທຳ ບໍລິສຸດ.

13. ບໍ່ເອົາອາຫານເງື່ອນໄປວັດ ຫຼື ເອົາໄວ້ຖ້າຜົວກິນ.

14. ຢ່າເສບກາມະຄຸນໃນວັນສິນ ວັນເຂົ້າວັສສາ ອອກວັສສາ ແລະ ວັນ ມະຫາສົງກາມ.

ຄອງ 14 ປຸຮານ ຂອງກະສັດ :

ຄອງ 14 ຂອງກະສັດນັ້ນ ເພິ່ນຮຽກວ່າພຣະຣາຊະທັມນຽມຂອງກະສັດຄື ເປັນຂໍ້ບັງຄັບສຳລັບໃຫ້ທ້າວພຣະຍາ ມະຫາກະສັດປະຕິບັດ ແລະ ນຳພາໄພ່ຟ້າ ຂ້າແຜ່ນດິນປະຕິບັດເພື່ອໃຫ້ບ້ານເມືອງມີຄວາມເປັນເປີກແຜ່ນ ຢູ່ຊຸມກິນເຢັນ ແລະ ມີຄວາມເປັນທັມ.

1. ເປັນທ້າວພຣະຍາຈັດຕັ້ງແຕ່ງແປງຊື້ຊາມນາມະກອນເສນາອາມາຕ ຣາຊມຸນຕີໃຫ້ພິຈາຣະນາສືບຫາຜູ້ຊື່ຜູ້ຄິດ ຜູ້ຮ້າຍຜູ້ດີ ຜູ້ຊ່າງຖະແຫຼງແປງລີ້ນ ມັກລັບສໍ່ຖ້ອຍຄຳ ອັນໜັກອັນເບົາ ອັນນ້ອຍອັນໃຫຍ່ໃຫ້ໄວ້ໃນໃຈທັ້ນກ່ອນ ສິມທີ່ຟັງຈຶ່ງຟັງ ບໍ່ສິມທີ່ຟັງຢ່າຟັງ ສິມຕັ້ງຊື່ໃຫ້ໝຽງໃດ ຈຶ່ງຕັ້ງໝຽງນັ້ນໃຫ້ແຕ່ງຕັ້ງຜູ້ຊື່ ສັດສຸຈະຣິດໝັ້ນທ່ຽງຜູ້ຮູ້ຈັກຣາຊະການບ້ານເມືອງມາແຕ່ກ່ອນ ບໍ່ຂົມເຫັ້ງໄພ່ຟ້າ ຂ້າແຜ່ນດິນໃຫ້ທາຍໃຈເຂົ້າອອກໄດ້ຈຶ່ງຕັ້ງໃຫ້ເປັນເສນາອາມາຕຍ໌.

2. ເປັນທ້າວພຣະຍາໃຫ້ເສນາມຸນຕີ ເປັນສາມັກຄີພ້ອມໝຽງກັນໃຫ້ໝັ້ນ ມາປະຊຸມກັນບໍ່ໃຫ້ຂາດ ອັນໜຶ່ງສິ່ງໃດຈັກໃຫ້ອາບັດຂ້າເສິກເກງຂາມ ແລະ ໃຫ້ເຂົາຢູ່ໃນເງື້ອມມືແທ່ງເຈົ້າຕົນດ້ວຍຍຸທກັມປັນຍາ ໃຫ້ບ້ານເມືອງກ້ານກຸ່ງຮຸ່ງ ເຮືອງເປັນທີ່ກ້ວາງຂວາງ ໃຫ້ໄພ່ຟ້າຂ້າແຜ່ນດິນຢູ່ເຢັນເປັນສຸກ ຢ່າກິດຂີ້ຂົມເຫັ້ງ ເຫີ້ນ.

3. ເປັນທ້າວພຣະຍາ ເຖິງສັງຂານປີໃໝ່ຖ່າຍສັງກະມາສເກນ ໃຫ້ເຊີນພ ຣະແກ້ວ ພຣະບາງພຣະພຸທຮູບສົງນ້ຳອີບນ້ຳຫອມໄວ້ໃນສະພັງ ສັກກາຣະ ດ້ວຍດອກໄມ້ທູບທຽນ ຟັງທັມຈຳສິນຄົບວັນ 7 ວັນທຸກໆວັດໃຫ້ເປັນການຊົມຊື່ນ ຍິນດີ ເຊິ່ງພຣະສາສນາ ຕິບພຣະເຈດີຊາຍ ບູຊາເທວະດາທັ້ງຫຼາຍທາງນ້ຳ ແລະ ທາງບົກ ບ້ານເມືອງຈຶ່ງຈຸທິຊຸ່ມເຢັນ ນ້ຳຟ້າສາຍຝົນ ເຂົ້າໄຮ່ເຂົ້ານາບໍລິບູນ.

4. ເປັນທ້າວພຣະຍາວັນສັງຂານພັກໃຫ້ວິມິນຕ໌ພິກຂຸສົງຄ໌ແຫ່ນ້ຳຝ່າຍ

ໃຕ້ເມືອຝ່າຍເໜືອ ວັນສັງຂານພັກລ່ອງໃຫ້ວັດຝ່າຍເໜືອມາຝ່າຍໃຕ້ ເທວະດາ ຫວງໄປຢາມຫົວເມືອງທ້າຍເມືອງທຸກໆເມືອງຣະດູປີບ້ານເມືອງຈົ່ງຈຸທິຈຳເຣີນ ໃຫ້ຣາສດອນມີນ້ຳອີບນ້ຳຫອມທິດສົງພຣະພິກຂຸສົງຄ໌ ບ້ານເມືອງຈົ່ງຢູ່ເຢັນເປັນ ສຸກ ໃຫ້ຣາສດອນແຕ່ງໝໍ້ຂຸບັ້ງເຄນພິກຂຸສົງຄ໌ເພື່ອກັ້ງບັ້ງໄພຍໄພອັນຕຣາຍແກ່ ຣາສດອນທົ່ວໄປເທີ້ນ.

5. ເປັນທ້າວພຣະຍາ ວັນສັງຄານປີໃໝ່ໃຫ້ເສນາອາມາຕຍ໌ຣາຊມຸນຕີ ພຣະຍາເພັ້ງ ທ້າວຊຸມຫົວບ້ານ ຫົວເມືອງ ຕ້ຳຫວດອາສາມະຫາເລັກສີພາຍ ໄທ ແຈກ ມີທຸງນຄົນລະຄູ່ພ້ອມກັນຂຶ້ນທູນເກົ້າທູນກະໝ່ອມຖວາຍພຣະຣາຊບາສີ ເພັ້ງກະສັກມຸງຄຸນ ຖວາຍພອນໝາກໝັ້ນ ໝາກຍືນປຸໂຣຫິດຕອາຈານຣຍ໌ ຖວາຍພອນໃຫ້ມີອາຍຸ ວັນໂນ ສຸຂັ້ງ ພລັ້ງ ແກ່ອົ້ງພຣະມະຫາເຈົ້າຊີວິຕ ແລ້ວຈົ່ງ ເຊີນເອົານ້ຳມະຫາພຸທທາພິເສກ ອັນພຣະຣັສສີໄປສຖາປະນາໄວ້ໃນຖ້ຳນິກ ແອ່ນ ຖ້ຳນາງອັ່ນ ອັນຊື່ວ່ານ້ຳທ່ຽງນັ້ນແຫ່ມາສົງພຣະພຸທຮູບວັດໜວງໃນເມືອງ ທຸກວັດ ແລ້ວໄປສົງພຣະພຸທຮູບວັດສີສວັນເທວະໂລກແລ້ວເມືອສົງພຣະພຸທຮູບ ຖ້ຳຕົ້ງທວາຣາ ທີ່ປາກນ້ຳຮູເມືອງຝ່າຍເໜືອ ແລ້ວຈົ່ງນິມົນຕ໌ພຣະພິກຂຸສົງຄ໌ນ້ຳ ມາບາສີພຣະພຸທຮູບໃນພຣະຣາຊວັ້ງຕາມທັມນຽມ ຈົ່ງເປັນການໂຄຣິພຢ້ຳແຢ່ງ ພຣະສົງຄ໌ເຈົ້າ ຖືກຕ້ອງຕາມພຣະອັຖກະຖາຈາຣຍ໌ກ່າວໄວ້ທັ້ນແລ.

6. ເປັນທ້າວພຣະຍາ ໃນວັນສັງຂານເປັນວັນສັງຽະດູປີເກົ່າ ປີໃໝ່ຈັກ ມາເຖິງ ໃຫ້ເຈົ້ານາຍເສນາຂ້າຣາຊການ ມຸນຕີຜູ່ມີນາມຍົດ ແລະ ທ້າວເພັ້ງຫົວ ຫົ້ງຫົວພັ້ນ ຫົວບ້ານຫົວເມືອງ ສິບຮ້ອຍນ້ອຍໃຫຍ່ ເຊິ່ງເປັນຂ້າຂອບຂັ້ນທະສີມາ ທຸກຕ້ຳບ່ອນ ພ້ອມກັນເຂົ້າມາຖືນ້ຳພຣະພິພັທນ໌ສັຕຍານຸສັຕຍ໌ຕໍ່ພຣະພັກພຸດທະ ເຈົ້າ ພຣະທັມມະເຈົ້າ ພຣະສົງຄເຈົ້າ ໃຫ້ເປັນການຊື່ສັຈຕໍ່ແຜ່ນດິນປ້ອງກັນເພື່ອ ບໍ່ໃຫ້ຄຶດກະບົດຄິດຮ້າຍຕໍ່ແຜ່ນດິນ.

7. ເປັນທ້າວພຣະຍາຄັນເຖິງເດືອນ 7 ໃຫ້ລ້ຽງເທພາອາຮັກ ມະເຫສັກ ຫັກເມືອງ ຫູເມືອງຕາເມືອງ ເສົ້ອເມືອງ ທ້ຽງເມືອງ ຕາມຄອງສິບສີ່ ແລ້ວໃຫ້ເຊີນ ເທພະອາຮັກມະເຫສັກເຂົ້າມາຊ້ຳຣະບ້ານເມືອງປ້ອງກັນອັນຕຣາຍຕາມບຸຮານ ຣາຊປະເພນີວ່າໄວ້ ເມືອງຊວາບໍ່ມີທັມມ໌ເປັນທີ່ຄຸ້ມຄອງໄດ້ເອົາໄສຍສາຕຣ໌ ຄືຜີ

ເມືອງຄຸ້ມຄອງຈຶ່ງມີຣິດອັນນີ້ສືບຕໍ່ມາ ເພື່ອບໍ່ໃຫ້ເກີດອັນຕຣາຍໂພຍໄພດ້ວຍສີ ສາງຄາງແດງ.

8. ເປັນທ້າວພຣະຍາຄັນເຖິງເດືອນ 7 ໃຫ້ຕັ້ງສູຕຊຳຣະເມືອງ ສືບຊາ ຕາເມືອງ ບູຊາເທວະດາອາຮັກທັ້ງ 8 ທິສາ ບູຊາພຣະຣັສສີສອງພີ່ນ້ອງ ພຣະຍາ ນາກ 15 ຕະກຸລ ສູຕເຖິງ 3 ຈັນ 7 ຈັນ ແລ້ວໃຫ້ສູຕຮອບເມືອງ ຍິງປືນ ຫວ່ານ ຫີນແຮ່ຊາຍເພື່ອໃຫ້ຫາຍພຣະຍາຕໂຣຄາ ໂພຍໄພອັນຕຣາຍ ໃຫ້ຢູ່ເປັນສຸກແກ່ ບ້ານເມືອງທຸກປະການ.

9. ເປັນທ້າວພຣະຍາຄັນເຖິງເດືອນ 9 ດັບ ໃຫ້ປ່າວເຕີນຣາຊດອນບ້ານ ເມືອງ ທ່ານທໍ່ເຂົ້າປະດັບດິນໄປໃຫ້ປູ່ຍ່າຕາຍາຍ ລູກເຕົ້າ ຫ່ານເຫຼັ້ນອັນນິຈຈກັມ ໄປສູ່ປະຣະໂລກທ່ວທຸກແຫ່ງ ແລ້ວໃຫ້ເຈົ້ານາຍ ເສນາຂ້າຣາຊການທ້ວບ້ານ ທ້ວເມືອງສິບຮ້ອຍນ້ອຍໃຫຍ່ລົງມາຖືນ້ຳພຣະພິພັທນ໌ຖວາຍສັຕຍານຸສັຕອີກ ເທື່ອນຶ່ງ (1) ແລ້ວຊ່ວງເຮືອສລອງຊຸສຸພະນາກປາກດິງ ແລະ ປາກຄານກັບພຣະ ຍານາຄ 15 ຕະກຸລ ອັນຮັກສາບ້ານເມືອງໃຫ້ຊົມຊື່ນຍິນດີ ບ້ານເມືອງຈຶ່ງຢູ່ເຢັນ ເປັນສຸກ ເຂົ້າກ້າໄຮ່ນາບໍຣິບູນ.

10. ເປັນທ້າວພຣະຍາຄັນເຖິງເດືອນ 10 ເພັ້ງໃຫ້ປ່າວຣາຊດອນໃຫ້ ທ່ານເຂົ້າສລາກກະພັດຢາດນ້ຳອຸທິສໄປຫາເທວະດາອາຮັກຫຼັກເມືອງ ອັນຮັກ ສາພຣະພຸທສາສນາ ທັ້ງພໍ່ແມ່ເຜົ່າພົງສາແຫ່ງຕົນເຖິ້ນຈຶ່ງຈັກຄ້ຳຄູນຮຸ່ງເຮືອງແລ.

11. ເປັນທ້າວພຣະຍາເຖິງຣະດູເດືອນ 11 ເພັ້ງໃຫ້ສລອງພຸທພິເສກ ພ ຣະທາຕພູຈອມສີທຸກໆປີຢ່າຂາຕ ດ້ວຍເປັນສີບ້ານສີເມືອງ ແລ້ວໃຫ້ໄຫວ້ພິກຂຸ ສັງຄະເຈົ້າມາຂອດສິມໃນສນາມ ໃຫ້ສັງກະເຈົ້າປະວາຣະນາໃນທີ່ນັ້ນ ຄັນແລ້ວ ກິຈສິງຄ໌ໃຫ້ສູຕຖອດສິມນັ້ນເສັຍ ບ້ານເມືອງຈຶ່ງຢູ່ວຸທິຈຳເຣີນ ເສນາອາມາຕຈັກ ເປັນສາມັກຄີພ້ອມພຽງກັນຈັດຣາຊການບ້ານເມືອງຈຶ່ງບໍ່ຂັດຂ້ອງແກ່ກັນ ແລະ ກັນ ຄັນເຖິງແຮມຄ່ຳນຶ່ງ ໃຫ້ປ່າວເຕີນຣາສດອນໄຫ້ເຮືອໄຟ ບູຊາພຣະຍານາຄ ສິບຫ້າຕະກຸນ ບ້ານເມືອງຈຶ່ງຢູ່ສຸຂເສີມເຕີມຕອງ.

12. ເປັນທ້າວພຣະຍາຄັນເຖິງເດືອນ 12 ຂຶ້ນຄ່ຳນຶ່ງໃຫ້ເຕີນຫ້ວບ້ານ ຫ້ວເມືອງ ສິບຮ້ອຍນ້ອຍໃຫຍ່ໃຫ້ຂອບຂັນສີມາ ເຂົ້າມາໂຮມນະຄອນຫ້ວງພະ

ບາງ ເປັນຕົ້ນວ່າຂ້າລາວ ຊາວດອຍເພື່ອແຫ່ພຣະບາທສົມເດັດພຣະເຈົ້າມຫາ ຊີວິດໄປລົງຊ່ວງເຮືອ ແລະນະມັສການພຣະທາຕສູຫັມມາໄສກຣາຊ. ເດືອນ 12 ຂຶ້ນ 3 ຄ່ຳຖືນ້ຳຂຶ້ນ 13 ຄ່ຳຊ່ວງເຮືອສລອງອຸສຸພຣະນາຄ ວັດໜວງ ໃຫ້ເພັຍວັດມີ ສີເຮືອວັດລະລຳ ອັຄຄະມະຫາເສນາບໍດີ ຕັ້ງແຕ່ເມືອງແສນ ເມືອງຈັນລົງໄປເຖິງ ສຸນໍຣະຄຸຕ ວຽງແກ ນາໃຕ້ ນາເໜືອ ໃຫ້ຕັ້ງຜາມທຸກຕຳແໜ່ງເປັນເທສະການບຸນ ຊ່ວງເຮືອສລອງພຣະຍານາກ 15 ຕະກຸລ ແລະ ອາຣັກຫັກເມືອງເທພະດາຫາງ ນ້ຳ ທາງບົກ ເດືອນ 12 ເພັ້ງເສນາອາມາຕຍ໌ ແລະ ສ້ງຄະເຈົ້າພ້ອມຣາຊດອນ ແຫ່ພຣະເຈົ້າມຫາຊີວິດ ແລະ ເຈົ້າຍຳຂະບ່ອນທັ້ງ 5 ໄປນມັສການພຣະທາດສູ ຫັມມາໄສກຣາຊ ພ້ອມທັ້ງເຄື່ອງບູຊາ ມີຕົ້ນທຽນດອກໄມ້ ບັ້ງໄຟດອກ ໄຟຫາງ ກະທູນຍ່ວາຍ ກ້ອງປືດ ກ້ອງດາວ ຮູບຫຸ່ນລະຄອນ ສິງໂຂນ ແລະ ເຄື່ອງຫຼິ້ນມະ ໂຫສົບຕ່າງໆໄປຫຼິ້ນຢູ່ພະລານເດີ່ນພຣະທາຕຖ້ວນ 3 ວັນ 3 ຄືນ ແລ້ວຈຶ່ງສະ ເດັດຄືນ. ເພື່ອໃຫ້ເປັນທີ່ຊຸ່ມຊື່ນຍິນດີເຊິ່ງກັນ ແລະ ກັນ. ຂ້າລາວ ຊາວດອຍທັ້ງ ຫຼາຍກໍຈັກໄດ້ເຫັນກັນ ແລະ ກັນ ແລະ ຈັກໄດ້ເວົ້າໂລມກັນເປັນມິສຫາຍ ຈຶ່ງຈັກ ເປັນກຸຣຕິຍິດລືຊາຜາກິຕແກ່ບ້ານນ້ອຍເມືອງໃຫຍ່ ອັນຢູ່ໃກ້ຄຽງຊະແລ.

13. ເປັນທ້າວພຣະຍາ ໃຫ້ແຕ່ງແປງການທານທຸກຢ່າງເປັນຕົ້ນວ່າ ຖວາຍຜ້າກະຖິນ ແລະບວດພຣະຣິດເຈົ້າ ຕັ້ງມາໄລໄຊມຫາຊາຕ ຮັກສາສິນ 5 ສິນ 8 ເປັນນິຈການທຸກວັນອຸໂປສົຖ ແລະ ມີຫົວໃຈອັນເຕັມໄປດ້ວຍພຼົມວິຫາຣ 4 ຄື ເມຕຕາ ກຣຸນາ ມຸທິຕາ ອຸເປກຂາ ເຜືອແຜ່ແກ່ເສນາອາມາຕຍ໌ຣາສດອນ ຂ້າໄພ່ໃນຂອບຂັນທະສີມາຢ່າມີໃຈອັນກະດ້າງໄປດ້ວຍພານ ເປັນຕົ້ນວ່າ ໄລ່ ເນື້ອທ່ຽວຫາຫຼິ້ນສາວ ເອົາລູກສະກຸລມາເປັນເມັຍ ຈ່ຶງລ້ຽງນັກປາດອາດໃຫ້ ແລ້ວຍັ້ງກິຈການມາໄວ້ ແລະ ໃຫ້ມີເສນາອາມາຕຍ໌ຜູ່ສລາດກ້າຫາຣ ກັບທັ້ງສິມ ນະຊີ ພຼາມຜູ່ມີສິນບໍຣິສຸດ ແລະ ຄວາມຮູ້ ແລະ ປະກອບດ້ວຍຣາຊທັມມ໌ 10 ປະ ການ ບ້ານເມືອງຈ່ຶງວຸທິຈຳເຣີນແລ.

14. ເປັນທ້າວພຣະຍາໃຫ້ມີສົມບັຕອັນປະເສີດ 14 ປະການຄື: ຫູເມືອງ ຕາເມືອງ ແກ່ນເມືອງ ປະຕູເມືອງ ເທ້ົ້າເມືອງ ຂີ້ເມືອງ ຝາເມືອງ ເຂຕເມືອງ ແປ ເມືອງ ສຕິເມືອງ ໃຈເມືອງ ຄ່າເມືອງ ເມຄເມືອງ.

1. ທູເມືອງໄດ້ແກ່ຣາຊທູຕຜູ່ສລາດນຳຄຳເຂົ້າອອກຕ່ຳງປະເທສ.

2. ຕາເມືອງໄດ້ແກ່ນາຍໜັ້ງສືຜູ່ສລາດອາດສອນອັກຂຣະປາລີ.

3. ແກ່ນເມືອງ ໄດ້ແກ່ສັ້ງຄະເຈົ້າຜູ່ສລາດຮູ້ພຣະທັມວິນັຍ.

4. ປະຕູເມືອງ ໄດ້ແກ່ເຄື່ອງສາຕາອາວຸດຕ່ຳງໆສັ່ງສົມໄວ້.

5. ຣາກເມືອງ ໄດ້ແກ່ໂຫຣາສາຕຣ໌ ອາດຮູ້ເຫຕຮ້າຍ ແລະ ດີ.

6. ເຫງົ້າເມືອງ ໄດ້ແກ່ເສນາຜູ່ເຖົ້າຜູ່ແກ່ກ້າຫານໝັ້ນຄົງ.

7. ຂື່ເມືອງ ໄດ້ແກ່ກວານບ້ານ ແລະ ຕາແສງ ຣາຊດອນຜູ່ຊື່ສັຕຍ໌.

8. ຝາເມືອງ ໄດ້ແກ່ທະຫານຜູ່ສາມາຕອາດທຳຍຸທນາການເອົາໄຊຊນະຂ້າເສິກໄດ້.

9. ແປເມືອງ ໄດ້ແກ່ທ້າວພຣະຍາຜູ່ປະກອບດ້ວຍສິນທັມອັນດີ.

10. ເຂຕເມືອງ ໄດ້ແກ່ເສນາອາມາຕຍ໌ຜູ່ສລາດຮູ້ເຂຕບ້ານດິນເມືອງວ່າທີ່ນັ້ນດີ ຫຼື ຊົ່ວ.

11. ສຕິເມືອງ ໄດ້ແກ່ເສຕຖີພໍ່ຄ້າ ຜູ່ຮັ່ງມີເປັນດີ.

12. ໃຈເມືອງ ໄດ້ແກ່ໝໍຢາຜູ່ວິເສດ ຮູ້ພູຍາດທີ່ໃສ່ຢາຖືກ.

13. ຄ່າເມືອງ ໄດ້ແກ່ພາກພື້ນພູມປະເທສ ແລະ ພົນເມືອງດີ.

14. ເມຄເມືອງ ໄດ້ແກ່ເທພະດາອາຮັກຫ້ຳຫຼາຍ ໃນເຂຕບ້ານເມືອງ.

ນອກຈາກຄອງຕ່ຳງໆທີ່ໄດ້ຍົກເອົາມາເປັນໂຕຢ່ຳງໃຫ້ເຫັນແລ້ວ ຍັ້ງມີສິນສຳຫຼັບຄາລະວາດ ເຊັ່ນ: ສິນຫ້າ ແລະ ສິນແປດ ສິນຫ້ານັ້ນ ແມ່ນຄອງຂອງພຸດທະສາສະນິກະຊົນໂດຍທົ່ວໄປ ມີຢູ່ 5 ຂໍ້ດ້ວຍກັນ (ດັ່ງໄດ້ເວົ້າມາແລ້ວໃນຂໍ້ 3.2).

ສ່ວນສິນ 8 ນັ້ນ ແມ່ນຄອງຂອງກະສັດ ຫຼືຜູ້ສູງສັກ (ມີອີກ 3 ຂໍ້ເພີ່ມໃສ່ສິນຫ້າ)

ສຳຫຼັບຄອງຂອງສັ້ງຄະເຈົ້ານັ້ນ ມີສິນຢູ່ 2 ປະເພດ ຄື ສິນສິບ ແລະ ສິນສອງຮ້ອຍຊາວເຈັດ. ສິນສິບນັ້ນສຳຫຼັບແມ່ຊີ ແລະ ສຳມະເນນ ແລະ ສິນສອງຮ້ອຍຊາວເຈັດນັ້ນ ສຳຫຼັບຜູ້ທີ່ເປັນພຣະເຖຣານຸເຖຣະສົມບູນເຊິ່ງບໍ່ຈຳເປັນຍົກອອກມາເວົ້າໃນທີ່ນີ້ໃຫ້ສັ້ງໆໄດ້.

3. ມາລະຍາດ ແລະ ການສູ້ແຂກຄົນ.

3.1. ມາລະຍາດນັ້ນ ກໍແມ່ນຄອງປະພຶດປະເພດໜຶ່ງຊຶ່ງບົ່ງບອກເຖິງສັງຄົມທີ່ມີຄວາມສີວິໄລ ຫຼື ອະຣິຍະທຳ ແລະ ເຊິ່ງຜູ້ຄົນໃນສັງຄົມໜຶ່ງໆປະຕິບັດກັນມາເປັນອາຈິນ. ມາລະຍາດນັ້ນ ແຕກຕ່າງກັບຄອງ ແລະ ຮີດ ຈາກການທີ່ຖືເປັນກົດທີ່ບໍ່ເຄັ່ງຄັດເໝືອນຄອງ ແລະ ຮີດ. ຜູ້ຄົນປະຕິບັດມາລະຍາດ ແລະ ການສູ້ແຂກຄົນໂດຍອາໄສຄຸນວຸດທິຄວາມເປັນຜູ້ດີ ແລະ ຈິດໃຈບໍລິສຸດຂອງຕົນເອງເປັນຫຼັກ.

- ການນັ່ງ: ຜູ້ເຖົ້າ ຫຼື ອະວຸໂສຈະຕ້ອງນັ່ງທີ່ສູງ ເຊິ່ງໝາຍເຖິງນັ່ງຝາກເສົາຂວັນຂອງເຮືອນ ຫຼື ດ້ານຫົວນອນ ແລະ ກໍ່ນັ່ງໃນທ່າຂັດຕະໝາດ ຫຼື ນັ່ງປຸກເຄົ່າ. ສ່ວນຜູ້ນ້ອຍຈະນັ່ງທີ່ຕ່ຳ ແລະ ພັບແພບ. ສະເພາະແມ່ຍິງບໍ່ວ່າໄວໃດກໍ່ຕ້ອງນັ່ງພັບແພບ.

- ການເຄື່ອນໄຕ: ເວລາມີແຂກຄົນມາເຮືອນ ຫຼື ມີຜູ້ເຖົ້າແກ່ອະວຸໂສນັ່ງຢູ່ ຜູ້ນ້ອຍ ຫຼື ແມ່ຍິງທີ່ຈະຕ້ອງເຄື່ອນຕົວກາຍໜ້າພວກເພີ່ນໄປ ຕ້ອງຂໍອະນຸຍາດແລ້ວໝອບ ຫຼື ຄານກາຍໜ້າເພີ່ນໄປ. ການຍ່າງໃນເຮືອນຈະຕ້ອງຄ່ອຍຍ່າງເບົາໆບໍ່ໃຫ້ມີສຽງດັງແຮງ.

- ການຮັບແຂກ: ເມື່ອແຂກ ຫຼືຜູ້ອະວຸໂສມາເຮືອນ ຜູ້ເປັນແມ່ເຮືອນຈະຕ້ອງນັ່ງພັບແພບຍໍມືໄຫວ້ ຖາມສະບາຍດີ ແລະ ຖາມຂ່າວຄາວ. ແຂກຜູ້ມາຢາມຈະຕ້ອງປົດເກີບໄວ້ຕີນຂັ້ນໄດແລ້ວຈຶ່ງຂຶ້ນເຮືອນ. ເມື່ອເຖິງເຈົ້າຂອງເຮືອນກໍຍໍມືໄຫວ້ກ່ອນຈະທັກທາຍ ຖາມສະບາຍດີ ແລ້ວຈຶ່ງຫາທີ່ນັ່ງຕາມໃຈ. ຖ້າແມ່ນແຂກອະວຸໂສ ເຈົ້າຂອງເຮືອນຈະເຊີນໄປນັ່ງບ່ອນທີ່ສູງສັກ ແລ້ວຈັດຂັນໝາກຂັນພູພ້ອມທັງພານໍ້ຮ້ອນຮອບຢາມາສູ່ພ້ອມ ແລ້ວຈຶ່ງຖາມຂ່າວຄາວ.

-ໃນພາເຂົ້າ: ເວລາກິນເຂົ້າ ຜູ້ອະວຸໂສ ເປັນຕົ້ນແມ່ນເພດຊາຍຈະຕ້ອງນັ່ງທີ່ສູງ ຂັດຕະໝາດໄດ້ ສ່ວນແມ່ຍິງ ເດັກນ້ອຍນັ່ງທີ່ຕ່ຳໃນທ່າພັບແພບ. ທຸກຄົນໃນພາເຂົ້າຈະຄອຍໃຫ້ຜູ້ອະວຸໂສໜຸດລ່າຍກັນມາຕາມລຳດັບກິນກ່ອນ ແລ້ວຜູ້ນ້ອຍຈຶ່ງກິນຕາມຫຼັງ. ຖ້າເປັນຜົວເມັຍ ຜູ້ເປັນເມັຍຈະຕ້ອງຖ້າໃຫ້ຜົວກິນກ່ອນແລ້ວຈຶ່ງກິນ. ຖ້າເປັນລູກຈະຕ້ອງຖ້າພໍ່ແມ່ກິນກ່ອນແລ້ວຈຶ່ງກິນ ເວລາກິນເຂົ້າ

ອີ່ມແລ້ວທຸກຄົນຈະຕ້ອງຍ່ໍມືນົບພາເຂົ້າ ອັນມີຄວາມໝາຍວ່າ ເຂົ້າເປັນພຣະເຈົ້າຫ່ໍລ້ຽງຊີວິດເຮົາມາ ຫຼື ສະແດງຄວາມເຄົາລົບຮູ້ບຸນຄຸນແມ່ໂພສົບ ຜູ້ເປັນເທບແຫ່ງໂພຊະນາຫານ.

- ເວລາພົບກັນຕາມທາງ: ຖ້າເປັນສາມັນຊົນທຳມະດາ ທັ້ງສອງຝ່າຍຈະທັກທາຍຖາມສະບາຍດີ ແລະ ຖາມຂ່າວຄາວກັນໄປພ້ອມ. ຖ້າຝ່າຍໜຶ່ງເປັນຜູ້ອະວຸໂສມີຍົດສູງສັກ ຝ່າຍໜຶ່ງເປັນຜູ້ນ້ອຍ ຫຼື ສາມັນຊົນທຳມະດາ ຈະຕ້ອງນັ່ງຢ່ອງຢ້ໍລົງ ຫຼື ຢືນກົ້ມຫົວຍ່ໍມືໄຫວ້ ແລ້ວຈຶ່ງຄ່ອຍທັກທາຍຖາມຂ່າວຄາວ.

- ການໄປງານບຸນ ຫຼື ພິທີ: ຜູ້ຊາຍຈະຕ້ອງແຕ່ງເຄື່ອງຮຽບຮ້ອຍ ຖ້າເປັນເຄື່ອງພື້ນເມືອງແຮງດີມີຜ້າຂຳມ້າພາດບ່າ ມືຖືຂັນດອກໄມ້ທູບທຽນ ແລະ ຂອງເພາະໄມ້ທະນາ ຫຼືຂອງທານ. ແມ່ຍິງແຕ່ງຊຸດພື້ນເມືອງມີສີສັນງົດງາມເກົ້າຜົມທັດດອກໄມ້ ຄຽນ ຫຼື ຮວດໝາກຕຸ້ມປັກປິ່ນເກົ້າ ບ່ຽງຜ້າສະໄບ ມືຖືໂອທີ່ບັນຈຸດອກໄມ້ທູບທຽນ ແລະ ຂອງເພາະ ຫຼື ຂອງທານດ້ວຍ. ເວລາເຖິງເຮືອນເຈົ້າພາບ ທັ້ງຍິງຊາຍຈະເຂົ້າໄປຫາເຈົ້າພາບ ພ້ອມກັນນັ່ງພັບແພບແລ້ວເພາະຂອງທານ.

- ແຂກບ້ານອື່ນເມືອງໄກມາແວ່: ເຈົ້າຂອງເຮືອນຈະຈັດພາເຂົ້າມາສູ່ແຂກບໍ່ທັນໄດ້ກິນເຂົ້າ ແລະ ຈັດທີ່ນອນໃຫ້ຢູ່ເປັ້ງເຮືອນ ໃນກໍລະນີແຂກຕ້ອງການພັກນຳ ໂດຍທີ່ເຈົ້າຂອງເຮືອນບໍ່ຄິດຄ່າລາຄາຫຍັງ.

- ການບາສີ ຫຼື ສູ່ຂວັນແຂກ: ການສູ່ຂວັນ ຫຼື ບ່າສີນັ້ນ ເປັນມໍລະດົກວັດທະນະທັມລາວມາຕັ້ງແຕ່ເດີກດຳບັນ. ຄຳວ່າສູ່ຂວັນນັ້ນ ມີຄວາມໝາຍຫຼາຍຢ່າງຄື: ຮຽກຂວັນ ປຸກ ແລະ ໃຫ້ກຳລັງໃຈແກ່ຜູ້ປ່ວຍ ຜູ້ປະສົບເຄາະຮ້າຍ ຜູ້ເກີດລູກໃໝ່ ຜູ້ເດີນທາງໄກ ຍາດມິດມາເຖິງບ້ານເຮືອນ ພາຍຫຼັງໄປຄ້າຂາຍ ຫຼື ໄປປະຕິບັດໜ້າທີ່ໃດໜຶ່ງຢູ່ບ້ານອື່ນເມືອງໄກ ແລະ ອື່ນໆ. ແຕ່ສິ່ງສຳຄັນໃນການບາສີ ຫຼື ສູ່ຂວັນເພື່ອສະແດງນ້ຳໃສໃຈຈິງ ແລະ ມາລະຍາດຕໍ່ກັນນັ້ນ ແມ່ນການບາສີແຂກຕ່າງດ້າວ ທ້າວຕ່າງເມືອງທີ່ມາຢາມ ເຊັ່ນ: ເມື່ອມີແຂກສຳຄັນ ຫຼື ໝູ່ຄູ່ຜູ້ສະໜິດກັນມາຢາມບ້ານເຮືອນ ຫຼື ບ້ານເມືອງ ເພິ່ນຈະຈັດຫາພາເຂົ້າຕອກດອກໄມ້ ຫຼື ພາບາສີໃຫ້ການຕ້ອນຮັບຕາມພິທີກຳແຫ່ງປະເພນີລາວ ເພື່ອອວຍພອນ

ໃຫ້ແຂກຄົນຈິ່ງມີຄວາມສະຫວັດດີພາບ ກັບໄປດ້ວຍຄວາມສະຫວັດດີພາບ ປະ ສົບໂຊກລາບ ແລະ ຄວາມສຸກຄວາມຈະເລີນ. ການບາສີປະເພດນີ້ຍັງໝາຍເຖິງ ການຂອດສຳພັນທະພາບ ຫຼື ຂອດມິດອັນດີລະຫວ່າງກັນອີກດ້ວຍ.

4. ປັນຍາວັດທະນະທັມ.

ອັນປັນຍາວັດທະນະທັມ ຫຼື ວັດທະນະທັມແຫ່ງສະຕິປັນຍາກໍຄືສະ ໝອງ ຄວາມຮອບຮູ້ແລະ ຄວາມສາມາດເຂົ້າໃຈໂລກອັດຕະວິໄສ ແລະ ພາວະ ວິໄສຂອງຄົນລາວເຮົາສະໄໝກ່ອນນັ້ນ ບໍ່ອາດສາມາດຕັດແຍກອອກຈາກພຸດ ທະປັດຊະຍາພຸດທະວັດທະນະທັມ ຫຼື ພຸດທະສາສະໜາຂອງລາວໄດ້ເລີຍ. ສະ ຖາບັນແຫ່ງສະຕິປັນຍາຂອງລາວນັ້ນ ກໍຄືສະຖາບັນແຫ່ງພຸດທະວັດທະນະທັມ ຫຼື ພຸດທະສາສະໜານັ້ນເອງ ດັ່ງພວກເຮົາຈະໄດ້ເຫັນດັ່ງນີ້:

4.1. ພຸດທະສາສະໜາ.

- ພຸດທະສາສະໜານັ້ນກຳເນີດທີ່ປະເທດອິນເດັຍໃນສະຕະວັດທີ່ VI ກ່ອນຄິດຕະການໃນຖານະຂອງປັດຊະຍາກະແສໜຶ່ງທີ່ກາຍມາເປັນສາສະໜາ ໃນພາຍຫຼັງ ເພື່ອສະແດງປະຕິກະຣິຍາໂຕ້ຕອບກັບພຣາມມະລັດທິ. ພຸດທະປັດ ຊະຍາເຊິ່ງຮຽກວ່າພຸດທະຄຳພີນັ້ນ ມີຈັກກະວາຣະທັສ ເຊັ່ນ: "ອະນິຈ້ຈ ທຸກຂ້ຈ ແລະ ອະນັດຕ້ຈ" ເປັນມວນສານເຊິ່ງແປວ່າໂລກນີ້ບໍ່ທ່ຽງໝັ້ນ ມີທຸກ ແລະ ບໍ່ ເປັນໂຕຕົນ ຄວາມໝາຍວ່າ ທຸກສິ່ງທຸກຢ່າງ ມີການເກີດແກ່ເຈັບຕາຍ ຫຼື ດັບ ວາຍເປັນວັດທະຈັກຮຽກວ່າວັດຕະສິງສານສືບເນື່ອງຕໍ່ໄປຢ່າງບໍ່ມີມື້ສິ້ນສຸດ. ທັ້ງ ໝົດນີ້ຮຽກວ່າ "ກັມມະ" ຄືຄວາມທຸກຍ໌ລະທົມເຈັບປວດ ອັນມາຈາກການກະທຳ ຂອງເຮົາເອງ ແລະ ສັດຕະວະມະນຸສ ຫຼື ໂລກະສິງສານພວກເຮົາເກີດມາມີກັມ ມະ. ສາເຫດຂອງກັມມະ: ແມ່ນກິເລດຕັນຫາ ຄວາມໂລບຄວາມຫຼົງ ຫາກດັບກິ ເລດຕັນຫາສິ່ງເຫຼົ່ານີ້ໄດ້ ກໍສາມາດກຳຈັດກັມມະທັ້ງປວງໄດ້. ການກຳຈັດກິເລດ ຕັນຫານັ້ນ ມີທາງດຽວຄືດຳລົງຊີວິດຢ່າງປອດໃສຂາວສະອາດປາສະຈາກອາ ບາຍຍະມຸກທັ້ງປວງ ບໍ່ວ່າດ້ານແນວຄຶດກໍຄືການກະທຳກໍເຊັ່ນກັນ. ທັ້ງໝົດນີ້ຄື ຫຼັກທັມມະພື້ນຖານຂອງພຸດປັດຊະຍາກໍຄືຄຳພີ ຫຼື ພະໄຕປິດກະຂອງພຣະພຸດທະເຈົ້າ.

- ຕາມຄຳພີຂອງພຸດແລ້ວ ອົງພຣະພຸດບໍ່ໄດ້ເປັນພຣະຊາດາ ແລະ ກໍ່ບໍ່ເປັນພຣະເຈົ້າຜູ້ບັນດານທຸກສິ່ງແຕ່ປະການໃດ ພຣະອົງພຽງແຕ່ເປັນຄົນທັມມະດາສາມັນ ແຕ່ດ້ວຍອັດຊະຣິຍະຍານຂອງພຣະອົງເອງ ພຣະອົງຈຶ່ງສາມາດມອງເຫັນສິ່ງເລິກລັບແຫ່ງສະຕາກຳຂອງມະນຸດເຮົາໄດ້.

- ຕໍ່ຈາກນັ້ນມາເຖິງສະຕະວັດທີ II ກ່ອນຄິດຕະກາລ ພຸດທະຄຳພີກໍ່ໄດ້ແຕກອອກເປັນ 3 ຍານໃຫຍ່ດ້ວຍກັນຄື:

1/. ຫິນນະຍານ: ຄືຍານທີ່ຍຶດຖືຄຳພີເດີມ. ຍານນີ້ໃຊ້ບາລີຫາງພາກຕາເວັ້ນອອກສ່ຽງເໜືອຂອງອິນເດັຍເປັນພາສາສັກສິດເພື່ອສະແດງທັມມະ. ຍານນີ້ແພ່ອອກໄປທີ່ປະເທດສີລັງກາ ພະມ້າ ໄທຍ ລາວ ຂະເໝນ ສິບສອງພັນນາ ແລະ ບາງສ່ວນຂອງຫວຽດນາມປັດຈຸບັນ.

2/. ມະຫາຍານ: ຄືຍານທີ່ເພີ່ມຄຳພີເດີມໃຫ້ຂະຫຍາຍສ່ວນກວ້າງຂວາງຂຶ້ນ. ຜູ້ທີ່ປະຕິບັດຄຳພີນີ້ໄດ້ ກໍ່ສາມາດໄປສູ່ນິພານໄດ້ເຊັ່ນກັນ ແລະ ຈະໄດ້ກາຍເປັນພຣະໂພທິສັຕ. ຍານນີ້ແຜ່ຂຶ້ນເມືອຈີນເກົາຫຼີ ຍີ່ປຸ່ນ ແລະ ຫວຽດນາມ.

3/. ຕັນຕຣະຍານ: ຍານນີ້ຖືຄຳພີພຸດທະທັມມະປະປົນກັບເວທມົນ ກົນກະຖາ ແລະ ຕິສາງນາງໄມ້. ຍານນີ້ແຜ່ຂະຫຍາຍອອກໄປໃນຄິດຕະສະຕະວັດທີ VII ຂຶ້ນເມືອທາງພາກເໜືອຂອງອິນເດັຍ ຕິເບດ ແລະ ມົງໂກນ.

4.2. ພຸດທະສາສະໜາໃນລາວ.

ພຸດທະສາສະໜານັ້ນ ແພ່ຂາຍຢ່າງເຊື່ອງຊ້າທີ່ສຸດ. ຈົນມາເຖິງສະໄໝພຣະເຈົ້າອະໂສກມະຫາຣາຊແຫ່ງອິນເດັຍໃນຕົ້ນສະຕະວັດທີ II ກ່ອນຄິດຕະການ ພຣະອົງຈຶ່ງໄດ້ສົ່ງສາວົກຈຳນວນຫຼວງຫຼາຍນຳເອົາຄຳພີແຫ່ງພຸດທະທັມມະອອກເຜີຍແພ່ມາຍັງບັນດາປະເທດເພື່ອນບ້ານເຊັ່ນ: ສີລັງກາ ພະມ້າ. ມາຮອດປະມານສະຕະວັດທີ II ຫັງຄິດຕະການພຸດທະສາສະໜາຈຶ່ງເຂົ້າມາເຖິງດິນລາວ ແລະ ປະເທດຕ່າງໆໃນສຸວັນນະພູມປະເທດ (France - Asie P.917) ໃນເບື້ອງຕົ້ນສາສະໜາ ຍັງບໍ່ທັນຂະຫຍາຍຕົວຕາມທີ່ຄວນເນື່ອງຈາກຊາວລາວ ບູຮານ ɪv ພາກັນຖືຜີຢ່າງໜັກໜ່ວງ ສະພາບດັ່ງກ່າວແກ່ຍາວຈົນມາເຖິງສະໄໝພຣະເຈົ້າຟ້າງຸ່ມໃນຄິດຕະສະຕະວັດທີ XIV ພຣະອົງຈຶ່ງໄດ້ນຳເອົາພຣະພຸດທະ

ຮູບ ພຣະບາງ ແລະ ບັນດາທັມມະບັນດິດຈາກປະເທດກຳພູຊາມາປັບປຸງໃຫ້ຝ່ງ ຮາກປັກຖານແໜ້ນໜາຂຶ້ນ ແລະ ເມື່ອມາເຖິງສະໄໝພຣະເຈົ້າໂພທິຊະຣາຊໃນ ຕົ້ນຄິດຕະສະຕະວັດທີ່ XVI ພຣະອົງໄດ້ທຳການລົບລ້າງການຖືຜີ ແລະ ຖືເອົາ ພຸດທະສາສະໜາເປັນສາສະໜາປະຈຳຊາດ. ພຸດທະສາສະໜາໃນລາວກ້າວ ຂຶ້ນສູ່ຍອດສູງສຸດເລີ່ມແຕ່ກາງຄິດຕະສະຕະວັດທີ່ XVI ຈົນເຖິງທ້າຍສະຕະວັດ ທີ່ XVII ໃນສະໄໝຂອງພຣະເຈົ້າໄຊຍະເຊດຖາທິຣາຊ ແລະ ພຣະເຈົ້າສຸຣິຍ ວົງສາ. ຕໍ່ຈາກນັ້ນມາເມື່ອປະເທດລ້ານຊ້າງປະສົບວິກິດການເມືອງຈົນໄປເຖິງ ການແຕກແຍກ ແລະ ຖືກຮຸກຮານຍຶດຄອງໂດຍຕ່າງຊາດແລ້ວສາສະໜາກໍ່ປະ ສົບຄວາມສະຫງັກໄປຕາມກັນ. ຄວາມເຊື່ອໃນພຸດທະສາສະໜາໃນລາວນັ້ນ ແມ່ນເຊື່ອຕາມພຸດທະຄຳພີມູນເດີມຂອງພຸດທະທັມມະທິນນະຍານ ເຊັ່ນ:

1. ພິມມະວິຫາຣທັງສີ່:

- ເມດຕາ ຄືຄວາມຮັກໃຄ່ ເພື່ອໃຫ້ຜູ້ອື່ນມີຄວາມສຸຂ.
- ກະຣຸນາ ຄືຄວາມດູຕົນ ຫຼື ອີດູເພື່ອໃຫ້ຜູ້ອື່ນພົ້ນທຸກ.
- ມຸດທິຕາ ຄືຄວາມຍິນຍອມຕໍ່ກິດເກນ ແລະ ເຫດຜົນ.
- ອຸເປກຂາ ຄືຄວາມວາງເສີຍ (ຕໍ່ສິ່ງທີ່ເປັນອະນິຈັ້ງ ທຸກຂັ້ງ ແລະ ອະ ນັດຕັ້ງ)

2. ປາຣະມີສິບທັດ ຫຼື ສິບປະການ:

- ປັນຍາປາຣະມີ ຄືຄວາມມີສະຕິປັນຍາ ຄວາມຮູ້ຄວາມສະຫຼາດເປັນໃຫຍ່.
- ຂັນຕິປາຣະມີ ຄືມີຄວາມຕັ້ງໝັ້ນແນວແນ່ ແລະ ເດັດດ່ຽວເປັນໃຫຍ່.
- ສັດຈະປາຣະມີ ຄືມີສັດຈະຄວາມຊື່ສັດບໍລິສຸດເປັນໃຫຍ່.
- ທານະປາຣະມີ ຄືຄວາມເສັຍສະຫຼະ ຄວາມອຸດທິ ແລະ ຄວາມຊ່ວຍເຫຼືອ ເກື້ອກູນເປັນໃຫຍ່.
- ສິຣະປາຣະມີ ຄືຄວາມຮັກສາ ຄວາມບໍລິສຸດຜຸດຜ່ອງໃສສະອາດ ທັ້ງ ກາຍ ວາຈາ ແລະ ໃຈເປັນໃຫຍ່.

- ເນັກຂັມມະປາຣະມີ ຄື ຄົນເຮົາຕ້ອງອອກບວດຮຽນ ຂຽນອ່ານ ຖືສິນ ປະຕິບັດທັມມະ ດັບກິເລດ ຮຽນຮູ້ສາຕະສິນອາຄົມ ແລະ ໂລກກວ້າງ.

ນອກຈາກຫຼັກທັມມະສອງໝວດນີ້ແລ້ວ ຍັງມີສິນລະດັບຕ່າງໆກັນທີ່ຈະ ຕ້ອງປະຕິບັດ ເຊັ່ນ: ສິນ 5 ສິນ 8 ສິນ 10 ແລະ ສິນ 227 ເຊິ່ງເປັນກິດບັດຍັດທີ່ ຈະຕ້ອງປະຕິບັດແລ້ວແຕ່ຖານະຂອງຄົນໃນສັງຄົມ. ໂຕຢ່າງສາມິກະຊົນສາມັນ ຈະຕ້ອງຖືປະຕິບັດສິນ 5 ດັ່ງນີ້ເປັນຕົ້ນ.

ສິນ ຫ້າ:

- ປານາທິປັຕ ຄືຕັ້ງໝັ້ນຕໍ່ການລະເວັ້ນການທຳລາຍທຸກຊີວິດ.

- ອະທິນນາທານ ຄືຕັ້ງໝັ້ນລະເວັ້ນການເອົາຂອງຜູ້ອື່ນທີ່ເຈົ້າຂອງບໍ່ໃຫ້ ມາເປັນຂອງຕົນ.

- ກາເມສຸມິດສາຈານ ຄືຕັ້ງໝັ້ນລະເວັ້ນບໍ່ປະພຶດຜິດທາງກາມາຣົມ.

- ມຸສາວາທ ຄືຕັ້ງໝັ້ນລະເວັ້ນການກ່າວບໍ່ຊື່ກົງ.

- ສຸຣາເມໄຣຍະມັດຊະປະມາທະ ຄືຕັ້ງໝັ້ນລະເວັ້ນການເສບຂອງໝົ້ນເມົາ ດ້ວຍຄວາມປະໝາດ.

ທັມມະພື້ນຖານຕ່າງໆເຫຼົ່ານີ້ໄດ້ຫຼໍ່ຫຼອມຈິດສຳນຶກ ສະຕິປັນຍາຂະນິບຊີ ວິດ ຈິດຕະສາດສັງຄົມ ກາຍມາເປັນສະຕິສັງຄົມ ຂະຕິທັມປະຈຳຊາດ ແລະ ວັດ ທະນະທັມທາງຈິດໃຈອັນສູງສົ່ງປະຈຳຊາດຂອງຊາວລາວທຸກຍຸກທຸກສະໄໝຕະ ຫຼອດມາ.

ໂດຍເຊື່ອຕໍ່ສັດຈະທັມຂອງປັດຊະຍາພຸດທະທັມມະດັ່ງກ່າວ ໃນພາກ ໂຕຈຶ່ງແລ້ວ ຊາວລາວຖືການເກີດເປັນກັມມະ ຄືຄົນເຮົາທີ່ເກີດມາແລ້ວຈະຕ້ອງ ໄດ້ຜ່ານຜ່າຄວາມທຸກທໍຣະທົດ ແລະ ຄວາມເຈັບປວດຕ່າງໆ ໃນເຮືອນຜູ້ໃຫ້ກຳ ເນີດ ເພີ່ນຮຽກວ່າເຮືອນກັມຄື "ກັມມະ" ນັ້ນເອງ. ໃນເຮືອນກັມນັ້ນຜູ້ຄົນໃນບ້ານ ຫຼື ຄຸ້ມຈະພາກັນມາອົບອຸ່ນພົບປະ ແລະ ໂອ້ລົມກັນ ພ້ອມກັນນັ້ນເພີ່ນກໍ່ມັກເອົາ ໜັງສືຜູກເລື່ອງຊາດິກກ່ຽວກັບຊີວິດຂອງພະພຸດທະເຈົ້າມາອ່ານໃຫ້ຄົນຟັງ ອັນ ນັບວ່າເປັນໂອກາດໃຫ້ຄະຕິທັມຄຳສອນບາງສາຣະກ່ຽວກັບຊີວິດ ອັນມີທັງທຸກ

ທ້ຽໂສກ ທ້ຽຊິດຊື່ນ ອອນຊອນມາລະດົມກຳລັງໃຈຄົນທ້ຽງຫາຍ ເປັນຕົ້ນແມ່ນ ຄອບຄົວຜູ້ໃຫ້ກຳເນີດ ເພື່ອຈະໄດ້ເອົາເປັນຄຳສອນ ລະດົມໃຈແກ່ລູກຜູ້ເກີດໃໝ່ ໃຫຍ່ລຸນຕໍ່ໄປ.

ສຳຫຼັບເຮືອນທີ່ມີຜູ້ຈຸຕິຕາຍໄປນັ້ນ ຊາວລາວຈະຮຽກວ່າ ເຮືອນດີ ອັນ ແປວ່າໝົດກັມມະແລ້ວໄປສູ່ອະນັດຕັ້ງ. ໃນເຮືອນດີນັ້ນ ເພິ່ນຈະຈັດເສບນ້ອຍ ມະໂຫລິມາຄົບງັນຢ່າງຊື່ນບານ ຜູ້ຄົນໃນບ້ານ ຫຼື ຄຸ້ມຈະມາກິນທານຄົບງັນ ມ່ວນຊື່ນກັນ. ເວລາສົ່ງສະການນັ້ນຜູ້ຄົນພາຍໃນຄອບຄົວ ແລະ ຍາດຕິພີ່ນ້ອງ ຈະນຸ່ງເຄື່ອງຂາວ ສະແດງຄວາມບໍລິສຸດພຸດຜ່ອງ ໃສສະອາດທາງກາຍວາຈາ ແລະ ໃຈ ຜູ້ຊາຍຜູ້ເປັນລູກເຕົ້າ ຫຼື ຜົວຈະຕ້ອງອອກບວດສົ່ງບຸນຫາຜູ້ຕາຍ ເພື່ອ ໃຫ້ວິນຍານໄປສູ່ສຸຄະຕິຄືອະນັດຕັ້ງນັ້ນເອງ. ການປະພຶດເຊັ່ນນີ້ ກໍ່ກົງກັນກັບມຸດ ທິຕາ ຄືຄວາມຍິນຍອມ (ຕໍ່ກິດເກນ) ແລະ ອຸເປກຂາ ຄືຄວາມວາງເສີຍບໍ່ໃຫ້ຜູ ຍັງມີຄວາມທຸກໂສກ ຄຶດຮອດຄຶດເຖິງ ແລະ ໃຫ້ມີກຳລັງໃຈເພື່ອສູ້ອະນາຄົດ ແລະ ຊີວິດຕໍ່ໄປ.

ຫຼັກທັມມະທ້ຽໝົດນີ້ເພິ່ນເຕົ້າໂຮມ ຫຼືໂຮມຍອດຢູ່ວັດ ວັດແມ່ນສັກກາ ລະສະຖານ ແລະ ສັກສິດສະຖານ ເປັນບ່ອນສະຖິດຂອງອົງພຣະສຳມາສຳພຸດ ທະເຈົ້າ (ຈຳລອງ) ຂອງພຣະທັມມະໄຕປິດົກ ແລະ ພຣະສົງຄະເຈົ້າ. ເປັນບ່ອນ ປະຕິບັດທັມມະ ແລະ ເຜີຍແຜ່ທັມມະແຫ່ງພຣະພຸດທະອົງໂດຍສົງຄະເຈົ້າ. ເປັນບ່ອນຮັບທັມມະ ຄືຟັງທັມມະເທດສະໜາ ທຳບຸນສິນກິນທານຂອງສາມິກະ ຊົນ ຫຼື ມ່ວນຊົນໂດຍທົ່ວໄປດ້ວຍ. ນອກຈາກສັກກາລະສະຖານທີ່ເວົ້າມານີ້ແລ້ວ ວັດຍັງມີບົດບາດ ເປັນສູນກາງທາງວັດທະນະທັມຂອງບ້ານເມືອງໜຶ່ງໆ ຫຼື ຊຸມ ຊົນໜຶ່ງໆດັ່ງຈະເຫັນໄດ້ໃນພາລະບົດບາດດັ່ງນີ້:

3. ພາລະບົດບາດຂອງວັດ:

ກ. ວັດເປັນສະຖານທີ່ສຶກສາຂອງບ້ານ ຫຼືເມືອງໜຶ່ງໆ ຫຼື ຊຸມຊົນໜຶ່ງ: ແຕ່ສະໄໝກ່ອນນັ້ນ ວັດເປັນສະຖານການສຶກສາແຫ່ງໜຶ່ງ ແຫ່ງດຽວຂອງບ້ານ ໜຶ່ງໆ ຫຼື ຊຸມຊົນໜຶ່ງໆຕະຫຼອດຕົວນະຄອນໜຶ່ງໆດ້ວຍ. ການເລົ່າຮຽນກັບ

ການບວດ ແມ່ນອັນດຽວຄື ຖ້າຢາກຮຽນກໍ່ຕ້ອງບວດ ຖ້າບວດແລ້ວກໍ່ຖືວ່າໄດ້ຮັບ ການສຶກສາ ແລະ ເມື່ອຊຶກອອກມາແລ້ວ ກໍ່ຖືວ່າເປັນຄົນທີ່ໄດ້ຮັບການສຶກສາ ແລະ ຜ່ານການຝຶກຝົນຫຼໍ່ຫຼອມໃຫ້ເປັນຄົນດີຮູ້ສິນທັມ ຮູ້ຮີດບ້ານ ຄອງເມືອງ ຮູ້ ເຮັດຢູ່ທຳກິນ ແລະ ຮູ້ກົດເກນຕ່າງໆຂອງສັງຄົມກໍ່ຄືທັມຊາດໄດ້ດີ. ຊາວບ້ານ ຊາວເມືອງກໍ່ໃຫ້ຄວາມເຄົາລົບຢຳເກງ ແລະ ຖືໄວ້ລະດັບສູງໃນສັງຄົມ. ດັ່ງນີ້ເອງ ຈຶ່ງມີຄວາມເວົ້າຕິດປາກກາຍເປັນສຳນວນທາງພາສາຕະຫຼອດມາຈົນກະທັ່ງຍຸກ ທີ່ມີລະບົບໂຮງຮຽນຂອງລັຖແລ້ວກໍ່ຍັງເວົ້າສືບມາວ່າ "ບວດຮຽນຂຽນອ່ານ" ຊຶ່ງ ແປວ່າຖ້າໄດ້ບວດແລ້ວຖືວ່າມີຄວາມຮູ້ ແຕ່ຖ້າບໍ່ໄດ້ບວດຖືວ່າເປັນຄົນດຶບ ຫຼື ຄົນດາຍ ບໍ່ມີຄວາມຮູ້ ແລະ ກໍ່ບໍ່ໄດ້ຮັບຄວາມນິຍົມຊົມຊອບເລີຍ. ພາລະບົດ ບາດນີ້ກໍ່ຖືກກັບປັນຍາປາຣະມີທີ່ໄດ້ເວົ້າມານັ້ນດ້ວຍ.

ຂ. ວັດເປັນສະຖານທີ່ພັກອາໄສຂອງນັກປາດອາຈານ ນັກກະວີ ນັກປະ ພັນ ແລະ ນັກວິຈິດຕະກຳສະໄໝເກົ່າ. ວັດເປັນບ່ອນສັກກາລະໄດ້ຮັບການອຸປະ ຖຳດ້ວຍສັບພະສິ່ງຂອງທານ ຈຶ່ງນັບວ່າເປັນທີ່ສະຫງົບຄົບຖ້ວນແກ່ການດຳລົງຊີ ວິດຂອງນັກບວດ ປັນຍາຊົນ ແລະ ນັກປາດອາຈານໃນຊີວິດບັ້ນທ້າຍ ເພື່ອປະ ດິດຄິດຄົ້ນສາຕະສົນອາຄົມ ພາສາສາດ ການກອບໂຄງສັ້ນ ນິຍາຍ ຕຳລາ ໂຫຣາສາດ ຕຳລາຢາພື້ນເມືອງ ປະຫວັດຄວາມເປັນມາຂອງບ້ານເມືອງ ຕະ ຫຼອດຜົນງານທາງສິລະປະ ແລະ ຕຳລາທາງວິຊາການດ້ານຕ່າງໆ. ແມ່ນນະທີ່ ວັດເອງທີ່ອັກສອນສາດ ແລະ ພາສາສາດລາວໄດ້ຮັບການປະດິດຄິດຄົ້ນ ແລະ ພັດທະນາໃຫ້ເປັນລະບົບ ແລະ ຂະຫຍາຍຕົວຈົນເປັນອັກສອນ ແລະ ພາສາ ລາວສະໄໝໃໝ່ເທົ່າທຸກວັນນີ້.

ຄ. ວັດເປັນຫໍສະໝຸດ ແລະ ພິພິດຕະພັນຂອງບ້ານ ຕາມທຳມະດາແລ້ວ ວັດຈະຕ້ອງມີສິມ ເຊິ່ງສ້າງດ້ວຍດິນແຂງ ມີຄວາມທົນທານ ແລະ ງົດງາມດ້ວຍ ລວດລາຍທາງສິລະປະ. ທີ່ສິມນັ້ນມີແທ່ນພຣະເຊິ່ງບັນຈຸພຣະພຸດທະຮູບທຸກຍຸກ ທຸກສະໄໝ ຕະຫຼອດສິ່ງຂອງທີ່ສັກສິດເກົ່າແກ່ຕ່າງໆ. ນອກຈາກນັ້ນສິມຍັງຕ້ອງ ບັນຈຸຕູ້ຄຳພີດິກາ ແລະ ໜັງສືກ່ຽວກັບວິຊາ ແລະ ເລື່ອງລາວຕ່າງໆດ້ວຍ. ສ່ວນ ວັດໃຫຍ່ ແລະ ມີຄວາມສຳຄັນກໍ່ຈະມີຫໍໄຕຢູ່ຕ່າງຫາກ ເຊິ່ງບາງແຫ່ງສ້າງໄວ້

ກາງສະນ້ຳເພື່ອຫຼີກຈາກສັດຕູດ້ວງແມງທຳຮ້າຍ ມີຫໍເຮືອຊ່ວງ ມີພາມກອງ ກອງ ຫຼວງ ກອງຂັ້ນ ຄ້ອງແຊ່ງ ລະຄັ້ງ ແລະ ກະລໍ ເຊິ່ງນັບວ່າເປັນສະຖານທີ່ຮັກສາ ວັດຖຸບູຮານ ແລະ ຫໍສະໝຸດໂດຍແທ້.

ງ. ວັດເປັນສະຖານທີ່ປິ່ນປົວສຸຂະພາບ. ນະທີ່ວັດນັ້ນເອງທີ່ມີການຄົ້ນຄ້ວາ ຄົ້ນປຸງແຕ່ງຢາພື້ນເມືອງປົວພະຍາດໃຫ້ແກ່ຊາວບ້ານຊ່ວຍເມືອງ ເນື່ອງຈາກມີຫໍສະໝຸດຄຳພີດີກາວ່າດ້ວຍຕຳລາຍຢາພື້ນເມືອງ ນອກນັ້ນຍັງມີສາມະເນນທີ່ເປັນແຮງງານໃນການຂອກຄົ້ນຫາຢາຮາກໄມ້ນຳດ້ວຍ.

ຈ. ວັດເປັນບ່ອນອາໄສຂອງເດັກກຳພ້າ ກຳພອຍຕົກທຸກໄດ້ຍາກຂາດທີ່ເພິ່ງ ເພື່ອຈະສາມາດດຳລົງຊີວິດ ແລະ ບວດຮຽນຂຽນອ່ານໄປດ້ວຍ.

ສ. ວັດເປັນສະຖານທີ່ເຕົ້າໂຮມ ແລະ ພົບປະຂອງສະມິກະຊົນຊາວບ້ານ ຊາວເມືອງ ບ່າວສາວ ເຖົ້າແກ່ທຸກເພດ ທຸກໄວຈາກບ້ານໃຕ້ເຮືອນເໜືອ ເວລາມີບຸນສົນກິນທານມີການຄົບງັນ ຫຼື ມີເຫດການອື່ນໆກ່ຽວກັບວຽກບ້ານການເມືອງ ອັນນັບໄດ້ວ່າເປັນສະເໜືອນວັງວັດທະນະທັມຂອງມວນຊົນ ເຊິ່ງຮອງຮັບເອົາ ທຸກພິທີກັມ ທຸກການເຄື່ອນໄຫວຂອງຊາວບ້ານຊາວເມືອງຢ່າງບໍ່ຈຳແນກເພດ ໄວ ແລະ ສາສະໜາເລີຍ.

ຊ. ວັດເປັນສະເໜືອນສະໜາມຫຼວງລະດົມພົນ ຫຼື ເຕົ້າໂຮມພົນ ເມື່ອມີເສິກເສືອເໜືອໃຕ້ ມີເຫດຮ້າຍເຊັ່ນໄພພິບັດຕ່າງໆເກີດຂຶ້ນຕະຫຼອດເປັນບ່ອນເຝິກແອບຍຸດທະສິນ ວິຊາມວຍ ລາຍ ຕະຫຼອດສາຕະສິນອາຄົມຕ່າງໆດ້ວຍ. ໃນເວລາອັນຄັບຂັນກອງຫຼວງຈະເປັນກອງລະດົມພົນ ແຕ່ເມື່ອຍາມປົກກະຕິ ກອງຫຼວງຈະໃຊ້ເຂົ້າໃນພິທີກຳທາງສາສະໜາໃນການຕີບອກມື້ ບອກຍາມ. ສ່ວນກອງຂັ້ນ ຫຼື ກອງທ້າງນັ້ນ ນອກຈາກຈະເປັນການຕີໃນການສ້າງຄວາມມ່ວນຊື່ນແລ້ວ ຍັງໃຊ້ໄວ້ຕີປຸກລະດົມຈິດໃຈກ້າກັ່ນເວລາປະລອງໝັດໂມຍ (ມວຍ) ຫຼື ລາຍດາບລາຍງ້າວກັນ.

ຍ. ວັດເປັນບ່ອນແວ່ເຊົ້າຂອງນັກເດີນທາງທີ່ຂາດທີ່ພັກອາໄສ ຕະຫຼອດເປັນທີ່ເພິ່ງພາອາໄສຂອງຜູ້ຫຼົງຜິດແລ້ວຕັດສິນໃຈລະເວັ້ນຄວາມຜິດເພື່ອສ້າງຕົນໃໝ່ໃຫ້ເປັນຄົນດີໃນສັງຄົມ.

ພາລະບົດບາດຂອງວັດນັ້ນຕາມປົກກະຕິແລ້ວ ມີຢູ່ຢ່າງຫຼວງຫຼາຍຄວບ ເອົາຂົງເຂດການສຶກສາ ແລະ ວັດທະນະທັມທັງໝົດ. ແຕ່ບົດບາດດັ່ງກ່າວນີ້ໄດ້ ຮັບການແບ່ງເບົາລົງເມື່ອສາທາລະນະກິດຂອງສັງຄົມເຊັ່ນການສຶກສາ ສາທາ ລະນະສຸກ ວັດທະນະທັມ ແລະ ອື່ນໆມີການຂະຫຍາຍຕົວກວ້າງຂວາງ ເຊິ່ງລັດ ຖະບານຈຳເປັນຕ້ອງຫາບແບກພາລະໜັກໜ່ວງ. ແຕ່ເຖິງແນວໃດກໍ່ດີ ຄວາມ ສຳຄັນຂອງວັດໃນດ້ານການສຶກສາ ວັດທະນະທັມ ສິນທັມ ແລະ ຈະຣິຍະທັມ ນັ້ນ ຍັງຄົງຄວາມໜັກແໜ້ນເປັນພື້ນຖານໃຫ້ແກ່ສັງຄົມລາວຕະຫຼອດໄປ. ການ ຖືເບົາບົດບາດຂອງວັດໃນດ້ານວັດທະນະທັມທາງສະຕິປັນຍາ ກໍ່ຄືຈິດໃຈສຳລັບ ສັງຄົມລາວແລ້ວ ຈະເປັນການຜິດພາດ ເຊິ່ງຈະບໍ່ສາມາດຫາຢ່າງອື່ນມາທົດ ແທນໄດ້ເລີຍ.

4. ມະໂຫລະສົບວັດທະນະທັມ.

ມະໂຫລະສົບວັດທະນະທັມ ແມ່ນວັດທະນະທັມແຫ່ງສິລະປະເວທີ ການສ້າງຄວາມມ່ວນຊື່ນລື່ນເລີງ ການລົງຂ່ວງຄົບງັນ ການລະຫຼິ້ນ ການສະແດງ ການສ່ວງເສັງປະລອງຍຸດຕ່າງໆ... ອັນປະກອບມີ ເຊັ່ນ:

- ການນິນຕີ (ດົນຕີ) ປະເພດຕ່າງໆ.
- ການລີລາຟ້ອນ ດີດເຕັ້ນປະເພດຕ່າງໆ.
- ການສະແດງລະຄອນ...
- ການຂັບລຳ ເຊີ້ງ ອ່ານໜັງສື ຈ່າຍພະຫຍາ ເລົ່ານິທານ ໂກກຕະຫຼົກ.
- ການລະຫຼິ້ນ ຊ່ວງເສັງແຂ່ງຂັນ ສຳແດງລວດລາຍ ແປ້ນຫຼິ້ນ.
- ການລົງຂ່ວງ ຄົບງັນ...

ເນື່ອງຈາກວ່າປະເທດຊາດຂອງພວກເຮົາເປັນປະເທດທີ່ມີອະຣິຍະທຳ ເກົ່າແກ່ ທັງປະກອບດ້ວຍຫຼາຍເຜົ່າພັນຊາດໜຶ່ງ ດັ່ງນັ້ນ ຈຶ່ງມີຄວາມອຸດົມຮັ່ງມີ ດ້ວຍຄວາມຫຼາກຫຼາຍຂອງສີສັນ ຮູບການ ແລະ ເນື້ອໃນທາງດ້ານມະໂຫລະສົບ ວັດທະນະທັມ ອັນບໍ່ຕ່ຳແຕ້ມໜຸດຊາດອື່ນເລີຍ. ນອກຈາກຄວາມຮັ່ງມີອັນເປັນ ອັນລວມ ຂອງຊາດແລ້ວພວກເຮົາຍັງມີຄວາມຫຼາກຫຼາຍຂອງທ້ອງຖິ່ນ ເຜົ່າ

ພັນ ແລະ ແຊກເຜົ່າຕ່າງໆດ້ວຍ.

ຕາມປະເພນີລາວເຮົາແລ້ວເພີ່ນຈັດມະໂຫລະສົບອອກເປັນຫຼາຍສ່ວນປະກອບດ້ວຍກັນ ເຊັ່ນ:

4.1. ການນິນຕີ ຫຼື ເສບ:

ຕາມແບບປະເພນີລາວເດີມແລ້ວ ເພີ່ນແບ່ງການນິນຕີ ຫຼື ເສບເປັນ 4 ປະເພດດ້ວຍກັນຄື: ເຄື່ອງດິດ ເຄື່ອງສີ ເຄື່ອງຕີ ເຄື່ອງເປົ່າ.

- ເຄື່ອງດິດປະກອບມີ: ຄັດຈັບປີ ປະເພດຕ່າງໆ ຕະເຄ້ ພິນ ເຄ້ຍ...
- ເຄື່ອງສີປະກອບມີ: ຂໍ່ອີ ຂໍ່ກາງ ຂໍ່ໂອ້ ເຕີຣນເຮັກ ຂໍ່ບັ້ງ...
- ເຄື່ອງຕີປະກອບມີ: ກອງໝວງ ກອງປຶ່ງ ກອງປຶ່ງ ກອງຂັ້ນ ກອງຫາງ ກອງຕະໂພນ ກອງລຳມະນາ ກອງຄູ່ ກອງຊຸມ ກອງທັດ ກອງຄູມ ລະນາດ ຄ້ອງວິງ ຄ້ອງ ລະຄັ້ງ ກະລໍ ຂຶກ ໂປ່ງລາງ ຄະລຶ່ງ ກະແຊກ ງັບແງບ ຫິ່ງ ຂຶມ ຂຶມໄມ້ໄຜ່ ບັ້ງຫີງ ຜາງຮາດ ແດ່ວໆ.
- ເຄື່ອງເປົ່າປະກອບມີ: ແຄນເຈັດ ແຄນແປດ ແຄນແປດສອກ ແຄນມີ້ງ ແຄນນ້ຳເຕົ້ານ້ອຍ ແຄນນ້ຳເຕົ້າໃຫຍ່ ໄຫວດ ປີ່ແຕ ປີ່ສະນ້ວຍ ປີ່ລີ ປີ່ຕົ້ນ ເຂົ້າ ຄູ່ຍ ໃບໄມ້...

ການຈັດປະເພດເຄື່ອງເສບນີ້ ຝ່າຍສາກົນສະໄໝໃໝ່ ເພີ່ນຈັດເປັນປະເພດເຄື່ອງສາຍ ເຄື່ອງສະເທືອນ ເຄື່ອງຫຸ້ມ ເຄື່ອງລົມ ເຊິ່ງຖ້າເຮົາບັນຈຸແຕ່ລະປະເພດເຄື່ອງເສບພວກເຮົາ ເຂົ້າກໍ່ຈະໄດ້ຈຳນວນຄົບເຊັ່ນກັນກັບການຈັດແບບລາວເດີມ ຕ່າງແຕ່ວ່າ ຝ່າຍລາວເຮົາຈັດຕາມລັກສະນະຂອງການຫຼິ້ນເຄື່ອງ ແຕ່ບໍ່ແມ່ນຕາມລັກສະນະຂອງເຄື່ອງນັ້ນເອງ.

4.2. ການຮ້ອງລຳ ແລະ ຈ່າຍພະຫຍາ.

ເນື່ອງຈາກຊາວລາວເຮົາປະກອບດ້ວຍຫຼາຍເຜົ່າພັນ ຫຼາຍແຊກເຜົ່າ ແລະ ຫຼາຍທຳນອງທ້ອງຖິ່ນ ເຊິ່ງເມື່ອໄຮມເຂົ້າກັນແລ້ວ ປະມານ 100 ໜຶ່ງ ດັ່ງນັ້ນ ຢ່າງໜ້ອຍພວກເຮົາກໍ່ຕ້ອງມີສຽງຂັບ ນັບຮ້ອຍ ຖ້າຄິດໄລ່ໃສ່ແຕ່ລະເຜົ່າ ຫຼື ແຊກເຜົ່າໜຶ່ງໆມີຂັບ ຫຼື ລຳຂອງຕົນເອງ. ແຕ່ຕາມຄວາມເປັນຈິງແລ້ວ ແຕ່ລະເຜົ່າ ຫຼື ແຊກເຜົ່າມີຂັບລຳ 2-3 ຢ່າງກໍ່ມີ ອັນສະແດງວ່າ ສຽງຂັບລຳຢູ່ລາວເຮົາ

ໃນຕົວຈິງແລ້ວ ມີເໜືອຮ້ອຍຂົ້ນເມືອ.

ສຽງຂັບລຳດັ່ງກ່າວນັ້ນ ເທົ່າທີ່ເກັບກຳໄດ້ໃນເບື້ອງຕົ້ນກໍ່ມີເຊັ່ນ:

4.2.1. ຂັບ: ຂັບລື ຂັບຊຳເໜືອ ຂັບທຸ້ມ ຂັບສະໜາງ ຂັບສາມສ້າວ ຂັບສອງຄອນລອດພຸ່ມ ຂັບງ້ອມ ຂັບນ້ຳຮຸ່ງ ຂັບຊຽງຂວາງ ຂັບງຶ່ມ ຂັບໄທດຳ ຂັບໄທຂາວ ຂັບໄທແດງ. ນອກນັ້ນກໍ່ມີຂັບຊົນເຜົ່າຕ່າງໆເຊັ່ນ: ຂັບໂລໂລ ຂັບຮາ ຍີ ຂັບເຄ່ ຂັບລາວກໍ່ ຂັບກາຊິຊະ ຢີ້ວມຽນ ຂັບເມດ ຂັບພ້ອງ ຂັບໄພ່ ຂັບເມັ້ຍ...

4.2.2. ເຕັ້ນປະເພດຕ່າງໆຂອງເຜົ່າກຶ່ມມຸ.

4.2.3. ອ່ານໜັງສື: ອ່ານໜັງສືຜູກ ອ່ານໜັງສືກ້ອງເມືອງ ອ່ານໜັງສືລົ້ມພັດໄພ່ ອ່ານໜັງສືລ່ອງຂອງ... (ໜວງພະບາງ)

4.2.4. ໂອພວນ (ອຸດົ້ມໄຊ)

4.2.5. ລຳ: ລຳທາງສັ້ນ ລຳທາງຍາວ ລຳທາງລ່ອງ ລຳລ່ອງຂອງ ລຳກ໋ຽວລຳກອນ ລຳຄູ່ ລຳເລື່ອງ ລຳໂສນ ລຳສາລະວັນ ລຳສີທັນດອນ ລຳຕັ່ງ ຫວາຍ ລຳເຕີ້ຍ ລຳບ້ານຊອກ ລຳຜູ້ໄທ ລຳແງະ ລຳເຈືອງ ລຳອັດຕະປື ລຳພະ ເທວດ (ສາສະໜາ) ລຳມະຫາໄຊ ລຳພື້ນ...

4.2.6. ຈ້ອຍ (ຍວນ)

4.2.7. ໄກກ ໂຍກ (ນິທານກ້ອມ)

4.2.8. ເຊີ້ງ.

4.2.9. ຮ້ອງ: ຮ້ອງກ໋ຽວ ຮ້ອງນາກສະດຸ້ງ ຮ້ອງແຊ (ໄທດຳ) ຮ້ອງມ້າຍ່ອງ...

4.2.10. ເທດສະໜາ ສູດໄພ ສູດອີຕິປີໂສ ສູດສັກກາຍະ ສັກກາຍະບັນ...(ທາງ ພຸດທະສາສະໜາ)

4.3. ຟ້ອນ: ຟ້ອນພະລັກພະລາມ ຟ້ອນໂຄມ ຟ້ອນລາວແພນ ຟ້ອນ ແມງກະເບື້ອ ຟ້ອນດອກບົວ ຟ້ອນນາງແກ້ວ ຟ້ອນໂຂນ ຟ້ອນນົກຍຸງ ຟ້ອນ ນາງກວັກ ຟ້ອນນາງໜູມ ຟ້ອນນາງເທວະດາ ຟ້ອນແຫ່ບັ້ງໄຟ ຟ້ອນກອງເຊີ້ງ ຟ້ອນລຳວົງ ຟ້ອນແສງອາລຸນ ຟ້ອນໝໍລຳ ຟ້ອນເຊີ້ງ ຟ້ອນລາຍ ຟ້ອນດາບ ຟ້ອນຖວາຍ ຟ້ອນຜູ້ໄທ ຟ້ອນພະເວດ...

ສຳລັບເຜົ່າຕ່າງໆກໍ່ມີຟ້ອນ 12 ຈ້ຽງຫວະ (ໂລໂລໄພ) ຟ້ອນກໍ່ ຟ້ອນກະຊິ

ຊະ (ພູນ້ອຍ) ຟ້ອນຣະປ໊ຽບ (ບຮູ) ຟ້ອນເຂນ (ຕະລ໋ຽງ) ຟ້ອນຄາບໄຫ (ຊະມຸ-ພູນ້ອຍ)

- ເຕັ້ນ: ເຕັ້ນແຊ ເຕັ້ນໄກ່ຕອດດົ້ງ.

4.4. ການສະແດງ: ລະຄອນຟ້ອນ ພະລັກພະລາມ ອີປ໊ອກ ອິເກ ລ້ຳເລື່ອງ (ລະຄອນລ້ຳ) ລະຄອນກ໊ອມ.

4.5. ການເລົ່າ: ເລົ່ານິທານ ນິທານຂີ້ໂກກ (ນິທານຕະຫຼົກ) ຈ່າຍພະຫຍາ ລອງປ໋ນຍາ...

4.6. ການລອງແຮງ ແລະ ການສ່ອງເສ້ງ.

ການລອງແຮງ ແລະ ການສ່ອງເສ້ງແມ່ນການແຂ່ງຂັນ ຫຼື ເສ້ງຄວາມເກ່ງ ຄວາມທົນທານ ແລະ ຄວາມມີພະລັງວັ່ງຊາກັນເຊິ່ງປະກອບດ້ວຍຫຼາຍລາຍການດ້ວຍກັນດັ່ງນີ້:

- ໂມຍ (ມວຍ) ມວຍປ້ຳ ລາຍ ລາຍດາບ ລາຍງ້າວ ລາຍໝາກແປບ ລາຍເສືອລາກຫາງ ຫ໋ວລ້ານຊົນກັນ ຍົກຂອງໜັກ ເຕ໋ະສ້າວ ດຶງເຊືອກ ແກວ່ງຄ໋ອນ ໂດດນ້ຳ ລອຍນ້ຳ ຂ່ວງເຮືອ ຂຶ້ນໄມ້ ແຂ່ງມ້າ ຕີຄີ ລອງນິ້ນ ລອງຄົ້ງ ໝາກຄອນ ໝາກຮຸກ ໝາກສະກາ ເສືອກິນໝູ ງູກິນຫາງ ໝາກຄ່ໍ ໝາກບ້ວ ຂຶ້ນເສົ້າໝັ້ນ ແລະ ອື່ນໆເປັນຕົ້ນ.

4.7. ການລ໋ງຂ່ວງຄົບງັນ ແລະ ລະຫຼົ້ນ:

ການລ໋ງຂ່ວງ ຄົບງັນ ແລະ ລະຫຼົ້ນນັ້ນ ນັບວ່າເປັນຈຸດສຸມຂອງການມະໂຫລະສົບ. ການລ໋ງຂ່ວງທີ່ຍິ່ງໃຫຍ່ຕະການຕາກວ່າເພື່ນຂອງລາວເຮົານັ້ນ ແມ່ນການລ໋ງຂ່ວງແຫ່ງຣາຊະພິທີ. ຣາຊະພິທີລ໋ງຂ່ວງຂອງພຣະເຈົ້າແຜ່ນດິນນັ້ນ ມີຂຶ້ນເທື່ອດຽວຕໍ່ປີ ຄືໃນໄອກາດເດືອນ 12 ກອງເຂ້ົາໃໝ່ ເມື່ອຕິວແທນຂອງເຫ້ົາ ນາກ 15 ຕະກຸນ ຄື 15 ຫ໋ວເມືອງ ຫຼື 15 ເຜ້ົາ ລາວທີ່ປະກອບເປ໋ນພົນລະເມືອງອານາຈັກລ້ານຊ້າງໃນເມ໋ືອກ່ອນມາລາຍງານ ແລະ ຖວາຍບັນນາການແກ່ຣາຊະສ້ານັກ, ຈາກນັ້ນກ໋ຈະພ້ອມພາກັນລ໋ງຂ່ວງສະໜອງ ແລະ ຊົມການສະແດງ ການລະຫຼົ້ນທຸກປະເພດທີ່ຣາຊະສ້ານັກຈັດມາໃຫ້ຊົມ ແລະ ທີ່ 15 ຫ໋ວເມືອງ ຫຼື ເຜ້ົາ ໄດ້ນ້ຳເອົາມາຫຼົ້ນຖວາຍ. ຕາມທ້ຳນຽມແລ້ວໃນໄອກາດເຊ່ັ່ນນີ້

ເພິ່ນຈະຈັດຢູ່ທີ່ສະໜາມຫຼວງ ເຊິ່ງຕັ້ງຢູ່ຕິດກັບພະທາດຫຼວງ (ທີ່ວຽງຈັນກໍຄືທີ່ຫຼວງພະບາງ) ອັນເປັນອົງສັກສິດສະແດງເຖິງຄວາມເປັນໜຶ່ງດຽວ ແລະ ຄວາມແໜ້ນແກ່ນເຂັ້ມແຂງຂອງຊາດ.

ນອກຈາກການລົງຂ່ວງມະຫຶມາລະດັບທົ່ວທັງຊາດນີ້ແລ້ວ ຍັງມີການລົງຂ່ວງທີ່ເດີ່ນວັດໃນໂອກາດງານບຸນສິນກິນທານຕ່າງໆ ເຊິ່ງເພິ່ນກໍຈະຈັດໃຫ້ມີການຂັບລຳ ໂຕ້ກະທໍ້ວາທີ ມີເສບນ້ອຍມະໂຫລີ ມີການລະຫຼິ້ນ ແລະ ສະແດງຕ່າງໆເຊັ່ນກັນ.

ການລົງຂ່ວງຂະໜາດນ້ອຍທີ່ສຸດແມ່ນການລົງຂ່ວງຂອງຄອບຄົວ ເປັນການລົງຂ່ວງຕອນຫົວຄ່ຳເພື່ອເຂັ້ນຝ້າຍຂອງລູກສາວ ຫຼື ຫຼານສາວໃນຄອບຄົວ ເຊິ່ງບາງຄັ້ງກໍຈະມີ 2-3 ສາວເຮືອນໃກ້ຄຽງມາໂຮມກັນອ້ອມກອງໄຟເຂັ້ນຝ້າຍ ຫຼື ຈີບໝາກ ພັນບູລີ ເມື່ອມີພິທີກຳໃດໜຶ່ງ. ເວລານັ້ນຈະມີພວກຜູ້ບ່າວຜູ້ແພວພາກັນເອົາແຄນ ຫຼື ຂຸມໆກັນ ຫຼື ມາຈ່າຍພະຫຍາກັ່ງ ເພື່ອສ້າງຄວາມມັກຮັກຈົນເຖິງຂັ້ນຕົກລົງສ້າງຄອບຄົວນຳກັນກໍ່ມີ. ຂ່ວງດັ່ງວ່ານີ້ເພິ່ນມັກຈະຈັດຢູ່ເທິງຮ້ານນ້ອຍຕ່ຳ ຮຽກວ່າຮ້ານຂ່ວງມີເຕົາໄຟຢູ່ທາງກາງສຳລັບແສງສະຫວ່າງ ແລະ ຄວາມອຸ່ນ ພ້ອມກັນນັ້ນກໍ່ເປັນໂອກາດໃຫ້ສາມາດ ຕົ້ມນ້ຳກິນ ໝົກເຜືອກມັນໄວ້ສຳລັບບ່າວແພວທີ່ມາຫຼິ້ນຂ່ວງດ້ວຍ. ການລົງຂ່ວງຂອງຊາວບ້ານແບບນີ້ຈະມີຂຶ້ນພາຍຫຼັງສຳເລັດວຽກໄຮ່ການນາ ຍາມເຂົ້າໃໝ່ປາມັນ ຢ່າງເຂົ້າສູ່ລະດູໜາວອັນເປັນລະດູແຫ່ງຄວາມຮັກ ຄວາມກັ່ງວພາລາສີກັນລະຫວ່າງບ່າວສາວ ແລະ ການສ້າງຄອບຄົວ.

4.8. ການຈັດວົງເສບ:

ກ. ວົງພິນພາດ: ຈະມີລະນາດເອກ ລະນາດທຸ້ມ ຄ້ອງວົງ ກອງທັດ ກອງຕະໂພນ ຊໍ້ອີ ຊໍ້ໂອ ຊໍ້ກາງ ຄູ່ຍ ປີ່ແຕ ຕະເຄ ຊິ່ງ.

ຂ. ວົງມະໂຫລີ: ລະນາດເອກ ຄ້ອງວົງ ຂຶ່ມ ຄູ່ຍ ຊິ່ງ ຊໍ້ໂອ ຊໍ້ກາງ ຊໍ້ອີ.

ຄ. ວົງເສບນ້ອຍ:

ຄ.1. ຊໍ້ໂອ ຊໍ້ອີ ຊໍ້ກາງ ຂຶ່ມ ກອງປັ໊ງ ຊິ່ງ.

ຄ.2. ແຄນ ຄ້ດຈັບປີ ກອງປັ໊ງ ຊິ່ງ.

ຄ.3. ຂົມ ຄູ່ຍ ຂໍ້ອີ້ ກອງປ້ຳ ຊ້ຳ.

4.10. ປະເພດລຳ ແລະ ຂັບທີ່ຂຶ້ນຊື່ລືຊາຂອງລາວ.

- ລຳຄູ່ ລຳກອນ ລຳທາງສັ້ນ ລຳທາງລ່ອງ ລຳເລື່ອງ ລຳເຕີ້ຍ ລຳມະຫາໄຊ ລຳສະຫວັນ ລຳຕັ່ງຫວາຍ ລຳບ້ານຊອກ ລຳໂສມ ລຳສີທັນດອນ. ໃນຈຳນວນເຊັ່ນລຳຄູ່ ລຳກອນ ລຳທາງສັ້ນ ລຳທາງລ່ອງ ລຳເລື່ອງ ລຳເຕີ້ຍ ຈຳນວນນີ້ເປັນຂອງຕົກທອດທີ່ວໄປໃນທ່ວດິນລ້ານຊ້າງ ເຊ່ິງກວມເອົາດິນລາວຝ່ັງຂວາ ຫ ືພພ ງໂຄລາດນຳດ້ວຍ. ດ້ວຍເຫດນ ້ເອ ງພວກເຮົາຈະເຫັນຄົນລາວ ໃນດິນດອນຕອນນ ້ເຊ ງເຖ ງແມ່ນວ່າຈະຂ ້ນກັບໄທແລ ວກ ່ຕາມກ ່ຍ ງຮັກສາລຳ ແລະ ພ ດທະນາລຳຕ່າງໆເຫ ່ານ ້ຕະຫ ອດມາ. ສ່ວນລຳສະຫວັນ ລຳມະຫາໄຊ ລຳໂສມ ລຳຕັ່ງຫວາຍ ລຳສ ພ ນດອນ ລຳບ້ານຊອກ ແລະ ລຳສາລະວັນນ ້ນ ເປັນລຳທ ່ເກ ດຂ ້ນຢ ່ຝ ່ງຊ້າຍຂອງນ ້ຳຂອງ ໂດຍສະເພາະລຳສະລະວັນ ແລະ ລຳຕັ່ງຫວາຍ ເຊ ່ງມ ຕ ້ນກຳເນ ດມາຈາກຊົນເຜ ່າຈຸຣຸທ ່ສາລະວັນ ແລະ ກະຕາ ຫ ບຣູທ ່ຕັ່ງຫວາຍເອ ງ ກ ່ກຳລ ງໄດ ້ຮັບຄວາມນ ຍ ມແພ ່ໄປປະເທດໄທຍ ແລະ ຂະເໝນນຳດ ້ວຍ.

- ໃນຈຳນວນທ ່ນອງຂັບຫ າຍໆຢ ່າງຂອງລາວເຮົາ ອັນທ ່ກຳລ ງໄດ ້ຮັບຄວາມນ ຍ ມແພ ່ອອກໄປຕ ່າງປະເທດເປັນຕ ້ນແມ ່ນປະເທດໄທ ກ ່ແມ ່ນຂັບທ ້ມ ຫ ວງພະບາງ. ໃນຕ ່ໜ ້າອາດມ ບ ດຂັບຢ ່າງອ ່ນໆແພ ່ອອກໄປໄດ ້ຮັບຄວາມນ ຍ ມ ໃນຕ ່າງປະເທດອ ກກ ເປັນໄດ ້.

5. ການເຈ ອປົນທາງວັດທະນະທ ້ມລະຫ ວ່າງຊາດ.

ມ ນເປັນສ ່ງແນ ່ນອນແລ ວວ ່າ ມາເຖ ງຍຸກປັດຈຸບັນນ ້ ບ ່ວ ່າຊາດໃດ ພາສາໃດ ກ ່ບ ່ສາມາດຫ ກ ຈາກການປົນເຈ ອທາງດ ານເລ ອດເນ ້ອເຊ ້ອໄຂ ແລະ ວັດທະນະທ ້ມໄດ ້ເລ ຍ. ຊາດລາວເຮົາກ ່ນັບວ ່າເປັນຊາດທ ່ມ ເລ ອດເນ ້ອເຊ ້ອໄຂປະສົມກົມກ ນ ແລະ ປະປົນກ ນຫ າຍທ ່ສຸດຊາດໜ ່ງ ດ ່ງຈະເຫັນໄດ ້ປະຈ ກໃນດ ານມະນຸດວ ທະຍາກາຍະພາບ ແລະ ສ ່ວນປະສົມຂອງເຜ ່າພັນຕ ່າງໆທ ່ມ ຈຳນວນຫ ວງຫ າຍ. ຈາກຄວາມເປັນຈ ງດ ່ງກ ່າວພວກເຮົາກ ່ສາມາດເວ ້ົາໄດ ້ວ ່າ ວັດທະນະທ ້ມຂອງພວກເຮົານ ້ນ ເປັນວັດທະນະທ ້ມທ ່ສ ງເຄາະມາຈາກວັດທະນະທ ້ມອ ນຫ າກ

ຫຼາຍຂອງບັນດາເຜົ່າພາຍໃນຊາດ. ນອກນັ້ນ ຍັງມາຈາກການແລກປ່ຽນທາງວັດທະນະທັມກັບຊາດເພື່ອນບ້ານ ແລະ ຊາດອື່ນໆລະດັບສາກົນອີກດ້ວຍ. ພວກເຮົາສາມາດຍົກເອົາບາງໂຕຢ່າງປະຈັກມາພິສູດໄດ້ໃນດ້ານພາສາ ແລະ ໃນດ້ານຂະນົບທຳນຽມ ແລະ ຮີດຄອງຕະຫຼອດວາດດຳລົງຊີວິດປະຈຳມື້ປະຈຳວັນຂອງພວກເຮົາ. ໃນດ້ານພາສານັ້ນ ພວກເຮົາຈະເຫັນຄຳລາວທີ່ມາຈາກເຄົ້າພາສາຕ່າງໆເຊັ່ນ ພາສາມົ້ງໂກນ ພາສາຈີນ ພາສາຂະແມ ພາສາມາເລ ພາສາບາລີສັນສະກຣິດ ແລະ ພາສາຍຸລົບ ແລະ ສາກົນໃນປະລິມານໜ້ອຍຫຼາຍແຕກຕ່າງກັນເຊິ່ງພວກເຮົາຄວນຈະຕ້ອງໄດ້ຄົ້ນຄວ້າໃຫ້ເຖິງຖອງໃນຂັ້ນຕໍ່ໄປ.

ສ່ວນໃນຂາກັບນັ້ນ ພາສາລາວເຮົາ (ພາສາຕະກຸນອ້າຍລາວ) ກໍ່ໄປກະຈາຍແຊກຊ້ອນເຂົ້າຢູ່ໃນພາສາອື່ນເຊັ່ນກັນ ເຊິ່ງກໍ່ຄວນຈະຕ້ອງໄດ້ຄົ້ນຄວ້າໃຫ້ຖີ່ຖ້ວນເຊັ່ນກັນ. ໃນດ້ານວັດທະນະທັມການດຳລົງຊີວິດ ການເຮັດຢູ່ກະທຳກິນນັ້ນ ບໍ່ວ່າຊາດລາວ ແລະ ຊາດອື່ນໆຕ່າງກໍ່ແລກປ່ຽນ ແລະ ຢືມເອົາແບບວິທີ ແລະ ສີໄມ້ລາຍມືລະຫວ່າງກັນໄປໃຊ້ເຊັ່ນໂຕຢ່າງ: ການເຮັດນາປູກເຂົ້າ ການສ້າງເຮືອນແປງຊານ ເປັນຕົ້ນແມ່ນເຮືອນຮ້ານ ການຕຳໝູກທຳໄໝ ການນຸ່ງຖືເປັນຕົ້ນແມ່ນສິ້ນເສື້ອ ການທຳມາຫາກິນ ການເອ້ຍອ້ອ ຕະຫຼອດການແຕ່ງຢູ່ຄົວກິນກໍ່ເຊັ່ນກັນ. ຍິ່ງມາໃນຍຸກສະໄໝອັນເປັນຍຸກແຫ່ງຂໍ້ມູນຂ່າວສານ ແລະ ຍຸກໂຮມຕິວກັນ ການແລກປ່ຽນເຊິ່ງກັນ ແລະ ກັນທາງດ້ານວັດທະນະທັມ ການສົ່ງຜົນສະທ້ອນເຊິ່ງກັນແລະກັນ ທາງແບບແຜນການດຳລົງຊີວິດ ຕະຫຼອດການຮຽນແບບຢືມແບບກັນໃນດ້ານຕ່າງໆຍິ່ງປະຈັກແຈ້ງ ແລະ ທັນຕາ ຈະແມ່ນໃນດ້ານເທັກໂນໂລຊີກໍ່ດີ ໃນດ້ານບໍລິໂພກຜະລິດຕະພັນກໍ່ດີ ຈະແມ່ນການຮຽນແບບຢືມແບບ ການຮຽນການສອນ ການຮ້ອງ ການຟ້ອນກໍ່ດີ ຫຼື ສິນງານທາງວັນນະຄະດີກໍ່ດີ...ກາຍເປັນເລື່ອງປົກກະຕິໄປແລ້ວ ເຊິ່ງບໍ່ອາດຈະມີອັນໃດມາກີດກັນມັນໄດ້ເລີຍ. ນອກຈາກລາວເຮົາຮຽນແບບເພີ່ນມາໃຊ້ແລ້ວ ຮູບແບບວັດທະນະທັມຂອງລາວເຮົາກໍ່ແພ່ອອກໄປສູ່ຄວາມນິຍົມຂອງເພື່ອນບ້ານຊາດອື່ນເຊັ່ນກັນ ເຊິ່ງກໍ່ເປັນຄວາມເອກອ້າງຂອງພວກເຮົາເປັນທຳມະດາເຊັ່ນໂຕຢ່າງ: ລຳສາລະວັນ ລຳຜູ້ໄທ ລຳຕັ່ງຫວາຍ ຂັບທຸ້ມ ເພງຮ້ອງຫຼາຍເພງ ວາດນຸ່ງສິ້ນ ວາດປຸງແຕ່ງ

ອາຫານ ເຊັ່ນຕຳສົ້ມ ແກງໜໍ່ໄມ້ ລາບກ້ອຍ ແລະ ອື່ນໆຫຼາຍຢ່າງກໍ່ໄດ້ເຂົ້າສູ່ຄວາມນິຍົມຂອງປະເທດເພື່ອນບ້ານ ແລະ ຂອງຫຼາຍຊາດໃນສາກົນລະໂລກດ້ວຍ.

"ວັດທະນະທັມຂອງຊາດໜຶ່ງນັ້ນ ແມ່ນຜົນມາຈາກການກັ່ນຕອງເອົາມາຈາກທຸກໆເຜົ່າ ທຸກໆທ້ອງຖິ່ນ ແລະ ທຸກໆສະຕິປັນຍາຂອງຄົນພາຍໃນຊາດ". ວັດທະນະທັມຂອງມະນຸດສະໂລກນັ້ນແມ່ນກັ່ນຕອງມາຈາກຂອງທຸກໆຊາດ ທຸກໆພາສາ ແລະ ທຸກໆຫົວຄຶດສະຕິປັນຍາຂອງມວນມະນຸດທັງມວນ.

ດັ່ງນັ້ນ ທຸກໆຊາດ ທຸກໆພາສາ ນອກຈາກຈະມີວັດທະນະທັມເປັນເອກະລັກຂອງຕົນເອງແລ້ວຍັງມີລັກສະນະສາກົນພໍໃຜພໍມັນດ້ວຍ. ຊາດລາວເຮົາກໍ່ເຊັ່ນກັນ ນອກຈາກຈະມີໜ້າທີ່ປົກປັກຮັກສາ ແລະ ພັດທະນາວັດທະນະທັມຂອງຕົນເອງແລ້ວ ຍັງມີໜ້າທີ່ປະກອບສ່ວນພັດທະນາວັດທະນະທັມອັນເປັນສົມບັດຂອງມະນຸດສະໂລກດ້ວຍ.

I .ແຕ່ກ່ອນຜູ້ຊາຍ ແລະ ແມ່ຍິງໃສ່ຜ້າພາດບ່າສະເໝີເວລາໃສ່ບາດ

II. ການຖືນ້ຳເດືອນ 9 ນັ້ນເຫັນວ່າເປັນການລ້ຳບາກ ຈຶ່ງໄດ້ຍ້າຍມາໃສ່ເດືອນ 12.

III. ພຣາມມະລັດທິ ເກີດຂຶ້ນທີ່ປະເທດອິນເດັຍກ່ອນໜ້າຄຶດຕະການ XII ສະຕະວັດຈາກການມາຄອບຄອງຂອງຊາວອະຣະ ຍັນທາງພາກເໜືອຂອງປະເທດອິນເດັຍນັ້ນເອງ. ແມ່ນສາສະໜາໜຶ່ງທີ່ມີຫຼາຍນິກາຍ ເຊິ່ງຖືອ ໜາດຂອງທັມມະຊາດເປັນຫຼັກເຊັ່ນ: ພະພົມເປັນພະເຈົ້າສ້າງໂລກ ພະວິສນຸ ເປັນພະເຈົ້າແຫ່ງການລຸ້ມຄອງ ພະຊິວະເປັນພະເຈົ້າແຫ່ງການພິນາດ ແລະ ນາງກາລີເຊິ່ງເປັນພັນລະຍາຂອງພະຊິວະ ເປັນຜູ້ນິລະມິດຄວາມຕາຍ. ມາເຖິງສະຕະວັດທີ VI ກ່ອນຄຶດຕະການ ພາມມະລັດລັດທິໄດ້ຖືກສ້ຽງເຄາະມາເປັນສາດສະໜາອິນດູປັດຈຸບັນ.

IV. ຄົນແດນລາວຂອງພວກເຮົາໃນສະໄໝຕົ້ນຄຶດຕະການນັ້ນ ຈະມີຜູ້ຄົນເຊື້ອພັນອິນໂດເມ ສຽນດ້ວຍກັນ. ຕໍ່ມາແມ່ນພວກຂອມບຸຮານ ແລະ ຍ້າຍລາວດ້ວຍກັນ. ຂອມບຸຮານນັ້ນໄດ້ກາຍມາເປັນເຜົ່າຂະໝຸ ແລະ ເຜົ່າຕະກຸນອາຊີໃຕ້ຕ່າງໆໃນລາວປັດຈຸບັນ. ສ່ວນອິນໂດເມສຽນນັ້ນແມ່ນພວກຈາມປາ (ພວກຈາມ)ເຊິ່ງປັດຈຸບັນຢູ່ທີ່ຫວຽດນາມ ແລະ ກຳປູເຈັຍນັ້ນເອງ.

V. ອະນິຈ້ຳ: ສູ່ຄວາມບໍ່ຫ່ຽງ ທຸກ້ຳ: ສູ່ຄວາມທຸກ ຫຼື ກັມມະອະນັດຕ້ຳ: ສູ່ຄວາມບໍ່ມີຕົນຕົວ

VI. ຄຳວ່າວັດ ໜ້າຈະມາຈາກຄຳວ່າວັດຕະໃນພາສາບາລີເຊິ່ງແປວ່າວົງວຽນ ເພື່ອໝາຍເຖິງຄຳວ່າວັດຕະຈັກ ຫຼື ວັດຕະສ້ຳ ສານ ການວຽນວາຍຕາຍເກີດຂອງສັດຕະວະໂລກທັງມວນ.

ວັດທະນະທັມໃໝ່ຂອງລາວ

ຄຳວ່າ ວັດທະນະທັມໃໝ່ຂອງລາວນັ້ນ ສາມາດເຂົ້າໃຈໄດ້ງ່າຍວ່າ ແມ່ນວັດທະນຳທັມຍຸກໃໝ່ຂອງລາວນັ້ນເອງ, ຍຸກໃໝ່ໃນນະທີ່ນີ້ ມີຢູ່ສອງ ຄວາມໝາຍດ້ວຍກັນ ເຊັ່ນ:

- ຍຸກແຫ່ງການຫັນປ່ຽນຈາກລະບອບສັກດິນາ-ເມືອງຂຶ້ນ ມາເປັນຍຸກ ຍຸກແຫ່ງລະບອບສາທາລະນະລັດ ປະຊາທິປະໄຕ ປະຊາຊົນ.

- ຍຸກແຫ່ງການຫັນປ່ຽນ ຈາກໂລກເກົ່າແຫ່ງການປະເຊີນໜ້າກັນ ດ້ວຍ ກຳລັງລະຫວ່າງສອງຄ້າຍມະຫາອຳນາດ ມາເປັນໂລກແຫ່ງເຕັກໂນໂລຢີລ້ຳຍຸກ ຂໍ້ມູນຂ່າວສານໄຮ້ເຂດແດນ ແລະ ສັງຄົມ ບໍລິໂພກນິຍົມ. ດັ່ງທຸກຄົນຮູ້ແລ້ວ ວ່າ ວັດທະນະທັມນັ້ນ ແມ່ນຜະຫຼິດຕະພັນຂອງສັງຄົມ ເພື່ອຮັບໃຊ້ ແລະ ພັດ ທະນາຊີວິດຄວາມເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງສັງຄົມໃຫ້ດີຂຶ້ນ ເລື້ອຍໆ. ວັດທະນະທັມນັ້ນແມ່ນສິ່ງທີ່ບໍ່ສາມາດຢຸດໜຶ່ງໄດ້ ມັນຈະພັດທະນາ ຕົວມັນເອງໃຫ້ສອດຄ່ອງກັບແຕ່ລະກາລະເທສະສະເໝີ. ດັ່ງນັ້ນ ວັດທະນະທັມ ລາວ ໃນຍຸກແຫ່ງການຫັນປ່ຽນຈາກລະບອບສັກດິນາ-ເມືອງຂຶ້ນ ມາເປັນລະ ບອບປະຊາທິປະໄຕປະຊາຊົນ ແລະ ໃນຍຸກແຫ່ງຂ່າວສານຂໍ້ມູນໄຮ້ເຂດແດນນີ້ ກໍ່ຈຳຕ້ອງປັບຕົວເອງໃຫ້ສອດຄ່ອງກັບກາລະເທສະນີ້ດ້ວຍເຊັ່ນກັນ ແລະ ເນື່ອງ ຈາກວ່າວັດທະນະທັມ ເປັນຕົ້ນແມ່ນວັດທະນະທັມທາງຈິດໃຈ ເຊິ່ງສຽກໄດ້ວ່າ ວັດທະນະທັມນິວັດຖຸ (ອະຮຸປະທັມ) ອັນສັ່ງກັດໂຄງປົນຂອງສັງຄົມນັ້ນ ຍິ່ງຕ້ອງ ໄດ້ປັບປຸງ ປັບປ່ຽນຕົວເອງ ຫຼື ວາງທິດໃຫ້ສອດຄ່ອງກັບມັນເຖິງທີ່ສຸດ.

1. ຈຸດໝາຍປາຍທາງ ຂອງລະບອບ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ໃນລະບອບສັກດິນາ-ເມືອງຂຶ້ນຂອງລາວສະໄໝກ່ອນນັ້ນລາວຈະມີຄຳຂວັນຢູ່ສອງປະເພດ ເຊັ່ນ:

- ປະເທດຊາດ ສາສະໜາ ພະມະຫາກະສັດ.
- ຝະລັ່ງຜູ້ມາຊ່ອຍຊູ ແລະ ກອບກູ້ເອົາລາວ.

ໃນລະບອບປະຊາທິປະໄຕ ປະຊາຊົນລາວນັ້ນ ມີຄຳຂວັນເປັນອຸດົມການ ແລະ ຄະຕິເຕືອນໃຈດັ່ງນີ້:

- ຊາດລາວ ສັນຕິພາບ ເອກະລາດ ເອກະພາບ ປະຊາທິປະໄຕ ແລະ ວັດທະນາຖາວອນ.

ນີ້ແມ່ນຈຸດພິເສດ ທັງແມ່ນອຸດົມການອັນແນ່ນອນ ທີ່ບໍ່ມີການປ່ຽນແປ່ງ ຂອງລະບອບ ປະຊາທິປະໄຕ ປະຊາຊົນລາວ.

1.1. ຊາດລາວນະທີ່ນີ້ ໝາຍເຖິງຊາດລາວ ອັນປະກອບດ້ວຍເຜົ່າພັນ ຕ່າງໆ ທີ່ມີຄວາມສະເໝີພາບ ແລະ ມີສິດເສຣີພາບເທົ່າທຽມກັນ ເຊິ່ງຮອງຮັບ ດ້ວຍກົດໝາຍ.

1.2. ສັນຕິພາບ ໝາຍເຖິງການບໍ່ເຮັດສົງຄາມ ການບໍ່ຮ່ວມສົງຄາມ ບໍ່ຮຸກ ຮານ ບໍ່ຍຸຍົງກໍ່ໃຫ້ເກີດສົງຄາມ ບໍ່ສະໜັບສະໜຸນສົງຄາມ ແລະ ຕ້ານສົງຄາມ.

ມັນຍັງໝາຍເຖິງການຟັກໄຟ ສະໜັບສະໜຸນສັນຕິພາບ ການປະກອບ ສ່ວນ ແລະ ການສ້າງສັນຕິພາບ ການປະຕິບັດນະໂຍບາຍສັນຕິພາບ ມິດຕະ ພາບກັບທຸກໆປະເທດ ເປັນຕົ້ນແມ່ນບັນດາປະເທດໃກ້ຄຽງ.

1.3. ເອກະລາດ ໝາຍເຖິງຄວາມເປັນເຈົ້າຕົນເອງ ເປັນເຈົ້າອະທິປະ ໄຕ ແລະ ສະຕາກຳຂອງຊາດຕົນດ້ວຍຈິດໃຈເພິ່ງຕົນເອງ.

1.4. ເອກະພາບ ໝາຍເຖິງຄວາມເປັນປຶກແຜ່ນ ຄວາມເປັນກ້ອນເປັນ ໜ່ວຍ ຄວາມປຸ້ມລຸມກັນ ຫຼື ຄວາມເປັນນ້ຳໜຶ່ງໃຈດຽວກັນຂອງຊາດກໍ່ຄືຂອງ ທຸກໆເຜົ່າ.

1.5. ປະຊາທິປະໄຕ ໝາຍເຖິງປະຊາທິປະໄຕປະຊາຊົນ ເຊິ່ງເນື້ອແທ້ແມ່ນ ລວມສູນປະຊາທິປະໄຕ ອັນມີຫຼັກການແບບງ່າຍໆໄວ້ວ່າ: ສະຖາປະນາ ສາທາລະນະລັດ ປະຊາທິປະໄຕປະຊາຊົນ ໂດຍມີພັກນຳພາ ລັດຄຸ້ມຄອງ ປະຊາຊົນເປັນເຈົ້າ.

ຄວາມໝາຍມີດັ່ງນີ້:

- ພັກນຳພາດ້ວຍແນວທາງນະໂຍບາຍ ຕາມອຸດົມການ ແລະ ອຸດົມຄະຕິທີ່ໝັ້ນໝາຍໄວ້.

- ລັດຄຸ້ມຄອງດ້ວຍອຳນາດນິຕິບັນຍັດ ອຳນາດບໍລິຫານ ແລະ ອຳນາດຕຸລາການ.

- ປະຊາຊົນເປັນເຈົ້າ ຕາມຄວາມໝາຍທີ່ວ່າ: ທຸກສິ່ງທຸກຢ່າງ "ມາຈາກ ປະຊາຊົນອີງໃສ່ປະຊາຊົນ ແລະເພື່ອປະຊາຊົນ" ມີອົງການຈັດຕັ້ງທາງສັງຄົມ ເຊັ່ນ: ແນວລາວສ້າງຊາດ ອົງການກຳມະບານ ອົງການພຸດທະສາສະໜາສຳພັນ ສະຫະພັນແມ່ຍິງ ອົງການຊາວໜຸ່ມລາວ ພ້ອມດ້ວຍສະມາຄົມຕ່າງໆ ເປັນຜູ້ຊ່ວຍດູແລການປະຕິບັດຄວາມເປັນເຈົ້າຕົນເອງ ແລະ ເປັນເຈົ້າສັງຄົມ ຂອງປະຊາຊົນບັນດາເຜົ່າ.

1.6. ວັດທະນາຖາວອນ ຄືຄວາມຢູ່ດີກິນດີ ຄວາມອີ່ມໜຳສຳລານ ຄວາມສຸກກາຍສະບາຍໃຈ ມີຊີວິດມ່ວນຊື່ນເບີກບານ ປາສະຈາກໂລກໄພໄຂ້ເຈັບ ຄວາມອຶດຢາກ ແລະ ຄວາມທຸກຍາກລຳເຂັນ ຕະຫຼອດປາສະຈາກອຳນາດ ທີ່ບໍ່ຊອບທັມທັ້ງປວງມາຄອບງຳ.

ຈຸດພິເສດທາງດ້ານອຸດົມການ ກໍ່ຄືຈຸດໝາຍອັນເປັນທາດແທ້ຂອງລະ ບອບປະຊາທິປະໄຕປະຊາຊົນນີ້ເອງ ແມ່ນຈຸດໝາຍປາຍທາງ ແລະ ຄຸນທາດ ຂອງ ວັດທະນະທັມໃໝ່ຂອງລາວ ເຊິ່ງໂດຍພື້ນຖານແລ້ວ ແຕກຕ່າງກັບຈຸດປະ ສົງຫຼັກ ຂອງລະບອບສັກດິນາ-ເມືອງຂຶ້ນຂອງລາວຢ່າງເຫັນໄດ້ແຈ້ງ.

2. ເນື້ອແທ້ຂອງວັດທະນະທັມໃໝ່ຂອງລາວ.

ວັດທະນະທັມໃໝ່ ຫຼື ວັດທະນະທັມຍຸກໃໝ່ຂອງລາວນັ້ນ ສາມາດກຳ

ນິດນິຍາມໄວ້ໄດ້ດັ່ງນີ້:

"ວັດທະນະທັມໃໝ່ຂອງລາວ ແມ່ນວັດທະນະທັມທີ່ສືບທອດ ແລະ ພັດທະນາ ຂຶ້ນມາໃຫ້ສອດຄ່ອງກັບການລະເທສະໃໝ່ຂອງລາວ ບົນພື້ນຖານວັດທະນະທັມ ດັ້ງເດີມ ອັນເປັນມູນເຊື້ອຂອງຊາດລາວບັນດາເຜົ່າ ແລະ ໝາກຜົນອັນຍອດຍິ່ງ ທາງວັດທະນະທັມຂອງໂລກ"

ຕາມຄວາມຈິງແລ້ວວັທະນະທັມໃໝ່ຂອງລາວນັ້ນ ມີເນື້ອໃນໃຈຄວາມ ວາງໄວ້ເປັນຫຼັກເກນແບບສັດຈະວິພາກ ໃນມະຕິວ່າດ້ວຍ "ວຽກງານວັດທະນະ ທັມໃນໄລຍະໃໝ່" ຂອງກອງປະຊຸມໃຫຍ່ຄົບຄະນະຄັ້ງທີ 9 ຂອງຄະນະບໍລິຫານ ສູນກາງພັກສະໄໝທີ V ເດືອນຕຸລາ 1994.

ຂໍ້ທີ່ໜຶ່ງ ຂອງມະຕິດັ່ງກ່າວໄດ້ໃຫ້ທັດສະນະ ແລະ ຈຸດຢືນກ່ຽວກັບວັດ ທະນະທັມແຫ່ງຊາດລາວເຮົາໄວ້ໄດ້ດັ່ງນີ້:

"ຊາດລາວເຮົາ ແມ່ນຊາດທີ່ມີອະຣິຍະທັມ ແລະ ມີວັດທະນະທັມ ອັນ ດີງາມມາຕັ້ງແຕ່ດຶກດຳນານ. ຊາດລາວເຮົາປະກອບດ້ວຍໜ່ວຍຊົນເຜົ່າ ແຕ່ລະເຜົ່າ ລ້ວນແຕ່ມີຂະນົບທຳນຽມປະເພນີ ແລະ ມູນເຊື້ອວັດທະນະທຳ ທີ່ເປັນເອກະລັກ ຂອງຕົນ ເຊິ່ງໂຮມເຂົ້າເປັນວັດທະນະທັມ ຂອງວົງສາຄະນະຍາດແຫ່ງຊາດ. ນັ້ນ ແມ່ນມູນມໍຣະດົກອັນລ້ຳຄ່າ ເປັນພື້ນຖານດ້ານຈິດໃຈຂອງສັງຄົມ ແລະ ເປັນປັດໃຈສຳຄັນ ຄ້ຳປະກັນການຍືນຍົງຄົງຕົວຂອງຊາດລາວເຮົາ. ຊາວລາວ ເຮົາ ບໍ່ວ່າເວລາໃດກໍ່ເອກອ້າງທະນົງໃຈ ແລະ ຫວງແຫນວັດທະນະທັມປະຈຳ ຊາດຕົນ. ເຂົາເຈົ້າໄດ້ພ້ອມພາກັນປົກປັກຮັກສາ ແລະ ເສີມຂະຫຍາຍມັນ ໃຫ້ ໝັ້ນຄົງຢູ່ຄູ່ຊາດລາວເຮົາມາຈົນເຖິງທຸກວັນນີ້"

ໃນຫົວຂໍ້ທີ່ II ອັນເວົ້າເຖິງທິດທາງ ແລະ ໜ້າທີ່ ການພັດທະນາວັດທະ ນະທຳໃນໄລຍະໃໝ່ ມະຕິດັ່ງກ່າວເວົ້າໄວ້ວ່າ: "ພັກເຮົາຖືວ່າວັດທະນະທຳເປັນ ພື້ນຖານແຫ່ງການຍືນຍົງຄົງຕົວຂອງຊາດ ເພາະວ່າວັດທະນະທຳນັ້ນ ພາໃຫ້ ຄົນທັ້ງຊາດມີຄວາມເປັນອັນໜຶ່ງອັນດຽວກັນ ສາມັກຄີເປັນປຶກແຜ່ນ ໃນການ ປົກປັກຮັກສາ ແລະ ສ້າງສາປະເທດຊາດ. ຖ້າຊາດໃດຫາກບໍ່ສາມາດຮັກສ່ຳ

ຂຍນິບທັມນງມ ປະເພນີ ກໍ່ຄືວັດທະນະທັມຂອງຊາດຕົນໃຫ້ດີແລ້ວ ຊາດນັ້ນກໍ່ຈະເຊື່ອມສູນໄປ ຖືກຊາດອື່ນກືນກິນ ຫຼື ກາຍເປັນເງົາຂອງຊາດອື່ນໄປ"

" ວັດທະນະທັມແມ່ນກຳລັງດັນໃຫ້ສັງຄົມຂຍາຍຕົວ"

" ວັດທະນະທັມແມ່ນຈຸດໝາຍຂອງການພັດທະນາສັງຄົມ ດັ່ງນັ້ນ ອົງການພັກ ອົງການລັດອົງການຈັດຕັ້ງທາງສັງຄົມ ສາດສະໜາ ຫົວໜ່ວຍການຜະຫຼິດ ທຸລະກິດ ຕະຫຼອດຄອບຄົວຂັ້ນຕ່າງໆ ລ້ວນແລ້ວແຕ່ມີໜ້າທີ່ ແລະ ມີຄວາມຮັບຜິດຊອບ ປົກປັກຮັກສາ ກໍ່ສ້າງແລະເສີມຂຍາຍ ວັດທະນະທັມ ຄຽງຄູ່ໄປກັບການພັດທະນາ ເສດຖະກິດ ກໍ່ຄືດ້ານອື່ນໆ"

" ພວກເຮົາມີໜ້າທີ່ສືບຕໍ່ທິດທາງພັດທະນາວັດທະນະທັມ ໃຫ້ມີລັກສະນະຊາດ ລັກສະນະມະນຸດທາປະຊາຊົນ ແລະ ກ້າວໜ້າ ສ້າງໃຫ້ຄົນລາວມີນ້ຳໃຈຮັກຊາດ ຮັກປະຊາທິປະໄຕ ປະຊາຊົນ ມີທັດສະນະຫຼັກໝັ້ນ ທາງດ້ານການເມືອງໜັກແໜ້ນ ມີຄຸນສົມບັດ ມີສິນທັມ ມີແບບແຜນດຳລົງຊີວິດອັນສິດໃສຈິບງາມ ແລະ ມີວິຊາຄວາມຮູ້ ສົມຄູ່ກັບພາລະກິດປ່ຽນແປງໃໝ່ ສາມາດຮັບເອົາຜົນສຳເລັດຂອງຄວາມກ້າວໜ້າທາງດ້ານຕ່າງໆ ຂອງຍຸກສະໄໝໄດ້. ເສີມຂຍາຍ ແລະ ສົ່ງເສີມມູນເຊື້ອວັດທະນະທັມລວມຂອງຊາດໄປພ້ອມໆກັບການເອົາໃຈໃສ່ສົ່ງເສີມ ແລະ ຊ່ອຍເຫຼືອເຜົ່າຕ່າງໆໃນການສືບທອດ ເອົາມູນເຊື້ອສິລະປະວັດທະນະທັມ ທີ່ມີຫຼາຍຮຸບຫຼາຍສີ ໃຫ້ກາຍເປັນວັດທະທັມລວມຂອງວົງຄະນາຍາດແຫ່ງຊາດ ສົມທົບກັບການຮັບເອົາສິ່ງຍອດຍິ່ງຈາກ ວັດທະນະທັມຂອງມະນຸດຊາດທັ່ງປວງ ເພີ່ມທະວີການຄຸ້ມຄອງລັດທາງດ້ານວັດທະນະທັມ ສະກັດກັ້ນ ກະແສວັດທະນະທັມອັນທຍ້ຳ ທີ່ເຂົ້າມາມ້າງເພວັດທະນະທັມອັນດີງາມຂອງຊາດເຮົາ"

ໃນຂໍ້ຊີ້ແນະທີ່ບົ່ງໄວ້ໃນມະຕິດັ່ງກ່າວ ມີຂໍ້ຄວາມເນັ້ນເຖິງບາງຈຸດສຳຄັນດັ່ງນີ້:

" ການປົກປັກຮັກສາ ການສ້າງ ແລະ ການເສີມຂຍາຍວັດທະນະທັມນັ້ນ ຕ້ອງຕິດພັນກັບພາລະກິດປ່ຽນແປງໃໝ່ຮອບດ້ານ..."

" ການປົກປັກຮັກສາ ການສ້າງ ແລະ ການເສີມຂຍາຍວັດທະນະທັມ

ຂອງຊາດ ຕ້ອງຕິດພັນກັບການເປີດກວ້າງການພົວພັນ ແລະ ແລກປ່ຽນວັດທະ
ນະທັມ ກັບພາຍນອກ ຮັບເອົາສິ່ງຍອດຍິ່ງຈາກວັດທະນະທັມ ຂອງມວນມະນຸດ
ມາເສີມສ້າງ ວັດທະນະທັມລາວ ໃຫ້ຮັ່ງມີຂຶ້ນຢ່າງບໍ່ຢຸດຢັ້ງ ພ້ອມກັນນັ້ນກໍ່ສະກັດ
ກັ້ນ ກະແສວັດທະນະທັມທຍ້ຍ້ໍ ທີ່ເປັນພິດໄພຕໍ່ວັດທະນະທຳເຮົາ"

" ການປົກປັກຮັກສາ ແລະ ເສີມຂະຫຍາຍວັດທະນະທັມຂອງຊາດ ຕ້ອງຕິດພັນກັບການເປີດກວ້າງ ການພົວພັນຮ່ວມມືດ້ານວັດທະນະທັມກັບນາໆ ຊາດ"

" ຈັດຕັ້ງການຄົ້ນຄ້ວາກ່ຽວກັບແຫ່ງກຳເນີດ ແຫ່ງສິລະປະຂອງຊາດ ຮ່ອງຮອຍ ປະຫວັດການ ເອກະລັກ ມູນເຊື້ອ ແລະ ມໍລະດົກວັດທະນະທັມປະ ເພດຕ່າງໆຂອງຊາດ ກໍ່ຄືຂອງເຜົ່າຕ່າງໆ ເຊັ່ນ: ເອກະລັກຂອງຄົນລາວ ສິລະ ປະວັນນະຄະດີ ພາສາ ສະຖາປັດຕະຍະກັມ ແລະ ອື່ນໆຂອງລາວ ສະເພາະ ໜ້າໃຫ້ຮີບຮ້ອນຄົ້ນຄ້ວາຫຼັກພາສາລາວ ເພື່ອເປັນຫຼັກການໃນການໃຊ້ຢ່າງເປັນ ເອກະພາບ ແລະ ພັດທະນາພາສາລາວໃຫ້ສອດຄ່ອງ"

" ໂຄສະນາເຜີຍແຜ່ວັດທະນະທັມລາວ ແລະ ສົ່ງເສີມ ການສົ່ງຜະຫຼິດ ຕະພັນວັດທະນະທັມ ຂອງຊາດອອກສູ່ພາຍນອກເຮັດໃຫ້ຊາດອື່ນຮູ້ຈັກ ແລະ ເຂົ້າໃຈກ່ຽວກັບເອກະລັກທາງດ້ານວັດທະນະທັມລາວ "

ຈາກນະໂຍບາຍອັນເປັນຫຼັກການຂອງພັກ ປະຊາຊົນປະຕິວັດລາວ ດັ່ງ ກ່າວນັ້ນ ພວກເຮົາກໍ່ພໍຈະມອງເຫັນໄດ້ວ່າ ວັດທະນະທັມໃໝ່ແຫ່ງຊາດລາວນັ້ນ ມີທາດແທ້ຊົນຊັ້ນຂອງຜູ້ອອກແຮງງານ ຫຼື ສາມັນຊົນພົນລະເມືອງຜູ້ປະກອບປະ ໂຫຍດ ແລະ ຄຸນຄ່າມດີໃຫ້ແກ່ຊາດບ້ານເມືອງ ແລະ ສັງຄົມ. ມັນແມ່ນການ ທ້ອນໂຮມມູນເຊື້ອອັນດີເດັ່ນຂອງຊາດ ຂອງບັນດາເຜົ່າ ສົ່ງເສີມຂະບວນການ ຂອງມະຫາຊົນ ແລະ ມຸ່ງຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງມວນຊົນ ທາງດ້ານວັດຖຸກໍ່ຄືຈິດໃຈ ເປັນຕົ້ນແມ່ນ ຄວາມຢາກມີຊີວິດອັນສັນຕິ ມີປະຊາທິ ປະໄຕທີ່ຄ້ຳປະກັນ ມີຄວາມຍຸດຕິທັມ ມີຊີວິດອັນອີ່ມໜຳສຳລານ ແລະ ເບີກ ບານມ່ວນຊື່ນ.

3. ລັກສະນະຂອງວັດທະນະທັມຍຸກໃໝ່ຂອງລາວ

3.1. ລັກສະນະຊາດສືບທອດ.

ຊາດລາວກໍ່ຄືທຸກໆຊາດ ມີວັດທະນະທັມ ປະຈຳຊາດຂອງຕົນເປັນ ຮາກເຫງົ້າ. ວັດທະນະທັມດັ່ງກ່າວ ອັນແມ່ນໝາກຜົນຂອງການອອກແຮງງານ ທາງກາຍະພາບ ແລະ ສະຕິປັນຍາຂອງຊາດ ເຊິ່ງໄດ້ຜ່ານການທົດສອບ ແລະ ກັ່ນຕອງມາຫຼາຍຫຼືບຫຼາຍຕ່ໍາວ ຫຼາຍຍຸກຫຼາຍສະໄໝ ຈົນສາມາດຢືນຍົງຄົງຢູ່ ແລະ ເປັນທີ່ນິຍົມກັນເທົ້າເຖິງປັດຈຸບັນ ບໍ່ວ່າໃນສິ່ງທີ່ເປັນວັດຖຸ ກໍ່ຄື ນິວັດຖຸຫຼືຈິດ ໃຈ ສິ່ງເຫຼົ່ານີ້ເອງທີ່ເປັນແກ່ນເຫງົ້າຂອງວັດທະນະທັມໃໝ່ທີ່ພວກເຮົາຕ້ອງໄດ້ ສືບທອດ.

ແຕ່ແນ່ນອນທີ່ສຸດວ່ໍາ ໃນວັດທະນະທັມ ກໍ່ຄືວິຖີຊີວິດ ຂະນົບທໍານຽມ ປະເພນີອັນດັ້ງເດີມນັ້ນ ມີບາງຢ່ໍາງອາດຈະບໍ່ສອດຄ່ອງໝົດກັບຄວາມຮຽກຮ້ອງ ຕ້ອງການ ແລະ ສະພາບຄວາມເປັນຈິງໃນປັດຈຸບັນ ພວກເຮົາອາດຈະມີການ ເລືອກເຟັ້ນ ອັນໃດທີ່ສົມບູນແບບກໍ່ຮັກສາໄວ້ ອັນເຄິ່ງສົມບູນແບບກໍ່ຫາວິທີ ຊ່ອຍປັບປຸງມັນໃຫ້ສົມບູນ ແລະ ຖ້າອັນໃດເປັນພິດເປັນໄພ ອັນຈະນໍາຄວາມ ເສັ່ງຫາຍມາໃຫ້ສັງຄົມ ກໍ່ຈໍາເປັນຕ້ອງໄດ້ໄຕ່ຕອງໃຫ້ຖ້ວນຖີ່ ຖ້າຈໍາເປັນຕ້ອງຫ້ຶດ ການໃຊ້ ຫຼື ເກືອດຫ້ໍາມ.

3.2. ລັກສະນະຊາດບັນດາເຜ່ົາ.

ເປັນທີ່ແນ່ນອນແລ້ວວ່ໍາ ຄໍາວ່ໍາຊາດລາວນັ້ນ ປະກອບດ້ວຍປະຊາກອນ ທີ່ມີເຊ້ືອສາຍທາງດ້ານເຜ່ົາພັນແຕກຕ່ໍາງກັ່ນ ແຕ່ກໍ່ຮ່ວມຕີຮ່ວມແຮງຮ່ວມໃຈ ກັນຕ່ໍສູ້ ເສັ່ງສະລະເພ່ືອປົກປ້ອງເຂດນໍ້າແດນດິນ ອໍານາດອະທິປະໄຕຂອງຕົນ ຕະຫຼອດມາ. ເຂົາເຈ້ົາໄດ້ປະກອບສ່ວນ ພັດທະນາສ້ໍາງສາຊາດ ສະຖາປະນາ ສັງຄົມ ສະສົມມໍລະດົກແຫ່ງວັດທະນະທັມຊາດ ຈາກສິ່ງທີ່ຍອດຍ້ົງຂອງເຜ່ົາ ຕ່ໍາງໆຂອງເຂົາເຈ້ົາ ແລະ ດ້ວຍນໍ້າເຫ້ືອນໍ້າແຮງກໍ່ຄືຄວາມເສັ່ງສະຫຼະອັນມະ

ຫາສານຂອງເຂົາເຈົ້າ. ໃນສິລະປະວັດທະນະທັນຂອງຊາດລາວປັດຈຸບັນ ບໍ່ວ່າ ຈະຢູ່ໃນໝວດໃດກໍດີ ພວກເຂົາຈະເຫັນວ່າ ແມ່ນການສັງເຄາະປະສົມປະສານ ອັນທີ່ດີ ແລະ ຍອດຍິ່ງຈາກເຜົ່າຕ່າງໆ ເຊັ່ນ: ພາສາລາວ ການສ້າງຢ້າວແປງ ເຮືອນ ການທຳມາຫາກິນ ການນຸ່ງຖືເອັຍອ ແລະ ການຂັບລຳທຳເພງ ແລະ ອື່ນໆ. ດ້ວຍເຫດນີ້ເອງ ເມື່ອຫາດແທ້ຂອງຊາດລາວກໍ່ຄືວັດທະນະທັນຂອງລາວ ມີພື້ນຖານສ່ວນປະກອບມາຈາກເຜົ່າພັນຕ່າງໆແລ້ວ ວັດທະນະທັນໃໝ່ຂອງ ລາວ ແລະ ວຽກງານການພັດທະນາວັດທະນະທັນລາວ ກໍ່ຍິ່ງຈະມີສ່ວນປະກອບ ຢ່າງຂັນແຂງຈາກເຜົ່າຕ່າງໆ. ສິລະປະວັດທະນະທັນບັນດາເຜົ່ານັ້ນ ໂດຍທົ່ວ ໄປແລ້ວຈະຕ້ອງໄດ້ຮັບການປົກປັກຮັກສາ ແລະ ສົ່ງເສີມ. ສ່ວນອັນໃດທີ່ພົ້ນ ເດັ່ນແລະ ໄດ້ຮັບຄວາມນິຍົມໂດຍທົ່ວໄປພາຍໃນຊາດ ສົ່ງເຫຼົ່ານັ້ນຈະກາຍມາ ເປັນສົມບັດລະດັບຊາດ ໂດຍອັດຕະໂນມັດ ໄຕຢ່າງ ເຊັ່ນ: ລຳຕັ້ງຫວາຍ ເຊິ່ງມີ ເຄົ້າມາຈາກຊາວກະຕາງ ລຳສາລະວັນ ອັນມີເຄົ້າມາຈາກຊາວຢຣຸ ຕະຫຼອດຂັບ ທຸ້ມຫວ່ຽງພະບາງ ລຳຜູ້ໄທ ລຳສີພັນດອນ ລຳບ້ານຊອກ ແລະ ອື່ນໆ ເຊິ່ງເປັນລຳ ແລະ ຂັບທ້ອງຖິ່ນ ກໍ່ກາຍມາເປັນລະດັບຊາດຈຶ່ງໄດ້ຮັບຄວາມນິຍົມ ອອກນອກ ຂອບເຂດຂອງປະເທດໄປສູ່ເພື່ອນບ້ານ ເຊິ່ງກໍ່ນັບວ່າມີລັກສະນະ ສາກົນ ຂຶ້ນ ມາລະດັບໜຶ່ງ. ອີກປະການໜຶ່ງ ຄຳວ່າລັກສະນະຊາດບັນດາເຜົ່ານະທີ່ນີ້ ຍັງມີ ຄວາມໝາຍອັນເລິກເຊິ່ງທາງດ້ານສິດທິ ແລະ ມະນຸດສະທັນດ້ວຍ. ມັນສະ ແດງເຖິງການຮັບຮູ້ສິດທິໃນຄວາມເປັນພົນລະເມືອງອັນສົມບູນຂອງຊາດ ສິດທິ ແຫ່ງຄວາມສະເໝີພາບ-ເອກະພາບ ແລະ ພະລາດອນພາບ ຂອງພົນລະເມືອງ ລາວດ້ວຍກັນ.

3.3. ລັກສະນະຊາດມະຫາຊົນ ຫຼື ສັງຄົມ.

ເປັນທີ່ແນ່ນອນແລ້ວວ່າ ວັດທະນະທັນ ກໍ່ຄືປະຫວັດສາດຂອງຊາດ ໜຶ່ງໆ ແມ່ນຜົນງານມາຈາກຂະບວນການຂອງມະຫາຊົນ ຫຼືສັງຄົມ. ສັງຄົມ ເປັນຜູ້ສ້າງວັດທະນະທັນ ກໍ່ຄືອັດສະຣິຍະບຸກຄົນຂຶ້ນມາ ໂດຍອາໄສສະພາບ ແວດລ້ອມທາງທຳມະຊາດເປັນ ພື້ນຖານ. ດັ່ງນັ້ນ ວັດທະນະທັນໃໝ່ຂອງ ລາວຈຶ່ງຕົກເປັນໜ້າທີ່ຂອງມະຫາຊົນ ຫຼື ສັງຄົມ ບວກກັບສະພາບ ແວດລ້ອມ

ທາງທຳມະຊາດ ແລະ ການລະໂອກາດທີ່ມີຈິງໃນປັດຈຸບັນ. ລັດຈະມີໜ້າທີ່ສ້າງ ເງື່ອນໄຂ ແລະ ສິ່ງອຳນວຍໃຫ້ປັດໃຈ ມວນຊົນ ຫຼື ສັງຄົມນັ້ນ ຂະຫຍາຍຕົວໄປ ເລື້ອຍໆ. ການທີ່ຈະພັດທະນາໂຄງລ່າງ ໃຫ້ເປັນເຄື່ອງມືໃຫ້ແກ່ການພັດທະ ນາ ວັດທະນະທັມ ແລະ ພັດທະນາໂຄງບົນ ເປັນຕົ້ນແມ່ນລະບົບຕົວບົດກົດ ໝາຍ ການຄຸ້ມຄອງ ແລະ ແນວທາງກໍ່ຕົ້ແຜນການດຳເນີນງານທີ່ຖືກຕ້ອງນັ້ນ ນັບວ່າເປັນປັດໃຈສຳຄັນໃນດ້ານນີ້. ວັດທະນະທັມຈະຕ້ອງອຳນວຍປະໂຫຍດ ອັນສູງສຸດໃຫ້ສັງຄົມ. ນີ້ນັບວ່າເປັນໜ້າທີ່ຕົ້ນຕໍຂອງການວາງທິດໃຫ້ແກ່ການ ພັດທະນາ ວັດທະນະທັມ. ການປົກປັກຮັກສາ ສະພາບແວດລ້ອມ ທຳມະ ຊາດກໍ່ເປັນປັດໃຈສຳຄັນທີ່ຫຼີກບໍ່ໄດ້ ໃນການຮັກສາ ແລະ ພັດທະນາ ວັດທະ ນະທັມ ເພາະວ່າຄົນກໍ່ຄືສັງຄົມກັບສະພາບແວດລ້ອມ ທຳມະຊາດ ແມ່ນຂອງ ຄູ່ກັນ ເອື້ອຍອີງ ແລະ ອາໄສເຊິ່ງກັນແລະກັນ. ຫາກສະພາບແວດລ້ອມປ່ຽນ ແປງ ຫຼື ດັບສູນໄປ ວັດທະນະທັມ ກໍ່ຕ້ອງປ່ຽນແປງ ຫຼື ຈົນກະທັ່ງເຖິງຂັ້ນດັບສູນ ໄປເຊັ່ນກັນ. ຊາດກັບສາກົນນັ້ນ ເປັນຄູ່ມາຕະເກນອັນລວມກັບອັນສະເພາະ (Unity and Diversity Category) ເຊິ່ງບໍ່ສາມາດຈະປະຕິເສດ ຫຼື ຕັດແຍກ ອອກຈາກກັນໄດ້ເໝືອນດັ່ງໂລກລະຈັກກະວານ ຫຼືທຳມະຊາດ ແລະ ບັນຍາ ກາດສິ່ງແວດລ້ອມ. ມັນເອື້ອຍອີງອາໄສເຊິ່ງກັນແລະກັນ ແລະ ພ້ອມກັນຄົງຢູ່ ພ້ອມທັງປັບຕົວເອງໃຫ້ສອດຄ່ອງກັນຕະຫຼອດໄປ.

ວັດທະນະທັມຂອງຊາດໜຶ່ງໆ ແມ່ນໝາກຜົນທາງດ້ານແຮງງານ ແລະ ຕີປັນຍາຂອງຊາດນັ້ນໆກໍ່ຈິງ ແຕ່ກໍ່ມີສ່ວນສະສົມມາຈາກການແລກປ່ຽນທາງ ວັດທະນະທັມກັບຊາດອື່ນໆທີ່ຢູ່ຮອບຕົວຕົນເອງ ແລະ ມາຈາກຄັງສົມບັດອັນ ລ້ຳຄ່າຂອງມວນມະນຸດໃນໂລກດ້ວຍ. ຂະດຽວກັນນັ້ນ ວັດທະນະທັມຂອງຊາດ ໜຶ່ງໆ ກໍ່ປະກອບເປັນສ່ວນໜຶ່ງ ຂອງຄັງສົມບັດ ທາງວັດທະນະທັມຂອງໂລກ ເຊັ່ນດຽວກັນ. ວັດທະນະທັມລາວກໍ່ນອນຢູ່ໃນກົດເກນການກຳເນີດ ການຄົງຕົວ ແລະ ຂະຫຍາຍຕົວດັ່ງກ່າວທີ່ວ່າມານີ້ດ້ວຍ. ຍິ່ງສະພາວະການຂອງໂລກມີ ຄວາມປ່ຽນແປງຢ່າງໃຫຍ່ຫຼວງ ແລະ ໄວວາດັ່ງສູ່ມື້ນີ້ ການພັດທະນາຫຼືການປັບ ຕົວ ທາງວັດທະນະທັມລາວໃຫ້ທັນກັບການລະເທສະກໍ່ຄືການຮັບເອົາໝາກຜົນ

ທາງວັດທະນະທັມຂອງໂລກມາຊ່ອຍປັບປຸງ ແລະ ພັດທະນາວັດທະນະທັມ ຂອງຊາດຕົນໃຫ້ທັນສະໄໝ ແລະ ເປັນສາກົນຂຶ້ນ ໂດຍຮັກສາເອກະລັກ ແລະ ສີສັນຂອງຊາດໄວ້ຢ່າງໝຸ່ງແໜ້ນນັ້ນ ຍິ່ງກາຍເປັນໜ້າທີ່ ອັນຮີບດ່ວນຢ່າງໜຶ່ງ ຄຽງຄູ່ໄປກັບໜ້າທີ່ການປົກປັກຮັກສາ ມູນເຊື້ອ ວັດທະນະທັມ ອັນດັ້ງເດີມຂອງ ຊາດລາວ ບັນດາເຜົ່າໄວ້ຢ່າງແໜ້ນໜາ.

3.4. ລັກສະນະຊາດກ້າວໜ້າ.

ຄຳວ່າ "ກ້າວໜ້າ" ນະທີ່ນີ້ໝາຍເຖິງໂລກະທັດ ແລະ ຈຸດຢືນໃນການ ເບິ່ງໂລກຢ່າງພາວະວິໄສ ເບິ່ງໂລກທີ່ເຕັມໄປດ້ວຍຂໍ້ຂັດແຍ່ງທີ່ສູ້ຢັນກັນຢ່າງບໍ່ ຢຸດຢັ້ງ ອັນເປັນເຫດໃຫ້ໂລກຈະແມ່ນໂລກທັມມະຊາດ ກໍ່ຄືໂລກສັງຄົມມະນຸດ ຊາດ ມີການເຄື່ອນໝຸນ ແລະ ປ່ຽນແປງໄປຢ່າງບໍ່ຢຸດໜຶ່ງເປັນ. ໂລກທັມມະ ຊາດນັ້ນ ມັນຈະເຄື່ອນໝຸນ ແລະ ປ່ຽນແປງໄປຕາມກົດເກນທຳມະຊາດຂອງ ມັນ ສ່ວນການເຄື່ອນໝຸນ ແລະ ປ່ຽນແປງຂອງໂລກສັງຄົມມະນຸດຊາດນັ້ນ ມັນ ຈະເປັນໄປຕາມກົດເກນຂອງສັງຄົມຄືການສູ້ຢັນກັນລະຫວ່າງ ດ້ານທີ່ກົງກັນ ຂ້າມກັນ ຫຼື ຂໍ້ຂັດແຍ່ງກັນ ຫຼື ອັນທີ່ສຽກວ່າ "ຄູ່ມາດຕາເກນ" ສັງຄົມເຊັ່ນ: ຄວາມດີກັບຄວາມຊົ່ວ ສັນຕິພາບ ກັບສົງຄາມ ຄວາມຮັກກັບຄວາມຊັງ ຄວາມ ປຸ້ມລຸມກັບຄວາມແຕກແຍກ ຄວາມຈິງ ກັບ ຄວາມລ່າຍ ແລະ ອື່ນໆ. ຫຼືຖ້າ ເປັນພຸດທະທັມມະ ກໍ່ຈະມີ ເຊັ່ນ: ບາບກັບບຸນ ຄຸນກັບໂທດ ທັມມະກັບມານ.

ວັດທະນະທັມຊາດທີ່ກ້າວໜ້ານັ້ນ ແມ່ນວັດທະນະທັມ ທີ່ຢຶດໝັ້ນໃນ ໂລກາະທັດ ແລະ ຈຸດຢືນທີ່ຖືກຕ້ອງ ຄືສະໜັບສະໜຸນຝ່າຍຂັດແຍ່ງທີ່ເປັນທັມ ແລະ ມີມະນຸດສະທັມ ເພື່ອຊ່ອຍໃຫ້ໂລກ ຫຼື ສັງຄົມປ່ຽນແປງໄປໃນທາງນຳປະ ໂຫຍດ ແລະ ສ້າງສັນແກ່ມະນຸດຊາດ.

3. ທີ່ສະເພາະໜ້າຂອງວຽກງານວັດທະນະທຳ

ທ້າຍເດືອນ ເມສາ 2001 ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ ຂອງລາວ ໄດ້ໄຂກອງປະຊຸມປະຈຳປີທົ່ວປະເທດ ໂດຍມີເຈົ້າໜ້າທີ່ຖະແຫຼງ ຂ່າວ-ວັດທະນະທຳ ຂັ້ນສູນກາງ ແລະ ແຂວງຕ່າງໆເຂົ້າຮ່ວມຢ່າງໜາແໜ້ນ. ກອງປະຊຸມດັ່ງກ່າວ ໄດ້ໃຊ້ເວລາ 3 ວັນ ເພື່ອສຳຫຼວດເບິ່ງຂໍ້ດີຂໍ້ອ່ອນໃນການ ດຳເນີນງານ ທາງດ້ານວັດທະນະທັມ ແລ້ວພ້ອມພາກັນຫາຊ່ອງທາງແກ້ໄຂຕາມ ທາງທີ່ຄວນ. ຜູ້ເຂົ້າຮ່ວມປະຊຸມເຫັນວ່າການຄົ້ນຄ້ວາ ແລະ ການວາງແນວທາງ ຍຸດທະສາດ ພາກປະຕິບັດໄລຍະຍາວ ແລະ ການວາງແຜນອັນຮີບດ່ວນສະ ເພາະໜ້າ ເປັນຈຸດໃນການຕົ້ນຕໍທີ່ປະຊຸມຈະຕ້ອງໄດ້ພິຈາລະນາວາງອອກໃຫ້ ໄດ້. ແນວທາງຍຸດທະສາດທີ່ວ່ານີ້ຄວບທັງໂຄງລ່າງ ແລະໂຄງບົນ ທີ່ຈະຕ້ອງ ປະຕິບັດ ໄປພ້ອມໆກັນເຊັ່ນ: ການຮີບຮ້ອນວາງລະບຽບກົດໝາຍການຄຸ້ມຄອງ ມະຫາພາກດ້ານວັດທະນະທັມ ຕະຫຼອດມາຕະການອື່ນໆ ເພື່ອສຸກຍູ້ສົ່ງເສີມ ຂະບວນການປົກປັກຮັກສາ ແລະ ເສີມສ້າງທາງດ້ານວັດທະນະທັມ ເຊິ່ງມາເຖິງ ປັດຈຸບັນ ຍັງເປັນສິ່ງທີ່ຂາດແຄນຢູ່ ອັນເຮັດໃຫ້ຂາດປັດໃຈທີ່ຈຳເປັນຂອງການ ຄຸ້ມຄອງ ການສຸກຍູ້ ສົ່ງເສີມ ແລະ ການສະກັດກັ້ນຜົນຮ້າຍຈາກແບບແຜນການ ດຳລົງຊີວິດ ທີ່ບໍ່ເໝາະສົມ ຫຼືເຊື່ອມເສັ່ງສຳຫຼັບ ສັງຄົມລາວ. ສຳຫຼັບໂຄງລ່າງ ນັ້ນ ກອງປະຊຸມກໍ່ຕ້ອງໄດ້ວາງແນວທາງ ການປະຕິບັດໃຫ້ເປັນຮູບປະທັມຍິ່ງຂຶ້ນ ເຊັ່ນ: ຂັ້ນສູນກາງຫຼືນະຄອນຫຼວງ ຈະຕ້ອງປະກອບຫຍັງແດ່ ແຂວງໃຫຍ່ໆທີ່ ຈະເລີນແລ້ວຄວນປະກອບຫຍັງ ແລະ ເຄື່ອນໄປໃນຮູບການໃດໆ. ແຂວງນ້ອຍ ທີ່ຍັງດ້ອຍການພັດທະນາ ຫຼື ຢູ່ໃນສະພາບທຸກຍາກຈະຕ້ອງປະກອບຫຍັງເປັນ ຕົ້ນຕໍ ແລະ ມີວິທີການເຄື່ອນໄຫວແນວໃດ ? ສ່ວນເມືອງເອກຂອງເມືອງ ແລະ ບ້ານຄວນຈະມີຫຍັງ ແລະ ເຄື່ອນໄຫວແນວໃດເປັນພື້ນຖານ. ນີ້ເປັນພຽງຄວາມ

ພະຍາຍາມເບື້ອງຕົ້ນທີ່ຢາກແກ້ບັນຫາ ແລະ ພັດທະນາວັດທະນະທັນ ສ່ວນຕົວ ຈິງນັ້ນ ຍັງຈະຕ້ອງໄດ້ໃຊ້ຄວາມພະຍາຍາມ ໃຊ້ການວິໄຈຄົ້ນຄ້ວາ ແລ້ວວາງ ແນວປະຕິບັດການໃຫ້ແທດເໝາະກັບສະພາບຄວາມເປັນຈິງ.

ວຽກງານການຮ່ວມມືທາງວັດທະນະທັນ ຈາກພາກສ່ວນຕ່າງໆ ປະເທດ ຕ່າງໆ ແລະ ອົງການສາກົນຕ່າງໆນັ້ນ ກໍ່ຄວນນຳເອົາມາພິຈາລະນາເປັນແນວ ທາງຍຸດທະສາດ ເພື່ອຮ່ວມມືກັນແກ້ບັນຫາ ຕະຫຼອດຊ່ວຍເຫຼືອເຊິ່ງກັນ ແລະ ກັນ ເພື່ອຈະຈຳກັດສິ່ງທຍ້ຫ້ຳເປັນພິດໄພແກ່ຄວາມປອດໃສຂອງວັດທະນະທັນ ແລະ ສັງຄົມລາວ.

ຈົບ



ພິມທີ່ໂຮງພິມ ສຳນັກພິມ ແລະ
ຈຳໜ່າຍປຶ້ມແຫ່ງລັດ